# ມາດຕະຖານການລາຍງານການເງິນ ສຳລັບວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ຂະໜາດນ້ອຍແລະກາງ

(FRS ສຳລັບ ວນກ)

## ສາລະບານ


ພາກສະເໜີ ..... 2

ໝວດ 1 ວິສາຫະກິດຂະໜາດນ້ອຍແລະກາງ 4

ໝວດ 2 ຄວາມສຳນຶກ ແລະ ຫຼັກການລວມ 6

ໝວດ 3 ການສະເໜີເອກະສານລາຍງານການເງິນ 15

ໝວດ 4 ໃບລາຍງານຖານະການເງິນ 19

ໝວດ 5 ໃບລາຍງານຜົນໄດ້ຮັບສັງລວມ ແລະ ໃບລາຍງານຜົນໄດ້ຮັບ 23

ໝວດ 6 ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ 26

ໝວດ 7 ໃບລາຍງານກະແສເງິນສົດ 28

ໝວດ 8 ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ 33

ໝວດ 9 ເອກະສານລາຍງານການເງິນລວມກິດຈະການ ແລະ ເອກະສານລາຍງານການເງິນສະເພາະກິດຈະການ 35

ໝວດ 10 ນະ�โยบายການບັນຊີ, ຕົວເລກຄາດຄະເນປະຕິບັດ ແລະ ຂໍ້ຜິດພາດ 36

ໝວດ 11 ເຄື່ອງມືການເງິນພື້ນຖານ 41

ໝວດ 12 ປະເດັນຕ່າງໆ ທີ່ຕິດພັນກັບເຄື່ອງມືການເງິນອື່ນໆ 51

ໝວດ 13 ເຄື່ອງໃນສາງ 52

ໝວດ 14 ເງິນລົງທຶນໃນວິສາຫະກິດຂາຮຸ້ນ 56

ໝວດ 15 ເງິນລົງທຶນໃນວິສາຫະກິດປະສົມ 58

ໝວດ 16 ອະສັງຫາລິມະຊັບເພື່ອການລົງທຶນ 61

ໝວດ 17 ຊັບສົມບັດຄົງທີ່ມີຕົວຕົນ 62

ໝວດ 18 ຊັບສົມບັດຄົງທີ່ບໍ່ມີຕົວຕົນ ທີ່ບໍ່ແມ່ນຄ່ານິຍົມ 68

ໝວດ 19 ການຄວບກິດຈະການ ແລະ ຄ່ານິຍົມ 73

ໝວດ 20 ສັນຍາເຊົ່າ 78

ໝວດ 21 ເງິນແຮ ແລະ ໜີ້ສິນທີ່ອາດເກີດຂຶ້ນ 83

ເອກະສານຊ້ອນທ້າຍໝວດ 21 ຂໍ້ແນະນຳ ກ່ຽວກັບການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າເງິນແຮ 87

ໝວດ 22 ໜີ້ສິນ ແລະ ທຶນເຈົ້າຂອງ 92

ໝວດ 23 ລາຍຮັບ 96

ເອກະສານຊ້ອນທ້າຍຂອງໝວດ 23 ຕົວຢ່າງ ການຮັບຮູ້ລາຍການບັນຊີ ລາຍຮັບ ຕາມຫຼັກການຂອງໝວດ 23 103

ໝວດ 24 ເງິນຊ່ວຍໜູນຂອງລັດຖະບານ 109

ໝວດ 25 ຄ່າກູ້ຢືມເງິນ 111

ໝວດ 26 ການຊຳລະຕາມຮຸ້ນ 112

ໝວດ 27 ການສູນເສຍມູນຄ່າຂອງຊັບສິນ 116

ໝວດ 28 ຜົນປະໂຫຍດຂອງພະນັກງານ 121

ໝວດ 29 ອາກອນລາຍຮັບ 131

ໝວດ 30 ການປ່ຽນຄ່າເງິນຕາຕ່າງປະເທດ 134

ໝວດ 31 ພາວະເງິນເຟີ້ລະດັບສູງສຸດ 137

ໝວດ 32 ເຫດການທີ່ເກີດຂຶ້ນຫຼັງສິ້ນສຸດຮອບເວລາລາຍງານ 138

ໝວດ 33 ການເປີດເຜີຍຂໍ້ມູນຂ່າວສານກ່ຽວກັບພາກສ່ວນທີ່ກ່ຽວຂ້ອງ 141

ໝວດ 34 ກິດຈະກຳພິເສດ 142

ໝວດ 35 ການຂ້າມຜ່ານໄປສູ່ ມາດຕະຖານການລາຍງານການເງິນສຳລັບ ວນກ 146

ປະມວນຄຳສັບ 151

# ພາກສະເໜີ

## ຈຸດປະສົງຂອງມາດຕະຖານສະບັບນີ້

ກົດໝາຍວ່າດ້ວຍການບັນຊີ ສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ໄດ້ກຳນົດກ່ຽວກັບການສ້າງເອກະສານລາຍງານການເງິນ ຂອງສອງປະເພດວິສາຫະກິດ ເຊັ່ນ: ວິສາຫະກິດຮັບໃຊ້ຜົນປະໂຫຍດສາທາລະນະ ແລະ ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ. ເພື່ອໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມ ຂອງ ສປປ ລາວ ທີ່ມີຫຼາຍຂະໜາດວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ແລະ ເພື່ອອຳນວຍຄວາມສະດວກ ໃຫ້ແຕ່ລະຂະໜາດວິສາຫະກິດດັ່ງກ່າວ ມີມາດຕະຖານການລາຍງານການເງິນ ທີ່ເໝາະສົມກັບຕົນ, ນອກຈາກວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະແລ້ວ, ກະຊວງການເງິນໄດ້ແບ່ງວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ອອກເປັນວິສາຫະກິດຂະໜາດໃຫຍ່ (ວຫຍ), ວິສາຫະກິດຂະໜາດນ້ອຍແລະກາງ (ວນກ) ແລະ ວິສາຫະກິດຂະໜາດນ້ອຍທີ່ສຸດ.

ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ຕ້ອງປະຕິບັດ **ມາດຕະຖານສາກົນດ້ານການລາຍງານການເງິນ** (International Financial Reporting Standards, IFRS[1]). ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ມີຂະໜາດໃຫຍ່ ແລະ ທີ່ມີຂະໜາດນ້ອຍແລະກາງ ຕ້ອງປະຕິບັດ**ມາດຕະຖານການລາຍງານການເງິນ ສຳລັບວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ** ທີ່ໄດ້ແບ່ງອອກເປັນສອງສ່ວນ ຄື ສຳລັບວິສາຫະກິດຂະໜາດໃຫຍ່ (ຮຽກຫຍໍ້ວ່າ ມາດຕະຖານການລາຍງານການເງິນ ສຳລັບວິສາຫະກິດຂະໜາດໃຫຍ່, FRS ສຳລັບ ວຫຍ) ແລະ ສຳລັບວິສາຫະກິດຂະໜາດນ້ອຍແລະກາງ (ຮຽກຫຍໍ້ວ່າ ມາດຕະຖານການລາຍງານການເງິນ ສຳລັບວິສາຫະກິດຂະໜາດນ້ອຍແລະກາງ, FRS ສຳລັບ ວນກ).

ວິສາຫະກິດຂະໜາດນ້ອຍທີ່ສຸດ ຕ້ອງປະຕິບັດ**ລະບຽບການດ້ານບັນຊີ ສຳລັບວິສາຫະກິດນ້ອຍທີ່ສຸດ** ຊຶ່ງຕາມລະບຽບການດັ່ງກ່າວ ບັນດາລາຍການເຄື່ອນໄຫວ ແລະ ເຫດການອື່ນໆ ຖືກຮັບຮູ້ລາຍການບັນຊີ ເມື່ອໄດ້ຮັບ ຫຼື ໄດ້ຈ່າຍເງິນສົດ ຫຼື ສິ່ງທຽບເທົ່າເງິນສົດ.

ມາດຕະຖານການລາຍງານການເງິນ ສຳລັບວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ແມ່ນມາດຕະຖານດ້ານບັນຊີ ທີ່ໄດ້ປັບມາຈາກມາດຕະຖານສາກົນດ້ານການລາຍງານການເງິນ ສຳລັບວິສາຫະກິດຂະໜາດນ້ອຍແລະກາງ (IFRS ສຳລັບ ວນກ).

ລະບຽບການສະເພາະ ວາງເງື່ອນໄຂມາດຕະຖານ ສຳລັບການກຳນົດປະເພດ**ວິສາຫະກິດຂະໜາດໃຫຍ່** ຫຼື **ຂະໜາດນ້ອຍ ແລະ ກາງ** ຫຼື **ນ້ອຍທີ່ສຸດ**.

ວິສາຫະກິດຂະໜາດນ້ອຍແລະກາງ ຕ້ອງປະຕິບັດມາດຕະຖານການລາຍງານການເງິນ ສຳລັບວິສາຫະກິດຂະໜາດນ້ອຍແລະກາງ (FRS ສຳລັບ ວນກ) ເວັ້ນເສຍກຳນົດໄວ້ຢ່າງອື່ນ ໃນມາດຕະຖານສະບັບນີ້.

FRS ສຳລັບ ວນກ ຖືກປັບສຳລັບຄວາມຕ້ອງການ ແລະ ຄວາມອາດສາມາດຂອງວິສາຫະກິດຂະໜາດນ້ອຍແລະກາງ. FRS ສຳລັບ ວນກ ເປັນຜົນມາຈາກການປັບມາດຕະຖານການລາຍງານການເງິນສຳລັບວິສາຫະກິດຂະໜາດໃຫຍ່ (FRS ສຳລັບ ວຫຍ). ວັດຖຸປະສົງນີ້ ແມ່ນເພື່ອໃຫ້ກົງກັບຄວາມຕ້ອງການຂໍ້ມູນຂ່າວສານຂອງຜູ້ນຳໃຊ້ ແລະໃຫ້ເໝາະສົມກັບຄ່າໃຊ້ຈ່າຍບໍລິຫານ ໃນການສ້າງເອກະສານລາຍງານການເງິນ (ຕາດການວິໄຈຜົນປະໂຫຍດຄ່າໃຊ້ຈ່າຍ).

[1] ຊຶ່ງຮຽກว่า ມາດຕະຖານສາກົນດ້ານການລາຍງານການເງິນ ເຕັມສ່ວນ (full IFRSs) ໃນມາດຕະຖານສະບັບນີ້

## ການສົມທຽບກັບມາດຕະຖານການລາຍງານການເງິນສຳລັບວິສາຫະກິດຂະໜາດໃຫຍ່ (FRS ສຳລັບ ວຫຍ)

ເພື່ອຮັກສາຄວາມສາມາດສົມທຽບກັນໄດ້ ລະຫວ່າງ FRS ສຳລັບ ວຫຍ ແລະ FRS ສຳລັບ ວນກ, ການຈັດວາງ ເລກຂອງໝວດຕ່າງໆ ຍັງຖືກຮັກສາໄວ້ເປັນອັນໜຶ່ງອັນດຽວກັນ. ບາງຄັ້ງ ໝວດໃດໜຶ່ງກໍຖືກປັບ ດ້ວຍການປ່ຽນແປງ ຫຼື ຕັດບາງຢ່າງອອກ (ເບິ່ງ ຕາຕະລາງສົມທຽບໃນທ້າຍແຕ່ລະໝວດ).

ໝວດຕໍ່ໄປນີ້ຂອງ FRS ສຳລັບ ວຫຍ ບໍ່ໄດ້ປະກອບເຂົ້າ ໃນ FRS ສຳລັບ ວນກ ສະບັບນີ້:

- ໝວດ 9 *ເອກະສານລາຍງານການເງິນລວມກິດຈະການ ແລະ ເອກະສານລາຍງານການເງິນສະເພາະ ກິດຈະການ* - ຍ້ອນວ່າ ຖ້າວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະໃດໜຶ່ງ ມີໜຶ່ງ ຫຼື ຫຼາຍບໍລິສັດ ໃນກຸ່ມ, ວິສາຫະກິດດັ່ງກ່າວ ຕ້ອງປະຕິບັດ FRS ສຳລັບ ວຫຍ[2];
- ໝວດ 12 *ປະເດັນຕ່າງໆ ທີ່ຕິດພັນກັບເຄື່ອງມືການເງິນອື່ນໆ* ຍ້ອນວ່າ ຖ້າ ວນກ ຖື ຫຼື ສ້າງເຄື່ອງມືການ ເງິນທີ່ສະຫຼັບຊັບຊ້ອນ, ວິສາຫະກິດນັ້ນ ຕ້ອງປະຕິບັດ FRS ສຳລັບ ວຫຍ;
- ໝວດ 16 *ອະສັງຫາລິມະຊັບເພື່ອການລົງທຶນ* ຍ້ອນວ່າ FRS ສຳລັບ ວນກ ຕີມູນຄ່າ **ອະສັງຫາລິມະຊັບ ເພື່ອການລົງທຶນ** ຕາມວິທີຕົ້ນທຶນ-ການສູນເສຍມູນຄ່າ ແລະ ບໍ່ແມ່ນຕາມມູນຄ່າຍຸຕິທຳ;
- ໝວດ 31 *ພາວະເງິນເພີ້ລະດັບສູງສຸດ* ຍ້ອນວ່າ ສປປ ລາວ ບໍ່ແມ່ນເສດຖະກິດທີ່ມີພາວະເງິນເຟີ້ລະດັບ ສູງສຸດ;
- ໝວດ 33 *ການເປີດເຜີຍຂໍ້ມູນຂ່າວສານກ່ຽວກັບພາກສ່ວນກ່ຽວຂ້ອງ* ຍ້ອນວ່າໝວດນີ້ ຖືກຕັດອອກ ເພື່ອ ໃຫ້ກະທັດຮັດຂຶ້ນ. ເຖິງຢ່າງໃດກໍ່ຕາມ, ຖ້າວິສາຫະກິດໃດໜຶ່ງ ຕ້ອງການໃຫ້ລາຍການເຫຼົ່ານີ້, ວິສາຫະກິດ ນັ້ນ ຕ້ອງປະຕິບັດ ໝວດ 33 ຂອງ FRS ສຳລັບ ວຫຍ.

ຄຳສັບ 'ຫົວໜ່ວຍ' ແລະ 'ວິສາຫະກິດ' ຖືກນຳໃຊ້ ໂດຍມີຄວາມໝາຍດຽວກັນ.

ຄຳສັບ ທີ່ນິຍາມໄວ້ ໃນປະມວນຄຳສັບ ທີ່ປະກົດໃຫ້ເຫັນຄັ້ງທຳອິດ ໃນແຕ່ລະໝວດ ຈະເປັນ**ຕົວໜັງສືໜາ**.

[2] ສະນັ້ນ, ທຸກຂໍ້ກຳນົດກ່ຽວກັບເອກະສານລາຍງານການເງິນລວມກິດຈະການ ໃນ FRS ສຳລັບ ວຫຍ ບໍ່ໄດ້ຢູ່ໃນ FRS ສຳລັບ ວນກ .

# ໝວດ 1

# ວິສາຫະກິດຂະໜາດນ້ອຍແລະກາງ

## ຂອບເຂດຈັດຕັ້ງປະຕິບັດມາດຕະຖານການລາຍງານການເງິນສຳລັບວິສາຫະກິດຂະໜາດນ້ອຍແລະກາງ

1.1 ມາດຕະຖານການລາຍງານການເງິນສຳລັບວິສາຫະກິດຂະໜາດນ້ອຍແລະກາງສະບັບນີ້ ມີຈຸດປະສົງແນໃສ່ໃຫ້ວິສາຫະກິດຂະໜາດນ້ອຍແລະກາງນຳໃຊ້. ໝວດນີ້ ສະແດງເຖິງລັກສະນະ ຂອງວິສາຫະກິດຂະໜາດນ້ອຍແລະກາງ.

## ຄຳອະທິບາຍ ກ່ຽວກັບວິສາຫະກິດຂະໜາດນ້ອຍແລະກາງ

1.2 ວິສາຫະກິດຂະໜາດນ້ອຍແລະກາງ ແມ່ນວິສາຫະກິດທີ່:

(ກ) ບໍ່ແມ່ນວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs), ແລະ

(ຂ) ຈັດພິມ **ເອກະສານລາຍງານເງິນເພື່ອຈຸດປະສົງນຳໃຊ້ທົ່ວໄປ** ສຳລັບຜູ້ນຳໃຊ້ພາຍນອກ. ຕົວຢ່າງຂອງຜູ້ນຳໃຊ້ພາຍນອກ ລວມມີ ເຈົ້າຂອງຜູ້ທີ່ບໍ່ມີສ່ວນຮ່ວມໃນການຄຸ້ມຄອງທຸລະກິດ, ເຈົ້າໜີ້ທີ່ມີຢູ່ ແລະ ທີ່ອາດເກີດຂຶ້ນ ແລະ ສຳນັກງານການຈັດລະດັບຄວາມໜ້າເຊື່ອຖື, ແລະ

(ຄ) ມີສະພາວະເກີນເງື່ອນໄຂມາດຕະຖານ ຂອງວິສາຫະກິດຂະໜາດນ້ອຍແລະກາງ ທີ່ລະບຽບກົດໝາຍ ກຳນົດໄວ້ , ຫຼື

(ງ) ບໍ່ຄວບຄຸມ ໜຶ່ງ ຫຼື ຫຼາຍ ບໍລິສັດໃນກຸ່ມ, ຫຼື

(ຈ) ບໍ່ມີສັນຍາ ກ່ຽວກັບເຄື່ອງມືການເງິນ ແລະ ລາຍການເຄື່ອນໄຫວການເງິນ ທີ່ສະຫຼັບຊັບຊ້ອນ ກວ່າເຄື່ອງມືການເງິນພື້ນຖານ (ເບິ່ງໝວດ 11 ແລະ 12 ຂອງ FRS ສຳລັບ ວທຍ).

1.3 ວິສາຫະກິດໃດໜຶ່ງ ຖືເປັນວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ຖ້າວ່າ :

(ກ) ເຄື່ອງມືໜີ້ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງຂອງວິສາຫະກິດ ຫາກມີການຊື້-ຂາຍໃນຕະຫຼາດທີ່ມີການຄວບຄຸມ (ໃນຕະຫຼາດຫຼັກຊັບ ພາຍໃນ ຫຼື ຕ່າງປະເທດ ຫຼື ນອກຕະຫຼາດຫຼັກຊັບ, ລວມທັງຕະຫຼາດພາຍໃນປະເທດ ຫຼື ພາກພື້ນ), ຫຼື

(ຂ) ຖືຊັບສິນ ຕາມຄວາມສາມາດເບິ່ງແຍງຮັກສາ ໃຫ້ກຸ່ມບຸກຄົນພາຍນອກ ເປັນທຸລະກິດພື້ນຖານ ຂອງຕົນເອງ. ສິ່ງນີ້ ແມ່ນກໍລະນີແບບຈຳເພາະຂອງທະນາຄານ, ສະຫະກອນສິນເຊື່ອ, ບໍລິສັດປະກັນໄພ, ນາຍໜ້າຊື້-ຂາຍຫຼັກຊັບ, ກອງທຶນລວມ ແລະ ທະນາຄານການລົງທຶນ, ຫຼື

(ຄ) ຖືກກຳນົດເປັນວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ໂດຍລັດຖະມົນຕີກະຊວງການເງິນ.

1.4 ບາງວິສາຫະກິດອາດຖືຊັບສິນຕາມຄວາມສາມາດຮັກສາດູແລ ໃຫ້ກຸ່ມບຸກຄົນພາຍນອກທີ່ກ້ວາງຂວາງ ຍ້ອນຮັກສາ ແລະ ຄຸ້ມຄອງຊັບພະຍາກອນການເງິນ ຂອງລູກຄ້າ, ລູກຄ້າທຸລະກິດ ຫຼື ສະມາຊິກທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ຊຶ່ງໄດ້ໃຫ້ຄວາມເຊື່ອຖືໃຫ້ວິສາຫະກິດນັ້ນ ຖືຊັບສິນໃຫ້. ເຖິງຢ່າງໃດກໍດີ, ຖ້າຫາກການກະທຳນີ້ ເປັນກິດຈະກຳສຳຮອງຂອງທຸລະກິດຕົ້ນຕໍ (ເຊັ່ນອາດ ແມ່ນກໍລະນີຕົວແທນທ່ອງທ່ຽວ ຫຼື ທຸລະກິດອະສັງຫາລິມະຊັບ, ໂຮງຮຽນ, ອົງການຈັດຕັ້ງການກຸສົນ, ວິສາຫະກິດສະຫະກອນ ທີ່ຕ້ອງມີສະມາຊິກຝາກເງິນ ແລະ ຜູ້ຂາຍທີ່ໄດ້ຮັບເງິນລ່ວງໜ້າໃນການສົ່ງມອບສິນຄ້າ ຫຼື ການບໍລິການ ເຊັ່ນ ບໍລິສັດສາທາລະນະປະໂຫຍດ), ກໍບໍ່ເປັນວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ.

1.5 ຖ້າວ່າວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ນຳໃຊ້ ມາດຕະຖານສະບັບນີ້, ເອກະສານລາຍງານການເງິນຂອງ ວິສາຫະກິດນັ້ນ ບໍ່ຄວນສະເໜີວ່າຖືກຕ້ອງຕາມມາດຕະຖານການລາຍງານການເງິນ ສຳລັບວິສາຫະກິດຂະໜາດນ້ອຍແລະ ກາງ.

1.6 ວິສາຫະກິດຂະໜາດນ້ອຍແລະກາງ ອາດເລືອກນຳໃຊ້ *ມາດຕະຖານການລາຍງານການເງິນ ສຳລັບວິສາຫະກິດຂະ ໜາດໃຫຍ່* ແລະ ວິສາຫະກິດຂະໜາດນ້ອຍທີ່ສຸດ ອາດເລືອກນຳໃຊ້ *ມາດຕະຖານການລາຍງານການເງິນ ສຳລັບວິ ສາຫະກິດຂະໜາດນ້ອຍແລະກາງ.*

ຖ້າວ່າເອກະສານລາຍງານການເງິນຂອງວິສາຫະກິດໃດໜຶ່ງ ອ້າງອີງວ່າປະຕິບັດຖືກຕ້ອງຕາມມາດຕະຖານການລາຍງານ ການເງິນສຳລັບວິສາຫະກິດຂະໜາດນ້ອຍແລະກາງ, ຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມຂໍ້ກຳນົດທັງໝົດຂອງມາດຕະຖານ ສະບັບນີ້.

| **ການສົມທຽບກັບ FRS ສຳລັບ ວທຍ** | |
|---|---|
| 1.1 | IASB ໄດ້ຕົກລົງນຳໃຊ້ຄຳສັບ "ວິສາຫະກິດຂະໜາດນ້ອຍແລະກາງ" ເພື່ອອ້າງອີງເຖິງທຸກວິສາຫະກິດທີ່ບໍ່ ແມ່ນວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ.<br>ກົດໝາຍວ່າດວ້ຍການບັນຊີ ຈຳແນກລະຫວ່າງສາມປະເພດວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ເຊັ່ນ: ວິສາຫະກິດຂະໜາດໃຫຍ່, ວິສາຫະກິດຂະໜາດນ້ອຍແລະກາງ, ແລະ ວິສາຫະກິດຂະໜາດນ້ອຍທີ່ ສຸດ. ວິສາຫະກິດຂະໜາດນ້ອຍແລະກາງ ໃຫ້ນຳໃຊ້ມາດຕະຖານການລາຍງານການເງິນ ສຳລັບວິສາຫະກິດ ຂະໜາດນ້ອຍແລະກາງ ທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ (FRS ສຳລັບ ວນກ) ເວັ້ນເສຍ ກຳນົດໄວ້ ຢ່າງອື່ນ ໃນມາດຕະຖານສະບັບນີ້. |
| 1.2 (ຄ), (ງ), ແລະ (ຈ) | ເງື່ອນໄຂມາດຕະຖານ ກ່ຽວກັບ ຂະໜາດ, ການຄວບຄຸມ, ເຄື່ອງມືສະຫຼັບຊັບຊ້ອນ – ເປັນສ່ວນສະເພາະ ຂອງມາດຕະຖານສະບັບນີ້ |
| 1.6 | ວິສາຫະກິດຂະໜາດນ້ອຍແລະກາງ ບໍ່ຖືກຫ້າມໃຫ້ນຳໃຊ້ FRS ສຳລັບ ວທຍ, ແຕ່ຕ້ອງໄດ້ຮັບອະນຸຍາດຈາກ ກະຊວງການເງິນກ່ອນ. ວິສາຫະກິດຂະໜາດນ້ອຍທີ່ສຸດ ບໍ່ຖືກຫ້າມໃຫ້ນຳໃຊ້ FRS ສຳລັບ ວນກ, ແຕ່ຕ້ອງ ໄດ້ຮັບອະນຸຍາດຈາກກະຊວງການເງິນກ່ອນ. |

## ໝວດ 2

## ຄວາມສຳນຶກ ແລະ ຫຼັກການລວມ

## ຂອບເຂດຂອງໝວດນີ້

2.1 ໝວດດັ່ງກ່າວນີ້ກ່າວເຖິງ**ຈຸດປະສົງຂອງເອກະສານລາຍງານການເງິນ**ຂອງວິສາຫະກິດຂະໜາດນ້ອຍແລະກາງ (ວນກ) ແລະ ຄຸນລັກສະນະ ທີ່ເຮັດໃຫ້ຂໍ້ມູນຂ່າວສານໃນເອກະສານລາຍງານການເງິນຂອງ ວນກ ເປັນປະໂຫຍດ. ນອກນັ້ນ, ຍັງກຳນົດ ກ່ຽວກັບຄວາມສຳນຶກ ແລະ ຫຼັກການພື້ນຖານທີ່ຢູ່ເບື້ອງຫຼັງຂອງເອກະສານລາຍງານການເງິນຂອງ ວນກ.

## ຈຸດປະສົງຂອງເອກະສານລາຍງານການເງິນຂອງວິສາຫະກິດຂະໜາດນ້ອຍແລະກາງ

2.2 ຈຸດປະສົງຂອງເອກະສານລາຍງານການເງິນຂອງວິສາຫະກິດຂະໜາດນ້ອຍແລະກາງ ຄືສະໜອງຂໍ້ມູນຂ່າວສານ ກ່ຽວກັບ **ຖານະການເງິນ**, **ຜົນການດຳເນີນງານ** ແລະ **ກະແສເງິນສົດ** ຂອງວິສາຫະກິດດັ່ງກ່າວທີ່ເປັນປະໂຫຍດສຳລັບການຕັດສິນບັນຫາທາງດ້ານເສດຖະກິດ ຂອງຜູ້ນຳໃຊ້ໃນວົງກວ້າງ ທີ່ບໍ່ຢູ່ໃນຖານະຈະຮຽກຮ້ອງເອົາບົດລາຍງານທີ່ປັບໃສ່ຄວາມຕ້ອງການສະເພາະຂອງຕົນ.

2.3 ເອກະສານລາຍງານການເງິນ ຍັງສະແດງໃຫ້ເຫັນ ກ່ຽວກັບຜົນຂອງການຄຸ້ມຄອງຂອງຄະນະບໍລິຫານ - ຄວາມຮັບຜິດຊອບລາຍງານໂດຍຄະນະບໍລິຫານ ກ່ຽວກັບແຫຼ່ງຊັບພະຍາກອນທີ່ໄດ້ຖືກມອບໝາຍໃຫ້.

## ລັກສະນະທາງດ້ານຄຸນນະພາບຂອງຂໍ້ມູນຂ່າວສານ ໃນເອກະສານລາຍງານການເງິນ

### ຄວາມເຂົ້າໃຈໄດ້

2.4 ຂໍ້ມູນຂ່າວສານທີ່ສະໜອງໃນເອກະສານລາຍງານການເງິນ ຕ້ອງສະເໜີຕາມແບບວິທີທີ່ເຂົ້າໃຈໄດ້ ສຳລັບຜູ້ນຳໃຊ້ທີ່ມີຄວາມຮູ້ອັນສົມເຫດສົມຜົນ ກ່ຽວກັບການທຸລະກິດ ແລະ ກິດຈະການເສດຖະກິດ ແລະ ການບັນຊີ ແລະ ມີຄວາມຕັ້ງໃຈທີ່ຈະສຶກສາຂໍ້ມູນຂ່າວສານຢ່າງລະອຽດດ້ວຍເຫດດ້ວຍຜົນ. ເຖິງຂໍ້ມູນຂ່າວສານມີຄວາມສະຫຼັບຊັບຊ້ອນແດ່ ແຕ່ບໍ່ຄວນລະເວັ້ນ ທີ່ຈະສະແດງໃນເອກະສານລາຍງານການເງິນ ພຽງເພື່ອເຫດຜົນທີ່ວ່າຂໍ້ມູນຂ່າວສານດັ່ງກ່າວ ຍາກເກີນທີ່ຜູ້ນຳໃຊ້ເອກະສານລາຍງານການເງິນຈະເຂົ້າໃຈໄດ້.

### ຄວາມກ່ຽວຂ້ອງກັບການຕັດສິນໃຈ

2.5 ຂໍ້ມູນຂ່າວສານທີ່ສະໜອງໃນເອກະສານລາຍງານການເງິນ ຕ້ອງກ່ຽວຂ້ອງກັບຄວາມຕ້ອງຂອງຜູ້ນຳໃຊ້ ເພື່ອຕັດສິນບັນຫາ. ຂໍ້ມູນຂ່າວສານມີຄຸນລັກສະນະ**ກ່ຽວຂ້ອງກັນ** ຖ້າຫາກສາມາດມີຜົນກະທົບຕໍ່ການຕັດສິນບັນຫາດ້ານເສດຖະກິດຂອງຜູ້ນຳໃຊ້ ຄືຊ່ວຍໃຫ້ເຂົາເຈົ້າປະເມີນຜົນເຫດການຜ່ານມາ, ໃນປັດຈຸບັນ ຫຼື ໃນອະນາຄົດ ຫຼື ໂດຍຢືນຢັນ ຫຼື ກວດແກ້ການປະເມີນຜົນຂອງເຂົາເຈົ້າໃນໄລຍະຜ່ານມາໄດ້.

### ຄວາມສຳຄັນໂດຍທຽບຖານ

2.6 ຂໍ້ມູນຂ່າວສານ ຈະຖືວ່າມີ**ຄວາມສຳຄັນໂດຍທຽບຖານ** ກໍຕໍ່ເມື່ອ ມີຄວາມກ່ຽວຂ້ອງກັບການຕັດສິນໃຈ - ຖ້າຫາກການຫຼົງລືມ ຫຼື ການລາຍງານຜິດພາດ ກ່ຽວກັບຂໍ້ມູນຂ່າວສານດັ່ງກ່າວ ຫາກສາມາດສົ່ງຜົນກະທົບຕໍ່ການຕັດສິນບັນຫາຂອງຜູ້ນຳໃຊ້ ບົນພື້ນຖານເອກະສານລາຍງານການເງິນ. ຄວາມສຳຄັນໂດຍທຽບຖານ ຂຶ້ນກັບຂະໜາດຂອງລາຍການ ຫຼື ຂໍ້ຜິດພາດທີ່ໄດ້ວິນິດໄສຕາມກໍລະນີສະເພາະ ກ່ຽວກັບການຫຼົງລືມ ຫຼື ການລາຍງານຜິດພາດ. ເຖິງຢ່າງໃດກໍດີ ຈະເປັນການບໍ່ເໝາະສົມ ຖ້າຫາກມີການຜີກອອກຈາກ *ມາດຕະຖານ ສຳລັບ ວນກ* ເລັກນ້ອຍ ຫຼື ບໍ່ມີການກວດແກ້ ການຜີກອອກດັ່ງກ່າວເພື່ອຈະບັນລຸການສະເໜີສະເພາະ ກ່ຽວກັບຖານະການເງິນ, ຜົນການດຳເນີນງານດ້ານການເງິນ ຫຼື ກະແສເງິນສົດຂອງວິສາຫະກິດໃດໜຶ່ງ.

## ຄວາມເຊື່ອຖືໄດ້

2.7 ຂໍ້ມູນຂ່າວສານທີ່ສະໜອງໃນເອກະສານລາຍງານການເງິນ ຕ້ອງ**ເຊື່ອຖືໄດ້**. ຂໍ້ມູນຂ່າວສານເປັນໜ້າເຊື່ອຖືໄດ້ ຖ້າຫາກປາສະຈາກ ຂໍ້ຜິດພາດສຳຄັນ ແລະ ບໍ່ມີການບ່າຍບ່ຽງຫຼາຍ ແລະ ສະແດງເຖິງຢ່າງທ່ຽງທຳ ສິ່ງທີ່ຕ້ອງສະແດງ ຫຼື ສິ່ງທີ່ຄາດຫວັງໄວ້ໃຫ້ຖືກສະແດງຢ່າງສົມເຫດສົມຜົນ. ເອກະສານລາຍງານການເງິນ ຈະມີການບ່າຍບ່ຽງ (ໝາຍຄວາມວ່າ ບໍ່ມີລັກສະນະເປັນກາງ) ຖ້າວ່າ, ຜ່ານການເລືອກເฟັ້ນ ຫຼື ສະເໜີຂໍ້ມູນຂ່າວສານ, ຫາກມີເປົ້າໝາຍແນໃສ່ສົ່ງຜົນກະທົບ ໃຫ້ມີການຕັດສິນບັນຫາ ຫຼື ຄຳວິນິດໄສ ເພື່ອໃຫ້ໄດ້ຕາມຜົນໄດ້ຮັບ ຫຼື ໝາກຜົນໃດໜຶ່ງ ທີ່ໄດ້ກຳນົດໄວ້ເບື້ອງຕົ້ນ.

## ຄວາມຮອບຄອບ

2.9 ຄວາມບໍ່ແນ່ນອນ ຊຶ່ງປົ່ນອ້ອມຫຼາຍເຫດການ ແລະ ເງື່ອນໄຂທີ່ຫຼີກລ້ຽງບໍ່ໄດ້ ຖືກຍອມຮັບ ຜ່ານການເປີດເຜີຍເນື້ອແທ້ ແລະ ຂອບເຂດຂໍ້ມູນຂ່າວສານເຫຼົ່ານັ້ນ ແລະຜ່ານການນຳໃຊ້**ຄວາມຮອບຄອບ**ໃນການສ້າງເອກະສານລາຍງານການເງິນ. ຕ້ອງໄດ້ຄຳນຶງເຖິງຄວາມຮອບຄອບ ດ້ວຍຄວາມລະມັດລະວັງໃນລະດັບໃດໜຶ່ງ ໃນການດຳເນີນການວິນິດໄສອັນຈຳເປັນ ເພື່ອສ້າງຕົວເລກຄາດຄະເນປະຕິບັດ ໃນສະພາບແຫ່ງຄວາມບໍ່ແນ່ນອນ ເພື່ອເຮັດແນວໃດ ບໍ່ໃຫ້ຕີມູນຄ່າຊັບສິນ ຫຼື ລາຍຮັບ ເກີນລະດັບຕົວຈິງ ແລະ ຕີມູນຄ່າໜີ້ສິນ ຫຼື ລາຍຈ່າຍຫຼຸດລະດັບຕົວຈິງ. ເຖິງຢ່າງໃດກໍດີ, ການນຳໃຊ້ຫຼັກການແຫ່ງຄວາມຮອບຄອບ ບໍ່ອະນຸຍາດໃຫ້ມີການຕີມູນຄ່າຊັບສິນ ຫຼື ລາຍຮັບຫຼຸດລະດັບຕົວຈິງ, ຫຼື ການຕີມູນຄ່າໜີ້ສິນ ຫຼື ລາຍຈ່າຍ ສົ່ນລະດັບຕົວຈິງ ແບບເຈດຕະນາ. ເວົ້າລວມ, ຄວາມຮອບຄອບບໍ່ອະນຸຍາດໃຫ້ມີການບ່າຍບ່ຽງແຕ່ປະການໃດ.

## ຄວາມຄົບຖ້ວນ

2.10 ເພື່ອໃຫ້ເຊື່ອຖືໄດ້, ຂໍ້ມູນຂ່າວສານ ໃນເອກະສານລາຍງານການເງິນ ຕ້ອງລະອຽດຄົບຖ້ວນ, ພາຍໃຕ້ຂໍ້ຈຳກັດ ຂອງຄວາມສຳຄັນໂດຍທຽບຖານ ແລະ ຄ່າໃຊ້ຈ່າຍ. ການຫຼົງລືມສາມາດເຮັດໃຫ້ຂໍ້ມູນຂ່າວສານຜິດພາດ ຫຼື ເຮັດໃຫ້ເຂົ້າໃຈຜິດ, ແລະ ຜົນຕາມມາກໍຄື, ບໍ່ໜ້າເຊື່ອຖື ແລະ ບໍ່ພຽງພໍ ໃນແງ່ຂອງຄວາມກ່ຽວຂ້ອງກັບການຕັດສິນໃຈ.

## ຄວາມສາມາດສົມທຽບກັນໄດ້

2.11 ຜູ້ນຳໃຊ້ຕ້ອງສາມາດສົມທຽບເອກະສານລາຍງານການເງິນ ຂອງວິສາຫະກິດໃດໜຶ່ງ ເປັນຫຼາຍໄລຍະເວລາເພື່ອຈຳແນກແນວໂນ້ມຂອງຖານະການເງິນ ແລະ ຜົນການດຳເນີນງານຂອງວິສາຫະກິດນັ້ນ. ຜູ້ນຳໃຊ້ຍັງຕ້ອງສາມາດສົມທຽບເອກະສານລາຍງານການເງິນ ລະຫວ່າງວິສາຫະກິດຕ່າງໆ ເພື່ອປະເມີນຜົນຖານະການເງິນ, ຜົນການດຳເນີນງານ ແລະກະແສເງິນສົດທີ່ກ່ຽວຂ້ອງ. ດັ່ງນັ້ນ ການຕີມູນຄ່າ ແລະ ການສະເໜີຜົນກະທົບທາງດ້ານການເງິນ ຂອງລາຍການເຄື່ອນໄຫວ, ເຫດການອື່ນໆ ແລະ ເງື່ອນໄຂອື່ນໆເຫຼົ່ານີ້ ຈຶ່ງຕ້ອງດຳເນີນແບບລັກສະນະຖາວອນ ບໍ່ວ່າເປັນການສົມທຽບໃນວິສາຫະກິດດຽວໃດໜຶ່ງ ຕາມແຕ່ລະໄລຍະເວລາ ຫຼື ເປັນການສົມທຽບລະຫວ່າງແຕ່ລະວິສາຫະກິດກໍຕາມ. ນອກນັ້ນ, ຜູ້ນຳໃຊ້ກໍຕ້ອງໄດ້ຮັບຊາບ ກ່ຽວກັບ**ນະໂຍບາຍການບັນຊີ** ທີ່ໄດ້ນຳໃຊ້ໃນການສ້າງເອກະສານລາຍງານການເງິນ ແລະ ທຸກການປ່ຽນແປງ ຕໍ່ກັບນະໂຍບາຍການບັນຊີ ກໍຄືຜົນກະທົບຈາກການປ່ຽນແປງ.

## ຄວາມທັນການ

2.12 ເພື່ອໃຫ້ກ່ຽວຂ້ອງກັບການຕັດສິນໃຈ, ຂໍ້ມູນຂ່າວສານການເງິນ ຕ້ອງສາມາດສົ່ງຜົນກະທົບ ຕໍ່ການຕັດສິນບັນຫາທາງດ້ານເສດຖະກິດຂອງຜູ້ນຳໃຊ້. **ຄວາມທັນການ** ລວມມີການສະໜອງຂໍ້ມູນຂ່າວສານຢູ່ພາຍໃນຂອບເຂດເວລາຂອງການຕັດສິນບັນຫາ. ຂໍ້ມູນຂ່າວສານສາມາດສູນເສຍຄວາມກ່ຽວຂ້ອງກັບການຕັດສິນໃຈ ຖ້າຫາກມີການສະໜອງຊັກຊ້າ. ຄະນະບໍລິຫານຕ້ອງຊອກຫາພາວະດຸ່ນດ່ຽງ ລະຫ່ວາງຄວາມທັນການ ໃນການສະເໜີຂໍ້ມູນຂ່າວສານ ກັບການສະໜອງຂໍ້ມູນຂ່າວສານທີ່ໜ້າເຊື່ອຖື. ໃນການບັນລຸພາວະດຸ່ນດ່ຽງ ລະຫ່ວາງຄວາມກ່ຽວຂ້ອງກັບການຕັດສິນໃຈ ແລະ ຄວາມເຊື່ອຖືໄດ້ນັ້ນ, ສິ່ງທີ່ຕ້ອງພິຈາລະນາຕົ້ນຕໍຄື ວິທີໃດທີ່ຈະຕອບສະໜອງຄວາມຕ້ອງການຂອງຜູ້ນຳໃຊ້ ໃນການຕັດສິນບັນຫາທາງດ້ານເສດຖະກິດໃຫ້ດີທີ່ສຸດ.

## ພາວະດຸ່ນດ່ຽງ ລະຫ່ວາງ ຜົນປະໂຫຍດ ແລະ ຕົ້ນທຶນໃຊ້ຈ່າຍ

2.13 ຜົນປະໂຫຍດທີ່ໄດ້ຮັບຈາກຂໍ້ມູນຂ່າວສານຄວນສູງກ່ວາ ຕົ້ນທຶນໃຊ້ຈ່າຍໃນການສະໜອງຂໍ້ມູນຂ່າວສານດັ່ງກ່າວ. ການປະເມີນຜົນປະໂຫຍດ ແລະ ຄ່າໃຊ້ຈ່າຍ, ໂດຍສ່ວນໃຫ່ຍ, ແມ່ນຂະບວນການວິນິດໄສ. ນອກນັ້ນ ຄ່າໃຊ້ຈ່າຍບໍ່ຈຳເປັນຕ້ອງແມ່ນຜູ້ນຳໃຊ້ທີ່ໄດ້ຮັບຜົນປະໂຫຍດເປັນຜູ້ແບກຫາບຢູ່ສະເໝີໄປ. ສ່ວນຫຼາຍ, ຜູ້ນຳໃຊ້ພາຍນອກໃນວົງກວ້າງ ຈະມີຜົນປະໂຫຍດຈາກຂໍ້ມູນຂ່າວສານດັ່ງກ່າວ.

2.14 ຂໍ້ມູນຂ່າວສານຈາກການລາຍງານການເງິນ ຊ່ວຍໃຫ້ຜູ້ປະກອບທຶນຕັດສິນບັນຫາໄດ້ດີກ່ວາເກົ່າ, ຊຶ່ງເຮັດໃຫ້ການເຄື່ອນໄຫວຂອງຕະຫຼາດທຶນມີປະສິດທິຜົນຫຼາຍກ່ວາເກົ່າ ແລະ ຫຼຸດຜ່ອນຕົ້ນທຶນ ຂອງທຶນລົງ ສຳລັບເສດຖະກິດໂດຍລວມ. ແຕ່ລະວິສາຫະກິດກໍໄດ້ຮັບຜົນປະໂຫຍດເຊັ່ນດຽວກັນ, ລວມທັງຊ່ອງທາງເຂົ້າຫາຕະຫຼາດທຶນທີ່ໄດ້ຮັບການປັບປຸງ, ຜົນກະທົບທີ່ເອື້ອອຳນວຍຕໍ່ການພົວພັນກັບສາທາລະນະຊົນ ແລະ ບາງທີກໍເຮັດໃຫ້ຕົ້ນທຶນຂອງທຶນຫຼຸດລົງກ່ວາເກົ່າ. ຜົນປະໂຫຍດຍັງອາດລວມມີການຕັດສິນບັນຫາດ້ານການບໍລິຫານຢ່າງຮອບຮູ້ກ່ວາເກົ່າ, ຍ້ອນວ່າຂໍ້ມູນຂ່າວສານການເງິນທີ່ນຳໃຊ້ຢູ່ພາຍໃນ, ຢ່າງໜ້ອຍ ສ່ວນໜຶ່ງ ຈະອີງໃສ່ຂໍ້ມູນຂ່າວສານທີ່ໄດ້ສ້າງຂຶ້ນ ເພື່ອຈຸດປະສົງໃນການສະໜອງຂໍ້ມູນຂ່າວສານການເງິນເພື່ອນຳໃຊ້ໂດຍທົ່ວໄປ.

## ຖານະການເງິນ

2.15 ຖານະການເງິນຂອງວິສາຫະກິດໃດໜຶ່ງ ແມ່ນສາຍພົວພັນ ລະຫ່ວາງ ຊັບສິນ, ໜີ້ສິນ ແລະ ທຶນເຈົ້າຂອງໃນວັນເວລາໃດໜຶ່ງສະເພາະ ດັ່ງທີ່ໄດ້ສະເໜີໃນ**ໃບລາຍງານຖານະການເງິນ**. ນິຍາມອົງປະກອບດັ່ງກ່າວ ມີຄືດັ່ງລຸ່ມນີ້ :

(ກ) **ຊັບສິນ** ແມ່ນຊັບພະຍາກອນທີ່ວິສາຫະກິດເປັນຜູ້ຄວບຄຸມ ແລະເປັນຜົນຈາກເຫດການຜ່ານມາ ແລະ ຊຶ່ງຄາດວ່າຈາກຊັບສິນດັ່ງກ່າວ ວິສາຫະກິດຈະໄດ້ຮັບຜົນປະໂຫຍດດ້ານເສດຖະກິດໃນອະນາຄົດ.

(ຂ) **ໜີ້ສິນ** ແມ່ນພັນທະປັດຈຸບັນຂອງວິສາຫະກິດ ທີ່ເປັນຜົນຈາກເຫດການຜ່ານມາ, ຊຶ່ງໃນການຊຳລະສະສາງໜີ້ສິນດັ່ງກ່າວ ຄາດວ່າຈະສົ່ງຜົນໃຫ້ວິສາຫະກິດສູນເສຍຊັບພະຍາກອນທີ່ມີຜົນປະໂຫຍດດ້ານເສດຖະກິດ.

(ຄ) **ທຶນເຈົ້າຂອງ**ແມ່ນຜົນປະໂຫຍດທີ່ຍັງເຫຼືອ ໃນຊັບສິນຂອງວິສາຫະກິດພາຍຫຼັງຫັກໜີ້ສິນທັງໝົດອອກ.

2.16 ບາງລາຍການ ທີ່ກົງກັບຄຳນິຍາມຂອງຊັບສິນ ຫຼື ໜີ້ສິນໃດໜຶ່ງ ອາດບໍ່ຖືກຮັບຮູ້ລາຍການບັນຊີ ເປັນຊັບສິນ ຫຼື ໜີ້ສິນໃນໃບລາຍງານຖານະການເງິນ ເນື່ອງຈາກວ່າລາຍການເຫຼົ່ານັ້ນ ບໍ່ສອດຄ່ອງກັບເງື່ອນໄຂມາດຕະຖານ ສຳລັບ **ການຮັບຮູ້ລາຍການບັນຊີ** ໃນວັກ 2.27-2.32. ໂດຍສະເພາະແລ້ວ, ກ່ອນຊັບສິນ ຫຼື ໜີ້ສິນ ຈະຖືກຮັບຮູ້ລາຍການບັນຊີໄດ້ນັ້ນ ເພື່ອຖືກຕ້ອງຕາມເງື່ອນໄຂມາດຕະຖານຂອງຄວາມອາດເປັນໄປໄດ້ ການຄາດຫວັງວ່າ ຫົວໜ່ວຍຈະໄດ້ຮັບ ຫຼື ເສຍ ຜົນປະໂຫຍດທາງດ້ານເສດຖະກິດ ຕ້ອງມີຄວາມແນ່ນອນສົມຄວນ.

### ຊັບສິນ

2.17 ຜົນປະໂຫຍດດ້ານເສດຖະກິດໃນອະນາຄົດ ຂອງຊັບສິນໃດໜຶ່ງ ແມ່ນຄວາມສາມາດບົ່ມຊ້ອນຂອງຊັບສິນດັ່ງກ່າວທີ່ຈະປະກອບສ່ວນໂດຍກົງ ຫຼື ໂດຍທາງອ້ອມ ໃນການເຮັດໃຫ້ວິສາຫະກິດຮັບກະແສເງິນສົດ ຫຼື **ສິ່ງທຽບເທົ່າເງິນສົດ**. ກະແສເງິນສົດດັ່ງກ່າວ ອາດເກີດຈາກການນຳໃຊ້ຊັບສິນ ຫຼື ການຂາຍຊັບສິນອອກ.

2.18 ຊັບສິນຈຳນວນຫຼາຍ, ເຊັ່ນ ຊັບສົມບັດຄົງທີ່ມີຕົວຕົນ (ທີ່ດິນ, ອາຄານ ແລະ ອຸປະກອນ) ເປັນຊັບສິນ ທີ່ມີຕົວຕົນ. ເຖິງຢ່າງໃດກໍດີ, ການມີຕົວຕົນ ບໍ່ເປັນສິ່ງຕົ້ນຕໍ ສຳລັບຄວາມມີຈິງຂອງຊັບສິນ. ບາງຊັບສິນ ກໍບໍ່ມີຕົວຕົນ.

### ໜີ້ສິນ

2.20 ໜຶ່ງໃນລັກສະນະເດັ່ນຕົ້ນຕໍຂອງໜີ້ສິນ ຄືວິສາຫະກິດມີພັນທະໃນປັດຈຸບັນທີ່ຈະຕ້ອງດຳເນີນການ ຫຼື ປະຕິບັດ ດ້ວຍວິທີການໃດໜຶ່ງ. ພັນທະອາດເປັນພັນທະທາງກົດໝາຍ ຫຼື **ພັນທະແບບປະລິຍາຍ**. ພັນທະທາງກົດໝາຍ ມີຜົນບັງຄັບຕາມກົດໝາຍ ເນື່ອງຈາກເປັນສັນຍາຂໍ້ຜູກມັດ ຫຼື ເປັນຂໍ້ບັງຄັບຕາມກົດໝາຍ. ພັນທະແບບປະລິຍາຍ ແມ່ນພັນທະທີ່ກຳເນີດຈາກການກະທຳຂອງວິສາຫະກິດ ຖ້າວ່າ :

(ກ) ວິສາຫະກິດໄດ້ແຈ້ງໃຫ້ພາກສ່ວນອື່ນ ວ່າຕົນເອງຈະມີຄວາມຮັບຜິດຊອບບາງປະການ ຕາມການປະຕິບັດໃນໄລຍະຜ່ານມາ ຈົນຖືເປັນແບບແຜນ ດ້ວຍນະໂຍບາຍທີ່ໄດ້ປະກາດ ຫຼື ຖະແຫຼງການໃນປັດຈຸບັນທີ່ບົ່ງບອກແຈ້ງຢ່າງພຽງພໍ, ແລະ

(ຂ) ຜົນຕາມມາຄື ວິສາຫະກິດໄດ້ຕັ້ງຄວາມຄາດຫວັງທີ່ໃຊ້ການໄດ້ກັບພາກສ່ວນອື່ນ ວ່າຕົນເອງຈະແບກຫາບຄວາມຮັບຜິດຊອບຕໍ່ພັນທະດັ່ງກ່າວ.

2.21 ການຊຳລະສະສາງພັນທະປັດຈຸບັນ ໂດຍທົ່ວໄປຈຳຕ້ອງມີການຈ່າຍເປັນເງິນສົດ, ການໂອນຊັບສິນອື່ນໃຫ້, ການໃຫ້ບໍລິການ, ການປ່ຽນແທນພັນທະດັ່ງກ່າວ ກັບພັນທະອື່ນ ຫຼື ການປ່ຽນພັນທະ ເປັນທຶນເຈົ້າຂອງ. ພັນທະຍັງສາມາດສິ້ນ

ສຸດດ້ວຍວິທີທາງອື່ນ ເຊັ່ນການສະຫຼະສິດໂດຍເຈົ້າໜີ້ ຫຼື ການໝົດສິດຂອງເຈົ້າໜີ້.

### ທຶນເຈົ້າຂອງ

2.22 ທຶນເຈົ້າຂອງ ແມ່ນມູນຄ່າຍັງເຫຼືອຂອງຊັບສິນທີ່ໄດ້ຖືກຮັບຮູ້ເປັນລາຍການບັນຊີ ຫັກໜີ້ສິນທີ່ໄດ້ຖືກຮັບຮູ້ເປັນລາຍການບັນຊີອອກ. ທຶນເຈົ້າຂອງສາມາດຈັດເປັນປະເພດລາຍການຍ່ອຍ ໃນໃບລາຍງານຖານະການເງິນ. ຕົວຢ່າງ, ໃນນິຕິບຸກຄົນທີ່ເປັນບໍລິສັດໃດໜຶ່ງ, ການຈັດປະເພດລາຍການຍ່ອຍນີ້ ອາດລວມມີເງິນທຶນທີ່ໄດ້ຈາກການປະກອບສ່ວນຂອງຜູ້ຖືຮຸ້ນ, ກຳໄລລໍຖ້າແບ່ງປັນ, ກຳຄືກຳໄລ ຫຼື ຂາດທຶນທີ່ໄດ້ຖືກຮັບຮູ້ເປັນລາຍການບັນຊີໂດຍກົງ ເປັນທຶນເຈົ້າຂອງ.

## ຜົນການດຳເນີນງານ

2.23 **ຜົນການດຳເນີນງານ** ແມ່ນສາຍພົວພັນ ລະຫ່ວາງ ລາຍຮັບ ແລະ ລາຍຈ່າຍຂອງວິສາຫະກິດໃດໜຶ່ງໃນ**ຮອບເວລາລາຍງານ.** ວິສາຫະກິດຂະໜາດນ້ອຍແລະກາງ ຕ້ອງສະແດງຜົນການດຳເນີນງານ ໃນເອກະສານລາຍງານການເງິນ ສອງໃບລາຍງານ (**ໃບລາຍງານຜົນໄດ້ຮັບ** ແລະ ໃບລາຍງານຜົນໄດ້ຮັບສັງລວມ). ສ່ວນຫຼາຍ **ລວມຍອດຜົນໄດ້ຮັບສັງລວມ** ແລະ **ກຳໄລ ຫຼື ຂາດທຶນ** ຖືກນຳໃຊ້ເປັນການວັດແທກຜົນການດຳເນີນງານ ຫຼື ເປັນພື້ນຖານ ສຳລັບສິ່ງວັດແທກອື່ນໆ ເຊັ່ນ ຜົນຕອບແທນຈາກການລົງທຶນ ຫຼື ກຳໄລຕໍ່ຮຸ້ນ. ການນິຍາມລາຍຮັບ ແລະ ລາຍຈ່າຍ ມີດັ່ງລຸ່ມນີ້:

(ກ) **ລາຍຮັບ** ແມ່ນການເພີ້ມຂຶ້ນຂອງຜົນປະໂຫຍດດ້ານເສດຖະກິດ ໃນຮອບເວລາລາຍງານ, ໃນຮູບການໄດ້ຮັບ ຫຼື ການເພີ້ມຂຶ້ນຂອງຊັບສິນ ຫຼື ການຫຼຸດລົງຂອງໜີ້ສິນ ຊຶ່ງເປັນຜົນເຮັດໃຫ້ທຶນເຈົ້າຂອງເພີ້ມຂຶ້ນ ທີ່ນອກເໜືອການເພີ້ມຂຶ້ນທີ່ກ່ຽວຂ້ອງກັບການປະກອບສ່ວນ ຈາກຜູ້ລົງທຶນໃນທຶນເຈົ້າຂອງ.

(ຂ) **ລາຍຈ່າຍ** ແມ່ນການຫຼຸດລົງດ້ານຜົນປະໂຫຍດດ້ານເສດຖະກິດ ໃນຮອບເວລາລາຍງານ ໃນຮູບການສູນເສຍ ຫຼື ການຫຼຸດລົງຂອງຊັບສິນ ຫຼື ການເພີ້ມຂຶ້ນຂອງໜີ້ສິນ ຊຶ່ງມີຜົນເຮັດໃຫ້ທຶນເຈົ້າຂອງຫຼຸດລົງ ທີ່ນອກເໜືອການຫຼຸດລົງທີ່ກ່ຽວຂ້ອງກັບການແຈກຢາຍໃຫ້ຜູ້ລົງທຶນໃນທຶນເຈົ້າຂອງ.

2.24 ການຮັບຮູ້ລາຍການບັນຊີ ລາຍຮັບ ແລະ ລາຍຈ່າຍ ເປັນຜົນໂດຍກົງຈາກການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າຊັບສິນ ແລະ ໜີ້ສິນ. ເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີ ເປັນລາຍຮັບ ແລະ ລາຍຈ່າຍ ຖືກຍົກຂຶ້ນໃນວັກ 2.27 ຫາ 2.32.

### ລາຍຮັບ

2.25 ຄຳນິຍາມ ກ່ຽວກັບ ລາຍຮັບ ລວມມີທັງ ລາຍໄດ້ ແລະ ສ່ວນໄດ້.

(ກ) **ລາຍໄດ້** ແມ່ນລາຍຮັບທີ່ກຳເນີດຈາກກິດຈະການປົກກະຕິ ຂອງວິສາຫະກິດໃດໜຶ່ງ ແລະ ເອີ້ນຕາມຊື່ຕ່າງໆ ເຊັ່ນ ການຂາຍ, ຄ່າທຳນຽມ, ດອກເບ້ຍ, ເງິນປັນຜົນ, ຄ່າສິດທິ ແລະ ຄ່າເຊົ່າ.

(ຂ) **ສ່ວນໄດ້** ແມ່ນລາຍການອື່ນໆ ທີ່ກົງກັບຄຳນິຍາມຂອງລາຍຮັບ ແຕ່ຫາກບໍ່ແມ່ນລາຍໄດ້. ຖ້າຫາກມີການລົງບັນຊີ ໃນໃບລາຍງານຜົນໄດ້ຮັບສັງລວມ, ຕາມປົກກະຕິຈະຖືກສະແດງແຍກອອກຕ່າງຫາກ ຍ້ອນວ່າການຮັບຊາບ ກ່ຽວກັບລາຍການດັ່ງກ່າວ ເປັນປະໂຫຍດ ສຳລັບການຕັດສິນບັນຫາທາງດ້ານເສດຖະກິດ.

### ລາຍຈ່າຍ

2.26 ຄຳນິຍາມກ່ຽວກັບ ລາຍຈ່າຍປະກອບດ້ວຍສ່ວນເສຍ ແລະ ລາຍຈ່າຍທີ່ກຳເນີດຈາກກິດຈະການປົກກະຕິຂອງວິສາຫະກິດ.

(ກ) **ລາຍຈ່າຍ**ທີ່ເກີດຂຶ້ນໃນກິດຈະການປົກກະຕິຂອງວິສາຫະກິດ ປະກອບດ້ວຍ, ຕົວຢ່າງ ຕົ້ນທຶນຂາຍ, ເງິນເດືອນ, ຄ່າຫຼູ້ຍຫ້ຽນ. ຕາມປົກກະຕິ ລາຍຈ່າຍຈະຢູ່ໃນຮູບການກະແສຈ່າຍອອກ ຫຼື ການເຊື່ອມຄ່າຂອງຊັບສິນ ເຊັ່ນ ເງິນສົດ ແລະ ສິ່ງທຽບເທົ່າເງິນສົດ, ເຄື່ອງໃນສາງ ຫຼື ຊັບສົມບັດຄົງທີ່ມີຕົວຕົນ.

(ຂ) **ສ່ວນເສຍ** ສະແດງເຖິງລາຍການອື່ນໆ ທີ່ກົງກັບຄຳນິຍາມຂອງລາຍຈ່າຍ ແລະ ອາດເກີດຂຶ້ນໃນກິດຈະການປົກກະຕິຂອງວິສາຫະກິດ. ເວລາມີການລົງບັນຊີສ່ວນເສຍໃນໃບລາຍງານຜົນໄດ້ຮັບສັງລວມ, ຕາມປົກກະຕິລາຍການດັ່ງກ່າວຈະຖືກສະແດງແຍກອອກຕ່າງຫາກ ຍ້ອນວ່າການຮັບຊາບກ່ຽວກັບລາຍການດັ່ງກ່າວ ເປັນປະໂຫຍດ

ສຳລັບການຕັດສິນບັນຫາທາງດ້ານເສດຖະກິດ.

## ການຮັບຮູ້ລາຍການບັນຊີ ຊັບສິນ, ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ

2.27 ການຮັບຮູ້ລາຍການບັນຊີ ແມ່ນຂະບວນການລວມເອົາລາຍການເຂົ້າເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ຖ້າ ລາຍການນັ້ນກົງກັບຄຳນິຍາມຂອງຊັບສິນ, ໜີ້ສິນ, ລາຍຮັບ ຫຼື ລາຍຈ່າຍ ແລະ ຕອບສະໜອງກັບເງື່ອນໄຂມາດຕະຖານ ລຸ່ມນີ້ :

(ກ) **ອາດເປັນໄປໄດ້** ທີ່ຜົນປະ�โยດດ້ານເສດຖະກິດໃນອະນາຄົດ ທີ່ຕິດພັນກັບລາຍການດັ່ງກ່າວ ຈະເຂົ້າ ຫຼື ອອກ ຈາກວິສາຫະກິດ, ແລະ

(ຂ) ລາຍການດັ່ງກ່າວ ມີຕົ້ນທຶນ ຫຼື ມູນຄ່າ ທີ່ສາມາດຕີມູນຄ່າໄດ້ຢ່າງໜ້າເຊື່ອຖືໄດ້.

2.28 ການບໍ່ຮັບຮູ້ລາຍການບັນຊີ ລາຍການທີ່ກົງກັບເງື່ອນໄຂມາດຕະຖານດັ່ງກ່າວ ບໍ່ຖືກດັດແກ້ ດ້ວຍການເປີດເຜີຍໃນ **ນະ�โยบายการบันชี**ທີ່ນຳໃຊ້ ຫຼື ໃນ**ບົດອະທິບາຍຊ້ອນທ້າຍ** ຫຼື ໃນເອກະສານອະທິບາຍເພີ່ມເຕີມ.

### ຄວາມອາດເປັນໄປໄດ້ຂອງຜົນປະ�โยดด้านเสดถะกิดในอะนาคิด

2.29 ຄວາມສຳນຶກ ກ່ຽວກັບຄວາມອາດເປັນໄປໄດ້ ຖືກນຳໃຊ້ໃນເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີ ເພື່ອອີງໃສ່ ລະດັບຄວາມບໍ່ແນ່ນອນທີ່ວ່າຜົນປະ�โยดด้านเสดถะกิดในอะนาคิดที่ติดพันกับลายการ ที่ຈະເຂົ້າ ຫຼື ອອກຈາກວິ ສາຫະກິດ. ການປະເມີນຜົນ ກ່ຽວກັບລະດັບຄວາມບໍ່ແນ່ນອນ ທີ່ຕິດພັນກັບກະແສຜົນປະโยดด้านเสดถะกิดใน ອະນາຄົດ ຖືກດຳເນີນໂດຍອີງຕາມຫຼັກຖານຢັ້ງຢືນທີ່ກ່ຽວກັບສະພາບການ ໃນທ້າຍຮອບເວລາລາຍງານ ໃນເວລາສ້າງ ເອກະສານລາຍງານການເງິນນັ້ນ. ການປະເມີນຜົນດັ່ງກ່າວ ດຳເນີນເປັນແຕ່ລະລາຍສຳລັບລາຍການທີ່ມີຄວາມສຳຄັນ ແລະ ສຳລັບກຸ່ມ ທີ່ເປັນກຸ່ມປະຊາກອນຂະໜາດໃຫ່ຍ ຂອງບັນດາລາຍການແຕ່ລະອັນ ທີ່ບໍ່ມີຄວາມສຳຄັນທຽບຖານ.

### ຄວາມເຊື່ອຖືໄດ້ຂອງການຕີມູນຄ່າ

2.30 ເງື່ອນໄຂມາດຕະຖານທີສອງດ້ານການຮັບຮູ້ລາຍການບັນຊີລາຍການໃດໜຶ່ງມີຄື ຕົ້ນທຶນ ຫຼື ມູນຄ່າ ທີ່ສາມາດຕີມູນຄ່າ ຢ່າງໜ້າເຊື່ອຖືໄດ້. ໃນຫຼາຍກໍລະນີ, ຕົ້ນທຶນ ຫຼື ມູນຄ່າຂອງລາຍການໃດໜຶ່ງ ເປັນທີ່ຮູ້ຈັກມາກ່ອນ. ໃນກໍລະນີອື່ນ, ຕ້ອງ ໄດ້ຄາດຄະເນເອົາ. ການນຳໃຊ້ການຄາດຄະເນ ຢ່າງສົມເຫດສົມຜົນ ແມ່ນພາກສ່ວນໜຶ່ງຕົ້ນຕໍ ຂອງການສ້າງເອກະສານ ລາຍງານການເງິນ ແລະ ຈະບໍ່ເຮັດໃຫ້ເອກະສານລາຍງານການເງິນ ຂາດຄວາມເຊື່ອຖືໄດ້. ຖ້າຫາກບໍ່ສາມາດຄາດຄະເນ ຢ່າງສົມເຫດສົມຜົນໄດ້, ບໍ່ໃຫ້ຮັບຮູ້ເອົາລາຍການນັ້ນ ໃນເອກະສານລາຍງານການເງິນ.

2.31 ລາຍການທີ່ບໍ່ກົງກັບເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີ ສາມາດກົງກັບເງື່ອນໄຂມາດຕະຖານການຮັບຮູ້ລາຍ ການບັນຊີຕາມພາຍຫຼັງ, ຊຶ່ງເປັນຜົນຈາກສະຖານະການ ຫຼື ເຫດການທີ່ປ່ຽນແປງຕາມພາຍຫຼັງ.

2.32 ເຖິງຢ່າງໃດກໍດີ, ລາຍການທີ່ບໍ່ກົງກັບເງື່ອນໄຂມາດຕະຖານດ້ານການຮັບຮູ້ລາຍການບັນຊີ ອາດເຮັດໃຫ້ມີຄວາມຈຳເປັນ ຕ້ອງເປີດເຜີຍໃນບົດອະທິບາຍຊ້ອນທ້າຍ, ໃນເອກະສານອະທິບາຍ ຫຼື ຕາຕະລາງເພີ່ມເຕີມ. ສິ່ງນີ້ຈະແທດເໝາະ ຖ້າວ່າ ຄວາມຮູ້ກ່ຽວກັບລາຍການດັ່ງກ່າວ ກ່ຽວພັນກັບການປະເມີນຜົນຂອງຜູ້ນຳໃຊ້ເອກະສານລາຍງານການເງິນ ກ່ຽວກັບຖານະ ການເງິນ, ຜົນການດຳເນີນງານ ແລະ ສ່ວນປ່ຽນແປງຂອງຖານະການເງິນຂອງວິສາຫະກິດໃດໜຶ່ງ.

## ການຕີມູນຄ່າຊັບສິນ, ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ

2.33 **ການຕີມູນຄ່າ**ແມ່ນຂະບວນການກຳນົດຈຳນວນເງິນ ຊຶ່ງວິສາຫະກິດໃດໜຶ່ງ ຕີມູນຄ່າຊັບສິນ, ໜີ້ສິນ, ລາຍຮັບ ແລະ ລາຍ ຈ່າຍ ໃນເອກະສານລາຍງານການເງິນຂອງຕົນ. ການຕີມູນຄ່າລວມມີການເລືອກເຟັ້ນພື້ນຖານການຕີມູນຄ່າ. ມາດຕະ ຖານສະບັບນີ້ ກຳນົດພື້ນຖານການຕີມູນຄ່າ ຊຶ່ງວິສາຫະກິດຕ້ອງນຳໃຊ້ສຳລັບຫຼາຍປະເພດຊັບສິນ, ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ.

2.34 ພື້ນຖານລວມດ້ານການຕີມູນຄ່າ ສອງປະການ ຄື ມູນຄ່າຕົ້ນທຶນເດີມ ແລະ ມູນຄ່າຍຸຕິທຳ :

(ກ) ສຳລັບຊັບສິນ, **ມູນຄ່າຕົ້ນທຶນເດີມ** ແມ່ນຈຳນວນເງິນສົດ ຫຼື ສິ່ງທຽບເທົ່າເງິນສົດທີ່ໄດ້ຈ່າຍ ຫຼື ມູນຄ່າຍຸຕິທຳ ຂອງສິ່ງທີ່ນຳໄປແລກຊັບສິນ ໃນເວລາທີ່ໄດ້ຊັບສິນດັ່ງກ່າວມາເປັນກຳມະສິດ. ສຳລັບໜີ້ສິນ, ຕົ້ນທຶນເດີມ ແມ່ນຈຳນວນເງິນສົດ ຫຼື ສິ່ງທຽບເທົ່າເງິນສົດທີ່ໄດ້ຮັບ ຫຼື ມູນຄ່າຍຸຕິທຳຂອງຊັບສິນ ທີ່ບໍ່ແມ່ນເງິນສົດທີ່ໄດ້ຮັບ ເພື່ອການແລກປ່ຽນກັບພັນທະ ໃນເວລາທີ່ພັນທະເກີດຂຶ້ນ ຫຼື ໃນບາງສະຖານະພາບ (ຕົວຢ່າງ, ອາກອນລາຍຮັບ), ຈຳນວນເງິນສົດ ຫຼື ສິ່ງທຽບເທົ່າເງິນສົດ ທີ່ຄາດວ່າຈະໄດ້ຈ່າຍເພື່ອຊຳລະສະສາງໜີ້ສິນ ໃນເວລາດຳເນີນກິດຈະການປົກກະຕິ. ມູນຄ່າຕົ້ນທຶນເດີມ ທີ່ໄດ້ຫັກທົດແທນ ແມ່ນມູນຄ່າຕົ້ນທຶນເດີມຂອງຊັບສິນ ຫຼື ຂອງໜີ້ສິນໃດໜຶ່ງ ບວກ ຫຼື ລົບພູດສ່ວນມູນຄ່າຕົ້ນທຶນເດີມທີ່ ໄດ້ຖືກຮັບຮູ້ລາຍການບັນຊີ ເປັນລາຍຈ່າຍ ຫຼື ເປັນລາຍຮັບ ໃນເມື່ອກ່ອນ.

(ຂ) **ມູນຄ່າຍຸຕິທຳ** ແມ່ນຈຳນວນເງິນຊຶ່ງຊັບສິນໃດໜຶ່ງສາມາດຖືກແລກປ່ຽນ ຫຼື ຊຶ່ງໜີ້ສິນໃດໜຶ່ງອາດຈະຖືກຊຳລະສະສາງ, ລະຫ່ວາງ ພາກສ່ວນທີ່ຮັບຮູ້ ແລະ ເຕັມໃຈ ໃນການແລກປ່ຽນ ພາຍໃຕ້ການແກ້ງແຍ້ງປົກກະຕິ.

ພື້ນຖານການຕີມູນຄ່າ ຂອງມາດຕະຖານສະບັບນີ້ ແມ່ນມູນຄ່າຕົ້ນທຶນເດີມ ເວັ້ນເສຍ ຖ້າມາດຕະຖານສະບັບນີ້ ກຳນົດໄວ້ຢ່າງອື່ນ.

## ຫຼັກການລວມ ກ່ຽວກັບການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າ

2.35 ຂໍ້ກຳນົດ ກ່ຽວກັບການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າຊັບສິນ, ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍໃນມາດຕະຖານສະບັບນີ້ ແມ່ນອີງຕາມຫຼັກການລວມທີ່ມາຈາກຂອບຂ່າຍການສ້າງ ແລະ ສະເໜີເອກະສານລາຍງານການເງິນຂອງ IASB ແລະ ຈາກ IFRS ເຕັມສ່ວນ ແລະ ຈາກ IFRS ສຳລັບວິສາຫະກິດຂະໜາດນ້ອຍແລະກາງ. ໃນກໍລະນີບໍ່ມີຂໍ້ກຳນົດໃນມາດຕະຖານສະບັບນີ້ ທີ່ນຳໃຊ້ສະເພາະ ກ່ຽວກັບລາຍການເຄື່ອນໄຫວ ຫຼື ເຫດການ ຫຼື ເງື່ອນໄຂອື່ນໆ, ວັກ 10.4 ໃຫ້ການຊີ້ແຈງ ທີ່ຊ່ວຍໃນການວິນິດໄສ ແລະ ວັກ 10.5 ສ້າງລຳດັບຂັ້ນ ຊຶ່ງວິສາຫະກິດໃດໜຶ່ງຕ້ອງປະຕິບັດຕາມ ໃນເວລາຕັດສິນໃຈ ກ່ຽວກັບນະໂຍບາຍການບັນຊີທີ່ແທດເໝາະຕາມສະພາບການ. ລະດັບທີສອງຂອງລຳດັບຂັ້ນດັ່ງກ່າວ ກຳນົດໃຫ້ວິສາຫະກິດໃດໜຶ່ງຕ້ອງຄຳນຶງເຖິງຄຳນິຍາມ, ເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີ ແລະ ຄວາມສຳນຶກ ກ່ຽວກັບການຕີມູນຄ່າຊັບສິນ, ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ, ພ້ອມທັງ ຫຼັກການລວມທີ່ໄດ້ກຳນົດໃນໝວດດັ່ງກ່າວນີ້.

## ພື້ນຖານເງິນຄ້າງຮັບ-ຄ້າງຈ່າຍ

2.36 ວິສາຫະກິດຕ້ອງສ້າງເອກະສານລາຍງານການເງິນຂອງຕົນ ດ້ວຍການບັນຊີຕາມພື້ນຖານເງິນຄ້າງຮັບ-ຄ້າງຈ່າຍ, ຍົກເວັ້ນສຳລັບຂໍ້ມູນຂ່າວສານ ກ່ຽວກັບກະແສເງິນສົດ. ຕາມພື້ນຖານເງິນຄ້າງຮັບ-ຄ້າງຈ່າຍ, ລາຍການຕ່າງໆຖືກຮັບຮູ້ແລະລົງບັນຊີເປັນຊັບສິນ, ໜີ້ສິນ, ທຶນເຈົ້າຂອງ, ລາຍຮັບ ຫຼື ລາຍຈ່າຍ ຖ້າຫາກກົງກັບຄຳນິຍາມ ແລະ ເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີ ສຳລັບລາຍການດັ່ງກ່າວເຫຼົ່ານີ້.

## ການຮັບຮູ້ລາຍການບັນຊີ ໃນເອກະສານລາຍງານການເງິນ

### ຊັບສິນ

2.37 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີຊັບສິນ ໃນໃບລາຍງານຖານະການເງິນ ຖ້າຫາກມີຄວາມອາດເປັນໄປໄດ້ທີ່ว່າຜົນປະໂຫຍດດ້ານເສດຖະກິດໃນອະນາຄົດຈະເຂົ້າຫາວິສາຫະກິດ ແລະ ຊັບສິນນັ້ນ ມີຕົ້ນທຶນ ຫຼື ມູນຄ່າ ທີ່ສາມາດຕີມູນຄ່າໄດ້ຢ່າງໜ້າເຊື່ອຖືໄດ້. ຊັບສິນຈະບໍ່ຖືກຮັບຮູ້ລາຍການບັນຊີໃນໃບລາຍງານຖານະການເງິນ ເມື່ອລາຍຈ່າຍທີ່ເກີດຂຶ້ນ ບໍ່ອາດເປັນໄປໄດ້ທີ່ຈະນຳຜົນປະໂຫຍດດ້ານເສດຖະກິດໃນອະນາຄົດເຂົ້າຫາວິສາຫະກິດ ນອກຮອບເວລາລາຍງານໃນປັດຈຸບັນ. ກົງກັນຂ້າມ, ລາຍການເຄື່ອນໄຫວດັ່ງກ່າວ ຕ້ອງນຳໄປສູ່ການຮັບຮູ້ລາຍການບັນຊີເປັນລາຍຈ່າຍ ໃນໃບລາຍງານຜົນໄດ້ຮັບ ຫຼື ໃບລາຍງານຜົນໄດ້ຮັບສັງລວມ.

2.38 ວິສາຫະກິດບໍ່ຮັບຮູ້ລາຍການບັນຊີ **ຊັບສິນທີ່ອາດເກີດຂຶ້ນ** ເປັນຊັບສິນ. ເຖິງຢ່າງໃດກໍດີ, ຖ້າມີຄວາມໝັ້ນໃຈຢ່າງແນ່ນອນວ່າລາຍການດັ່ງກ່າວຈະນຳເອົາຜົນປະໂຫຍດທາງດ້ານເສດຖະກິດໃນອະນາຄົດເຂົ້າຫາວິສາຫະກິດ, ຊັບສິນທີ່ກ່ຽວຂ້ອງດັ່ງກ່າວນັ້ນ ກໍບໍ່ແມ່ນຊັບສິນທີ່ອາດເກີດຂຶ້ນ ແລະ ເປັນສິ່ງແທດເໝາະທີ່ຈະຮັບຮູ້ລາຍການບັນຊີນັ້ນ ກໍຕາມ.

### ໜີ້ສິນ

2.39 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີໜີ້ສິນໃນໃບລາຍງານຖານະການເງິນ, ເມື່ອ

(ກ) ວິສາຫະກິດມີພັນທະ ໃນທ້າຍຮອບເວລາລາຍງານອັນເປັນຜົນມາຈາກເຫດການຜ່ານມາ,

(ຂ) ມີຄວາມອາດເປັນໄປໄດ້ທີ່ວ່າ ວິສາຫະກິດຈະຕ້ອງໂອນຊັບພະຍາກອນທີ່ມີຜົນປະ�โຫຍດດ້ານເສດຖະກິດ ເພື່ອ ຊຳລະສະສາງພັນທະໃນປັດຈຸບັນ, ແລະ

(ຄ) ຈຳນວນເງິນຊຳລະ ຕ້ອງສາມາດຕີມູນຄ່າຢ່າງໜ້າເຊື່ອຖືໄດ້.

2.40 **ໜີ້ສິນທີ່ອາດເກີດຂຶ້ນ** ເປັນພັນທະທີ່ເປັນໄປໄດ້ ແຕ່ຫາກບໍ່ແນ່ນອນ ຫຼື ເປັນພັນທະປັດຈຸບັນທີ່ຍັງບໍ່ທັນໄດ້ຮັບຮູ້ລາຍການ ບັນຊີ ເນື່ອງຈາກບໍ່ຖືກຕ້ອງຕາມໜຶ່ງໃນເງື່ອນໄຂ (ຂ) ແລະ (ຄ) ຂອງວັກ 2.39 ຫຼື ຕາມທັງສອງເງື່ອນໄຂ. ວິສາຫະກິດ ໃດໜຶ່ງບໍ່ຄວນຮັບຮູ້ລາຍການບັນຊີໜີ້ສິນທີ່ອາດເກີດຂຶ້ນ ເປັນໜີ້ສິນ, ຍົກເວັ້ນໜີ້ສິນທີ່ອາດເກີດຂຶ້ນທີ່ໄດ້ມາໃນເວລາການ ຄວບກິດຈະການ (ເບິ່ງ ໝວດທີ 19 ການຄວບກິດຈະການ ແລະ ຄ່ານິຍົມ).

### ລາຍຮັບ

2.41 ການຮັບຮູ້ລາຍການບັນຊີລາຍຮັບ ເປັນຜົນມາຈາກການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າ ຊັບສິນ ແລະ ໜີ້ສິນ ໂດຍກົງ. ວິສາຫະກິດໃດໜຶ່ງ ຕ້ອງລົງບັນຊີລາຍຮັບ ໃນໃບລາຍງານຜົນໄດ້ຮັບສັງລວມ (ຫຼື ໃນໃບລາຍງານຜົນໄດ້ຮັບ ຖ້າຫາກມີການສະເໜີ) ເມື່ອຫາກມີການເພີ່ມຂຶ້ນຂອງຜົນປະ�โຫຍດດ້ານເສດຖະກິດໃນອະນາຄົດ ທີ່ກ່ຽວຂ້ອງກັບການເພີ່ມ ຂຶ້ນຂອງຊັບສິນໃດໜຶ່ງ ຫຼື ການຫຼຸດລົງຂອງໜີ້ສິນໃດໜຶ່ງທີ່ເກີດຂຶ້ນ ຊຶ່ງສາມາດຕີມູນຄ່າໄດ້ຢ່າງໜ້າເຊື່ອຖືໄດ້.

### ລາຍຈ່າຍ

2.42 ການຮັບຮູ້ລາຍການບັນຊີລາຍຈ່າຍ ເປັນຜົນມາຈາກການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າ ຊັບສິນ ແລະ ໜີ້ສິນ ໂດຍກົງ. ວິສາຫະກິດໃດໜຶ່ງ ຕ້ອງລົງບັນຊີ ລາຍຈ່າຍ ໃນໃບລາຍງານຜົນໄດ້ຮັບສັງລວມ (ຫຼື ໃນໃບລາຍງານຜົນໄດ້ຮັບ ຖ້າຫາກມີການສະເໜີ) ເມື່ອຫາກມີການຫຼຸດລົງຂອງຜົນປະ�โຫຍດດ້ານເສດຖະກິດໃນອະນາຄົດ ທີ່ກ່ຽວຂ້ອງກັບການຫຼຸດ ລົງຂອງຊັບສິນ ຫຼື ການເພີ່ມຂຶ້ນຂອງໜີ້ສິນໃດໜຶ່ງ ຊຶ່ງສາມາດຕີມູນຄ່າໄດ້ຢ່າງໜ້າເຊື່ອຖືໄດ້.

### ລວມຍອດຜົນໄດ້ຮັບສັງລວມ ແລະ ກຳໄລ ຫຼື ຂາດທຶນ

2.43 ລວມຍອດຜົນໄດ້ຮັບສັງລວມ ແມ່ນສ່ວນຜິດດ່ຽງດ້ານເລກຄະນິດ ລະຫ່ວາງ ລາຍຮັບ ແລະ ລາຍຈ່າຍ. ບໍ່ແມ່ນອົງ ປະກອບທີ່ແຍກຕ່າງຫາກອອກຈາກເອກະສານລາຍງານການເງິນ, ແລະ ບໍ່ຈຳເປັນຕ້ອງມີຫຼັກການການຮັບຮູ້ລາຍການບັນ ຊີຕ່າງຫາກ ກ່ຽວກັບລາຍການດັ່ງກ່າວ.

2.44 ກຳໄລ ຫຼື ຂາດທຶນ ແມ່ນສ່ວນຜິດດ່ຽງດ້ານເລກຄະນິດ ລະຫ່ວາງ ລາຍຮັບ ແລະ ລາຍຈ່າຍ ທີ່ບໍ່ແມ່ນລາຍການຕ່າງໆ ຂອງລາຍຮັບ ແລະ ລາຍຈ່າຍ ຊຶ່ງມາດຕະຖານສະບັບດັ່ງກ່າວນີ້ ຈັດເປັນລາຍການ ຜົນໄດ້ຮັບສັງລວມອື່ນໆ. ສິ່ງນີ້ບໍ່ແມ່ນ ລາຍການທີ່ແຍກຕ່າງຫາກ ອອກຈາກເອກະສານລາຍງານການເງິນ, ແລະ ບໍ່ຈຳເປັນຕ້ອງມີຫຼັກການການຮັບຮູ້ລາຍ ການ ບັນຊີຕ່າງຫາກ ກ່ຽວກັບລາຍການດັ່ງກ່າວ.

2.45 ມາດຕະຖານສະບັບດັ່ງກ່າວ ບໍ່ອະນຸຍາດໃຫ້ມີການຮັບຮູ້ລາຍການບັນຊີ ບັນດາລາຍການໃນໃບລາຍງານຖານະການເງິນ ທີ່ບໍ່ກົງກັບຄຳນິຍາມກ່ຽວກັບ ຊັບສິນ ຫຼື ໜີ້ສິນ ໂດຍບໍ່ຂຶ້ນກັບວ່າ ລາຍການດັ່ງກ່າວຈະເປັນຜົນມາຈາກການປະຕິບັດ ຄວາມສຳນຶກທີ່ມັກຮຽກກັນທົ່ວໄປວ່າ ເປັນ "ຄວາມສຳນຶກກ່ຽວກັບການຈັບຄູ່" ສຳລັບການຕີມູນຄ່າກຳໄລ ຫຼື ຂາດທຶນ.

## ການຕີມູນຄ່າ ໃນການຮັບຮູ້ລາຍການບັນຊີເບື້ອງຕົ້ນ

2.46 ໃນການຮັບຮູ້ລາຍການບັນຊີເບື້ອງຕົ້ນ, ວິສາຫະກິດຕ້ອງຕີມູນຄ່າ ຊັບສິນ ແລະ ໜີ້ສິນ ຕາມມູນຄ່າຕົ້ນທຶນເດີມ ເວັ້ນເສຍ ແຕ່ວ່າ ມາດຕະຖານສະບັບນີ້ ກຳນົດການຕີມູນຄ່າເບື້ອງຕົ້ນ ຕາມພື້ນຖານອື່ນ ເຊັ່ນມູນຄ່າຍຸຕິທຳ.

## ການຕີມູນຄ່າຕາມຫຼັງ

### ຊັບສິນການເງິນ ແລະ ໜີ້ສິນການເງິນ

2.47 ວິສາຫະກິດ ຕ້ອງຕີມູນຄ່າ**ຊັບສິນການເງິນ**ພື້ນຖານ ແລະ **ໜີ້ສິນການເງິນ**ພື້ນຖານ ຕາມຄຳນິຍາມທີ່ໄດ້ກຳນົດໄວ້ໃນ ໝວດ 11 *ເຄື່ອງ ມືການເງິນພື້ນຖານ* ຕາມຕົ້ນທຶນຫັກທຶດແທນ ລົບການສູນເສຍມູນຄ່າອອກ ຍົກເວັ້ນສຳລັບເງິນລົງທຶນ ໃນຮຸ້ນບູລິມະສິດ ທີ່ປ່ຽນເປັນຮຸ້ນສາມັນບໍ່ໄດ້ ແລະ ບໍ່ມີສິດຂາຍຄືນໄດ້ ແລະ ໃນຮຸ້ນສາມັນທີ່ບໍ່ມີສິດຂາຍໄດ້ ທີ່ມີ**ການຊື້-ຂາຍຕໍ່ສາທາລະນະຊົນ** ຊຶ່ງຖືກຕີມູນຄ່າ ຕາມມູນຄ່າຍຸຕິທຳ ແລະ ຮັບຮູ້ລາຍການບັນຊີສ່ວນປ່ຽນແປງ ຂອງມູນຄ່າຍຸຕິທຳ ໃນກຳໄລ ຫຼື ຂາດທຶນ.

## ຊັບສິນທີ່ບໍ່ແມ່ນການເງິນ

2.49 ສ່ວນຫຼາຍ ຊັບສິນທີ່ບໍ່ແມ່ນການເງິນ ຊຶ່ງວິສາຫະກິດໃດໜຶ່ງໄດ້ຮັບຮູ້ລາຍການບັນຊີໃນເບື້ອງຕົ້ນ ຕາມມູນຄ່າຕົ້ນທຶນເດີມ ຖືກຕີມູນຄ່າຕາມຫຼັງ ຕາມພື້ນຖານການຕີມູນຄ່າອື່ນໆ. ຕົວຢ່າງ :

(ກ) ວິສາຫະກິດຕີມູນຄ່າ ຊັບສົມບັດຄົງທີ່ມີຕົວຕົນ ດ້ວຍມູນຄ່າທີ່ຕ່ຳກ່ວາໝູ່ ລະຫ່ວາງ ຕົ້ນທຶນທີ່ໄດ້ຫັກຄ່າເຊື່ອມແລ້ວ ແລະ **ມູນຄ່າທີ່ສາມາດເກັບຄືນໄດ້**.

(ຂ) ວິສາຫະກິດຕີມູນຄ່າເຄື່ອງໃນສາງ ດ້ວຍມູນຄ່າທີ່ຕ່ຳກ່ວາໝູ່ ລະຫ່ວາງ ຕົ້ນທຶນ ແລະ ແລະ ລາຄາຂາຍ ຫັກຕົ້ນທຶນໃນການຜະລິດສິນຄ້າໃຫ້ສຳເລັດຮູບ ແລະ ໃນການຂາຍອອກ.

(ຄ) ວິສາຫະກິດໃດໜຶ່ງ ຮັບຮູ້ລາຍການບັນຊີ ຂາດທຶນຈາກການສູນເສຍມູນຄ່າທີ່ຕິດພັນກັບຊັບສິນທີ່ບໍ່ແມ່ນການເງິນ ຊຶ່ງພວມນຳໃຊ້ ຫຼື ຮັກສາໄວ້ເພື່ອຂາຍ.

ການຕີມູນຄ່າຊັບສິນດ້ວຍຈຳນວນເງິນທີ່ຕ່ຳກ່ວາຄືແນວນັ້ນ ແມ່ນເພື່ອແນໃສ່ຮັບປະກັນວ່າຊັບສິນບໍ່ໄດ້ຖືກຕີມູນຄ່າຕາມ ຈຳນວນເງິນທີ່ສູງກ່ວາ ຈຳນວນເງິນທີ່ວິສາຫະກິດຄາດວ່າຈະໄດ້ຮັບຈາກການຂາຍ ຫຼື ຈາກການນຳໃຊ້ຊັບສິນດັ່ງກ່າວ.

2.50 ມາດຕະຖານສະບັບນີ້ ອະນຸຍາດ ຫຼື ກຳນົດໃຫ້ມີການຕີມູນຄ່າ ຊັບສິນກະສິກຳ (**ຊັບສິນຊີວະພາບ** ແລະ **ຜະລິດຕະພັນກະສິກຳ** ໃນເວລາເກັບກ່ຽວ) ຊຶ່ງວິສາຫະກິດໃດໜຶ່ງຕີມູນຄ່າ ຕາມມູນຄ່າຍຸຕິທຳ ລົບໃຫ້ຕົ້ນທຶນຄາດຄະເນຂາຍ (ເບິ່ງວັກ 34.2).

## ໜີ້ສິນທີ່ບໍ່ແມ່ນໜີ້ສິນການເງິນ

2.51 ສ່ວນຫຼາຍ ໜີ້ສິນ ທີ່ບໍ່ແມ່ນໜີ້ສິນການເງິນ ຖືກຕີມູນຄ່າຕາມຕົວເລກຄາດຄະເນປະຕິບັດທີ່ດີທີ່ສຸດ ຊຶ່ງເປັນຈຳນວນເງິນທີ່ຕ້ອງການເພື່ອຊຳລະພັນທະ ໃນ**ມື້ລາຍງານ*.

## ການຫັກຊຳລະສະສາງ

2.52 ວິສາຫະກິດບໍ່ຫັກຊຳລະສະສາງ ລະຫ່ວາງ ຊັບສິນ ແລະ ໜີ້ສິນ ຫຼື ລະຫ່ວາງ ລາຍຮັບ ແລະ ລາຍຈ່າຍ, ເວັ້ນເສຍແຕ່ວ່າຈະຖືກກຳນົດ ຫຼື ອະນຸຍາດໂດຍມາດຕະຖານສະບັບນີ້. .

(ກ) ການຕີມູນຄ່າຊັບສິນ ທີ່ໄດ້ຫັກສ່ວນປັບມູນຄ່າອອກ (ຕົວຢ່າງ, ສ່ວນຫຼຸດມູນຄ່າ ບ້ວງເຄື່ອງໃນສາງພື້ນສະໄໝ ແລະ ສ່ວນຫຼຸດດ້ານມູນຄ່າບ້ວງໜີ້ຕ້ອງຮັບຮຽກເກັບບໍ່ໄດ້) - ບໍ່ຖືເປັນການຫັກຊຳລະສະສາງ.

(ຂ) ຖ້າວ່າກິດຈະກຳດຳເນີນງານປົກກະຕິຂອງວິສາຫະກິດໃດໜຶ່ງ ບໍ່ລວມມີ ການຊື້ ແລະ ຂາຍ ຊັບສິນທີ່ບໍ່ໝູນວຽນ, ລວມທັງເງິນລົງທຶນ ແລະ ຊັບສິນໃນການທຸລະກິດ, ໃນກໍລະນີດັ່ງກ່າວ, ວິສາຫະກິດສະເໜີ ສ່ວນໄດ້ ແລະ ສ່ວນເສຍໃນການຂາຍຊັບສິນດັ່ງກ່າວອອກ ດ້ວຍການຫັກ**ມູນຄ່າໃນບັນຊີ**ຂອງຊັບສິນ ແລະ ລາຍຈ່າຍໃນການຂາຍທີ່ຕິດພັນ ອອກຈາກລາຍຮັບບ້ວງການຂາຍ.

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| 2.8 | ຫຼັກການ ເນື້ອແທ້ສຳຄັນກວ່າຮູບການ ບໍ່ມີໃນມາດຕະຖານນີ້. ລາຍການເຄື່ອນໄຫວ ແລະ ເຫດການ ແລະ ເງື່ອນໄຂອື່ນໆ ຕ້ອງຖືກລົງບັນຊີ ແລະ ນຳສະເໜີ ໃຫ້ສອດຄ່ອງກັບຮູບການທາງດ້ານກົດໝາຍ. ຕົວຢ່າງ, ສັນຍາເຊົ່າການເງິນ ຖືກຮັບຮູ້ລາຍການບັນຊີ ເປັນສັນຍາເຊົ່າດຳເນີນງານ. ວັກນີ້ຖືກຕັດອອກ. |
| 2.19 | ວັກນີ້ຖືກຕັດອອກ ເພາະໃນມາດຕະຖານນີ້, ສິດທິຖືວ່າສຳຄັນໂດຍພື້ນຖານ (ເບິ່ງຂ້າງເທິງ). |
| 2.34 | ພື້ນຖານການຕີມູນຄ່າດັ່ງກ່າວ ຂອງມາດຕະຖານສະບັບນີ້ ແມ່ນມູນຄ່າຕົ້ນທຶນເດີມ ເວັ້ນເສຍ ຖ້າມາດຕະຖານສະບັບນີ້ ກຳນົດໄວ້ຢ່າງອື່ນ. ວັກນີ້ຖືກປັບປຸງ. |
| 2.47 | ມີພຽງແຕ່ເງິນລົງທຶນ ໃນຮຸ້ນບູລິມະສິດ ທີ່ປ່ຽນເປັນຮຸ້ນສາມັນບໍ່ໄດ້ ແລະ ບໍ່ມີສິດຂາຍຄືນໄດ້ ແລະ ໃນຮຸ້ນສາມັນ ທີ່ບໍ່ມີສິດຂາຍໄດ້ ທີ່ມີການຊື້-ຂາຍຕໍ່ສາທາລະນະຊົນ ຖືກຕີມູນຄ່າ ຕາມມູນຄ່າຍຸຕິທຳ. ວັກນີ້ຖືກປັບປຸງ. |
| 2.48 | ມີພຽງແຕ່ເງິນລົງທຶນ ໃນຮຸ້ນບູລິມະສິດ ທີ່ປ່ຽນເປັນຮຸ້ນສາມັນບໍ່ໄດ້ ແລະ ບໍ່ມີສິດຂາຍຄືນໄດ້ ແລະ ໃນຮຸ້ນສາມັນ ທີ່ບໍ່ມີສິດຂາຍໄດ້ ທີ່ມີການຊື້-ຂາຍຕໍ່ສາທາລະນະຊົນ ຖືກຕີມູນຄ່າ ຕາມມູນຄ່າຍຸຕິທຳ. ວັກນີ້ຖືກຕັດອອກ. |
| 2.50 (ກ) | ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດ FRS ສຳລັບ ວທຍ (ເບິ່ງວັກ 1.2).<br>ໝວດ 14 ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ໝວດ 15 ເງິນລົງທຶນໃນວິສາຫະກິດປະສົມ ອະທິບາຍນະໂຍບາຍການບັນຊີ ສຳລັບເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ໃນວິສາຫະກິດປະສົມ ໂດຍ ວນກ. ໝວດ 9 ເອກະສານລາຍງານການເງິນລວມກິດຈະການ ແລະ ເອກະສານລາຍງານການເງິນສະເພາະກິດຈະການ ຂອງມາດຕະຖານການລາຍງານການເງິນສຳລັບວິສາຫະກິດຂະໜາດໃຫຍ່ ປະຕິບັດໂດຍວິສາຫະກິດຂະໜາດນ້ອຍແລະກາງບໍ່ໄດ້.<br>ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ໃນວິສາຫະກິດປະສົມ ໂດຍ ວນກ ການຕີມູນຄ່າ ແມ່ນເອົາຕາມມູນຄ່າຕົ້ນທຶນ ຫັກການສູນເສຍມູນຄ່າອອກ ແລະ ບໍ່ເອົາຕາມມູນຄ່າຍຸຕິທຳ. ໝວດ 14 ແລະ ໝວດ 15 ຂອງມາດຕະຖານ ຖືກປັບປຸງ. |
| 2.50 (ຂ) | ໃນມາດຕະຖານການລາຍງານການເງິນສຳລັບວິສາຫະກິດຂະໜາດໃຫຍ່, ອະສັງຫາລິມະຊັບເພື່ອການລົງທຶນ ຖືກຕີມູນຄ່າ ຕາມວິທີລາຄາຕົ້ນທຶນ-ຄ່າຫຼຸ້ຍຫ້ຽນ-ການສູນເສຍມູນຄ່າ, ບໍ່ແມ່ນຕາມມູນຄ່າຍຸຕິທຳ. ວັກນີ້ ຖືກຕັດອອກ. (ເບິ່ງ ໝວດ 16 ອະສັງຫາລິມະຊັບເພື່ອການລົງທຶນ) |

# ໝວດ 3

# ການສະເໜີເອກະສານລາຍງານການເງິນ

## ຂອບເຂດຂອງໝວດນີ້

3.1 ໝວດດັ່ງກ່າວອະທິບາຍ ກ່ຽວກັບ**ການນຳສະເໜີເອກະສານລາຍງານການເງິນໂດຍຖືກຕ້ອງ**, ຄວາມຖືກຕ້ອງ ຕາມມາດຕະຖານສະບັບນີ້ ມີຫຍັງແດ່ ແລະ ເອກະສານລາຍງານການເງິນຄົບຊຸດແມ່ນຫຍັງ.

## ການນຳສະເໜີໂດຍຖືກຕ້ອງ

3.2 ເອກະສານລາຍງານການເງິນຕ້ອງສະເໜີ **ຖານະການເງິນ, ຜົນການດຳເນີນງານ**ດ້ານການເງິນ ແລະ **ກະແສເງິນສົດ** ຂອງວິສາຫະກິດຢ່າງຖືກຕ້ອງ. ການນຳສະເໜີໂດຍຖືກຕ້ອງ ຮຽກຮ້ອງໃຫ້ມີການສະແດງຂໍ້ມູນທີ່ຖືກຕ້ອງ ກ່ຽວກັບຜົນກະທົບຂອງລາຍການເຄື່ອນໄຫວ, ເຫດການ ແລະ ເງື່ອນໄຂອື່ນໆ ໃຫ້ຖືກຕ້ອງຕາມຄຳນິຍາມ ແລະ ເງື່ອນໄຂມາດຕະຖານ**ການຮັບຮູ້ລາຍການບັນຊີ** ສຳລັບ ຊັບສິນ, ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ດັ່ງທີ່ໄດ້ກຳນົດໄວ້ໃນໝວດ 2 *ຄວາມສຳນຶກ ແລະ ຫຼັກການລວມ*.

(ກ) ການປະຕິບັດ ມາດຕະຖານສະບັບນີ້, ພ້ອມທັງມີການເປີດເຜີຍຂໍ້ມູນເພີ້ມເຕີມ ເມື່ອຈຳເປັນ, ແມ່ນເພື່ອໃຫ້ເອະສານລາຍງານການເງິນບັນລຸຜົນການສະເໜີຖານະການເງິນ, ຜົນການດຳເນີນງານດ້ານການເງິນ ແລະ ກະແສເງິນສົດຂອງ ວນກ ໂດຍຖືກຕ້ອງທີ່ສຸດ.

(ຂ) ຄືດັ່ງໄດ້ອະທິບາຍໃນວັກ 1.5, ການປະຕິບັດມາດຕະຖານສະບັບນີ້ ໂດຍວິສາຫະກິດ ທີ່ມີຄວາມຮັບຜິດຊອບລາຍງານຕໍ່ສາທາລະນະຊົນຈະບໍ່ພາໃຫ້ເປັນການນຳສະເໜີທີ່ຖືກຕ້ອງ ກັບມາດຕະຖານດັ່ງກ່າວນີ້.

ການເປີດເຜີຍຂໍ້ມູນເພີ້ມເຕີມດັ່ງທີ່ໄດ້ອ້າງອີງໃນຂໍ້ (ກ) ເປັນສິ່ງຈຳເປັນ ຖ້າວ່າຄວາມຖືກຕ້ອງຕາມຂໍ້ກຳນົດສະເພາະຂອງມາດຕະຖານສະບັບນີ້ ຫາກບໍ່ພຽງພໍທີ່ຈະຊ່ວຍໃຫ້ຜູ້ນຳໃຊ້ເຂົ້າໃຈຜົນກະທົບຂອງລາຍການເຄື່ອນໄຫວ, ເຫດການ ແລະ ເງື່ອນໄຂອື່ນໆສະເພາະ, ທີ່ມີຕໍ່ຖານະການເງິນ ແລະ ຜົນການດຳເນີນງານດ້ານການເງິນຂອງວິສາຫະກິດ.

## ຄວາມຖືກຕ້ອງຕາມມາດຕະຖານການລາຍງານການເງິນ ສຳລັບ ວນກ

3.3 ວິສາຫະກິດຊຶ່ງເອກະສານລາຍງານການເງິນຖືກຕ້ອງຕາມມາດຕະຖານສະບັບນີ້ ຕ້ອງອອກຖະແຫຼງການ ຢ່າງຈະແຈ້ງ ແລະ ແບບບໍ່ມີເງື່ອນໄຂ ກ່ຽວກັບຄວາມຖືກຕ້ອງດັ່ງກ່າວໃນ**ບົດອະທິບາຍຊ້ອນທ້າຍ.** ບໍ່ໃຫ້ເວົ້າວ່າ ເອກະສານລາຍງານການເງິນຖືກຕ້ອງຕາມ FRS ສຳລັບ ວນກ ສະບັບນີ້ ເວັ້ນເສຍແຕ່ວ່າເອກະສານລາຍງານການເງິນຖືກ ຕ້ອງຕາມຂໍ້ກຳນົດທັງໝົດຂອງມາດຕະຖານສະບັບນີ້.

3.7 ໃນກໍລະນີທີ່ບໍ່ຄ່ອຍເກີດຂຶ້ນ ເມື່ອຄະນະບໍລິຫານສະຫຼຸບຄວາມວ່າຄວາມຖືກຕ້ອງຕາມມາດຕະຖານສະບັບນີ້ ອາດນຳໄປສູ່ຄວາມເຂົ້າໃຈຜິດຫຼາຍ ຊຶ່ງອາດຈະຂັດແຍ່ງກັບ ຈຸດປະສົງຂອງເອກະສານລາຍງານການເງິນ ຂອງວິສາຫະກິດຂະໜາດນ້ອຍ ແລະກາງ ທີ່ໄດ້ກຳນົດໄວ້ໃນ ໝວດ 2, ແຕ່ຂອບຂ່າຍທາງດ້ານລະບຽບກົດໝາຍທີ່ກ່ຽວຂ້ອງ ຫາກເກືອດຫ້າມການຜິກອອກຈາກເງື່ອນໄຂດັ່ງກ່າວນັ້ນ, ວິສາຫະກິດຕ້ອງໃຊ້ຄວາມພະຍາຍາມທີ່ສຸດ ເພື່ອຫຼຸດຜ່ອນຄວາມເຂົ້າໃຈຜິດ ທີ່ເກີດຈາກການປະຕິບັດມາດຕະຖານການລາຍງານການເງິນດັ່ງກ່າວນີ້ ໂດຍເປີດເຜີຍບາງຂໍ້ມູນດັ່ງລຸ່ມນີ້:

(ກ) ລັກສະນະເນື້ອໃນຂອງເງື່ອນໄຂຂອງມາດຕະຖານສະບັບນີ້, ແລະ ສາເຫດເປັນຫຍັງຄະນະບໍລິຫານຈຶ່ງໄດ້ສະຫຼຸບຄວາມວ່າການປະຕິບັດຕາມເງື່ອນໄຂຂອງມາດຕະຖານດັ່ງກ່າວນັ້ນ ຈະນຳໄປສູ່ຄວາມເຂົ້າໃຈຜິດ ໃນກໍລະນີທີ່ສ້າງຂໍ້ຂັດແຍ່ງກັບຈຸດປະສົງຂອງເອກະສານລາຍງານການເງິນ ທີ່ໄດ້ກຳນົດໄວ້ໃນໝວດ 2.

(ຂ) ສຳລັບແຕ່ລະປີການບັນຊີທີ່ໄດ້ນຳສະເໜີ, ການປັບປຸງແຕ່ລະລາຍການໃນເອກະສານລາຍງານການເງິນຊຶ່ງຄະນະບໍລິຫານໄດ້ສະຫຼຸບຄວາມແລ້ວ ມີຄວາມຈຳເປັນເພື່ອຈະບັນລຸພາວະການນຳສະເໜີທີ່ຖືກຕ້ອງ.

## ຄວາມສືບເນື່ອງໃນການດຳເນີນທຸລະກິດ

3.8 ເວລາສ້າງເອກະສານລາຍງານການເງິນ, ຄະນະບໍລິຫານຂອງວິສາຫະກິດທີ່ນຳໃຊ້ມາດຕະຖານສະບັບນີ້ ຕ້ອງປະເມີນຜົນຄວາມສາມາດຂອງວິສາຫະກິດ ໃນການສືບຕໍ່ຢູ່ໃນພາວະສືບເນື່ອງໃນການດຳເນີນທຸລະກິດ. ວິສາຫະກິດມີຄວາມສືບເນື່ອງໃນການດຳເນີນທຸລະກິດ, ເວັ້ນເສຍແຕ່ວ່າຄະນະບໍລິຫານມີເຈດຈຳນົງຊຳລະສະສາງວິສາຫະກິດ ຫຼື ຢຸດຕິລາຍການເຄື່ອນໄຫວ, ຫຼື ບໍ່ມີທາງເລືອກທີ່ເປັນໄປໄດ້ແຕ່ຫາກຕ້ອງດຳເນີນການຄືແນວນັ້ນ. ໃນການປະເມີນຜົນເບິ່ງວ່າ ສົມມຸດຖານ ກ່ຽວກັບຄວາມສືບເນື່ອງໃນການດຳເນີນທຸລະກິດເປັນສິ່ງແທດເໝາະຫຼືບໍ່ນັ້ນ, ຄະນະບໍລິຫານຕ້ອງຄຳນຶງເຖິງທຸກຂໍ້ມູນຂ່າວສານທີ່ມີຢູ່ ກ່ຽວກັບອະນາຄົດ ຊຶ່ງຢ່າງໜ້ອຍ, ແຕ່ຫາກບໍ່ຈຳກັດ, ເປັນໄລຍະເວລາສິບສອງເດືອນ ນັບແຕ່**ມື້ລາຍງານ**ເປັນຕົ້ນໄປ.

3.9 ຖ້າຫາກໃນເວລາປະເມີນຜົນຂອງຕົນເອງ ຄະນະບໍລິຫານຮັບຊາບວ່າ ກ່ຽວກັບຄວາມບໍ່ແນ່ນອນທີ່**ສຳຄັນທຽບຖານ** ຊຶ່ງກ່ຽວກັບເຫດການ ຫຼື ສະພາບການທີ່ອາດໃຫ້ມີຂໍ້ສົງໃສທີ່ສຳຄັນທຽບຖານ ຕໍ່ກັບຄວາມອາດສາມາດຂອງວິສາຫະກິດ ກ່ຽວກັບຄວາມສືບເນື່ອງໃນການດຳເນີນທຸລະກິດ, ວິສາຫະກິດຕ້ອງເປີດເຜີຍຄວາມບໍ່ແນ່ນອນເຫຼົ່ານັ້ນ. ຖ້າວ່າວິສາຫະກິດບໍ່ສ້າງເອກະສານລາຍງານການເງິນຂອງຕົນ ບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ກໍຕ້ອງເປີດເຜີຍຄວາມເປັນຈິງດັ່ງກ່າວ, ພ້ອມໆກັບພື້ນຖານທີ່ຕົນສ້າງເອກະສານລາຍງານການເງິນ ແລະ ເຫດຜົນ ເປັນຫຍັງຈຶ່ງບໍ່ຖືວ່າວິສາຫະກິດມີຄວາມສືບເນື່ອງໃນການດຳເນີນທຸລະກິດ.

## ຄວາມຖີ່ຂອງການລາຍງານ

3.10 ວິສາຫະກິດຕ້ອງສະເໜີເອກະສານລາຍງານການເງິນຄົບຊຸດ (ລວມທັງຂໍ້ມູນຂ່າວສານສົມທຽບ–ເບິ່ງວັກ 3.14) ຢ່າງໜ້ອຍປີລະຄັ້ງ. ເມື່ອມື້ສຸດທ້າຍຂອງ**ຮອບເວລາລາຍງານ** ຂອງວິສາຫະກິດ ຫາກມີການປ່ຽນແປງ ແລະ ມີການສະເໜີເອກະສານລາຍງານການເງິນປະຈຳປີເປັນຮອບເວລາທີ່ຍາວກ່ວາ ຫຼື ສັ້ນກ່ວາໜຶ່ງປີ, ວິສາຫະກິດຕ້ອງເປີດເຜີຍຂໍ້ມູນລຸ່ມນີ້:

(ກ) ຄວາມເປັນຈິງດັ່ງກ່າວ.

(ຂ) ເຫດຜົນທີ່ພາໃຫ້ນຳໃຊ້ຮອບເວລາທີ່ຍາວກ່ວາ ຫຼື ສັ້ນກ່ວາ.

(ຄ) ຄວາມເປັນຈິງທີ່ວ່າ ຈຳນວນເງິນທີ່ສົມທຽບທີ່ໄດ້ນຳສະເໜີໃນເອກະສານລາຍງານການເງິນ (ລວມທັງບົດອະທິບາຍຊ້ອນທ້າຍ ທີ່ກ່ຽວຂ້ອງ) ແມ່ນສົມທຽບກັນ ທັງໝົດບໍ່ໄດ້.

## ຄວາມຖາວອນຂອງການສະເໜີເອກະສານ

3.11 ວິສາຫະກິດຕ້ອງນຳສະເໜີ ແລະ ຈັດປະເພດລາຍການໃນເອກະສານລາຍງານການເງິນ ໃນລັກສະນະດຽວກັນ ທຸກໆປີ ເວັ້ນເສຍມາດຕະຖານສະບັບນີ້ ກຳນົດໃຫ້ປ່ຽນຮູບແບບການນຳສະເໜີ.

3.12 ເມື່ອການນຳສະເໜີ ຫຼື ການຈັດປະເພດລາຍການໃນເອກະສານລາຍງານການເງິນມີການປ່ຽນແປງ, ວິສາຫະກິດຕ້ອງໄດ້ຈັດປະເພດຄືນໃໝ່ລາຍການຈຳນວນເງິນທີ່ສົມທຽບກັນ ເວັ້ນເສຍແຕ່ວ່າ ການຈັດປະເພດຄືນໃໝ່ນີ້ **ບໍ່ສາມາດປະຕິບັດໄດ້.** ຖ້າຫາກມີການຈັດລາຍການຈຳນວນເງິນທີ່ສົມທຽບກັນຄືນໃໝ່, ວິສາຫະກິດຕ້ອງເປີດເຜີຍຂໍ້ມູນດັ່ງລຸ່ມນີ້:

(ກ) ລັກສະນະເນື້ອໃນຂອງການຈັດປະເພດຄືນໃໝ່.

(ຂ) ຈຳນວນເງິນຂອງແຕ່ລະລາຍການ ຫຼື ກຸ່ມລາຍການທີ່ໄດ້ຈັດຄືນໃໝ່.

(ຄ) ສາເຫດທີ່ພາໃຫ້ມີການຈັດປະເພດຄືນໃໝ່.

3.13 ຖ້າຫາກ ບໍ່ສາມາດຈັດປະເພດຄືນໃໝ່ຈຳນວນເງິນທີ່ສົມທຽບກັນ, ວິສາຫະກິດຕ້ອງເປີດເຜີຍ ເຫດຜົນທີ່ວ່າ ເປັນຫຍັງການຈັດປະເພດຄືນໃໝ່ຈຶ່ງປະຕິບັດບໍ່ໄດ້.

## ຂໍ້ມູນຂ່າວສານສົມທຽບ

3.14 ເວັ້ນເສຍແຕ່ວ່າ ມາດຕະຖານສະບັບນີ້ ອະນຸຍາດ ຫຼື ກຳນົດໄວ້ຢ່າງອື່ນໆ, ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານສົມທຽບກັບຂໍ້ມູນຂອງປີການບັນຊີຜ່ານມາ ສຳລັບລາຍການຈຳນວນເງິນທັງໝົດ ທີ່ໄດ້ນຳສະເໜີໃນເອກະສານລາຍງານການເງິນປີການບັນຊີປັດຈຸບັນ. ວິສາຫະກິດຕ້ອງລວມເອົາຂໍ້ມູນຂ່າວສານສົມທຽບ ທີ່ເປັນຂໍ້ມູນແບບບັນລະຍາຍ ແລະ ພັນລະນາ ຖ້າຫາກກ່ຽວຂ້ອງກັບຄວາມເຂົ້າໃຈຕໍ່ເອກະສານລາຍງານການເງິນຂອງປີການບັນຊີປັດຈຸບັນ.

## ເອກະສານລາຍງານການເງິນຄົບຊຸດ

3.17 ເອກະສານລາຍງານການເງິນຄົບຊຸດຂອງວິສາຫະກິດໃດໜຶ່ງ ລວມມີດັ່ງລຸ່ມນີ້ :

(ກ) **ໃບລາຍງານຖານະການເງິນ** ໃນ**ມື້ລາຍງານ**.

(ຂ) **ໃບລາຍງານຜົນໄດ້ຮັບ** ແລະ **ໃບລາຍງານຜົນໄດ້ຮັບສັງລວມ** ທີ່ເລີ່ມຕົ້ນຈາກ ກຳໄລ ຫຼື ຂາດທຶນ ແລະ ຈາກນັ້ນກໍສະແດງບັນດາລາຍການຂອງ **ຜົນໄດ້ຮັບສັງລວມອື່ນໆ.**

(ງ) ໃບລາຍງານກະແສເງິນສົດ ສຳລັບຮອບເວລາລາຍງານ.

(ຈ) ບົດອະທິບາຍຊ້ອນທ້າຍ**,** ຊຶ່ງລວມມີ ການສັງລວມນະໂຍບາຍການບັນຊີ ທີ່ສຳຄັນ ແລະ ຂໍ້ມູນຂ່າວສານອະທິບາຍອື່ນໆ.

ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານຜົນໄດ້ຮັບສັງລວມ ແລະ ໃບລາຍງານສ່ວນປ່ຽນແປງ ຂອງທຶນເຈົ້າຂອງ ຕ້ອງຖືກສ້າງຂຶ້ນ ໃຫ້ສອດຄ່ອງກັບຮູບແບບ ທີ່ກະຊວງການເງິນຮັບຮອງ.

3.19 ຖ້າວ່າວິສາຫະກິດບໍ່ມີລາຍການໃດໆຂອງຜົນໄດ້ຮັບສັງລວມອື່ນໆ ໃນປີການບັນຊີໃດໜຶ່ງ ຊຶ່ງເອກະສານລາຍງານການເງິນ ໄດ້ຖືກສະເໜີ, ວິສາຫະກິດ ຕ້ອງສະເໜີໃບລາຍງານຜົນໄດ້ຮັບສັງລວມ.

3.20 ຍ້ອນວ່າວັກ 3.14 ກຳນົດໃຫ້ມີລາຍການຈຳນວນເງິນສົມທຽບກັນ ກັບປີການບັນຊີຜ່ານມາ ສຳລັບຈຳນວນເງິນທຸກລາຍການທີ່ໄດ້ສະເໜີໃນເອກະສານລາຍງານການເງິນ, ເອກະສານລາຍງານການເງິນຄົບຊຸດ ຈຶ່ງໝາຍເຖິງວ່າ, ວິສາຫະກິດຕ້ອງສະເໜີ ຢ່າງຕ່ຳສຸດ ສອງປີການບັນຊີໃນແຕ່ລະເອກະສານລາຍງານການເງິນທີ່ໄດ້ກຳນົດ ແລະ ບົດອະທິບາຍຊ້ອນທ້າຍທີ່ກ່ຽວຂ້ອງ.

3.21 ໃນເອກະສານລາຍງານການເງິນຄົບຊຸດ, ວິສາຫະກິດຕ້ອງສະເໜີແຕ່ລະເອກະສານລາຍງານການເງິນໂດຍໃຫ້ຄວາມສຳຄັນເທົ່າທຽມກັນ.

## ການກຳນົດຊື່ ຂອງເອກະສານລາຍງານການເງິນ

3.23 ວິສາຫະກິດຕ້ອງໃສ່ຊື່ຢ່າງຈະແຈ້ງ ແຕ່ລະເອກະສານລາຍງານການເງິນ ແລະ ບົດອະທິບາຍຊ້ອນທ້າຍ ແລະ ຈຳແນກລະຫວ່າງເອກະສານລາຍງານການເງິນ ແລະຂໍ້ມູນຂ່າວສານອື່ນໆ ທີ່ຢູ່ໃນເອກະສານດຽວກັນ. ນອກນັ້ນ, ວິສາຫະກິດຕ້ອງສະແດງຂໍ້ມູນຂ່າວສານລຸ່ມນີ້ ຢ່າງຊັດເຈນ ແລະ ສະເໜີຄືນຕື່ມ ຖ້າຈຳເປັນເພື່ອໃຫ້ເຂົ້າໃຈຂໍ້ມູນຂ່າວສານທີ່ໄດ້ນຳສະເໜີ:

(ກ) ຊື່ຂອງວິສາຫະກິດລາຍງານ ແລະ ການປ່ຽນແປງຊື່ ນັບຈາກມື້ສຸດທ້າຍຂອງຮອບເວລາລາຍງານຜ່ານມາ.

(ຄ) ມື້ສຸດທ້າຍຂອງຮອບເວລາລາຍງານ ແລະ ປີການບັນຊີຂອງເອກະສານລາຍງານການເງິນ.

(ງ) **ສະກຸນເງິນລາຍງານ,** ຄືດັ່ງໄດ້ກຳນົດໃນໝວດ 30 *ການປ່ຽນຄ່າສະກຸນເງິນຕາຕ່າງປະເທດ* ຖ້າວິສາຫະກິດ ໄດ້ຮັບອະນຸຍາດ ຈາກລັດຖະບານ ໃຫ້ສະເໜີເປັນສະກຸນເງິນຕາຕ່າງປະເທດນຳ.

(ຈ) ຈຳນວນຫຼັກຂອງຕົວເລກ, ຖ້າມີ, ທີ່ນຳໃຊ້ໃນການສະເໜີຈຳນວນເງິນໃນເອກະສານລາຍງານການເງິນ.

3.24 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນດັ່ງລຸ່ມນີ້ ໃນບົດອະທິບາຍຊ້ອນທ້າຍ:

(ກ) ທີ່ຕັ້ງ ແລະ ຮູບແບບນິຕິບຸກຄົນຂອງວິສາຫະກິດ, ປະເທດບ່ອນຈົດທະບຽນ ແລະ ທີ່ຢູ່ຂອງຫ້ອງການທີ່ໄດ້ຈົດທະບຽນ (ຫຼື ສະຖານທີ່ດຳເນີນທຸລະກິດຕົ້ນຕໍ, ຖ້າຫາກແຕກຕ່າງກັບຫ້ອງການທີ່ໄດ້ຈົດທະບຽນ).

(ຂ) ຄຳອະທິບາຍ ກ່ຽວກັບລັກສະນະການເຄື່ອນໄຫວຂອງວິສາຫະກິດ ແລະ ກິດຈະການຕົ້ນຕໍ.

## ການສະເໜີຂໍ້ມູນຂ່າວສານ ທີ່ມາດຕະຖານສະບັບນີ້ບໍ່ໄດ້ກຳນົດ

3.25 ມາດຕະຖານສະບັບນີ້ ບໍ່ໄດ້ກຳນົດໃຫ້ວິສາຫະກິດຂະໜາດນ້ອຍແລະກາງ ສະເໜີຂໍ້ມູນຂ່າວສານຂອງພາກສ່ວນງານ, ກຳໄລຕໍ່ຮຸ້ນ ຫຼື ບົດລາຍງານການເງິນກາງປີ. ວິສາຫະກິດທີ່ເປີດເຜີຍຂໍ້ມູນດັ່ງກ່າວຕ້ອງອະທິບາຍພື້ນຖານໃນການສ້າງ ແລະ ສະເໜີຂໍ້ມູນຂ່າວສານດັ່ງກ່າວເຫຼົ່ານີ້.

| **ການສົມທຽບກັບ FRS ສຳລັບ ວຫຍ** | |
|---|---|
| 3.15 ແລະ 3.16 | ວນກ ບໍ່ສ້າງເອກະສານລາຍງານການເງິນລວມກິດຈະການ. ວັກນີ້ ຖືກຕັດອອກ. |
| 3.17 (ຄ) | ວນກ ອາດບໍ່ສ້າງໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ (ເບິ່ງ ໝວດ 6 ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໝວດ 7 ໃບລາຍງານກະແສເງິນສົດ). ວັກນີ້ ຖືກປັບປຸງ. |
| 3.23 (ຂ) | ວນກ ບໍ່ສ້າງເອກະສານລາຍງານການເງິນລວມກິດຈະການ (ເບິ່ງ ໝວດ 9 ເອກະສານລາຍງານການເງິນລວມກິດຈະການ ແລະ ເອກະສານລາຍງານການເງິນສະເພາະກິດຈະການ. ວັກນີ້ ຖືກຕັດອອກ. |

# ໝວດ 4

# ໃບລາຍງານຖານະການເງິນ

## ຂອບເຂດຂອງໝວດນີ້

4.1 ໝວດດັ່ງກ່າວນີ້ກຳນົດ ກ່ຽວກັບຂໍ້ມູນຂ່າວສານທີ່ຕ້ອງສະເໜີໃນ**ໃບລາຍງານຖານະການເງິນ** ແລະວິທີການສະເໜີຂໍ້ມູນຂ່າວສານດັ່ງກ່າວ. ໃບລາຍງານຖານະການເງິນ ສະເໜີ **ຊັບສິນ**, **ໜີ້ສິນ** ແລະ **ທຶນເຈົ້າຂອງ** ຂອງວິສາຫະກິດໃນມື້ສະເພາະໃດໜຶ່ງ - ມື້ສຸດທ້າຍຂອງຮອບເວລາລາຍງານ.

## ຂໍ້ມູນຂ່າວສານທີ່ຕ້ອງສະເໜີໃນໃບລາຍງານຖານະການເງິນ

4.2 ໃບລາຍງານຖານະການເງິນຕ້ອງລວມມີລາຍການຂອງໃບລາຍງານຖານະການເງິນ ແລະ ໃນນັ້ນ ຈຳນວນເງິນ ຂອງລາຍການອື່ນໆ ຂ້າງລຸ່ມນີ້:

(ກ) ເງິນສົດ ແລະ **ສິ່ງທຽບເທົ່າເງິນສົດ**.

(ຂ) ໜີ້ຕ້ອງຮັບໃນການທຸລະກິດ ແລະ ໜີ້ຕ້ອງຮັບອື່ນໆ.

(ຄ) **ຊັບສິນການເງິນ** (ບໍ່ລວມຈຳນວນເງິນທີ່ສະແດງອອກໃນຂໍ້ (ກ), (ຂ), (ຕ) ແລະ (ຖ)).

(ງ) **ເຄື່ອງໃນສາງ**.

(ຈ) **ຊັບສົມບັດຄົງທີ່ມີຕົວຕົນ**.

(ຊ) **ຊັບສິນບໍ່ມີຕົວຕົນ**.

(ຍ) **ຊັບສິນຊີວະພາບ** ທີ່ໄດ້ລົງບັນຊີຕາມມູນຄ່າຕົ້ນທຶນຫັກຄ່າຫຼ້ຽຫ້ຽນສະສົມ ແລະ ການສູນເສຍມູນຄ່າ.

(ດ) **ຊັບສິນຊີວະພາບ** ທີ່ໄດ້ລົງບັນຊີຕາມມູນຄ່າຍຸຕິທຳຜ່ານກຳໄລ ຫຼື ຂາດທຶນ.

(ຕ) ເງິນລົງທຶນໃນ**ວິສາຫະກິດຂາຮຸ້ນ**.

(ຖ) ເງິນລົງທຶນໃນ**ວິສາຫະກິດທີ່ຄວບຄຸມຮ່ວມກັນ**.

(ທ) ໜີ້ຕ້ອງສົ່ງໃນການທຸລະກິດ ແລະ ໜີ້ຕ້ອງສົ່ງອື່ນໆ.

(ນ) **ໜີ້ສິນການເງິນ** (ບໍ່ລວມຈຳນວນເງິນທີ່ສະແດງອອກໃນຂໍ້ (ທ) ແລະ (ຜ)).

(ບ) ຊັບສິນ ແລະ ໜີ້ສິນ ບ້ວງ**ອາກອນໃນປີ**.

(ຝ) **ເງິນແຮ**.

(ພ) ທຶນເຈົ້າຂອງ.

ໃບລາຍງານຖານະການເງິນ ຕ້ອງຖືກສ້າງໃຫ້ສອດຄ່ອງກັບຮູບແບບທີ່ຖືກຮັບຮອງ ໂດຍກະຊວງການເງິນ.

4.3 ວິສາຫະກິດຕ້ອງສະເໜີລາຍການຫຼັກ, ຫົວຂໍ້ ແລະ ລວມຍອດຍ່ອຍ ໃນໃບລາຍງານຖານະການເງິນ ເພີ່ມເຕີມ ຖ້າວ່າ ການສະເໜີໃນລັກສະນະດັ່ງກ່າວຫາກສ້າງຄວາມເຂົ້າໃຈ ກ່ຽວກັບ **ຖານະການເງິນ**ຂອງວິສາຫະກິດ.

## ການຈຳແນກຄວາມແຕກຕ່າງ ລະຫ່ວາງລາຍການໝຸນວຽນ ແລະ ບໍ່ໝຸນວຽນ

4.4 ວິສາຫະກິດຕ້ອງສະເໜີຊັບສິນໝຸນວຽນ ແລະ ບໍ່ໝຸນວຽນ, ແລະ ໜີ້ສິນໝຸນວຽນ ແລະ ບໍ່ໝຸນວຽນ ດ້ວຍການຈັດປະເພດແຍກກັນໃນໃບລາຍງານຖານະການເງິນໂດຍສອດຄ່ອງກັບວັກ 4.5–4.8.

## ຊັບສິນໝຸນວຽນ

4.5 ວິສາຫະກິດຕ້ອງຈັດຊັບສິນເປັນຊັບສິນໝຸນວຽນ ຖ້າຫາກ:

(ກ) ວິສາຫະກິດຄາດວ່າຈະໄດ້ຮັບປະໂຫຍດຈາກຊັບສິນ ຫຼື ຕັ້ງໃຈຈະຂາຍອອກ ຫຼື ຊົມໃຊ້ຊັບສິນດັ່ງກ່າວ ໃນຮອບວຽນທຸລະກິດປົກກະຕິຂອງວິສາຫະກິດ;

(ຂ) ວິສາຫະກິດຖືຊັບສິນໄວ້ ໂດຍມີຈຸດປະສົງຕົ້ນຕໍເພື່ອການທຸລະກິດ;

(ຄ) ວິສາຫະກິດຄາດວ່າຈະໄດ້ຮັບຜົນປະໂຫຍດຈາກຊັບສິນພາຍໃນສິບສອງເດືອນຫຼັງຈາກມື້ລາຍງານ; ຫຼື

(ງ) ຊັບສິນເປັນເງິນສົດ ຫຼື ສິ່ງທຽບເທົ່າເງິນສົດ, ເວັ້ນເສຍແຕ່ຈະມີຂໍ້ຈຳກັດໃນການແລກປ່ຽນ ຫຼື ນຳໃຊ້ ເພື່ອຊຳລະສະສາງໜີ້ສິນ ເປັນເວລາຢ່າງໜ້ອຍສິບສອງເດືອນຫຼັງຈາກມື້ລາຍງານ.

4.6 ວິສາຫະກິດຕ້ອງຈັດປະເພດຊັບສິນອື່ນໆທັງໝົດເປັນຊັບສິນບໍ່ໝຸນວຽນ. ຖ້າບໍ່ສາມາດຈຳແນກຮອບວຽນທຸລະກິດປົກກະຕິຂອງວິສາຫະກິດຢ່າງຈະແຈ້ງໄດ້, ໃຫ້ຖືວ່າຮອບໄລຍະດຳເນີນງານ ເທົ່າກັບສິບສອງເດືອນ.

## ໜີ້ສິນໝຸນວຽນ

4.7 ວິສາຫະກິດຕ້ອງຈັດໜີ້ສິນເປັນໜີ້ສິນໝຸນວຽນ, ຖ້າຫາກ:

(ກ) ວິສາຫະກິດ ຄາດວ່າຈະສະສາງໜີ້ສິນໃນຮອບວຽນທຸລະກິດປົກກະຕິຂອງວິສາຫະກິດ;

(ຂ) ວິສາຫະກິດ ຖືໜີ້ສິນໄວ້ ໂດຍມີຈຸດປະສົງຕົ້ນຕໍ ເພື່ອການທຸລະກິດ;

(ຄ) ໜີ້ສິນ ຕ້ອງໄດ້ຊຳລະພາຍໃນສິບສອງເດືອນນັບຈາກມື້ລາຍງານ; ຫຼື

(ງ) ວິສາຫະກິດບໍ່ມີສິດທີ່ບໍ່ມີເງື່ອນໄຂເພື່ອເຍື້ອນການຊຳລະໜີ້ ເປັນເວລາບໍ່ຕ່ຳກວ່າສິບສອງເດືອນນັບຈາກມື້ລາຍງານ.

4.8 ວິສາຫະກິດຕ້ອງຈັດໜີ້ສິນອື່ນໆທັງໝົດ ເປັນລາຍການບໍ່ໝຸນວຽນ.

## ລຳດັບ ແລະ ຮູບແບບຂອງບັນດາລາຍການໃນໃບລາຍງານຖານະການເງິນ

4.9 ວັກ 4.2 ໃຫ້ພຽງແຕ່ສະໜອງບັນຊີລາຍການທີ່ແຕກຕ່າງກັນຫຼາຍ ທາງດ້ານລັກສະນະເນື້ອໃນ ຫຼື ຂອດວຽກງານເພື່ອຮັບປະກັນ ການແຍກສະເໜີໃນໃບລາຍງານຖານະການເງິນ.

ໃບລາຍງານຖານະການເງິນ ຕ້ອງຖືກສ້າງຂຶ້ນ ໃຫ້ສອດຄ່ອງກັບຮູບແບບທີ່ກະຊວງການເງິນຮັບຮອງ. ແຕ່ລາຍການຫຼັກ ຕ້ອງຖືກປະກອບເຂົ້າ ເມື່ອຂະໜາດ, ລັກສະນະເນື້ອໃນ ຫຼື ຂອດວຽກງານ ຂອງລາຍການໃດໜຶ່ງ ຫຼື ການລວມລາຍການທີ່ຄ້າຍຄືກັນເຂົ້າກັນ ເປັນຄືດັ່ງການສະເໜີສະເພາະຕ່າງຫາກ ທີ່ກ່ຽວຂ້ອງກັບຄວາມເຂົ້າໃຈ ກ່ຽວກັບຖານະການເງິນຂອງວິສາຫະກິດ.

4.10 ຄຳວິນິດໄສ ກ່ຽວກັບລາຍການໃດຕ້ອງໄດ້ແຍກສະເໜີເພີ້ມເຕີມ ແມ່ນໃຫ້ອີງຕາມການປະເມີນຜົນ ຕາມປັດໄຈຂ້າງລຸ່ມນີ້ທັງໝົດ:

(ກ) ຈຳນວນເງິນ, ລັກສະນະ ແລະ ພາວະຄ່ອງຕົວຂອງຊັບສິນ.

(ຂ) ຂອດວຽກງານຂອງຊັບສິນພາຍໃນວິສາຫະກິດ.

(ຄ) ຈຳນວນເງິນ, ລັກສະນະ ແລະ ກຳນົດເວລາຂອງໜີ້ສິນ.

## ຂໍ້ມູນຂ່າວສານທີ່ຕ້ອງສະເໜີໃນໃບລາຍງານຖານະການເງິນ ຫຼື ໃນບົດອະທິບາຍຊ້ອນທ້າຍ

4.11 ວິສາຫະກິດຕ້ອງເປີດເຜີຍ ໃນບົດອະທິບາຍຊ້ອນທ້າຍການຈັດປະເພດຍ່ອຍຂອງລາຍການຫຼັກ ທີ່ໄດ້ສະເໜີ ດັ່ງລຸ່ມນີ້:

(ກ) ຊັບສົມບັດຄົງທີ່ມີຕົວຕົນ ໃນການຈັດປະເພດທີ່ແທດເໝາະສຳລັບວິສາຫະກິດ.

(ຂ) ໜີ້ຕ້ອງຮັບໃນການທຸລະກິດ ແລະ ໜີ້ຕ້ອງຮັບອື່ນໆ ທີ່ສະແດງອອກຕ່າງຫາກຈຳນວນເງິນຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ, ຈາກພາກສ່ວນອື່ນ ແລະ ໜີ້ຕ້ອງຮັບຈາກລາຍຮັບຕ້ອງຮັບທີ່ຍັງບໍ່ທັນໄດ້ອອກໃບເກັບເງິນ.

(ຄ) ເຄື່ອງໃນສາງ, ໃຫ້ສະແດງແຍກຈຳນວນເງິນຂອງແຕ່ລະລາຍການດັ່ງນີ້, ເຄື່ອງໃນສາງ:

(i) ທີ່ຮັກສາໄວ້ເພື່ອຂາຍໃນການດຳເນີນທຸລະກິດປົກກະຕິ.

(ii) ໃນຂະບວນການຜະລິດເພື່ອການຂາຍດັ່ງກ່າວ.

(iii) ໃນຮູບການອຸປະກອນ ຫຼື ວັດຖຸປະກອບທີ່ຕ້ອງຊົມໃຊ້ໃນຂະບວນການຜະລິດ ຫຼື ໃນການສະໜອງການບໍລິການ.

(ງ) ໜີ້ຕ້ອງສົ່ງໃນການທຸລະກິດ ແລະ ໜີ້ຕ້ອງສົ່ງອື່ນໆ, ທີ່ສະແດງອອກຕ່າງຫາກຈຳນວນເງິນຕ້ອງຊຳລະໃຫ້ຜູ້ສະໜອງໃນການທຸລະກິດ, ໃຫ້ພາກສ່ວນທີ່ກ່ຽວຂ້ອງກັນ ແລະ ລາຍຮັບເຍື້ອນຊຳລະ ແລະ ລາຍຮັບລາຍຈ່າຍທີ່ຍັງຄ້າງ.

(ຈ) ເງິນແຮ ເພື່ອ **ເສີນປະໂຫຍດຂອງພະນັກງານ** ແລະ ເງິນແຮອື່ນໆ.

(ສ) ປະເພດທຶນເຈົ້າຂອງເຊັ່ນ ທຶນຖອກຊຳລະແລ້ວ, ສ່ວນເກີນມູນຄ່າຮຸ້ນ, ກຳໄລລໍຖ້າແບ່ງປັນ ແລະ ລາຍການລາຍຮັບ ແລະ ລາຍຈ່າຍ, ຕາມທີ່ມາດຕະຖານດັ່ງກ່າວນີ້ກຳນົດ, ຖືກຮັບຮູ້ລາຍການບັນຊີ ໃນເສີນໄດ້ຮັບສັງລວມອື່ນໆ ແລະ ສະເໜີແຍກຕ່າງຫາກໃນທຶນເຈົ້າຂອງ.

4.12 ວິສາຫະກິດທີ່ມີທຶນຮຸ້ນ ຕ້ອງເປີດເຜີຍລາຍການຂ້າງລຸ່ມນີ້ ໃນບົດອະທິບາຍຊ້ອນທ້າຍ:

(ກ) ສຳລັບແຕ່ລະປະເພດທຶນຮຸ້ນ:

(i) ຈຳນວນຮຸ້ນ ທີ່ໄດ້ອະນຸຍາດ.

(ii) ຈຳນວນຮຸ້ນ ທີ່ໄດ້ອອກຈຳໜ່າຍ ແລະ ໄດ້ຖອກຊຳລະເຕັມມູນຄ່າ ແລະ ໄດ້ຖອກຊຳລະບໍ່ທັນເຕັມມູນຄ່າ.

(iii) ມູນຄ່າທີ່ກຳນົດໄວ້ຕໍ່ຮຸ້ນ ຫຼື ວ່າໃບຮຸ້ນດັ່ງກ່າວບໍ່ມີມູນຄ່າທີ່ກຳນົດໄວ້.

(iv) ການສົມທຽບຕົວເລກຈຳນວນຮຸ້ນຄ້າງຖອກຊຳລະ ໃນຕົ້ນ ແລະ ທ້າຍປີການບັນຊີ.

(v) ສິດທິ, ບູລິມະສິດ ແລະ ຂໍ້ຈຳກັດ ທີ່ຕິດພັນກັບລາຍການປະເພດນີ້ ລວມທັງຂໍ້ຈຳກັດ ກ່ຽວກັບການແຈກຢາຍເງິນປັນຜົນ ແລະ ການຫົດແທນທຶນຄືນ.

(vi) ຮຸ້ນໃນວິສາຫະກິດ ທີ່ວິສາຫະກິດ ຫຼື ບໍລິສັດໃນກຸ່ມ ຫຼື ວິສາຫະກິດຂາຮຸ້ນ ຮັກສາໄວ້.

(vii) ຮຸ້ນທີ່ສະຫງວນໄວ້ເພື່ອອອກໃຫ້ຕາມສິດທິຊື້-ຂາຍຮຸ້ນ ແລະສັນຍາການຂາຍຮຸ້ນ, ລວມທັງເງື່ອນໄຂ ແລະ ຈຳນວນເງິນ.

(ຂ) ຄຳອະທິບາຍ ກ່ຽວກັບແຕ່ລະຄັງສະສົມໃນທຶນເຈົ້າຂອງ.

4.14 ຖ້າວ່າ, ໃນມື້ລາຍງານ, ວິສາຫະກິດມີສັນຍາປະມູນຂາຍ ຊັບສິນຕົ້ນຕໍ, ຫຼື ກຸ່ມຊັບສິນ ແລະ ໜີ້ສິນ, ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້:

(ກ) ຄຳອະທິບາຍ ກ່ຽວກັບ ຊັບສິນ ຫຼື ກຸ່ມຊັບສິນ ແລະ ໜີ້ສິນ.

(ຂ) ຄຳອະທິບາຍ ກ່ຽວກັບ ຄວາມເປັນຈິງ ແລະ ສະຖານະການຂອງການຂາຍ ຫຼື ແຜນການຂາຍ.

(ຄ) ມູນຄ່າໃນບັນຊີຂອງຊັບສິນ ຫຼື, ຖ້າວ່າການຂາຍກ່າວເຖິງກຸ່ມຊັບສິນ ແລະ ໜີ້ສິນ, ມູນຄ່າໃນບັນຊີຂອງ ກຸ່ມຊັບສິນ ແລະ ໜີ້ສິນເຫຼົ່ານັ້ນ.

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| 4.2 (ສ) | ໃນມາດຕະຖານນີ້, ອະສັງຫາລິມະຊັບເພື່ອການລົງທຶນ ຖືກຕີຕມູນຄ່າ ຕາມວິທີລາຄາຕົ້ນທຶນ-ຄ່າຫຼ້ຍຫ້ຽນ-ການສູນເສຍມູນຄ່າ ບໍ່ແມ່ນຕາມມູນຄ່າຍຸຕິທຳ. ວັກນີ້ ຖືກຕັດອອກ. (ເບິ່ງ ໝວດ 16 *ອະສັງຫາລິມະຊັບເພື່ອການລົງທຶນ*) |
| 4.2 (ຖ) | ວິສາຫະກິດທີ່ບໍ່ຮັບໃຊ້ເງິນປະໂຫຍດສາທາລະນະ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS for ວທຍ ຢ່າງເຕັມສ່ວນ. (ເບິ່ງ ໝວດ 9 *ເອກະສານລາຍງານການເງິນ ລວມກິດຈະການ ແລະ ເອກະສານລາຍງານການເງິນສະເພາະກິດຈະການ*). ພ້ອມນັ້ນ, ລາຍການຕ່າງໆ ກ່ຽວກັບບໍລິ ສັດໃນກຸ່ມ ກໍບໍ່ຕ້ອງຖືກນຳສະເໜີ ໃນເອກະສານລາຍງານການເງິນສະເພາະກິດຈະການ ຂອງວິສາຫະກິດ ທີ່ປະຕິບັດມາດຕະຖານ FRS for ວນກ ນີ້. ວັກນີ້ ຖືກປັບປຸງ. |
| 4.2 (ປ) | ໃນມາດຕະຖານສະບັບນີ້, ວນກ ຮັບຮູ້ລາຍການບັນຊີ ອາກອນໃນປີ ແລະບໍ່ຮັບຮູ້ລາຍການບັນຊີອາກອນລໍຖ້າສະສາງ. ວັກນີ້ ຖືກຕັດອອກ. (ເບິ່ງ ໝວດ 29 ອາກອນລາຍຮັບ) |
| 4.2 (ຝ) ແລະ (ພ) | ວນກ ບໍ່ສ້າງເອກະສານລາຍງານການເງິນລວມກິດຈະການ (ເບິ່ງ ໝວດ 9 *ເອກະສານລາຍງານການເງິນ ລວມກິດຈະການ ແລະ ເອກະສານລາຍງານການເງິນສະເພາະກິດຈະການ*). ວັກ (ພ) ຖືກຕັດອອກ ແລະ ວັກ (ຝ) ຖືກປັບປຸງ. ຈຳນວນເງິນ ຂອງທຶນເຈົ້າຂອງ ຖືກຊີ້ໃຫ້ເຫັນໃນ 4.2 (ຝ) ເທົ່ານັ້ນ. |

# ໝວດ 5

# ໃບລາຍງານຜົນໄດ້ຮັບສັງລວມ ແລະ ໃບລາຍງານຜົນໄດ້ຮັບ

## ຂອບເຂດຂອງໝວດນີ້

5.1 ໝວດດັ່ງກ່າວນີ້ ກຳນົດໃຫ້ວິສາຫະກິດຕ້ອງສະເໜີ **ລວມຍອດຜົນໄດ້ຮັບສັງລວມ**ຂອງຕົນເອງໃນປີການບັນຊີໜຶ່ງ-ເຊັ່ນ **ຜົນການດຳເນີນງານ**ດ້ານການເງິນສຳລັບປີການບັນຊີ ເປັນໜຶ່ງ ຫຼື ສອງ**ເອກະສານລາຍງານການເງິນ*.* ** ໝວດນີ້ ໄດ້ກຳນົດຂໍ້ມູນຂ່າວສານທີ່ຕ້ອງສະເໜີໃນເອກະສານລາຍງານການເງິນເຫຼົ່ານີ້ ແລະ ຄວນສະເໜີຄືແນວໃດ.

## ການສະເໜີ ລວມຍອດຜົນໄດ້ຮັບສັງລວມ

5.2 ວິສາຫະກິດຕ້ອງສະເໜີລວມຍອດຜົນໄດ້ຮັບສັງລວມໃນປີການບັນຊີ ໃນສອງໃບລາຍງານ—ໃບລາຍງານຜົນໄດ້ຮັບ ແລະ **ໃບລາຍງານຜົນໄດ້ຮັບສັງລວມ*.*** ໃບລາຍງານຜົນໄດ້ຮັບ ສະແດງທຸກລາຍການຂອງລາຍຮັບ ແລະ ລາຍຈ່າຍ ທີ່ຖືກຮັບຮູ້ລາຍການບັນຊີ ໃນປີ ຍົກເວັ້ນບັນດາລາຍການ ທີ່ຖືກຮັບຮູ້ລາຍການບັນຊີ ໃນໃບລາຍງານຜົນໄດ້ຮັບສັງລວມ ນອກກຳໄລ ຫຼື ຂາດທຶນ ຕາມມາດຕະຖານສະບັບນີ້ ກຳນົດໄວ້. ສອງໃບລາຍງານໃບລາຍງານຜົນໄດ້ຮັບດັ່ງກ່າວ ມີຮູບແບບທີ່ເປັນມາດຕະຖານໄວ້.

### ໃບລາຍງານຜົນໄດ້ຮັບ

5.4 ໃບລາຍງານຜົນໄດ້ຮັບສັງລວມ ຕ້ອງລວມມີທຸກລາຍການລາຍຮັບ ແລະ ລາຍຈ່າຍທີ່ໄດ້ຮັບຮູ້ລາຍການບັນຊີໃນປີການບັນຊີ ເວັ້ນເສຍແຕ່ ມາດຕະຖານດັ່ງກ່າວນີ້ ກຳນົດໄວ້ຢ່າງອື່ນ. ມາດຕະຖານນີ້ກຳນົດການລົງບັນຊີ ທີ່ແຕກຕ່າງກັນຕາມສະພາບການລຸ່ມນີ້:

(ກ) ຜົນກະທົບຂອງການກວດແກ້ຂໍ້ຜິດພາດ ແລະສ່ວນປ່ຽນແປງດ້ານ**ນະ�โยบายการบันชี** ໃຫ້ສະແດງເປັນການປັບປຸງຍ້ອນຫຼັງຂອງປີການບັນຊີຜ່ານມາ ແທນການເປັນສ່ວນໜຶ່ງຂອງກຳໄລ ຫຼື ຂາດທຶນໃນປີການບັນຊີ ທີ່ໄດ້ເກີດຂຶ້ນ (ເບິ່ງໝວດ 10 *ນະ�โยบายการบันชี, ตัวเลขการคาดคะเนปะติบัด ແລະ ຂໍ້ຜິດພາດ*).

(ຂ) ສອງປະເພດ**ຜົນໄດ້ຮັບສັງລວມອື່ນໆ** ຖືກຮັບຮູ້ລາຍການບັນຊີໃນໃບລາຍງານຜົນໄດ້ຮັບສັງລວມ, ນອກກຳໄລ ຫຼື ຂາດທຶນ, ເມື່ອເກີດມີ:

(i) ບາງ**ສ່ວນໄດ້** ແລະ **ສ່ວນເສຍ** ທີ່ເກີດຂຶ້ນຈາກການປ່ຽນຄ່າສະກຸນເງິນໃນ**ເອກະສານລາຍງານການເງິນ** ກ່ຽວກັບລາຍການເຄື່ອນໄຫວຢູ່ຕ່າງປະເທດ (ເບິ່ງໝວດ 30 *ການປ່ຽນຄ່າສະກຸນເງິນຕ່າງປະເທດ*).

(ii) ບາງສ່ວນໄດ້ ແລະ ສ່ວນເສຍ ດ້ານສະຖິຕິປະກັນໄພ (ເບິ່ງໝວດ 28 *ຜົນປະโยชน์ของพะนักงาน*).

5.5 ວິສາຫະກິດ ຕ້ອງປະກອບລາຍການຫຼັກຂອງໃບລາຍງານຜົນໄດ້ຮັບ ທີ່ໄດ້ກຳນົດເປັນມາດຕະຖານໄວ້ ແລະ ໃນບັນດາລາຍການອື່ນໆໃນປີ ຈຳນວນເງິນດັ່ງລຸ່ມນີ້:

(ກ) **ລາຍຮັບ** .

(ຂ) ຕົ້ນທຶນການເງິນ.

(ງ) **ລາຍຈ່າຍອາກອນ** ຊຶ່ງລວມມີອາກອນທີ່ຈັດສັນໃສ່ລາຍການ (ຈ) ແລະ (5.5/1(ກ)) ຂ້າງລຸ່ມ (ເບິ່ງວັກ 29.27).

(ຈ) ຈຳນວນເງິນດຽວ ຊຶ່ງປະກອບເປັນ ລວມຍອດຂອງ

(i) ກຳໄລ ຫຼື ຂາດທຶນຫຼັງອາກອນຂອງ**ການດຳເນີນງານທີ່ຍຸດເຊົາ**, ແລະ

(ii) ສ່ວນໄດ້ ຫຼື ສ່ວນເສຍ ທີ່ໄດ້ຮັບຮູ້ລາຍການບັນຊີໃນການຕີມູນຄ່າຕາມມູນຄ່າຍຸຕິທຳລົບຕົ້ນທຶນຂາຍ ຫຼື ໃນການຂາຍຊັບສິນສຸດທິ ທີ່ກ່ຽວຂ້ອງກັບການດຳເນີນງານທີ່ຍົກເລີກ.

(ສ) ກຳໄລ ຫຼື ຂາດທຶນ.

### ໃບລາຍງານຜົນໄດ້ຮັບສັງລວມ

5.5/1 ໃບລາຍງານຜົນໄດ້ຮັບສັງລວມ ຕ້ອງເລີ່ມຕົ້ນດ້ວຍ ກຳໄລ ຫຼື ຂາດທຶນ ເປັນແຖວທຳອິດ ແລະ ຕ້ອງແຍກສະແດງ, ຢ່າງຕ່ຳສຸດ, ລາຍການຕໍ່ໄປນີ້ ໃນປີ:

(ກ) ແຕ່ລະລາຍການຂອງຜົນໄດ້ຮັບສັງລວມອື່ນໆ (ເບິ່ງວັກ 5.4 (ຂ)) ທີ່ໄດ້ຈັດປະເພດຕາມລັກສະນະເນື້ອໃນ).

(ຄ) ລວມຍອດຜົນໄດ້ຮັບສັງລວມ.

### ຂໍ້ກຳນົດໃນການປະຕິບັດ

5.8 ພາຍໃຕ້ມາດຕະຖານດັ່ງກ່າວນີ້, ຜົນກະທົບຂອງການກວດແກ້ຂໍ້ຜິດພາດ ແລະການປ່ຽນແປງນະໂຍບາຍການບັນຊີ ແມ່ນສະເໜີເປັນການປັບປຸງຍ້ອນຫຼັງຂອງປີການບັນຊີຜ່ານມາ, ແທນການລວມເປັນສ່ວນໜຶ່ງຂອງກຳໄລ ຫຼື ຂາດທຶນ ໃນປີການບັນຊີທີ່ເກີດຂຶ້ນ (ເບິ່ງໝວດ 10 *ນະໂຍບາຍການບັນຊີ, ຕົວເລກຄາດຄະເນປະຕິບັດ ແລະ ຂໍ້ຜິດພາດ*).

5.9 ວິສາຫະກິດຕ້ອງສະເໜີລາຍການຫຼັກ, ຫົວຂໍ້ ແລະ ລວມຍອດຍ່ອຍ ເພີ່ມເຕີມ ໃນໃບລາຍງານຜົນໄດ້ຮັບ ແລະ ໃນໃບລາຍງານຜົນໄດ້ຮັບສັງລວມ, ເມື່ອການສະເໜີດັ່ງກ່າວນັ້ນ ກ່ຽວຂ້ອງກັບການສ້າງຄວາມເຂົ້າໃຈ ກ່ຽວກັບຜົນການດຳເນີນງານດ້ານການເງິນຂອງວິສາຫະກິດ.

5.10 ວິສາຫະກິດບໍ່ຕ້ອງສະເໜີ ຫຼື ອະທິບາຍລາຍການລາຍຮັບ ແລະ ລາຍຈ່າຍໃດໆ ເປັນ 'ລາຍການພິເສດ' ໃນໃບລາຍງານຜົນໄດ້ຮັບ, ໃນໃບລາຍງານຜົນໄດ້ຮັບສັງລວມ ຫຼື ໃນບົດອະທິບາຍຊ້ອນທ້າຍ.

## ການວິໄຈລາຍຈ່າຍ

5.11 ວິສາຫະກິດຕ້ອງສະເໜີການວິໄຈລາຍຈ່າຍ ໂດຍຈັດປະເພດບົນພື້ນຖານລັກສະນະເນື້ອໃນຂອງລາຍຈ່າຍ. ວິສາຫະກິດສາມາດສະເໜີເອກະສານລາຍງານການເງິນ ທີສອງ ໂດຍນຳໃຊ້ການຈັດປະເພດລາຍຈ່າຍຕາມຂອດວຽກງານ.

### ການວິໄຈຕາມລັກສະນະເນື້ອໃນຂອງລາຍຈ່າຍ

(ກ) ຕາມວິທີການຈັດປະເພດນີ້, ລາຍຈ່າຍຖືກລວມເຂົ້າກັນ ໃນໃບລາຍງານຜົນໄດ້ຮັບສັງລວມ ຕາມລັກສະນະເນື້ອໃນ (ເຊັ່ນ: ຄ່າຫຼຸ້ຍຫ້ຽນ, ການຊື້ວັດສະດຸ, ຄ່າຂົນສົ່ງ, ຜົນປະໂຫຍດຂອງພະນັກງານ ແລະ ຄ່າໂຄສະນາ), ແລະ ບໍ່ຖືກຈັດສັນຄືນໃໝ່ ຕາມຂອດວຽກງານຕ່າງໆ ພາຍໃນວິສາຫະກິດ.

### ການວິໄຈຕາມຂອດວຽກງານຂອງລາຍຈ່າຍ

(ຂ) ຕາມວິທີການຈັດປະເພດນີ້, ລາຍຈ່າຍຖືກລວມເຂົ້າກັນ ຕາມຂອດວຽກງານ ດັ່ງເປັນສ່ວນຂອງຕົ້ນທຶນຂາຍ ຫຼື, ຕົວຢ່າງ, ຕົ້ນທຶນການແຈກຢາຍ ຫຼື ກິດຈະກຳບໍລິຫານງານ. ຢ່າງຕ່ຳສຸດ, ວິສາຫະກິດໃດໜຶ່ງ ເປີດເຜີຍຕົ້ນທຶນຂາຍຂອງຕົນ ຕາມວິທີການນີ້ ແຍກສະເພາະຕ່າງຫາກ ຈາກລາຍຈ່າຍອື່ນໆ.

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| ໝວດ 5 | ຫຼາຍຂໍ້ກຳນົດຂອງໝວດນີ້ ໄດ້ຖືກປັບປຸງ ຍ້ອນມາດຕະຖານສະບັບນີ້ ມີການຫ້າມນຳໃຊ້ຮູບແບບວິທີການໃບລາຍງານຜົນໄດ້ຮັບໃບລາຍງານດຽວ (ເບິ່ງ FRS ສຳລັບ ວທຍ ພ້ອມ). |
| 5.4 (ຂ) (iii) | ວັກນີ້ ຖືກຕັດອອກ ເພາະ ວນກ ທີ່ນຳໃຊ້ເຄື່ອງມືຄຸ້ມກັນຄວາມສ່ຽງ ຖືເປັນວິສາຫະກິດຂະໜາດໃຫຍ່ (ເບິ່ງ 1.2 (ຈ)). |
| 5.5 (ຄ) ແລະ (ຍ)<br>5.6<br>5.7<br>5.11 | ວນກ ບໍ່ສ້າງເອກະສານລາຍງານການເງິນລວມກິດຈະການ (ເບິ່ງ ໝວດ 9 *ເອກະສານລາຍງານການເງິນລວມກິດຈະການ ແລະ ເອກະສານລາຍງານການເງິນສະເພາະກິດຈະການ*). ວັກເຫຼົ່ານີ້ ຖືກຕັດອອກ ຫຼື ປັບປຸງ. |
| 5.5 (ງ) ແລະ (ຈ) | ມາດຕະຖານນີ້ ຮັບຮູ້ລາຍການບັນຊີ ລາຍຈ່າຍອາກອນ ຊຶ່ງລວມມີອາກອນທີ່ຈັດສັນໃສ່ລາຍການ ຂອງການດຳເນີນງານທີ່ຍຸດເຊີ່ງ ແລະ ລາຍການຂອງຜົນໄດ້ຮັບສັງລວມ ໃນໃບລາຍງານຜົນໄດ້ຮັບ. ວັກນີ້ ຖືກປັບປຸງ. |
| 5.6 | ວນກ ບໍ່ສ້າງເອກະສານລາຍງານການເງິນລວມກິດຈະການ. ວັກເຫຼົ່ານີ້ ຖືກຕັດອອກ. |

## ໝວດ 6

## ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ

### *ວນກ ອາດບໍ່ສ້າງໃບລາຍງານສ່ວນປ່ຽນແປງຂອງທຶນເຈົ້າຂອງ*

## ຂອບເຂດຂອງໝວດນີ້

6.1 ໝວດດັ່ງກ່າວ ວາງເງື່ອນໄຂສຳລັບນຳສະເໜີສ່ວນປ່ຽນແປງໃນທຶນເຈົ້າຂອງ ໃນປີ ຂອງວິສາຫະກິດໃດໜຶ່ງ, ໃນ**ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ**.

## ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ

### ເປົ້າໝາຍ

6.2 ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ສະແດງ ກຳໄລ ຫຼື ຂາດທຶນຂອງວິສາຫະກິດໃດໜຶ່ງ ສຳລັບໜຶ່ງ**ຮອບເວລາລາຍງານ,** ລາຍການລາຍຮັບ ແລະ ລາຍຈ່າຍ ທີ່ໄດ້ຮັບຮູ້ລາຍການບັນຊີ ໃນ**ຜົນໄດ້ຮັບສັງລວມອື່ນ** ໃນປີ, ຜົນກະທົບຂອງການປ່ຽນແປງ**ນະໂຍບາຍການບັນຊີ** ແລະ ການກວດແກ້ຂໍ້ຜິດພາດ ທີ່ໄດ້ຮັບຮູ້ລາຍການບັນຊີໃນປີ ແລະ ຈຳນວນເງິນລົງທຶນໂດຍຜູ້ລົງທຶນໃນທຶນເຈົ້າຂອງ ແລະ ເງິນປັນຜົນ ແລະ ການແຈກຢາຍອື່ນໆໃຫ້ແກ່ຜູ້ລົງທຶນໃນທຶນເຈົ້າຂອງໃນປີ.

### ຂໍ້ມູນຂ່າວສານທີ່ຕ້ອງສະເໜີໃນໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ

6.3 ວິສາຫະກິດໃດໜຶ່ງ ຕ້ອງນຳສະເໜີ ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ທີ່ສະແດງອອກໃນໃບລາຍງານ :

(ກ) **ລວມຍອດຜົນໄດ້ຮັບສັງລວມ**ໃນປີການບັນຊີ;

(ຂ) ສຳລັບແຕ່ລະອົງປະກອບຂອງທຶນເຈົ້າຂອງ, ຜົນກະທົບຂອງການປະຕິບັດຢ້ອນຫຼັງ ຫຼື ການປັບປຸງຄືນໃໝ່ທີ່ໄດ້ຮັບຮູ້ລາຍການບັນຊີຢ້ອນຫຼັງ ໂດຍອີງຕາມ ໝວດ 10 *ນະໂຍບາຍການບັນຊີ, ຕົວເລກຄາດຄະເນປະຕິບັດ ແລະ ຂໍ້ຜິດພາດ.*

(ຄ) ສຳລັບແຕ່ລະອົງປະກອບຂອງທຶນເຈົ້າຂອງ, ການສົມທຽບຕົວເລກລະຫ່ວາງ ມູນຄ່າໃນບັນຊີຕົ້ນປີ ແລະທ້າຍປີ, ໂດຍແຍກແຕ່ລະສ່ວນປ່ຽນແປງທີ່ເປັນຜົນມາຈາກ :

(i) ກຳໄລ ຫຼື ຂາດທຶນ.

(ii) ແຕ່ລະລາຍການ ຂອງຜົນໄດ້ຮັບສັງລວມອື່ນໆ.

(iii) ຈຳນວນເງິນລົງທຶນຂອງຜູ້ເປັນເຈົ້າຂອງ, ເງິນປັນຜົນ ແລະ ເງິນແຈກຢາຍອື່ນໆ ໃຫ້ຜູ້ເປັນເຈົ້າຂອງ, ຊຶ່ງແຍກສະແດງ ລາຍການອອກຮຸ້ນ, ລາຍການເຄື່ອນໄຫວຮຸ້ນທຶນຊື້ຄືນ, ເງິນປັນຜົນ ແລະ ການແຈກຢາຍອື່ນໆ ໃຫ້ແກ່ຜູ້ເປັນເຈົ້າຂອງ.

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| 6.3 (ກ) | ວິສາຫະກິດທີ່ບໍ່ຮັບໃຊ້ເງິນປະໂຫຍດສາທາລະນະ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວທຍ ຢ່າງເຕັມສ່ວນ. ວນກ ບໍ່ສ້າງເອກະສານລາຍງານການເງິນລວມກິດຈະການ. ພ້ອມນັ້ນ ວນກ ບໍ່ສາມາດສະແດງຈຳນວນເງິນລວມຍອດ ບ້ວງ**ເຈົ້າຂອງ**ບໍລິສັດແມ່ ແລະ ເງິນລົງທຶນທີ່ບໍ່ໃຫ້ສິດຄວບຄຸມ. |
| 6.3 (ຄ) (iii) | ວິສາຫະກິດທີ່ບໍ່ຮັບໃຊ້ເງິນປະໂຫຍດສາທາລະນະ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວທຍ ຢ່າງເຕັມສ່ວນ. ວນກ ບໍ່ສ້າງເອກະສານລາຍງານການເງິນລວມກິດຈະການ. ພ້ອມນັ້ນ ວນກ ບໍ່ສາມາດຊີ້ໃຫ້ເຫັນ ສ່ວນປ່ຽນແປງເງິນລົງທຶນຂອງຜູ້ເປັນເຈົ້າຂອງ ໃນບໍລິສັດໃນກຸ່ມ ທີ່ບໍ່ເຮັດໃຫ້ສູນເສຍການຄວບຄຸມ. |

# ໝວດ 7

# ໃບລາຍງານກະແສເງິນສົດ

## *ວນກ ອາດບໍ່ສ້າງໃບລາຍງານກະແສເງິນສົດ*

## ຂອບເຂດຂອງໝວດນີ້

7.1 ໝວດດັ່ງກ່າວນີ້ ກຳນົດຂໍ້ມູນຂ່າວສານທີ່ຕ້ອງໄດ້ສະເໜີໃນ**ໃບລາຍງານກະແສເງິນສົດ** ແລະ ວິທີການສະເໜີຂໍ້ມູນຂ່າວສານດັ່ງກ່າວ. ໃບລາຍງານກະແສເງິນສົດ ສະໜອງຂໍ້ມູນຂ່າວສານ ກ່ຽວກັບສ່ວນປ່ຽນແປງດ້ານ**ເງິນສົດ** ແລະ **ສິ່ງທຽບເທົ່າເງິນສົດ**ຂອງວິສາຫະກິດໃດໜຶ່ງໃນ**ຮອບເວລາລາຍງານ** ຊຶ່ງແຍກສະແດງສ່ວນປ່ຽນແປງທີ່ກຳເນີດຈາກ **ກິດຈະກຳດຳເນີນງານ**, **ກິດຈະກຳການລົງທຶນ** ແລະ **ກິດຈະກຳປະກອບທຶນ.**

## ສິ່ງທຽບເທົ່າເງິນສົດ

7.2 **ສິ່ງທຽບເທົ່າເງິນສົດ** ແມ່ນເງິນລົງທຶນໄລຍະສັ້ນ, ມີພາວະຄ່ອງຕົວສູງ ທີ່ຮັກສາໄວ້ເພື່ອຈຸດປະສົງໃນການຊຳລະຂໍ້ຜູກພັນໄລຍະສັ້ນດ້ານເງິນສົດ ແຕ່ຫາກບໍ່ແມ່ນເພື່ອການລົງທຶນ ຫຼື ເພື່ອຈຸດມຸ້ງໝາຍອື່ນໆ. ສະນັ້ນ, ຕາມປົກກະຕິເງິນລົງທຶນຈະມີເງື່ອນໄຂເປັນສິ່ງທຽບເທົ່າເງິນສົດ ພຽງແຕ່ຖ້າຫາກມີວາລະໄລຍະເວລາສັ້ນ, ຕົວຢ່າງຕ່ຳກ່ວາ ຫຼື ເທົ່າກັບສາມເດືອນ ຫຼື ຫຼຸດນັ້ນ ເລີ່ມແຕ່ມື້ໄດ້ມາເປັນກຳມະສິດ. ເງິນເບີກເກີນບັນຊີທະນາຄານ ຕາມປົກກະຕິ ແມ່ນຖືຄືກັນກັບກິດຈະກຳປະກອບທຶນທີ່ຄ້າຍຄືກັນກັບເງິນກູ້ຢືມ. ເຖິງຢ່າງໃດກໍດີ, ຖ້າຫາກຕ້ອງຊຳລະຄືນເມື່ອມີການທວງຖາມ ແລະ ປະກອບເປັນພາກສ່ວນໜຶ່ງຂອງການບໍລິຫານເງິນສົດ ຂອງວິສາຫະກິດ, ເງິນເບີກເກີນບັນຊີທະນາຄານ ກໍເປັນອົງປະກອບຂອງເງິນສົດ ແລະ ສິ່ງທຽບເທົ່າເງິນສົດ.

## ຂໍ້ມູນຂ່າວສານທີ່ຕ້ອງສະເໜີໃນໃບລາຍງານກະແສເງິນສົດ

7.3 ວິສາຫະກິດຕ້ອງສະເໜີໃບລາຍງານກະແສເງິນສົດ ທີ່ສະແດງກະແສເງິນສົດໃນຮອບເວລາລາຍງານ ທີ່ຈັດເປັນກິດຈະກຳດຳເນີນງານ, ກິດຈະກຳການລົງທຶນ ແລະ ກິດຈະກຳປະກອບທຶນ.

### ກິດຈະກຳດຳເນີນງານ

7.4 ກິດຈະກຳດຳເນີນງານ ແມ່ນກິດຈະກຳຕົ້ນຕໍຂອງວິສາຫະກິດ ທີ່ສ້າງ**ລາຍຮັບ.** ສະນັ້ນ, ກະແສເງິນສົດ ທີ່ກຳເນີດຈາກກິດຈະກຳດຳເນີນງານ ໂດຍທົ່ວໄປ ມາຈາກລາຍການເຄື່ອນໄຫວ ແລະ ເຫດການ ແລະ ເງື່ອນໄຂອື່ນໆ ທີ່ເກີດຂຶ້ນໃນການຄິດໄລ່**ກຳໄລ ຫຼື ຂາດທຶນ.** ຕົວຢ່າງ ຂອງກະແສເງິນສົດ ທີ່ມາຈາກກິດຈະກຳດຳເນີນງານ ມີຄື :

(ກ) ການຮັບເງິນສົດຈາກການຂາຍສິນຄ້າ ແລະ ການສະໜອງການບໍລິການ.

(ຂ) ການຮັບເງິນສົດຈາກຄ່າສິດທິ, ຄ່າທຳນຽມ, ຄ່ານາຍໜ້າ ແລະ ລາຍຮັບອື່ນໆ.

(ຄ) ການຈ່າຍເງິນສົດໃຫ້ຜູ້ສະໜອງສິນຄ້າ ແລະ ການບໍລິການ.

(ງ) ການຈ່າຍເງິນສົດໃຫ້ພະນັກງານ ແລະ ຈ່າຍແທນພະນັກງານ.

(ຈ) ການຈ່າຍເງິນສົດເພື່ອຊຳລະ ຫຼື ຫົດແທນຄືນອາກອນລາຍຮັບ.

(ສ) ການຮັບ ແລະ ຈ່າຍອອກ ເງິນສົດ ຈາກເງິນລົງທຶນ, ກູ້ຢືມ ແລະ ສັນຍາອື່ນ ທີ່ຮັກສາໄວ້ເພື່ອຈຸດໝາຍທາງດ້ານທຸລະກິດ ຫຼື ການຄ້າ ຊຶ່ງຄ້າຍຄືກັນກັບເຄື່ອງຊີ້ເຂົ້າສາງເພື່ອແນໃສ່ຂາຍອອກຄືນ.

ບາງລາຍການເຄື່ອນໄຫວ ເຊັ່ນ ການຂາຍລາຍການໃດໜຶ່ງຂອງໂຮງງານໂດຍວິສາຫະກິດຜະລິດ, ອາດເຮັດໃຫ້ເກີດມູນຄ່າສ່ວນໄດ້ ຫຼື ສ່ວນເສຍ ທີ່ໄດ້ລວມຢູ່ໃນກຳໄລ ຫຼື ຂາດທຶນ. ເຖິງຢ່າງໃດກໍດີ, ກະແສເງິນສົດ ທີ່ຕິດພັນກັບລາຍການເຄື່ອນໄຫວດັ່ງກ່າວ ແມ່ນກະແສເງິນສົດທີ່ມາຈາກກິດຈະກຳການລົງທຶນ.

### ກິດຈະກຳການລົງທຶນ

7.5 ກິດຈະກຳການລົງທຶນ ແມ່ນການຊື້ ແລະ ຂາຍຊັບສິນໄລຍະຍາວ ແລະ ເງິນລົງທຶນອື່ນໆ ທີ່ບໍ່ລວມຢູ່ໃນສິ່ງທຽບເທົ່າເງິນສົດ. ຕົວຢ່າງຂອງກະແສເງິນສົດ ທີ່ມາຈາກກິດຈະກຳການລົງທຶນ ມີຄື :

(ກ) ການຈ່າຍເງິນສົດຊື້ຊັບສົມບັດຄົງທີ່ມີຕົວຕົນ (ລວມທັງຊັບຊັບສົມບັດຄົງທີ່ ທີ່ສ້າງຂຶ້ນດ້ວຍຕົນເອງ), ຊັບສິນບໍ່ມີຕົວຕົນ ແລະ ຊັບສິນໄລຍະຍາວອື່ນໆ.

(ຂ) ການຮັບເງິນສົດ ຈາກການຂາຍຊັບສົມບັດຄົງທີ່ມີຕົວຕົນ, ຊັບສິນບໍ່ມີຕົວຕົນ ແລະ ຊັບສິນໄລຍະຍາວອື່ນໆ.

(ຄ) ການຈ່າຍເງິນສົດ ເພື່ອຊື້ເຄື່ອງມືການເງິນປະເພດທຶນເຈົ້າຂອງ ຫຼື ໜີ້ ຂອງວິສາຫະກິດອື່ນໆ, ແລະ ເງິນລົງທຶນໃນວິສາຫະກິດປະສົມ (ທີ່ບໍ່ແມ່ນການຈ່າຍອອກເພື່ອຊື້ເຄື່ອງມືດັ່ງກ່າວ ທີ່ຈັດປະເພດເປັນສິ່ງທຽບເທົ່າເງິນສົດ ຫຼື ຮັກສາໄວ້ເພື່ອຈຸດໝາຍ ໃນການເຄື່ອນໄຫວທຸລະກິດ ຫຼື ໃນການຄ້າ).

(ງ) ການຮັບເງິນສົດ ຈາກການຂາຍເຄື່ອງມືການເງິນປະເພດທຶນເຈົ້າຂອງ ຫຼື ໜີ້ຂອງວິສາຫະກິດອື່ນໆ, ແລະ ລົງທຶນໃນວິສາຫະກິດປະສົມ (ທີ່ບໍ່ແມ່ນການຮັບເຂົ້າຈາກເຄື່ອງມືທີ່ຈັດປະເພດເປັນສິ່ງທຽບເທົ່າເງິນສົດ ຫຼື ທີ່ໄດ້ຮັກສາໄວ້ເພື່ອຈຸດໝາຍໃນການຄ້າ ຫຼື ໃນການເຄື່ອນໄຫວທຸລະກິດ).

(ຈ) ເງິນສົດລ່ວງໜ້າ ແລະ ເງິນໃຫ້ກູ້ຢືມແກ່ພາກສ່ວນອື່ນ.

(ສ) ການຮັບເງິນສົດຈາກການທົດແທນເງິນລ່ວງໜ້າ ແລະ ເງິນທີ່ໄດ້ໃຫ້ກູ້ຢືມ ແກ່ພາກສ່ວນອື່ນ.

### ກິດຈະກຳປະກອບທຶນ

7.6 ກິດຈະກຳທີ່ກຳເນີດຈາກການປ່ຽນແປງດ້ານຂະໜາດ ແລະ ສ່ວນປະກອບຂອງທຶນເຈົ້າຂອງ ແລະ ເງິນກູ້ຢືມຂອງວິສາຫະກິດ. ຕົວຢ່າງກະແສເງິນສົດ ທີ່ມາຈາກກິດຈະກຳປະກອບທຶນ ມີຄື :

(ກ) ການຮັບເງິນສົດ ຈາກການອອກຮຸ້ນ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງອື່ນໆ.

(ຂ) ການຈ່າຍເງິນສົດໃຫ້ເຈົ້າຂອງ ເພື່ອຊື້ຮຸ້ນ ຫຼື ຊື້ຄືນຮຸ້ນ ຂອງວິສາຫະກິດ.

(ຄ) ການຮັບເງິນສົດຈາກການອອກພັນທະບັດກູ້ຢືມທີ່ບໍ່ມີການຄ້ຳປະກັນ, ເງິນກູ້ຢືມປົກກະຕິ, ທະນາບັດ, ພັນທະບັດ, ເງິນກູ້ຢືມຊວດຈຳ ແລະ ເງິນກູ້ຢືມໄລຍະສັ້ນ ຫຼື ໄລຍະຍາວ ອື່ນໆ.

(ງ) ການຈ່າຍເງິນສົດເພື່ອທົດແທນຄືນຈຳນວນເງິນທີ່ໄດ້ກູ້ຢືມ.

## ການລາຍງານກະແສເງິນສົດ ທີ່ມາຈາກກິດຈະກຳດຳເນີນງານ

7.7 ວິສາຫະກິດໃດໜຶ່ງ ຕ້ອງສະເໜີກະແສເງິນສົດທີ່ມາຈາກກິດຈະກຳດຳເນີນງານ ໂດຍນຳໃຊ້ :

(ກ) ວິທີການທາງອ້ອມ ຊຶ່ງມີການປັບປຸງກຳໄລ ຫຼື ຂາດທຶນ ຈາກຜົນກະທົບຂອງລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນ ສົດ , ທຸກການເຍື້ອນ ຫຼື ຈຳນວນເງິນຄ້າງຮັບ-ຄ້າງຈ່າຍຂອງການຮັບ ຫຼື ຈ່າຍເງິນສົດ ໃນການດຳເນີນງານຜ່ານມາ ຫຼື ໃນອະນາຄົດ, ແລະ **ລາຍການ** ລາຍຮັບ ຫຼື ລາຍຈ່າຍ ທີ່ຕິດພັນກັບກະແສເງິນສົດບ້ວງການລົງທຶນ ຫຼື ການປະກອບທຶນ, ຫຼື

(ຂ) ວິທີການທາງກົງ, ຊຶ່ງມີການເປີດເຜີຍປະເພດລາຍການຕົ້ນຕໍ ຂອງການຮັບເງິນສົດລວມ ແລະ ການຈ່າຍເງິນສົດ ລວມ.

### ວິທີການທາງອ້ອມ

7.8 ອີງຕາມວິທີການທາງອ້ອມ, ກະແສເງິນສົດສຸດທິ ທີ່ມາຈາກກິດຈະກຳດຳເນີນງານ ຖືກຄິດໄລ່ຈາກການປັບປຸງກຳໄລ ຫຼື

ຂາດທຶນ ຈາກຜົນກະທົບຂອງ :

(ກ) ສ່ວນປ່ຽນແປງເຄື່ອງໃນສາງ, ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງໃນການທຸລະກິດ ໃນປີ ;

(ຂ) ລາຍການທີ່ບໍ່ແມ່ນເງິນສົດ, ເຊັ່ນ**ຄ່າຫຼູ້ຍຫ້ຽນ**, **ເງິນແຮ**, ລາຍຮັບ (ລາຍຈ່າຍ) ສະສົມ ທີ່ບໍ່ທັນໄດ້ຮັບ (ໄດ້ຈ່າຍ) ເປັນເງິນສົດ, ກຳໄລ ແລະ ຂາດທຶນຈາກເງິນຕາຕ່າງປະເທດ ທີ່ບໍ່ໄດ້ເກີດຂຶ້ນ ; ແລະ

(ຄ) ທຸກລາຍການອື່ນໆ ຊຶ່ງຜົນກະທົບຂອງເງິນສົດກ່ຽວຂ້ອງກັບການລົງທຶນ ຫຼື ການປະກອບທຶນ.

### ວິທີການທາງກົງ

7.9 ອີງຕາມວິທີການທາງກົງ, ກະແສເງິນສົດສຸດທິ ທີ່ມາຈາກກິດຈະກຳດຳເນີນງານ ຖືກສະແດງອອກດ້ວຍການເປີດເຜີຍຂໍ້ມູນຂ່າວສານປະເພດລາຍການຕົ້ນຕໍ ຂອງການຮັບເງິນສົດລວມ ແລະ ການຈ່າຍເງິນສົດລວມ. ຂໍ້ມູນຂ່າວສານດັ່ງກ່າວ ໄດ້ມາຈາກ :

(ກ) ການບັນທຶກບັນຊີຂອງວິສາຫະກິດ; ຫຼື

(ຂ) ການປັບຕົວເລກຂາຍ, ຕົ້ນທຶນການຂາຍ ແລະ ລາຍການອື່ນໆ ໃນໃບລາຍງານຜົນໄດ້ຮັບສັງລວມ (ຫຼື ໃນໃບລາຍງານຜົນໄດ້ຮັບ, ຖ້າຫາກໄດ້ນຳສະເໜີ) ຕາມ :

(i) ສ່ວນປ່ຽນແປງໃນປີ ຂອງເຄື່ອງໃນສາງ ແລະ ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງໃນການທຸລະກິດ ;

(ii) ລາຍການທີ່ບໍ່ແມ່ນເງິນສົດອື່ນໆ; ແລະ

(iii) ລາຍການອື່ນໆ ຊຶ່ງຜົນກະທົບຂອງເງິນສົດ ກ່ຽວຂ້ອງກັບກະແສເງິນສົດ ບ້ວງການລົງທຶນ ຫຼື ການປະກອບທຶນ.

## ການລາຍງານກະແສເງິນສົດ ທີ່ມາຈາກກິດຈະກຳການລົງທຶນ ແລະ ກິດຈະກຳປະກອບທຶນ

7.10 ວິສາຫະກິດຕ້ອງແຍກສະເໜີປະເພດລາຍການຕົ້ນຕໍ ຂອງການຮັບເງິນສົດລວມ ແລະ ການຈ່າຍເງິນສົດລວມ ທີ່ມາຈາກກິດຈະກຳການລົງທຶນ ແລະ ກິດຈະກຳປະກອບທຶນ. ການລວມກະແສເງິນສົດທີ່ມາຈາກການຊື້ ແລະ ຂາຍຫົວໜ່ວຍທຸລະກິດ ຕ້ອງສະເໜີຕ່າງຫາກ ແລະ ຈັດເຂົ້າເປັນປະເພດກິດຈະກຳການລົງທຶນ.

## ກະແສເງິນສົດ ເປັນເງິນຕາຕ່າງປະເທດ

7.11 ວິສາຫະກິດຕ້ອງບັນທຶກກະແສເງິນສົດທີ່ມາຈາກລາຍການເຄື່ອນໄຫວເປັນເງິນຕາຕ່າງປະເທດ ເປັນ**ສະກຸນເງິນທີ່ໃຊ້ໃນການດຳເນີນງານ** ຂອງວິສາຫະກິດ ໂດຍເອົາຈຳນວນເງິນ ທີ່ເປັນເງິນຕາຕ່າງປະເທດ ຄູນໃຫ້ອັດຕາແລກປ່ຽນລະຫ່ວາງສະກຸນເງິນທີ່ໃຊ້ໃນການດຳເນີນງານຂອງວິສາຫະກິດ ແລະ ເງິນຕາຕ່າງປະເທດໃນມື້ກະແສເງິນສົດນັ້ນເກີດຂຶ້ນ.

7.13 ສ່ວນໄດ້ ແລະ ສ່ວນເສຍ ທີ່ບໍ່ທັນໄດ້ເກີດຂຶ້ນ ຈາກສ່ວນຜິດດ່ຽງອັດຕາແລກປ່ຽນເງິນຕາຕ່າງປະເທດ ບໍ່ແມ່ນກະແສເງິນສົດ. ເຖິງຢ່າງໃດກໍດີ, ເພື່ອຊ່ວຍໃຫ້ສົມທຽບລະຫ່ວາງ ເງິນສົດ ແລະ ສິ່ງທຽບເທົ່າເງິນສົດ ໃນຕົ້ນປີ ແລະທ້າຍປີ, ຜົນກະທົບຂອງສ່ວນຜິດດ່ຽງອັດຕາແລກປ່ຽນ ຂອງເງິນສົດ ແລະ ສິ່ງທຽບເທົ່າເງິນສົດ ທີ່ຮັກສາໄວ້ ຫຼື ທີ່ຄ້າງຊຳລະເປັນເງິນຕາຕ່າງປະເທດ ຕ້ອງໄດ້ສະເໜີໃນໃບລາຍງານກະແສເງິນສົດ. ສະນັ້ນ ວິສາຫະກິດຕ້ອງໄດ້ຕີມູນຄ່າຄືນໃໝ່ ເງິນສົດ ແລະ ສິ່ງທຽບເທົ່າເງິນສົດທີ່ຮັກສາໄວ້ໃນຮອບເວລາລາຍງານ (ເຊັ່ນຈຳນວນເງິນເປັນເງິນຕາຕ່າງປະເທດທີ່ຮັກສາໄວ້ ໃນບັນຊີເງິນຝາກທະນາຄານ ທີ່ເປັນເງິນຕາຕ່າງປະເທດ) ຕາມອັດຕາແລກປ່ຽນໃນທ້າຍປີ. ວິສາຫະກິດຕ້ອງແຍກສະແດງຜົນສ່ວນໄດ້ ຫຼື ສ່ວນເສຍ ເປັນເງິນຕາຕ່າງປະເທດທີ່ບໍ່ໄດ້ເກີດຂຶ້ນ ຕ່າງຫາກຈາກກະແສເງິນສົດ ຈາກກິດຈະກຳດຳເນີນງານ, ກິດຈະກຳການລົງທຶນ ແລະ ກິດຈະກຳປະກອບທຶນ.

## ດອກເບ້ຍ ແລະ ເງິນປັນຜົນ

7.14 ວິສາຫະກິດຕ້ອງແຍກສະເໜີກະແສເງິນສົດ ທີ່ມາຈາກດອກເບ້ຍ ແລະ ເງິນປັນຜົນທີ່ໄດ້ຮັບ ແລະ ໄດ້ຈ່າຍ.

7.15 ວິສາຫະກິດສາມາດຈັດປະເພດດອກເບ້ຍທີ່ໄດ້ຈ່າຍ ແລະ ດອກເບ້ຍ ແລະ ເງິນປັນຜົນທີ່ໄດ້ຮັບ ເປັນກະແສເງິນສົດຈາກ

ກິດຈະກຳດຳເນີນງານ, ຍ້ອນວ່າໄດ້ເອົາລາຍການດັ່ງກ່າວລວມຢູ່ໃນກຳໄລ ຫຼື ຂາດທຶນ.

7.16 ວິສາຫະກິດສາມາດຈັດປະເພດເງິນປັນຜົນ ທີ່ໄດ້ຈ່າຍເປັນກະແສເງິນສົດຈາກການປະກອບທຶນ ຍ້ອນວ່າລາຍການດັ່ງກ່າວເປັນຄ່າໃຊ້ຈ່າຍໃນການຈັດຫາຊັບພະຍາກອນການເງິນ.

## ອາກອນລາຍຮັບ

7.17 ວິສາຫະກິດຕ້ອງແຍກສະເໜີກະແສເງິນສົດບ້ວງອາກອນລາຍຮັບ ແລະ ຈັດເປັນປະເພດກະແສເງິນສົດຈາກກິດຈະກຳດຳເນີນງານ.

## ລາຍການເຄື່ອນໄຫວ ທີ່ບໍ່ແມ່ນເງິນສົດ

7.18 ວິສາຫະກິດ ຕ້ອງບໍ່ເອົາລາຍການເຄື່ອນໄຫວການລົງທຶນ ແລະ ການປະກອບທຶນ ທີ່ບໍ່ໄດ້ກຳນົດໃຊ້ເງິນສົດ ຫຼື ສິ່ງທຽບເທົ່າເງິນສົດ ເຂົ້າໃນໃບລາຍງານກະແສເງິນສົດ. ວິສາຫະກິດຕ້ອງເປີດເຜີຍລາຍການເຄື່ອນໄຫວດັ່ງກ່າວຢູ່ບ່ອນອື່ນ ໃນ **ເອກະສານລາຍງານການເງິນ** ດ້ວຍວິທີທາງທີ່ສະໜອງຂໍ້ມູນຂ່າວສານທີ່ກ່ຽວຂ້ອງທັງໝົດ ກ່ຽວກັບກິດຈະກຳການລົງທຶນ ແລະ ກິດຈະກຳປະກອບທຶນດັ່ງກ່າວ.

7.19 ຫຼາຍກິດຈະກຳການລົງທຶນ ແລະ ກິດຈະກຳປະກອບທຶນ ບໍ່ມີຜົນກະທົບໂດຍກົງຕໍ່ກະແສເງິນສົດໃນປີ ເຖິງແມ່ນວ່າຈະກະທົບໃສ່ໂຄງປະກອບ ຂອງທຶນ ແລະ ຊັບສິນ ຂອງວິສາຫະກິດກໍຕາມ. ການບໍ່ເອົາລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດເຂົ້າໃນໃບລາຍງານກະແສເງິນສົດ ແມ່ນສອດຄ່ອງກັບຈຸດປະສົງຂອງໃບລາຍງານກະແສເງິນສົດ, ຍ້ອນວ່າລາຍການດັ່ງກ່າວ ບໍ່ກ່ຽວຂ້ອງກັບກະແສເງິນສົດ ໃນປີການບັນຊີປັດຈຸບັນ. ຕົວຢ່າງ ລາຍການເຄື່ອນໄຫວ ທີ່ບໍ່ແມ່ນເງິນສົດ ມີ ຄື :

(ກ) ການຊື້ຊັບສິນ ຜ່ານການຮັບຮູ້ໜີ້ສິນ ທີ່ຕິດພັນໂດຍກົງ.

(ຂ) ການຊື້ກິດຈະການຂອງວິສາຫະກິດໃດໜຶ່ງຜ່ານການອອກທຶນເຈົ້າຂອງ.

(ຄ) ການປ່ຽນໜີ້ເປັນທຶນເຈົ້າຂອງ.

## ອົງປະກອບຂອງເງິນສົດ ແລະ ສິ່ງທຽບເທົ່າເງິນສົດ

7.20 ວິສາຫະກິດຕ້ອງສະເໜີ ກ່ຽວກັບອົງປະກອບ ຂອງເງິນສົດ ແລະ ສິ່ງທຽບເທົ່າເງິນສົດ ແລະ ຕ້ອງສະເໜີການສົມທຽບຕົວເລກ ລະຫວ່າງຈຳນວນເງິນທີ່ໄດ້ສະເໜີໃນໃບລາຍງານກະແສເງິນສົດ ແລະ ລາຍການທຽບເທົ່າທີ່ໄດ້ສະເໜີໃນໃບລາຍງານຖານະການເງິນ. ເຖິງຢ່າງໃດກໍດີ, ວິສາຫະກິດໃດໜຶ່ງ ບໍ່ຈຳເປັນຕ້ອງສະເໜີການສົມທຽບຕົວເລກດັ່ງກ່າວ ຖ້າວ່າຈຳນວນເງິນສົດ ແລະ ສິ່ງທຽບເທົ່າເງິນສົດ ທີ່ໄດ້ສະເໜີໃນໃບລາຍງານກະແສເງິນສົດ ຫາກຄືກັນກັບຈຳນວນເງິນທີ່ສະເໜີໃນໃບລາຍງານຖານະການເງິນ.

## ການເປີດເຜີຍຂໍ້ມູນຂ່າວສານອື່ນໆ

7.21 ວິສາຫະກິດຕ້ອງເປີດເຜີຍ ຈຳນວນເງິນຍອດເຫຼືອທີ່ສຳຄັນ ກ່ຽວກັບເງິນສົດ ແລະ ສິ່ງທຽບເທົ່າເງິນສົດ ທີ່ວິສາຫະກິດຖືໄວ້ ແຕ່ຕົນບໍ່ອາດນຳໃຊ້ໄດ້ ໂດຍໃຫ້ມີຄຳຊີ້ແຈງຈາກຄະນະບໍລິຫານພ້ອມ. ນອກຈາກເຫດຜົນອື່ນໆແລ້ວ, ຈຳນວນເງິນສົດ ແລະ ສິ່ງທຽບເທົ່າເງິນສົດຊຶ່ງວິສາຫະກິດຖືໄວ້ ບໍ່ອາດເອົາໄປນຳໃຊ້ໂດຍວິສາຫະກິດໄດ້, ເນື່ອງຈາກ, ການຄວບຄຸມດ້ານການແລກປ່ຽນເງິນຕາຕ່າງປະເທດ ຫຼື ຂໍ້ຈຳກັດທາງດ້ານກົດໝາຍ.

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| 7.4 (ຈ) | ການຊຳລະເງິນສົດ ຫຼື ການທົດແທນຄືນ ອາກອນລາຍຮັບ ຍາມໃດກໍເປັນກະແສເງິນສົດ ຈາກກິດຈະກຳດຳເນີນງານ. |
| 7.5 (ຊ) ແລະ (ຍ) ວັກສຸດທ້າຍ | ວນກ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວທຍ ຢ່າງເຕັມສ່ວນ ຖ້າມີສັນຍາກ່ຽວກັບ ເຄື່ອງມືການເງິນ ແລະ ລາຍການເຄື່ອນໄຫວທີ່ສະຫຼັບຊັບຊ້ອນ (ເບິ່ງ FRS ສຳລັບ ວທຍ – ໝວດ 12 *ປະເດັນຕ່າງໆ ທີ່ຕິດພັນກັບເຄື່ອງມືການເງິນອື່ນໆ*). ວັກເຫຼົ່ານີ້ ຖືກຕັດອອກ. |
| 7.6 (ຈ) | ມາດຕະຖານ FRS ສຳລັບ ວນກ ນີ້ ຮັບຮູ້ລາຍການເຄື່ອນໄຫວ ການເຊົ່າການເງິນ ເປັນການເຊົ່າດຳເນີນງານ. ວັກນີ້ ຖືກຕັດອອກ. |
| 7.8 (ຂ) | ວນກ ບໍ່ສ້າງເອກະສານລາຍງານການເງິນລວມກິດຈະການ, ແຕ່ສ້າງເອກະສານລາຍງານການເງິນສະເພາະກິດຈະການ. ພ້ອມນັ້ນ "ກຳໄລທີ່ບໍໄດ້ແບ່ງປັນ ຂອງວິສາຫະກິດຂາຮຸ້ນ ແລະ ເງິນລົງທຶນທີ່ບໍ່ໃຫ້ສິດຄວບຄຸມ" ຖືກຕັດອອກ.<br>ວນກ ບໍ່ຮັບຮູ້ລາຍການບັນຊີ ອາກອນລໍຖ້າສະສາງ. |
| 7.10 - 7.12 | ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS for ວທຍ ຢ່າງເຕັມສ່ວນ. ວັກ 7.10 ຖືກປັບປຸງ ແລະ ວັກ 7.12 ຖືກຕັດອອກ. |
| 7.14 - 7.17 | ດອກເບี้ย ແລະ ເງິນປັນຜົນ, ອາກອນລາຍຮັບ ຖືກຈັດປະເພດ ເປັນກະແສເງິນສົດ ຈາກກິດຈະກຳທຸລະກິດ. |
| 7.19 (a) | ສັນຍາເຊົ່າການເງິນ ຖືກຮັບຮູ້ລາຍການບັນຊີ ເປັນສັນຍາເຊົ່າດຳເນີນງານ (ເບິ່ງ ໝວດ 20 ສັນຍາເຊົ່າ) |

# ໝວດ 8

# ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ

## ຂອບເຂດຂອງໝວດນີ້

8.1 ໝວດດັ່ງກ່າວນີ້ ສະເໜີຫຼັກການ ກ່ຽວກັບຂໍ້ມູນຂ່າວສານທີ່ຕ້ອງສະເໜີໃນ**ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ** ແລະ ວິທີການນຳສະເໜີຂໍ້ມູນຂ່າວສານດັ່ງກ່າວ. ບົດອະທິບາຍຊ້ອນທ້າຍ ບັນຈຸຂໍ້ມູນຂ່າວສານເພີ້ມເຕີມ ຈາກຂໍ້ມູນທີ່ໄດ້ສະເໜີໃນ**ໃບລາຍງານຖານະການເງິນ**, **ໃບລາຍງານຜົນໄດ້ຮັບສັງລວມ**, **ໃບລາຍງານຜົນໄດ້ຮັບ**, **ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ** (ຖ້າມີການນຳສະເໜີ) ແລະ **ໃບລາຍງານກະແສເງິນສົດ** (ຖ້າມີການນຳສະເໜີ). ບົດອະທິບາຍຊ້ອນທ້າຍ ໃຫ້ຄຳອະທິບາຍແບບບັນລະຍາຍ ຫຼື ແຍກສ່ວນລາຍການ ທີ່ໄດ້ສະເໜີໃນໃບລາຍງານເຫຼົ່ານັ້ນ, ພ້ອມດ້ວຍຂໍ້ມູນຂ່າວສານ ຂອງລາຍການທີ່ບໍ່ໄດ້ເງື່ອນໄຂ ເພື່ອ**ການຮັບຮູ້ລາຍການບັນຊີ** ໃນເອກະສານລາຍງານເຫຼົ່ານັ້ນ. ນອກຈາກຂໍ້ກຳນົດຂອງໝວດດັ່ງກ່າວນີ້, ເກືອບວ່າໝວດອື່ນໆທັງໝົດຂອງ ມາດຕະຖານດັ່ງກ່າວນີ້ ກຳນົດໃຫ້ມີການເປີດເຜີຍຂໍ້ມູນຂ່າວສານ ຊຶ່ງຕາມປົກກະຕິ ຕ້ອງສະແດງໃນບົດອະທິບາຍຊ້ອນທ້າຍ.

## ໂຄງປະກອບຂອງບົດອະທິບາຍຊ້ອນທ້າຍ

8.2 ບົດອະທິບາຍຊ້ອນທ້າຍຕ້ອງ :

(ກ) ສະເໜີຂໍ້ມູນຂ່າວສານ ກ່ຽວກັບ ພື້ນຖານການສ້າງເອກະສານລາຍງານການເງິນ ແລະ **ນະໂຍບາຍການບັນຊີ**ສະເພາະທີ່ໄດ້ນຳໃຊ້ ຕາມວັກ 8.5 ຫາ 8.7 ;

(ຂ) ເປີດເຜີຍຂໍ້ມູນຂ່າວສານ ທີ່ກຳນົດໂດຍມາດຕະຖານດັ່ງກ່າວນີ້ ຊຶ່ງບໍ່ໄດ້ສະເໜີຢູ່ບ່ອນອື່ນໃນເອກະສານລາຍງານການເງິນ; ແລະ

(ຄ) ສະໜອງຂໍ້ມູນຂ່າວສານ ທີ່ບໍ່ໄດ້ສະເໜີຢູ່ບ່ອນອື່ນໃນເອກະສານລາຍງານການເງິນ, ແຕ່ຫາກກ່ຽວຂ້ອງກັບການສ້າງຄວາມເຂົ້າໃຈ ກ່ຽວກັບໃບລາຍງານໃດໜຶ່ງ ຂອງເອກະສານລາຍງານການເງິນ.

8.3 ເທົ່າທີ່ເປັນໄປໄດ້, ວິສາຫະກິດຕ້ອງສະເໜີບົດອະທິບາຍຊ້ອນທ້າຍຢ່າງເປັນລະບົບ. ວິສາຫະກິດຕ້ອງອ້າງອີງແຕ່ລະລາຍການຂອງເອກະສານລາຍງານການເງິນ ໃສ່ຂໍ້ມູນຂ່າວສານທີ່ກ່ຽວຂ້ອງທັງໝົດ ທີ່ສະແດງອອກຢູ່ໃນບົດອະທິບາຍຊ້ອນທ້າຍ.

8.4 ຕາມປົກກະຕິ, ວິສາຫະກິດຕ້ອງສະເໜີບົດອະທິບາຍຊ້ອນທ້າຍ ຕາມລຳດັບດັ່ງລຸ່ມນີ້:

(ກ) ຖະແຫຼງການ ຊຶ່ງເອກະສານລາຍງານການເງິນໄດ້ຖືກສ້າງຂຶ້ນໂດຍສອດຄ່ອງກັບມາດຕະຖານສະບັບນີ້ (ເບິ່ງວັກ 3.3) ;

(ຂ) ບົດສະຫຼຸບ ກ່ຽວກັບນະໂຍບາຍການບັນຊີຕົ້ນຕໍ ທີ່ໄດ້ນຳໃຊ້ (ເບິ່ງວັກ 8.5) ;

(ຄ) ຂໍ້ມູນຂ່າວສານເພີ້ມເຕີມ ສຳລັບລາຍການທີ່ໄດ້ສະເໜີໃນເອກະສານລາຍງານການເງິນ, ຕາມລຳດັບທີ່ໄດ້ສະແດງໃນແຕ່ລະໃບລາຍງານ ແລະ ລາຍການຫຼັກ ; ແລະ

(ງ) ການເປີດເຜີຍຂໍ້ມູນຂ່າວສານອື່ນໆ.

## ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບນະໂຍບາຍການບັນຊີ

8.5 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານ ໃນບົດສະຫຼຸບ ກ່ຽວກັບນະໂຍບາຍການບັນຊີຕົ້ນຕໍ ດັ່ງລຸ່ມນີ້ :

(ກ) ພື້ນຖານ (ຫຼື ບັນດາພື້ນຖານ) ການຕີມູນຄ່າທີ່ໄດ້ນຳໃຊ້ ເພື່ອສ້າງເອກະສານລາຍງານການເງິນ;

(ຂ) ນະໂຍບາຍການບັນຊີອື່ນໆ ທີ່ໄດ້ນຳໃຊ້ ແລະ ກ່ຽວຂ້ອງກັນ ເພື່ອໃຫ້ເຂົ້າໃຈເອກະສານລາຍງານການເງິນໄດ້ດີ.

## ຂໍ້ມູນຂ່າວສານ ກ່ຽວກັບຄຳວິນິດໄສ

8.6 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນ, ໃນບົດສະຫຼຸບ ກ່ຽວກັບນະໂຍບາຍການບັນຊີທີ່ສຳຄັນ ຫຼື ໃນບົດອະທິບາຍອື່ນໆ, ຄຳວິນິດໄສ, ນອກຈາກສິ່ງທີ່ພົວພັນກັບຕົວເລກຄາດຄະເນປະຕິບັດ (ເບິ່ງວັກ 8.7), ທີ່ຄະນະບໍລິຫານໄດ້ມີ ໃນຂະບວນການປະຕິບັດນະໂຍບາຍການບັນຊີ ຂອງວິສາຫະກິດ, ແລະ ທີ່ມີຜົນກະທົບທີ່ສຳຄັນກ່ວາໝູ່ຕໍ່ຈຳນວນເງິນທີ່ໄດ້ຮັບຮູ້ລາຍການບັນຊີໃນເອກະສານລາຍງານການເງິນ.

## ຂໍ້ມູນຂ່າວສານກ່ຽວກັບ/ແຫຼ່ງຂໍ້ມູນຂ່າວສານຕົ້ນຕໍດ້ານ ຄວາມບໍ່ແນ່ນອນຂອງຕົວເລກຄາດຄະເນປະຕິບັດ

8.7 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານ ໃນບົດອະທິບາຍຊ້ອນທ້າຍ ກ່ຽວກັບສົມມຸດຖານ-ຕົ້ນຕໍ ທີ່ກ່ຽວຂ້ອງກັບອະນາຄົດ ແລະ ແຫຼ່ງຂໍ້ມູນຂ່າວສານຕົ້ນຕໍ ກ່ຽວກັບຄວາມບໍ່ແນ່ນອນດ້ານຕົວເລກຄາດຄະເນປະຕິບັດໃນມື້ລາຍງານ, ຊຶ່ງມີຄວາມສ່ຽງທີ່ສຳຄັນ ອັນນຳໄປສູ່ການປັບປຸງທີ່ສຳຄັນ ກ່ຽວກັບມູນຄ່າໃນບັນຊີຂອງຊັບສິນ ແລະ ໜີ້ສິນພາຍໃນປີການເງິນຕໍ່ໄປ. ສຳລັບຊັບສິນ ແລະ ໜີ້ສິນດັ່ງກ່າວ, ຄຳອະທິບາຍຕ້ອງປະກອບດ້ວຍລາຍລະອຽດ ກ່ຽວກັບ:

(ກ) ລັກສະນະເນື້ອໃນ;

(ຂ) ມູນຄ່າໃນບັນຊີ ຂອງລາຍການດັ່ງກ່າວ ໃນທ້າຍຮອບເວລາລາຍງານນັ້ນ.

| ການສົມທຽບກັບ FRS ສຳລັບ ວຫຍ | |
|---|---|
| 8.1 | ວນກ ອາດບໍ່ສ້າງໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ. |

## ໝວດ 9

## ເອກະສານລາຍງານການເງິນລວມກິດຈະການ ແລະ ເອກະສານລາຍງານການເງິນສະເພາະກິດຈະການ

*ໝວດ 9 ບໍ່ຖືກນຳໃຊ້ຕໍ່ ວິສາຫະກິດຂະໜາດນ້ອຍແລະກາງ ເພາະວິສາຫະກິດເຫຼົ່ານັ້ນ ບໍ່ຕ້ອງສ້າງເອກະສານລາຍງານການເງິນລວມກິດຈະການ. ພ້ອມນັ້ນ ນະ�โยบายການບັນຊີ ສຳລັບເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ ໄດ້ຖືກນຳສະເໜີ ໃນໝວດ 14 ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ໝວດ 15 ເງິນລົງທຶນໃນວິສາຫະກິດປະສົມ.*

# ໝວດ 10

# ນະໂຍບາຍການບັນຊີ, ຕົວເລກຄາດຄະເນປະຕິບັດ ແລະ ຂໍ້ຜິດພາດ

## ຂອບເຂດຂອງໝວດນີ້

10.1 ໝວດດັ່ງກ່າວໃຫ້ຄຳແນະນຳ ກ່ຽວກັບການເລືອກໃຊ້ ແລະ ການປະຕິບັດ**ນະໂຍບາຍການບັນຊີ** ທີ່ໄດ້ນຳໃຊ້ໃນການສ້າງ**ເອກະສານລາຍງານການເງິນ.** ນອກນັ້ນ ຍັງກວມເອົາ**ການປ່ຽນແປງຕົວເລກຄາດຄະເນປະຕິບັດທາງບັນຊີ** ແລະ ການກວດແກ້**ຂໍ້ຜິດພາດ** ໃນເອກະສານລາຍງານການເງິນປີຜ່ານມາ.

## ການເລືອກໃຊ້ ແລະ ການປະຕິບັດນະໂຍບາຍການບັນຊີ

10.2 ນະໂຍບາຍການບັນຊີ ແມ່ນຫຼັກການ, ພື້ນຖານ, ຂໍ້ຕົກລົງ, ລະບຽບການ ແລະ ພາກປະຕິບັດສະເພາະ ທີ່ວິສາຫະກິດໃດໜຶ່ງໄດ້ນຳໃຊ້ໃນເວລາສ້າງ ແລະ ສະເໜີເອກະສານລາຍງານການເງິນ.

10.3 ຖ້າວ່າ ມາດຕະຖານສະບັບນີ້ ເວົ້າເຖິງສະເພາະແຕ່ລາຍການເຄື່ອນໄຫວ, ເຫດການອື່ນ, ເງື່ອນໄຂອື່ນໆສະເພາະ, ວິສາຫະກິດຕ້ອງໄດ້ປະຕິບັດມາດຕະຖານສະບັບນີ້.

10.4 ຖ້າວ່າ ມາດຕະຖານສະບັບນີ້ ຫາກບໍ່ນຳໃຊ້ສະເພາະ ລາຍການເຄື່ອນໄຫວ, ເຫດການອື່ນ, ເງື່ອນໄຂອື່ນໆ, ຄະນະບໍລິຫານຂອງວິສາຫະກິດໃດໜຶ່ງຕ້ອງນຳໃຊ້ຄຳວິນິດໄສເພື່ອສ້າງ ແລະ ນຳໃຊ້ນະໂຍບາຍການບັນຊີ ທີ່ພາໃຫ້ໄດ້ຂໍ້ມູນຂ່າວສານທີ່:

(ກ) ມີຄວາມກ່ຽວ**ຂ້ອງກັບ**ຄວາມຕ້ອງການໃນການຕັດສິນບັນຫາທາງດ້ານເສດຖະກິດຂອງຜູ້ນຳໃຊ້, ແລະ

(ຂ) ມີຄວາມໜ້າ**ເຊື່ອຖືໄດ້** ຕໍ່ເອກະສານລາຍງານການເງິນ ທີ່ :

(i) ສະແດງ **ຖານະການເງິນ**, **ຜົນການດຳເນີນງານ ດ້ານການເງິນ** ແລະ **ກະແສເງິນສົດ** ຂອງວິສາຫະກິດ ຢ່າງຖືກຕ້ອງ,

(ii) ສ່ອງແສງເຖິງເນື້ອແທ້ທາງດ້ານເສດຖະກິດ ຂອງລາຍການເຄື່ອນໄຫວ, ເຫດການ ແລະ ເງື່ອນໄຂອື່ນໆ ທີ່ບໍ່ແມ່ນພຽງແຕ່ຮູບການທາງດ້ານກົດໝາຍເທົ່ານັ້ນ,

(iii) ເປັນກາງ, ໝາຍຄວາມວ່າບໍ່ມີການບ່າຍບ່ຽງ,

(iv) ມີຄວາມຮອບຄອບ, ແລະ

(v) ຄົບຖ້ວນ ໃນທຸກດ້ານທີ່ສຳຄັນ.

10.5 ໃນການວິນິດໄສ ຕາມທີ່ໄດ້ອະທິບາຍໃນວັກ 10.4, ຄະນະບໍລິຫານຕ້ອງອ້າງອີງ ແລະ ພິຈາລະນາການບັງຄັບໃຊ້ ຈາກແຫຼ່ງຂໍ້ມູນຂ່າວສານ ຕາມລຳດັບລຸ່ມນີ້:

(ກ) ຂໍ້ກຳນົດ ແລະ ຂໍ້ແນະນຳ ທີ່ສະແດງອອກໃນມາດຕະຖານສະບັບນີ້ ທີ່ລະບຸເຖິງ ບັນຫາທີ່ຄ້າຍຄືກັນ ແລະກ່ຽວຂ້ອງກັນ ; ແລະ

(ຂ) ຄຳນິຍາມ, ເງື່ອນໄຂມາດຕະຖານ**ການຮັບຮູ້ລາຍການບັນຊີ** ແລະ ຄວາມສຳນຶກ ກ່ຽວກັບ **ການຕີມູນຄ່າ**ຊັບສິນ, ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ພ້ອມທັງຫຼັກການລວມທີ່ໄດ້ສະເໜີໃນໝວດ 2 *ຄວາມສຳນຶກ ແລະ ຫຼັກການລວມ.*

10.6 ໃນການວິນິດໄສ ຕາມທີ່ໄດ້ອະທິບາຍໃນວັກ 10.4, ຄະນະບໍລິຫານຍັງຕ້ອງໄດ້ຄຳນຶງເຖິງ ຂໍ້ກຳນົດ ແລະ ຂໍ້ແນະນຳ ກ່ຽວກັບ **IFRS ເຕັມສ່ວນ** ແລະ **IFRS ສຳລັບ ວນກ** ທີ່ໃຊ້ກັບບັນຫາທີ່ຄ້າຍຄືກັນ ແລະ ກ່ຽວຂ້ອງກັນ.

## ຄວາມຖາວອນຂອງນະໂຍບາຍການບັນຊີ

10.7 ວິສາຫະກິດຕ້ອງເລືອກ ແລະ ນຳໃຊ້ນະໂຍບາຍການບັນຊີຂອງຕົນຢ່າງຖາວອນນຳລາຍການເຄື່ອນໄຫວ, ເຫດການອື່ນໆ ແລະ ເງື່ອນໄຂທີ່ຄ້າຍຄືກັນ, ເວັ້ນເສຍແຕ່ວ່າມາດຕະຖານສະບັບນີ້ ກຳນົດ ຫຼື ອະນຸຍາດສະເພາະ ໃຫ້ຈັດປະເພດ ລາຍການ ຊຶ່ງການນຳໃຊ້ວິທີການບັນຊີທີ່ແຕກຕ່າງກັນ ອາດເປັນສິ່ງແທດເໝາະ. ຖ້າວ່າ ມາດຕະຖານສະບັບນີ້ ກຳນົດ ຫຼື ອະນຸຍາດ ໃຫ້ຈັດເປັນປະເພດລາຍການຄືດັ່ງກ່າວນີ້, ຕ້ອງເລືອກເອົານະໂຍບາຍການບັນຊີທີ່ແທດເໝາະ ແລະ ນຳໃຊ້ ຢ່າງຖາວອນ ແລະ ເປັນປະຈຳ ສຳລັບແຕ່ລະປະເພດລາຍການ.

## ການປ່ຽນແປງນະໂຍບາຍການບັນຊີ

10.8 ວິສາຫະກິດຕ້ອງປ່ຽນແປງນະໂຍບາຍການບັນຊີ ກໍຕໍ່ເມື່ອ ຖ້າການປ່ຽນແປງ :

(ກ) ໄດ້ຖືກກຳນົດຈາກການປັບປຸງມາດຕະຖານສະບັບນີ້ເອງ, ຫຼື

(ຂ) ມີຜົນເຮັດໃຫ້ເອກະສານລາຍງານການເງິນສະໜອງຂໍ້ມູນຂ່າວສານທີ່ໜ້າເຊື່ອຖື ແລະ ກ່ຽວຂ້ອງກັບການຕັດສິນໃຈ ຫຼາຍກ່ວາເກົ່າ ໃນສ່ວນທີ່ກ່ຽວກັບຜົນກະທົບຂອງລາຍການເຄື່ອນໄຫວ, ເຫດການອື່ນໆ ຫຼື ເງື່ອນໄຂ ກ່ຽວກັບຖານະ ການເງິນ, ຜົນການດຳເນີນງານດ້ານການເງິນ ຫຼື ກະແສເງິນສົດຂອງວິສາຫະກິດ.

10.9 ກໍລະນີດັ່ງລຸ່ມນີ້ ບໍ່ຖືເປັນການປ່ຽນນະໂຍບາຍການບັນຊີ :

(ກ) ການນຳໃຊ້ນະໂຍບາຍການບັນຊີໃດໜຶ່ງ ສຳລັບລາຍການເຄື່ອນໄຫວ, ເຫດການອື່ນໆ ຫຼື ເງື່ອນໄຂທີ່ແຕກຕ່າງກັນ ທາງດ້ານເນື້ອແທ້ ຈາກສິ່ງທີ່ໄດ້ເກີດຂຶ້ນໃນໄລຍະຜ່ານມາ;

(ຂ) ການນຳໃຊ້ນະໂຍບາຍການບັນຊີໃໝ່ ສຳລັບລາຍການເຄື່ອນໄຫວ, ເຫດການອື່ນໆ ຫຼື ເງື່ອນໄຂທີ່ບໍ່ໄດ້ເກີດຂຶ້ນໃນ ໄລຍະຜ່ານມາ.

(ຄ) ການປ່ຽນແປງວິທີຕົ້ນທຶນ ຖ້າຫາກບໍ່ສາມາດຄິດໄລ່ມູນຄ່າຍຸຕິທຳຢ່າງໜ້າເຊື່ອຖືໄດ້ (ຫຼື ກົງກັນຂ້າມ) ສຳລັບຊັບສິນ ຊຶ່ງມາດຕະຖານສະບັບນີ້ ຈະກຳນົດ ຫຼື ອະນຸຍາດໃຫ້ຕີມູນຄ່າ ຕາມມູນຄ່າຍຸຕິທຳ.

10.10 ຖ້າວ່າ ມາດຕະຖານສະບັບນີ້ ອະນຸຍາດໃຫ້ເລືອກວິທີການລົງບັນຊີ (ລວມທັງພື້ນຖານການຕີມູນຄ່າ) ສຳລັບລາຍການ ເຄື່ອນໄຫວທີ່ໄດ້ກຳນົດໄວ້ ຫຼື ເຫດການ ຫຼື ເງື່ອນໄຂອື່ນໆ ແລະ ຖ້າວິສາຫະກິດໄດ້ປ່ຽນແປງການເລືອກໃຊ້ວິທີການລົງ ບັນຊີຜ່ານມາຂອງຕົນເອງ, ກໍຖືເປັນການປ່ຽນແປງນະໂຍບາຍການບັນຊີ.

### ວິທີການປະຕິບັດໃນການປ່ຽນແປງນະໂຍບາຍການບັນຊີ

10.11 ວິສາຫະກິດຕ້ອງລົງບັນຊີກ່ຽວກັບການປ່ຽນແປງນະໂຍບາຍການບັນຊີດັ່ງລຸ່ມນີ້ :

(ກ) ວິສາຫະກິດຕ້ອງລົງບັນຊີ ການປ່ຽນແປງນະໂຍບາຍການບັນຊີ ທີ່ເປັນຜົນຈາກການປ່ຽນແປງຂໍ້ກຳນົດຂອງມາດ ຕະ ຖານສະບັບນີ້ ຕາມຂໍ້ກຳນົດປະຕິບັດ ທີ່ໄດ້ວາງອອກ ໃນການປັບປຸງດັ່ງກ່າວ; ແລະ

(ຄ) ວິສາຫະກິດຕ້ອງລົງບັນຊີ ການປ່ຽນແປງນະໂຍບາຍການບັນຊີອື່ນທັງໝົດ**ແບບຢ້ອນຫຼັງ** (ເບິ່ງວັກ 10.12).

### ການປະຕິບັດຢ້ອນຫຼັງ

10.12 ເມື່ອມີການປ່ຽນແປງໃນນະໂຍບາຍການບັນຊີ ໂດຍນຳມາປະຕິບັດຢ້ອນຫຼັງ ຕາມວັກ 10.11, ວິສາຫະກິດຕ້ອງໄດ້ນຳໃຊ້ ນະໂຍບາຍການບັນຊີໃໝ່ ຕໍ່ກັບຂໍ້ມູນຂ່າວສານສົມທຽບບ້ວງຮອບເວລາຜ່ານມາ ຈົນເຖິງມື້ທຳອິດທີ່ສາມາດປະຕິບັດໄດ້ ໃຫ້ຄືກັນກັບວ່າໄດ້ນຳໃຊ້ນະໂຍບາຍການບັນຊີໃໝ່ແຕ່ໃດໆມາ. ຖ້າຫາກການຊອກຫາຜົນກະທົບສະເພາະສຳລັບແຕ່ລະປີ ການບັນຊີ ຂອງການປ່ຽນແປງນະໂຍບາຍການບັນຊີທີ່ມີ ຕໍ່ຂໍ້ມູນຂ່າວສານສົມທຽບຂອງໜຶ່ງ ຫຼື ຫຼາຍປີການບັນຊີຜ່ານມາ ເປັນແຕ່ລະປີ **ປະຕິບັດບໍ່ໄດ້**, ວິສາຫະກິດຕ້ອງນຳໃຊ້ນະໂຍບາຍການບັນຊີໃໝ່ຕໍ່ກັບມູນຄ່າໃນບັນຊີຂອງຊັບສິນ ແລະ ໜີ້ ສິນ ໃນປີການບັນຊີຜ່ານມາໄລຍະຕົ້ນ ທີ່ສາມາດມີການປະຕິບັດຢ້ອນຫຼັງໄດ້, ຊຶ່ງອາດເປັນປີການບັນຊີປັດຈຸບັນ, ແລະ ຕ້ອງໄດ້ດຳເນີນການປັບປຸງ ຕໍ່ກັບຍອດເຫຼືອຕົ້ນປີ ຂອງແຕ່ລະອົງປະກອບຂອງທຶນເຈົ້າຂອງ ທີ່ໄດ້ຮັບຜົນກະທົບ ສຳລັບ ປີການບັນຊີດັ່ງກ່າວນັ້ນ.

### ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບການປ່ຽນແປງນະໂຍບາຍການບັນຊີ

10.13 ຖ້າວ່າການປັບປຸງມາດຕະຖານສະບັບນີ້ ມີຜົນກະທົບຕໍ່ປີການບັນຊີປັດຈຸບັນ ຫຼື ປີການບັນຊີຜ່ານມາ ຫຼື ອາດຈະມີຜົນກະທົບຕໍ່ປີການບັນຊີໃນຂ້າງໜ້າ, ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ :

(ກ) ລັກສະນະເນື້ອໃນຂອງການປ່ຽນແປງນະໂຍບາຍການບັນຊີ.

(ຂ) ສຳລັບປີການບັນຊີປັດຈຸບັນ ແລະ ສຳລັບແຕ່ລະປີການບັນຊີຜ່ານມາທີ່ໄດ້ນຳສະເໜີ, ໃນຂອບເຂດທີ່ສາມາດປະຕິບັດໄດ້; ຈຳນວນເງິນປັບປຸງ ສຳລັບແຕ່ລະລາຍການຫຼັກ ໃນເອກະສານລາຍງານການເງິນ ທີ່ໄດ້ຮັບຜົນກະທົບ.

(ຄ) ຈຳນວນເງິນປັບປຸງທີ່ກ່ຽວຂ້ອງກັບປີການບັນຊີຜ່ານມາ ກ່ອນປີການບັນຊີທີ່ຖືກນຳສະເໜີ, ຖ້າຫາກສາມາດປະຕິບັດໄດ້.

(ງ) ຄຳອະທິບາຍ, ຖ້າຫາກການກຳນົດຈຳນວນເງິນທີ່ຕ້ອງເປີດເຜີຍ ບໍ່ສາມາດປະຕິບັດໄດ້ ຕາມຂໍ້ (ຂ) ຫຼື (ຄ) ຂ້າງເທິງ.

ເອກະສານລາຍງານການເງິນຂອງປີການບັນຊີຂ້າງໜ້າ ບໍ່ຈຳເປັນຈະຕ້ອງເປີດເຜີຍຄືນຂໍ້ມູນຂ່າວສານດັ່ງກ່າວ.

10.14 ຖ້າວ່າການປ່ຽນແປງນະໂຍບາຍການບັນຊີ ໂດຍສະໝັກໃຈ ມີຜົນກະທົບຕໍ່ປີການບັນຊີປັດຈຸບັນ ຫຼື ຕໍ່ປີການບັນຊີຜ່ານມາ, ວິສາຫະກິດຕ້ອງເປີດເຜີຍຂໍ້ມູນດັ່ງລຸ່ມນີ້ :

(ກ) ລັກສະນະເນື້ອໃນຂອງການປ່ຽນແປງນະໂຍບາຍການບັນຊີ.

(ຂ) ສາຍເຫດເປັນຫຍັງຈຶ່ງວ່າ ການນຳໃຊ້ນະ�โยบายการบันชีใหม่ ສະໜອງຂໍ້ມູນຂ່າວສານ ທີ່ໜ້າເຊື່ອຖື ແລະ ກ່ຽວຂ້ອງກັບການຕັດສິນໃຈ ຫຼາຍກ່ວາເກົ່າ.

(ຄ) ໃນຂອບເຂດທີ່ປະຕິບັດໄດ້, ຈຳນວນເງິນປັບປຸງສຳລັບແຕ່ລະລາຍການຫຼັກຂອງເອກະສານລາຍງານການເງິນທີ່ພົວພັນ, ທີ່ຖືກແຍກສະແດງເປັນແຕ່ລະລາຍການ :

(i) ສຳລັບປີການບັນຊີປັດຈຸບັນ ;

(ii) ສຳລັບປີການບັນຊີຜ່ານມາ ທີ່ໄດ້ນຳສະເໜີ; ແລະ

(iii) ຕົວເລກສະສົມ ສຳລັບປີການບັນຊີຜ່ານມາ ກ່ອນປີການບັນຊີທີ່ໄດ້ນຳສະເໜີ ;

(ງ) ຄຳອະທິບາຍ, ຖ້າຫາກການກຳນົດຈຳນວນເງິນທີ່ຕ້ອງເປີດເຜີຍ ບໍ່ສາມາດປະຕິບັດໄດ້ ຕາມຂໍ້ (ຄ) ຂ້າງເທິງ.

ເອກະສານລາຍງານການເງິນຂອງປີການບັນຊີຂ້າງໜ້າ ບໍ່ຈຳເປັນເປີດເຜີຍຄືນຂໍ້ມູນຂ່າວສານດັ່ງກ່າວ.

## ການປ່ຽນແປງຕົວເລກຄາດຄະເນປະຕິບັດດ້ານບັນຊີ

10.15 ການປ່ຽນແປງຕົວເລກຄາດຄະເນປະຕິບັດດ້ານບັນຊີ ແມ່ນການປັບປຸງມູນຄ່າໃນບັນຊີຂອງຊັບສິນ ຫຼື ໜີ້ສິນ, ຫຼື ຈຳນວນເງິນການຊົມໃຊ້ຊັບສິນໃດໜຶ່ງ ເປັນຮອບວຽນປົກກະຕິ, ທີ່ເປັນຜົນມາຈາກການປະເມີນຜົນ ກ່ຽວກັບສະຖານະພາບປັດຈຸບັນ ຂອງຊັບສິນ ແລະ ໜີ້ສິນ, ພ້ອມທັງຜົນປະໂຫຍດ ແລະ ພັນທະໃນອະນາຄົດ ທີ່ຄາດຫວັງໄວ້ ຊຶ່ງຕິດພັນກັບຊັບສິນ ແລະ ໜີ້ສິນດັ່ງກ່າວ. ການປ່ຽນແປງຕົວເລກຄາດຄະເນປະຕິບັດດ້ານບັນຊີ ເປັນຜົນມາຈາກການໄດ້ຮັບຂໍ້ມູນຂ່າວສານໃໝ່ ຫຼື ການພັດທະນາສິ່ງໃໝ່ ແລະ, ສະນັ້ນ, ຈຶ່ງບໍ່ແມ່ນການກວດແກ້ຂໍ້ຜິດພາດ. ຖ້າຫາກມີຄວາມຫຍຸ້ງຍາກໃນການຈຳແນກວ່າເປັນ ການປ່ຽນແປງນະ�โยบายการบันชี จากการปรับเปลี่ยนตัวเลขการคาดคะเนปะติบัดด้านบันชี, ໃຫ້ຖືເອົາການປ່ຽນແປງດັ່ງກ່າວ ເປັນການປ່ຽນແປງຕົວເລກຄາດຄະເນປະຕິບັດດ້ານບັນຊີ.

10.16 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ຜົນກະທົບຂອງການປ່ຽນແປງຕົວເລກຄາດຄະເນປະຕິບັດທາງບັນຊີ, ທີ່ບໍ່ແມ່ນການປ່ຽນແປງທີ່ຕ້ອງໄດ້ປະຕິບັດຕາມວັກ 10.17, **ໄປໜ້າ** ໂດຍເອົາເຂົ້າໃນກຳໄລ ຫຼື ຂາດທຶນ ໃນ :

(ກ) ປີການບັນຊີທີ່ມີການປ່ຽນແປງ, ຖ້າວ່າການປ່ຽນແປງມີຜົນກະທົບພຽງແຕ່ຕໍ່ປີການບັນຊີດັ່ງກ່າວເທົ່ານັ້ນ, ຫຼື

(ຂ) ປີການບັນຊີທີ່ມີການປ່ຽນແປງ ແລະ ປີການບັນຊີຂ້າງໜ້າ, ຖ້າວ່າການປ່ຽນແປງດັ່ງກ່າວຫາກມີຜົນກະທົບຕໍ່ທັງສອງປີການບັນຊີ.

10.17 ໃນຂອບເຂດທີ່ວ່າ ການປ່ຽນແປງຕົວເລກຄາດຄະເນປະຕິບັດດ້ານບັນຊີ ພາໃຫ້ເກີດມີສ່ວນປ່ຽນແປງຂອງຊັບສິນ ແລະ ໜີ້ສິນ ຫຼື ພົວພັນກັບລາຍການໃດໜຶ່ງຂອງທຶນເຈົ້າຂອງ, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ລາຍການດັ່ງກ່າວຜ່ານການປັບປຸງມູນຄ່າໃນບັນຊີຂອງລາຍການຊັບສິນ, ໜີ້ສິນ ຫຼື ທຶນເຈົ້າຂອງທີ່ພົວພັນ ໃນປີການບັນຊີທີ່ມີການປ່ຽນແປງ.

### ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບ ການປ່ຽນແປງຕົວເລກຄາດຄະເນປະຕິບັດ

10.18 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບລັກສະນະເນື້ອໃນຂອງທຸກການປ່ຽນແປງຕົວເລກຄາດຄະເນປະຕິບັດດ້ານບັນຊີ ແລະ ຜົນກະທົບຂອງການປ່ຽນແປງຊັບສິນ, ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍໃນປີການບັນຊີທີ່ກ່ຽວຂ້ອງ. ຖ້າວ່າສາມາດກຳນົດຜົນກະທົບຂອງການປ່ຽນແປງຕົວເລກຄາດຄະເນປະຕິບັດ ໃນໜຶ່ງຫຼື ຫຼາຍປີການບັນຊີໃນອະນາຄົດໄດ້, ວິສາຫະກິດຕ້ອງເປີດເຜີຍຕົວເລກຄາດຄະເນປະຕິບັດດັ່ງກ່າວ.

## ການກວດແກ້ຂໍ້ຜິດພາດບ້ວງປີກ່ອນ

10.19 ຂໍ້ຜິດພາດບ້ວງປີກ່ອນ ຄືການຫຼົງລືມ ຫຼື ການລາຍງານຜິດພາດໃນເອກະສານລາຍງານການເງິນຂອງວິສາຫະກິດ ທີ່ພົວພັນກັບ ໜຶ່ງ ຫຼື ຫຼາຍປີການບັນຊີຜ່ານມາ ອັນເນື່ອງມາຈາກການບໍ່ນຳໃຊ້ ຫຼືການນຳໃຊ້ບໍ່ຖືກຕ້ອງ ກ່ຽວກັບຂໍ້ມູນຂ່າວສານທີ່ໜ້າເຊື່ອຖື:

(ກ) ທີ່ມີໄວ້ໃນເວລາເອກະສານລາຍງານການເງິນ ຂອງປີການບັນຊີເຫຼົ່ານັ້ນ ໄດ້ຮັບອະນຸຍາດໃຫ້ຈັດພິມ, ແລະ

(ຂ) ຊຶ່ງສາມາດຄາດຫວັງໄວ້ ວ່າໄດ້ຮັບມາ ຢ່າງສົມເຫດສົມຜົນ ແລະ ໄດ້ມີການຄຳນຶງເຖິງ ເພື່ອສ້າງ ແລະ ສະເໜີ ເອກະສານລາຍງານການເງິນດັ່ງກ່າວ.

10.20 ໃນຂໍ້ຜິດພາດເຫຼົ່ານີ້ ລວມມີຜົນກະທົບຂອງຂໍ້ຜິດພາດໃນການຄິດໄລ່, ຂໍ້ຜິດພາດໃນການປະຕິບັດນະ�โยบายການບັນຊີ, ການປະໝາດ ຫຼື ການຕີຄວາມໝາຍຄວາມເປັນຈິງຜິດພາດ ແລະ ການສໍ້ໂກງ.

10.21 ໃນກໍລະນີທີ່ເປັນໄປໄດ້, ວິສາຫະກິດຕ້ອງດັດແກ້ຍ້ອນຫຼັງຂໍ້ຜິດພາດທີ່ສຳຄັນໂດຍທຽບຖານຂອງປີການບັນຊີຜ່ານມາ ໃນເອກະສານລາຍງານການເງິນສະບັບທຳອິດ ຊຶ່ງໄດ້ຮັບອະນຸຍາດໃຫ້ຈັດພິມພາຍຫຼັງຄົ້ນເຫັນຂໍ້ຜິດພາດ ໂດຍ:

(ກ) ໃຫ້ປັບປຸງຄືນໃໝ່ ຈຳນວນເງິນສົມທຽບຂອງປີການບັນຊີຜ່ານມາທີ່ໄດ້ສະເໜີ ໃຫ້ຄືກັນກັບໄດ້ມີການກວດແກ້ຂໍ້ຜິດພາດໃນປີການບັນຊີ ທີ່ໄດ້ເກີດຂຶ້ນ, ຫຼື

(ຂ) ຖ້າວ່າຂໍ້ຜິດພາດໄດ້ເກີດຂຶ້ນກ່ອນປີການບັນຊີຜ່ານມາທີ່ໄດ້ສະເໜີ, ຕ້ອງປັບປຸງຍອດເຫຼືອຕົ້ນປີຂອງຊັບສິນ, ໜີ້ສິນ ແລະ ທຶນເຈົ້າຂອງ ຂອງກ່ອນປີການບັນຊີຜ່ານມາທີ່ໄດ້ນຳສະເໜີ.

10.22 ຖ້າວ່າບໍ່ສາມາດກຳນົດຜົນກະທົບຂອງຂໍ້ຜິດພາດໃນປີການບັນຊີສະເພາະໃດໜຶ່ງໄດ້ ຕໍ່ຂໍ້ມູນຂ່າວສານສົມທຽບທີ່ໄດ້ສະເໜີໃນໜຶ່ງ ຫຼື ຫຼາຍປີການບັນຊີຜ່ານມາ, ວິສາຫະກິດຕ້ອງປັບປຸງຄືນໃໝ່ຍອດເຫຼືອຕົ້ນປີຂອງຊັບສິນ, ໜີ້ສິນ ແລະ ທຶນເຈົ້າຂອງ ຂອງປີການບັນຊີທຳອິດທີ່ໄດ້ສະເໜີ ຊຶ່ງສາມາດມີການປັບປຸງຄືນໃໝ່ຍ້ອນຫຼັງໄດ້ (ຊຶ່ງອາດແມ່ນປີການບັນຊີປັດຈຸບັນ).

### ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບຂໍ້ຜິດພາດຂອງປີການບັນຊີຜ່ານມາ

10.23 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ ກ່ຽວກັບຂໍ້ຜິດພາດຂອງປີການບັນຊີຜ່ານມາ :

(ກ) ລັກສະນະເນື້ອໃນຂອງຂໍ້ຜິດພາດໃນປີການບັນຊີຜ່ານມາ ;

(ຂ) ສຳລັບແຕ່ລະປີການບັນຊີຜ່ານມາ ທີ່ໄດ້ນຳສະເໜີ, ໃນກໍລະນີທີ່ປະຕິບັດໄດ້, ຈຳນວນເງິນກວດແກ້ ສຳລັບແຕ່ລະລາຍການຫຼັກໃນເອກະສານລາຍງານການເງິນ ທີ່ໄດ້ຮັບຜົນກະທົບ ;

(ຄ) ໃນກໍລະນີທີ່ປະຕິບັດໄດ້, ຈຳນວນເງິນກວດແກ້ໃນຕົ້ນປີການບັນຊີຜ່ານມາ ທີ່ໄດ້ນຳສະເໜີຄັ້ງທຳອິດ ;

(ງ) ຄຳອະທິບາຍ ຖ້າຫາກບໍ່ສາມາດກຳນົດຈຳນວນເງິນທີ່ຕ້ອງເປີດເຜີຍຕາມຂໍ້ (ຂ) ຫຼື (ຄ) ຂ້າງເທິງ.

ເອກະສານລາຍງານການເງິນ ຂອງປີການບັນຊີຂ້າງໜ້າ ບໍ່ຈຳເປັນຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງກ່າວຄືນໃໝ່.

| ການສົມທຽບກັບ FRS ສຳລັບ ວທຍ |
| --- |
| ມາດຕະຖານ FRS ສຳລັບ ວນກ ຄ້າຍຄືກັນກັບ ມາດຕະຖານ FRS ສຳລັບ ວທຍ. |

# ໝວດ 11

# ເຄື່ອງມືການເງິນພື້ນຖານ

***ໝວດນີ້ ພິຈາລະນາເຖິງເຫດການດ້ານເສດຖະກິດ ຊຶ່ງຍັງບໍ່ທັນມີ ໃນ ສປປ ລາວ ແຕ່ຄາດວ່າ ຈະມີໃນປີ ຂ້າງໜ້າ.***

## ຂອບເຂດຂອງໝວດ 11

11.1 ໝວດນີ້ ກຳນົດຫຼັກການໃນການຮັບຮູ້ລາຍການບັນຊີ, ການຕັດລາຍການບັນຊີ, ການຕີມູນຄ່າ ແລະ ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບ **ເຄື່ອງມືການເງິນ** (**ຊັບສິນການເງິນ** ແລະ **ໜີ້ສິນການເງິນ**). ໝວດ 11 ນຳໃຊ້ສຳລັບເຄື່ອງມືການເງິນພື້ນຖານ ແລະ ກ່ຽວຂ້ອງກັບທຸກວິສາຫະກິດ. ຖ້າວ່າວິສາຫະກິດໃດໜຶ່ງ ມີສັນຍາກ່ຽວກັບເຄື່ອງມື ແລະ ລາຍການເຄື່ອນໄຫວການເງິນ ຂອງວັກ 12.3 ແລະ 12.4 ຂອງ FRS ສຳລັບ ວຫຍ, ວິສາຫະກິດດັ່ງກ່າວ ຖືເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດ FRS ສຳລັບ ວຫຍ ຢ່າງເຕັມສ່ວນ.

## ບົດນຳຂອງ ໝວດນີ້

11.3 ເຄື່ອງມືການເງິນ ແມ່ນສັນຍາທີ່ພາໃຫ້ ຊັບສິນການເງິນ ຂອງວິສາຫະກິດໃດໜຶ່ງ ແລະ ໜີ້ສິນການເງິນ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງ ຂອງວິສາຫະກິດໜຶ່ງອີກ ເພີ້ມຂຶ້ນ.

11.4 ໝວດນີ້ ກຳນົດວິທີຕີ້ນທຶນ ສຳລັບເຄື່ອງມືການເງິນພື້ນຖານທັງໝົດ ເວັ້ນເສຍສຳລັບເງິນລົງທຶນໃສ່ຮຸ້ນບູລິມະສິດທີ່ປ່ຽນເປັນຮຸ້ນສາມັນບໍ່ໄດ້ ແລະ ທີ່ບໍ່ມີສິດຂາຍຄືນໄດ້ ແລະ ຮຸ້ນສາມັນທີ່ບໍ່ມີສິດຂາຍຄືນໄດ້ ຊຶ່ງມີ **ການຊື້ຂາຍຕໍ່ສາທາລະນະຊົນ*.***

11.5 ເຄື່ອງມືການເງິນພື້ນຖານທີ່ຢູ່ພາຍໃຕ້ຂອບເຂດຂອງໝວດ 11 ແມ່ນເຄື່ອງມືການເງິນ ທີ່ຖືກຕ້ອງຕາມເງື່ອນໄຂຂອງວັກ 11.8. ຕົວຢ່າງ ຂອງເຄື່ອງມືການເງິນ ທີ່ຕາມປົກກະຕິ ຖືກຕ້ອງຕາມເງື່ອນໄຂເຫຼົ່ານັ້ນ ມີຄືດັ່ງລຸ່ມນີ້:

(ກ) ເງິນສົດ.

(ຂ) ເງິນຝາກກະແສລາຍວັນ ແລະ ເງິນຝາກມີກຳນົດ ຖ້າວິສາຫະກິດເປັນຜູ້ຝາກ, ຕົວຢ່າງ ບັນຊີເງິນຝາກທະນາຄານ.

(ຄ) ໃບຍັ້ງຢືນການຄ້າ ແລະ ໃບຍັ້ງຢືນເງິນສົດ ໃນກຳມີ.

(ງ) ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງ, ໃບຍັ້ງຢືນການຄ້າຕ້ອງຮັບ ແລະ ຕ້ອງຈ່າຍ, ເງິນໃຫ້ກູ້ຢືມ ແລະ ເງິນກູ້ຢືມ.

(ຈ) ພັນທະບັດ ແລະ ເຄື່ອງມືການເງິນປະເພດໜີ້ ທີ່ຄ້າຍຄືກັນ.

(ສ) ເງິນລົງທຶນໃສ່ຮຸ້ນບູລິມະສິດ ທີ່ປ່ຽນເປັນຮຸ້ນສາມັນບໍ່ໄດ້ ແລະ ໃສ່ຮຸ້ນສາມັນ ແລະ ຮຸ້ນບູລິມະສຸດ ທີ່ບໍ່ມີສິດຂາຍຄືນໄດ້.

(ຊ) ຂໍ້ຜູກພັນທີ່ຈະໄດ້ຮັບເງິນກູ້ຢືມ ຖ້າຫາກຂໍ້ຜູກພັນນັ້ນບໍ່ສາມາດຊຳລະເປັນເງິນສົດໄດ້.

11.6 ຕົວຢ່າງເຄື່ອງມືການເງິນ ທີ່ຕາມປົກກະຕິບໍ່ຖືກຕ້ອງຕາມເງື່ອນໄຂຂອງວັກ 11.8 ແລະສະນັ້ນ ຈຶ່ງຢູ່ພາຍໃຕ້ຂອບເຂດຂອງ ໝວດ 12 ຂອງ ***FRS ສຳລັບ ວຫຍ***, ລວມມີ:

(ກ) ຫຼັກຊັບທີ່ມີຊັບສິນຄ້ຳປະກັນ ເຊັ່ນພັນທະບັດຊວດຈຳຄ້ຳປະກັນ, ສັນຍາຊື້ຄືນ ແລະ ໜີ້ຕ້ອງຮັບທີ່ໄດ້ຫັນປ່ຽນເປັນຫຼັກຊັບ.

(ຂ) ສິດທິໃນການຊື້-ຂາຍຫຼັກຊັບ, ສິດທິ, ສິດທິໃນການຊື້-ຂາຍຮຸ້ນ, ສັນຍາຊື້ຂາຍລ່ວງໜ້າ ແລະ ສັນຍາຊື້ຂາຍເງິນຕາຕ່າງປະເທດລ່ວງໜ້າ, ພ້ອມທັງ ສັນຍາແລກປ່ຽນອັດຕາດອກເບ້ຍ ທີ່ສາມາດຊຳລະເປັນເງິນສົດ ຫຼື ຜ່ານການແລກປ່ຽນກັບເຄື່ອງມືການເງິນອື່ນໆ.

(ຄ) ເຄື່ອງມືການເງິນທີ່ໄດ້ບັນລຸຕາມເງື່ອນໄຂ ແລະ ຖືເປັນເຄື່ອງມືຄຸ້ມກັນຄວາມສ່ຽງຕາມເງື່ອນໄຂຂອງໝວດ 12 FRS ສຳລັບ ວຫຍ.

(ງ) ຂໍ້ຜູກພັນທີ່ຈະອະນຸມັດເງິນກູ້ໃຫ້ແກ່ວິສາຫະກິດອື່ນ.

(ຈ) ຂໍ້ຜູກພັນຕ້ອງຮັບເງິນກູ້ ຖ້າຂໍ້ຜູກພັນຫາກບໍ່ສາມາດຊຳລະເປັນເງິນສົດໄດ້.

ຖ້າວິສາຫະກິດໃດໜຶ່ງ ມີສັນຍາ ກ່ຽວກັບເຄື່ອງມື ແລະ ລາຍການເຄື່ອນໄຫວ ການເງິນ ຊຶ່ງບໍ່ສອດຄ່ອງກັບຂໍ້ກຳນົດ ຂອງ ວັກ 11.8, ວິສາຫະກິດນັ້ນ ຖືເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດ *FRS ສຳລັບ ວຫຍ* ຢ່າງເຕັມສ່ວນ.

## ເຄື່ອງມືການເງິນພື້ນຖານ

11.7 ໝວດນີ້ ນຳໃຊ້ສຳລັບທຸກເຄື່ອງມືການເງິນ ທີ່ຖືກຕ້ອງຕາມເງື່ອນໄຂຂອງວັກ 11.8 ເວັ້ນເສຍລາຍການດັ່ງລຸ່ມນີ້ :

(ກ) ເງິນລົງທຶນໃນ**ວິສາຫະກິດຂາຮຸ້ນ** ແລະ **ວິສາຫະກິດປະສົມ** ທີ່ໄດ້ລົງບັນຊີຕາມໝວດ 14 *ເງິນລົງທຶນໃນວິສາຫະກິດ ຂາຮຸ້ນ* ຫຼື ໝວດ 15 *ເງິນລົງທຶນໃນວິສາຫະກິດປະສົມ.*

(ຂ) ເຄື່ອງມືການເງິນ ທີ່ຖືກຕາມຄຳນິຍາມ ກ່ຽວກັບທຶນເຈົ້າຂອງ ຂອງວິສາຫະກິດໃດໜຶ່ງ (ເບິ່ງໝວດ 22 *ໜີ້ສິນ ແລະ ທຶນເຈົ້າຂອງ* ແລະ ໝວດ 26 *ການຊຳລະຕາມຮຸ້ນ*).

(ງ) ສິດ ແລະ ພັນທະຂອງນາຍຈ້າງ ພາຍໃຕ້ແຜນຄິດໄລ່ຜົນປະໂຫຍດພະນັກງານ ຊຶ່ງຕ້ອງປະຕິບັດຕາມໝວດ 28 *ຜົນ ປະໂຫຍດຂອງພະນັກງານ.*

11.8 ວິສາຫະກິດຕ້ອງລົງບັນຊີເຄື່ອງມືການເງິນດັ່ງລຸ່ມນີ້ ເປັນເຄື່ອງມືການເງິນພື້ນຖານ ບົນພື້ນຖານໝວດນີ້:

(ກ) ເງິນສົດ.

(ຂ) ເຄື່ອງມືການເງິນປະເພດໜີ້ (ເຊັ່ນ ໜີ້ຕ້ອງຮັບ, ໜີ້ຕ້ອງສົ່ງ, ໃບຢັ້ງຢືນການຄ້າຕ້ອງຮັບ ຫຼື ຕ້ອງສົ່ງ, ເງິນໃຫ້ກູ້ຢືມ ຕ້ອງຮັບ ຫຼື ເງິນກູ້ຢືມຕ້ອງສົ່ງ) ທີ່ກົງກັບເງື່ອນໄຂຂອງວັກ 11.9.

(ຄ) ຂໍ້ຜູກພັນທີ່ຈະໄດ້ຮັບເງິນກູ້ຢືມ ຊຶ່ງ :

(i) ບໍ່ສາມາດຈະຊຳລະຕາມຍອດເຫຼືອສຸດທິເປັນເງິນສົດໄດ້, ແລະ

(ii) ເມື່ອຂໍ້ຜູກພັນຖືກປະຕິບັດແລ້ວ, ຄາດວ່າຈະຖືກຕ້ອງຕາມຂໍ້ກຳນົດຂອງວັກ 11.9.

(ງ) ເງິນລົງທຶນໃສ່ຮຸ້ນບູລິມະສິດ ທີ່ປ່ຽນເປັນຮຸ້ນສາມັນບໍ່ໄດ້ ແລະ ຮຸ້ນສາມັນ ຫຼື ຮຸ້ນບູລິມະສິດທີ່ບໍ່ມີສິດຂາຍຄືນໄດ້.

11.9 ເຄື່ອງມືການເງິນປະເພດໜີ້ ທີ່ຖືກຕ້ອງຕາມທຸກເງື່ອນໄຂ ແຕ່ຂໍ້ (ກ) ຫາ (ງ) ຂ້າງລຸ່ມນີ້ ຕ້ອງລົງບັນຊີໃຫ້ຖືກຕ້ອງຕາມ ໝວດນີ້:

(ກ) ຜົນຕອບແທນຄືນໃຫ້ຜູ້ຖືເຄື່ອງມືໜີ້ ເປັນ

(i) ຈຳນວນເງິນຄົງທີ່ ;

(ii) ອັດຕາຜົນຕອບແທນຄົງທີ່ ບົນພື້ນຖານອາຍຸການໃຊ້ເຄື່ອງມືການເງິນນັ້ນ ;

(iii) ຜົນຕອບແທນຜັນແປ, ຕະຫຼອດໄລຍະອາຍຸການໃຊ້ເຄື່ອງມືການເງິນນັ້ນ, ເທົ່າກັບອັດຕາດອກເບ້ຍອ້າງອີງ ອັນດຽວ ຫຼື ອັດຕາດອກເບ້ຍທີ່ສັງເກດໄດ້ (ເຊັ່ນ LIBOR) ; ຫຼື

(iv) ການປະສົມອັດຕາຄົງທີ່ດັ່ງກ່າວ ແລະ ອັດຕາຜັນແປ (ເຊັ່ນ LIBOR ບວກ 200 ຈຸດພື້ນຖານ), ໃນເງື່ອນໄຂ ທີ່ວ່າ ທັງສອງອັດຕາຄົງທີ່ ແລະ ຜັນແປ ມີຜົນບວກໝົດ (ຕົວຢ່າງ ການແລກປ່ຽນອັດຕາດອກເບ້ຍທີ່ມີອັດຕາ ຄົງທີ່ມີຜົນບວກ ແລະ ອັດຕາຜັນແປທີ່ມີຜົນລົບ ຈະບໍ່ຖືກຕ້ອງຕາມເງື່ອນໄຂມາດຕະຖານດັ່ງກ່າວ). ສຳລັບ ຜົນຕອບແທນຕາມອັດຕາດອກເບ້ຍຄົງທີ່ ແລະ ຜັນແປ, ດອກເບ້ຍຄິດໄລ່ໂດຍເອົາອັດຕາໃນປີ ຄູນໃຫ້ເງິນ ຕົ້ນທຶນທີ່ຍັງຄ້າງຊຳລະໃນປີ.

(ຂ) ບໍ່ມີຂໍ້ກຳນົດໃດໆຕາມສັນຍາທີ່ມີເງື່ອນໄຂ ສາມາດເຮັດໃຫ້ຜູ້ຖືເຄື່ອງມືປະເພດໜີ້ ສູນເສຍມູນຄ່າເງິນຕົ້ນທຶນ ຫຼື

ດອກເບ້ຍໃນປີ ຫຼື ປີຜ່ານມາ. ຄວາມເປັນຈິງທີ່ວ່າເຄື່ອງມືການເງິນປະເພດໜີ້ໃດໜຶ່ງ ຢູ່ພາຍໃຕ້ເຄື່ອງມືການເງິນປະເພດໜີ້ອື່ນໆ ບໍ່ເປັນຕົວຢ່າງຂອງຂໍ້ກຳນົດຕາມສັນຍາດັ່ງກ່າວ.

(ຄ) ຂໍ້ກຳນົດຕາມສັນຍາ ທີ່ອະນຸຍາດໃຫ້ຜູ້ອອກເຄື່ອງມືໜີ້ (ຜູ້ກູ້ຢືມ) ທົດແທນຄືນລ່ວງໜ້າເຄື່ອງມືການເງິນປະເພດໜີ້ ຫຼື ທີ່ອະນຸຍາດໃຫ້ຜູ້ຖືເຄື່ອງມືໜີ້ (ຜູ້ໃຫ້ກູ້ຢືມ) ສົ່ງຄືນເຄື່ອງມືໜີ້ໃຫ້ຜູ້ອອກເຄື່ອງມືໜີ້ ກ່ອນກຳນົດເວລາ ບໍ່ອາດເກີດຂຶ້ນໄດ້ກັບເຫດການໃນອະນາຄົດ.

(ງ) ບໍ່ມີຂໍ້ກຳນົດໃດໆ ກ່ຽວກັບຜົນຕອບແທນຕາມເງື່ອນໄຂ ຫຼື ເງິນທົດແທນຕາມເງື່ອນໄຂ ຍົກເວັ້ນຜົນຕອບແທນຕາມອັດຕາຜັນແປທີ່ໄດ້ຍົກຂຶ້ນໃນ ຂໍ້ (ກ) ແລະ ຂໍ້ກຳນົດກ່ຽວກັບລາຍຈ່າຍໆລ່ວງໜ້າທີ່ໄດ້ສະເໜີໃນຂໍ້ (ຄ).

11.10 ຕົວຢ່າງເຄື່ອງມືການເງິນ ຊຶ່ງຕາມປົກກະຕິຖືກຕ້ອງຕາມເງື່ອນໄຂຂອງວັກ 11.9 ມີຄື :

(ກ) ໜີ້ຕ້ອງຮັບ ແລະ ຕ້ອງຈ່າຍລູກຄ້າ, ໃບຢັ້ງຢືນການຄ້າຕ້ອງຮັບ ແລະ ຕ້ອງຈ່າຍ, ພ້ອມທັງເງິນໃຫ້ກູ້ຢືມ ປ່ອຍໂດຍທະນາຄານ ຫຼື ຈາກພາກສ່ວນທີ່ສາມ.

(ຂ) ໜີ້ຕ້ອງສົ່ງໃຫ້ຜູ້ສະໜອງເປັນເງິນຕາຕ່າງປະເທດ. ເຖິງຢ່າງໃດກໍດີ, ສ່ວນຜິດດ່ຽງໜີ້ຕ້ອງສົ່ງໃຫ້ຜູ້ສະໜອງໃດໜຶ່ງ ເນື່ອງຈາກການປ່ຽນແປງອັດຕາແລກປ່ຽນ ຖືກຮັບຮູ້ລາຍການບັນຊີເປັນກຳໄລ ຫຼື ຂາດທຶນ ດັ່ງທີ່ກຳນົດໄວ້ໃນວັກ 30.10.

(ຄ) ເງິນໃຫ້ກູ້ຢືມແກ່ ຫຼື ເງິນກູ້ຢືມນຳ ບໍລິສັດໃນກຸ່ມ ຫຼື ວິສາຫະກິດຂາຮຸ້ນ ທີ່ຕ້ອງຈ່າຍເມື່ອທວງຖາມ.

(ງ) ເຄື່ອງມືການເງິນປະເພດໜີ້ ທີ່ຈະກາຍເປັນໜີ້ຕ້ອງຮັບໂດຍທັນທີ ຖ້າຜູ້ອອກເຄື່ອງມືຜິດສັນຍາຊຳລະຄ່າດອກເບ້ຍ ຫຼື ເງິນຕົ້ນທຶນກູ້ຢືມ (ຂໍ້ກຳນົດດັ່ງກ່າວ ບໍ່ຂັດແຍ່ງກັບເງື່ອນໄຂຂອງວັກ 11.9).

11.11 ຕົວຢ່າງເຄື່ອງມືການເງິນທີ່ບໍ່ຖືກຕ້ອງ ຕາມເງື່ອນໄຂຂອງວັກ 11.9 (ແລະ ຢູ່ໃນຂອບເຂດຂອງ *FRS ສຳລັບ ວທຍ* - ໝວດ 12) ລວມມີ :

(ກ) ເງິນລົງທຶນ ໃສ່ເຄື່ອງມືການເງິນປະເພດທຶນເຈົ້າຂອງ ໃນວິສາຫະກິດໜຶ່ງອີກ ທີ່ບໍ່ແມ່ນຮຸ້ນບູລິມະສິດ ທີ່ປ່ຽນເປັນຮຸ້ນສາມັນບໍ່ໄດ້ ແລະ ຮຸ້ນສາມັນ ແລະ ຮຸ້ນບູລິມະສິດທີ່ບໍ່ມີສິດຂາຍຄືນໄດ້ (ເບິ່ງ ວັກ 11.8 (ງ)).

(ຂ) ການແລກປ່ຽນອັດຕາດອກເບ້ຍ ທີ່ສ້າງກະແສເງິນສົດ ທີ່ເປັນຜົນບວກ ຫຼື ທີ່ເປັນຜົນລົບ ຫຼື ຂໍ້ຜູກພັນລ່ວງໜ້າໃນການຊື້ສິນຄ້າ ຫຼື ເຄື່ອງມືການເງິນ ທີ່ສາມາດຊຳລະເປັນເງິນສົດໄດ້ ແລະ, ໃນເວລາຊຳລະ, ອາດຈະສ້າງກະແສເງິນສົດທີ່ມີຜົນບວກ ຫຼື ທີ່ມີຜົນລົບ, ຍ້ອນວ່າການແລກປ່ຽນ ຫຼື ຂໍ້ຜູກພັນລ່ວງໜ້າດັ່ງກ່າວ ບໍ່ຖືກຕ້ອງຕາມເງື່ອນໄຂຂອງວັກ 11.9 (ກ).

(ຄ) ສິດທິຊື້-ຂາຍຫຼັກຊັບ ແລະ ສັນຍາຊື້ຂາຍເງິນຕາຕ່າງປະເທດລ່ວງໜ້າ, ຍ້ອນວ່າຜົນຕອບແທນສຳລັບຜູ້ຖືຫຼັກຊັບ ບໍ່ຄົງທີ່ ແລະ ບໍ່ຖືກຕ້ອງຕາມເງື່ອນໄຂຂອງ ວັກ 11.9 (ກ).

(ງ) ເງິນລົງທຶນໃສ່ເຄື່ອງມືໜີ້ທີ່ແລກປ່ຽນເປັນຮຸ້ນໄດ້, ຍ້ອນວ່າຜົນຕອບແທນຕໍ່ຜູ້ຖືເຄື່ອງມືໜີ້ ສາມາດຜັນແປຕາມລາຄາຮຸ້ນທຶນເຈົ້າຂອງຂອງຜູ້ອອກຮຸ້ນ ຫຼາຍກວ່າການຜັນແປຕາມອັດຕາດອກເບ້ຍໃນຕະຫຼາດເທົ່ານັ້ນ.

(ຈ) ເງິນໃຫ້ກູ້ຢືມຕ້ອງຮັບຈາກພາກສ່ວນທີ່ສາມ ທີ່ໃຫ້ສິດ ຫຼື ພັນທະແກ່ພາກສ່ວນທີ່ສາມໃນການຊຳລະລ່ວງໜ້າ ຖ້າວ່າຂໍ້ກຳນົດທາງບັນຊີ ຫຼື ດ້ານສ່ວຍສາອາກອນ ທີ່ບັງຄັບໃຊ້ມີການປ່ຽນແປງ, ເນື່ອງຈາກວ່າເງິນໃຫ້ກູ້ຢືມດັ່ງກ່າວ ບໍ່ຖືກຕ້ອງຕາມເງື່ອນໄຂຂອງວັກ 11.9 (ຄ).

ຖ້າວິສາຫະກິດໃດໜຶ່ງ ມີສັນຍາ ກ່ຽວກັບເຄື່ອງມື ແລະ ລາຍການເຄື່ອນໄຫວການເງິນ ຊຶ່ງບໍ່ສອດຄ່ອງກັບຂໍ້ກຳນົດ ຂອງ ວັກ 11.9, ວິສາຫະກິດນັ້ນ ຖືເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດ *FRS ສຳລັບ ວທຍ* ຢ່າງເຕັມສ່ວນ.

## ການຮັບຮູ້ລາຍການບັນຊີເບື້ອງຕົ້ນ ກ່ຽວກັບຊັບສິນ ແລະ ໜີ້ສິນ ການເງິນ

11.12 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີຊັບສິນການເງິນ ຫຼື ໜີ້ສິນການເງິນ ພຽງແຕ່ໃນກໍລະນີທີ່ວິສາຫະກິດໄດ້ກາຍເປັນຜູ້ມີສ່ວນຮ່ວມໃນການປະຕິບັດຂໍ້ກຳນົດຕາມສັນຍາກ່ຽວກັບເຄື່ອງມືນັ້ນ ເທົ່ານັ້ນ.

## ການຕີມູນຄ່າເບື້ອງຕົ້ນ

11.13 ເວລາຮັບຮູ້ລາຍການບັນຊີໃນເບື້ອງຕົ້ນ ກ່ຽວກັບຊັບສິນການເງິນ ຫຼື ໜີ້ສິນການເງິນ, ວິສາຫະກິດໃດໜຶ່ງຕ້ອງຕີມູນຄ່າ ລາຍການດັ່ງກ່າວ ຕາມລາຄາລາຍການເຄື່ອນໄຫວ (ລວມທັງຄ່າດຳເນີນລາຍການ) ເຖິງວ່າ ຕາມຕົວຈິງ ສັນຍາປະກອບ ເປັນລາຍການເຄື່ອນໄຫວປະກອບທຶນ ກໍຕາມ.

**ຕົວຢ່າງ – ຊັບສິນການເງິນ**

1. ສຳລັບເງິນໃຫ້ກູ້ຢືມໄລຍະຍາວທີ່ປ່ອຍໃຫ້ວິສາຫະກິດໜຶ່ງອີກ, ໜີ້ຕ້ອງຮັບຖືກຮັບຮູ້ລາຍການບັນຊີ ຕາມຈຳນວນ ເງິນສົດຕ້ອງຮັບ ຈາກວິສາຫະກິດດັ່ງກ່າວນັ້ນ.
2. ສຳລັບສິນຄ້າທີ່ໄດ້ຂາຍໃຫ້ລູກຄ້າ, ໜີ້ຕ້ອງຮັບຖືກຮັບຮູ້ລາຍການບັນຊີຕາມຈຳນວນເງິນສົດຕ້ອງຮັບຈາກວິສາຫະ ກິດດັ່ງກ່າວໂດຍບໍ່ຕີມູນຄ່າເປັນມູນຄ່າປັດຈຸບັນ, ຊຶ່ງຕາມປົກກະຕິ ແມ່ນລາຄາທີ່ອອກໃນໃບເກັບເງິນ.
3. ສຳລັບສິນຄ້າທີ່ຂາຍໃຫ້ລູກຄ້າຕິດໜີ້ສອງປີ ໂດຍບໍ່ມີດອກເບ້ຍ, ໜີ້ຕ້ອງຮັບຖືກຮັບຮູ້ລາຍການບັນຊີຕາມຈຳນວນ ເງິນສົດທີ່ຕ້ອງຮັບ ຈາກວິສາຫະກິດນັ້ນ, ຊຶ່ງ ໂດຍປົກກະຕິແລ້ວ ແມ່ນລາຄາໃນໃບເກັບເງິນ.
4. ສຳລັບການຊື້ຮຸ້ນສາມັນ ຂອງວິສາຫະກິດອື່ນອີກ ດ້ວຍເງິນສົດ, ເງິນລົງທຶນ ຖືກຮັບຮູ້ລາຍການບັນຊີຕາມມູນຄ່າ ເງິນສົດທີ່ໄດ້ຈ່າຍເພື່ອຊື້ຮຸ້ນ.

**ຕົວຢ່າງ – ໜີ້ສິນການເງິນ**

1. ສຳລັບເງິນກູ້ຢືມຈາກທະນາຄານ, ໜີ້ຕ້ອງສົ່ງຖືກຮັບຮູ້ລາຍການບັນຊີໃນເບື້ອງຕົ້ນ ຕາມຈຳນວນເງິນສົດຕ້ອງຈ່າຍ ໃຫ້ທະນາຄານ (ການທົດແທນເງິນຕົ້ນທຶນກູ້ຢືມ).
2. ສຳລັບ ສິນຄ້າທີ່ໄດ້ຊື້ນຳຜູ້ສະໜອງ, ໜີ້ຕ້ອງສົ່ງຖືກຮັບຮູ້ລາຍການບັນຊີຕາມມູນຄ່າໜີ້ທີ່ຕິດໜີ້ຜູ້ສະໜອງ ໂດຍບໍ່ໄດ້ ຕີມູນຄ່າເປັນມູນຄ່າປັດຈຸບັນ, ຊຶ່ງຕາມປົກກະຕິ ແມ່ນລາຄາໃນໃບເກັບເງິນ.

## ການຕີມູນຄ່າຕາມຫຼັງ

11.14 ເວລາສິ້ນສຸດແຕ່ລະ**ຮອບເວລາລາຍງານ**, ວິສາຫະກິດຕ້ອງຕີມູນຄ່າເຄື່ອງມືການເງິນຂອງຕົນເອງດັ່ງລຸ່ມນີ້, ໂດຍບໍ່ຫັກຄ່າ ດຳເນີນລາຍການ ຊຶ່ງອາດຈະເກີດຂຶ້ນ ໃນເວລາທີ່ວິສາຫະກິດຂາຍ ຫຼື ສະສາງດ້ວຍວິທີການອື່ນໆອອກ.

(ກ) ເຄື່ອງມືການເງິນປະເພດໜີ້ ທີ່ຖືກຕ້ອງຕາມເງື່ອນໄຂຂອງວັກ 11.8 (ຂ) ຕ້ອງຖືກຕີມູນຄ່າຕາມ**ຕົ້ນທຶນ** ລົບ **ການ ສູນເສຍມູນຄ່າ** ແລະ ລົບການທົດແທນຄືນຕົ້ນທຶນ ສຳລັບຊັບສິນການເງິນ ແລະ ຕາມຕົ້ນທຶນ ລົບການທົດແທນ ຄືນຕົ້ນທຶນ ສຳລັບໜີ້ສິນການເງິນ.

(ຂ) ຂໍ້ຜູກພັນທີ່ຈະຮັບເງິນກູ້ຢືມ ທີ່ຖືກຕ້ອງຕາມເງື່ອນໄຂຂອງວັກ 11.8 (ຄ) ຕ້ອງຖືກຕີມູນຄ່າຕາມມູນຄ່າຕົ້ນທຶນ (ຊຶ່ງ ບາງເທື່ອເທົ່າກັບສູນ) ຫັກການສູນເສຍມູນຄ່າອອກ.

(ຄ) ເງິນລົງທຶນໃສ່ຮຸ້ນບູລິມະສິດ ທີ່ປ່ຽນເປັນຮຸ້ນສາມັນບໍ່ໄດ້ ແລະ ຮຸ້ນສາມັນ ຫຼື ຮຸ້ນບູລິມະສິດທີ່ບໍ່ມີສິດຂາຍຄືນໄດ້ ທີ່ ຖືກຕ້ອງຕາມເງື່ອນໄຂຂອງວັກ 11.8 (ງ) ຕ້ອງຖືກຕີມູນຄ່າ ດັ່ງຕໍ່ໄປນີ້:

(i) ຖ້າວ່າ ຮຸ້ນມີການຊື້-ຂາຍຕໍ່ສາທາລະນະຊົນ ຕ້ອງຕີມູນຄ່າເງິນລົງທຶນຕາມມູນຄ່າຍຸຕິທຳ ໂດຍຮັບຮູ້ລາຍ ການບັນຊີ ໃນກຳໄລ ຫຼື ຂາດທຶນ.

(ii) ເງິນລົງທຶນອື່ນໆປະເພດດັ່ງກ່າວ ທັງໝົດ ຕ້ອງຖືກຕີມູນຄ່າຕາມລາຄາຕົ້ນທຶນ ຫັກການສູນເສຍມູນຄ່າອອກ.

ຕ້ອງໄດ້ມີການປະເມີນຜົນການສູນເສຍມູນຄ່າ ຫຼື ພາວະບໍ່ສາມາດເກັບກູ້ຄືນໄດ້ຂອງເຄື່ອງມືການເງິນ ທີ່ໄດ້ສະເໜີ ໃນຂໍ້ (ກ), (ຂ) ແລະ (ຄ) (ii) ຂ້າງເທິງນີ້. ວັກ 11.21 ຫາ 11.26 ໃຫ້ການແນະນຳ ກ່ຽວກັບບັນຫາດັ່ງກ່າວນີ້.

## ການສູນເສຍມູນຄ່າຂອງເຄື່ອງມືການເງິນ ທີ່ໄດ້ຕີມູນຄ່າຕາມຕົ້ນ

### ການຮັບຮູ້ລາຍການບັນຊີ

11.21 ເວລາສິ້ນສຸດແຕ່ລະ**ຮອບເວລາລາຍງານ**, ວິສາຫະກິດຕ້ອງປະເມີນວ່າມີຫຼັກຖານພາວະວິໄສ ຫຼືບໍ່ ກ່ຽວກັບການສູນເສຍມູນຄ່າຂອງຊັບສິນການເງິນ ທີ່ຖືກຕີມູນຄ່າຕາມຕົ້ນທຶນ. ຖ້າຫາກມີຫຼັກຖານພາວະວິໄສດ້ານການສູນເສຍມູນຄ່າ, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ **ຂາດທຶນຈາກການສູນເສຍມູນຄ່າ**ໃນກຳໄລ ຫຼື ຂາດທຶນ ທັນໃດໂລດ.

11.22 ຫຼັກຖານພາວະວິໄສທີ່ວ່າ ຊັບສິນການເງິນ ຫຼື ກຸ່ມຊັບສິນການເງິນ ໄດ້ສູນເສຍມູນຄ່າ ລວມມີ ທຸກຂໍ້ມູນທີ່ສັງເກດໄດ້ ທີ່ເປັນຈຸດສົນໃຈສຳລັບຜູ້ຖືຊັບສິນ ກ່ຽວກັບເຫດການທີ່ກໍ່ໃຫ້ເກີດການສູນເສຍມູນຄ່າ ມີຄືດັ່ງລຸ່ມນີ້ :

(ກ) ຂໍ້ຫຍຸ້ງຍາກໃຫ່ຍ ທາງດ້ານການເງິນຂອງຜູ້ອອກພັນທະບັດ ຫຼື ຂອງລູກໜີ້.

(ຂ) ການລະເມີດສັນຍາ ເຊັ່ນການບໍ່ໃຊ້ໜີ້ຊຳລະດອກເບ້ຍ ຫຼື ເງິນຕົ້ນທຶນກູ້ຢືມ.

(ຄ) ເຈົ້າໜີ້, ເນື່ອງຈາກສາຍເຫດທາງດ້ານເສດຖະກິດ ຫຼື ດ້ານກົດໝາຍ ທີ່ຕິດພັນກັບຂໍ້ຫຍຸ້ງຍາກທາງດ້ານການເງິນຂອງລູກໜີ້, ໃຫ້ເງື່ອນໄຂຜ່ອນຜັນແກ່ລູກໜີ້ ຊຶ່ງເຈົ້າໜີ້ຈະບໍ່ພິຈາລະນາສະພາບການອື່ນໆ.

(ງ) **ອາດເປັນໄປໄດ້**ທີ່ລູກໜີ້ຈະເຂົ້າສູ່ພາວະການລົ້ມລະລາຍ ຫຼື ມີການປັບປຸງໂຄງສ້າງຄືນໃໝ່ທາງດ້ານການເງິນ.

(ຈ) ຂໍ້ມູນທີ່ສັງເກດໄດ້ ຊຶ່ງຊີ້ບອກວ່າມີການຫຼຸດລົງທີ່ຕີມູນຄ່າໄດ້ ກ່ຽວກັບການຄາດຄະເນກະແສເງິນສົດໃນອະນາຄົດທີ່ໄດ້ຄາດໄວ້ຕໍ່ກຸ່ມຊັບສິນການເງິນ ນັບແຕ່ໄດ້ມີການຮັບຮູ້ລາຍການບັນຊີເບື້ອງຕົ້ນ ກ່ຽວກັບຊັບສິນດັ່ງກ່າວ, ເຖິງແມ່ນວ່າສ່ວນຫຼຸດລົງດັ່ງກ່າວ ບໍ່ສາມາດບອກໄດ້ວ່າມີການຕິດພັນກັບຊັບສິນການເງິນໃດແດ່ ຂອງແຕ່ລະລາຍການຂອງກຸ່ມ, ເຊັ່ນ ເງື່ອນໄຂທາງດ້ານເສດຖະກິດທີ່ບໍ່ເອື້ອອຳນວຍ ໃນລະດັບຊາດ ຫຼື ທ້ອງຖິ່ນ ຫຼື ການປ່ຽນແປງທີ່ບໍ່ເອື້ອອຳນວຍ ກ່ຽວກັບສະພາບການຂອງຂະແໜງການ.

11.23 ປັດໄຈອື່ນໆ ອາດເປັນຫຼັກຖານວ່າມີການສູນເສຍມູນຄ່າ, ລວມທັງການປ່ຽນແປງໃຫ່ຍໃນສິ່ງແວດລ້ອມທາງດ້ານເຕັກໂນໂລຊີ, ຕະຫຼາດ, ເສດຖະກິດ ຫຼື ກົດໝາຍບ່ອນທີ່ຜູ້ອອກເຄື່ອງມືດຳເນີນກິດຈະການ ໂດຍມີຜົນກະທົບທີ່ບໍ່ເອື້ອອຳນວຍ.

11.24 ວິສາຫະກິດຕ້ອງປະເມີນການສູນເສຍມູນຄ່າ ແຕ່ລະລາຍການຊັບສິນການເງິນ ດັ່ງລຸ່ມນີ້:

(ກ) ທຸກເຄື່ອງມືການເງິນປະເພດທຶນເຈົ້າຂອງ ໂດຍບໍ່ຂຶ້ນກັບຈຳນວນເງິນຫຼາຍໜ້ອຍ, ແລະ

(ຂ) ຊັບສິນການເງິນອື່ນໆ ຊຶ່ງແຕ່ລະລາຍການເປັນເງິນຈຳນວນຫຼາຍ.

ວິສາຫະກິດຕ້ອງປະເມີນຊັບສິນການເງິນອື່ນໆ ດ້ານການສູນເສຍມູນຄ່າເປັນແຕ່ລະລາຍ ຫຼື ເປັນກຸ່ມຊັບສິນບົນພື້ນຖານລັກສະນະເດັ່ນດ້ານຄວາມສ່ຽງດ້ານສິນເຊື່ອ ທີ່ຄ້າຍຄືກັນ.

### ການຕີມູນຄ່າ

11.25 ວິສາຫະກິດຕ້ອງປະເມີນຜົນຂາດທຶນຈາກການສູນເສຍມູນຄ່າ ຂອງເຄື່ອງມືຕໍ່ໄປນີ້ ທີ່ໄດ້ຕີມູນຄ່າຕາມຕົ້ນທຶນ ດັ່ງນີ້ : ຂາດທຶນຈາກການສູນເສຍມູນຄ່າແມ່ນສ່ວນຜິດດ່ຽງ ລະຫ່ວາງມູນຄ່າໃນບັນຊີຂອງຊັບສິນ ແລະ ຕົວເລກຄາດຄະເນປະຕິບັດທີ່ດີທີ່ສຸດ (ຊຶ່ງຈະຈຳເປັນ ເປັນຕົວເລກຄາດປະມານ) ຂອງຈຳນວນເງິນ (ອາດເທົ່າກັບສູນ) ຊຶ່ງວິສາຫະກິດຈະໄດ້ຮັບບ້ວງຊັບສິນ ຖ້າຫາກຖືກຂາຍອອກໃນມື້ລາຍງານ.

### ການປັ້ນກັບລາຍການ

11.26 ຖ້າວ່າ ຈຳນວນເງິນຂາດທຶນຈາກການສູນເສຍມູນຄ່າຫຼຸດລົງໃນປີການບັນຊີທີ່ຕາມມາ, ແລະ ຖ້າການຫຼຸດລົງດັ່ງກ່າວ ສາມາດຕິດພັນຢ່າງພາວະວິໄສ ກັບເຫດການທີ່ເກີດຂຶ້ນພາຍຫຼັງໄດ້ຮັບຮູ້ລາຍການບັນຊີການສູນເສຍມູນຄ່າ (ເຊັ່ນການປັບປຸງການຈັດລະດັບຄວາມເຊື່ອຖືຕໍ່ລູກໜີ້), ວິສາຫະກິດຕ້ອງປັ້ນກັບລາຍການຂາດທຶນຈາກການສູນເສຍມູນຄ່າ ດ້ວຍການປັບປຸງບັນຊີກວດແກ້ມູນຄ່າ. ການປັ້ນກັບລາຍການ ຈະຕ້ອງບໍ່ສົ່ງຜົນຕໍ່ມູນຄ່າໃນບັນຊີຂອງຊັບສິນການເງິນ (ຫັກທຸກລາຍການໃນບັນຊີດັດແກ້ມູນຄ່າອອກ) ທີ່ສູງເກີນກ່ວາມູນຄ່າໃນບັນຊີ ຫາກບໍ່ໄດ້ຮັບຮູ້ລາຍການບັນຊີການສູນເສຍມູນຄ່າໃນໄລຍະຜ່ານມາ. ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີການປັ້ນກັບລາຍການນັ້ນໃນກຳໄລ ຫຼື ຂາດທຶນ ໃນທັນໃດໂລດ.

### ມູນຄ່າຍຸຕິທຳ

11.27 ວັກ 11.14 (ຄ) (i) ກຳນົດໃຫ້ ຕີມູນຄ່າເງິນລົງທຶນຊື້ຮຸ້ນບູລິມະສິດທີ່ປ່ຽນເປັນຮຸ້ນສາມັນບໍ່ໄດ້ ແລະ ຮຸ້ນສາມັນທີ່ບໍ່ມີສິດ ຂາຍຄືນໄດ້ ຫຼື ຮຸ້ນບູລິມະສິດ ຕາມມູນຄ່າຍຸຕິທຳ ຖ້າຫາກ ມີການຊື້-ຂາຍຮຸ້ນເຫຼົ່ານັ້ນ ຕໍ່ສາທາລະນະຊົນ. ມູນຄ່າຍຸດຕິທຳ ຂອງຮຸ້ນເຫຼົ່ານີ້ ແມ່ນລາຄາຊື້-ຂາຍຂອງພວກມັນ.

## ການຕັດລາຍການບັນຊີ ຊັບສິນການເງິນ

11.33 ວິສາຫະກິດຕ້ອງຕັດລາຍການບັນຊີຊັບສິນການເງິນໃດໜຶ່ງ ກໍຕໍ່ເມື່ອ:

(ກ) ສິດທິຕາມສັນຍາ ກ່ຽວກັບກະແສເງິນສົດຊຶ່ງເກີດຈາກຊັບສິນການເງິນ ໝົດກຳນົດເວລາ ຫຼື ໄດ້ຊຳລະແລ້ວ, ຫຼື

(ຂ) ວິສາຫະກິດໂອນຄວາມສ່ຽງ ແລະ ຜົນຕອບແທນເກືອບວ່າທຸກປະການ ຂອງການເປັນເຈົ້າກຳມະສິດຊັບສິນການເງິນ ໃຫ້ອີກຝ່າຍໜຶ່ງ, ຫຼື

(ຄ) ເຖິງແມ່ນວ່າຈະຮັກສາຄວາມສ່ຽງ ແລະ ຜົນຕອບແທນທີ່ສຳຄັນຂອງການເປັນເຈົ້າກຳມະສິດ, ວິສາຫະກິດໄດ້ໂອນ ການຄວບຄຸມຊັບສິນໃຫ້ແກ່ອີກຝ່າຍໜຶ່ງ ແລະ ຝ່າຍນັ້ນ ມີຄວາມສາມາດໃນພາກປະຕິບັດຕົວຈິງ ໃນການຂາຍຊັບ ສິນທັງໝົດ ໃຫ້ພາກສ່ວນອື່ນທີ່ບໍ່ກ່ຽວຂ້ອງກັນ ແລະ ສາມາດນຳໃຊ້ຄວາມສາມາດດັ່ງກ່າວ ແຕ່ຝ່າຍດຽວແລະບໍ່ມີ ຄວາມຕ້ອງການທີ່ຈະກຳນົດຂໍ້ຈຳກັດເພີ່ມເຕີມກ່ຽວກັບການໂອນຊັບສິນນັ້ນ. ໃນກໍລະນີດັ່ງກ່າວ, ວິສາຫະກິດຕ້ອງ:

(i) ຕັດລາຍການບັນຊີຊັບສິນນັ້ນ, ແລະ

(ii) ຮັບຮູ້ລາຍການບັນຊີ ໂດຍແຍກຕ່າງຫາກ ສິດທິ ແລະ ພັນທະທັງໝົດ ທີ່ໄດ້ສ້າງຂຶ້ນ ຫຼື ໄດ້ຮັກສາໄວ້ ເວລາ ໂອນຊັບສິນ.

ມູນຄ່າໃນບັນຊີຂອງຊັບສິນທີ່ໄດ້ໂອນ ຕ້ອງຈັດແບ່ງລະຫ່ວາງສິດທິ ຫຼື ພັນທະທີ່ໄດ້ຮັກສາໄວ້ ແລະ ສິດທິ ຫຼື ພັນທະທີ່ ໄດ້ໂອນບົນພື້ນຖານມູນຄ່າຍຸຕິທຳທີ່ພົວພັນ ໃນມື້ໂອນຊັບສິນ. ສິດທິ ແລະ ພັນທະ ທີ່ໄດ້ສ້າງຂຶ້ນໃໝ່ ຕ້ອງຖືກຕີມູນຄ່າ ຕາມມູນຄ່າຍຸຕິທຳໃນມື້ນັ້ນ. ທຸກສ່ວນຜິດດ່ຽງ ລະຫ່ວາງສິ່ງຕອບແທນທີ່ໄດ້ຮັບ ແລະ ຈຳນວນເງິນທີ່ໄດ້ຮັບຮູ້ລາຍການ ບັນຊີ ແລະ ໄດ້ຕັດລາຍການບັນຊີອອກ ຕາມວັກດັ່ງກ່າວນີ້ ຕ້ອງໄດ້ຖືກຮັບຮູ້ລາຍການບັນຊີ ໃນກຳໄລ ຫຼື ຂາດທຶນ ໃນ ປີການບັນຊີທີ່ມີການໂອນຊັບສິນ.

11.34 ຖ້າວ່າການໂອນ ບໍ່ນຳໄປສູ່ການຕັດລາຍການບັນຊີ ຍ້ອນວ່າວິສາຫະກິດໄດ້ຮັກສາຄວາມສ່ຽງ ແລະ ຜົນຕອບແທນທີ່ສຳ ຄັນ ໃນການເປັນເຈົ້າກຳມະສິດຊັບສິນທີ່ໄດ້ໂອນ, ວິສາຫະກິດຕ້ອງສືບຕໍ່ຮັບຮູ້ລາຍການບັນຊີຊັບສິນທີ່ໄດ້ໂອນທັງໝົດ ແລະ ຕ້ອງຮັບຮູ້ລາຍການບັນຊີໜີ້ສິນການເງິນ ສຳລັບສິ່ງຕອບແທນທີ່ໄດ້ຮັບ. ຊັບສິນ ແລະ ໜີ້ສິນ ແມ່ນຫັກຊຳລະສະ ສາງບໍ່ໄດ້. ໃນປີການບັນຊີຕໍ່ໄປ, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີທຸກລາຍຮັບຈາກຊັບສິນທີ່ໄດ້ໂອນ ແລະ ທຸກລາຍ ຈ່າຍທີ່ເກີດຂຶ້ນຈາກໜີ້ສິນການເງິນ.

11.35 ຖ້າວ່າຜູ້ໂອນ ມອບຫຼັກຊັບຄ້ຳປະກັນ ທີ່ບໍ່ແມ່ນເງິນສົດ (ເຊັ່ນ ເຄື່ອງມືໜີ້ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງ) ໃຫ້ຜູ້ ຮັບໂອນ, ການລົງບັນຊີ ກ່ຽວກັບຫຼັກຊັບຄ້ຳປະກັນໂດຍຜູ້ໂອນຊັບສິນ ແລະ ຜູ້ຮັບໂອນ ຂຶ້ນກັບວ່າ ຜູ້ຮັບໂອນ ມີສິດຂາຍ ຫຼື ຊວດຈຳຄັ້ງໃໝ່ຫຼັກຊັບຄ້ຳປະກັນຫຼືບໍ່ ແລະ ຜູ້ໂອນຜິດສັນຍາ ຫຼືບໍ່. ຜູ້ໂອນ ແລະ ຜູ້ຮັບໂອນ ຕ້ອງລົງບັນຊີຫຼັກຊັບ ຄ້ຳປະກັນດັ່ງລຸ່ມນີ້ :

(ກ) ຖ້າວ່າຜູ້ຮັບໂອນມີສິດ, ຕາມການກຳນົດໃນສັນຍາ ຫຼື ຕາມປະເພນີ, ຂາຍ ຫຼືຊວດຈຳ ຫຼັກຊັບຄ້ຳປະກັນອີກຄັ້ງ ໃໝ່, ຜູ້ໂອນຊັບສິນຕ້ອງຈັດປະເພດຊັບສິນດັ່ງກ່າວຄືນໃໝ່ ໃນໃບລາຍງານຖານະການເງິນ (ຕົວຢ່າງ ເປັນຊັບສິນ ທີ່ໄດ້ໃຫ້ຢືມ, ເຄື່ອງມືການເງິນປະເພດທຶນເຈົ້າຂອງທີ່ໄດ້ຊວດຈຳ ຫຼື ໜີ້ຕ້ອງຮັບຈາກການຊື້ຄືນ) ໂດຍແຍກອອກ ຈາກຊັບສິນອື່ນໆ.

(ຂ) ຖ້າວ່າຜູ້ຮັບໂອນ ຂາຍຫຼັກຊັບຄ້ຳປະກັນທີ່ໄດ້ຊວດຈຳເພື່ອຜົນປະໂຫຍດຂອງຕົນເອງ, ຜູ້ຮັບໂອນຕ້ອງຮັບຮູ້ລາຍ ການບັນຊີ ລາຍຮັບຈາກການຂາຍ ແລະ ໜີ້ສິນທີ່ໄດ້ຖືກຕີມູນຄ່າຕາມມູນຄ່າຍຸຕິທຳ ເພື່ອປະຕິບັດພັນທະໃນການ ສົ່ງຄືນຫຼັກຊັບຄ້ຳປະກັນ.

(ຄ) ຖ້າວ່າຜູ້ໂອນ ຜິດສັນຍາບົນພື້ນຖານເງື່ອນໄຂສັນຍາ ແລະ ບໍ່ມີສິດຊື້ຫຼັກຊັບຄ້ຳປະກັນຄືນ, ຜູ້ໂອນຕ້ອງຕັດລາຍ

ການບັນຊີຫຼັກຊັບຄ້ຳປະກັນອອກຈາກບັນຊີ, ແລະ ຜູ້ຮັບໂອນ ຕ້ອງຮັບຮູ້ລາຍການບັນຊີຫຼັກຊັບຄ້ຳປະກັນ ເປັນຊັບສິນຂອງຕົນເອງ, ຊຶ່ງໃນເບື້ອງຕົ້ນໄດ້ຖືກຕີມູນຄ່າຕາມມູນຄ່າຍຸຕິທຳ ຫຼືວ່າ, ຖ້າຫາກຜູ້ຮັບໂອນໄດ້ຂາຍຫຼັກຊັບຄ້ຳປະກັນແລ້ວ, ໃຫ້ຕັດລາຍການບັນຊີ ພັນທະຂອງຕົນເອງໃນການສົ່ງຄືນ ຫຼັກຊັບຄ້ຳປະກັນອອກ.

(ງ) ເວັ້ນເສຍແຕ່ກໍລະນີ ທີ່ໄດ້ກຳນົດໄວ້ໃນວັກ (ຄ), ຜູ້ໂອນຕ້ອງສືບຕໍ່ລົງບັນຊີຫຼັກຊັບຄ້ຳປະກັນເປັນຊັບສິນຂອງຕົນເອງ. ຜູ້ຮັບໂອນບໍ່ຕ້ອງລົງບັນຊີຫຼັກຊັບຄ້ຳປະກັນເປັນຊັບສິນ.

**ຕົວຢ່າງ - ການໂອນ ທີ່ຖືກຕາມເງື່ອນໄຂການຕັດລາຍການບັນຊີ**

ວິສາຫະກິດຂາຍກຸ່ມບັນຊີໜີ້ຕ້ອງຮັບຈາກລູກຄ້າ ໃຫ້ທະນາຄານໃດໜຶ່ງຕາມຈຳນວນເງິນທີ່ຕ່ຳກ່ວາມູນຄ່າໃນເອກະສານ. ວິສາຫະກິດສືບຕໍ່ຄຸ້ມຄອງການຮຽກເກັບໜີ້ໃນນາມທະນາຄານ, ລວມທັງການຈັດສົ່ງໃບສະຫຼຸບປະຈຳເດືອນໃຫ້ ແລະ ທະນາຄານກຳຈ່າຍຄ່າທຳນຽມໃຫ້ວິສາຫະກິດ ຕາມອັດຕາທ້ອງຕະຫຼາດ ສຳລັບການບໍລິການທີ່ຕິດພັນກັບໜີ້ຕ້ອງຮັບ. ວິສາຫະກິດຈຳຕ້ອງໄດ້ມອບຈຳນວນເງິນທີ່ເກັບກູ້ຄືນໄດ້ໃຫ້ທະນາຄານ ຢ່າງທັນການໂລດ, ແຕ່ຫາກບໍ່ມີພັນທະໃດໆໝົດ ຕໍ່ທະນາຄານທາງດ້ານການຊັກຊ້າ ຫຼື ການບໍ່ຊຳລະໜີ້ຈາກລູກໜີ້. ໃນກໍລະນີດັ່ງກ່າວ, ວິສາຫະກິດໄດ້ໂອນໃຫ້ທະນາຄານຄວາມສ່ຽງ ແລະ ຜົນຕອບແທນເກືອບວ່າທຸກປະການ ຂອງການເປັນເຈົ້າກຳມະສິດທັງໝົດ ທີ່ຕິດພັນກັບສິດທິດ້ານກຳມະສິດຕໍ່ໜີ້ຕ້ອງຮັບໃຫ້ທະນາຄານ. ຜົນຕາມມາຄື ວິສາຫະກິດລົບລ້າງໜີ້ຕ້ອງຮັບອອກຈາກໃບລາຍງານຖານະການເງິນຂອງຕົນເອງ (ໝາຍຄວາມວ່າຕັດລາຍການບັນຊີອອກ) ແລະ ບໍ່ສະແດງອອກໃນໜີ້ສິນໃດໆ ກ່ຽວກັບການຮັບເງິນຈາກທະນາຄານ.

ວິສາຫະກິດຮັບຮູ້ລາຍການບັນຊີ ຂາດທຶນ ທີ່ໄດ້ຄິດໄລ່ເປັນສ່ວນຜິດດ່ຽງ ລະຫ່ວາງ ມູນຄ່າໃນບັນຊີຂອງໜີ້ຕ້ອງຮັບ ໃນເວລາຂາຍ ແລະ ການຮັບເງິນຈາກທະນາຄານ. ວິສາຫະກິດຮັບຮູ້ລາຍການບັນຊີໜີ້ສິນໃນຂອບເຂດທີ່ວ່າໄດ້ເກັບກູ້ຄືນເງິນທຶນຈາກລູກໜີ້, ແຕ່ຫາກຍັງບໍ່ທັນໄດ້ມອບເຂົ້າທະນາຄານ.

**ຕົວຢ່າງ - ການໂອນ ທີ່ບໍ່ຖືກຕາມເງື່ອນໄຂການຕັດລາຍການບັນຊີ**

ເຫດການຄືກັນກັບຕົວຢ່າງຜ່ານມາ, ເວັ້ນເສຍແຕ່ວິສາຫະກິດໄດ້ຕົກລົງຊື້ຄືນນຳທະນາຄານໜີ້ຕ້ອງຮັບທັງໝົດທີ່ມີການຊັກຊ້າ ໃນການສົ່ງຕົ້ນທຶນກູ້ຢືມ ແລະ ດອກເບ້ຍ ທີ່ເກີນ 120 ວັນຂຶ້ນໄປ. ໃນກໍລະນີດັ່ງກ່າວນີ້, ວິສາຫະກິດຮັກສາຄວາມສ່ຽງທີ່ຕິດພັນກັບການຊັກຊ້າ ຫຼື ການບໍ່ຊຳລະເງິນຂອງລູກໜີ້ ຊຶ່ງເປັນຄວາມສ່ຽງທີ່ສຳຄັນ ກ່ຽວກັບໜີ້ຕ້ອງຮັບ. ຜົນຕາມມາຄື ວິສາຫະກິດບໍ່ລົງບັນຊີໜີ້ຕ້ອງຮັບ ຄືກັນກັບວ່າ ໄດ້ຂາຍໃຫ້ທະນາຄານ ແລະ ບໍ່ຕັດລາຍການບັນຊີນັ້ນອອກ. ກົງກັນຂ້າມ, ວິສາຫະກິດລົງບັນຊີການຮັບເງິນຈາກທະນາຄານເປັນເງິນກູ້ຢືມ ທີ່ມີການຄ້ຳປະກັນດ້ວຍໜີ້ຕ້ອງຮັບ. ວິສາຫະກິດຍັງສືບຕໍ່ຮັບຮູ້ລາຍການບັນຊີໜີ້ຕ້ອງຮັບເປັນຊັບສິນ ຈົນກ່ວາຈະເກັບກູ້ຄືນໄດ້ ຫຼື ສະສາງອອກຈາກໃບສະຫຼຸບຊັບສົມບັດ ເນື່ອງຈາກວ່າເກັບກູ້ຄືນບໍ່ໄດ້.

## ການຕັດລາຍການບັນຊີ ໜີ້ສິນການເງິນ

11.36 ວິສາຫະກິດຕ້ອງຕັດລາຍການບັນຊີ ໜີ້ສິນການເງິນ (ຫຼື ສ່ວນໜຶ່ງຂອງໜີ້ສິນການເງິນ) ພຽງແຕ່ເມື່ອໜີ້ສິນການເງິນນັ້ນສິ້ນສຸດລົງເທົ່ານັ້ນ ເຊັ່ນຂໍ້ບັງຄັບທີ່ໄດ້ກຳນົດໄວ້ໃນສັນຍາຫາກສິ້ນສຸດລົງ, ຖືກລົບລ້າງ ຫຼື ໝົດອາຍຸການ.

11.37 ຖ້າວ່າ ຜູ້ກູ້ຢືມ ແລະ ຜູ້ໃຫ້ກູ້ຢືມ ໃນປັດຈຸບັນ ແລກປ່ຽນເຄື່ອງມືການເງິນນຳກັນ ຊຶ່ງມີເງື່ອນໄຂແຕກຕ່າງກັນຫຼາຍ, ວິສາຫະກິດຕ້ອງລົງບັນຊີ ລາຍການເຄື່ອນໄຫວ ເປັນການສິ້ນສຸດໜີ້ສິນການເງິນເບື້ອງຕົ້ນ ແລະ ການຮັບຮູ້ລາຍການບັນຊີໜີ້ສິນການເງິນໃໝ່. ເຊັ່ນດຽວກັນນັ້ນ, ວິສາຫະກິດໃດໜຶ່ງ ຕ້ອງລົງບັນຊີການປ່ຽນແປງໃຫ່ຍທາງດ້ານເງື່ອນໄຂຂອງໜີ້ສິນການເງິນທີ່ມີ ຫຼື ສ່ວນໜຶ່ງ ຂອງລາຍການດັ່ງກ່າວ (ບໍ່ວ່າຈະເກີດຂຶ້ນ ເນື່ອງຈາກຂໍ້ຫຍຸ້ງຍາກທາງດ້ານການເງິນຂອງລູກໜີ້ ຫຼືບໍ່ ກຳຕາມ) ເປັນການສິ້ນສຸດໜີ້ສິນການເງິນໃນເບື້ອງຕົ້ນ ແລະ ການຮັບຮູ້ລາຍການບັນຊີໜີ້ສິນການເງິນລາຍໃໝ່.

11.38 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ໃນກຳໄລ ຫຼື ຂາດທຶນ ທຸກສ່ວນຜິດດ່ຽງ ລະຫ່ວາງ ມູນຄ່າໃນບັນຊີ ຂອງໜີ້ສິນການເງິນ (ຫຼື ສ່ວນໜຶ່ງຂອງໜີ້ສິນການເງິນ) ທີ່ໄດ້ສິ້ນສຸດລົງ ຫຼື ໄດ້ໂອນໃຫ້ພາກສ່ວນອື່ນ, ແລະ ສິ່ງຕອບແທນທີ່ໄດ້ຊຳລະໃຫ້, ລວມທັງຊັບສິນທີ່ໄດ້ໂອນຊຶ່ງບໍ່ແມ່ນເງິນສົດລວມ ຫຼື ໜີ້ສິນທີ່ສັນນິຖານວ່າເກີດຂຶ້ນໃໝ່.

## ການເປີດເຜີຍຂໍ້ມູນຂ່າວສານ

### ການເປີດເຜີຍຂໍ້ມູນ ກ່ຽວກັບນະໂຍບາຍການບັນຊີ ສຳລັບເຄື່ອງມືການເງິນ

11.40 ອີງຕາມວັກ 8.5, ວິສາຫະກິດຕ້ອງເປີດເຜີຍ ໃນບົດສັງລວມນະໂຍບາຍການບັນຊີຕົ້ນຕໍ, ຂໍ້ມູນ ກ່ຽວກັບພື້ນຖານການຕີມູນຄ່າທີ່ໄດ້ນຳໃຊ້ສຳລັບເຄື່ອງມືການເງິນ ກໍຄື ກ່ຽວກັບນະໂຍບາຍການບັນຊີອື່ນໆ ທີ່ໄດ້ນຳໃຊ້ສຳລັບເຄື່ອງມືການເງິນ ທີ່ກ່ຽວຂ້ອງກັບການສ້າງຄວາມເຂົ້າໃຈຕໍ່ເອກະສານລາຍງານການເງິນ.

### ໃບລາຍງານຖານະການເງິນ – ປະເພດຊັບສິນການເງິນ ແລະ ໜີ້ສິນການເງິນ

11.41 ວິສາຫະກິດຕ້ອງເປີດເຜີຍມູນຄ່າໃນບັນຊີທັງໝົດ ຂອງແຕ່ລະປະເພດຊັບສິນການເງິນ ແລະ ໜີ້ສິນການເງິນຕໍ່ໄປນີ້ ໃນມື້ລາຍງານ, ໃນບົດອະທິບາຍຊ້ອນທ້າຍ :

(ກ) ຊັບສິນການເງິນ ທີ່ຖືກຕີມູນຄ່າຕາມມູນຄ່າຍຸຕິທຳຜ່ານກຳໄລ ຫຼື ຂາດທຶນ (ວັກ 11.14 (ຄ)).

(ຂ) ຊັບສິນການເງິນ ທີ່ເປັນເຄື່ອງມືການເງິນປະເພດໜີ້ ທີ່ຖືກຕີມູນຄ່າຕາມ**ຕົ້ນທຶນ** ລົບ**ການສູນເສຍມູນຄ່າ** ແລະ ລົບການທົດແທນຄືນຕົ້ນທຶນ (ວັກ 11.14 (ກ)).

(ຄ) ຊັບສິນການເງິນ ທີ່ແມ່ນເຄື່ອງມືການເງິນປະເພດທຶນເຈົ້າຂອງ ທີ່ຖືກຕີມູນຄ່າຕາມຕົ້ນທຶນການສູນເສຍມູນຄ່າ (ວັກ 11.14 (ຄ) (ii)).

(ຈ) ໜີ້ສິນການເງິນ ທີ່ຖືກຕີມູນຄ່າຕາມຕົ້ນທຶນ ລົບການສູນເສຍມູນຄ່າ ແລະ ລົບການທົດແທນຄືນຕົ້ນທຶນ (ວັກ 11.14 (ກ)).

(ສ) ຂໍ້ຜູກພັນດ້ານເງິນກູ້ຢືມ ທີ່ຖືກຕີມູນຄ່າຕາມຕົ້ນທຶນຫັກການສູນເສຍມູນຄ່າ (ວັກ 11.14 (ຂ)).

11.42 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານທີ່ຊ່ວຍໃຫ້ຜູ້ນຳໃຊ້ເອກະສານລາຍງານການເງິນຂອງຕົນ ປະເມີນຄວາມສຳຄັນຂອງເຄື່ອງມືການເງິນ ສຳລັບຖານະການເງິນ ແລະຜົນການດຳເນີນງານດ້ານການເງິນຂອງວິສາຫະກິດດັ່ງກ່າວ. ຕົວຢ່າງ ກ່ຽວກັບໜີ້ໄລຍະຍາວ, ຂໍ້ມູນຂ່າວສານດັ່ງກ່າວຕາມປົກກະຕິ ຈະລວມມີກຳນົດເວລາແລະເງື່ອນໄຂທົ່ວໄປ ກ່ຽວກັບເຄື່ອງມືການເງິນປະເພດໜີ້ (ເຊັ່ນອັດຕາດອກເບ້ຍ, ມື້ຄົບອາຍຸການ, ຕາຕະລາງເວລາການທົດແທນຄືນ ແລະ ຂໍ້ຈຳກັດຂອງເຄື່ອງມືການເງິນປະເພດໜີ້ທີ່ມີຜົນບັງຄັບໃຊ້ສຳລັບວິສາຫະກິດ).

11.43 ສຳລັບ ຊັບສິນການເງິນ ແລະ ໜີ້ສິນການເງິນ ທັງໝົດທີ່ຖືກຕີມູນຄ່າຕາມມູນຄ່າຍຸຕິທຳ, ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບພື້ນຖານການຄິດໄລ່ມູນຄ່າຍຸຕິທຳ, ເຊັ່ນ ລາຄາຊື້ຂາຍໃນຕະຫຼາດ ໃນຕະຫຼາດທີ່ມີການເຄື່ອນໄຫວປົກກະຕິ ຫຼື ເຕັກນິກການປະເມີນລາຄາ. ເວລານຳໃຊ້ເຕັກນິກການປະເມີນລາຄາໃດໜຶ່ງ, ວິສາຫະກິດຕ້ອງເປີດເຜີຍຂໍ້ມູນກ່ຽວກັບສົມມຸດຖານທີ່ໄດ້ນຳໃຊ້ ໃນການຄິດໄລ່ມູນຄ່າຍຸຕິທຳ ສ□ຳລັບແຕ່ລະປະເພດຊັບສິນການເງິນ ຫຼື ໜີ້ສິນການເງິນ. ຕົວຢ່າງ ວິສາຫະກິດໃດໜຶ່ງຕ້ອງສະເໜີ, ຖ້າປະຕິບັດໄດ້, ຂໍ້ມູນຂ່າວສານ ກ່ຽວກັບສົມມຸດຖານທີ່ໄດ້ນຳໃຊ້ ກ່ຽວກັບອັດຕາລາຍຈ່າຍໆລ່ວງໜ້າ, ອັດຕາຄ່າສູນເສຍມູນຄ່າໜີ້ຕ້ອງຮັບທີ່ໄດ້ຄາດຄະເນໄວ້, ແລະ ອັດຕາດອກເບ້ຍ ຫຼື ອັດຕາການຕີມູນຄ່າເປັນມູນຄ່າປັດຈຸບັນ.

11.44 ຖ້າຫາກບໍ່ມີການຕີມູນຄ່າທີ່ໜ້າເຊື່ອຖືໄດ້ ກ່ຽວກັບ ມູນຄ່າຍຸຕິທຳ ສຳລັບເຄື່ອງມືການເງິນປະເພດທຶນເຈົ້າຂອງ ທີ່ຖືກຕີມູນຄ່າ ຕາມມູນຄ່າຍຸຕິທຳ ຜ່ານກຳໄລ ຫຼື ຂາດທຶນ, ວິສາຫະກິດຕ້ອງເປີດເຜີຍຂໍ້ມູນ ກ່ຽວກັບຄວາມເປັນຈິງດັ່ງກ່າວນັ້ນ.

### ການຕັດລາຍການບັນຊີ

11.45 ຖ້າວ່າວິສາຫະກິດໃດໜຶ່ງ ໄດ້ໂອນຊັບສິນການເງິນໄປໃຫ້ຝ່າຍອື່ນໃນການເຄື່ອນໄຫວທີ່ບໍ່ຖືກຕ້ອງຕາມເງື່ອນໄຂການຕັດລາຍການບັນຊີ (ເບິ່ງວັກ 11.33 ຫາ 11.35), ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານສຳລັບແຕ່ລະປະເພດຊັບສິນການເງິນດັ່ງກ່າວນັ້ນ ຕາມລາຍລະອຽດຂ້າງລຸ່ມນີ້ :

(ກ) ລັກສະນະເນື້ອໃນຂອງຊັບສິນ.

(ຂ) ລັກສະນະເນື້ອໃນຂອງຄວາມສ່ຽງ ແລະ ຜົນຕອບແທນຂອງການເປັນເຈົ້າກຳມະສິດຂອງຊັບສິນດັ່ງກ່າວ ຊຶ່ງວິສາຫະກິດປະເຊີນໜ້າຢູ່.

(ຄ) ມູນຄ່າໃນບັນຊີຂອງຊັບສິນ ແລະ ໜີ້ສິນທີ່ຕິດພັນທັງໝົດ ຊຶ່ງວິສາຫະກິດສືບຕໍ່ຮັບຮູ້ລາຍການບັນຊີ.

## ຫຼັກຊັບຄ້ຳປະກັນ

11.46 ຖ້າວ່າວິສາຫະກິດໃດໜຶ່ງໄດ້ເອົາຊັບສິນການເງິນ ເປັນຫຼັກຊັບຄ້ຳປະກັນໜີ້ສິນ ຫຼື ໜີ້ສິນທີ່ອາດຈະເກີດຂຶ້ນ, ວິສາຫະກິດຕ້ອງໄດ້ເປີດເຜີຍຂໍ້ມູນດັ່ງຕໍ່ໄປນີ້ :

(ກ) ມູນຄ່າໃນບັນຊີຂອງຊັບສິນການເງິນ ທີ່ໄດ້ເອົາໄປເປັນຫຼັກຊັບຄ້ຳປະກັນ.

(ຂ) ກຳນົດເວລາ ແລະ ເງື່ອນໄຂຂອງການນຳເອົາຊັບສິນນັ້ນ ເປັນຫຼັກຊັບຄ້ຳປະກັນ.

## ການບໍ່ໃຊ້ໜີ້ ແລະ ການລະເມີດເງື່ອນໄຂເງິນກູ້ຢືມຕ້ອງຈ່າຍ

11.47 ສຳລັບເງິນກູ້ຢືມຕ້ອງຈ່າຍທີ່ໄດ້ຖືກຮັບຮູ້ລາຍການບັນຊີໃນມື້ລາຍງານ ຊຶ່ງໄດ້ມີການລະເມີດກຳນົດເວລາ ຫຼື ບໍ່ໄຊ້ໜີ້ ເງິນຕົ້ນທຶນກູ້ຢືມ, ດອກເບ້ຍ, ເງິນກອງທຶນຫັກທົດແທນ ຫຼື ຂໍ້ກຳນົດ ກ່ຽວກັບການໄຖ່ຖອນຄືນ ກ່ອນມື້ລາຍງານ, ວິສາຫະກິດຕ້ອງໄດ້ເປີດເຜີຍຂໍ້ມູນດັ່ງຕໍ່ໄປນີ້ :

(ກ) ລາຍລະອຽດ ກ່ຽວກັບ ການລະເມີດ ຫຼື ການບໍ່ໄຊ້ໜີ້.

(ຂ) ມູນຄ່າໃນບັນຊີຂອງເງິນກູ້ຢືມທີ່ກ່ຽວຂ້ອງຕ້ອງຈ່າຍ ໃນມື້ລາຍງານ.

(ຄ) ວ່າໄດ້ມີການແກ້ໄຂບັນຫາການລະເມີດ ຫຼື ການບໍ່ໄຊ້ໜີ້ຫຼືບໍ່ ຫຼື ໄດ້ມີການເຈລະຈາຄືນໃໝ່ເງື່ອນໄຂການຊຳລະເງິນກູ້ ຫຼືບໍ່ ກ່ອນໄດ້ຮັບອະນຸຍາດໃຫ້ຈັດພິມເອກະສານລາຍງານການເງິນ.

## ລາຍການ ລາຍຮັບ, ລາຍຈ່າຍ, ສ່ວນໄດ້ ຫຼື ສ່ວນເສຍ

11.48 ວິສາຫະກິດຕ້ອງເປີດເຜີຍລາຍການດັ່ງລຸ່ມນີ້ ກ່ຽວກັບລາຍຮັບ, ລາຍຈ່າຍ, ສ່ວນໄດ້ ຫຼື ສ່ວນເສຍ:

(ກ) ລາຍຮັບ, ລາຍຈ່າຍ, ສ່ວນໄດ້ ຫຼື ສ່ວນເສຍ, ທີ່ລວມມີສ່ວນປ່ຽນແປງຂອງມູນຄ່າຍຸຕິທຳ ທີ່ໄດ້ຮັບຮູ້ລາຍການບັນຊີ ໃນ:

(i) ຮຸ້ນບູລິມະສິດທີ່ປ່ຽນເປັນຮຸ້ນສາມັນບໍ່ໄດ້ ແລະ ຮຸ້ນສາມັນ ຫຼື ຮຸ້ນບູລິມະທີ່ບໍ່ມີສິດຂາຍຄືນໄດ້.

(iii) ຊັບສິນການເງິນ ທີ່ໄດ້ຕີມູນຄ່າ ຕາມຕົ້ນທຶນ.

(iv) ໜີ້ສິນການເງິນ ທີ່ໄດ້ຕີມູນຄ່າ ຕາມຕົ້ນທຶນ.

(ຂ) ລວມຍອດລາຍຮັບດອກເບ້ຍ ແລະ ລວມຍອດລາຍຈ່າຍດອກເບ້ຍ ສຳລັບຊັບສິນການເງິນ ຫຼື ໜີ້ສິນການເງິນ ທີ່ໄດ້ຕີມູນຄ່າ ຕາມຕົ້ນທຶນ;

(ຄ) ຈຳນວນເງິນຂາດທຶນຈາກການສູນເສຍມູນຄ່າສຳລັບແຕ່ລະປະເພດຊັບສິນການເງິນ.

| ການສົມທຽບກັບ FRS ສຳລັບ ວຫຍ | |
|---|---|
| ໝວດ 11 | FRS ສຳລັບ ວນກ ຫ້າມນຳໃຊ້:<br>- ມູນຄ່າປັດຈຸບັນ ສຳລັບການຕີມູນຄ່າເບື້ອງຕົ້ນ ;<br>- ຕົ້ນທຶນຫັກທົດແທນ ແລະ ວິທີການຄິດໄລ່ດອກເບ້ຍຕົວຈິງ ສຳລັບການຕີມູນຄ່າຕາມຫຼັງ.<br>ວັກຕ່າງໆ ແລະ ສິ່ງອ້າງອີງ ກ່ຽວກັບມູນຄ່າປັດຈຸບັນ, ຕົ້ນທຶນຫັກທົດແທນ ແລະ ວິທີການຄິດໄລ່ດອກເບ້ຍຕົວຈິງ ຖືກຕັດອອກ. |
| 11.1<br>11.6<br>11.11 | ວິສາຫະກິດໃດໜຶ່ງ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວຫຍ ຢ່າງເຕັມສ່ວນ ຖ້າມີສັນຍາກ່ຽວກັບເຄື່ອງມືການເງິນ ແລະ ລາຍການເຄື່ອນໄຫວທີ່ສະຫຼັບຊັບຊ້ອນ (ເບິ່ງ FRS ສຳລັບ ວຫຍ – ໝວດ 12 *ປະເດັນຕ່າງໆ ທີ່ຕິດພັນກັບເຄື່ອງມືການເງິນອື່ນໆ*). ວັກເຫຼົ່ານີ້ ຖືກປັບປຸງ ຫຼື ຕັດອອກ. |
| 11.7 (c) | ໃນມາດຕະຖານ FRS ສຳລັບ ວນກ ນີ້, ຜູ້ເຊົ່າ ຕ້ອງຮັບຮູ້ລາຍການບັນຊີການຊຳລະຄ່າເຊົ່າ ພາຍໃຕ້ສັນຍາເຊົ່າການເງິນ ແລະ ສັນຍາເຊົ່າດຳເນີນງານ ເປັນລາຍຈ່າຍ (ເບິ່ງ ໝວດ 20 *ສັນຍາເຊົ່າ*). |
| 11.13 | ເວລາຮັບຮູ້ລາຍການບັນຊີໃນເບື້ອງຕົ້ນ ກ່ຽວກັບ ຊັບສິນການເງິນ ຫຼື ໜີ້ສິນການເງິນ, ວິສາຫະກິດໃດໜຶ່ງ ຕ້ອງຕີມູນຄ່າລາຍການດັ່ງກ່າວ ຕາມລາຄາລາຍການເຄື່ອນໄຫວ ແລະ ບໍ່ແມ່ນມູນຄ່າປັດຈຸບັນ ຂອງການຊຳລະໃນອະນາຄົດ. |
| 11.13 ຊັບສິນ ຕຢ.1 | ເງິນໃຫ້ກູ້ຢືມໄລຍະຍາວທີ່ປ່ອຍໃຫ້ວິສາຫະກິດໜຶ່ງອີກ, ໜີ້ຕ້ອງຮັບຖືກຮັບຮູ້ລາຍການບັນຊີ ຕາມຈຳນວນເງິນສິດຕ້ອງຮັບ ຈາກວິສາຫະກິດນັ້ນ. |
| 11.13 ຊັບສິນ ຕຢ.2<br>ຕຢ.3 | ໜີ້ຕ້ອງຮັບ ຖືກຮັບຮູ້ລາຍການບັນຊີ ຕາມລາຄາໃນໃບເກັບເງິນ. |
| 11.13 ໜີ້ສິນ ຕຢ.1 | ເງິນກູ້ໄລຍະຍາວ ທີ່ໄດ້ຮັບ ຈາກທະນາຄານ ຖືກຮັບຮູ້ລາຍການບັນຊີ ຕາມມູນຄ່າຂອງການທົດແທນຕົ້ນທຶນກູ້ຢືມ. |
| 11.13 ໜີ້ສິນ ຕຢ.2 | ໜີ້ຕ້ອງສົ່ງ ຖືກຮັບຮູ້ລາຍການບັນຊີ ຕາມລາຄາໃນໃບເກັບເງິນ. |
| 11.14 (ກ)<br>11.15-11.20<br>11.21<br>11.25<br>11.41 (ຂ) ແລະ (ຈ)<br>11.48(ກ) (iii) (iv) ແລະ (ຂ) | ເຄື່ອງມືການເງິນ ທີ່ຖືກຕ້ອງຕາມເງື່ອນໄຂ ຂອງວັກ 11.8 ຕ້ອງຕີມູນຄ່າ ເງິນລົງທຶນ ໃນຮຸ້ນບູລິມະສິດ ທີ່ປ່ຽນເປັນ ຮຸ້ນສາມັນບໍ່ໄດ້ ແລະ ບໍ່ມີສິດຂາຍຄືນໄດ້ ແລະ ໃນຮຸ້ນສາມັນ ທີ່ບໍ່ມີສິດຂາຍໄດ້ ທີ່ມີການຊື້-ຂາຍຕໍ່ສາທາລະນະຊົນ. ວັກເຫຼົ່ານີ້ ຖືກປັບປຸງ ຫຼື ຕັດອອກ. |
| 11.4<br>11.14 (c) (i)<br>11.27<br>11.28 – 11.29<br>11.30 - 11.32<br>11.43-11.44 | ເງິນລົງທຶນໃນຮຸ້ນບູລິມະສິດ ທີ່ປ່ຽນເປັນຮຸ້ນສາມັນບໍ່ໄດ້ ແລະ ບໍ່ມີສິດຂາຍຄືນໄດ້ ແລະ ໃນຮຸ້ນສາມັນ ທີ່ບໍ່ມີສິດຂາຍໄດ້ ຕ້ອງຖືກຕີມູນຄ່າ ຕາມມູນຄ່າຍຸຕິທຳ ຖ້າມີການຊື້-ຂາຍຕໍ່ສາທາລະນະຊົນ. ວັກເຫຼົ່ານີ້ ຖືກປັບປຸງ ຫຼື ຕັດອອກ. |
| 11.39 | ວນກ ບໍ່ມີໜີ້ສິນການເງິນໃດ ທີ່ຖືກຕີມູນຄ່າຕາມມູນຄ່າຍຸຕິທຳ ຜ່ານກຳໄລ ຫຼື ຂາດທຶນ. ວັກນີ້ ຖືກຕັດອອກ. |

## ໝວດ 12

## ປະເດັນຕ່າງໆ ທີ່ຕິດພັນກັບເຄື່ອງມືການເງິນອື່ນໆ

*ວິສາຫະກິດໃດໜຶ່ງ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວທຍ ຢ່າງເຕັມສ່ວນ ຖ້າມີສັນຍາ ທີ່ບໍ່ແມ່ນເຄື່ອງມືການເງິນ ແລະ ລາຍການເຄື່ອນໄຫວ ພື້ນຖານ (ເບິ່ງ FRS ສຳລັບ ວທຍ – ໝວດ 12 ປະເດັນຕ່າງໆ ທີ່ຕິດພັນກັບເຄື່ອງມືການເງິນອື່ນໆ).*

# ໝວດ 13

# ເຄື່ອງໃນສາງ

## ຂອບເຂດຂອງໝວດນີ້

13.1 ໝວດດັ່ງກ່າວ ສະເໜີບັນດາຫຼັກການການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າ**ເຄື່ອງໃນສາງ**. ເຄື່ອງໃນສາງ ແມ່ນ **ຊັບສິນ** :

(ກ) ທີ່ຮັກສາໄວ້ເພື່ອຂາຍໃນໃນການດຳເນີນທຸລະກິດປົກກະຕິ ;

(ຂ) ທີ່ພວມຜະລິດເພື່ອຂາຍ; ຫຼື

(ຄ) ໃນຮູບແບບວັດຖຸດິບ ຫຼື ວັດຖຸປະກອບທີ່ຕ້ອງໄດ້ຊົມໃຊ້ໃນຂະບວນການຜະລິດ ຫຼື ການສະໜອງການບໍລິການ.

13.2 ໝວດດັ່ງກ່າວນີ້ ນຳໃຊ້ສຳລັບເຄື່ອງໃນສາງທັງໝົດ, ເວັ້ນເສຍ :

(ກ) ວຽກທີ່ພວມດຳເນີນການ ຊຶ່ງກຳເນີດຈາກສັນຍາການກໍ່ສ້າງ, ລວມທັງສັນຍາທີ່ຕິດພັນໂດຍກົງກັບການໃຫ້ບໍລິການ (ເບິ່ງ ໝວດ 23 *ລາຍຮັບ*).

(ຂ) ເຄື່ອງມືການເງິນ (ເບິ່ງໝວດ 11 *ເຄື່ອງມືການເງິນພື້ນຖານ*).

(ຄ) **ຊັບສິນຊີວະພາບ** ທີ່ພົວພັນກັບກິດຈະກຳກະສິກຳ ແລະ **ຜະລິດຕະພັນກະສິກຳ**ໃນເວລາເກັບກ່ຽວ (ເບິ່ງໝວດ 34 *ກິດຈະກຳພິເສດ*).

13.3 ໝວດດັ່ງກ່າວນີ້ ບໍ່ນຳໃຊ້ສຳລັບການຕີມູນຄ່າເຄື່ອງໃນສາງ ທີ່ຮັກສາໄວ້ໂດຍ :

(ກ) ຜູ້ຜະລິດ ຜະລິດຕະພັນກະເສດ ແລະ ປ່າໄມ້, ຜະລິດຕະພັນກະສິກຳຫຼັງເກັບກ່ຽວ ແລະ ແຮ່ທາດ ແລະ ຜະລິດຕະພັນທີ່ກຳເນີດຈາກແຮ່ທາດ, ໃນຂອບເຂດທີ່ເຄື່ອງໃນສາງດັ່ງກ່າວ ຖືກຕີມູນຄ່າຕາມ**ມູນຄ່າຍຸຕິທຳ** ລົບຕົ້ນທຶນຂາຍ ຜ່ານກຳໄລ ຫຼື ຂາດທຶນ, ຫຼື

(ຂ) ນາຍໜ້າແລະຜູ້ຂາຍຍົກສິນຄ້າ, ຊຶ່ງຕີມູນຄ່າເຄື່ອງໃນສາງ ຕາມມູນຄ່າຍຸຕິທຳລົບຕົ້ນທຶນຂາຍ ຜ່ານກຳໄລ ຫຼື ຂາດທຶນ.

## ການຕີມູນຄ່າເຄື່ອງໃນສາງ

13.4 ວິສາຫະກິດຕ້ອງຕີມູນຄ່າເຄື່ອງໃນສາງ ດ້ວຍມູນຄ່າທີ່ຕ່ຳກ່ວາໝູ່ ລະຫ່ວາງຕົ້ນທຶນ ແລະ ລາຄາຂາຍຄາດຄະເນ ຫັກຕົ້ນທຶນໃນການຜະລິດສິນຄ້າໃຫ້ສຳເລັດຮູບ ແລະ ການຂາຍອອກ.

## ຕົ້ນທຶນເຄື່ອງໃນສາງ

13.5 ວິສາຫະກິດຕ້ອງເອົາລວມເຂົ້າໃນຕົ້ນທຶນເຄື່ອງໃນສາງ ທຸກລາຍການຕົ້ນທຶນຊື້, ຕົ້ນທຶນປຸງແຕ່ງ ແລະ ຕົ້ນທຶນທີ່ເກີດຂຶ້ນອື່ນໆເພື່ອເຮັດໃຫ້ເຄື່ອງໃນສາງຢູ່ໃນສະຖານທີ່ ແລະ ຢູ່ໃນສະພາບຂອງຕົນໃນປັດຈຸບັນ.

## ຕົ້ນທຶນຊື້

13.6 ຕົ້ນທຶນຊື້ເຄື່ອງໃນສາງ ປະກອບດ້ວຍລາຄາຊື້, ຄ່າພາສີ ແລະ ອາກອນອື່ນໆ (ທີ່ບໍ່ແມ່ນອາກອນທີ່ວິສາຫະກິດເກັບຄືນໄດ້ຕາມຫຼັງຈາກຂະແໜງການສ່ວຍສາອາກອນ), ພ້ອມທັງຄ່າຂົນສົ່ງ, ຄ່າແບກຫາບ ແລະ ຄ່າໃຊ້ຈ່າຍອື່ນໆທີ່ຕິດພັນໂດຍກົງກັບການຊື້ຜະລິດຕະພັນສຳເລັດຮູບ, ວັດຖຸດິບ ແລະ ຄ່າບໍລິການ. ສ່ວນຫຼຸດການຄ້າ, ສ່ວນຫຼຸດອື່ນໆ ແລະ ລາຍການອື່ນໆທີ່ຄ້າຍຄືກັນ ຖືກຫັກອອກ ເພື່ອຄິດໄລ່ຕົ້ນທຶນຊື້.

## ຕົ້ນທຶນປຸງແຕ່ງ

13.8 ຕົ້ນທຶນປຸງແຕ່ງເຄື່ອງໃນສາງປະກອບດ້ວຍຕົ້ນທຶນທີ່ຕິດພັນໂດຍກົງກັບຫົວໜ່ວຍການຜະລິດ ເຊັ່ນຄ່າແຮງງານທາງກົງ. ນອກນັ້ນ ຍັງມີການຈັດແບ່ງຍ່າງເປັນລະບົບ ຄ່າໃຊ້ຈ່າຍຄົງທີ່ ແລະ ຜັນແປ ເຂົ້າໃນການຜະລິດ ທີ່ເກີດຂຶ້ນໃນການປຸງແຕ່ງວັດຖຸດິບ ເປັນສິນຄ້າສຳເລັດຮູບ. ຄ່າໃຊ້ຈ່າຍທົ່ວໄປຄົງທີ່ໃນການຜະລິດ ແມ່ນຕົ້ນທຶນການຜະລິດທາງອ້ອມ ຊຶ່ງມີລັກສະນະຄົງຄ່າໂດຍທຽບຖານ ໂດຍບໍ່ຂຶ້ນກັບບໍລິມາດການຜະລິດ ເຊັ່ນຄ່າຫຼັ້ຍຫ້ຽນ ແລະ ຄ່າບຳລຸງຮັກສາສິ່ງປຸກສ້າງ ແລະ ອຸປະກອນ, ແລະ ຄ່າໃຊ້ຈ່າຍໃນການຄຸ້ມຄອງ ແລະ ບໍລິຫານໂຮງງານ. ຄ່າໃຊ້ຈ່າຍທົ່ວໄປຜັນແປໃນການຜະລິດ ແມ່ນຄ່າໃຊ້ຈ່າຍທາງອ້ອມໃນການຜະລິດ ຊຶ່ງຜັນແປໂດຍກົງ ຫຼື ເກືອບວ່າໂດຍກົງຕາມບໍລິມາດການຜະລິດ ເຊັ່ນວັດຖຸດິບທາງອ້ອມ ແລະ ຄ່າແຮງງານທາງອ້ອມ.

## ການຈັດແບ່ງຄ່າໃຊ້ຈ່າຍທົ່ວໄປໃນການຜະລິດ

13.9 ວິສາຫະກິດຕ້ອງຈັດແບ່ງຄ່າໃຊ້ຈ່າຍຄົງທີ່ໃນການຜະລິດ ເຂົ້າໃນຕົ້ນທຶນປຸງແຕ່ງໂດຍອີງໃສ່ກຳລັງການຜະລິດປົກກະຕິຂອງສິ່ງຕິດຕັ້ງການຜະລິດ. ກຳລັງການຜະລິດປົກກະຕິ ແມ່ນການຜະລິດສະເລ່ຍຊຶ່ງຄາດວ່າຈະບັນລຸໃນຮອບເວລາ ຫຼື ລະດູການຈຳນວນໜຶ່ງ ພາຍໃຕ້ສະພາບການປົກກະຕິ, ໂດຍຄຳນຶງເຖິງການສູນເສຍກຳລັງການຜະລິດ ທີ່ເກີດຈາກການບຳລຸງຮັກສາຕາມແຜນການ. ອາດຈະນຳໃຊ້ລະດັບການຜະລິດຕົວຈິງ ຖ້າຫາກໃກ້ຄຽງກັບກຳລັງການຜະລິດປົກກະຕິ. ຈຳນວນເງິນຄ່າໃຊ້ຈ່າຍຄົງທີ່ໃນການຜະລິດ ທີ່ຈັດແບ່ງເຂົ້າໃນແຕ່ລະຫົວໜ່ວຍການຜະລິດ ບໍ່ໄດ້ເພີ້ມຂຶ້ນ ເນື່ອງຈາກການຫຼຸດລົງຂອງການຜະລິດ ຫຼື ເຄື່ອງຈັກຜະລິດທີ່ບໍ່ໄດ້ນຳໃຊ້. ຄ່າໃຊ້ຈ່າຍທົ່ວໄປທີ່ບໍ່ໄດ້ຈັດແບ່ງ ຖືກຮັບຮູ້ລາຍການບັນຊີເປັນລາຍຈ່າຍໃນຮອບເວລາທີ່ໄດ້ມີການເກີດຂຶ້ນ. ໃນຮອບເວລາການຜະລິດທີ່ສູງຜິດປົກກະຕິ, ຈຳນວນເງິນຄ່າໃຊ້ຈ່າຍຄົງທີ່ທົ່ວໄປ ທີ່ຈັດແບ່ງເຂົ້າໃນແຕ່ລະຫົວໜ່ວຍການຜະລິດ ຫຼຸດລົງເພື່ອເຮັດແນວໃດ ບໍ່ໃຫ້ມີການຕີມູນຄ່າເຄື່ອງໃນສາງສູງກ່ວາຕົ້ນທຶນ. ຄ່າໃຊ້ຈ່າຍທົ່ວໄປຜັນແປໃນການຜະລິດ ຖືກຈັດສັນເຂົ້າໃນແຕ່ລະຫົວໜ່ວຍການຜະລິດ ບົນພື້ນຖານການນຳໃຊ້ຕົວຈິງ ກ່ຽວກັບສິ່ງຕິດຕັ້ງການຜະລິດ.

## ຜະລິດຕະພັນຮ່ວມ ແລະ ຜະລິດຕະພັນສຳຮອງ

13.10 ຂະບວນການຜະລິດໃດໜຶ່ງ ສາມາດເຮັດໃຫ້ມີການຜະລິດພ້ອມໆກັນ ຫຼາຍກ່ວາໜຶ່ງຜະລິດຕະພັນ. ນັ້ນແມ່ນກໍລະນີ ເມື່ອມີການຜະລິດຜະລິດຕະພັນຮ່ວມ ຫຼື ຖ້າຫາກມີຜະລິດຕະພັນຕົ້ນຕໍ ແລະຜະລິດຕະພັນສຳຮອງ. ຖ້າວ່າບໍ່ສາມາດຈຳແນກຕົ້ນທຶນຂອງວັດຖຸດິບ ຫຼື ວັດຖຸພວມປຸງແຕ່ງຂອງແຕ່ລະຜະລິດຕະພັນ ອອກຕ່າງຫາກ, ວິສາຫະກິດຕ້ອງຈັດສັນເຂົ້າ ໃນລະຫ່ວາງຜະລິດຕະພັນຕ່າງໆບົນພື້ນຖານທີ່ສົມເຫດສົມຜົນ ແລະກົມກຽວກັນ. ຕົວຢ່າງ, ການຈັດສັນດັ່ງກ່າວສາມາດດຳເນີນບົນພື້ນຖານມູນຄ່າຂາຍໂດຍທຽບຖານຂອງແຕ່ລະຜະລິດຕະພັນ, ຫຼືວ່າໃນຂັ້ນຕອນຂະບວນການຜະລິດ ຊຶ່ງສາມາດຈຳແນກຜະລິດຕະພັນເປັນແຕ່ລະລາຍໄດ້ ຫຼື ໃນຂັ້ນຕອນການຜະລິດຂອດສຳເລັດຮູບ. ຕາມຄຸນລັກສະນະຂອງມັນ, ຜະລິດຕະພັນສຳຮອງສ່ວນຫຼາຍຈະມີຄວາມສຳຄັນທຽບຖານໜ້ອຍ. ຖ້າຫາກເປັນຄືແນວນັ້ນ, ວິສາຫະກິດຕ້ອງຕີມູນຄ່າຕາມລາຄາຂາຍ ຫັກຕົ້ນທຶນໃນການຜະລິດສິນຄ້າໃຫ້ສຳເລັດຮູບ ແລະ ໃນການຂາຍອອກ ແລະ ຫັກຈຳນວນເງິນດັ່ງກ່າວ ອອກຈາກຕົ້ນທຶນຂອງຜະລິດຕະພັນຕົ້ນຕໍ. ຜົນອອກມາຄື **ມູນຄ່າໃນບັນຊີ**ຂອງຜະລິດຕະພັນຕົ້ນຕໍ ຈະບໍ່ແຕກຕ່າງກັນຫຼາຍກັບຕົ້ນທຶນຂອງຜະລິດຕະພັນຕົ້ນຕໍ.

## ຕົ້ນທຶນອື່ນໆທີ່ລວມໃນເຄື່ອງໃນສາງ

13.11 ວິສາຫະກິດຕ້ອງເອົາຄ່າໃຊ້ຈ່າຍອື່ນໆເຂົ້າໃນຕົ້ນທຶນເຄື່ອງໃນສາງ ພຽງແຕ່ໃເມື່ອຄ່າໃຊ້ຈ່າຍດັ່ງກ່າວ ເຮັດໃຫ້ເຄື່ອງໃນສາງຢູ່ໃນສະຖານທີ່ ແລະ ໃນສະພາບຂອງຕົນໃນປັດຈຸບັນເທົ່ານັ້ນ.

## ຕົ້ນທຶນທີ່ບໍ່ລວມເຂົ້າເຄື່ອງໃນສາງ

13.13 ຕົວຢ່າງ ກ່ຽວກັບຕົ້ນທຶນທີ່ບໍ່ລວມເຂົ້າໃນຕົ້ນທຶນເຄື່ອງໃນສາງ ແລະທີ່ໄດ້ຖືກຮັບຮູ້ລາຍການບັນຊີເປັນລາຍຈ່າຍໃນປີການບັນຊີທີ່ໄດ້ເກີດມີຕົ້ນທຶນດັ່ງກ່າວ ມີຄື:

(ກ) ມູນຄ່າທີ່ຜິດປົກກະຕິຂອງເສດຜະລິດຕະພັນ, ຄ່າແຮງງານ ຫຼື ຄ່າໃຊ້ຈ່າຍອື່ນໆໃນການຜະລິດ.

(ຂ) ຄ່າເກັບມ້ຽນເຄື່ອງໃນສາງ, ເວັ້ນເສຍແຕ່ຄ່າໃຊ້ຈ່າຍດັ່ງກ່າວຫາກຈຳເປັນສຳລັບຂະບວນການຜະລິດ ກ່ອນຈະເຂົ້າສູ່ຂັ້ນຕອນການຜະລິດຄັ້ງຕໍ່ໄປ.

(ຄ) ຄ່າໃຊ້ຈ່າຍທົ່ວໄປໃນການບໍລິຫານ ທີ່ບໍ່ໄດ້ປະກອບເຮັດໃຫ້ເຄື່ອງໃນສາງ ຢູ່ໃນສະຖານທີ່ ແລະ ສະພາບຂອງຕົນໃນປັດຈຸບັນ.

(ງ) ຄ່າໃຊ້ຈ່າຍໃນການຂາຍ.

## ຕົ້ນທຶນເຄື່ອງໃນສາງຂອງຜູ້ໃຫ້ບໍລິການ

13.14 ໃນກໍລະນີທີ່ວ່າ ຜູ້ໃຫ້ບໍລິການ ມີເຄື່ອງໃນສາງ, ຜູ້ໃຫ້ບໍລິການດັ່ງກ່າວ ມີການຕີມູນຄ່າເຄື່ອງໃນສາງນັ້ນ ຕາມຕົ້ນທຶນການຜະລິດ. ຕົ້ນທຶນດັ່ງກ່າວ ໂດຍຕົ້ນຕໍປະກອບດ້ວຍຄ່າແຮງງານ ແລະ ຄ່າໃຊ້ຈ່າຍອື່ນໆໃຫ້ພະນັກງານທີ່ກ່ຽວຂ້ອງໂດຍກົງກັບການໃຫ້ບໍລິການ, ລວມທັງພະນັກງານຄວບຄຸມດູແລ, ແລະ ຄ່າໃຊ້ຈ່າຍທົ່ວໄປ ທີ່ຕິດພັນ. ຄ່າແຮງງານ ແລະ ຄ່າໃຊ້ຈ່າຍອື່ນໆທີ່ພົວພັນກັບການຂາຍ ແລະ ພະນັກງານບໍລິຫານທົ່ວໄປແມ່ນບໍ່ເອົາລວມເຂົ້າ, ແຕ່ຫາກຖືກຮັບຮູ້ລາຍການບັນຊີເປັນລາຍຈ່າຍໃນປີທີ່ເກີດຂຶ້ນ. ຕົ້ນທຶນເຄື່ອງໃນສາງຂອງຜູ້ໃຫ້ບໍລິການບໍ່ມີສ່ວນຜິດດ່ຽງກຳໄລ ຫຼື ຄ່າໃຊ້ຈ່າຍທົ່ວໄປທີ່ບໍ່ຕິດພັນ ຊຶ່ງສ່ວນຫຼາຍຈະຖືກລວມເຂົ້າໃນລາຄາໃນໃບເກັບເງິນທີ່ຜູ້ໃຫ້ບໍລິການອອກໃຫ້.

## ຕົ້ນທຶນຜະລິດຕະພັນກະສິກຳທີ່ເກັບກ່ຽວຈາກຊັບສິນຊີວະພາບ

13.15 ໝວດ 34 ກຳນົດວ່າເຄື່ອງໃນສາງ ທີ່ປະກອບດ້ວຍຜະລິດຕະພັນກະສິກຳ ຊຶ່ງວິສາຫະກິດໄດ້ເກັບກ່ຽວຈາກ**ຊັບສິນຊີວະພາບ** ຕ້ອງຖືກຕີມູນຄ່າ ໃນເວລາມີ**ການຮັບຮູ້ລາຍການບັນຊີ**ເບື້ອງຕົ້ນ ຕາມມູນຄ່າຍຸຕິທຳ ຫັກຄ່າໃຊ້ຈ່າຍໃນການຂາຍໃນຈຸດເກັບກ່ຽວ ທີ່ໄດ້ຄາດຄະເນໄວ້. ມູນຄ່າດັ່ງກ່າວກາຍເປັນຕົ້ນທຶນເຄື່ອງໃນສາງໃນມື້ປະຕິບັດໝວດນີ້.

## ເຕັກນິກການຕີມູນຄ່າຕົ້ນທຶນ, ເຊັ່ນວິທີການຄິດໄລ່ຕົ້ນທຶນມາດຕະຖານ, ວິທີການຄິດໄລ່ລາຄາຂາຍຍ່ອຍ ແລະ ລາຄາຊື້ຫຼ້າສຸດ

13.16 ວິສາຫະກິດສາມາດນຳໃຊ້ເຕັກນິກ ເຊັ່ນວິທີການຄິດໄລ່ຕົ້ນທຶນມາດຕະຖານ, ວິທີການລາຄາຂາຍຍ່ອຍ ຫຼື ລາຄາຊື້ສິນຄ້າຫຼ້າສຸດເພື່ອຕີມູນຄ່າຕົ້ນທຶນເຄື່ອງໃນສາງ ຖ້າວ່າວິທີການດັ່ງກ່າວໃຫ້ຜົນໄດ້ຮັບທີ່ໃກ້ຄຽງກັບຕົ້ນທຶນ. ຕົ້ນທຶນມາດຕະຖານຄຳນຶງເຖິງລະດັບການນຳໃຊ້ປົກກະຕິ ກ່ຽວກັບວັດຖຸດິບ ແລະ ວັດຖຸປະກອບ, ແຮງງານ, ປະສິດທິພາບ ແລະ ການນຳໃຊ້ກຳລັງການຜະລິດ. ໄດ້ມີການກວດກາຄືນວິທີການເຫຼົ່ານີ້ຢ່າງເປັນປົກກະຕິຖ້າຈຳເປັນ ແລະ ດັດແກ້ຕາມເງື່ອນໄຂປັດຈຸບັນ. ວິທີການຂາຍຍ່ອຍ ຕີມູນຄ່າຕົ້ນທຶນເຄື່ອງໃນສາງໂດຍຫັກມູນຄ່າຂາຍອອກຂອງເຄື່ອງໃນສາງ ຕາມອັດຕາສ່ວນຜິດດ່ຽງຕົ້ນທຶນທີ່ແທດເໝາະ.

## ສູດຄິດໄລ່ຕົ້ນທຶນ

13.17 ວິສາຫະກິດຕ້ອງຕີມູນຄ່າຕົ້ນທຶນຂອງລາຍການເຄື່ອງໃນສາງ ຊຶ່ງໂດຍປົກກະຕິແລກປ່ຽນກັນບໍ່ໄດ້ ແລະສິນຄ້າ ຫຼື ການບໍລິການ ໄດ້ຜະລິດ ແລະ ຖືກແຍກອອກສຳລັບໂຄງການສະເພາະ ໂດຍໃສ່ຊື່ສະເພາະສຳລັບຕົ້ນທຶນແຕ່ລະລາຍ.

13.18 ວິສາຫະກິດຕ້ອງຕີມູນຄ່າຕົ້ນທຶນເຄື່ອງໃນສາງ, ທີ່ນອກຈາກສິ່ງທີ່ໄດ້ຍົກຂຶ້ນໃນວັກ 13.17, ໂດຍນຳໃຊ້ສູດຄິດໄລ່ ເຂົ້າກ່ອນ, ອອກກ່ອນ (FIFO) ຫຼື ສູດຄິດໄລ່ຕົ້ນທຶນສະເລ່ຍຕາມນ້ຳໜັກ. ວິສາຫະກິດຕ້ອງນຳໃຊ້ສູດຄິດໄລ່ຕົ້ນທຶນແບບດຽວກັນ ສຳລັບເຄື່ອງໃນສາງທັງໝົດ ທີ່ມີລັກສະນະເນື້ອໃນ ແລະ ການນຳໃຊ້ຄ້າຍຄືກັນສຳລັບວິສາຫະກິດ. ສຳລັບເຄື່ອງໃນສາງທີ່ມີລັກສະນະເນື້ອໃນ ຫຼື ການນຳໃຊ້ທີ່ແຕກຕ່າງກັນ, ການນຳໃຊ້ສູດຄິດໄລ່ຕົ້ນທຶນເພື່ອຄິດໄລ່ຕົ້ນທຶນ ອາດຖືກຢັ້ງຢືນໄດ້. ມາດຕະຖານສະບັບນີ້ ບໍ່ອະນຸຍາດໃຫ້ນຳໃຊ້ວິທີການເຂົ້າລຸນ-ອອກກ່ອນ (LIFO).

## ການສູນເສຍມູນຄ່າເຄື່ອງໃນສາງ

13.19 ວັກ 27.2 ຫາ 27.4 ກຳນົດໃຫ້ວິສາຫະກິດ ປະເມີນຜົນ ໃນແຕ່ລະທ້າຍ**ຮອບເວລາລາຍງານ** ວ່າເຄື່ອງໃນສາງໄດ້ສູນເສຍມູນຄ່າຫຼືບໍ່, ເຊັ່ນມູນຄ່າໃນບັນຊີບໍ່ສາມາດຖືກເກັບກູ້ຄືນໄດ້ໝົດ (ເນື່ອງຈາກຄ່າເສຍຫາຍ, ການພົ້ນສະໄໝ ຫຼື ລາຄາຂາຍ

ຫຼຸດລົງ). ຖ້າວ່າລາຍການ (ຫຼື ກຸ່ມລາຍການ) ໃດໜຶ່ງຂອງເຄື່ອງໃນສາງຫາກສູນເສຍມູນຄ່າ, ວັກດັ່ງກ່າວເຫຼົ່ານີ້ ກຳນົດໃຫ້ວິສາຫະກິດຕີມູນຄ່າເຄື່ອງໃນສາງຕາມລາຄາຂາຍ ຫັກຕົ້ນທຶນໃນການຜະລິດສິນຄ້າໃຫ້ສຳເລັດຮູບ ແລະ ໃນການຂາຍອອກ ແລະ ຮັບຮູ້ລາຍການບັນຊີ**ຂາດທຶນຈາກການສູນເສຍມູນຄ່າ*.* ນອກນັ້ນ, ວັກດັ່ງກ່າວເຫຼົ່ານີ້ ຍັງກຳນົດໃນບາງກໍລະນີ ໃຫ້ປີ້ນກັບລາຍການ ການສູນເສຍມູນຄ່າຜ່ານມາ.

## ການຮັບຮູ້ລາຍການບັນຊີເປັນລາຍຈ່າຍ

13.20 ເວລາຂາຍເຄື່ອງໃນສາງອອກ, ວິສາຫະກິດຕ້ອງຮັບຮູ້ມູນຄ່າໃນບັນຊີຂອງເຄື່ອງໃນສາງ ເປັນລາຍຈ່າຍໃນປີ ທີ່ໄດ້ຮັບຮູ້ລາຍການບັນຊີ ລາຍຮັບທີ່ກ່ຽວຂ້ອງ.

13.21 ເຄື່ອງໃນສາງບາງລາຍ ສາມາດຈັດສັນເຂົ້າໃນບັນຊີຊັບສິນອື່ນໆ ເຊັ່ນ ເຄື່ອງໃນສາງທີ່ໄດ້ນຳໃຊ້ເປັນອົງປະກອບຂອງ ຊັບສົມບັດຄົງທີ່ມີຕົວຕົນ ທີ່ວິສາຫະກິດໄດ້ຜະລິດເອົາເອງ. ເຄື່ອງໃນສາງທີ່ໄດ້ຈັດສັນເຂົ້າເປັນອົງປະກອບຊັບສິນຕາມແບບວິທີການດັ່ງກ່າວນີ້ ຈະຖືກລົງບັນຊີຕາມຫຼັງ ຕາມໝວດນີ້ ຂອງມາດຕະຖານສະບັບນີ້ ທີ່ກ່ຽວຂ້ອງກັບປະເພດຊັບສິນດັ່ງກ່າວ.

## ການເປີດເຜີຍຂໍ້ມູນຂ່າວສານ

13.22 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ :

(ກ) **ນະໂຍບາຍການບັນຊີ**ທີ່ໄດ້ຮັບຮອງນຳໃຊ້ເພື່ອຕີມູນຄ່າເຄື່ອງໃນສາງ, ລວມທັງສູດຄິດໄລ່ຕົ້ນທຶນທີ່ໄດ້ນຳໃຊ້.

(ຂ) ລວມຍອດມູນຄ່າໃນບັນຊີຂອງເຄື່ອງໃນສາງ ແລະ ມູນຄ່າໃນບັນຊີ ຕາມປະເພດທີ່ແທດເໝາະສຳລັບວິສາຫະກິດ.

(ຄ) ມູນຄ່າເຄື່ອງໃນສາງທີ່ໄດ້ຮັບຮູ້ລາຍການບັນຊີເປັນລາຍຈ່າຍໃນປີ.

(ງ) ຂາດທຶນຈາກການສູນເສຍມູນຄ່າທີ່ໄດ້ຮັບຮູ້ລາຍການບັນຊີ ຫຼື ປີ້ນກັບລາຍການ ໃນກຳໄລ ຫຼື ຂາດທຶນ ຕາມຂໍ້ກຳນົດໃນໝວດ 27.

(ຈ) ລວມຍອດມູນຄ່າໃນບັນຊີຂອງເຄື່ອງໃນສາງທີ່ໄດ້ຊວດຈຳເປັນຫຼັກຊັບຄ້ຳປະກັນໜີ້ສິນ.

| ການສົມທຽບກັບ FRS ສຳລັບ ວຫຍ | |
|---|---|
| 13.2 (ຂ)<br>13.12 | ວິສາຫະກິດໃດໜຶ່ງ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວຫຍ ຢ່າງເຕັມສ່ວນ ຖ້າມີສັນຍາ ທີ່ບໍ່ແມ່ນເຄື່ອງມືການເງິນ ແລະ ລາຍການເຄື່ອນໄຫວພື້ນຖານ.<br>ວັກ 13.2 (ຂ) ຖືກປັບປຸງ ແລະ ວັກ 13.12 ຖືກຕັດອອກ. |
| 13.7 | ມາດຕະຖານສະບັບນີ້ ຫ້າມໃຊ້ມູນຄ່າປັດຈຸບັນ ສຳລັບການຕີມູນຄ່າໃນເບື້ອງຕົ້ນ. ວັກນີ້ ຖືກຕັດອອກ. |

# ໝວດ 14

# ເງິນລົງທຶນໃນວິສາຫະກິດຂາຮຸ້ນ

## ຂອບເຂດຂອງໝວດນີ້

14.1 ໝວດດັ່ງກ່າວ ກ່ຽວຂ້ອງກັບການລົງບັນຊີຂອງ**ວິສາຫະກິດຂາຮຸ້ນ** ແລະ ໃນ**ເອກະສານລາຍງານການເງິນສະເພາະກິດຈະການ** ຂອງຜູ້ລົງທຶນ ທີ່ບໍ່ແມ່ນ**ບໍລິສັດແມ່** ແຕ່ຊຶ່ງມີການລົງທຶນ ໃນໜຶ່ງ ຫຼື ຫຼາຍວິສາຫະກິດຂາຮຸ້ນ.

## ຄຳນິຍາມ ກ່ຽວກັບວິສາຫະກິດຂາຮຸ້ນ

14.2 ວິສາຫະກິດຂາຮຸ້ນ ແມ່ນວິສາຫະກິດໜຶ່ງ ຊຶ່ງໄດ້ຮັບອິດທິພົນທີ່ສຳຄັນຈາກຜູ້ລົງທຶນ, ແຕ່ຫາກບໍ່ເປັນ**ບໍລິສັດໃນກຸ່ມ**, ທັງບໍ່ມີການລົງທຶນໃນ**ວິສາຫະກິດປະສົມ**ໃດໜຶ່ງ.

14.3 ອິດທິພົນທີ່ສຳຄັນ ແມ່ນອຳນາດໃນການເຂົ້າຮ່ວມການຕັດສິນບັນຫາທາງດ້ານນະໂຍບາຍການເງິນ ແລະ ການທຸລະກິດຂອງວິສາຫະກິດຂາຮຸ້ນ, ແຕ່ຫາກບໍ່ແມ່ນ**ການຄວບຄຸມ** ຫຼື **ການຄວບຄຸມຮ່ວມກັນ** ຕໍ່ນະໂຍບາຍດັ່ງກ່າວ.

ກ) ຖ້າວ່າຜູ້ຜູ້ລົງທຶນ, ບໍ່ວ່າໂດຍທາງກົງ ຫຼື ໂດຍທາງອ້ອມ ມີ 20% ສິດລົງຄະແນນສຽງຂອງວິສາຫະກິດຂາຮຸ້ນ ຫຼື ຫຼາຍກ່ວານັ້ນ, ໃຫ້ສັນນິຖານວ່າຜູ້ລົງທຶນມີອິດທິພົນຫຼາຍ ເວັ້ນເສຍແຕ່ຈະພິສູດໄດ້ຢ່າງຈະແจ້ງວ່າບໍ່ແມ່ນກໍລະນີຄືແນວນັ້ນ.

(ຂ) ກົງກັນຂ້າມ, ຖ້າວ່າຜູ້ລົງທຶນ, ບໍ່ວ່າໂດຍທາງກົງ ຫຼືໂດຍທາງອ້ອມ ມີໜ້ອຍກ່ວາ 20 % ຂອງສິດລົງຄະແນນສຽງໃນວິສາຫະກິດຂາຮຸ້ນ, ໃຫ້ສັນນິຖານວ່າຜູ້ຜູ້ລົງທຶນບໍ່ມີອິດທິພົນຫຼາຍ, ເວັ້ນເສຍແຕ່ຈະພິສູດໄດ້ຢ່າງຈະແจ້ງວ່າອິດທິພົນດັ່ງກ່າວ ມີຈິງແທ້.

(ຄ) ການທີ່ຜູ້ລົງທຶນອື່ນໃດໜຶ່ງ ມີເງິນລົງທຶນຫຼາຍ ຫຼື ໂດຍສ່ວນໃຫ່ຍ ບໍ່ໄດ້ໝາຍຄວາມວ່າຜູ້ລົງທຶນຜູ້ນັ້ນ ສາມາດມີອິດທິພົນທີ່ສຳຄັນແຕ່ປະການໃດ.

## ການຕີມູນຄ່າ

14.4 ຜູ້ລົງທຶນຕ້ອງລົງບັນຊີເງິນລົງທຶນທັງໝົດຂອງຕົນໃນວິສາຫະກິດຂາຮຸ້ນ ໂດຍນຳໃຊ້ວິທີຕົ້ນທຶນ.

14.5 ຜູ້ລົງທຶນຕ້ອງຕີມູນຄ່າເງິນລົງທຶນຂອງຕົນເອງໃນວິສາຫະກິດຂາຮຸ້ນ ຕາມຕົ້ນທຶນ **ຫັກຂາດທຶນຈາກການສູນເສຍມູນຄ່າ**ສະສົມທີ່ໄດ້ຮັບຮູ້ລາຍການບັນຊີ ຕາມໝວດ 27 *ການສູນເສຍມູນຄ່າຂອງຊັບສິນ*.

14.6 ຜູ້ລົງທຶນຕ້ອງຮັບຮູ້ລາຍການບັນຊີເງິນປັນຜົນ ແລະ ເງິນແจກຢາຍອື່ນໆທີ່ໄດ້ຮັບຈາກການລົງທຶນ ເປັນລາຍຮັບ, ໂດຍບໍ່ໄດ້ຄຳນຶງວ່າເງິນແจກຢາຍມາຈາກກຳໄລສະສົມຂອງວິສາຫະກິດຂາຮຸ້ນ ທີ່ເກີດຂຶ້ນກ່ອນ ຫຼື ພາຍຫຼັງມີຊື້ກິດຈະການ ຫຼືບໍ່.

## ການສະເໜີເອກະສານລາຍງານການເງິນ

14.11 ຜູ້ລົງທຶນຕ້ອງຈັດປະເພດເງິນລົງທຶນໃນວິສາຫະກິດຂາຮຸ້ນ ເປັນຊັບສິນບໍ່ໝຸນວຽນ.

## ການເປີດເຜີຍຂໍ້ມູນຂ່າວສານ

14.12 ຜູ້ລົງທຶນໃນວິສາຫະກິດຂາຮຸ້ນຕ້ອງເປີດເຜີຍຂໍ້ມູນຂ່າວສານຂ້າງລຸ່ມນີ້ :

(ກ) **ນະໂຍບາຍການບັນຊີ** ສຳລັບເງິນລົງທຶນຂອງວິສາຫະກິດຂາຮຸ້ນ ;

(ຂ) **ມູນຄ່າໃນບັນຊີ** ຂອງເງິນລົງທຶນໃນວິສາຫະກິດຂາຮຸ້ນ (ເບິ່ງວັກ 4.2(ຕ)).

14.13 ຜູ້ລົງທຶນຕ້ອງເປີດເຜີຍຈຳນວນເງິນປັນຜົນ ແລະ ເງິນແจກຢາຍອື່ນໆ ທີ່ໄດ້ຮັບຮູ້ລາຍການບັນຊີເປັນລາຍຮັບ.

| **ການສົມທຽບກັບ FRS ສຳລັບ ວທຍ** | |
|---|---|
| ໝວດ 14 | ໝວດ 9 *ເອກະສານລາຍງານການເງິນລວມກິດຈະການ* ແລະ *ເອກະສານລາຍງານການເງິນສະເພາະກິດຈະການ* ບໍ່ຖືກນຳໃຊ້ກັບ ວນກ. ວິສາຫະກິດທີ່ບໍ່ຮັບໃຊ້ເງິນປະໂຫຍດສາທາລະນະ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນ ວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວທຍ ຢ່າງເຕັມສ່ວນ. ໝວດ 14 ນຳໃຊ້ ກັບການບັນຊີສຳລັບເງິນລົງທຶນໃນວິສາຫະກິດຂາຮຸ້ນ ໂດຍວິສາຫະກິດ ທີ່ສ້າງເອກະສານ ລາຍງານການເງິນສະເພາະກິດຈະການ ຕາມມາດຕະຖານ FRS ສຳລັບ ວນກ. |
| 14.3 (ກ) ແລະ (ຂ) | ວິສາຫະກິດທີ່ບໍ່ຮັບໃຊ້ເງິນປະໂຫຍດສາທາລະນະ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນ ວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວທຍ ຢ່າງເຕັມສ່ວນ. |
| 14.4<br>14.7<br>14.9 – 14.10<br>14.12 (ຄ)<br>14.13<br>14.15 | ວນກ ຕ້ອງນຳໃຊ້ວິທີຕົ້ນທຶນ ເທົ່ານັ້ນ ສຳລັບເງິນລົງທຶນໃນວິສາຫະກິດຂາຮຸ້ນ. ວັກເຫຼົ່ານີ້ ຖືກປັບປຸງ ຫຼື ຕັດອອກ. |
| 14.4 (ຂ)<br>14.8<br>14.12 (c)<br>14.14 | ວິທີການຕີມູນຄ່າທຽບເທົ່າ ບໍ່ຖືກນຳໃຊ້. ວັກເຫຼົ່ານີ້ ຖືກຕັດອອກ. |

# ໝວດ 15

# ເງິນລົງທຶນໃນວິສາຫະກິດປະສົມ

## ຂອບເຂດຂອງໝວດນີ້

15.1 ໝວດດັ່ງກ່າວນີ້ ກ່ຽວຂ້ອງກັບການບັນຊີຂອງ**ວິສາຫະກິດປະສົມ**. ໝວດນີ້ ນຳໃຊ້ເພື່ອການບັນຊີ ກ່ຽວກັບ**ກິດຈະການທີ່ຄວບຄຸມຮ່ວມກັນ, ຊັບສິນທີ່ຄວບຄຸມຮ່ວມກັນ** ແລະ ເງິນລົງທຶນໃນ**ວິສາຫະກິດທີ່ຄວບຄຸມຮ່ວມກັນ*.

## ຄຳນິຍາມ ກ່ຽວກັບ ວິສາຫະກິດປະສົມ

15.2 **ການຄວບຄຸມຮ່ວມກັນ** ແມ່ນການມີສ່ວນຮ່ວມໃນ**ຄວບຄຸມ**ກິດຈະການເສດຖະກິດໃດໜຶ່ງ ຕາມສັນຍາທີ່ໄດ້ຕົກລົງກັນໄວ້ ແລະ ມີໄດ້ ກໍຕໍ່ເມື່ອການຕັດສິນບັນຫາດ້ານຍຸດທະສາດການເງິນ ແລະ ທຸລະກິດ ທີ່ກ່ຽວຂ້ອງກັບກິດຈະກຳ ຕ້ອງການ ການຕົກລົງເຫັນດີຢ່າງເປັນເອກະສັນຂອງບັນດາຝ່າຍທີ່ມີສ່ວນຮ່ວມໃນການຄວບຄຸມຮ່ວມກັນ (ຜູ້ຮ່ວມປະກອບການ).

15.3 ວິສາຫະກິດປະສົມ ແມ່ນຂໍ້ຕົກລົງໃນສັນຍາຊຶ່ງ ສອງ ຫຼື ຫຼາຍຝ່າຍ ຕົກລົງດຳເນີນກິດຈະກຳເສດຖະກິດພາຍໃຕ້ການຄວບຄຸມຮ່ວມກັນ. ວິສາຫະກິດປະສົມ ສາມາດມີຮູບແບບຂອງກິດຈະການທີ່ຄວບຄຸມຮ່ວມກັນ, ຊັບສິນທີ່ຄວບຄຸມຮ່ວມກັນ ຫຼື ວິສາຫະກິດທີ່ຄວບຄຸມຮ່ວມກັນ.

## ກິດຈະການທີ່ຄວບຄຸມຮ່ວມກັນ

15.4 ກິດຈະການຂອງບາງວິສາຫະກິດປະສົມ ເຮັດໃຫ້ມີການນຳໃຊ້ຊັບສິນ ແລະ ແຫຼ່ງຊັບພະຍາກອນອື່ນໆຂອງຜູ້ຮ່ວມປະກອບການ, ແຕ່ຫາກບໍ່ແມ່ນການສ້າງຕັ້ງບໍລິສັດມະຫາຊົນ, ບໍລິສັດຮຸ້ນສ່ວນ ຫຼື ວິສາຫະກິດອື່ນ, ຫຼື ມີໂຄງປະກອບດ້ານການເງິນທີ່ແຍກອອກຕ່າງຫາກຈາກຜູ້ຮ່ວມປະກອບການເອງ. ຜູ້ຮ່ວມປະກອບການແຕ່ລະຄົນ ນຳໃຊ້ຊັບສົມບັດຄົງທີ່ມີຕົວຕົນ ແລະ ເຄື່ອງໃນສາງຂອງຕົນເອງ. ນອກນັ້ນ ຍັງຮັບຜິດຊອບລາຍຈ່າຍ ແລະ ໜີ້ສິນຂອງຕົນເອງ ແລະ ແກ້ໄຂການປະກອບທຶນເອົາເອງ ຊຶ່ງສະແດງເຖິງພັນທະສະເພາະຂອງຕົນເອງ. ກິດຈະກຳຂອງວິສາຫະກິດປະສົມ ອາດດຳເນີນໂດຍພະນັກງານຂອງຜູ້ຮ່ວມປະກອບການຄຽງຄູ່ກັບກິດຈະກຳທີ່ຄ້າຍຄືກັນຂອງຜູ້ຮ່ວມປະກອບການ. ໂດຍທົ່ວໄປ, ສັນຍາຂອງວິສາຫະກິດປະສົມ ຍັງກຳນົດແບບວິທີການແບ່ງປັນ ລະຫວ່າງ ບັນດາຜູ້ຮ່ວມປະກອບການ ລາຍຮັບທີ່ໄດ້ຈາກການຂາຍຜະລິດຕະພັນຮ່ວມກັນແລະ ລາຍຈ່າຍທັງໝົດທີ່ໄດ້ເກີດຂຶ້ນຮ່ວມກັນ.

15.5 ກ່ຽວກັບເງິນລົງທຶນໃນກິດຈະການທີ່ຄວບຄຸມຮ່ວມກັນ, ຜູ້ຮ່ວມປະກອບການຕ້ອງຮັບຮູ້ລາຍການບັນຊີໃນເອກະສານລາຍງານການເງິນຂອງຕົນເອງ :

(ກ) ຊັບສິນທີ່ຜູ້ຮ່ວມປະກອບການມີການຄວບຄຸມ ແລະ ໜີ້ສິນທີ່ຕົນໄດ້ສ້າງຂຶ້ນ, ແລະ

(ຂ) ລາຍຈ່າຍທີ່ໄດ້ສ້າງຂຶ້ນ ແລະພູດສ່ວນລາຍຮັບຂອງຕົນ ຈາກການຂາຍສິນຄ້າ ຫຼື ການບໍລິການຂອງວິສາຫະກິດປະສົມ.

## ຊັບສິນທີ່ຄວບຄຸມຮ່ວມກັນ

15.6 ບາງວິສາຫະກິດປະສົມ ເຮັດໃຫ້ມີການຄວບຄຸມຮ່ວມກັນ ແລະ ສ່ວນຫຼາຍ ມີການເປັນເຈົ້າກຳມະສິດຮ່ວມກັນ, ໂດຍຜູ້ຮ່ວມປະກອບການ ທີ່ໄດ້ປະກອບ ຫຼື ຊື້ ໜຶ່ງ ຫຼື ຫຼາຍຊັບສິນ ເພື່ອຮັບໃຊ້ຈຸດປະສົງຂອງວິສາຫະກິດປະສົມ ແນໃສ່ບັນລຸຈຸດໝາຍຂອງວິສາຫະກິດປະສົມທີ່ວາງໄວ້.

15.7 ກ່ຽວກັບເງິນລົງທຶນຂອງຕົນໃນຊັບສິນທີ່ຄວບຄຸມຮ່ວມກັນ, ຜູ້ຮ່ວມປະກອບການຕ້ອງໄດ້ຮັບຮູ້ລາຍການບັນຊີຕໍ່ໄປນີ້ ໃນເອກະສານລາຍງານການເງິນຂອງຕົນ :

(ກ) ພູດສ່ວນຂອງຕົນໃນຊັບສິນທີ່ຄວບຄຸມຮ່ວມກັນ, ທີ່ໄດ້ຈັດປະເພດຕາມລັກສະນະເນື້ອໃນຂອງຊັບສິນ ;

(ຂ) ໜີ້ສິນທຸກລາຍທີ່ຕົນໄດ້ສ້າງຂຶ້ນ ;

(ຄ) ພູດສ່ວນຂອງຕົນໃນໜີ້ສິນທຸກລາຍທີ່ໄດ້ສ້າງຂຶ້ນຮ່ວມກັນກັບຜູ້ຮ່ວມປະກອບການອື່ນໆ ຂອງວິສາຫະກິດປະສົມ ;

(ງ) ທຸກລາຍຮັບຈາກການຂາຍ ຫຼື ການນຳໃຊ້ພູດສ່ວນຂອງຕົນໃນໝາກຜົນຂອງວິສາຫະກິດປະສົມ, ພ້ອມທັງພູດສ່ວນຂອງຕົນໃນລາຍຈ່າຍທັງໝົດທີ່ວິສາຫະກິດປະສົມໄດ້ສ້າງຂຶ້ນ; ແລະ

(ຈ) ທຸກລາຍຈ່າຍທີ່ຕົນໄດ້ສ້າງຂຶ້ນບ້ວງເງິນລົງທຶນຂອງຕົນໃນວິສາຫະກິດປະສົມ.

## ວິສາຫະກິດທີ່ຄວບຄຸມຮ່ວມກັນ

15.8 ວິສາຫະກິດທີ່ຄວບຄຸມຮ່ວມກັນ ແມ່ນວິສາຫະກິດປະສົມທີ່ກ່ຽວຂ້ອງກັບການສ້າງຕັ້ງບໍລິສັດ, ບໍລິສັດຮຸ້ນສ່ວນ ຫຼື ວິສາຫະກິດອື່ນຊຶ່ງຜູ້ຮ່ວມປະກອບການແຕ່ລະຄົນມີຜົນປະໂຫຍດນຳ. ວິສາຫະກິດເຄື່ອນໄຫວແບບດຽວກັນກັບວິສາຫະກິດອື່ນໆ, ຍົກເວັ້ນກໍລະນີທີ່ວ່າຂໍ້ຕົກລົງໃນສັນຍາທີ່ໄດ້ເຊັນກັນລະຫ່ວາງ ຜູ້ຮ່ວມປະກອບການ ໄດ້ກຳນົດການຄວບຄຸມຮ່ວມກັນ ຕໍ່ການເຄື່ອນໄຫວເສດຖະກິດຂອງວິສາຫະກິດ.

### ການຕີມູນຄ່າ

15.9 ຜູ້ຮ່ວມປະກອບການຕ້ອງລົງບັນຊີເງິນລົງທຶນທັງໝົດຂອງຕົນເອງ ໃນທຸກວິສາຫະກິດທີ່ໄດ້ຄວບຄຸມຮ່ວມກັນ ຕາມ ວິທີຕົ້ນທຶນທີ່ໄດ້ກຳນົດໄວ້ໃນ ວັກ 15.10.

15.10 ຜູ້ຮ່ວມປະກອບການ ຕ້ອງຕີມູນຄ່າເງິນລົງທຶນຂອງຕົນໃນວິສາຫະກິດທີ່ໄດ້ຄວບຄຸມຮ່ວມກັນ ຕາມຕົ້ນທຶນ ຫັກຂາດທຶນຈາກການສູນເສຍມູນຄ່າສະສົມ ທີ່ໄດ້ຖືກຮັບຮູ້ລາຍການບັນຊີ ໂດຍຖືກຕ້ອງຕາມໝວດ 27 *ການສູນເສຍມູນຄ່າຂອງຊັບສິນ.*

15.11 ຜູ້ລົງທຶນຕ້ອງຮັບຮູ້ລາຍການບັນຊີ ເງິນແຈກຢາຍທີ່ໄດ້ຮັບຈາກການລົງທຶນເປັນລາຍຮັບ, ໂດຍບໍ່ໄດ້ຄຳນຶງເຖິງເງິນແຈກຢາຍມາຈາກຜົນໄດ້ຮັບສະສົມຂອງວິສາຫະກິດທີ່ຄວບຄຸມຮ່ວມກັນ ທີ່ໄດ້ເກີດຂຶ້ນກ່ອນ ຫຼື ຫຼັງຈາກມີຊື້ກິດຈະການ.

## ຖ້າວ່າຜູ້ລົງທຶນບໍ່ມີການຄວບຄຸມຮ່ວມກັນ

15.18 ຜູ້ລົງທຶນໃນວິສາຫະກິດປະສົມ ທີ່ບໍ່ມີການຄວບຄຸມຮ່ວມກັນ ຕ້ອງລົງບັນຊີເງິນລົງທຶນດັ່ງກ່າວອີງຕາມຂໍ້ກຳນົດຂອງໝວດ 11 *ເຄື່ອງມືການເງິນພື້ນຖານ* ຫຼື, ຖ້າຫາກມີອິດທິພົນທີ່ສຳຄັນຕໍ່ວິສາຫະກິດປະສົມ, ອີງຕາມຂໍ້ກຳນົດຂອງໝວດ 14 *ເງິນລົງທຶນ ໃນວິສາຫະກິດຂາຮຸ້ນ.*

## ການເປີດເຜີຍຂໍ້ມູນຂ່າວສານ

15.19 ຜູ້ລົງທຶນໃນວິສາຫະກິດປະສົມຍັງຕ້ອງເປີດເຜີຍ :

(ກ) **ນະ�โยบายการบันชี** ທີ່ນຳໃຊ້ເພື່ອຮັບຮູ້ລາຍການບັນຊີເງິນລົງທຶນຂອງຕົນໃນວິສາຫະກິດທີ່ຄວບຄຸມຮ່ວມກັນ.

(ຂ) **ມູນຄ່າໃນບັນຊີ**ຂອງເງິນລົງທຶນໃນວິສາຫະກິດທີ່ຄວບຄຸມຮ່ວມກັນ (ເບິ່ງວັກ 4.2(ຖ)).

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| ໝວດ 15 | ໝວດ 9 *ເອກະສານລາຍງານການເງິນລວມກິດຈະການ ແລະ ເອກະສານລາຍງານການເງິນສະເພາະກິດຈະການ* ຂອງມາດຕະຖານ FRS ສຳລັບ ວທຍ ບໍ່ນຳໃຊ້ກັບ ວນກ. ໝວດ 15 ນຳໃຊ້ ກັບການບັນຊີ ສຳລັບວິສາຫະກິດປະສົມ (ກິດຈະການທີ່ຄວບຄຸມຮ່ວມກັນ, ຊັບສິນທີ່ຄວບຄຸມຮ່ວມກັນ ຫຼື ວິສາຫະກິດທີ່ຄວບຄຸມຮ່ວມກັນ) ໂດຍວິສາຫະກິດນັ້ນ ຊຶ່ງສ້າງເອກະສານລາຍງານການເງິນສະເພາະກິດຈະການ ຕາມມາດຕະຖານ FRS ສຳລັບ ວນກ. |
| 15.9<br>15.10<br>15.12<br>15.14–15.15<br>15.21 | ວນກ ຕ້ອງນຳໃຊ້ພຽງແຕ່ວິທີຕົ້ນທຶນ ເທົ່ານັ້ນ. ວັກເຫຼົ່ານີ້ ຖືກປັບປຸງ ຫຼື ຕັດອອກ. |
| 15.9 (b)<br>15.13<br>15.16–15.17<br>15.19 (c)<br>15.20 | ວິທີການຕີມູນຄ່າທຽບເທົ່າ ບໍ່ນຳໃຊ້ໄດ້. ວັກເຫຼົ່ານີ້ ຖືກຕັດອອກ. |

## ໝວດ 16

## ອະສັງຫາລິມະຊັບເພື່ອການລົງທຶນ

***ອະສັງຫາລິມະຊັບເພື່ອການລົງທຶນ ຖືກລົງບັນຊີ ເປັນຊັບສິນບັນຄົງທີ່ມີຕົວຕົນ ໂດຍນຳໃຊ້ວິທີຕົ້ນທຶນ-ຄ່າຫຼ້ຍຫ້ຽນ-ການສູນເສຍມູນຄ່າ ໃນໝວດ 17 ຊັບສິນບັດຄົງທີ່ມີຕົວຕົນ.***

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| ໝວດ 16 | ວນກ ຕີມູນຄ່າ **ອະສັງຫາລິມະຊັບເພື່ອການລົງທຶນ** ຕາມວິທີຕົ້ນທຶນ-ຄ່າຫຼ້ຍຫ້ຽນ-ການສູນເສຍມູນຄ່າ ແລະ ບໍ່ແມ່ນຕາມມູນຄ່າຍຸຕິທຳ (ເບິ່ງ ໝວດ 17 *ຊັບສິນບັດຄົງທີ່ມີຕົວຕົນ*). |

# ໝວດ 17

# ຊັບສົມບັດຄົງທີ່ມີຕົວຕົນ

## ຂອບເຂດ

17.1 ໝວດດັ່ງກ່າວນຳໃຊ້ສຳລັບການບັນຊີ ກ່ຽວກັບ**ຊັບສົມບັດຄົງທີ່ມີຕົວຕົນ** ແລະ **ອະສັງຫາລິມະຊັບເພື່ອການລົງທຶນ*.

17.2 ຊັບສົມບັດຄົງທີ່ມີຕົວຕົນ ຊຶ່ງລວມມີອະສັງຫາລິມະຊັບເພື່ອການລົງທຶນ ແມ່ນຊັບສິນທີ່ມີຕົວຕົນ :

(ກ) ທີ່ຮັກສາໄວ້ເພື່ອນຳໃຊ້ເຂົ້າໃນການຜະລິດ, ສະໜອງສິນຄ້າ ຫຼື ການບໍລິການ, ໃຫ້ພາກສ່ວນອື່ນເຊົ່າ ຫຼື ເພື່ອເປົ້າໝາຍທາງດ້ານບໍລິຫານ, ແລະ

(ຂ) ຄາດວ່າຈະຖືກນຳໃຊ້ເກີນໜຶ່ງປີການບັນຊີຂຶ້ນໄປ.

ອະສັງຫາລິມະຊັບເພື່ອການລົງທຶນ ແມ່ນອະສັງຫາລິມະຊັບ (ທີ່ດິນ ຫຼື ສິ່ງປຸກສ້າງ - ຫຼື ພາກສ່ວນໜຶ່ງຂອງສິ່ງປຸກສ້າງ ຫຼື ທັງສອງອັນ) ຊຶ່ງເຈົ້າຂອງ ຮັກສາໄວ້ ເພື່ອເກັບຄ່າເຊົ່າ ຫຼື ເພື່ອເພີ່ມຄ່າຂອງທຶນ ຫຼື ທັງສອງ, ແທນທີ່ຈະ :

(ກ) ນຳໃຊ້ໃນການຜະລິດ ຫຼື ໃນການສະໜອງສິນຄ້າ ຫຼື ການບໍລິການ ຫຼື ເພື່ອເປົ້າໝາຍທາງດ້ານບໍລິຫານ, ຫຼື

(ຂ) ຂາຍອອກໃນໃນການດຳເນີນທຸລະກິດປົກກະຕິ.

17.3 ຊັບສົມບັດຄົງທີ່ມີຕົວຕົນ ບໍ່ກວມເອົາ :

(ກ) **ຊັບສິນຊີວະພາບ** ກ່ຽວກັບກິດຈະກຳກະສິກຳ (ເບິ່ງໝວດ 34 *ກິດຈະກຳພິເສດ*), ຫຼື

(ຂ) ສິດທິຕໍ່ແຮ່ທາດ ແລະ ບໍ່ແຮ່ ເຊັ່ນນ້ຳມັນ, ອາຍແກັສທຳມະຊາດ ແລະ ຊັບພະຍາກອນຄ້າຍຄືກັນອື່ນໆ ທີ່ຟື້ນຟູຄືນບໍ່ໄດ້.

## ການຮັບຮູ້ລາຍການບັນຊີ

17.4 ວິສາຫະກິດໃດໜຶ່ງ ຕ້ອງນຳໃຊ້ເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີໃນວັກ 2.27 ເພື່ອກຳນົດວ່າຕ້ອງໄດ້ຮັບຮູ້ລາຍການບັນຊີລາຍການ ຊັບຊັບສົມບັດຄົງທີ່ມີຕົວຕົນໃດໜຶ່ງ ຫຼືບໍ່. ສະນັ້ນ, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ຕົ້ນທຶນຂອງຊັບສົມບັດຄົງທີ່ມີຕົວຕົນ ເປັນຊັບສິນ, ຖ້າໄດ້ເງື່ອນໄຂທຸກຂໍ້ຕໍ່ໄປນີ້:

(ກ) **ມີຄວາມອາດເປັນໄປໄດ້** ທີ່ວິສາຫະກິດຈະໄດ້ຮັບຜົນປະ�โຫຍດດ້ານເສດຖະກິດໃນອະນາຄົດ ທີ່ຕິດພັນກັບລາຍການດັ່ງກ່າວ, ແລະ

(ຂ) ຕົ້ນທຶນຂອງລາຍການດັ່ງກ່າວ ສາມາດຖືກຕີມູນຄ່າຢ່າງໜ້າເຊື່ອຖືໄດ້.

17.5 ເຄື່ອງອາໄຫຼ່ ແລະ ອຸປະກອນບຳລຸງຮັກສາ ຕາມປົກກະຕິຈົດເປັນເຄື່ອງໃນສາງ ແລະ ຖືກຮັບຮູ້ລາຍການບັນຊີ ໃນກຳໄລ ຫຼື ຂາດທຶນ ເມື່ອເວລາຖືກຊົມໃຊ້. ເຖິງຢ່າງໃດກໍດີ, ເຄື່ອງອາໄຫຼ່ຕົ້ນຕໍ ແລະ ອຸປະກອນສຳຮອງໄວ້ໃຊ້ງານ ເປັນຊັບສົມບັດຄົງທີ່ມີຕົວຕົນ ຖ້າວ່າວິສາຫະກິດຄາດວ່າຈະນຳໃຊ້ເກີນໜຶ່ງປີການບັນຊີຂຶ້ນໄປ. ເຊັ່ນດຽວກັນນັ້ນ, ຖ້າວ່າເຄື່ອງອາໄຫຼ່ ແລະ ອຸປະກອນບຳລຸງຮັກສາ ສາມາດນຳໃຊ້ພຽງແຕ່ກັບຊັບສົມບັດຄົງທີ່ມີຕົວຕົນລາຍການດຽວເທົ່ານັ້ນ ກໍໃຫ້ຖືເປັນຊັບຊັບສົມບັດຄົງທີ່ມີຕົວຕົນ.

17.6 ສ່ວນໜຶ່ງຂອງບາງລາຍການຊັບສົມບັດຄົງທີ່ມີຕົວຕົນອາດຕ້ອງການການປ່ຽນແທນເປັນໄລຍະປົກກະຕິ (ເຊັ່ນ ຫຼັງຄາຂອງສິ່ງປຸກສ້າງໃດນຶ່ງ). ວິສາຫະກິດຕ້ອງບວກຄ່າໃຊ້ຈ່າຍປ່ຽນແທນພາກສ່ວນປະກອບດັ່ງກ່າວເວລາຄ່າໃຊ້ຈ່າຍດັ່ງກ່າວເກີດຂຶ້ນໃສ່**ມູນຄ່າໃນບັນຊີ**ຂອງຊັບສົມບັດຄົງທີ່ມີຕົວຕົນ, ຖ້າຫາກຄາດວ່າ ເຄື່ອງອາໄຫຼ່ປ່ຽນແທນຈະສະໜອງຜົນປະ�โຫຍດດ້ານເສດຖະກິດເພີ່ມເຕີມໃນອະນາຄົດ ໃຫ້ກັບວິສາຫະກິດ. ມູນຄ່າໃນບັນຊີຂອງພາກສ່ວນປະກອບດັ່ງກ່າວນັ້ນ ຖືກປ່ຽນແທນ ແລະ **ຕັດລາຍການບັນຊີ** ຕາມວັກ 17.27 ຫາ 17.30. ວັກ 17.16 ກຳນົດວ່າ ຖ້າຫາກອົງປະກອບຕົ້ນຕໍຂອງຊັບສົມບັດຄົງທີ່ມີຕົວຕົນໃດໜຶ່ງ ຫາກມີຮູບແບບການຊົມໃຊ້ຜົນປະ�โຫຍດດ້ານເສດຖະກິດທີ່ສຳຄັນທີ່ແຕກຕ່າງກັນ, ວິສາຫະ

ກິດຕ້ອງຈັດແບ່ງຕົ້ນທຶນເບື້ອງຕົ້ນຂອງຊັບສິນ ໃສ່ອົງປະກອບຕົ້ນຕໍ ແລະ ແຍກ**ຫັກຄ່າຫຼຸ້ຍຫ້ຽນ**ແຕ່ລະອົງປະກອບດັ່ງກ່າວ ບົນພື້ນຖານ**ອາຍຸການນຳໃຊ້**ຂອງອົງປະກອບເຫຼົ່ານັ້ນ.

17.7 ເງື່ອນໄຂໃນການສືບຕໍ່ນຳໃຊ້ລາຍການໃດໜຶ່ງຂອງຊັບສົມບັດຄົງທີ່ມີຕົວຕົນ (ເຊັ່ນ ລົດເມ) ອາດຈຳຕ້ອງໄດ້ດຳເນີນການກວດກາໃຫ່ຍຢ່າງເປັນປົກກະຕິເພື່ອແນໃສ່ຄົ້ນຫາຂໍ້ຜິດພາດທີ່ອາດເກີດຂຶ້ນໄດ້ ບໍ່ວ່າຈະມີການປ່ຽນເຄື່ອງອາໄຫຼ່ຫຼືບໍ່ກໍຕາມ. ຖ້າຫາກມີການກວດກາຄັ້ງໃຫ່ຍ, ຕ້ອງໄດ້ຮັບຮູ້ລາຍການບັນຊີຄ່າໃຊ້ຈ່າຍນັ້ນ ໃນມູນຄ່າໃນບັນຊີຂອງລາຍການ ຊັບສົມບັດຄົງທີ່ມີຕົວຕົນ ເປັນການປ່ຽນແທນ ຖ້າຫາກຖືກຕ້ອງຕາມເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີ. ທຸກມູນຄ່າໃນບັນຊີທີ່ຍັງເຫຼືອຂອງຄ່າໃຊ້ຈ່າຍໃນການກວດກາໃຫ່ຍຄັ້ງຜ່ານມາ (ຕ່າງກັບເຄື່ອງອາໄຫຼ່ຕົວຈິງ) ຖືກຕັດລາຍການບັນຊີ. ການຕັດລາຍການບັນຊີດັ່ງກ່າວ ຖືກດຳເນີນ ບໍ່ວ່າໄດ້ມີການຈຳແນກ ກ່ຽວກັບຄ່າໃຊ້ຈ່າຍຂອງການກວດກາໃຫ່ຍ ໃນລາຍການເຄື່ອນໄຫວ ທີ່ລາຍການນັ້ນ ໄດ້ຊື້ ຫຼື ສ້າງຫຼືບໍ່ກໍຕາມ. ຖ້າຈຳເປັນ, ຄ່າໃຊ້ຈ່າຍຄາດຄະເນການກວດກາຄ້າຍຄືກັນໃນອະນາຄົດ ອາດຖືກນຳໃຊ້ເປັນເຄື່ອງໝາຍຊີ້ບອກວ່າ ຕົ້ນທຶນຂອງອົງປະກອບການກວດກາທີ່ມີໃນເວລາຊື້ ຫຼື ສ້າງລາຍການດັ່ງກ່າວມີຄືແນວໃດ.

17.8 ທີ່ດິນ ແລະ ສິ່ງປຸກສ້າງ ແມ່ນຊັບສິນທີ່ແຍກຈາກກັນ ແລະ ວິສາຫະກິດຕ້ອງໄດ້ແຍກລົງບັນຊີ ເຖິງແມ່ນວ່າຈະໄດ້ຊື້ເຂົ້າມາພ້ອມກັນກໍຕາມ.

## ການຕີມູນຄ່າເວລາການຮັບຮູ້ລາຍການບັນຊີ

17.9 ວິສາຫະກິດຕ້ອງຕີມູນຄ່າລາຍການ ຊັບສົມບັດຄົງທີ່ມີຕົວຕົນ ຕາມຕົ້ນທຶນ ໃນເວລາການຮັບຮູ້ລາຍການບັນຊີເບື້ອງຕົ້ນ.

### ສ່ວນປະກອບຂອງຕົ້ນທຶນ

17.10 ຕົ້ນທຶນຂອງຊັບສົມບັດຄົງທີ່ມີຕົວຕົນ ປະກອບດ້ວຍລາຍການດັ່ງລຸ່ມນີ້:

(ກ) ລາຄາຊື້, ລວມທັງຄ່າທຳນຽມວິຊາການທາງກົດໝາຍ, ຄ່ານາຍໜ້າ, ຄ່າພາສີຂາເຂົ້າ ແລະ ອາກອນທີ່ເກັບຄືນບໍ່ໄດ້, ພາຍຫຼັງຫັກສ່ວນຫຼຸດການຄ້າຕ່າງໆອອກ.

(ຂ) ຄ່າໃຊ້ຈ່າຍທັງໝົດທີ່ຕິດພັນໂດຍກົງກັບການນຳເອົາຊັບສິນໄປເຖິງສະຖານທີ່ຕັ້ງ ແລະ ເງື່ອນໄຂອັນຈຳເປັນ ເພື່ອໃຫ້ສາມາດດຳເນີນການຕາມແບບວິທີທີ່ຄະນະບໍລິຫານໄດ້ຕັ້ງໃຈໄວ້. ຄ່າໃຊ້ຈ່າຍເຫຼົ່ານີ້ ອາດລວມມີຄ່າກະກຽມສະຖານທີ່, ສົ່ງມອບ ແລະ ແບກຫາບເບື້ອງຕົ້ນ, ສິ່ງຕິດຕັ້ງ ແລະ ການປະກອບເຄື່ອງ ພ້ອມທັງການທົດສອບດ້ານການດຳເນີນງານ.

(ຄ) ຕົວເລກຄາດຄະເນປະຕິບັດເບື້ອງຕົ້ນ ກ່ຽວກັບຄ່າໃຊ້ຈ່າຍທີ່ພົວພັນກັບການເລີກຮີ້ ແລະ ເຄື່ອນຍ້າຍລາຍການນັ້ນອອກຈາກທີ່ຕັ້ງ, ພັນທະຊຶ່ງວິສາຫະກິດໄດ້ສ້າງຂຶ້ນ ເມື່ອມີການຊື້ລາຍການນັ້ນ ຫຼື ເນື່ອງຈາກການນຳໃຊ້ລາຍການນັ້ນໃນຕະຫຼອດປີການບັນຊີໃດໜຶ່ງສະເພາະ ເພື່ອຈຸດໝາຍອື່ນທີ່ບໍ່ແມ່ນການຜະລິດເຄື່ອງໃນສາງໃນປີດັ່ງກ່າວ.

17.11 ຄ່າໃຊ້ຈ່າຍດັ່ງລຸ່ມນີ້ ບໍ່ແມ່ນຕົ້ນທຶນຂອງລາຍການຊັບສົມບັດຄົງທີ່ມີຕົວຕົນໃດໜຶ່ງ, ແລະ ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີນັ້ນເປັນລາຍຈ່າຍ ເວລາຄ່າໃຊ້ຈ່າຍດັ່ງກ່າວເກີດຂຶ້ນ :

(ກ) ຄ່າໃຊ້ຈ່າຍໃນການເປີດສິ່ງຕິດຕັ້ງໃໝ່.

(ຂ) ຄ່າໃຊ້ຈ່າຍເປີດຕົວຜະລິດຕະພັນ ຫຼື ການບໍລິການໃໝ່ (ລວມທັງຄ່າໃຊ້ຈ່າຍຂອງກິດຈະການໂຄສະນາ ແລະ ສົ່ງເສີມການຂາຍຜະລິດຕະພັນ).

(ຄ) ຄ່າໃຊ້ຈ່າຍດຳເນີນກິດຈະການ ໃນສະຖານທີ່ແຫ່ງໃໝ່ ຫຼື ກັບປະເພດລູກຄ້າລາຍໃໝ່ (ລວມທັງຄ່າບຳລຸງກໍ່ສ້າງພະນັກງານ).

(ງ) ຄ່າໃຊ້ຈ່າຍບໍລິຫານ ແລະ ຄ່າໃຊ້ຈ່າຍທົ່ວໄປ.

(ຈ) **ຄ່າກູ້ຢືມເງິນ** (ເບິ່ງໝວດ 25 *ຄ່າກູ້ຢືມເງິນ*).

17.12 ລາຍຮັບ ແລະ ລາຍຈ່າຍທີ່ຕິດພັນກັບກິດຈະການສຳຮອງ ໃນເວລາກໍ່ສ້າງ ຫຼື ພັດທະນາລາຍການໃດໜຶ່ງຂອງຊັບສົມບັດຄົງທີ່ມີຕົວຕົນ ຖືກຮັບຮູ້ລາຍການບັນຊີ ໃນກຳໄລ ຫຼື ຂາດທຶນ ຖ້າວ່າກິດຈະການດັ່ງກ່າວຫາກບໍ່ຈຳເປັນເພື່ອເຮັດໃຫ້

ລາຍການດັ່ງກ່າວນັ້ນໄປສູ່ສະຖານທີ່ ແລະ ຢູ່ໃນສະພາບດຳເນີນງານທີ່ໄດ້ກຳນົດໄວ້.

### ການຕີມູນຄ່າຕົ້ນທຶນ

17.13 ຕົ້ນທຶນຂອງລາຍການຊັບສົມບັດຄົງທີ່ມີຕົວຕົນໃດໜຶ່ງ ແມ່ນລາຄາເງິນສົດທຽບເທົ່າໃນມື້ການຮັບຮູ້ລາຍການບັນຊີ.

### ການແລກປ່ຽນຊັບສິນ

17.14 ລາຍການໃດໜຶ່ງຂອງຊັບສົມບັດຄົງທີ່ມີຕົວຕົນ ອາດໄດ້ມາຈາກການແລກປ່ຽນລະຫ່ວາງໜຶ່ງ ຫຼື ຫຼາຍລາຍການຊັບສິນທີ່ບໍ່ເປັນເງິນ, ຫຼືກຸ່ມຊັບສິນເປັນເງິນ ແລະ ບໍ່ເປັນເງິນ. ວິສາຫະກິດຕ້ອງຕີມູນຄ່າຕົ້ນທຶນຂອງຊັບສິນທີ່ໄດ້ຊື້ມາ ຕາມ**ມູນຄ່າຍຸຕິທຳ** ເວັ້ນເສັຍແຕ່ (ກ) ຖ້າວ່າລາຍການເຄື່ອນໄຫວແລກປ່ຽນຫາກຂາດເນື້ອແທ້ທາງດ້ານທຸລະກິດ ຫຼື (ຂ) ເປັນໄປບໍ່ໄດ້ທີ່ຈະຕີມູນຄ່າຍຸຕິທຳຢ່າງໜ້າເຊື່ອຖື ທັງຂອງຊັບສິນທີ່ໄດ້ຮັບ ແລະຂອງຊັບສິນທີ່ນຳໄປແລກປ່ຽນ. ໃນກໍລະນີດັ່ງກ່າວ, ຕົ້ນທຶນຂອງຊັບສິນ ຖືກຕີມູນຄ່າຕາມມູນຄ່າໃນບັນຊີຂອງຊັບສິນທີ່ນຳໄປແລກປ່ຽນ.

## ການຕີມູນຄ່າພາຍຫຼັງການຮັບຮູ້ລາຍການບັນຊີເບື້ອງຕົ້ນ

17.15 ວິສາຫະກິດຕ້ອງຕີມູນຄ່າລາຍການຊັບສົມບັດຄົງທີ່ມີຕົວຕົນທັງໝົດພາຍຫຼັງໄດ້ການຮັບຮູ້ລາຍການບັນຊີເບື້ອງຕົ້ນ ຕາມຕົ້ນທຶນ ຫັກຄ່າຫຼ້ຍຫ້ຽນສະສົມ ແລະ **ຂາດທຶນຈາກການສູນເສຍມູນຄ່າສະສົມ.** ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ຄ່າໃຊ້ຈ່າຍ ກ່ຽວກັບການບຳລຸງຮັກສາປະຈຳວັນ ຂອງລາຍການຊັບສົມບັດຄົງທີ່ມີຕົວຕົນ ໃນກຳໄລ ຫຼື ຂາດທຶນ ໃນປີການບັນຊີ ທີ່ໄດ້ເກີດມີຄ່າໃຊ້ຈ່າຍ.

## ຄ່າຫຼ້ຍຫ້ຽນ

17.16 ຖ້າວ່າອົງປະກອບຕົ້ນຕໍຂອງລາຍການໃດໜຶ່ງຂອງຊັບສົມບັດຄົງທີ່ມີຕົວຕົນ ມີຮູບແບບການຊົມໃຊ້ຜົນປະໂຫຍດດ້ານເສດຖະກິດທີ່ມີຄວາມສຳຄັນແຕກຕ່າງກັນ, ວິສາຫະກິດຕ້ອງຈັດແບ່ງຕົ້ນທຶນເບື້ອງຕົ້ນຂອງຊັບສິນເຂົ້າໃສ່ອົງປະກອບຕົ້ນຕໍ ແລະ ແຍກຫັກຄ່າຫຼ້ຍຫ້ຽນແຕ່ລະອົງປະກອບບົນພື້ນຖານອາຍຸການນຳໃຊ້. ຊັບສິນອື່ນໆຕ້ອງຫັກຄ່າຫຼ້ຍຫ້ຽນບົນພື້ນຖານອາຍຸການນຳໃຊ້ ຄືກັນກັບເປັນຊັບສິນອັນນຶ່ງອັນດຽວ. ແຕ່ມີບາງຂໍ້ຍົກເວັ້ນ ເຊັ່ນເໝືອງຂຸດຄົ້ນແຮ່ ແລະ ສະຖານທີ່ຖິ້ມຂີ້ເຫຍື້ອ, ທີ່ດິນ ມີອາຍຸການນຳໃຊ້ບໍ່ຈຳກັດ ແລະ ດັ່ງນັ້ນຈຶ່ງບໍ່ຖືກຫັກຄ່າຫຼ້ຍຫ້ຽນ.

17.17 ການຫັກຄ່າຫຼ້ຍຫ້ຽນໃນແຕ່ລະປີການບັນຊີຕ້ອງຮັບຮູ້ລາຍການບັນຊີ ໃນກຳໄລ ຫຼື ຂາດທຶນ ເວັ້ນເສັຍແຕ່ໝວດອື່ນຂອງມາດຕະຖານສະບັບນີ້ ກຳນົດໃຫ້ຮັບຮູ້ລາຍການບັນຊີ ຕົ້ນທຶນ ເປັນສ່ວນໜຶ່ງຂອງຕົ້ນທຶນຂອງຊັບສິນ. ຕົວຢ່າງ ການຫັກຄ່າຫຼ້ຍຫ້ຽນຊັບສົມບັດຄົງທີ່ມີຕົວຕົນ ແມ່ນລວມເຂົ້າຢູ່ໃນຕົ້ນທຶນຂອງເຄື່ອງໃນສາງ (ເບິ່ງ ໝວດ 13 *ເຄື່ອງໃນສາງ*).

## ຈຳນວນເງິນຫັກຄ່າຫຼ້ຍຫ້ຽນ ແລະ ຮອບເວລາຫັກຄ່າຫຼ້ຍຫ້ຽນ

17.18 ວິສາຫະກິດຕ້ອງຈັດແບ່ງ**ຈຳນວນເງິນຫັກຄ່າຫຼ້ຍຫ້ຽນ**ຂອງຊັບສິນໃດໜຶ່ງ ບົນພື້ນຖານອາຍຸການນຳໃຊ້ ຢ່າງເປັນລະບົບ. ຄ່າຫຼ້ຍຫ້ຽນ ແມ່ນຕົ້ນທຶນຂອງຊັບສິນ (ເບິ່ງ ວັກ 17.13), ຫຼື ຈຳນວນເງິນອື່ນ ທີ່ໃຊ້ແທນສຳລັບຕົ້ນທຶນ (ເບິ່ງ ວັກ 17.14).

17.19 ບັນດາປັດໄຈເຊັ່ນການປ່ຽນແປງວິທີການນຳໃຊ້ຊັບສິນ, ການເປ່ເພເສຍທາຍໃຫ່ຍທີ່ບໍ່ໄດ້ຄາດກະໄວ້, ຄວາມກ້າວໜ້າດ້ານເຕັກໂນໂລຊີ, ການປ່ຽນແປງລາຄາໃນຕະຫຼາດ ອາດສະແດງໃຫ້ເຫັນວ່າ ອາຍຸການນຳໃຊ້ຊັບສິນໄດ້ມີການປ່ຽນແປງ ນັບຈາກ**ມື້ລາຍງານ**ປະຈຳປີຫຼ້າສຸດ. ຖ້າຫາກມີຂໍ້ຊີ້ແຈງດັ່ງກ່າວ, ວິສາຫະກິດຕ້ອງກວດກາຄືນຕົວເລກຄາດຄະເນປະຕິບັດຜ່ານມາ, ແລະ ຖ້າວ່າການຄາດຫວັງໃນປັດຈຸບັນຫາກແຕກຕ່າງກັນ ກໍຕ້ອງໄດ້ດັດແກ້ແບບວິທີການຫັກຄ່າຫຼ້ຍຫ້ຽນ ຫຼື ອາຍຸການນຳໃຊ້. ວິສາຫະກິດຕ້ອງລົງບັນຊີ ການປ່ຽນແປງແບບວິທີການຫັກຄ່າຫຼ້ຍຫ້ຽນ ຫຼື ອາຍຸການນຳໃຊ້ ເປັນການປ່ຽນແປງ ຕົວເລກຄາດຄະເນປະຕິບັດດ້ານບັນຊີ ໂດຍໃຫ້ຖືກຕ້ອງຕາມວັກ 10.15 ຫາ 10.18.

17.20 ການຫັກຄ່າຫຼ້ຍຫ້ຽນຂອງຊັບສິນເລີ່ມຕົ້ນຂຶ້ນ ເມື່ອຊັບສິນດັ່ງກ່າວມີໄວ້ເພື່ອນຳໃຊ້, ໝາຍຄວາມວ່າຢູ່ໃນສະຖານທີ່ ແລະ ສະພາບການທີ່ຈຳເປັນເພື່ອສາມາດດຳເນີນງານຕາມແບບວິທີທີ່ຄະນະບໍລິຫານໄດ້ກຳນົດໄວ້. ການຫັກຄ່າຫຼ້ຍຫ້ຽນຢຸດຕິລົງ ເມື່ອໄດ້ຕັດລາຍການບັນຊີ. ການຫັກຄ່າຫຼ້ຍຫ້ຽນ ຈະບໍ່ຢຸດຕິ ເວລາຊັບສິນບໍ່ໄດ້ຖືກນຳໃຊ້ ຫຼື ເອົາອອກຈາກການນຳໃຊ້ປົກກະຕິ ເວັ້ນເສຍແຕ່ຊັບສິນຖືກຫັກຄ່າຫຼ້ຍຫ້ຽນໝົດແລ້ວ. ເຖິງຢ່າງໃດກໍດີ, ພາຍໃຕ້ການນຳໃຊ້ແບບວິທີການຫັກຄ່າຫຼ້ຽນ

ທ້ຽນ, ຄ່າຫຼ້ຍທ້ຽນສາມາດເທົ່າກັບສູນໄດ້ ໃນເວລາທີ່ບໍ່ມີການຜະລິດ.

17.21 ວິສາຫະກິດຕ້ອງຄຳນຶງເຖິງປັດໄຈທັງໝົດດັ່ງລຸ່ມນີ້ເພື່ອຊອກຫາອາຍຸການນຳໃຊ້ຂອງຊັບສິນ :

(ກ) ປະໂຫຍດຈາກການນຳໃຊ້ຊັບສິນທີ່ຄາດຫວັງໄວ້. ການນຳໃຊ້ດັ່ງກ່າວແມ່ນປະເມີນຜົນໂດຍອີງຕາມກຳລັງການຜະລິດ ຫຼື ຜົນຜະລິດຕົວຈິງທີ່ຄາດຄະເນຈາກຊັບສິນດັ່ງກ່າວ.

(ຂ) ການເປ່ເພສູນເສຍຕົວຈິງທີ່ຄາດຈະເກີດຂຶ້ນຈາກປັດໄຈດຳເນີນງານ ເຊັ່ນຈຳນວນຖ້ຽວການນຳໃຊ້ຊັບສິນ ຫຼື ແຜນການສ້ອມແປງ ແລະບຳລຸງຮັກສາ ລວມທັງການບົວລະບັດຊັບສິນ ໃນເວລາທີ່ບໍ່ນຳໃຊ້.

(ຄ) ພາວະພົ້ນສະໄໝດ້ານເຕັກນິກ ຫຼື ການຄ້າ ອັນເນື່ອງຈາກການປ່ຽນແປງ ຫຼື ການປັບປຸງການຜະລິດ, ຫຼື ຈາກການຂະຫຍາຍຄວາມຕ້ອງການຂອງຕະຫຼາດ ສຳລັບຜະລິດຕະພັນ ຫຼື ຜົນການສະໜອງການບໍລິການຈາກຊັບສິນ.

(ງ) ຂໍ້ຈຳກັດທາງດ້ານກົດໝາຍ ຫຼື ຄ້າຍຄືກັນ ກ່ຽວກັບການນຳໃຊ້ຊັບສິນ ເຊັ່ນມື້ສິ້ນສຸດອາຍຸຂອງສັນຍາເຊົ່າທີ່ກ່ຽວຂ້ອງ.

## ວິທີການຫັກຄ່າຫຼ້ຍທ້ຽນ

17.22 ວິສາຫະກິດຕ້ອງເລືອກເຟັ້ນວິທີການຫັກຄ່າຫຼ້ຍທ້ຽນທີ່ສ່ອງແສງເຖິງຮູບແບບການຊົມໃຊ້ຜົນປະໂຫຍດດ້ານເສດຖະກິດໃນອະນາຄົດຂອງຊັບສິນ. ວິທີການຫັກຄ່າຫຼ້ຍທ້ຽນທີ່ເປັນໄປໄດ້ ລວມມີວິທີການແບບສະເໝີຕົວ, ວິທີການແບບຫຼຸດຜ່ອນ ແລະ ວິທີການທີ່ອີງໃສ່ຜົນປະໂຫຍດການນຳໃຊ້ ເຊັ່ນແບບວິທີການຄິດໄລ່ຕາມຫົວໜ່ວຍການຜະລິດ.

17.23 ຖ້າຫາກມີການຊີ້ບອກວ່າ ໄດ້ເກີດມີການປ່ຽນແປງທີ່ສຳຄັນນັບແຕ່ມື້ລາຍງານປະຈຳປີຄັ້ງສຸດທ້າຍ ໃນຮູບແບບທີ່ວິສາຫະກິດຄາດຄະເນການຊົມໃຊ້ຜົນປະໂຫຍດດ້ານເສດຖະກິດໃນອະນາຄົດຂອງຊັບສິນ, ວິສາຫະກິດຕ້ອງທົບທວນຄືນວິທີການຫັກຄ່າຫຼ້ຍທ້ຽນປັດຈຸບັນ ແລະ, ຖ້າການຄາດຫວັງໃນປັດຈຸບັນຫາກແຕກຕ່າງກັນ, ໃຫ້ປ່ຽນແປງວິທີການຫັກຄ່າຫຼ້ຍທ້ຽນເພື່ອສ່ອງແສງເຖິງຮູບແບບໃໝ່ນັ້ນ. ວິສາຫະກິດຕ້ອງລົງບັນຊີການປ່ຽນແປງດັ່ງກ່າວເປັນການປ່ຽນແປງຕົວເລກຄາດຄະເນປະຕິບັດດ້ານບັນຊີຕາມຂໍ້ກຳນົດໃນວັກ 10.15 ຫາ 10.18.

## ການສູນເສຍມູນຄ່າ

### ການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າ ກ່ຽວກັບການສູນເສຍມູນຄ່າ

17.24 ໃນ**ມື້ລາຍງານ**ແຕ່ລະຄັ້ງ, ວິສາຫະກິດຕ້ອງປະຕິບັດຕາມໝວດ 27 *ການສູນເສຍມູນຄ່າຂອງຊັບສິນ* ເພື່ອເບິ່ງວ່າລາຍການໃດໜຶ່ງ ໄດ້ສູນເສຍມູນຄ່າລົງຫຼືບໍ່ ແລະ, ຖ້າເປັນຄືແນວນັ້ນ, ຈະຮັບຮູ້ລາຍການບັນຊີ ແລະ ຕີມູນຄ່າກ່ຽວກັບຂາດທຶນຈາກການສູນເສຍມູນຄ່າຄືແນວໃດ. ໝວດດັ່ງກ່າວນີ້ ອະທິບາຍໃຫ້ຮູ້ວ່າ ເວລາໃດ ແລະດ້ວຍວິທີໃດ ວິສາຫະກິດຕ້ອງທົບທວນຄືນມູນຄ່າໃນບັນຊີຂອງຊັບສິນຕົນເອງ, ແລະ ວິສາຫະກິດຕ້ອງຄິດໄລ່**ມູນຄ່າທີ່ສາມາດເກັບຄືນໄດ້**ຂອງຊັບສິນໃດໜຶ່ງຄືແນວໃດ, ແລະ ໃນກໍລະນີໃດຈຶ່ງຮັບຮູ້ລາຍການບັນຊີ ຫຼື ປົ້ນກັບລາຍການຂາດທຶນຈາກການຫັກຄ່າສູນເສຍມູນຄ່າໃດນຶ່ງ.

### ຄ່າທົດແທນ ສຳລັບການສູນເສຍມູນຄ່າ

17.25 ວິສາຫະກິດຕ້ອງເອົາຄ່າທົດແທນທີ່ໄດ້ຮັບຈາກພາກສ່ວນອື່ນ ສຳລັບລາຍການຊັບສົມບັດຄົງທີ່ມີຕົວຕົນ ທີ່ໄດ້ສູນເສຍມູນຄ່າ, ເສຍຫາຍ ຫຼື ຖືກແລກປ່ຽນ ເຂົ້າໃນກຳໄລ ຫຼື ຂາດທຶນ ພຽງແຕ່ໃນກໍລະນີທີ່ວ່າຄ່າທົດແທນດັ່ງກ່າວ ໄດ້ກາຍເປັນໜີ້ຕ້ອງຮັບ.

### ຊັບສົມບັດຄົງທີ່ມີຕົວຕົນ ທີ່ໄດ້ຮັກສາໄວ້ເພື່ອຂາຍ

17.26 ວັກ 27.9(ສ) ກ່າວວ່າແຜນການສະສາງຊັບສິນອອກ ກ່ອນມື້ທີ່ໄດ້ຄາດກະໄວ້ໃນເມື່ອກ່ອນ ເປັນຂໍ້ມູນຊີ້ບອກວ່າຊັບສິນນັ້ນອາດເກີດມີການສູນເສຍມູນຄ່າ ຊຶ່ງຈຳເປັນຕ້ອງຄິດໄລ່ມູນຄ່າທີ່ຄາດວ່າສາມາດເກັບຄືນໄດ້ຂອງຊັບສິນ ເພື່ອຈຸດປະສົງໃນການຄິດໄລ່ເບິ່ງວ່າ ຊັບສິນນັ້ນ ໄດ້ສູນເສຍມູນຄ່າຫຼືບໍ່.

## ການຕັດລາຍການບັນຊີ

17.27 ວິສາຫະກິດຕ້ອງຕັດລາຍການຊັບສົມບັດຄົງທີ່ມີຕົວຕົນອອກຈາກບັນຊີ:

(ກ) ເວລາສະສາງອອກ, ຫຼື

(ຂ) ຖ້າຫາກຄາດວ່າຈະບໍ່ໄດ້ຮັບຜົນປະໂຫຍດດ້ານເສດຖະກິດໃນອະນາຄົດຈາກການນຳໃຊ້ ຫຼື ຈາກການສະສາງອອກ.

17.28 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ສ່ວນໄດ້ ຫຼື ສ່ວນເສຍ ໃນການຕັດລາຍການບັນຊີ ຊັບສົມບັດຄົງທີ່ມີຕົວຕົນອອກຈາກຊັບສິນ ໃນກຳໄລ ຫຼື ຂາດທຶນ ເວລາຕັດລາຍການບັນຊີອອກ (ເບິ່ງ ໝວດ 20 *ສັນຍາເຊົ່າ* ສຳລັບລາຍການ ເຄື່ອນໄຫວການຂາຍອອກ ແລະ ເຊົ່າຄືນ). ວິສາຫະກິດບໍ່ຄວນຈັດປະເພດສ່ວນໄດ້ດັ່ງກ່າວ ເປັນລາຍຮັບ. ໝວດ 20 *ສັນຍາເຊົ່າ* ກຳນົດຢ່າງອື່ນ ກ່ຽວກັບການຂາຍອອກ ແລະ ເຊົ່າຄືນ.

17.29 ເວລາກຳນົດມື້ຂາຍລາຍການໃດໜຶ່ງອອກ, ວິສາຫະກິດຕ້ອງນຳໃຊ້ເງື່ອນໄຂມາດຕະຖານທີ່ກຳນົດໃນໝວດ 23 *ລາຍຮັບ* ສຳລັບການຮັບຮູ້ລາຍການບັນຊີລາຍຮັບຈາກການຂາຍສິນຄ້າ.

17.30 ວິສາຫະກິດກຳນົດສ່ວນໄດ້ ຫຼື ສ່ວນເສຍ ທີ່ເກີດຂຶ້ນຈາກການຕັດລາຍການບັນຊີ ຊັບສົມບັດຄົງທີ່ມີຕົວຕົນໃດໜຶ່ງ ເປັນສ່ວນຜິດດ່ຽງ ລະຫ່ວາງ ລາຍຮັບສຸດທິຈາກການຂາຍອອກ, ຖ້າມີ, ແລະ ມູນຄ່າໃນບັນຊີຂອງລາຍການນັ້ນ.

## ການເປີດເຜີຍຂໍ້ມູນຂ່າວສານ

17.31 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ ສຳລັບແຕ່ລະປະເພດຊັບສົມບັດຄົງທີ່ມີຕົວຕົນ ທີ່ເຫັນວ່າແທດເໝາະ ຕາມຂໍ້ກຳນົດໃນວັກ 4.11(ກ):

(ກ) ພື້ນຖານການຕີມູນຄ່າທີ່ໄດ້ນຳໃຊ້ເພື່ອຄິດໄລ່ມູນຄ່າລວມໃນບັນຊີ.

(ຂ) ວິທີການຫັກຄ່າຫຼ້ຍຫ້ຽນທີ່ໄດ້ນຳໃຊ້.

(ຄ) ອາຍຸການນຳໃຊ້ ຫຼື ອັດຕາຫັກຄ່າຫຼ້ຍຫ້ຽນທີ່ໄດ້ນຳໃຊ້.

(ງ) ມູນຄ່າລວມໃນບັນຊີ ແລະ ຄ່າຫຼ້ຍຫ້ຽນສະສົມ (ທີ່ຖືກລວມເຂົ້າ ນຳຂາດທຶນຈາກການເສື່ອມມູນຄ່າສະສົມ) ໃນຕົ້ນ ແລະ ທ້າຍຮອບເວລາລາຍງານ.

(ຈ) ການສົມທຽບຕົວເລກລະຫ່ວາງມູນຄ່າໃນບັນຊີ ໃນຕົ້ນ ແລະ ທ້າຍຮອບເວລາລາຍງານ, ໂດຍແຍກ :

(i) ລາຍການຮັບເຂົ້າຕື່ມ.

(ii) ລາຍການຂາຍອອກ.

(iii) ການໄດ້ມາເປັນກຳມະສິດຜ່ານ**ການຄວບກິດຈະການ**.

(v) ຂາດທຶນຈາກການສູນເສຍມູນຄ່າທີ່ໄດ້ຮັບຮູ້ລາຍການບັນຊີ ແລະ ປັ້ນກັບລາຍການໃນກຳໄລ ຫຼື ຂາດທຶນ ໂດຍຖືກ ຕ້ອງຕາມຂໍ້ກຳນົດ ໃນໝວດ 27.

(vi) ຄ່າຫຼ້ຍຫ້ຽນ.

(vii) ສ່ວນປ່ຽນແປງອື່ນໆ.

ບໍ່ຈຳເປັນຕ້ອງສະເໜີການສົມທຽບຕົວເລກດັ່ງກ່າວ ສຳລັບຮອບເວລາຜ່ານໆມາ.

17.32 ວິສາຫະກິດຍັງຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ :

(ກ) ຄວາມມີຈິງ ແລະ ມູນຄ່າໃນບັນຊີຂອງ ຊັບສົມບັດຄົງທີ່ມີຕົວຕົນ ຊຶ່ງວິສາຫະກິດມີພຽງແຕ່ສິດທິຈຳກັດດ້ານກຳມະສິດ ຫຼື ຊຶ່ງໄດ້ເອົາໄປຂວດຈຳເປັນຫຼັກຊັບຄ້ຳປະກັນໜີ້ສິນ.

(ຂ) ຈຳນວນເງິນຂໍ້ຜູກພັນຕາມສັນຍາ ໃນການຊື້ຊັບສົມບັດຄົງທີ່ມີຕົວຕົນ.

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| 17.1<br>17.2<br>17.31 (ຈ) (iv) | ມາດຕະຖານ FRS ສຳລັບ ວນກ ນີ້ ຕີມູນຄ່າ ອະສັງຫາລິມະຊັບເພື່ອການລົງທຶນ ຕາມວິທີຕົ້ນທຶນ-ຄ່າຫຼ້ຍຫ້ຽນ-ການສູນເສຍມູນຄ່າ ແລະ ບໍ່ໃຊ້ ຕາມມູນຄ່າຍຸຕິທຳ ເວັ້ນເສຍໃນກໍລະນີຂອງການແລກປ່ຽນ.<br>ວັກ 17.1 ຖືກປັບປຸງ ແລະ ວັກ 17.31 (ຈ) (vi) ຖືກຕັດອອກ. ວັກ 17.2 ໃຫ້ຄຳນິຍາມ ກ່ຽວກັບອະສັງຫາລິມະຊັບເພື່ອການລົງທຶນ. |
| 17.13 | ມາດຕະຖານ FRS ສຳລັບ ວນກ ນີ້ ຮັບຮູ້ລາຍການບັນຊີ ພຽງແຕ່ລາຄາເງິນສົດທຽບເທົ່າ ໃນມື້ການຮັບຮູ້ລາຍການບັນຊີ. ມູນຄ່າປັດຈຸບັນ ບໍ່ຖືກນຳໃຊ້ ເວັ້ນເສຍແຕ່ສຳລັບເງິນປະໂຫຍດຂອງພະນັກງານ. |
| 17.18<br>17.19 | ຕາມມາດຕະຖານ FRS ສຳລັບ ວທຍ, ຈຳນວນເງິນຫັກຄ່າຫຼ້ຍຫ້ຽນ ແມ່ນຕົ້ນທຶນຂອງຊັບສິນໃດໜຶ່ງ, ຫຼື ຈຳນວນເງິນອື່ນ ທີ່ຖືກແທນ ສຳລັບຕົ້ນທຶນ ຫັກ**ມູນຄ່າເສດເຫຼືອ** ຂອງຊັບສິນນັ້ນ.<br>ຕາມມາດຕະຖານ FRS ສຳລັບ ວນກ, ຈຳນວນເງິນຫັກຄ່າຫຼ້ຍຫ້ຽນ ບໍ່ຫຼຸດລົງ ໂດຍມູນຄ່າເສດເຫຼືອ (ເບິ່ງ ນິຍາມ ຂອງຈຳນວນເງິນຫັກຄ່າຫຼ້ຍຫ້ຽນ). ວັກເຫຼົ່ານີ້ ຖືກປັບປຸງ. |
| 17.24 | ຕາມມາດຕະຖານ FRS ສຳລັບ ວນກ ນີ້, **ໜ່ວຍສ້າງເງິນສົດ** ບໍ່ໄດ້ຖືກນຳໃຊ້ ສຳລັບການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າ ການສູນເສຍມູນຄ່າຂອງຊັບສົມບັດຄົງທີ່ມີຕົວຕົນ. |
| 17.28 - 17.29 | ລາຍການເຄື່ອນໄຫວການຂາຍອອກ ແລະ ເຊົ່າຄືນ, ເບິ່ງ ໝວດ 20 ສັນຍາເຊົ່າ ວັກ 20.32-20.34) |

# ໝວດ 18

# ຊັບສົມບັດຄົງທີ່ບໍ່ມີຕົວຕົນ ທີ່ບໍ່ແມ່ນຄ່ານິຍົມ

## ຂອບເຂດຂອງໝວດນີ້

18.1 ໝວດດັ່ງກ່າວນີ້ ນຳໃຊ້ສຳລັບການບັນຊີ ກ່ຽວກັບ**ຊັບສົມບັດຄົງທີ່ບໍ່ມີຕົວຕົນ**ທັງໝົດ ທີ່ບໍ່ແມ່ນ**ຄ່ານິຍົມ** (ເບິ່ງໝວດ 19 *ການຄວບກິດຈະການ ແລະ ຄ່ານິຍົມ*) ແລະ ຊັບສົມບັດຄົງທີ່ບໍ່ມີຕົວຕົນ ຊຶ່ງວິສາຫະກິດຮັກສາໄວ້ເພື່ອແນໃສ່ຂາຍອອກ ໃນການດຳເນີນທຸລະກິດປົກກະຕິ (ເບິ່ງໝວດ 13 *ເຄື່ອງໃນສາງ* ແລະ ໝວດ 23 *ລາຍຮັບ*).

18.2 ຊັບສົມບັດຄົງທີ່ບໍ່ມີຕົວຕົນ ແມ່ນຊັບສິນທີ່ບໍ່ເປັນເງິນ ທີ່ຈຳແນກໄດ້ໂດຍບໍ່ມີເນື້ອແທ້ຕົວຈິງ. ຊັບສິນດັ່ງກ່າວຈຳແນກໄດ້ ເມື່ອ :

(ກ) ຊັບສິນດັ່ງກ່າວແຍກຈາກກັນໄດ້, ໝາຍຄວາມວ່າສາມາດແຍກ ຫຼື ຕັດແຍກອອກຈາກວິສາຫະກິດ ແລະ ຂາຍ, ໂອນ, ໃຫ້ນຳໃຊ້ຕາມການອະນຸຍາດ, ໃຫ້ເຊົ່າ ຫຼື ແລກປ່ຽນ, ຫຼືວ່າ ຕາມຮູບແບບສ່ວນບຸກຄົນ, ຫຼືວ່າໃນຂອບເຂດ ຂອງສັນຍາ, ຫຼື ມີຊັບສິນ ຫຼື ໜີ້ສິນ ທີ່ກ່ຽວຂ້ອງ, ຫຼື

(ຂ) ຊັບສິນດັ່ງກ່າວເກີດຈາກສິດທິຕາມສັນຍາ ຫຼື ສິດທິຕາມກົດໝາຍອື່ນໆ, ໂດຍບໍ່ຕ້ອງຄຳນຶງວ່າສິດທິດັ່ງກ່າວ ຈະ ໂອນໃຫ້ກັນໄດ້ ຫຼືບໍ່ກຳຕາມ ຫຼື ຈະແຍກອອກຈາກວິສາຫະກິດ ຫຼື ແຍກອອກຈາກສິດທິ ແລະ ພັນທະອື່ນໆຫຼືບໍ່ກຳ ຕາມ.

18.3 ຊັບສົມບັດຄົງທີ່ບໍ່ມີຕົວຕົນ ບໍ່ກວມເອົາ:

(ກ) **ຊັບສິນການເງິນ**, ຫຼື

(ຂ) ສິດທິຕໍ່ແຮ່ທາດ ແລະ ບໍ່ແຮ່ ເຊັ່ນນ້ຳມັນ, ອາຍແກັສທຳມະຊາດ ແລະ ຊັບພະຍາກອນຄ້າຍຄືກັນອື່ນໆ ທີ່ຟື້ນຟູຄືນ ບໍ່ໄດ້.

## ການຮັບຮູ້ລາຍການບັນຊີ

### ຫຼັກການລວມ ກ່ຽວກັບການຮັບຮູ້ລາຍການບັນຊີ ຊັບສົມບັດຄົງທີ່ບໍ່ມີຕົວຕົນ

18.4 ວິສາຫະກິດຕ້ອງນຳໃຊ້ເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີໃນວັກ 2.27 ເພື່ອເບິ່ງວ່າຕ້ອງໄດ້ລົງບັນຊີຊັບສົມ ບັດຄົງທີ່ບໍ່ມີຕົວຕົນ. ສະນັ້ນ, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ຊັບສົມບັດຄົງທີ່ບໍ່ມີຕົວຕົນ ເປັນຊັບສິນ ພຽງແຕ່ກໍລະ ນີທີ່ວ່າ :

(ກ) ມີຄວາມ**ອາດເປັນໄປໄດ້** ທີ່ວິສາຫະກິດຈະໄດ້ຮັບຜົນປະໂຫຍດດ້ານເສດຖະກິດໃນອະນາຄົດທີ່ເກີດຈາກຊັບສິນ ນັ້ນ ;

(ຂ) ຕົ້ນທຶນ ຫຼື ມູນຄ່າຂອງຊັບສິນ ສາມາດຖືກຕີມູນຄ່າຢ່າງໜ້າເຊື່ອຖືໄດ້ ; ແລະ

(ຄ) ຊັບສິນ ບໍ່ໄດ້ມາຈາກລາຍຈ່າຍທີ່ເກີດຂຶ້ນຢູ່ພາຍໃນວິສາຫະກິດ ສຳລັບລາຍການບໍ່ມີຕົວຕົນ.

18.5 ວິສາຫະກິດຕ້ອງປະເມີນຄວາມອາດເປັນໄປໄດ້ຂອງຜົນປະໂຫຍດດ້ານເສດຖະກິດທີ່ຄາດໄວ້ໃນອະນາຄົດ ໂດຍນຳໃຊ້ສົມ ມຸດຖານທີ່ສົມເຫດສົມຜົນ ແລະ ຍັ້ງຍືນໄດ້ ຊຶ່ງສະແດງເຖິງຕົວເລກຄາດຄະເນປະຕິບັດທີ່ດີທີ່ສຸດ ໂດຍຄະນະບໍລິຫານ ກ່ຽວກັບເງື່ອນໄຂດ້ານເສດຖະກິດທີ່ຈະມີຕະຫຼອດໄລຍະ**ອາຍຸການນຳໃຊ້**ຂອງຊັບສິນ.

18.6 ວິສາຫະກິດນຳໃຊ້ຄຳວິນິດໄສຂອງຕົນເອງ ເພື່ອປະເມີນລະດັບຄວາມແນ່ນອນທີ່ຕິດພັນກັບການໄດ້ຮັບຜົນປະໂຫຍດດ້ານ ເສດຖະກິດໃນອະນາຄົດຈາກການນຳໃຊ້ຊັບສິນ, ບົນພື້ນຖານຂອງຫຼັກຖານທີ່ມີ ໃນເວລາການຮັບຮູ້ລາຍການບັນຊີເບື້ອງ ຕົ້ນ, ໂດຍໃຫ້ຄວາມສຳຄັນ ກ່ຽວກັບຫຼັກຖານຈາກພາຍນອກຫຼາຍກ່ວາ.

18.7 ເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີ ກ່ຽວກັບຄວາມອາດເປັນໄປໄດ້ສູງທີ່ວິສາຫະກິດຈະໄດ້ຮັບຜົນປະໂຫຍດດ້ານເສດຖະກິດໃນອະນາຄົດ ຕາມກຳນົດໃນວັກ 18.4(ກ), ຍາມໃດກໍຖືວ່າຖືກຕ້ອງຕາມເງື່ອນໄຂດັ່ງກ່າວ ສຳລັບຊັບສົມບັດຄົງທີ່ບໍ່ມີຕົວຕົນ ທີ່ໄດ້ຊື້ຕ່າງຫາກ.

### ການຊື້ຊັບສິນທີ່ເປັນສ່ວນໜຶ່ງຂອງການຄວບກິດຈະການ

18.8 ຊັບສົມບັດຄົງທີ່ບໍ່ມີຕົວຕົນ ທີ່ໄດ້ມາເປັນກຳມະສິດ ໃນເວລາ**ຄວບກິດຈະການ** ຕາມປົກກະຕິ ຖືກຮັບຮູ້ລາຍການບັນຊີເປັນຊັບສິນ ຍ້ອນວ່າ**ມູນຄ່າຍຸຕິທຳ**ຂອງຊັບສິນດັ່ງກ່າວ ສາມາດຖືກຕີມູນຄ່າຢ່າງໜ້າເຊື່ອຖືໄດ້ພຽງພໍ. ເຖິງຢ່າງໃດກໍດີ, ຊັບສົມບັດຄົງທີ່ບໍ່ມີຕົວຕົນທີ່ໄດ້ມາໃນເວລາການຄວບກິດຈະການຈະບໍ່ຖືກຮັບຮູ້ລາຍການບັນຊີ ເມື່ອຊັບສິນດັ່ງກ່າວ ມາຈາກສິດທິຕາມກົດໝາຍ ຫຼື ສິດທິຕາມສັນຍາອື່ນໆ ແລະ ມູນຄ່າຍຸຕິທຳບໍ່ສາມາດຖືກຕີມູນຄ່າຢ່າງໜ້າເຊື່ອຖືໄດ້ ຍ້ອນວ່າຊັບສິນນັ້ນ:

(ກ) ແຍກອອກຈາກ**ຄ່ານິຍົມ**ບໍ່ໄດ້, ຫຼື

(ຂ) ແຍກອອກຈາກຄ່ານິຍົມໄດ້, ແຕ່ຫາກບໍ່ມີປະຫວັດຜ່ານມາ ຫຼື ຫຼັກຖານ ກ່ຽວກັບກິດຈະການແລກປ່ຽນລາຍການຊັບສິນຄືກັນ ຫຼື ຊັບສິນທີ່ຄ້າຍຄືກັນ ແລະ, ອີກດ້ານໜຶ່ງ, ການຄາດຄະເນຕົວເລກປະຕິບັດຂອງມູນຄ່າຍຸຕິທຳຈະຂຶ້ນກັບຕົວຜັນແປ ທີ່ບໍ່ສາມາດຕີມູນຄ່າໄດ້.

## ການຕີມູນຄ່າເບື້ອງຕົ້ນ

18.9 ວິສາຫະກິດຕ້ອງຕີມູນຄ່າຊັບສົມບັດຄົງທີ່ບໍ່ມີຕົວຕົນໃນເບື້ອງຕົ້ນ ຕາມຕົ້ນທຶນ.

### ການໄດ້ມາເປັນກຳມະສິດແຍກຕ່າງຫາກ

18.10 ຕົ້ນທຶນຊັບສົມບັດຄົງທີ່ບໍ່ມີຕົວຕົນ ທີ່ໄດ້ມາເປັນກຳມະສິດແຍກຕ່າງຫາກ ປະກອບດ້ວຍ :

(ກ) ລາຄາຊື້, ລວມທັງຄ່າພາສີນຳເຂົ້າ ແລະ ອາກອນການຊື້ທີ່ເກັບຄືນບໍ່ໄດ້, ພາຍຫຼັງຫັກສ່ວນຫຼຸດການຄ້າຕ່າງໆອອກ, ແລະ

(ຂ) ຕົ້ນທຶນ, ທີ່ຕິດພັນໂດຍກົງກັບການສ້າງຊັບສິນເພື່ອແນໃສ່ການນຳໃຊ້ທີ່ໄດ້ກຳນົດໄວ້.

ຕົ້ນທຶນ ແມ່ນທຽບເທົ່າລາຄາເງິນສົດ ໃນມື້ຮັບຮູ້ລາຍການບັນຊີ. ຖ້າການຊຳລະລໍຖ້າສະສາງ ກາຍກຳນົດເວລາສິນເຊື່ອ ປົກກະຕິ, ຕົ້ນທຶນ ແມ່ນ ມູນຄ່າປັດຈຸບັນ ຂອງການຊຳລະໃນອະນາຄົດ.

### ການຊື້ຊັບສິນທີ່ເປັນສ່ວນໜຶ່ງຂອງການຄວບກິດຈະການ

18.11 ຖ້າວ່າໄດ້ຊັບສົມບັດຄົງທີ່ບໍ່ມີຕົວຕົນ ມາເປັນກຳມະສິດໃນເວລາຄວບກິດຈະການ, ຕົ້ນທຶນຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນດັ່ງກ່າວ ແມ່ນມູນຄ່າຍຸຕິທຳໃນມື້ໄດ້ມາເປັນກຳມະສິດ.

### ການຊື້ຊັບສິນ ຈາກເງິນຊ່ວຍໜູນຂອງລັດຖະບານ

18.12 ຖ້າວ່າໄດ້ຊັບສົມບັດຄົງທີ່ບໍ່ມີຕົວຕົນ ມາຈາກ**ເງິນຊ່ວຍໜູນຂອງລັດຖະບານ**, ຕົ້ນທຶນ ຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນດັ່ງກ່າວ ຄືມູນຄ່າຍຸຕິທຳໃນມື້ໄດ້ຮັບເງິນຊ່ວຍໜູນ ຫຼື ເງິນຊ່ວຍໜູນຕ້ອງຮັບ ຕາມຂໍ້ກຳນົດ ຂອງໝວດ 24 *ເງິນຊ່ວຍໜູນ ຂອງລັດຖະບານ.*

### ການແລກປ່ຽນຊັບສິນ

18.13 ຊັບສົມບັດຄົງທີ່ບໍ່ມີຕົວຕົນ ສາມາດໄດ້ມາເປັນກຳມະສິດຈາກການແລກປ່ຽນ ລະຫວ່າງ ຊັບສິນທີ່ບໍ່ເປັນເງິນຕາ ຫຼື ຊັບສິນ, ຫຼື ກຸ່ມຊັບສິນທີ່ເປັນເງິນຕາ ແລະ ບໍ່ເປັນເງິນຕາ. ວິສາຫະກິດຕ້ອງຕີມູນຄ່າຕົ້ນທຶນຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນດັ່ງກ່າວຕາມມູນຄ່າຍຸຕິທຳເວັ້ນເສຍ (ກ) ຖ້າວ່າລາຍການແລກປ່ຽນປາສະຈາກເນື້ອແທ້ດ້ານທຸລະກິດ ຫຼື (ຂ) ມູນຄ່າຍຸຕິທຳຂອງຊັບສິນທີ່ໄດ້ຮັບ ຫຼື ມູນຄ່າຍຸຕິທຳຂອງຊັບສິນທີ່ໄດ້ນຳໄປແລກປ່ຽນ ບໍ່ສາມາດຖືກຕີມູນຄ່າຢ່າງໜ້າເຊື່ອຖືໄດ້. ໃນກໍລະນີດັ່ງກ່າວ, ຕົ້ນທຶນຂອງຊັບສິນ ຖືກຕີມູນຄ່າຕາມ**ມູນຄ່າໃນປັນຊີ** ຂອງຊັບສິນທີ່ໄດ້ນຳໄປແລກປ່ຽນ.

### ຊັບສົມບັດຄົງທີ່ບໍ່ມີຕົວຕົນທີ່ຖືກສ້າງຂຶ້ນຢູ່ພາຍໃນ

18.14 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີຄ່າໃຊ້ຈ່າຍທີ່ສ້າງຂຶ້ນຈາກພາຍໃນ ສຳລັບລາຍການທີ່ບໍ່ມີຕົວຕົນ, ລວມທັງທຸກຄ່າໃຊ້ຈ່າຍ ທັງສຳລັບກິດຈະກຳ**ຄົ້ນຄ້ວາ ແລະ ການພັດທະນາ,** ເຊັ່ນລາຍຈ່າຍ ເມື່ອເກີດລາຍການນັ້ນ ເວັ້ນເສຍແຕ່ປະກອບເປັນຕົ້ນທຶນຂອງຊັບສິນອື່ນ ທີ່ໄດ້ບັນລຸຕາມເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີ ຂອງມາດຕະຖານສະບັບນີ້.

18.15 ເພື່ອເປັນຕົວຢ່າງໃນການປະຕິບັດວັກຜ່ານມາ, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີຄ່າໃຊ້ຈ່າຍທີ່ພົວພັນກັບລາຍການດັ່ງລຸ່ມນີ້ ເປັນລາຍຈ່າຍ ແລະ ບໍ່ຄວນຮັບຮູ້ລາຍການບັນຊີຄ່າໃຊ້ຈ່າຍດັ່ງກ່າວ ເປັນຊັບສົມບັດຄົງທີ່ບໍ່ມີຕົວຕົນ :

(ກ) ການຜະລິດຕະພັນ, ເຄື່ອງໝາຍ, ຊື່ທີ່ຈັດພິມ, ລາຍຊື່ລູກຄ້າ ແລະ ລາຍການອື່ນໆທີ່ຄ້າຍຄືກັນທາງດ້ານເນື້ອແທ້.

(ຂ) ກິດຈະກຳກ່ອນການເລີ່ມຕົ້ນ (ໝາຍເຖິງຄ່າໃຊ້ຈ່າຍກ່ອນເວລາເລີ່ມຕົ້ນ) ຊຶ່ງລວມມີຄ່າໃຊ້ຈ່າຍໃນການສ້າງຕັ້ງ ເຊັ່ນ ຄ່າໃຊ້ຈ່າຍທີ່ເກີດຂຶ້ນດ້ານກົດໝາຍ ແລະ ລາຍຈ່າຍວຽກງານເລຂານຸການ ທີ່ໄດ້ຈ່າຍເວລາສ້າງຫົວໜ່ວຍນິຕິບຸກຄົນ, ຄ່າໃຊ້ຈ່າຍເວລາເປີດສິ່ງຕິດຕັ້ງໃໝ່ ຫຼື ກິດຈະການໃໝ່ (ໝາຍເຖິງຕົ້ນທຶນກ່ອນເປີດກິດຈະການ) ແລະ ຄ່າໃຊ້ຈ່າຍເພື່ອດຳເນີນການເຄື່ອນໄຫວໃໝ່ ຫຼື ເປີດຜະລິດຕະພັນ ຫຼື ກຳມະວິທີໃໝ່ (ໝາຍເຖິງຄ່າໃຊ້ຈ່າຍ-ກ່ອນດຳເນີນງານ).

(ຄ) ກິດຈະກຳຝຶກອົບຮົມ.

(ງ) ກິດຈະກຳໂຄສະນາ ແລະ ສົ່ງເສີມການຂາຍສິນຄ້າ.

(ຈ) ການຍົກຍ້າຍທີ່ຕັ້ງ ຫຼື ການຈັດຕັ້ງຄືນໃໝ່ ວິສາຫະກິດ ສ່ວນໜຶ່ງ ຫຼື ທັງໝົດ.

(ສ) ຄ່ານິຍົມທີ່ຖືກສ້າງຂຶ້ນຢູ່ພາຍໃນ.

18.16 ວັກ 18.15 ບໍ່ໄດ້ຫຼີກລ້ຽງການລົງບັນຊີລາຍຈ່າຍໆລ່ວງໜ້າເປັນຊັບສິນຖ້າວ່າການຊຳລະຄ່າສິນຄ້າ ຫຼື ຄ່າບໍລິການຫາກດຳເນີນກ່ອນການສົ່ງມອບສິນຄ້າ ຫຼື ການບໍລິການ.

## ລາຍຈ່າຍຜ່ານມາ ທີ່ບໍ່ໄດ້ຮັບຮູ້ລາຍການບັນຊີ ເປັນຊັບສິນ

18.17 ຄ່າໃຊ້ຈ່າຍທີ່ພົວພັນກັບລາຍການບໍ່ມີຕົວຕົນທີ່ໄດ້ຮັບຮູ້ລາຍການບັນຊີເບື້ອງຕົ້ນເປັນລາຍຈ່າຍ ບໍ່ໃຫ້ຮັບຮູ້ລາຍການບັນຊີຕາມຫຼັງເປັນສ່ວນໜຶ່ງຂອງຕົ້ນທຶນຊັບສິນ.

## ການຕີມູນຄ່າພາຍຫຼັງການຮັບຮູ້ລາຍການບັນຊີ

18.18 ວິສາຫະກິດຕ້ອງຕີມູນຄ່າຊັບສົມບັດຄົງທີ່ບໍ່ມີຕົວຕົນ ຕາມຕົ້ນທຶນ ຫັກ**ການຫັກຄ່າຫຼຸ້ຍຫ້ຽນ**ສະສົມ ແລະ **ຂາດທຶນຈາກການສູນເສຍມູນຄ່າ**ສະສົມອອກ. ການນຳສະເໜີຂໍ້ກຳນົດ ກ່ຽວກັບການຫັກຄ່າຫຼຸ້ຍຫ້ຽນ ໄດ້ສະເໜີຢູ່ໃນໝວດດັ່ງກ່າວນີ້. ຂໍ້ກຳນົດທາງດ້ານການຮັບຮູ້ລາຍການບັນຊີການສູນເສຍມູນຄ່າ ແມ່ນໄດ້ສະເໜີໃນໝວດ 27 *ການສູນເສຍມູນຄ່າຂອງຊັບສິນ.*

## ການຫັກຄ່າຫຼຸ້ຍຫ້ຽນຕະຫອດອາຍຸການນຳໃຊ້

18.19 ຕາມຈຸດປະສົງ ຂອງມາດຕະຖານສະບັບນີ້, ໃຫ້ຖືວ່າຊັບສົມບັດຄົງທີ່ບໍ່ມີຕົວຕົນທັງໝົດ ມີອາຍຸການນຳໃຊ້ທີ່ແນ່ນອນ. ອາຍຸການນຳໃຊ້ຊັບສົມບັດຄົງທີ່ບໍ່ມີຕົວຕົນໃດໜຶ່ງ ອັນເນື່ອງຈາກສິດທິຕາມສັນຍາ ຫຼື ສິດທິຕາມກົດໝາຍອື່ນໆ ຕ້ອງບໍ່ເກີນຮອບເວລາຂອງສິດທິຕາມສັນຍາ ຫຼື ສິດທິຕາມກົດໝາຍອື່ນໆ, ແຕ່ອາດສັ້ນກ່ວາໄດ້, ໂດຍຂຶ້ນກັບຮອບເວລາຊຶ່ງວິສາຫະກິດຄາດວ່າຈະນຳໃຊ້ຊັບສິນນັ້ນ. ຖ້າວ່າສິດທິຕາມສັນຍາ ຫຼື ສິດທິຕາມກົດໝາຍອື່ນໆ ມີໄລຍະເວລາຈຳກັດ ແຕ່ສາມາດຕໍ່ອາຍຸຄືນໃໝ່ໄດ້, ອາຍຸການນຳໃຊ້ຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນນັ້ນ ຄວນລວມເອົາ (ບັນດາ) ຮອບເວລາຕໍ່ອາຍຸຄືນໃໝ່ ຖ້າຫາກມີຫຼັກຖານ ເພື່ອຢັ້ງຢືນການຕໍ່ອາຍຸຄືນໃໝ່ຂອງວິສາຫະກິດ ໂດຍບໍ່ມີຄ່າໃຊ້ຈ່າຍສູງ.

18.20 ຖ້າວ່າວິສາຫະກິດບໍ່ສາມາດປະເມີນອາຍຸການນຳໃຊ້ ຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນຢ່າງໜ້າເຊື່ອຖືໄດ້, ໃຫ້ກຳນົດອາຍຸການນຳໃຊ້ດັ່ງກ່າວເທົ່າກັບສິບປີ.

### ຮອບເວລາການຫັກຄ່າຫຼຸ້ຍຫ້ຽນ ແລະ ວິທີການການຫັກຄ່າຫຼຸ້ຍຫ້ຽນ

18.21 ວິສາຫະກິດຕ້ອງຈັດແບ່ງ**ຈຳນວນເງິນການເສື່ອມມູນຄ່າ** ຂອງຊັບສິນບໍ່ມີຕົວຕົນ ຢ່າງເປັນລະບົບຕະຫຼອດອາຍຸການນຳໃຊ້. ຄ່າຫຼຸ້ຍຫ້ຽນຂອງແຕ່ລະປີ ຕ້ອງຖືກຮັບຮູ້ລາຍການບັນຊີເປັນລາຍຈ່າຍ ເວັ້ນເສຍແຕ່ໝວດອື່ນຂອງມາດຕະຖານສະບັບນີ້ກຳນົດໃຫ້ຮັບຮູ້ລາຍການບັນຊີຄ່າໃຊ້ຈ່າຍນັ້ນ ເປັນສ່ວນໜຶ່ງຂອງຕົ້ນທຶນຂອງຊັບສິນ, ເຊັ່ນຕົ້ນທຶນຂອງເຄື່ອງໃນສາງ ຫຼື ຊັບສົມບັດຄົງທີ່ມີຕົວຕົນ.

18.22 ການຫັກຄ່າຫຼຸ້ຍຫ້ຽນເລີ່ມຕົ້ນຫັກ ເມື່ອມີຊັບສິນບໍ່ມີຕົວຕົນໄວ້ເພື່ອນຳໃຊ້, ໝາຍຄວາມວ່າເລີ່ມແຕ່ເວລາທີ່ລາຍການດັ່ງກ່າວຢູ່ໃນສະຖານທີ່ ແລະ ສະພາບທີ່ຈຳເປັນເພື່ອສາມາດນຳໃຊ້ ຕາມຮູບແບບທີ່ຄະນະບໍລິຫານໄດ້ກຳນົດໄວ້. ການຫັກຄ່າຫຼຸ້ຍຫ້ຽນຈະສິ້ນສຸດ ເມື່ອຊັບສິນນັ້ນ ຖືກຕັດລາຍການບັນຊີ. ວິສາຫະກິດຕ້ອງເລືອກເຟັ້ນວິທີການຫັກຄ່າຫຼຸ້ຍຫ້ຽນ ທີ່ສ່ອງແສງເຖິງຮູບແບບຊຶ່ງວິສາຫະກິດຄາດວ່າຈະຊົມໃຊ້ຜົນປະໂຫຍດດ້ານເສດຖະກິດໃນອະນາຄົດ ທີ່ຕິດພັນກັບຊັບສິນນັ້ນ. ຖ້າວ່າວິສາຫະກິດບໍ່ສາມາດກຳນົດຮູບແບບດັ່ງກ່າວຢ່າງໜ້າເຊື່ອຖືໄດ້, ຕ້ອງໄດ້ນຳໃຊ້ວິທີການຫັກຄ່າຫຼຸ້ຍຫ້ຽນແບບສະເໝີຕົວ.

### ການທົບທວນຄືນຮອບເວລາການຫັກຄ່າຫຼຸ້ຍຫ້ຽນ ແລະ ວິທີການການຫັກຄ່າຫຼຸ້ຍຫ້ຽນ

18.24 ປັດໄຈຕ່າງໆ ເຊັ່ນການປ່ຽນແປງວິທີການນຳໃຊ້ຊັບສິນບໍ່ມີຕົວຕົນ, ຄວາມກ້າວໜ້າດ້ານເຕັກໂນໂລຊີ ແລະ ການປ່ຽນແປງລາຄາຕະຫຼາດ ອາດຊີ້ບອກວ່າ ອາຍຸການນຳໃຊ້ຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນ ໄດ້ມີການປ່ຽນແປງນັບແຕ່**ມື້ລາຍງານ**ປະຈຳປີຄັ້ງຫຼ້າສຸດ. ຖ້າຫາກມີຕົວຊີ້ບອກດັ່ງກ່າວ, ວິສາຫະກິດຕ້ອງທົບທວນຄືນຕົວເລກຄາດຄະເນປະຕິບັດຜ່ານມາ ແລະ, ຖ້າວ່າການຄາດຫວັງໃນປັດຈຸບັນຫາກແຕກຕ່າງ, ຕ້ອງໄດ້ປັບປຸງວິທີການການຫັກຄ່າຫຼຸ້ຍຫ້ຽນ ຫຼື ອາຍຸການນຳໃຊ້. ວິສາຫະກິດຕ້ອງລົງບັນຊີສ່ວນປ່ຽນແປງຂອງມູນຄ່າເສດເຫຼືອ, ການປ່ຽນແປງວິທີການການຫັກຄ່າຫຼຸ້ຍຫ້ຽນ ຫຼື ການປ່ຽນແປງອາຍຸການນຳໃຊ້ ເປັນການປ່ຽນແປງຕົວເລກຄາດຄະເນປະຕິບັດດ້ານບັນຊີ ໂດຍຖືກຕ້ອງຕາມຂໍ້ກຳນົດ ຂອງວັກ 10.15 ຫາ 10.18.

## ຄວາມສາມາດເກັບຄືນໄດ້ມູນຄ່າໃນບັນຊີ — ຂາດທຶນຈາກການສູນເສຍມູນຄ່າ

18.25 ໃນການກຳນົດວ່າຊັບສົມບັດຄົງທີ່ບໍ່ມີຕົວຕົນສູນເສຍມູນຄ່າລົງຫຼືບໍ່, ວິສາຫະກິດຕ້ອງປະຕິບັດຕາມຂໍ້ກຳນົດຂອງໝວດ 27. ໝວດດັ່ງກ່າວນີ້ ອະທິບາຍໃຫ້ຮູ້ວ່າ ເວລາໃດ ແລະ ດ້ວຍວິທີໃດ ວິສາຫະກິດຕ້ອງທົບທວນຄືນມູນຄ່າໃນບັນຊີຂອງຊັບສິນດັ່ງກ່າວ, ແລະ ວິສາຫະກິດຕ້ອງຄິດໄລ່**ມູນຄ່າທີ່ສາມາດເກັບຄືນໄດ້**ຂອງຊັບສິນໃດໜຶ່ງຄືແນວໃດ, ແລະ ເວລາໃດວິສາຫະກິດ ຈຶ່ງຮັບຮູ້ລາຍການບັນຊີ ຫຼື ປົ້ນກັບລາຍການຂາດທຶນຈາກການສູນເສຍມູນຄ່າ.

## ການເຊົານຳໃຊ້ ແລະ ການສະສາງອອກ

18.26 ວິສາຫະກິດຕ້ອງຕັດລາຍການບັນຊີຊັບສິນບໍ່ມີຕົວຕົນ, ແລະ ຕ້ອງຮັບຮູ້ລາຍການບັນຊີ ສ່ວນໄດ້ ຫຼື ສ່ວນເສຍ ໃນກຳໄລ ຫຼື ຂາດທຶນ:

(ກ) ເວລາສະສາງອອກ, ຫຼື

(ຂ) ຖ້າຫາກຄາດວ່າຈະບໍ່ໄດ້ຮັບຜົນປະໂຫຍດດ້ານເສດຖະກິດໃນອະນາຄົດຈາກການນຳໃຊ້ ຫຼື ການສະສາງຊັບສິນນັ້ນອອກ.

## ການເປີດເຜີຍຂໍ້ມູນຂ່າວສານ

18.27 ສຳລັບແຕ່ລະປະເພດຊັບສົມບັດຄົງທີ່ບໍ່ມີຕົວຕົນ, ວິສາຫະກິດຕ້ອງເປີດເຜີຍ :

(ກ) ອາຍຸການນຳໃຊ້ ຫຼື ອັດຕາການຫັກຄ່າຫຼຸ້ຍຫ້ຽນ ທີ່ໄດ້ນຳໃຊ້.

(ຂ) ວິທີການການຫັກຄ່າຫຼຸ້ຍຫ້ຽນ ທີ່ໄດ້ນຳໃຊ້.

(ຄ) ມູນຄ່າລວມໃນບັນຊີ ແລະ ຄ່າຫຼຸ້ຍຫ້ຽນສະສົມ (ທີ່ຖືກລວມເຂົ້າ ນຳຂາດທຶນຈາກການເສື່ອມມູນຄ່າສະສົມ) ໃນຕົ້ນ ແລະ ທ້າຍຮອບເວລາລາຍງານ.

(ງ) ລາຍການ ຫຼື ບັນດາລາຍການຫຼັກ ໃນ**ໃບລາຍງານຜົນໄດ້ຮັບ** ຊຶ່ງໄດ້ເອົາລວມເອົາການຫັກຄ່າຫຼຸ້ຍຫ້ຽນຊັບສົມບັດຄົງທີ່ບໍ່ມີຕົວຕົນ ເຂົ້ານຳ.

(ຈ) ການສົມທຽບຕົວເລກ ລະຫ່ວາງ ມູນຄ່າໃນບັນຊີຂອງຕົ້ນ ແລະ ທ້າຍຮອບເວລາລາຍງານ,ໂດຍແຍກລາຍການ :

(i) ຮັບເຂົ້າຕົ້ນ.

(ii) ສະສາງອອກ.

(iii) ການໄດ້ມາເປັນກຳມະສິດຜ່ານ**ການຄວບກິດจะການ.**

(iv) ການຫັກຄ່າຫຼຸ້ຍຫ້ຽນ.

(v) ຂາດທຶນຈາກການສູນເສຍມູນຄ່າ.

(vi) ສ່ວນປ່ຽນແປງອື່ນໆ.

ບໍ່ຈຳເປັນຕ້ອງສະເໜີການສົມທຽບຕົວເລກດັ່ງກ່າວ ສຳລັບຮອບເວລາຜ່ານໆມາ.

18.28 ວິສາຫະກິດຍັງຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ອີກ :

(ກ) ຄຳອະທິບາຍ, ມູນຄ່າໃນບັນຊີ ແລະ ໄລຍະເວລາການຫັກຄ່າຫຼຸ້ຍຫ້ຽນທີ່ຍັງເຫຼືອ ສຳລັບຊັບສົມບັດຄົງທີ່ບໍ່ມີຕົວຕົນ ທຸກລາຍການ, ທີ່ເປັນສິ່ງ**ສຳຄັນ** ສຳລັບ**ເອກະສານລາຍງານການເງິນ**ຂອງວິສາຫະກິດ.

(ຂ) ສຳລັບຊັບສິນສົມບັດຄົງທີ່ບໍ່ມີຕົວຕົນທີ່ໄດ້ມາເປັນກຳມະສິດດ້ວຍເງິນຊ່ວຍໜູນຂອງລັດຖະບານ ແລະ ໄດ້ຖືກຮັບຮູ້ລາຍການບັນຊີເບື້ອງຕົ້ນຕາມມູນຄ່າຍຸຕິທຳ (ເບິ່ງວັກ 18.12) :

(i) ມູນຄ່າຍຸຕິທຳທີ່ໄດ້ຖືກຮັບຮູ້ລາຍການບັນຊີເບື້ອງຕົ້ນ ສຳລັບຊັບສິນດັ່ງກ່າວ, ແລະ

(ii) ມູນຄ່າໃນບັນຊີ ຂອງຊັບສິນເຫຼົ່ານັ້ນ.

(ຄ) ຄວາມມີຈິງ ແລະ ມູນຄ່າໃນບັນຊີ ຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນ ຊຶ່ງວິສາຫະກິດມີພຽງແຕ່ສິດທິຈຳກັດດ້ານກຳມະສິດ ຫຼື ຊຶ່ງໄດ້ເອົາໄປຂວດຈຳເປັນຫຼັກຊັບຄ້ຳປະກັນໜີ້ສິນ.

(ງ) ຈຳນວນເງິນຂໍ້ຜູກພັນຕາມສັນຍາ ໃນການໄດ້ຊັບສົມບັດຄົງທີ່ບໍ່ມີຕົວຕົນ ມາເປັນກຳມະສິດ.

18.29 ວິສາຫະກິດຕ້ອງເປີດເຜີຍມູນຄ່າລວມ ກ່ຽວກັບຄ່າໃຊ້ຈ່າຍຄົ້ນຄ້ວາ ແລະ ການພັດທະນາ ທີ່ໄດ້ຖືກຮັບຮູ້ລາຍການບັນຊີເປັນລາຍຈ່າຍໃນປີ (ໝາຍເຖິງຈຳນວນເງິນຄ່າໃຊ້ຈ່າຍທີ່ໄດ້ເກີດຂຶ້ນພາຍໃນ ສຳລັບການຄົ້ນຄ້ວາ ແລະ ການພັດທະນາທີ່ບໍ່ທັນໄດ້ຈົດເຂົ້າເປັນຕົ້ນທຶນ ຂອງຊັບສິນໜຶ່ງອື່ນອີກ ຊຶ່ງຖືກຕ້ອງຕາມເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີຂອງມາດຕະຖານສະບັບນີ້).

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| 18.23<br>18.24 | ຕາມມາດຕະຖານ FRS ສຳລັບ ວທຍ, ຈຳນວນເງິນຫັກຄ່າຫຼຸ້ຍຫ້ຽນ ແມ່ນຕົ້ນທຶນຂອງຊັບສິນໃດໜຶ່ງ, ຫຼື ຈຳນວນເງິນອື່ນ ທີ່ຖືກແທນ ສຳລັບຕົ້ນທຶນ ຫັກ**ມູນຄ່າເສດເຫຼືອ** ຂອງຊັບສິນນັ້ນ.<br>ໃນມາດຕະຖານ FRS ສຳລັບ ວນກ, ຈຳນວນເງິນຫັກຄ່າຫຼຸ້ຍຫ້ຽນ ບໍ່ຫຼຸດລົງ ໂດຍມູນຄ່າເສດເຫຼືອ (ເບິ່ງ ນິຍາມ ຂອງຈຳນວນເງິນຫັກຄ່າຫຼຸ້ຍຫ້ຽນ). ວັກເຫຼົ່ານີ້ ຖືກປັບປຸງ. ວັກ 18.23 ຖືກຕັດອອກ ແລະ ວັກ 18.24 ຖືກປັບປຸງ. |

# ໝວດ 19

# ການຄວບກິດຈະການ ແລະ ຄ່ານິຍົມ

***ໝວດນີ້ ພິຈາລະນາເຖິງເຫດການດ້ານເສດຖະກິດ ຊຶ່ງຍັງບໍ່ທັນມີ ໃນ ສປປ ລາວ ແຕ່ຄາດວ່າ ຈະມີໃນປີ ຂ້າງໜ້າ.***

## ຂອບເຂດຂອງໝວດນີ້

19.1 ໝວດດັ່ງກ່າວນີ້ ນຳໃຊ້ສຳລັບການລົງບັນຊີ **ການຄວບກິດຈະການ.** ໝວດດັ່ງກ່າວນີ້ ໃຫ້ຄຳແນະນຳ ກ່ຽວກັບແບບວິທີຈຳແນກຜູ້ຊື້ກິດຈະການ, ການຕີມູນຄ່າ ຕົ້ນທຶນການຄວບກິດຈະການ ແລະ ການຈັດສັນຕົ້ນທຶນດັ່ງກ່າວ ລະຫ່ວາງ ຊັບສິນທີ່ໄດ້ມາເປັນກຳມະສິດ ແລະ ໜີ້ສິນ ແລະ ເງິນແຮ ສຳລັບ**ໜີ້ສິນທີ່**ສັນນິຖານວ່າ**ອາດເກີດຂຶ້ນ**. ນອກນັ້ນ ຍັງເວົ້າເຖິງການບັນຊີ ກ່ຽວກັບ**ຄ່ານິຍົມ** ທັງໃນເວລາການຄວບກິດຈະການ ແລະ ພາຍຫຼັງ.

19.2 ໝວດດັ່ງກ່າວກຳນົດການບັນຊີ ສຳລັບການການຄວບກິດຈະການ ຍົກເວັ້ນ :

(ຂ) ການສ້າງຕັ້ງ**ວິສາຫະກິດປະສົມ**.

(ຄ) ການຊື້ກຸ່ມຊັບສິນ ທີ່ບໍ່ປະກອບເປັນກິດຈະການໃດໜຶ່ງ.

## ຄຳນິຍາມ ກ່ຽວກັບການຄວບກິດຈະການ

19.3 ການຄວບກິດຈະການ ແມ່ນການເຕົ້າໂຮມວິສາຫະກິດ ຫຼື ກິດຈະການຕ່າງກັນ ເປັນວິສາຫະກິດລາຍງານອັນດຽວ. ຜົນຂອງການຄວບກິດຈະການເກືອບວ່າທັງໝົດ, ມີພຽງແຕ່ວິສາຫະກິດດຽວເທົ່ານັ້ນ, ຊຶ່ງເປັນຜູ້ຊື້ກິດຈະການ, ໄດ້ຄວບຄຸມໜຶ່ງ ຫຼື ຫຼາຍກິດຈະການອື່ນ, ຊຶ່ງເປັນວິສາຫະກິດທີ່ຖືກຊື້. ມື້ຊື້ກິດຈະການ ແມ່ນມື້ທີ່ຜູ້ຊື້ກິດຈະການໄດ້ຄວບຄຸມວິສາຫະກິດທີ່ຖືກຊື້ຢ່າງແທ້ຈິງ.

19.4 ການຄວບກິດຈະການ ສາມາດຈັດເປັນໂຄງປະກອບຕາມຫຼາຍຮູບແບບ ເນື່ອງຈາກສາຍເຫດທາງດ້ານກົດໝາຍ, ສ່ວຍສາອາກອນ ຫຼື ອື່ນໆ. ອາດເປັນການຊື້ຊັບສິນສຸດທິທັງໝົດຂອງວິສາຫະກິດອື່ນ, ການຮັບຮູ້ໜີ້ສິນຂອງວິສາຫະກິດອື່ນ, ຫຼື ການຊື້ບາງຊັບສິນສຸດທິຂອງວິສາຫະກິດອື່ນ ຊຶ່ງ, ຖ້າເອົາລວມເຂົ້າກັນ, ຈະປະກອບເປັນໜຶ່ງ ຫຼື ຫຼາຍກິດຈະການ.

19.5 ການຄວບກິດຈະການອາດເປັນຜົນມາຈາກການຈຳໜ່າຍເຄື່ອງມືການເງິນປະເພດທຶນເຈົ້າຂອງ, ການໂອນເງິນສົດ, **ສິ່ງທຽບເທົ່າເງິນສົດ** ຫຼື ຊັບສິນອື່ນໆ, ຫຼື ດ້ວຍການປະສົມປະສານສິ່ງດັ່ງກ່າວເຫຼົ່ານີ້. ອາດມີລາຍການເຄື່ອນໄຫວລະຫ່ວາງບັນດາຜູ້ຖືຮຸ້ນຂອງວິສາຫະກິດທີ່ຄວບເຂົ້າກັນ ຫຼື ລະຫ່ວາງວິສາຫະກິດໜຶ່ງ ກັບຜູ້ຖືຮຸ້ນຂອງອີກວິສາຫະກິດໜຶ່ງ. ການຄວບກິດຈະການອາດກ່ຽວຂ້ອງກັບການປັບປຸງຄືນໂຄງປະກອບຂອງໜຶ່ງ ຫຼື ຫຼາຍວິສາຫະກິດທີ່ຄວບເຂົ້າກັນ.

## ການບັນຊີ

19.6 ການຄວບກິດຈະການທັງໝົດ ຕ້ອງໄດ້ລົງບັນຊີໂດຍນຳໃຊ້ວິທີຊື້ກິດຈະການ.

19.7 ການນຳໃຊ້ວິທີຊື້ກິດຈະການ ຈຳຕ້ອງໄດ້ຜ່ານຂັ້ນຕອນດັ່ງລຸ່ມນີ້ :

(ກ) ການຈຳແນກຜູ້ຊື້ກິດຈະການ.

(ຂ) ການຕີມູນຄ່າຕົ້ນທຶນຂອງການຄວບກິດຈະການ.

(ຄ) ການຈັດແບ່ງ, ໃນມື້ຊື້ກິດຈະການ, ຕົ້ນທຶນຂອງການຄວບກິດຈະການ ເຂົ້າໃສ່ຊັບສິນທີ່ໄດ້ຊື້ ແລະ ໜີ້ສິນ ແລະ ເງິນແຮສຳລັບ**ໜີ້ສິນ**ທີ່ສັນນິຖານວ່າ**ອາດເກີດຂຶ້ນ**.

## ການຈຳແນກຜູ້ຊື້ກິດຈະການ

19.8 ຕ້ອງໄດ້ຈຳແນກຜູ້ຊື້ກິດຈະການ ສຳລັບທຸກການຄວບກິດຈະການ. ຜູ້ຊື້ແມ່ນວິສາຫະກິດທີ່ຄວບເຂົ້າກັນ ຊຶ່ງຄວບຄຸມ ກິດຈະການອື່ນ ທີ່ຄວບເຂົ້າກັນ.

19.9 ການຄວບຄຸມ ແມ່ນສິດອຳນາດໃນການບໍລິຫານນະໂຍບາຍດ້ານການເງິນ ແລະທຸລະກິດຂອງກິດຈະການໃດໜຶ່ງ ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກການເຄື່ອນໄຫວ.

19.10 ເຖິງແມ່ນວ່າ ບາງຄັ້ງຄາວ ອາດຈະມີຄວາມຫຍຸ້ງຍາກໃນການຈຳແນກຜູ້ຊື້ກິດຈະການ, ໂດຍທົ່ວໄປ ຈະມີຕົວຊີ້ບອກທີ່ຢັ້ງຢືນວ່າມີຜູ້ຊື້ລາຍໜຶ່ງ. ຕົວຢ່າງ :

(ກ) ຖ້າວ່າ**ມູນຄ່າຍຸຕິທຳ**ຂອງໜຶ່ງໃນບັນດາວິສາຫະກິດທີ່ຄວບເຂົ້າກັນ ຫາກສູງກ່ວາ ຂອງວິສາຫະກິດທີ່ຄວບເຂົ້າກັນອື່ນຢ່າງເດັ່ນຊັດ, ເປັນໄປໄດ້ທີ່ວ່າວິສາຫະກິດທີ່ມີມູນຄ່າຍຸຕິທຳທີ່ສູງກ່ວາໝູ່ນັ້ນ ເປັນຜູ້ຊື້ກິດຈະການ.

(ຂ) ຖ້າວ່າການຄວບກິດຈະການ ເປັນຜົນມາຈາກການແລກປ່ຽນເຄື່ອງມືການເງິນປະເພດທຶນເຈົ້າຂອງສາມັນ ທີ່ໃຫ້ສິດລົງຄະແນນສຽງກັບ ເງິນສົດ ຫຼື ຊັບສິນອື່ນໆ, ເປັນໄປໄດ້ທີ່ວ່າວິສາຫະກິດຜູ້ມອບເງິນສົດ ຫຼື ຊັບສິນອື່ນໃຫ້ ເປັນຜູ້ຊື້ກິດຈະການ.

(ຄ) ຖ້າວ່າການຄວບກິດຈະການ ທີ່ເຮັດໃຫ້ຄະນະບໍລິຫານຂອງໜຶ່ງໃນວິສາຫະກິດທີ່ຄວບເຂົ້າກັນ ມີອິດທິພົນຕໍ່ການເລືອກເຟັ້ນທີມງານຄະນະບໍລິຫານຂອງວິສາຫະກິດທີ່ເກີດຈາກການຄວບເຂົ້າກັນ, ເປັນໄປໄດ້ທີ່ວ່າວິສາຫະກິດນັ້ນ ຊຶ່ງມີຄະນະບໍລິຫານທີ່ມີອຳນາດດັ່ງກ່າວ ເປັນຜູ້ຊື້ກິດຈະການ.

## ຕົ້ນທຶນຂອງການຄວບກິດຈະການ

19.11 ຜູ້ຊື້ກິດຈະການ ຕ້ອງຕີມູນຄ່າຕົ້ນທຶນການຄວບກິດຈະການ ເປັນລວມຍອດຂອງ :

(ກ) ມູນຄ່າຍຸຕິທຳຂອງ ຊັບສິນທີ່ໄດ້ມອບໃຫ້, ໜີ້ສິນທີ່ໄດ້ເກີດຂຶ້ນ ຫຼື ສົມມຸດໄວ້, ແລະ ເຄື່ອງມືການເງິນປະເພດທຶນເຈົ້າຂອງທີ່ອອກໂດຍຜູ້ຊື້ກິດຈະການ ໃນມື້ມີການແລກປ່ຽນ ການຊື້ຊັບສິນ, ບວກກັບ

(ຂ) ທຸກຕົ້ນທຶນທີ່ຕິດພັນໂດຍກົງກັບການຄວບກິດຈະການ.

## ການປັບປຸງຕົ້ນທຶນຂອງການຄວບກິດຈະການທີ່ອາດເກີດຂຶ້ນຈາກເຫດການໃນອະນາຄົດ

19.12 ຖ້າວ່າສັນຍາການຄວບກິດຈະການ ໃຫ້ມີການປັບປຸງຕົ້ນທຶນຂອງການຄວບກິດຈະການ ທີ່ອາດເກີດຂຶ້ນຈາກເຫດການໃນອະນາຄົດ, ຜູ້ຊື້ກິດຈະການຕ້ອງເອົາຕົວເລກຄາດຄະເນປະຕິບັດ ກ່ຽວກັບການປັບປຸງດັ່ງກ່າວເຂົ້າໃນຕົ້ນທຶນການຄວບກິດຈະການໃນມື້ຊື້ກິດຈະການ ຖ້າຫາກການປັບປຸງນັ້ນ **ອາດເປັນໄປໄດ້** ແລະ ສາມາດຖືກຕີມູນຄ່າຢ່າງໜ້າເຊື່ອຖືໄດ້.

19.13 ເຖິງຢ່າງໃດກໍດີ, ຖ້າວ່າບໍ່ໄດ້ມີການຮັບຮູ້ລາຍການບັນຊີ ການປັບປຸງບົ່ມຊ້ອນໃນມື້ຊື້ກິດຈະການ, ແຕ່ຖ້າວ່າຕາມຫຼັງມາ ລາຍການປັບປຸງດັ່ງກ່າວອາດເປັນໄປໄດ້ ແລະສາມາດຖືກຕີມູນຄ່າຢ່າງໜ້າເຊື່ອຖືໄດ້, ຕ້ອງໄດ້ລົງບັນຊີສິ່ງຕອບແທນເພີ້ມເຕີມດັ່ງກ່າວ ເປັນການປັບປຸງຕົ້ນທຶນການຄວບກິດຈະການ.

## ການຈັດແບ່ງຕົ້ນທຶນການຄວບກິດຈະການເຂົ້າຊັບສິນທີ່ໄດ້ຊື້ ແລະ ໜີ້ສິນ ແລະ ໜີ້ສິນ ທີ່ສັນນິຖານວ່າອາດເກີດຂຶ້ນ

19.14 ຜູ້ຊື້ກິດຈະການຕ້ອງຈັດແບ່ງຕົ້ນທຶນການຄວບກິດຈະການ, ໃນມື້ຊື້ກິດຈະການ, ໂດຍຮັບຮູ້ລາຍການບັນຊີ ຊັບສິນ ທີ່ຈຳແນກໄດ້ ແລະ ໜີ້ສິນ ຂອງຫົວໜ່ວຍທີ່ຖືກຊື້ ແລະ ເງິນແຮສຳລັບໜີ້ສິນທີ່ອາດເກີດຂຶ້ນ ຖືກຕ້ອງຕາມເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີ ໃນວັກ 19.20 ຕາມມູນຄ່າຍຸຕິທຳໃນມື້ນັ້ນ. ສ່ວນຜິດດ່ຽງທຸກປະການ ລະຫ່ວາງຕົ້ນທຶນການຄວບກິດຈະການ ແລະ ມູນຄ່າຍຸຕິທຳສຸດທິຂອງຊັບສິນທີ່ຈຳແນກໄດ້, ໜີ້ສິນ, ແລະ ເງິນແຮບ້ວງໜີ້ສິນທີ່ອາດເກີດຂຶ້ນ ຊຶ່ງໄດ້ຖືກຮັບຮູ້ນັ້ນ ຕ້ອງໄດ້ລົງບັນຊີຕາມວັກ 19.22 ຫາ 9.24 (ເປັນຄ່ານິຍົມ ຫຼື ອັນທີ່ເອີ້ນວ່າ «ຄ່ານິຍົມຕິດລົບ»).

19.15 ຜູ້ຊື້ກິດຈະການ ຕ້ອງແຍກຮັບຮູ້ລາຍການບັນຊີ ຊັບສິນ ທີ່ຈຳແນກໄດ້, ໜີ້ສິນ, ແລະ ໜີ້ສິນທີ່ອາດເກີດຂຶ້ນ ຂອງຫົວໜ່ວຍທີ່ຖືກຊື້ ໃນມື້ຊື້ກິດຈະການ, ກໍຕໍ່ເມື່ອວ່າ ລາຍການດັ່ງກ່າວຖືກຕ້ອງຕາມເງື່ອນໄຂມາດຕະຖານດັ່ງລຸ່ມນີ້ ໃນມື້ນັ້ນ :

(ກ) ໃນກໍລະນີ ຂອງຊັບສິນທີ່ບໍ່ແມ່ນຊັບສົມບັດຄົງທີ່ບໍ່ມີຕົວຕົນ, ອາດເປັນໄປໄດ້ວ່າ ຜູ້ຊື້ກິດຈະການ ຈະໄດ້ຮັບຜົນປະ

ໂຫຍດດ້ານເສດຖະກິດທັງໝົດໃນອະນາຄົດ ແລະ ສາມາດຕີມູນຄ່າຍຸຕິທຳຢ່າງໜ້າເຊື່ອຖືໄດ້.

(ຂ) ໃນກໍລະນີ ຂອງໜີ້ສິນທີ່ບໍ່ແມ່ນໜີ້ສິນທີ່ອາດເກີດຂຶ້ນ, ອາດເປັນໄປໄດ້ວ່າ ຈະມີການສູນເສຍຊັບພະຍາກອນເພື່ອສະສາງພັນທະ ແລະ ສາມາດຕີມູນຄ່າຍຸຕິທຳຂອງລາຍການດັ່ງກ່າວຢ່າງໜ້າເຊື່ອຖືໄດ້.

(ຄ) ໃນກໍລະນີ ຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນ ຫຼື ໜີ້ສິນທີ່ອາດເກີດຂຶ້ນ, ສາມາດຕີມູນຄ່າຍຸຕິທຳຂອງລາຍການດັ່ງກ່າວຢ່າງໜ້າເຊື່ອຖືໄດ້.

19.16 ໃບລາຍງານຜົນໄດ້ຮັບສັງລວມຂອງຜູ້ຊື້ກິດຈະການ ຕ້ອງລວມມີກຳໄລ ແລະ ຂາດທຶນຂອງຫົວໜ່ວຍທີ່ຖືກຊື້ນັບຈາກມື້ຊື້ກິດຈະການ ໂດຍເອົາລາຍຮັບ ແລະ ລາຍຈ່າຍຂອງວິສາຫະກິດທີ່ຖືກຊື້ ບົນພື້ນຖານຂອງຕົ້ນທຶນການຄວບກິດຈະການ ສຳລັບຜູ້ຊື້ກິດຈະການ. ຕົວຢ່າງ ລາຍຈ່າຍຄ່າຫຼຸ້ຍຫ້ຽນ ທີ່ໄດ້ເອົາເຂົ້າ ນັບຈາກມື້ຊື້ກິດຈະການໃນໃບລາຍງານຜົນໄດ້ຮັບສັງລວມຂອງຜູ້ຊື້ກິດຈະການ ບ້ວງຊັບສິນທີ່ຫັກຄ່າຫຼຸ້ຍຫ້ຽນໄດ້ຂອງຫົວໜ່ວຍທີ່ຖືກຊື້ ຕ້ອງໄດ້ອີງຕາມມູນຄ່າຍຸຕິທຳຂອງຊັບສິນທີ່ຫັກຄ່າຫຼຸ້ຍຫ້ຽນໄດ້ດັ່ງກ່າວໃນມື້ຊື້ກິດຈະການ, ຊຶ່ງຖືວ່າເປັນຕົ້ນທຶນ ຂອງຜູ້ຊື້ກິດຈະການ.

19.17 ການນຳໃຊ້ວິທີຊື້ກິດຈະການ ເລີ່ມຕົ້ນແຕ່ມື້ຊື້ກິດຈະການ, ຊຶ່ງແມ່ນມື້ທີ່ຜູ້ຊື້ກິດຈະການໄດ້ເຂົ້າຄວບຄຸມຫົວໜ່ວຍທີ່ຖືກຊື້. ເນື່ອງຈາກວ່າການຄວບຄຸມແມ່ນສິດອຳນາດໃນການບໍລິຫານດ້ານນະໂຍບາຍການເງິນ ແລະ ທຸລະກິດຂອງກິດຈະການໃດໜຶ່ງເພື່ອໄດ້ຮັບຜົນປະໂຫຍດຈາກການເຄື່ອນໄຫວ, ບໍ່ຈຳເປັນຕ້ອງປິດບັນຊີ ຫຼື ປັບປຸງລາຍການເຄື່ອນໄຫວ ຕາມກົດໝາຍກ່ອນທີ່ຜູ້ຊື້ກິດຈະການມີການຄວບຄຸມ. ທຸກຂໍ້ເທັດຈິງ ແລະ ສະພາບການອ້ອມຮອບການຄວບກິດຈະ ການຕ້ອງໄດ້ຮັບການພິຈາລະນາເພື່ອເບິ່ງວ່າເວລາໃດຜູ້ຊື້ກິດຈະການໄດ້ເຂົ້າຄວບຄຸມແທ້.

19.18 ອີງຕາມວັກ 19.14, ຜູ້ຊື້ກິດຈະການ ແຍກຮັບຮູ້ລາຍການບັນຊີ ພຽງແຕ່ຕໍ່ຊັບສິນ ທີ່ຈຳແນກໄດ້, ໜີ້ສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ຂອງຫົວໜ່ວຍທີ່ຖືກຊື້ ທີ່ມີໃນມື້ຊື້ກິດຈະການ ແລະ ຖືກຕ້ອງຕາມເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີ ໃນວັກ 19.15. ສະນັ້ນ :

(ກ) ຜູ້ຊື້ກິດຈະການຕ້ອງຮັບຮູ້ລາຍການບັນຊີໜີ້ສິນ ເວລາຢຸດຕິ ຫຼື ຫຼຸດ ກິດຈະກຳຂອງຫົວໜ່ວຍທີ່ຖືກຊື້ ໃນຂອບຂ່າຍຂອງການຈັດແບ່ງຕົ້ນທຶນການຄວບກິດຈະການ ກໍຕໍ່ເມື່ອວ່າ, ໃນມື້ຊື້ກິດຈະການ, ຫົວໜ່ວຍທີ່ຖືກຊື້ ມີໜີ້ສິນທີ່ມີຈິງ ເພື່ອການປັບປຸງຄືນໂຄງສ້າງ, ທີ່ໄດ້ຖືກຮັບຮູ້ລາຍການບັນຊີຕາມໝວດ 21 *ເງິນແຮ ແລະ ສິ່ງທີ່ອາດເກີດຂຶ້ນ* ; ແລະ

(ຂ) ເວລາຈັດແບ່ງຕົ້ນທຶນການຄວບກິດຈະການ, ບໍ່ໃຫ້ຜູ້ຊື້ກິດຈະການ ຮັບຮູ້ລາຍການບັນຊີໜີ້ສິນ ບ້ວງການຂາດທຶນໃນອະນາຄົດ ຫຼື ຕົ້ນທຶນອື່ນໆທີ່ຄາດວ່າຈະເກີດຂຶ້ນອັນເປັນຜົນເນື່ອງຈາກການຄວບກິດຈະການ.

19.19 ຖ້າວ່າການຮັບຮູ້ລາຍການບັນຊີເບື້ອງຕົ້ນ ກ່ຽວກັບການຄວບກິດຈະການຫາກຍັງບໍ່ທັນສຳເລັດໃນທ້າຍຮອບເວລາລາຍງານທີ່ມີການຄວບກິດຈະການເກີດຂຶ້ນ, ຜູ້ຊື້ກິດຈະການຕ້ອງຮັບຮູ້ລາຍການບັນຊີ ໃນເອກະສານລາຍງານການເງິນຂອງຕົນ ຈຳນວນເງິນຊົ່ວຄາວ ກ່ຽວກັບລາຍການຊຶ່ງການລົງບັນຊີບໍ່ທັນສຳເລັດຜົນ. ພາຍໃນສິບສອງເດືອນ ຫຼັງຈາກມື້ຊື້ກິດຈະການ, ຜູ້ຊື້ກິດຈະການຕ້ອງປັບປຸງຍ້ອນຫຼັງຈຳນວນເງິນຊົ່ວຄາວທີ່ໄດ້ຮັບຮູ້ລາຍການບັນຊີ ເປັນຊັບສິນ ແລະ ໜີ້ສິນໃນມື້ຊື້ກິດຈະການ (ໝາຍຄວາມວ່າລົງບັນຊີລາຍການດັ່ງກ່າວຄືກັນກັບໄດ້ເກີດຂຶ້ນໃນມື້ຊື້ກິດຈະການ) ເພື່ອສ່ອງແສງເຖິງຂໍ້ມູນຂ່າວສານທີ່ໄດ້ຮັບໃໝ່. ຖ້າກາຍໄລຍະສິບສອງເດືອນຫຼັງຈາກມື້ຊື້ກິດຈະການແລ້ວ, ການປັບປຸງລາຍການລົງບັນຊີເບື້ອງຕົ້ນໃນຂອບເຂດການຄວບກິດຈະການຕ້ອງຮັບຮູ້ລາຍການບັນຊີ ພຽງແຕ່ເພື່ອກວດແກ້ຂໍ້ຜິດພາດ ຕາມຂໍ້ກຳນົດໃນໝວດ 10 *ນະໂຍບາຍການບັນຊີ, ການຄາດຄະເນຕົວເລກປະຕິບັດ ແລະ ຂໍ້ຜິດພາດ* ເທົ່ານັ້ນ.

## ໜີ້ສິນທີ່ອາດເກີດຂຶ້ນ

19.20 ວັກ 19.14 ກຳນົດວ່າຜູ້ຊື້ກິດຈະການ ຕ້ອງແຍກຮັບຮູ້ລາຍການບັນຊີເງິນແຮບ້ວງໜີ້ສິນທີ່ອາດເກີດຂຶ້ນຂອງຫົວໜ່ວຍທີ່ຖືກຊື້ ພຽງແຕ່ຖ້າວ່າມູນຄ່າຍຸຕິທຳສາມາດຕີມູນຄ່າຢ່າງໜ້າເຊື່ອຖືໄດ້. ຖ້າຫາກບໍ່ສາມາດຕີມູນຄ່າຢ່າງໜ້າເຊື່ອຖືໄດ້ :

(ກ) ຈະມີຜົນກະທົບ ຕໍ່ຈຳນວນເງິນທີ່ໄດ້ລົງບັນຊີເປັນຄ່ານິຍົມ ຫຼື ອີງຕາມວັກ 19.24; ແລະ

(ຂ) ຜູ້ຊື້ກິດຈະການ ຕ້ອງເປີດເຜີຍຂໍ້ມູນຂ່າວສານທີ່ໄດ້ກຳນົດໄວ້ໃນໝວດ 21 ກ່ຽວກັບ ໜີ້ສິນທີ່ອາດເກີດຂຶ້ນ.

19.21 ພາຍຫຼັງການຮັບຮູ້ລາຍການບັນຊີເບື້ອງຕົ້ນ, ຜູ້ຊື້ກິດຈະການຕ້ອງຕີມູນຄ່າໜີ້ສິນທີ່ອາດເກີດຂຶ້ນ ຊຶ່ງໄດ້ແຍກຮັບຮູ້ລາຍການບັນຊີຕາມວັກ 19.14, ຕາມມູນຄ່າທີ່ສູງກ່ວາໝູ່ ຂອງ:

(ກ) ຈຳນວນເງິນທີ່ຈະໄດ້ຮັບຮູ້ລາຍການບັນຊີຕາມໝວດ 21, ແລະ

(ຂ) ຈຳນວນເງິນທີ່ໄດ້ຮັບຮູ້ລາຍການບັນຊີເບື້ອງຕົ້ນ ຫັກຈຳນວນເງິນທີ່ໄດ້ຮັບຮູ້ລາຍການບັນຊີໃນເມື່ອກ່ອນ ເປັນລາຍຮັບ ຕາມຂໍ້ກຳນົດໃນໝວດ 23 *ລາຍຮັບ.*

## ຄ່ານິຍົມ

19.22 ໃນມື້ຊື້ກິດຈະການ, ຜູ້ຊື້ກິດຈະການຕ້ອງ :

(ກ) ຮັບຮູ້ລາຍການບັນຊີຄ່ານິຍົມທີ່ໄດ້ມາ ໃນການຄວບກິດຈະການ ເປັນຊັບສິນ, ແລະ

(ຂ) ໃນເບື້ອງຕົ້ນ ຕີມູນຄ່າ ຄ່ານິຍົມດັ່ງກ່າວ, ຕາມຕົ້ນທຶນ, ຊຶ່ງແມ່ນສ່ວນເກີນລະຫ່ວາງຕົ້ນທຶນການຄວບກິດຈະການ ຈາກມູນຄ່າຍຸຕິທຳສຸດທິຂອງຊັບສິນ ທີ່ຈຳແນກໄດ້, ໜີ້ສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ແລະ ໄດ້ຖືກຮັບຮູ້ລາຍການບັນຊີ ຕາມຂໍ້ກຳນົດຂອງວັກ 19.14.

19.23 ພາຍຫຼັງໄດ້ການຮັບຮູ້ລາຍການບັນຊີເບື້ອງຕົ້ນ, ຜູ້ຊື້ກິດຈະການ ຕ້ອງຕີມູນຄ່າ ຄ່ານິຍົມທີ່ໄດ້ມາ ໃນການຄວບກິດຈະການ ຕາມຕົ້ນທຶນຫັກ**ຄ່າຫຼຸ້ຍຫ້ຽນ**ສະສົມ ແລະ ຂາດທຶນຈາກ**ການສູນເສຍມູນຄ່າ**ສະສົມອອກ.

(ກ) ວິສາຫະກິດຕ້ອງປະຕິບັດຕາມຫຼັກການທີ່ໄດ້ກຳນົດໃນວັກ 18.19 ຫາ 18.24 ສຳລັບການຫັກຄ່າຫຼຸ້ຍຫ້ຽນຄ່ານິຍົມ. ຖ້າວ່າວິສາຫະກິດ ບໍ່ສາມາດຄາດຄະເນອາຍຸການນຳໃຊ້ຂອງຄ່ານິຍົມ ຢ່າງໜ້າເຊື່ອຖືໄດ້, ຈະຖືວ່າອາຍຸການດັ່ງກ່າວເທົ່າກັບ ສິບປີ.

(ຂ) ວິສາຫະກິດຕ້ອງປະຕິບັດໝວດ 27 *ການສູນເສຍມູນຄ່າຂອງຊັບສິນ* ເພື່ອຮັບຮູ້ລາຍການບັນຊີ ແລະ ຕີມູນຄ່າ ການສູນເສຍມູນຄ່າຂອງຄ່ານິຍົມ.

## ສ່ວນເກີນ ຈາກມູນຄ່າຍຸຕິທຳສຸດທິຂອງຊັບສິນທີ່ຈຳແນກໄດ້, ໜີ້ສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ຂອງຫົວໜ່ວຍທີ່ຖືກຊື້

19.24 ຖ້າວ່າມູນຄ່າຍຸຕິທຳສຸດທິຂອງຊັບສິນທີ່ຈຳແນກໄດ້, ໜີ້ສິນ ແລະ ເງິນແຮບ້ວງໜີ້ສິນທີ່ອາດເກີດຂຶ້ນ ຊຶ່ງຖືກຮັບຮູ້ລາຍການບັນຊີຕາມຂໍ້ກຳນົດ ໃນວັກ 19.14 ເກີນຕົ້ນທຶນການຄວບກິດຈະການ (ບາງຄັ້ງຄາວເອີ້ນວ່າ «ຄ່ານິຍົມຕິດລົບ»), ຜູ້ຊື້ກິດຈະການຕ້ອງ :

(ກ) ປະເມີນຜົນຄືນໃໝ່ການຈຳແນກ ແລະ ການຕີມູນຄ່າຊັບສິນ, ໜີ້ສິນ, ແລະ ເງິນແຮເພື່ອໜີ້ສິນທີ່ອາດເກີດຂຶ້ນຂອງຜູ້ຖືກຊື້ ແລະ ການຕີມູນຄ່າຕົ້ນທຶນການຄວບກິດຈະການ, ແລະ

(ຂ) ຮັບຮູ້ລາຍການບັນຊີໃນທັນໃດ ທຸກສ່ວນເກີນທີ່ຍັງເຫຼືອ ຫຼັງຈາກໄດ້ມີການປະເມີນຜົນຄືນໃໝ່ດັ່ງກ່າວ ທີ່ໃນກຳໄລ ຫຼື ຂາດທຶນ.

# ການເປີດເຜີຍຂໍ້ມູນຂ່າວສານ

## ກ່ຽວກັບການຄວບກິດຈະການ ທີ່ເກີດຂຶ້ນໃນຮອບເວລາລາຍງານ

19.25 ສຳລັບການຄວບກິດຈະການທຸກລາຍ ທີ່ໄດ້ດຳເນີນໃນປີ, ຜູ້ຊື້ກິດຈະການຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ :

(ກ) ຊື່ ແລະ ລາຍລະອຽດ ກ່ຽວກັບວິສາຫະກິດ ຫຼື ກິດຈະການ ທີ່ເອົາຄວບເຂົ້າກັນ.

(ຂ) ມື້ຊື້ກິດຈະການ ;

(ງ) ຕົ້ນທຶນການຄວບກິດຈະການ ແລະ ລາຍລະອຽດ ກ່ຽວກັບອົງປະກອບຂອງຕົ້ນທຶນດັ່ງກ່າວ (ເຊັ່ນ ເງິນສົດ, ເຄື່ອງມືການເງິນປະເພດທຶນເຈົ້າຂອງ ແລະ ເຄື່ອງມືການເງິນປະເພດໜີ້) ;

(ຈ) ຈຳນວນເງິນທີ່ໄດ້ຮັບຮູ້ລາຍການບັນຊີ ໃນມື້ຊື້ກິດຈະການ ສຳລັບແຕ່ລະປະເພດຊັບສິນ, ໜີ້ສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນຂອງຫົວໜ່ວຍທີ່ຖືກຊື້, ລວມທັງຄ່ານິຍົມ.

(ສ) ຈຳນວນເງິນຂອງທຸກສ່ວນເກີນ ທີ່ໄດ້ຮັບຮູ້ລາຍການບັນຊີໃນກຳໄລ ຫຼື ຂາດທຶນ ອີງຕາມຂໍ້ກຳນົດຂອງວັກ 19.24

ແລະ ລາຍການຫຼັກຂອງໃບລາຍງານຜົນໄດ້ຮັບສັງລວມ (ແລະ ໃບລາຍງານຜົນໄດ້ຮັບ ຖ້າຫາກໄດ້ສະເໜີ) ຊຶ່ງສ່ວນເກີນດັ່ງກ່າວ ໄດ້ຖືກຮັບຮູ້ລາຍການບັນຊີ ໃນໃບລາຍງານນັ້ນ.

## ກ່ຽວກັບທຸກການຄວບກິດຈະການ

19.26 ຜູ້ຊື້ກິດຈະການຕ້ອງເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບການສົມທຽບຕົວເລກລະຫ່ວາງ ມູນຄ່າໃນບັນຊີຂອງຄ່ານິຍົມ ໃນຕົ້ນ ແລະ ທ້າຍຮອບເວລາລາຍງານ, ໂດຍແຍກໃຫ້ເຫັນ :

(ກ) ສ່ວນປ່ຽນແປງທີ່ເກີດຂຶ້ນຈາກການຄວບກິດຈະການຄັ້ງໃໝ່.

(ຂ) ຂາດທຶນຈາກການສູນເສຍມູນຄ່າ.

(ຄ) ການຂາຍກິດຈະການ ທີ່ເຄີຍໄດ້ຊື້ໃນເມື່ອກ່ອນອອກ.

(ງ) ສ່ວນປ່ຽນແປງອື່ນໆ.

ບໍ່ຈຳເປັນຕ້ອງໄດ້ສະເໜີການສົມທຽບຕົວເລກດັ່ງກ່າວ ສຳລັບປີການບັນຊີຜ່ານໆມາ.

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| 19.2 (ກ)<br>19.4 – 19.5<br>19.8 - 19.9<br>19.14<br>19.17<br>19.22<br>19.24<br>19-25 (ຄ) | ຖ້າການຄວບກິດຈະການ ເປັນການຊື້ທຶນເຈົ້າຂອງ ຂອງວິສາຫະກິດໃດໜຶ່ງ ໂດຍວິສາຫະກິດໜຶ່ງອີກ ແລະ ຖ້າ ຜູ້ຊື້ ຄວບຄຸມວິສາຫະກິດອື່ນ, ວິສາຫະກິດອື່ນນັ້ນ ເປັນບໍລິສັດໃນກຸ່ມ. ຜູ້ຊື້ ຕ້ອງສ້າງເອກະສານລາຍງານການ ເງິນລວມກິດຈະການ (ເບິ່ງມາດຕະຖານ FRS ສຳລັບ ວທຍ – ໝວດ 9 *ເອກະສານລາຍງານການເງິນລວມ ກິດຈະການ ແລະ ເອກະສານລາຍງານການເງິນສະເພາະກິດຈະການ*) ແລະ ນຳໃຊ້ ມາດຕະຖານ FRS ສຳ ລັບ ວທຍ ຢ່າງເຕັມສ່ວນ.<br>ວັກຕໍ່ໄປນີ້ ຖືກຕັດອອກ ຫຼື ປັບປຸງ:<br>- ຂໍ້ (ກ) ຂອງວັກ 19.2 ທີ່ພົວພັນກັບ ການຄວບກິດຈະການ ຂອງວິສາຫະກິດ ພາຍໃຕ້ການຄວບ ຄຸມລວມ;<br>- ກໍລະນີ ການຊື້ທຶນເຈົ້າຂອງ ຂອງວິສາຫະກິດໃດໜຶ່ງ ໂດຍວິສາຫະກິດໜຶ່ງອີກ (ວັກ 19.4);<br>- ການອ້າງອີງ ເຖິງການຄວບຄຸມ (ວັກ 19.5);<br>- ການອ້າງອີງ ເຖິງການຄວບຄຸມວິສາຫະກິດ (ວັກ 19.8, 19.9, 19.11, 19.17));<br>- ບົດລາຍງານ ຈາກຜົນປະໂຫຍດຂອງຜູ້ຊື້ (ວັກ 19.14, 19.22, 19.24);<br>- ອັດຕາສ່ວນຮ້ອຍ ຂອງທຶນເຈົ້າຂອງທີ່ຊື້ມາ (ວັກ 19.25 (ຄ)). |

# ໝວດ 20

# ສັນຍາເຊົ່າ

## ຂອບເຂດຂອງໝວດນີ້

20.1 ໝວດດັ່ງກ່າວ ກວມເອົາການລົງບັນຊີ ກ່ຽວກັບທຸກສັນຍາເຊົ່າ ທີ່ບໍ່ແມ່ນ :

(ກ) ສັນຍາເຊົ່າ ກ່ຽວກັບການສຳຫຼວດ ຫຼື ການນຳໃຊ້ແຮ່ທາດ, ນ້ຳມັນ, ອາຍແກັສທຳມະຊາດ ແລະ ຊັບພະຍາກອນຕ່າງໆທີ່ຄ້າຍຄືກັນ ທີ່ຟື້ນຟູຄືນບໍ່ໄດ້ (ເບິ່ງໝວດ 34 *ກິດຈະກຳພິເສດ*).

(ຂ) ສັນຍາໃຫ້ອະນຸຍາດ ກ່ຽວກັບລາຍການຕ່າງໆ ເຊັ່ນຟິມຮູບເງົາ, ເທັບບັນທຶກພາບ, ສາກລະຄອນ, ບົດຂຽນ, ໃບປະກາປະດິດສ້າງ ແລະ ລິຂະສິດ (ເບິ່ງໝວດ 18 *ຊັບສິນບັດຄົງທີ່ບໍ່ມີຕົວຕົນ ທີ່ບໍ່ແມ່ນຄ່ານິຍົມ*).

(ງ) ການຕີມູນຄ່າ**ຊັບສິນຊີວະພາບ** ທີ່ຄອບຄອງໂດຍຜູ້ເຊົ່າ ບົນພື້ນຖານສັນຍາເຊົ່າການເງິນ ແລະ ຊັບສິນຊີວະພາບທີ່ຜູ້ໃຫ້ເຊົ່າມອບໃຫ້ນຳໃຊ້ບົນພື້ນຖານສັນຍາເຊົ່າດຳເນີນງານ (ເບິ່ງໝວດ 34).

(ສ) ສັນຍາເຊົ່າການເງິນ ແລະ ສັນຍາເຊົ່າດຳເນີນງານ ທີ່ສ້າງພາລະ.

20.2 ໝວດດັ່ງກ່າວນີ້ນຳໃຊ້ສຳລັບສັນຍາ ທີ່ໂອນສິດນຳໃຊ້ຊັບສິນ, ເຖິງແມ່ນວ່າຈະມີການສະເໜີໃຫ້ຜູ້ໃຫ້ເຊົ່າຕ້ອງໃຫ້ການບໍລິການທີ່ສຳຄັນໃນຂອບຂ່າຍຂອງການນຳໃຊ້ ຫຼື ບຳລຸງຮັກສາຊັບສິນດັ່ງກ່າວ. ໝວດດັ່ງກ່າວນີ້ ບໍ່ນຳໃຊ້ສຳລັບສັນຍາໃຫ້ບໍລິການທີ່ບໍ່ໂອນສິດນຳໃຊ້ຊັບສິນຂອງຄູ່ສັນຍາໜຶ່ງ ໃຫ້ຄູ່ສັນຍາອີກຝ່າຍໜຶ່ງ.

20.3 ບາງສັນຍາ, ເຊັ່ນ ສັນຍາຈ້າງທາງນອກເຮັດ, ສັນຍາໃນຂະແໜງການໂທລະຄົມມະນາຄົມທີ່ໃຫ້ສິດດ້ານຄວາມສາມາດບັນຈຸ, ສັນຍາຮັບ-ຈ່າຍ, ບໍ່ມີຮູບການທາງກົດໝາຍຂອງສັນຍາເຊົ່າ, ແຕ່ຫາກໃຫ້ສິດນຳໃຊ້ຊັບສິນໂດຍແລກປ່ຽນກັບການຊຳລະເງິນ. ເຖິງຢ່າງໃດກໍ່ຕາມ, ສັນຍາດັ່ງກ່າວ ຕ້ອງລົງບັນຊີຕາມໝວດນີ້.

## ການຈັດປະເພດສັນຍາເຊົ່າ

20.4 ສັນຍາເຊົ່າ ຖືກຈັດປະເພດເປັນ**ສັນຍາເຊົ່າການເງິນ** ຖ້າຫາກມີການໂອນ ຄວາມສ່ຽງ ແລະ ຜົນປະໂຫຍດເກືອບທັງໝົດ ທີ່ຕິດພັນກັບກຳມະສິດ. ສັນຍາເຊົ່າ ຖືກຈັດປະເພດເປັນ**ສັນຍາເຊົ່າດຳເນີນງານ** ຖ້າຫາກບໍ່ມີການໂອນຄວາມສ່ຽງແລະຜົນປະໂຫຍດເກືອບທັງໝົດ ທີ່ຕິດພັນກັບກຳມະສິດ.

20.5 ສັນຍາເຊົ່າ ຈະເປັນສັນຍາເຊົ່າການເງິນ ຫຼື ສັນຍາເຊົ່າດຳເນີນງານ ແມ່ນຂຶ້ນກັບເນື້ອແທ້ຂອງລາຍການເຄື່ອນໄຫວ ແຕ່ຫາກບໍ່ແມ່ນຮູບການຂອງສັນຍາ. ຕົວຢ່າງກ່ຽວກັບສະພາບການ, ເປັນແຕ່ລະລາຍ ຫຼື ໃນການຄວບກົດຈະການ, ທີ່ຕາມປົກກະຕິອາດນຳໄປສູ່ການຈັດປະເພດສັນຍາເຊົ່າ ເປັນສັນຍາເຊົ່າການເງິນ ມີຄືດັ່ງລຸ່ມນີ້ :

(ກ) ສັນຍາເຊົ່າໂອນກຳມະສິດຂອງຊັບສິນໃຫ້ຜູ້ເຊົ່າເວລາສິ້ນສຸດອາຍຸສັນຍາເຊົ່າ.

(ຂ) ຜູ້ເຊົ່າ ມີທາງເລືອກຊື້ຊັບສິນໃນລາຄາ ທີ່ຄາດວ່າຈະຕ້ອງຕ່ຳກ່ວາ**ມູນຄ່າຍຸຕິທຳ**ຢ່າງພຽງພໍ ໃນມື້ທີ່ຈະເປີດທາງເລືອກ ເພື່ອວ່າ, ໃນເວລາເລີ່ມປະຕິບັດສັນຍາເຊົ່າ, ຜູ້ເຊົ່າມີຄວາມແນ່ໃຈຢ່າງສົມເຫດສົມຜົນວ່າຈະມີການເປີດທາງເລືອກໃຫ້.

(ຄ) ອາຍຸສັນຍາເຊົ່າກວມເອົາພາກສ່ວນໃຫ່ຍຂອງອາຍຸການນຳໃຊ້ດ້ານເສດຖະກິດຂອງຊັບສິນ ເຖິງແມ່ນວ່າຈະບໍ່ມີການໂອນກຳມະສິດກໍ່ຕາມ.

(ງ) ເວລາເລີ່ມຕົ້ນສັນຍາເຊົ່າ, **ມູນຄ່າປັດຈຸບັນ**ຂອງເງິນການຊຳລະຄ່າເຊົ່າຕ່ຳສຸດ ເທົ່າກັບຢ່າງໜ້ອຍ ມູນຄ່າຍຸຕິທຳ ເກືອບທັງໝົດຂອງຊັບສິນທີ່ໄດ້ເຊົ່າ.

(ຈ) ຊັບສິນທີ່ໄດ້ເຊົ່າ ມີລັກສະນະເນື້ອໃນສະເພາະຕົວ ຊຶ່ງມີພຽງແຕ່ຜູ້ເຊົ່າເທົ່ານັ້ນ ທີ່ສາມາດນຳໃຊ້ໂດຍບໍ່ມີການປ່ຽນ

ແປງໃຫ່ຍແຕ່ປະການໃດ.

20.6 ຕົວຊີ້ບອກສະພາບການ ເປັນແຕ່ລະລາຍ ຫຼື ໃນການຄວບກົດຈະການ ສາມາດເຮັດໃຫ້ສັນຍາເຊົ່າ ຖືກຈັດປະເພດເປັນ ສັນຍາເຊົ່າການເງິນ ມີຄືດັ່ງລຸ່ມນີ້ :

(ກ) ຖ້າວ່າຜູ້ເຊົ່າ ສາມາດລົບລ້າງສັນຍາເຊົ່າ, ການຂາດທຶນຂອງຜູ້ໃຫ້ເຊົ່າທີ່ຕິດພັນກັບການລົບລ້າງສັນຍາ ແມ່ນຄວາມ ຮັບຜິດຊອບຂອງຜູ້ເຊົ່າ.

(ຂ) ສ່ວນໄດ້ ຫຼື ສ່ວນເສຍ ອັນເນື່ອງຈາກພາວະຂຶ້ນໆລົງໆຂອງ**ມູນຄ່າເສດເຫຼືອ**ຂອງຊັບສິນທີ່ໄດ້ໃຫ້ເຊົ່າ ຕົກເປັນຂອງ ຜູ້ເຊົ່າ (ຕົວຢ່າງ ໃນຮູບການຫຼຸດຄ່າເຊົ່າລົງ ຊຶ່ງເທົ່າກັບສ່ວນໃຫ່ຍຂອງການຮັບເງິນຈາກການຂາຍ ໃນຕອນທ້າຍ ຂອງສັນຍາເຊົ່າ).

(ຄ) ຜູ້ເຊົ່າ ສາມາດສືບຕໍ່ການເຊົ່າເປັນຮອບເວລາທີສອງໂດຍເສຍຄ່າເຊົ່າທີ່ຕ່ຳກ່ວາລາຄາທ້ອງຕະຫຼາດຢ່າງຫຼວງຫຼາຍ.

20.7 ຕົວຢ່າງ ແລະ ຕົວຊີ້ບອກ ທີ່ສະເໜີໃນວັກ 20.5 ຫາ 20.6 ຈະບໍ່ມີລັກສະນະແນ່ນອນສະເໝີໄປ. ຖ້າວ່າລັກສະນະເດັ່ນ ອື່ນໆພິສູດໄດ້ຢ່າງຈະແจ້ງວ່າ ສັນຍາເຊົ່າຈະບໍ່ມີການໂອນຄວາມສ່ຽງ ແລະຜົນປະໂຫຍດເກືອບທັງໝົດທີ່ຕິດພັນກັບກຳມະ ສິດ, ສັນຍາເຊົ່ານັ້ນ ກໍຈະຖືກຈັດເປັນປະເພດສັນຍາເຊົ່າດຳເນີນງານ. ຕົວຢ່າງອາດເປັນກໍລະນີ ເຊັ່ນ, ຖ້າວ່າກຳມະສິດ ກ່ຽວກັບຊັບສິນຖືກໂອນໄປໃຫ້ຜູ້ເຊົ່າເວລາສິ້ນສຸດສັນຍາເຊົ່າ ໂດຍມີການຊຳລະຕາມຈຳນວນເງິນຜັນແປ ທີ່ເທົ່າກັບມູນຄ່າ ຍຸຕິທຳໃນເວລານັ້ນຂອງຊັບສິນ, ຫຼືຖ້າວ່າມີຄ່າເຊົ່າທີ່ອາດເກີດຂຶ້ນ ຊຶ່ງເປັນຜົນຕາມມາຈາກການທີ່ວ່າ ຜູ້ເຊົ່າບໍ່ປະເຊີນໜ້າ ກັບຄວາມສ່ຽງ ແລະ ຜົນປະໂຫຍດເກືອບທັງໝົດ ທີ່ຕິດພັນກັບກຳມະສິດ.

20.8 ການຈັດປະເພດສັນຍາເຊົ່າ ດຳເນີນໃນເວລາເລີ່ມຕົ້ນປະຕິບັດສັນຍາເຊົ່າ ແລະ ບໍ່ມີການປ່ຽນແປງຕະຫຼອດເວລາສັນຍາ ເຊົ່າ ເວັ້ນເສຍແຕ່ວ່າຜູ້ເຊົ່າ ແລະ ຜູ້ໃຫ້ເຊົ່າ ຕົກລົງກັນຈະປ່ຽນແປງຂໍ້ກຳນົດຂອງສັນຍາເຊົ່າ (ທີ່ບໍ່ແມ່ນການຕໍ່ອາຍຸທຳ ມະດາຂອງສັນຍາ), ຊຶ່ງໃນກໍລະນີດັ່ງກ່າວ ຕ້ອງໄດ້ມີການປະເມີນຜົນ ການຈັດປະເພດສັນຍາເຊົ່າ ຄືນໃໝ່.

## ເອກະສານລາຍງານການເງິນຂອງຜູ້ເຊົ່າ

### ການຮັບຮູ້ລາຍການບັນຊີເບື້ອງຕົ້ນ

20.9 ຜູ້ເຊົ່າຕ້ອງຮັບຮູ້ລາຍການບັນຊີ ການຊຳລະຄ່າເຊົ່າ ພາຍໃຕ້ສັນຍາເຊົ່າການເງິນ ແລະ ສັນຍາເຊົ່າດຳເນີນງານ (ຊຶ່ງ ບໍ່ລວມເອົາ ຕົ້ນທຶນສຳລັບການບໍລິການ ເຊັ່ນ ການປະກັນໄພ ແລະ ການບຳລຸງຮັກສາ) ເປັນລາຍຈ່າຍ ບົນພື້ນຖານແບບ ສະເໝີຕົວ.

### ການເປີດເຜີຍຂໍ້ມູນຂ່າວສານ

20.13 ຜູ້ເຊົ່າຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ ກ່ຽວກັບ ສັນຍາເຊົ່າການເງິນ:

(ກ) ມູນຄ່າຍຸຕິທຳ ຂອງຊັບສິນ ໃນມື້ສັນຍາ ແລະ ສຳລັບແຕ່ລະປະເພດຊັບສິນ.

(ຂ') ລວມມູນຄ່າໃນບັນຊີ ແລະ ຄ່າຫຼຸ້ຍຫ້ຽນສະສົມ ໃນຕົ້ນ ແລະ ທ້າຍປີການບັນຊີ.

(ຂ) ລວມຍອດເງິນການຊຳລະຄ່າເຊົ່າຕ່ຳສຸດໃນອະນາຄົດໃນທ້າຍຮອບເວລາລາຍງານ, ສຳລັບແຕ່ລະຮອບເວລາດັ່ງລຸ່ມ ນີ້ :

(i) ບໍ່ເກີນໜຶ່ງປີ;

(ii) ເກີນໜຶ່ງປີຂຶ້ນໄປ ແລະ ຫຼຸດຫ້າປີລົງມາ; ແລະ

(iii) ເກີນຫ້າປີຂຶ້ນໄປ.

(ຄ) ຄຳອະທິບາຍທົ່ວໄປ ກ່ຽວກັບຂໍ້ກຳນົດຕົ້ນຕໍຂອງສັນຍາເຊົ່າຂອງຜູ້ເຊົ່າ, ຕົວຢ່າງ ລວມທັງຂໍ້ມູນຂ່າວສານ ກ່ຽວກັບ ຄ່າເຊົ່າທີ່ອາດເກີດຂຶ້ນ, ທາງເລືອກໃນການຕໍ່ອາຍຸຄືນໃໝ່ ຫຼື ໃນການຊື້, ແລະ ຂໍ້ກຳນົດປັບລາຄາຫຼືອັດຕາ, ການ ໃຫ້ເຊົ່າຕໍ່ ແລະ ຂໍ້ຈຳກັດ ທີ່ກຳນົດໄວ້ໃນສັນຍາເຊົ່າ.

20.16 ຜູ້ເຊົ່າຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ ກ່ຽວກັບສັນຍາເຊົ່າດຳເນີນງານ:

(ກ) ລວມຍອດຈຳນວນເງິນການຊຳລະຄ່າເຊົ່າຕ່ຳສຸດໃນອະນາຄົດ ບ້ວງສັນຍາເຊົ່າດຳເນີນງານທີ່ບໍ່ສາມາດຍົກເລີກໄດ້ ສຳລັບແຕ່ລະຮອບເວລາດັ່ງລຸ່ມນີ້ :

(i) ບໍ່ເກີນໜຶ່ງປີ;

(ii) ເກີນໜຶ່ງປີຂຶ້ນໄປ ແລະ ຫຼຸດຫ້າປີລົງມາ; ແລະ

(iii) ເກີນຫ້າປີຂຶ້ນໄປ.

(ຂ) ການຊຳລະຄ່າເຊົ່າ ທີ່ໄດ້ຖືກຮັບຮູ້ລາຍການບັນຊີເປັນລາຍຈ່າຍ.

(ຄ) ຄຳອະທິບາຍທົ່ວໄປ ກ່ຽວກັບຂໍ້ກຳນົດຕົ້ນຕໍຂອງສັນຍາເຊົ່າຂອງຜູ້ເຊົ່າ, ຕົວຢ່າງ ລວມທັງຂໍ້ມູນຂ່າວສານ ກ່ຽວກັບ ຄ່າເຊົ່າທີ່ອາດເກີດຂຶ້ນ, ທາງເລືອກໃນການຕໍ່ອາຍຸຄືນໃໝ່ ຫຼື ໃນການຊື້, ຂໍ້ກຳນົດປັບລາຄາຫຼືອັດຕາ, ການໃຫ້ເຊົ່າ ຕໍ່ ແລະ ຂໍ້ຈຳກັດ ກ່ຽວກັບຂໍ້ກຳນົດຕາມສັນຍາເຊົ່າ.

## ເອກະສານລາຍງານການເງິນຂອງຜູ້ໃຫ້ເຊົ່າ

### ການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າ

20.17 ຜູ້ໃຫ້ເຊົ່າຕ້ອງສະແດງຊັບສິນ ຕາມສັນຍາເຊົ່າການເງິນ ແລະ ສັນຍາເຊົ່າດຳເນີນງານ ໃນເອກະສານລາຍງານ ກ່ຽວກັບ ຖານະການເງິນຂອງຕົນ ໃຫ້ສອດຄ່ອງກັບລັກສະນະເນື້ອໃນຂອງຊັບສິນເຫຼົ່ານັ້ນ.

20.25 ຜູ້ໃຫ້ເຊົ່າຕ້ອງຮັບຮູ້ລາຍການບັນຊີລາຍຮັບຈາກການເຊົ່າການເງິນ ແລະ ຈາກການເຊົ່າດຳເນີນງານ (ນອກຈາກຈຳນວນ ເງິນການບໍລິການເຊັ່ນ ການປະກັນໄພ ແລະ ການບຳລຸງຮັກສາ) ໃນກຳໄລ ຫຼື ຂາດທຶນຕາມແບບວິທີການສະເໝີຕົວ ຕະຫຼອດໄລຍະອາຍຸສັນຍາເຊົ່າ.

20.26 ຜູ້ໃຫ້ເຊົ່າຕ້ອງຮັບຮູ້ລາຍການບັນຊີຕົ້ນທຶນເປັນລາຍຈ່າຍ, ລວມທັງຄ່າຫຼຸ້ຍຫ້ຽນ ທີ່ໄດ້ເກີດຂຶ້ນເວລາມີລາຍຮັບຈາກການ ເຊົ່າ. ວິທີການຫັກຄ່າຫຼຸ້ຍຫ້ຽນຊັບສິນທີ່ໃຫ້ເຊົ່າ ແລະ ທີ່ສາມາດຫັກຄ່າຫຼຸ້ຍຫ້ຽນໄດ້ ຕ້ອງສອດຄ່ອງກັບວິທີການຫັກຄ່າຫຼຸ້ຍ ຫ້ຽນປົກກະຕິຂອງຊັບສິນທີ່ຄ້າຍຄືກັນ ຂອງຜູ້ໃຫ້ເຊົ່າ.

20.27 ຜູ້ໃຫ້ເຊົ່າຕ້ອງເອົາຕົ້ນທຶນທາງກົງເບື້ອງຕົ້ນ ທີ່ໄດ້ເກີດຂຶ້ນເວລາເຈລະຈາ ແລະ ເຊັນສັນຍາເຊົ່າດຳເນີນງານ ບວກໃສ່ມູນ ຄ່າໃນບັນຊີຂອງຊັບສິນທີ່ໃຫ້ເຊົ່າ ແລະ ຕ້ອງຮັບຮູ້ລາຍການບັນຊີຕົ້ນທຶນດັ່ງກ່າວ ເປັນລາຍຈ່າຍຕະຫຼອດໄລຍະອາຍຸ ສັນຍາເຊົ່າ, ບົນພື້ນຖານອັນດຽວກັນກັບລາຍຮັບຈາກການເຊົ່າ.

20.28 ເພື່ອເບິ່ງວ່າຊັບສິນທີ່ໄດ້ໃຫ້ເຊົ່າສູນເສຍມູນຄ່າລົງ ຫຼືບໍ່, ຜູ້ໃຫ້ເຊົ່າຕ້ອງປະຕິບັດໝວດ 27.

20.29 ຜູ້ໃຫ້ເຊົ່າ ທີ່ເປັນຜູ້ຜະລິດ ຫຼື ຜູ້ຈຳໜ່າຍ ເມື່ອມີການເຊັນສັນຍາເຊົ່າດຳເນີນງານ ຕ້ອງບໍ່ຮັບຮູ້ລາຍການບັນຊີກຳໄລຈາກ ການຂາຍ, ຍ້ອນວ່າການເຮັດສັນຍາດັ່ງກ່າວນັ້ນ ບໍ່ຖືວ່າເປັນການຂາຍ.

### ການເປີດເຜີຍຂໍ້ມູນຂ່າວສານ

20.23 ຜູ້ໃຫ້ເຊົ່າຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ ກ່ຽວກັບສັນຍາເຊົ່າການເງິນ :

(ກ) ໜີ້ຕ້ອງຮັບຈາກການຊຳລະຄ່າເຊົ່າ ຕ່ຳສຸດ ສຳລັບແຕ່ລະຮອບເວລາດັ່ງລຸ່ມນີ້ :

(i) ບໍ່ເກີນໜຶ່ງປີ;

(ii) ເກີນໜຶ່ງປີຂຶ້ນໄປ ແລະ ຫຼຸດຫ້າປີລົງມາ; ແລະ

(iii) ເກີນຫ້າປີຂຶ້ນໄປ ;

(ຄ) ມູນຄ່າເສດເຫຼືອທີ່ບໍ່ມີການຄ້ຳປະກັນ ຊຶ່ງລວມຢູ່ໃນຜົນປະ�โຫຍດຂອງຜູ້ໃຫ້ເຊົ່າ.

(ຈ) ຄ່າເຊົ່າ ແລະ ຄ່າເຊົ່າທີ່ອາດເກີດຂຶ້ນ ທີ່ໄດ້ຖືກຮັບຮູ້ລາຍການບັນຊີເປັນລາຍຮັບໃນປີ.

(ສ) ຄຳອະທິບາຍທົ່ວໄປ ກ່ຽວກັບຂໍ້ກຳນົດຕົ້ນຕໍຂອງສັນຍາເຊົ່າຂອງຜູ້ໃຫ້ເຊົ່າ, ຕົວຢ່າງ ລວມທັງ ຂໍ້ມູນຂ່າວສານ ກ່ຽວ ກັບຄ່າເຊົ່າທີ່ອາດເກີດຂຶ້ນ, ທາງເລືອກໃນການຕໍ່ອາຍຸຄືນໃໝ່ ຫຼື ໃນການຊື້, ຂໍ້ກຳນົດປັບລາຄາຫຼືອັດຕາ, ການໃຫ້ ເຊົ່າຕໍ່ ແລະ ຂໍ້ຈຳກັດ ກ່ຽວກັບຂໍ້ກຳນົດຕາມສັນຍາເຊົ່າ.

20.30 ຜູ້ໃຫ້ເຊົ່າຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ ສຳລັບສັນຍາເຊົ່າດຳເນີນງານ :

(ກ) ການຊຳລະຄ່າເຊົ່າຕ່ຳສຸດໃນອະນາຄົດ ພາຍໃຕ້ສັນຍາເຊົ່າດຳເນີນງານທີ່ບໍ່ສາມາດຍົກເລີກໄດ້ ສຳລັບແຕ່ລະຮອບເວລາດັ່ງລຸ່ມນີ້ :

(i) ບໍ່ເກີນໜຶ່ງປີ;

(ii) ເກີນໜຶ່ງປີຂຶ້ນໄປ ແລະ ຫຼຸດຫ້າປີລົງມາ; ແລະ

(iii) ເກີນຫ້າປີຂຶ້ນໄປ.

(ຂ) ລວມຍອດຄ່າເຊົ່າທີ່ອາດເກີດຂຶ້ນ ທີ່ໄດ້ຮັບຮູ້ລາຍການບັນຊີເປັນລາຍຮັບ.

(ຄ) ຄຳອະທິບາຍທົ່ວໄປ ກ່ຽວກັບຂໍ້ກຳນົດຕົ້ນຕໍຂອງສັນຍາເຊົ່າຂອງຜູ້ໃຫ້ເຊົ່າ, ຕົວຢ່າງ ລວມທັງຂໍ້ມູນຂ່າວສານ ກ່ຽວກັບຄ່າເຊົ່າທີ່ອາດເກີດຂຶ້ນ, ທາງເລືອກໃນການຕໍ່ອາຍຸຄືນໃໝ່ ຫຼື ໃນການຊື້, ຂໍ້ກຳນົດປັບລາຄາຫຼືອັດຕາ, ການໃຫ້ເຊົ່າຕໍ່ ແລະ ຂໍ້ຈຳກັດ ກ່ຽວກັບຂໍ້ກຳນົດຕາມສັນຍາເຊົ່າ.

20.31 ນອກຈາກນີ້, ຜູ້ໃຫ້ເຊົ່າທີ່ມີຊັບສິນ ພາຍໃຕ້ສັນຍາເຊົ່າການເງີນ ແລະ ສັນຍາເຊົ່າດຳເນີນງານ ຕ້ອງເປີດເຜີຍຂໍ້ມູນຂ່າວສານ ຕາມຂໍ້ກຳນົດ ຂອງໝວດ 17 *ຊັບສົມບັດຄົງທີ່ມີຕົວຕົນ*, 18 *ຊັບສົມບັດຄົງທີ່ບໍ່ມີຕົວຕົນ ທີ່ບໍ່ແມ່ນຄ່ານິຍົມ*, 27 *ການສູນເສຍມູນຄ່າຂອງຊັບສິນ* ແລະ 34 *ກິດຈະກຳພິເສດ*.

## ລາຍການເຄື່ອນໄຫວການຂາຍ ແລະ ການເຊົ່າຄືນ

20.32 ລາຍການເຄື່ອນໄຫວການຂາຍ ແລະ ການເຊົ່າຄືນ ແມ່ນການຂາຍຊັບສິນໃດໜຶ່ງ ແລະ ການໃຫ້ເຊົ່າຄືນຊັບສິນອັນດຽວກັນນັ້ນ. ການຊຳລະຄ່າເຊົ່າ ແລະ ລາຄາຂາຍ ໂດຍທົ່ວໄປ ແມ່ນຕິດພັນກັນ, ຍ້ອນວ່າໄດ້ມີການເຈລະຈາພ້ອມກັນ. ການລົງບັນຊີລາຍການເຄື່ອນໄຫວການຂາຍອອກ ແລະ ການເຊົ່າຄືນ ຂຶ້ນກັບເງື່ອນໄຂ ຂອງລາຍການເຄື່ອນໄຫວ.

20.34 ຖ້າເປັນສິ່ງຈະແຈ້ງທີ່ວ່າລາຍການເຄື່ອນໄຫວນັ້ນດຳເນີນຕາມມູນຄ່າຍຸຕິທຳ, ຜູ້ຂາຍ-ຜູ້ເຊົ່າ ຕ້ອງຮັບຮູ້ລາຍການບັນຊີ ກຳໄລ ຫຼື ຂາດທຶນໃນທັນໃດໂລດ. ຖ້າວ່າລາຄາຂາຍ ຫາກຕ່ຳກ່ວາມູນຄ່າຍຸຕິທຳ, ຜູ້ຂາຍ-ຜູ້ເຊົ່າ ຕ້ອງຮັບຮູ້ລາຍການບັນຊີ ກຳໄລ ຫຼື ຂາດທຶນ ໃນທັນໃດໂລດ, ເວັ້ນເສຍແຕ່ວ່າການຂາດທຶນຈະຖືກຫັກທົດແທນ ສຳລັບການຊຳລະຄ່າເຊົ່າໃນອະນາຄົດ ທີ່ຕ່ຳກ່ວາລາຄາໃນທ້ອງຕະຫຼາດ. ໃນກໍລະນີດັ່ງກ່າວ, ຜູ້ຂາຍ-ຜູ້ເຊົ່າຕ້ອງເຍື້ອນລົງບັນຊີ ແລະ ຫັກມູນຄ່າຂາດທຶນດັ່ງກ່າວ ຕາມອັດຕາສ່ວນກັບການຊຳລະຄ່າເຊົ່າບົນພື້ນຖານຮອບເວລາທີ່ຄາດຄະເນຈະນຳໃຊ້ຊັບສິນ. ຖ້າວ່າລາຄາຂາຍຫາກຕ່ຳກ່ວາມູນຄ່າຍຸຕິທຳ, ຜູ້ຂາຍ-ຜູ້ເຊົ່າ ຕ້ອງລົງບັນຊີລໍຖ້າສະສາງສ່ວນເກີນທີ່ລື່ນມູນຄ່າຍຸຕິທຳດັ່ງກ່າວ ແລະ ຫັກມູນຄ່າສ່ວນເກີນດັ່ງກ່າວ ຕະຫຼອດໄລຍະຮອບເວລາທີ່ໄດ້ຄາດຄະເນນຳໃຊ້ຊັບສິນນັ້ນ.

### ການເປີດເຜີຍຂໍ້ມູນຂ່າວສານ

20.35 ຜູ້ເຊົ່າ ແລະ ຜູ້ໃຫ້ເຊົ່າ ຕາມສັນຍາລາຍການເຄື່ອນໄຫວການຂາຍແລະການເຊົ່າຄືນ ຕ້ອງເປີດເຜີຍຂໍ້ມູນຂ່າວສານ ເຊັ່ນດຽວກັນກັບ ທີ່ໄດ້ກຳນົດໃຫ້ຜູ້ເຊົ່າ ແລະ ຜູ້ໃຫ້ເຊົ່າ ຂ້າງເທິງ. ສຳລັບລາຍການເຄື່ອນໄຫວການຂາຍ ແລະ ການເຊົ່າຄືນ. ຕ້ອງອະທິບາຍຂໍ້ກຳນົດທີ່ສຳຄັນ ກ່ຽວກັບສັນຍາເຊົ່າ ລວມມີຂໍ້ກຳນົດທີ່ມີລັກສະນະສະເພາະ ຫຼື ບໍ່ປົກກະຕິ ຫຼື ເງື່ອນໄຂ ຂອງລາຍການເຄື່ອນໄຫວການຂາຍ ແລະ ການເຊົ່າຄືນ.

| ການສົມທຽບກັບ FRS ສຳລັບ ວຫຍ | |
|---|---|
| 20.1 (ຄ) | ວນກ ຕີມູນຄ່າ ອະສັງຫາລິມະຊັບເພື່ອການລົງທຶນ ຕາມວິທີຕົ້ນທຶນ-ຄ່າຫຼ້ຍຫ້ຽນ-ການສູນເສຍມູນຄ່າ ແລະ ບໍ່ໃຊ້ ຕາມມູນຄ່າຍຸຕິທຳ (ເບິ່ງ ໝວດ 17 *ຊັບສົມບັດຄົງທີ່ມີຕົວຕົນ*). |
| 20.1 (ຈ) | ວັກນີ້ ຖືກຕັດອອກ ເພາະບໍ່ຖືການຳໃຊ້ຕໍ່ ວນກ (ສັນຍາເຊົ່າ ທີ່ສາມາດພາໃຫ້ ຜູ້ໃຫ້ເຊົ່າ ຫຼື ຜູ້ເຊົ່າ ຂາດທຶນ ດັ່ງເປັນຜົນຈາກເງື່ອນໄຂຂອງສັນຍາ ທີ່ບໍ່ກ່ຽວພັນກັບການປ່ຽນລາຄາຂອງຊັບສິນທີ່ໃຫ້ເຊົ່າ, ການປ່ຽນແປງ ອັດຕາແລກປ່ຽນເງິນຕາຕ່າງປະເທດ, ຫຼື ການຜິດສັນຍາ ໂດຍໜຶ່ງໃນຄູ່ສັນຍາ). |
| 20.4 | ມາດຕະຖານ FRS ສຳລັບ ວນກ ນີ້ ກຳນົດການຈັດປະເພດສັນຍາເຊົ່າ : ສັນຍາເຊົ່າການເງິນ ແລະ ສັນຍາ ເຊົ່າດຳເນີນງານ. ເຖິງຢ່າງໃດກໍຕາມ, ສຳລັບ ວນກ ການຮັບຮູ້ລາຍການບັນຊີ ສັນຍາເຊົ່າການເງິນ ຄືກັນກັບ ການຮັບຮູ້ລາຍການບັນຊີ ສັນຍາເຊົ່າດຳເນີນງານ. |
| 20.9<br>20.29 | ວນກ ຜູ້ເຊົ່າ ຕ້ອງຮັບຮູ້ລາຍການບັນຊີ ການຊຳລະຄ່າເຊົ່າ ພາຍໃຕ້ສັນຍາເຊົ່າການເງິນ ແລະ ສັນຍາເຊົ່າດຳ ເນີນງານ ເປັນລາຍຈ່າຍ.<br>ວັກ 20.9 ຫາ 20.29 ຖືກປັບປຸງ ຫຼື ຕັດອອກ. |
| 20.33<br>20.34 | ໃນມາດຕະຖານ FRS ສຳລັບ ວນກ ນີ້, ລາຍການເຄື່ອນໄຫວການຂາຍ ແລະ ການເຊົ່າຄືນ ທີ່ນຳໄປສູ່ສັນຍາ ເຊົ່າການເງິນ ຖືກຮັບຮູ້ລາຍການບັນຊີ ເປັນການຂາຍ. ວັກ 33 ຖືກຕັດອອກ ແລະ ວັກ 34 ຖືກປັບປຸງ. |

# ໝວດ 21

# ເງິນແຮ ແລະ ໜີ້ສິນທີ່ອາດເກີດຂຶ້ນ

## ຂອບເຂດຂອງໝວດນີ້

21.1 ໝວດດັ່ງກ່າວນີ້ ນຳໃຊ້ສຳລັບ**ເງິນແຮ**ທັງໝົດ (ເຊັ່ນ ໜີ້ສິນທີ່ມີອາຍຸການ ຫຼື ຈຳນວນເງິນ ທີ່ຍັງບໍ່ທັນແນ່ນອນ), **ໜີ້ສິນທີ່ອາດເກີດຂຶ້ນ** ແລະ **ຊັບສິນທີ່ອາດເກີດຂຶ້ນ**, ຍົກເວັ້ນເງິນແຮ ທີ່ຍົກຂຶ້ນຢູ່ໃນໝວດອື່ນໆຂອງມາດຕະຖານສະບັບນີ້. ສິ່ງນີ້ລວມມີເງິນແຮ ກ່ຽວກັບ:

(ກ) ສັນຍາເຊົ່າ (ໝວດ 20 *ສັນຍາເຊົ່າ*). ເຖິງຢ່າງໃດກໍດີ, ໝວດດັ່ງກ່າວ ເວົ້າເຖິງສັນຍາເຊົ່າ ທີ່ກັບກາຍເປັນສັນຍາທີ່ສ້າງພາລະຕໍ່ວິສາຫະກິດ.

(ຂ) ສັນຍາການກໍ່ສ້າງ (ໝວດ 23 *ລາຍຮັບ*).

(ຄ) ພັນທະບ້ວງເງິນປະໂຫຍດຂອງພະນັກງານ (ໝວດ 28 *ເງິນປະໂຫຍດຂອງພະນັກງານ*).

(ງ) ອາກອນລາຍຮັບ (ໝວດ 29 *ອາກອນລາຍຮັບ*).

21.2 ເງື່ອນໄຂໃນໝວດດັ່ງກ່າວນີ້ ບໍ່ນຳໃຊ້ສຳລັບສັນຍາທີ່ມີເງິນບັງຄັບເວັ້ນແຕ່ວ່າເປັນ**ສັນຍາທີ່ສ້າງພາລະຕໍ່ວິສາຫະກິດ**. ສັນຍາທີ່ມີເງິນບັງຄັບ ແມ່ນສັນຍາຊຶ່ງບໍ່ມີຝ່າຍໃດໄດ້ປະຕິບັດພັນທະຂອງຕົນເອງ ຫຼື ທັງສອງຝ່າຍໄດ້ປະຕິບັດສ່ວນໜຶ່ງຂອງພັນທະຕົນເອງ ຢ່າງເທົ່າທຽມກັນ.

## ການຮັບຮູ້ລາຍການບັນຊີເບື້ອງຕົ້ນ

21.4 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີເງິນແຮ ພຽງແຕ່ເມື່ອ:

(ກ) ວິສາຫະກິດມີພັນທະ ໃນ**ມື້ລາຍງານ** ທີ່ເປັນເງື່ອນເນື່ອງຈາກເຫດການຜ່ານມາ;

(ຂ) **ອາດເປັນໄປໄດ້** (ໝາຍຄວາມວ່າເປັນໄປໄດ້ຫຼາຍກ່ວາ ເປັນໄປບໍ່ໄດ້) ວ່າ ວິສາຫະກິດຈະຕ້ອງໄດ້ໂອນເງິນປະໂຫຍດດ້ານເສດຖະກິດໄປເພື່ອເປັນການຊຳລະສະສາງ ; ແລະ

(ຄ) ຈຳນວນເງິນພັນທະນັ້ນ ສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້.

21.5 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີເງິນແຮເປັນໜີ້ສິນໃນໃບລາຍງານຖານະການເງິນ ແລະ ຕ້ອງຮັບຮູ້ລາຍການບັນຊີຈຳນວນເງິນແຮເປັນລາຍຈ່າຍ, ເວັ້ນເສຍແຕ່ວ່າໝວດອື່ນ ຂອງມາດຕະຖານສະບັບນີ້ ກຳນົດໃຫ້ຮັບຮູ້ລາຍການບັນຊີຕົ້ນທຶນນັ້ນ ເປັນສ່ວນໜຶ່ງຂອງຕົ້ນທຶນຂອງຊັບສິນໃດໜຶ່ງ ເຊັ່ນເຄື່ອງໃນສາງ ຫຼື ຊັບສົມບັດຄົງທີ່ມີຕົວຕົນ.

21.6 ເງື່ອນໄຂຂອງວັກ 21.4(ກ) (ພັນທະໃນ**ມື້ລາຍງານ**ທີ່ເປັນເງື່ອນເນື່ອງຈາກເຫດການຜ່ານມາ) ໝາຍຄວາມວ່າວິສາຫະກິດບໍ່ມີທາງເລືອກທີ່ເປັນໄປໄດ້ໃດອື່ນ ທີ່ຈະຊຳລະສະສາງພັນທະ. ສິ່ງນີ້ສາມາດເກີດຂຶ້ນໃນເມື່ອວິສາຫະກິດມີພັນທະທາງກົດໝາຍ ທີ່ສາມາດບັງຄັບໃຊ້ຕາມກົດໝາຍ ຫຼື ເມື່ອວິສາຫະກິດມີ**ພັນທະແບບປະລິຍາຍ**, ເນື່ອງຈາກເຫດການຜ່ານມາ (ຊຶ່ງອາດເປັນການດຳເນີນການຂອງວິສາຫະກິດ) ໄດ້ສ້າງຄວາມຄາດຫວັງທີ່ມີມູນຄວາມຈິງກັບພາກສ່ວນອື່ນ ທີ່ວ່າວິສາຫະກິດປະຕິບັດພັນທະຂອງຕົນເອງ. ພັນທະທີ່ຈະກຳເນີດຈາກການດຳເນີນການໃນອະນາຄົດຂອງວິສາຫະກິດ (ເຊັ່ນການດຳເນີນທຸລະກິດໃນອະນາຄົດ) ຈະບໍ່ກົງກັບເງື່ອນໄຂຂອງ ວັກ 21.4(ກ), ບໍ່ວ່າຈະມີຄວາມເປັນໄປໄດ້ທີ່ພັນທະດັ່ງກ່າວຈະເກີດຂຶ້ນໄດ້ຄືແນວໃດກໍຕາມ ແລະ ເຖິງຈະແມ່ນໄດ້ກຳນົດໄວ້ໃນສັນຍາກໍຕາມ. ຕົວຢ່າງ, ຍ້ອນຄວາມກົດດັນທາງດ້ານການຄ້າ ຫຼື ເງື່ອນໄຂທາງດ້ານກົດໝາຍ, ວິສາຫະກິດອາດມີເຈດຈຳນົງ ຫຼື ມີຄວາມຕ້ອງການໃຊ້ຈ່າຍເພື່ອການດຳເນີນງານໃນວິທີທາງສະເພາະໃດໜຶ່ງໃນອະນາຄົດ (ຕົວຢ່າງ ປະກອບເຄື່ອງກັ່ນຕອງຄວັນໄຟ ໃສ່ບາງໂຮງງານສະເພາະ). ຍ້ອນວ່າວິສາຫະກິດສາມາດຫຼີກເວັ້ນຄ່າໃຊ້ຈ່າຍໃນອະນາຄົດ ໂດຍການດຳເນີນການຂອງຕົນເອງໃນອະນາຄົດ, ເຊັ່ນດັດແປງແບບວິທີການດຳເນີນງານ ຫຼື ໂດຍຂາຍໂຮງງານ, ວິສາຫະກິດບໍ່ມີພັນທະໃນປັດຈຸບັນໃດໆ ສຳລັບຄ່າໃຊ້ຈ່າຍດັ່ງກ່າວໃນອະນາຄົດ ແລະ ດັ່ງນັ້ນ ຈະບໍ່ຮັບຮູ້ລາຍການບັນຊີເງິນແຮໃດໆເລີຍ.

## ການຕີມູນຄ່າເບື້ອງຕົ້ນ

21.7 ວິສາຫະກິດຕ້ອງຕີມູນຄ່າເງິນແຮ ດ້ວຍຕົວເລກຄາດຄະເນປະຕິບັດທີ່ດີທີ່ສຸດ ຂອງຈຳນວນເງິນອັນຈຳເປັນເພື່ອຊຳລະສະສາງພັນທະໃນມື້ລາຍງານ. ຕົວເລກຄາດຄະເນປະຕິບັດທີ່ດີສຸດ ແມ່ນຈຳນວນເງິນຊຶ່ງວິສາຫະກິດຕ້ອງໄດ້ຊຳລະ ຢ່າງສົມເຫດສົມຜົນ ເພື່ອຊຳລະສະສາງພັນທະໃນເວລາສິ້ນສຸດຮອບເວລາລາຍງານ ຫຼື ເພື່ອໂອນພັນທະນັ້ນໃຫ້ພາກສ່ວນອື່ນ ໃນເວລານັ້ນ.

(ກ) ຖ້າວ່າເງິນແຮປະກອບດ້ວຍປະຊາກອນຂະໜາດໃຫ່ຍ ຂອງຫຼາຍລາຍການ, ການຄາດຄະເນຕົວເລກປະຕິບັດ ຂອງຈຳນວນເງິນນັ້ນ ສ່ອງແສງເຖິງນ້ຳໜັກຂອງທຸກຜົນໄດ້ຮັບທີ່ເປັນໄປໄດ້ ໂດຍອີງຕາມຄວາມອາດເປັນໄປໄດ້ທີ່ຕິດພັນ. ດັ່ງນັ້ນ, ເງິນແຮຈະແຕກຕ່າງກັນ ແມ່ນຂຶ້ນກັບຄວາມອາດເປັນໄປໄດ້ ກ່ຽວກັບການຂາດທຶນທີ່ເປັນຈຳນວນເງິນອັນແນ່ນອນ, ຕົວຢ່າງ, ເທົ່າກັບ 60 % ຫຼື 90 %. ຖ້າຫາກມີຂອບເຂດໄລຍະທີ່ຕໍ່ເນື່ອງ ກ່ຽວກັບຜົນໄດ້ຮັບທີ່ເປັນໄປໄດ້ ແລະ ແຕ່ລະຈຸດໃນຂອບເຂດໄລຍະດັ່ງກ່າວມີລັກສະນະຄ້າຍຄືກັນ, ໃຫ້ກຳນົດເອົາຈຸດລະຫ່ວາງກາງ ຂອງຂອບເຂດໄລຍະທີ່ໄດ້ນຳໃຊ້ນັ້ນ.

(ຂ) ຖ້າວ່າເງິນແຮ ເກີດຈາກພັນທະອັນດຽວ, ຜົນໄດ້ຮັບແຕ່ລະລາຍທີ່ເປັນໄປໄດ້ຫຼາຍ ອາດເປັນຕົວເລກຄາດຄະເນ ປະຕິບັດທີ່ດີທີ່ສຸດ ຂອງຈຳນວນເງິນອັນຈຳເປັນ ເພື່ອຊຳລະສະສາງພັນທະນັ້ນ. ເຖິງຢ່າງໃດກໍດີ, ເຖິງຈະແມ່ນກໍລະນີນີ້ກໍຕາມ, ວິສາຫະກິດຕ້ອງຄຳນຶງເຖິງຜົນໄດ້ຮັບອື່ນໆທີ່ເປັນໄປໄດ້. ຖ້າວ່າຜົນໄດ້ຮັບອື່ນໆທີ່ເປັນໄປໄດ້ສ່ວນໃຫ່ຍ ສູງກ່ວາ ຫຼື ຕ່ຳກ່ວາ ຜົນໄດ້ຮັບທີ່ຈະເກີດຂຶ້ນທີ່ສຸດ, ການຄາດຄະເນຕົວເລກປະຕິບັດທີ່ດີທີ່ສຸດ ຈະເປັນຈຳນວນເງິນທີ່ສູງກ່ວາ ຫຼື ຕ່ຳກ່ວາຜົນໄດ້ຮັບທີ່ຈະເກີດຂຶ້ນທີ່ສຸດ.

ຕ້ອງສ່ອງແສງຄວາມສ່ຽງສະເພາະຂອງໜີ້ສິນ ໃນການຄາດຄະເນຈຳນວນເງິນອັນຈຳເປັນເພື່ອຊຳລະສະສາງພັນທະ.

21.8 ການຕີມູນຄ່າເງິນແຮໃດໜຶ່ງ ວິສາຫະກິດບໍ່ຕ້ອງຄຳນຶງເຖິງມູນຄ່າສ່ວນໄດ້ ຈາກການຄາດທີ່ຈະມີການຂາຍບັນດາຊັບສິນອອກ.

21.9 ຖ້າວ່າຈຳນວນເງິນສ່ວນໜຶ່ງ ຫຼື ທັງໝົດທີ່ຈຳເປັນ ເພື່ອຊຳລະສະສາງເງິນແຮໃດໜຶ່ງ ອາດຈະຖືກທົດແທນຈາກອີກຝ່າຍໜຶ່ງ (ເຊັ່ນ ຜ່ານການທວງສິນທົດແທນປະກັນໄພ), ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີເງິນທົດແທນເປັນຊັບສິນທີ່ແຍກຕ່າງຫາກ ພຽງແຕ່ເມື່ອມີຄວາມແນ່ນອນວ່າວິສາຫະກິດຈະຮັບເງິນທົດແທນ ເພື່ອຊຳລະສະສາງພັນທະເທົ່ານັ້ນ. ຈຳນວນເງິນທີ່ໄດ້ຮັບຮູ້ລາຍການບັນຊີບ້ວງການຊຳລະສະສາງ ຕ້ອງບໍ່ໃຫ້ເກີນຈຳນວນເງິນແຮນັ້ນ. ເງິນທົດແທນຄືນຕ້ອງຮັບ ຕ້ອງຖືກສະແດງໃນໃບລາຍງານຖານະການເງິນເປັນຊັບສິນ ແລະ ບໍ່ໃຫ້ຫັກຊຳລະສະສາງກັບເງິນແຮ. ໃນໃບລາຍງານຜົນໄດ້ຮັບ, ວິສາຫະກິດອາດຫັກຊຳລະສະສາງທຸກລາຍການທົດແທນຈາກອີກຝ່າຍໜຶ່ງ ຄູ່ກັບລາຍຈ່າຍທີ່ກ່ຽວຂ້ອງກັບເງິນແຮ.

## ການຕີມູນຄ່າຕາມຫຼັງ

21.10 ວິສາຫະກິດຕ້ອງເອົາສະເພາະລາຍຈ່າຍ ທີ່ວິສາຫະກິດຮັບຮູ້ລາຍການບັນຊີເງິນແຮໃນເບື້ອງຕົ້ນເທົ່ານັ້ນ ມາຫັກກັບເງິນແຮ.

21.11 ວິສາຫະກິດຕ້ອງກວດຄືນເງິນແຮໃນມື້ລາຍງານແຕ່ລະຄັ້ງ ແລະ ປັບປຸງເພື່ອສ່ອງແສງເຖິງຕົວເລກຄາດຄະເນທີ່ດີທີ່ສຸດໃນປັດຈຸບັນ ກ່ຽວກັບຈຳນວນເງິນທີ່ຈຳເປັນເພື່ອຊຳລະສະສາງພັນທະໃນມື້ລາຍງານ. ທຸກການປັບປຸງຈຳນວນເງິນທີ່ໄດ້ຖືກຮັບຮູ້ລາຍການບັນຊີຜ່ານມາ ຕ້ອງໄດ້ຮັບຮູ້ລາຍການບັນຊີໃນກຳໄລ ຫຼື ຂາດທຶນ ເວັ້ນເສຍແຕ່ວ່າໄດ້ຮັບຮູ້ລາຍການບັນຊີເງິນແຮໃນເບື້ອງຕົ້ນ ເປັນສ່ວນໜຶ່ງຂອງຕົ້ນທຶນຂອງຊັບສິນ (ເບິ່ງວັກ 21.5).

## ໜີ້ສິນທີ່ອາດເກີດຂຶ້ນ

21.12 **ໜີ້ສິນທີ່ອາດເກີດຂຶ້ນ** ແມ່ນພັນທະທີ່ເປັນໄປໄດ້ ແຕ່ຫາກບໍ່ແນ່ນອນ, ຫຼື ແມ່ນພັນທະປັດຈຸບັນ ແຕ່ຫາກບໍ່ໄດ້ຮັບຮູ້ລາຍການບັນຊີຍ້ອນວ່າບໍ່ໄດ້ບັນລຸຕາມໜຶ່ງ ຫຼື ທັງສອງເງື່ອນໄຂ ຂໍ້ (ຂ) ແລະ (ຄ) ຂອງວັກ 21.4. ວິສາຫະກິດບໍ່ຕ້ອງຮັບຮູ້ລາຍການບັນຊີໜີ້ສິນທີ່ອາດເກີດຂຶ້ນເປັນໜີ້ສິນ, ຍົກເວັ້ນເງິນແຮເພື່ອໜີ້ສິນທີ່ອາດເກີດຂຶ້ນຂອງວິສາຫະກິດທີ່ຖືກຊື້ໃນເວລາການຄວບກິດຈະການ (ເບິ່ງວັກ 19.20 ແລະ 21.21). ການເປີດເຜີຍຂໍ້ມູນ ກ່ຽວກັບໜີ້ສິນທີ່ອາດເກີດຂຶ້ນ ໄດ້ກຳນົດໄວ້ໃນວັກ 21.15 ເວັ້ນເສຍແຕ່ຄວາມເປັນໄດ້ຂອງການສູນເສຍຊັບພະຍາກອນຍັງຫ່າງໄກ. ຖ້າວ່າວິສາຫະກິດຮ່ວມກັນຮັບຜິດຊອບ ແລະ ຮັບຜິດຊອບແບບບໍ່ຈຳກັດ ພັນທະໃດໜຶ່ງ, ສ່ວນຂອງພັນທະທີ່ຄາດວ່າຈະບັນລຸຜົນ ໂດຍພາກ

ສ່ວນອື່ນໆ ແມ່ນໃຫ້ຖືຄືກັນກັບໜີ້ສິນທີ່ອາດເກີດຂຶ້ນ.

### ຊັບສິນທີ່ອາດເກີດຂຶ້ນ

21.13 ວິສາຫະກິດບໍ່ຕ້ອງຮັບຮູ້ລາຍການບັນຊີ**ຊັບສິນທີ່ອາດເກີດຂຶ້ນ** ເປັນຊັບສິນ. ການເປີດເຜີຍຂໍ້ມູນ ກ່ຽວກັບຊັບສິນທີ່ອາດເກີດຂຶ້ນ ໄດ້ກຳນົດໃນວັກ 21.16 ຖ້າຫາກว่าอาดเป็นไปได้ที่ຈະໄດ້ຮັບຜົນປະໂຫຍດດ້ານເສດຖະກິດໃນອະນາຄົດ. ເຖິງຢ່າງໃດກໍດີ, ຖ້າຫາກເກືອບເປັນສິ່ງແນ່ນອນວ່າວິສາຫະກິດຈະໄດ້ຮັບຜົນປະໂຫຍດດ້ານເສດຖະກິດໃນອະນາຄົດ, ຊັບສິນທີ່ກ່ຽວຂ້ອງຈະບໍ່ເປັນຊັບສິນທີ່ອາດເກີດຂຶ້ນ ແລະ ໃນກໍລະນີດັ່ງກ່າວນີ້ ການຮັບຮູ້ລາຍການບັນຊີນັ້ນເປັນສິ່ງແທດເໝາະ.

## ການເປີດເຜີຍຂໍ້ມູນຂ່າວສານ

### ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບເງິນແຮ

21.14 ສຳລັບແຕ່ລະປະເພດເງິນແຮ, ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບທຸກລາຍການດັ່ງລຸ່ມນີ້ :

(ກ) ມີການສົມທຽບຕົວເລກ ໂດຍແຈ້ງ

(i) ມູນຄ່າໃນບັນຊີ ໃນຕົ້ນ ແລະ ໃນທ້າຍປີ ;

(ii) ລາຍການເງິນແຮທີ່ຮັບເຂົ້າເພີ້ມໃນປີ, ລວມທັງການປັບປຸງອັນເນື່ອງຈາກການປ່ຽນແປງໃນການຕີມູນຄ່າຈຳນວນເງິນທີ່ໄດ້ຕີມູນຄ່າ ເປັນມູນຄ່າປັດຈຸບັນ ;

(iii) ຈຳນວນເງິນທີ່ໄດ້ຄິດໄລ່ເປັນເງິນແຮໃນປີ; ແລະ

(iv) ຈຳນວນເງິນທີ່ບໍ່ໄດ້ນຳໃຊ້ ແລະ ເກັບຄືນໃນປີ.

(ຂ) ການສະເໜີໂດຍຫຍໍ້ ກ່ຽວກັບລັກສະນະເນື້ອໃນຂອງພັນທະ ແລະ ຂອງຈຳນວນເງິນ ແລະ ອາຍຸການ ທີ່ຄາດໄວ້ຂອງເງິນຊຳລະທີ່ເປັນຜົນຕາມມາ.

(ຄ) ການຊີ້ບອກ ກ່ຽວກັບຄວາມບໍ່ແນ່ນອນ ກ່ຽວກັບຈຳນວນເງິນ ຫຼື ກຳນົດເວລາຂອງການເສຍຜົນປະໂຫຍດດ້ານເສດຖະກິດດັ່ງກ່າວ.

(ງ) ຈຳນວນເງິນທົດແທນຄືນທຸກລາຍ, ໂດຍແຈ້ງຈຳນວນເງິນຂອງທຸກຊັບສິນທີ່ໄດ້ຮັບຮູ້ລາຍການບັນຊີ ບ້ວງເງິນທົດແທນຄືນດັ່ງກ່າວທີ່ຄາດກະໄວ້.

ບໍ່ຈຳເປັນຕ້ອງປະກອບຂໍ້ມູນຂ່າວສານສົມທຽບບ້ວງຮອບເວລາຜ່ານມາ.

### ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບໜີ້ສິນທີ່ອາດເກີດຂຶ້ນ

21.15 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານ ສຳລັບແຕ່ລະປະເພດໜີ້ສິນທີ່ອາດເກີດຂຶ້ນໃນມື້ລາຍງານ, ໂດຍໃຫ້ການອະທິບາຍໂດຍຫຍໍ້ ກ່ຽວກັບລັກສະນະເນື້ອໃນຂອງໜີ້ສິນທີ່ອາດເກີດຂຶ້ນດັ່ງລຸ່ມນີ້ ຖ້າຫາກປະຕິບັດໄດ້, ເວັ້ນເສຍແຕ່ຄວາມເປັນໄປໄດ້ຂອງການເສຍຊັບພະຍາກອນເພື່ອການຊຳລະສະສາງໜີ້ສິນ ຫາກຕ່ຳ:

(ກ) ຕົວເລກຄາດຄະເນປະຕິບັດ ກ່ຽວກັບຜົນກະທົບດ້ານການເງິນ, ທີ່ໄດ້ຕີມູນຄ່າຕາມວັກ 21.7 ຫາ 21.11 ;

(ຂ) ການຊີ້ບອກ ກ່ຽວກັບຄວາມບໍ່ແນ່ນອນ ກ່ຽວກັບຈຳນວນເງິນ ຫຼືກຳນົດເວລາຂອງການເສຍປະໂຫຍດດ້ານເສດຖະກິດດັ່ງກ່າວ; ແລະ

(ຄ) ຄວາມເປັນໄປໄດ້ຂອງທຸກລາຍການທົດແທນເງິນຄືນ.

ຖ້າວ່າການເປີດເຜີຍຂໍ້ມູນໃດໜຶ່ງ ຫຼື ຫຼາຍຂໍ້ມູນດັ່ງກ່າວ ***ປະຕິບັດບໍ່ໄດ້***, ຕ້ອງໄດ້ເປີດເຜີຍຄວາມເປັນຈິງດັ່ງກ່າວ.

### ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບຊັບສິນທີ່ອາດເກີດຂຶ້ນ

21.16 ຖ້າວ່າການຮັບຜົນປະໂຫຍດດ້ານເສດຖະກິດເຂົ້າມາ ຫາກອາດເປັນໄປໄດ້ (ເປັນໄປໄດ້ທີ່ສຸດກ່ວາ ບໍ່ເປັນໄປໄດ້), ແຕ່ບໍ່ແນ່ ນອນຢ່າງແທ້ຈິງ, ວິສາຫະກິດຕ້ອງເປີດເຜີຍ ລັກສະນະເນື້ອໃນຂອງຊັບສິນທີ່ອາດເກີດຂຶ້ນ ໃນທ້າຍ**ຮອບເວລາລາຍງານ**, ແລະ, ຖ້າຫາກປະຕິບັດໄດ້ໂດຍບໍ່ມີຄ່າໃຊ້ຈ່າຍ ທັງບໍ່ມີຄວາມພະຍາຍາມຫຼາຍເກີນຄວນ, ວິສາຫະກິດຕ້ອງເປີດເຜີຍ

ຕົວເລກຄາດຄະເນປະຕິບັດ ກ່ຽວກັບຜົນກະທົບດ້ານການເງິນ ທີ່ໄດ້ຖືກຕີມູນຄ່າຕາມຫຼັກການທີ່ໄດ້ກຳນົດໃນວັກ 21.7 ຫາ 21.11. ຖ້າການເປີດເຜີຍຂໍ້ມູນຂ່າວສານເຫຼົ່ານີ້ ປະຕິບັດບໍ່ໄດ້, ກໍໃຫ້ເປີດເຜີຍຄວາມເປັນຈິງດັ່ງກ່າວ.

## ການເປີດເຜີຍຂໍ້ມູນຂ່າວສານທີ່ເປັນຜົນເສຍຫາຍ

21.17 ໃນກໍລະນີທີ່ບໍ່ຄ່ອຍເກີດຂຶ້ນ, ການເປີດເຜີຍຂໍ້ມູນຂ່າວສານສ່ວນໜຶ່ງ ຫຼື ທັງໝົດ ດັ່ງທີ່ໄດ້ກຳນົດໄວ້ໃນວັກ 21.14 ຫາ 21.16 ສາມາດຄາດໄດ້ວ່າ ຈະກໍ່ຄວາມເສຍຫາຍໜັກໃຫ້ແກ່ຖານະຂອງວິສາຫະກິດໃນການ�โต້ແຍ້ງກັບພາກສ່ວນອື່ນ ກ່ຽວກັບເລື່ອງເງິນແຮ, ໜີ້ສິນທີ່ອາດເກີດຂຶ້ນ ຫຼື ຊັບສິນທີ່ອາດເກີດຂຶ້ນ. ໃນກໍລະນີດັ່ງກ່າວ, ວິສາຫະກິດບໍ່ຈຳເປັນຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງກ່າວ, ແຕ່ຫາກຕ້ອງເປີດເຜີຍ ກ່ຽວກັບລັກສະນະເນື້ອໃນລວມ ຂອງການ�โต້ແຍ້ງ, ພ້ອມໆກັບ ຄວາມເປັນຈິງ ແລະ ເຫດຜົນ ຂອງການບໍ່ໄດ້ເປີດເຜີຍຂໍ້ມູນຂ່າວສານດັ່ງກ່າວ.

## ເອກະສານຊ້ອນທ້າຍໝວດ 21

## ຂໍ້ແນະນຳ ກ່ຽວກັບການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າເງິນແຮ

*ເອກະສານຊ້ອນທ້າຍນີ້ ເປັນລາຍການຄັດຕິດ ແຕ່ຫາກບໍ່ເປັນພາກສ່ວນໜຶ່ງຂອງໝວດ 21. ເອກະສານດັ່ງກ່າວໃຫ້ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດຂໍ້ກຳນົດຂອງໝວດ 21 ເພື່ອການຮັບຮູ້ລາຍການບັນຊີ ແລະ ຕີມູນຄ່າເງິນແຮ.*

ທຸກວິສາຫະກິດທີ່ໄດ້ຍົກຂຶ້ນເປັນຕົວຢ່າງໃນເອກະສານຊ້ອນທ້າຍດັ່ງກ່າວ ໄດ້ເອົາວັນທີ 31 ທັນວາ ເປັນມື້ລາຍງານ. ໃນທຸກກໍລະນີ, ໄດ້ວາງສົມມຸດຖານວ່າທຸກລາຍການຄາດຄະເນກະແສໄຫຼອອກ ລ້ວນແຕ່ມີການຄາດຄະເນປະຕິບັດຢ່າງໜ້າເຊື່ອຖືໄດ້. ໃນບາງຕົວຢ່າງ, ກໍລະນີທີ່ໄດ້ສະເໜີອາດເຮັດໃຫ້ເກີດມີການສູນເສຍມູນຄ່າຂອງຊັບສິນ; ຕົວຢ່າງເຫຼົ່ານີ້ ບໍ່ເວົ້າເຖິງດ້ານດັ່ງກ່າວ.

**ຕົວຢ່າງ ທີ 1 ການຂາດທຶນຈາກການດຳເນີນງານໃນອະນາຄົດ**

21ອ.1 ວິສາຫະກິດກຳນົດວ່າ ອາດເປັນໄປໄດ້ທີ່ວ່າພາກສ່ວນງານໜຶ່ງຂອງການດຳເນີນງານຂອງຕົນເອງ ຈະເຮັດໃຫ້ເກີດມີການຂາດທຶນຈາກການດຳເນີນງານໃນອະນາຄົດ ເປັນເວລາຫຼາຍປີ.

ພັນທະໃນປັດຈຸບັນ ອັນເນື່ອງມາຈາກເຫດການຜ່ານມາ ທີ່ກໍ່ໃຫ້ເກີດພັນທະ–ບໍ່ມີເຫດການຜ່ານມາທີ່ບັງຄັບໃຫ້ວິສາຫະກິດຈຳຕ້ອງໄດ້ຈ່າຍຊັບພະຍາກອນຂອງຕົນເອງອອກ.

ສະຫຼຸບຄວາມ – ບໍ່ໃຫ້ວິສາຫະກິດຮັບຮູ້ລາຍການບັນຊີເງິນແຮບ້ວງການຂາດທຶນຈາກການດຳເນີນງານໃນອະນາຄົດ. ການຂາດທຶນຄາດຄະເນໃນອະນາຄົດບໍ່ກົງກັບຄຳນິຍາມ ກ່ຽວກັບໜີ້ສິນ. ການຄາດການຕົວເລກຂາດທຶນຈາກການດຳເນີນງານໃນອະນາຄົດ ອາດເປັນຕົວຊີ້ບອກວ່າ ໜຶ່ງ ຫຼື ຫຼາຍ ຊັບສິນ ໄດ້ສູນເສຍມູນຄ່າລົງ ເບິ່ງໝວດ 27 *ການສູນເສຍມູນຄ່າຂອງຊັບສິນ.*

**ຕົວຢ່າງ ທີ 2 ສັນຍາທີ່ສ້າງພາລະ**

21ອ.2 ສັນຍາທີ່ສ້າງພາລະ ແມ່ນສັນຍາ ຊຶ່ງຕົ້ນທຶນໃຊ້ຈ່າຍທີ່ຫຼີກລ້ຽງບໍ່ໄດ້ ເພື່ອຕອບສະໜອງຕໍ່ຂໍ້ຜູກພັນຕາມສັນຍານັ້ນ ມີມູນຄ່າສູງກ່ວາຜົນປະ�โຫຍດດ້ານເສດຖະກິດ ທີ່ຄາດຫວັງວ່າຈະໄດ້ຮັບຈາກສັນຍາ. ຕົ້ນທຶນທີ່ຫຼີກລ້ຽງບໍ່ໄດ້ຂອງສັນຍາໃດໜຶ່ງ ສ່ອງແສງເຖິງຕົ້ນທຶນຈ່າຍອອກສຸດທິ ທີ່ນ້ອຍທີ່ສຸດຂອງສັນຍາ, ໝາຍເຖິງຈຳນວນເງິນທີ່ຕ່ຳກ່ວາໝູ່ ລະຫວ່າງຕົ້ນທຶນໃນການປະຕິບັດສັນຍາ ແລະ ທຸກການທົດແທນທຸກຄ່າເສຍຫາຍ ຫຼື ປັບໃໝ ອັນເນື່ອງຈາກຄວາມຫຼົ້ມເຫຼວໃນການປະຕິບັດສັນຍາ. ຕົວຢ່າງ, ວິສາຫະກິດໃດໜຶ່ງ ອາດມີພາລະພາຍໃຕ້ສັນຍາເຊົ່າ ໃນການຊຳລະເງິນຄ່າເຊົ່າຊັບສິນທີ່ຕົນເອງບໍ່ໄດ້ນຳໃຊ້ອີກແລ້ວ.

ພັນທະໃນປັດຈຸບັນອັນເນື່ອງມາຈາກເຫດການຜ່ານມາ ທີ່ກໍ່ໃຫ້ເກີດມີພັນທະ – ຕາມສັນຍາ, ວິສາຫະກິດຈຳຕ້ອງຊຳລະຊັບພະຍາກອນ ຊຶ່ງວິສາຫະກິດບໍ່ໄດ້ຮັບຜົນປະ�โຫຍດຢ່າງເໝາະສົມ.

ສະຫຼຸບຄວາມ – ຖ້າຫາກວິສາຫະກິດມີສັນຍາສ້າງພາລະ, ວິສາຫະກິດນັ້ນ ຕ້ອງໄດ້ຮັບຮູ້ລາຍການບັນຊີ ແລະ ຕີມູນຄ່າພັນທະໃນປັດຈຸບັນອັນເນື່ອງຈາກສັນຍາດັ່ງກ່າວ ເປັນເງິນແຮ.

**ຕົວຢ່າງ ທີ 3 ການປັບປຸງໂຄງສ້າງຄືນໃໝ່**

21ອ.3 ການປັບປຸງໂຄງສ້າງຄືນໃໝ່ ແມ່ນແຜນງານທີ່ມີການວາງແຜນ ແລະ ຄວບຄຸມໂດຍຄະນະບໍລິຫານ ແລະ ທີ່ເຮັດໃຫ້ຂອບເຂດກິດຈະການ ທີ່ດຳເນີນໂດຍວິສາຫະກິດ ຫຼື ແບບວິທີການດຳເນີນທຸລະກິດ ຂອງວິສາຫະກິດມີການປ່ຽນແປງຫຼາຍ.

ພັນທະໃນປັດຈຸບັນອັນເນື່ອງມາຈາກເຫດຜ່ານມາ ທີ່ກໍ່ໃຫ້ເກີດພັນທະ– ພັນທະແບບປະລິຍາຍ ກ່ຽວກັບການປັບປຸງໂຄງສ້າງເກີດຂຶ້ນພຽງແຕ່ເມື່ອໃດ ວິສາຫະກິດໃດໜຶ່ງ ຫາກ :

(ກ) ມີແຜນການປັບປຸງໂຄງສ້າງຢ່າງເປັນລະບົບ ແລະ ລະອຽດ, ຊຶ່ງຢ່າງໜ້ອຍຕ້ອງຈຳແນກ :

(i) ກິດຈະການ ຫຼື ພາກສ່ວນກິດຈະການ ທີ່ກ່ຽວຂ້ອງ;

(ii) ສະຖານທີ່ຕົ້ນຕໍທີ່ໄດ້ຮັບຜົນກະທົບ;

(iii) ທີ່ຕັ້ງ, ຕຳແໜ່ງງານ, ຈຳນວນພະນັກງານໂດຍປະມານ ທີ່ຈະໄດ້ຮັບເງິນນະ�โยบายໃນເວລາສິ້ນສຸດສັນຍາ

ແຮງງານ;

(iv) ຄ່າໃຊ້ຈ່າຍທີ່ຈະຕ້ອງຮັບພາລະ; ແລະ

(v) ມື້ເລີ່ມຕົ້ນຈັດຕັ້ງປະຕິບັດແຜນການນັ້ນ ; ແລະ

(ຂ) ໄດ້ສ້າງຄວາມຄາດຫວັງຢ່າງມີມູນຄວາມຈິງ ໃຫ້ກັບບຸກຄົນທີ່ໄດ້ຮັບຜົນກະທົບ, ວ່າວິສາຫະກິດຈະດຳເນີນການປັບປຸງໂຄງສ້າງ, ດ້ວຍການເລີ່ມຕົ້ນປະຕິບັດແຜນການ ຫຼື ດ້ວຍການແຈ້ງລັກສະນະເດັ່ນຕົ້ນຕໍຂອງແຜນການດັ່ງກ່າວໃຫ້ບຸກຄົນທີ່ໄດ້ຮັບຜົນກະທົບຈາກແຜນການດັ່ງກ່າວ.

ສະຫຼຸບຄວາມ – ວິສາຫະກິດຮັບຮູ້ລາຍການບັນຊີເງິນແຮບ້ວງຄ່າໃຊ້ຈ່າຍໃນການປັບປຸງໂຄງສ້າງຄືນໃໝ່ ພຽງແຕ່ໃນເມື່ອວ່າວິສາຫະກິດມີພັນທະຕາມກົດໝາຍ ຫຼື ພັນທະແບບປະລິຍາຍໃນມື້ລາຍງານ ວ່າຈະດຳເນີນການປັບປຸງໂຄງສ້າງຄືນໃໝ່.

**ຕົວຢ່າງ ທີ 4 – ການຮັບປະກັນສິນຄ້າ**

21ອ.4 ຜູ້ຜະລິດໃຫ້ການຮັບປະກັນສິນຄ້າໃຫ້ແກ່ຜູ້ຊື້ ໃນເວລາຂາຍຜະລິດຕະພັນຂອງຕົນເອງ. ອີງຕາມເງື່ອນໄຂຂອງສັນຍາຂາຍ, ຜູ້ຜະລິດຮັບວ່າ ຈະເຮັດໃຫ້ສິນຄ້າຢູ່ໃນສະພາບທີ່ດີ ດ້ວຍການສ້ອມແປງ ຫຼື ປ່ຽນແທນຜະລິດຕະພັນໃຫ້ ໃນກໍລະນີມີຂໍ້ຕຳໜິໃນການຜະລິດທີ່ໄດ້ສະແດງອອກຢ່າງຈະແจ້ງພາຍໃນສາມປີນັບແຕ່ມື້ຂາຍອອກ. ບົນພື້ນຖານປະສົບການຜ່ານມາ, ອາດເປັນໄປໄດ້ (ເຊັ່ນ ເປັນໄປໄດ້ທີ່ສຸດ ຫຼາຍກ່ວາ ເປັນໄປບໍ່ໄດ້) ທີ່ຈະມີການຮຽກຫວງຄ່າເສຍຫາຍຈຳນວນໜຶ່ງ ພາຍໃຕ້ການຮັບປະກັນສິນຄ້າດັ່ງກ່າວ.

ພັນທະໃນປັດຈຸບັນອັນເນື່ອງຈາກເຫດການຜ່ານມາ ທີ່ກໍ່ໃຫ້ເກີດພັນທະ – ເຫດການທີ່ກໍ່ໃຫ້ເກີດພັນທະ ຄືການຂາຍຜະລິດຕະພັນທີ່ມີການຮັບປະກັນສິນຄ້າ ທີ່ສ້າງຂໍ້ຜູກພັນທາງກົດໝາຍ.

ການເສຍຊັບພະຍາກອນທີ່ສະແດງເຖິງຜົນປະໂຫຍດດ້ານເສດຖະກິດ ໃນການຊຳລະສະສາງພັນທະ – ມີຄວາມອາດເປັນໄປໄດ້ຢ່າງສູງສຳລັບການຮັບປະກັນສິນຄ້າໂດຍລວມ.

ສະຫຼຸບຄວາມ – ວິສາຫະກິດຮັບຮູ້ລາຍການບັນຊີເງິນແຮ ທີ່ສະແດງເຖິງຕົວເລກຄາດຄະເນປະຕິບັດທີ່ດີທີ່ສຸດ ກ່ຽວກັບຕົ້ນທຶນໃນການເຮັດໃຫ້ສິນຄ້າຢູ່ໃນສະພາບດີ ພາຍໃຕ້ການຮັບປະກັນສິນຄ້າ ທີ່ໄດ້ຂາຍອອກກ່ອນມື້ລາຍງານ.

ຕົວຢ່າງການຄິດໄລ່ :

ໃນປີ 20X0, ໄດ້ຂາຍສິນຄ້າເປັນເງິນ 1 000 000 KKip. ປະສົບການຊີ້ບອກວ່າ 90% ຂອງຜະລິດຕະພັນທີ່ໄດ້ຂາຍບໍ່ໄດ້ມີການສ້ອມແປງຕາມການຮັບປະກັນສິນຄ້າແຕ່ປະການໃດ; 6% ຂອງຜະລິດຕະພັນທີ່ໄດ້ຂາຍ ຕ້ອງການໃຫ້ມີການສ້ອມແປງເລັກນ້ອຍ ຊຶ່ງເທົ່າກັບ 30% ຂອງລາຄາຂາຍ; ແລະ 4% ຂອງຜະລິດຕະພັນທີ່ໄດ້ຂາຍ ຕ້ອງການໃຫ້ມີການສ້ອມແປງໃຫ່ຍ ຫຼື ປ່ຽນແທນຊຶ່ງເທົ່າກັບ 70% ຂອງລາຄາຂາຍ. ດັ່ງນັ້ນ, ຄ່າໃຊ້ຈ່າຍຮັບປະກັນສິນຄ້າ ທີ່ໄດ້ຄາດຄະເນໄວ້ ຈຶ່ງເທົ່າກັບ:

| | |
|---|---|
| 1 000 000 KKip × 90% × 0 = | 0 KKip |
| 1 000 000 KKip × 6% × 30% = | 18 000 KKip |
| 1 000 000 KKip × 4% × 70% = | 28 000 KKip |
| ລວມຍອດ | 46 000 KKip |

ຄາດວ່າຄ່າໃຊ້ຈ່າຍໃນການຮັບປະກັນສິນຄ້າ ບ້ວງການສ້ອມແປງ ຫຼື ການປ່ຽນແທນ ສຳລັບຜະລິດຕະພັນທີ່ໄດ້ຂາຍໃນປີ 20X0 ຂອງແຕ່ລະກໍລະນີ ທີ່ຄາດວ່າຈະຕ້ອງຈ່າຍ ໃນທ້າຍປີ ເທົ່າກັບ 60 % ໃນປີ20X1, 30 % ໃນປີ 20X2 ແລະ 10 % ໃນປີ 20X3. ສຳລັບການຄິດໄລ່ມູນຄ່າ ໃນທ້າຍຂອງປີ 20X0 ຂອງກະແສເງິນສົດຄາດຄະເນ ທີ່ຕິດພັນກັບການຮັບປະກັນຜະລິດຕະພັນທີ່ໄດ້ຂາຍໃນປີ 20X0 ກຳນົດດັ່ງລຸ່ມນີ້:

| ປີ | ການຈ່າຍເງິນສົດຄາດຄະເນ (KKip) | |
|---|---|---|
| 20X1 | 46 000 KKip × 60% | 27 600 KKip |
| 20X2 | 46 000 KKip × 30% | 13 800 KKip |
| 20X3 | 46 000 KKip × 10% | 4 600 KKip |
| ລວມຍອດ | | 46 000 KKip |

ວິສາຫະກິດຈະຕ້ອງຮັບຮູ້ລາຍການບັນຊີ ຂໍ້ຜູກພັນໃນການຮັບປະກັນສິນຄ້າ ເທົ່າກັບ 46 000 KKip ໃນທ້າຍປີ 20X0 ສຳລັບຜະລິດຕະພັນທີ່ໄດ້ຂາຍໃນປີ 20X0.

**ຕົວຢ່າງ ທີ 5 : ນະໂຍບາຍການທົດແທນເງິນຄືນ**

21ອ.5 ຮ້ານຄ້າຂາຍຍ່ອຍມີນະໂຍບາຍທົດແທນຄືນລາຍການຊື້ຂອງລູກຄ້າທີ່ບໍ່ເພິ່ງພໍໃຈ ເຖິງແມ່ນວ່າຮ້ານຄ້າດັ່ງກ່າວບໍ່ມີຂໍ້ຜູກພັນທາງດ້ານກົດໝາຍໃນການປະຕິບັດດັ່ງກ່າວກໍຕາມ. ນະໂຍບາຍການທົດແທນເງິນຄືນດັ່ງກ່າວເປັນທີ່ຮັບຊາບກັນດີຢູ່ແລ້ວ.

ພັນທະໃນປັດຈຸບັນອັນເນື່ອງຈາກເຫດການຜ່ານມາ ທີ່ກໍ່ໃຫ້ເກີດພັນທະ – ເຫດການທີ່ກໍ່ໃຫ້ເກີດພັນທະ ຄືການຂາຍຜະລິດຕະພັນຊຶ່ງສ້າງພັນທະແບບປະລິຍາຍ, ເນື່ອງຈາກການປະຕິບັດຂອງຮ້ານຄ້າໄດ້ສ້າງຄວາມຄາດຫວັງທີ່ມີມູນຄວາມຈິງໃຫ້ກັບລູກຄ້າ ວ່າທາງຮ້ານຈະມີການທົດແທນຄືນສິ່ງທີ່ໄດ້ຊື້.

ການເສຍຊັບພະຍາກອນອອກທີ່ສະແດງເຖິງຜົນປະໂຫຍດດ້ານເສດຖະກິດ ໃນການຊຳລະສະສາງພັນທະ – ມີຄວາມອາດເປັນໄປໄດ້ ທີ່ວ່າອັດຕາສ່ວນຂອງສິນຄ້າຈະຖືກສົ່ງຄືນເພື່ອທົດແທນຄືນ.

ສະຫຼຸບຄວາມ – ວິສາຫະກິດຮັບຮູ້ລາຍການບັນຊີເງິນແຮ ຕາມຕົວເລກຄາດຄະເນປະຕິບັດທີ່ດີທີ່ສຸດ ຂອງຈຳນວນເງິນອັນຈຳເປັນເພື່ອຊຳລະເງິນທົດແທນຄືນ.

**ຕົວຢ່າງ ທີ 6 ການປິດພະແນກການໃດໜຶ່ງ – ບໍ່ມີການຈັດຕັ້ງປະຕິບັດກ່ອນການສິ້ນສຸດຮອບເວລາລາຍງານ.**

21ອ.6 ໃນວັນທີ 12 ທັນວາ ປີ 20X0, ສະພາບໍລິຫານຂອງວິສາຫະກິດໄດ້ຕົກລົງປິດພະແນກການໜຶ່ງ. ກ່ອນການສິ້ນສຸດຮອບເວລາລາຍງານ (ວັນທີ 31 ທັນວາ ປີ 20X0) ວິສາຫະກິດຍັງບໍ່ທັນໄດ້ແຈ້ງການຕັດສິນໃຈນັ້ນ ໃຫ້ບຸກຄົນທີ່ໄດ້ຮັບຜົນກະທົບຊາບ ແລະ ບໍ່ທັນໄດ້ຈັດຕັ້ງປະຕິບັດການຕັດສິນໃຈນັ້ນ.

ພັນທະໃນປັດຈຸບັນອັນເນື່ອງຈາກເຫດການຜ່ານມາ ທີ່ກໍ່ໃຫ້ເກີດພັນທະ– ບໍ່ມີເຫດການທີ່ກໍ່ໃຫ້ເກີດພັນທະ, ດັ່ງນັ້ນ ຈຶ່ງບໍ່ມີຂໍ້ຜູກພັນໃດໆ.

ສະຫຼຸບຄວາມ – ວິສາຫະກິດບໍ່ຮັບຮູ້ລາຍການບັນຊີເງິນແຮ.

**ຕົວຢ່າງ ທີ 7 ການປິດພະແນກການໃດໜຶ່ງ – ມີການສື່ສານ ແລະ ຈັດຕັ້ງປະຕິບັດກ່ອນສິ້ນສຸດຮອບເວລາລາຍງານ**

21ອ.7 ໃນວັນທີ 12 ທັນວາ ປີ 20X0, ສະພາບໍລິຫານຂອງວິສາຫະກິດ ໄດ້ຕົກລົງປິດພະແນກການໜຶ່ງ ທີ່ຜະລິດ ຜະລິດຕະພັນສະເພາະໃດໜຶ່ງ. ໃນວັນທີ 20 ທັນວາ ປີ 20X0 ສະພາບໍລິຫານໄດ້ຮັບຮອງເອົາແຜນການລະອຽດ ກ່ຽວກັບການປິດກິດຈະການ, ໄດ້ສົ່ງຈົດໝາຍໃຫ້ລູກຄ້າເພື່ອເຕືອນໃຫ້ເຂົາເຈົ້າຊອກຫາແຫຼ່ງການສະໜອງປ່ຽນແທນ ແລະ ມີການສົ່ງຈົດໝາຍ ໃຫ້ພະນັກງານພາຍໃນພະແນກການດັ່ງກ່າວຊາບ ກ່ຽວກັບແຮງງານສ່ວນເກີນຂອງວິສາຫະກິດ ຫຼັງການປິດພະແນກການນັ້ນແລ້ວ.

ພັນທະໃນປັດຈຸບັນອັນເນື່ອງຈາກເຫດການຜ່ານມາ ທີ່ກໍ່ໃຫ້ເກີດພັນທະ – ເຫດການທີ່ກໍ່ໃຫ້ເກີດພັນທະ ແມ່ນການແຈ້ງການກ່ຽວກັບການຕົກລົງໃຫ້ກັບລູກຄ້າແລະພະນັກງານ, ຊຶ່ງສ້າງພັນທະແບບປະລິຍາຍ ເລີ່ມຕົ້ນແຕ່ມື້ນັ້ນ, ຍ້ອນວ່າໄດ້ສ້າງຄວາມຄາດຫວັງທີ່ມີມູນຄວາມຈິງ ກ່ຽວກັບການປິດພະແນກການນັ້ນ.

ການເສຍຊັບພະຍາກອນທີ່ສະແດງເຖິງຜົນປະໂຫຍດດ້ານເສດຖະກິດ ໃນການຊຳລະສະສາງພັນທະ – ມີຄວາມອາດເປັນໄປໄດ້.

ສະຫຼຸບຄວາມ – ວິສາຫະກິດຮັບຮູ້ລາຍການບັນຊີເງິນແຮ ໃນວັນທີ 31 ທັນວາ ປີ 20X0 ຊຶ່ງເປັນຕົວເລກຄາດຄະເນປະຕິບັດທີ່ດີທີ່ສຸດ ກ່ຽວກັບຄ່າໃຊ້ຈ່າຍທີ່ຈະເກີດຂຶ້ນເພື່ອປິດພະແນກການໃນມື້ລາຍງານ.

**ຕົວຢ່າງ ທີ 8 ການຝຶກອົບຮົມຄືນພະນັກງານອັນເນື່ອງຈາກການປ່ຽນແປງລະບົບອາກອນລາຍຮັບ**

21ອ.8 ລັດຖະບານນຳສະເໜີການປ່ຽນແປງໃນລະບົບອາກອນລາຍຮັບ. ຈາກຜົນຕາມມາຂອງການປ່ຽນແປງດັ່ງກ່າວ, ວິສາຫະກິດໃນຂະແໜງການບໍລິການດ້ານການເງິນຕ້ອງຝຶກອົບຮົມຄືນພະນັກງານບໍລິຫານ ແລະ ການຂາຍ ໃນອັດຕາສ່ວນທີ່ສຳຄັນເພື່ອຮັບປະກັນການປະຕິບັດໃຫ້ຖືກຕ້ອງ ຢ່າງຕໍ່ເນື່ອງຕາມລະບຽບການສ່ວຍສາອາກອນ. ເວລາສິ້ນສຸດຮອບເວລາລາຍງານ, ຍັງບໍ່ທັນມີການຝຶກອົບຮົມພະນັກງານຄືນເທື່ອ.

ພັນທະໃນປັດຈຸບັນອັນເນື່ອງຈາກເຫດການຜ່ານມາ ທີ່ກໍ່ໃຫ້ເກີດພັນທະ – ການປ່ຽນແປງລະບຽບການສ່ວຍສາອາກອນ ບໍ່ໄດ້ວາງຂໍ້ບັງຄັບໃດໆໃຫ້ວິສາຫະກິດຈຳຕ້ອງໄດ້ມີການຝຶກອົບພະນັກງານຄືນ. ເຫດການທີ່ກໍ່ໃຫ້ເກີດພັນທະດ້ານການຮັບຮູ້ລາຍການບັນຊີເປັນເງິນແຮ (ການຝຶກອົບຮົມຄືນໃໝ່ນັ້ນເອງ) ບໍ່ໄດ້ເກີດຂຶ້ນ.

ສະຫຼຸບຄວາມ – ວິສາຫະກິດບໍ່ຮັບຮູ້ລາຍການບັນຊີເງິນແຮ.

**ຕົວຢ່າງ ທີ 9 ຄະດີຟ້ອງຮ້ອງໃນສານ**

21ອ.9 ລູກຄ້າໄດ້ຮ້ອງຟ້ອງວິສາຫະກິດ “ກ”, ເພື່ອທວງຄ່າເສຍຫາຍ ທີ່ໄດ້ຮັບຈາກການບາດເຈັບ ເນື່ອງຈາກການນຳໃຊ້ຜະລິດຕະພັນທີ່ ວິສາຫະກິດ “ກ” ໄດ້ຂາຍ. ວິສາຫະກິດ “ກ” ໄດ້ໂຕ້ແຍ້ງ ດ້ານຄວາມຮັບຜິດຊອບວ່າ ລູກຄ້າບໍ່ໄດ້ປະຕິບັດຕາມແບບວິທີການນຳໃຊ້ຜະລິດຕະພັນ. ຈົນເຖິງມື້ອະນຸມັດການຈັດພິມເອກະສານລາຍງານການເງິນຂອງປີທີ່ສິ້ນສຸດວັນທີ 31 ທັນວາ ປີ 20X1 ໂດຍສະພາບໍລິຫານ, ທະນາຍຄວາມຂອງວິສາຫະກິດໄດ້ໃຫ້ຄຳປຶກສາວ່າອາດເປັນໄປໄດ້ ທີ່ວ່າວິສາຫະກິດຈະບໍ່ຕ້ອງໄດ້ຮັບຜິດຊອບ. ເຖິງຢ່າງໃດກໍດີ ເວລາວິສາຫະກິດສ້າງເອກະສານລາຍງານການເງິນຂອງປີທີ່ສິ້ນສຸດວັນທີ 31 ທັນວາ ປີ 20X2 ທະນາຍຄວາມຂອງວິສາຫະກິດ ໂດຍອີງຕາມຄວາມຄືບໜ້າຂອງຄະດີ, ດຽວນີ້ ອາດເປັນໄປໄດ້ວ່າ ວິສາຫະກິດຈະຕ້ອງຮັບຜິດ.

(ກ) ໃນວັນທີ 31 ທັນວາ ປີ 20X1

ພັນທະໃນປັດຈຸບັນອັນເນື່ອງຈາກເຫດການຜ່ານມາ ທີ່ກໍ່ໃຫ້ເກີດພັນທະ – ບົນພື້ນຖານຂອງຫຼັກຖານຢັ້ງຢືນທີ່ມີ ໃນໄລຍະທີ່ມີການຮັບຮອງເອົາເອກະສານລາຍງານການເງິນ, ບໍ່ມີຂໍ້ຜູກພັນໃດໆ ທີ່ກຳເນີດຈາກເຫດການຜ່ານມາ.

ສະຫຼຸບຄວາມ – ບໍ່ຕ້ອງຮັບຮູ້ລາຍການບັນຊີເງິນແຮ. ບັນຫາດັ່ງກ່າວ ຖືກເປີດເຜີຍເປັນໜີ້ສິນທີ່ອາດເກີດຂຶ້ນ ເວັ້ນເສຍແຕ່ຄວາມເປັນໄປໄດ້ໃນການເສຍຊັບພະຍາກອນຢູ່ໃນລະດັບທີ່ບໍ່ໜ້າເປັນໄປໄດ້.

ຂ) ໃນວັນທີ 31 ທັນວາ ປີ 20X2

ພັນທະໃນປັດຈຸບັນອັນເນື່ອງຈາກນິຕິເຫດຜ່ານມາ ທີ່ກໍ່ໃຫ້ເກີດພັນທະ – ບົນພື້ນຖານຂອງຫຼັກຖານຢັ້ງຢືນທີ່ມີ, ມີພັນທະໃນປັດຈຸບັນ. ເຫດການທີ່ກໍ່ໃຫ້ເກີດພັນທະ ຄືການຂາຍຜະລິດຕະພັນໃຫ້ລູກຄ້າ.

ການເສຍຊັບພະຍາກອນທີ່ສະແດງເຖິງຜົນປະໂຫຍດທາງດ້ານເສດຖະກິດໃນການຊຳລະສະສາງພັນທະ – ມີຄວາມອາດເປັນໄປໄດ້.

ສະຫຼຸບຄວາມ – ເງິນແຮຖືກຮັບຮູ້ລາຍການບັນຊີຕາມຕົວເລກຄາດຄະເນປະຕິບັດທີ່ດີທີ່ສຸດ ຂອງຈຳນວນເງິນເພື່ອຊຳລະສະສາງພັນທະໃນວັນທີ 31 ທັນວາ ປີ 20X2, ແລະ ລາຍຈ່າຍຖືກຮັບຮູ້ລາຍການບັນຊີ ໃນກຳໄລ ຫຼື ຂາດທຶນ. ນີ້ບໍ່ແມ່ນການກວດແກ້ຂໍ້ຜິດພາດ ໃນປີ 20X1, ບົນພື້ນຖານຫຼັກຖານຢັ້ງຢືນທີ່ມີ ເວລາຮັບຮອງເອົາເອກະສານລາຍງານການເງິນ ປີ 20X1, ຕາມແທ້ ເງິນແຮ ບໍ່ຄວນຖືກຮັບຮູ້ລາຍການບັນຊີໃນເວລານັ້ນ.

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| 21.1<br>21ອ.2-ຕຍ. 2 | ໃນມາດຕະຖານ FRS ສຳລັບ ວນກ ນີ້, ສັນຍາເຊົ່າການເງິນ ຖືກຮັບຮູ້ລາຍການບັນຊີ ເປັນສັນຍາເຊົ່າດຳເນີນງານ (ເບິ່ງ ໝວດ 20 *ສັນຍາເຊົ່າ*). |
| 21.7<br>21ອ.4-ຕຍ.4<br>21.11 | ມູນຄ່າປັດຈຸບັນ ບໍ່ຖືກນຳໃຊ້ ເພື່ອສ້າງເອກະສານລາຍງານການເງິນ ໃຫ້ສອດຄ່ອງກັບມາດຕະຖານ FRS ສຳລັບ ວນກ ນີ້ ເວັ້ນເສຍແຕ່ສຳລັບຜົນປະໂຫຍດຂອງພະນັກງານ. ວັກນີ້ ຖືກປັບປຸງ. |

# ໝວດ 22

# ໜີ້ສິນ ແລະ ທຶນເຈົ້າຂອງ

***ໝວດນີ້ ພິຈາລະນາເຖິງເຫດການດ້ານເສດຖະກິດ ຊຶ່ງຍັງບໍ່ທັນມີ ໃນ ສປປ ລາວ ແຕ່ຄາດວ່າ ຈະມີໃນປີ ຂ້າງໜ້າ.***

## ຂອບເຂດຂອງໝວດນີ້

22.1 ໝວດດັ່ງກ່າວນີ້ ວາງຫຼັກການ ການຈັດປະເພດເຄື່ອງມືການເງິນ ເປັນໜີ້ສິນ ຫຼື ເປັນທຶນເຈົ້າຂອງ ແລະ ເວົ້າເຖິງການລົງບັນຊີເຄື່ອງມືການເງິນປະເພດທຶນເຈົ້າຂອງ ທີ່ໄດ້ອອກໃຫ້ບຸກຄົນ ຫຼື ພາກສ່ວນອື່ນ ໃນຖານະຜູ້ລົງທຶນໃສ່ເຄື່ອງມືການເງິນ ປະເພດ**ທຶນເຈົ້າຂອງ** (ໝາຍຄວາມວ່າໃນຖານະ**ເຈົ້າຂອງ**). ໝວດ 26 *ການຊຳລະຕາມຮຸ້ນ* ເວົ້າເຖິງການລົງບັນຊີລາຍການ ເຄື່ອນໄຫວຊຶ່ງວິສາຫະກິດໄດ້ຮັບສິນຄ້າ ຫຼື ການບໍລິການ (ລວມທັງການບໍລິການຈາກພະນັກງານ) ຄູ່ກັບເຄື່ອງມືການເງິນ ປະເພດທຶນເຈົ້າຂອງ (ລວມທັງຮຸ້ນ) ທີ່ມາຈາກພະນັກງານ ແລະ ຜູ້ຂາຍອື່ນໆ ໃນຖານະຜູ້ຂາຍສິນຄ້າ ແລະ ການບໍລິການ.

22.2 ໝວດດັ່ງກ່າວຕ້ອງນຳໃຊ້ເວລາຈັດປະເພດ ທຸກຮູບແບບເຄື່ອງມືການເງິນ, ຍົກເວັ້ນ :

(ກ) ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ ທີ່ໄດ້ລົງບັນຊີໂດຍຖືກຕ້ອງຕາມໝວດ 14 *ເງິນລົງທຶນ ໃນວິສາຫະກິດຂາຮຸ້ນ* ຫຼື ໝວດ 15 *ເງິນລົງທຶນ ໃນວິສາຫະກິດປະສົມ* ;

(ຂ) ສິດ ແລະ ພັນທະຂອງນາຍຈ້າງ, ຈາກແຜນນະໂຍບາຍຄິດໄລ່ຜົນປະໂຫຍດຂອງພະນັກງານ ທີ່ປະຕິບັດຕາມ ໝວດ 28 *ຜົນປະໂຫຍດຂອງພະນັກງານ* ;

(ຄ) ສັນຍາຊຶ່ງອາດມີລາຍການຄູ່ກັນໃນການຄວບກົດຈະການ (ເບິ່ງໝວດ 19 *ການຄວບກົດຈະການ ແລະ ຄ່ານິຍົມ*). ການຍົກເວັ້ນດັ່ງກ່າວ ນຳໃຊ້ສະເພາະແຕ່ຜູ້ຊື້ກົດຈະການເທົ່ານັ້ນ.

(ງ) ເຄື່ອງມືການເງິນ, ສັນຍາ ແລະ ຂໍ້ຜູກພັນ ທີ່ກ່ຽວຂ້ອງກັບລາຍການເຄື່ອນໄຫວການຊຳລະຕາມຮຸ້ນ ຊຶ່ງຕ້ອງປະຕິ ບັດຕາມໝວດ 26, ຍົກເວັ້ນບັນດາວັກ 22.3 ຫາ 22.6 ຊຶ່ງຕ້ອງໄດ້ນຳໃຊ້ສຳລັບຮຸ້ນທຶນຊື້ຄືນ ທີ່ໄດ້ຊື້, ຂາຍ, ອອກ ຫຼື ລົບລ້າງ ຕາມແຜນສິດທິໃນການຊື້ຮຸ້ນ ທີ່ສະຫງວນໄວ້ສຳລັບແຜນການຊື້ຮຸ້ນທີ່ຈັດໄວ້ສຳລັບພະນັກງານ ແລະ ທຸກໆສັນຍາອື່ນໆ ຊຶ່ງມີການຊຳລະຕາມຮຸ້ນ.

## ການຈັດປະເພດເຄື່ອງມື ເປັນໜີ້ສິນ ຫຼື ທຶນເຈົ້າຂອງ

22.3 ທຶນເຈົ້າຂອງແມ່ນຜົນປະໂຫຍດທີ່ຍັງເຫຼືອໃນຊັບສິນຂອງວິສາຫະກິດໃດໜຶ່ງພາຍຫຼັງຫັກໜີ້ສິນທັງໝົດອອກ. ໜີ້ສິນ ແມ່ນ ພັນທະປັດຈຸບັນຂອງວິສາຫະກິດ ອັນເນື່ອງຈາກເຫດການຜ່ານມາ ແລະ ຊຶ່ງການຊຳລະສະສາງໜີ້ສິນດັ່ງກ່າວ ຄາດວ່າຈະ ນຳໄປສູ່ການເສຍຊັບພະຍາກອນ ທີ່ມີຜົນປະໂຫຍດດ້ານເສດຖະກິດ ອອກຈາກວິສາຫະກິດ. ທຶນເຈົ້າຂອງ ປະກອບດ້ວຍ ເງິນລົງທຶນຂອງເຈົ້າຂອງວິສາຫະກິດ, ບວກສ່ວນເພີ້ມໃສ່ເງິນລົງທຶນດັ່ງກ່າວ ທີ່ໄດ້ຜ່ານການດຳເນີນງານທີ່ມີຜົນກຳໄລ ແລະ ຮັກສາໄວ້ເພື່ອນຳໃຊ້ໃນການເຄື່ອນໄຫວຂອງວິສາຫະກິດ, ຫັກສ່ວນຫຼຸດຂອງເງິນລົງທຶນຂອງເຈົ້າຂອງອອກ ທີ່ເນື່ອງ ມາຈາກການດຳເນີນງານທີ່ບໍ່ມີຜົນກຳໄລ ແລະ ການແຈກຢາຍໃຫ້ເຈົ້າຂອງ.

22.4 ບາງເຄື່ອງມືການເງິນ ທີ່ກົງກັບຄຳນິຍາມ ກ່ຽວກັບ **ໜີ້ສິນ** ຖືກຈັດປະເພດເປັນທຶນເຈົ້າຂອງ, ຍ້ອນວ່າເຄື່ອງມືດັ່ງກ່າວສະ ແດງເຖິງຜົນປະໂຫຍດທີ່ຍັງເຫຼືອໃນຊັບສິນສຸດທິຂອງວິສາຫະກິດ:

(ກ) ເຄື່ອງມືທີ່ມີສິດຂາຍຄືນໄດ້ ແມ່ນເຄື່ອງມືການເງິນທີ່ໃຫ້ສິດ ແກ່ຜູ້ຄອບຄອງ ໃນການຂາຍເຄື່ອງມືດັ່ງກ່າວຄືນ ໃຫ້ຜູ້ ອອກເຄື່ອງມືນັ້ນ ເພື່ອແລກກັບເງິນສົດ ຫຼື ຊັບສິນການເງິນອື່ນ, ຫຼື ຖືກໄຖ່ຖອນຄືນໂດຍອັດຕະໂນມັດ ຫຼື ຊື້ຄືນ ໂດຍຜູ້ອອກໃຫ້ ໃນກໍລະນີເກີດມີເຫດການໃນອະນາຄົດທີ່ບໍ່ແນ່ນອນ ຫຼື ກໍລະນີມໍລະນະກຳ ຫຼື ການອອກບຳນານ ຂອງຜູ້ຄອບຄອງເຄື່ອງມືນັ້ນ. ເຄື່ອງມືທີ່ມີສິດຂາຍຄືນໄດ້ ທີ່ມີລັກສະນະເດັ່ນດັ່ງລຸ່ມນີ້ ຖືກຈັດເປັນປະເພດເຄື່ອງມື ການເງິນປະເພດທຶນເຈົ້າຂອງ:

(i) ໃຫ້ສິດຜູ້ຄອບຄອງ ໃນສ່ວນແບ່ງໃນຊັບສິນສຸດທິຂອງວິສາຫະກິດໃນກໍລະນີມີການສະສາງວິສາຫະກິດນັ້ນ ອອກ. ຊັບສິນສຸດທິຂອງວິສາຫະກິດ ແມ່ນຊັບສິນທີ່ຍັງເຫຼືອ ພາຍຫຼັງຫັກທຸກລາຍການຮຽກທວງອື່ນໆຕໍ່ຊັບ ສິນກ່ຽວຂ້ອງອອກ.

(ii) ເຄື່ອງມືນັ້ນ ຈັດຢູ່ໃນປະເພດເຄື່ອງມືທີ່ມີສິດໜ້ອຍກວ່າປະເພດເຄື່ອງມືອື່ນໆທັງໝົດ.

(iv) ນອກຈາກຂໍ້ຜູກພັນຕາມສັນຍາ ສຳລັບຜູ້ອອກເຄື່ອງມືໃນການຊື້ຄືນ ຫຼື ໄຖ່ຖອນຄືນເຄື່ອງມືນັ້ນ ດ້ວຍເງິນສົດ ຫຼື ຊັບສິນການເງິນອື່ນໆ, ເຄື່ອງມືນັ້ນບໍ່ມີຂໍ້ຜູກພັນຕາມສັນຍາ ທີ່ຈະມອບເງິນສົດ ຫຼື ຊັບສິນການເງິນອື່ນໆ ໃຫ້ແກ່ວິສາຫະກິດອື່ນ, ຫຼື ແລກປ່ຽນຊັບສິນການເງິນ ຫຼື ໜີ້ສິນການເງິນ ກັບວິສາຫະກິດອື່ນ ຕາມເງື່ອນໄຂ ທີ່ອາດບໍ່ເອື້ອອຳນວຍຜົນປະໂຫຍດຕໍ່ວິສາຫະກິດ, ແລະ ກໍບໍ່ແມ່ນສັນຍາ ທີ່ຈະ ຫຼື ທີ່ສາມາດຖືກຊຳລະສະ ສາງ ດ້ວຍເຄື່ອງມືການເງິນປະເພດທຶນເຈົ້າຂອງຂອງວິສາຫະກິດໄດ້.

(v) ລວມຍອດກະແສເງິນສົດຄາດຫວັງໄວ້ ທີ່ກ່ຽວຂ້ອງກັບເຄື່ອງມື ຕະຫຼອດໄລຍະອາຍຸການໃຊ້ ຂຶ້ນກັບກຳໄລ ຫຼື ຂາດທຶນ, ສ່ວນປ່ຽນແປງຂອງຊັບສິນສຸດທິ ທີ່ໄດ້ຮັບຮູ້ລາຍການບັນຊີ ຫຼື ສ່ວນປ່ຽນແປງຂອງມູນຄ່າຍຸຕິທຳ ຂອງຊັບສິນສຸດທິຂອງວິສາຫະກິດ ທັງທີ່ໄດ້ຮັບຮູ້ລາຍການບັນຊີ ແລະ ບໍ່ໄດ້ຮັບຮູ້ລາຍການບັນຊີ ຕະຫຼອດ ໄລຍະອາຍຸການໃຊ້ຂອງເຄື່ອງມືນັ້ນ (ບໍ່ລວມເຖິງຜົນກະທົບຕ່າງໆທີ່ມີຕໍ່ເຄື່ອງມື).

(ຂ) ເຄື່ອງມື ຫຼື ອົງປະກອບຂອງເຄື່ອງມືທີ່ມີສິດໜ້ອຍກວ່າທຸກປະເພດເຄື່ອງມືອື່ນໆ ໃຫ້ຈັດປະເພດເປັນທຶນເຈົ້າຂອງ, ຖ້າຫາກເຄື່ອງມືດັ່ງກ່າວ ເຮັດໃຫ້ວິສາຫະກິດ ມີພັນທະໃນການສົ່ງມອບສ່ວນແບ່ງໃນຊັບສິນສຸດທິຂອງຕົນເອງ ຕາມ ອັດຕາສ່ວນ ໃຫ້ແກ່ຝ່າຍອື່ນ ພຽງແຕ່ໃນກໍລະນີທີ່ມີການສະສາງວິສາຫະກິດນັ້ນອອກ ເທົ່ານັ້ນ.

22.5 ຕົວຢ່າງດັ່ງລຸ່ມນີ້ ເປັນຕົວຢ່າງກໍລະນີເຄື່ອງມື ທີ່ຖືກຈັດປະເພດເປັນໜີ້ສິນ ແຕ່ຫາກບໍ່ແມ່ນທຶນເຈົ້າຂອງ:

(ກ) ເຄື່ອງມືຖືກຈັດປະເພດ ເປັນໜີ້ສິນ ຖ້າຫາກວ່າ ມີການກຳນົດຈຳນວນເງິນສູງສຸດ (ເພດານ) ໃນການແຈກຢາຍຊັບ ສິນສຸດທິໃນເວລາສະສາງອອກ. ຕົວຢ່າງ, ຖ້າວ່າໃນເວລາສະສາງ, ຜູ້ຄອບຄອງເຄື່ອງມືໄດ້ຮັບສ່ວນແບ່ງຊັບສິນ ສຸດທິ, ແຕ່ຈຳນວນເງິນດັ່ງກ່າວ ຖືກຈຳກັດດ້ວຍເພດານ ແລະສ່ວນເກີນຊັບສິນສຸດທິຈາກເພດານນີ້ ໄດ້ຖືກແຈກ ຢາຍໃຫ້ອົງການມູນນິທິ ຫຼື ໃຫ້ລັດຖະບານ, ເຄື່ອງມືນີ້ ບໍ່ຖືກຈັດເປັນປະເພດທຶນເຈົ້າຂອງ.

(ຂ) ເຄື່ອງມືທີ່ມີສິດຂາຍຄືນໄດ້ ຈັດເປັນປະເພດເຄື່ອງມືທຶນເຈົ້າຂອງ ຖ້າຫາກວ່າ ໃນເວລາປະຕິບັດສິດທິໃນການຂາຍ, ຜູ້ຄອບຄອງເຄື່ອງມືໄດ້ຮັບສ່ວນແບ່ງໃນຊັບສິນສຸດທິຂອງວິສາຫະກິດ ທີ່ໄດ້ຕີມູນຄ່າໂດຍຖືກຕ້ອງຕາມມາດຕະຖານ ສະບັບນີ້.

(ຄ) ເຄື່ອງມືຖືກຈັດເປັນປະເພດໜີ້ສິນ ຖ້າຫາກບັງຄັບໃຫ້ວິສາຫະກິດຈຳຕ້ອງດຳເນີນການຊຳລະເງິນໃຫ້ຜູ້ຄອບຄອງ ກ່ອນຈະສະສາງອອກ ເຊັ່ນເງິນປັນຜົນໂດຍບັງຄັບ.

(ຈ) ຮຸ້ນບູລິມະສິດ ທີ່ກຳນົດໃຫ້ຜູ້ອອກຮຸ້ນມີການໄຖ່ຖອນຄືນໂດຍບັງຄັບ, ດ້ວຍຈຳນວນເງິນອັນແນ່ນອນ ຫຼື ທີ່ກຳນົດໄດ້ ໃນມື້ໃດໜຶ່ງຂ້າງໜ້າ ຫຼື ທີ່ໃຫ້ສິດແກ່ຜູ້ຖືຮຸ້ນໃນການຮຽກທວງໃຫ້ຜູ້ອອກຮຸ້ນ ໄຖ່ຖອນເອົາຄືນເຄື່ອງມືນັ້ນ ໃນມື້ ຫຼື ພາຍຫຼັງມື້ທີ່ໄດ້ກຳນົດໄວ້ແນ່ນອນນັ້ນ, ດ້ວຍຈຳນວນເງິນອັນແນ່ນອນ ຫຼື ທີ່ກຳນົດໄດ້, ແມ່ນໜີ້ສິນການເງິນ.

22.6 ຮຸ້ນຂອງສະມາຊິກຂອງຫົວໜ່ວຍສະຫະກອນ ແລະ ເຄື່ອງມືຄ້າຍຄືກັນ ແມ່ນທຶນເຈົ້າຂອງ ຖ້າຫາກວ່າ :

(ກ) ຫົວໜ່ວຍມີສິດແບບບໍ່ມີເງື່ອນໄຂ ທີ່ຈະປະຕິເສດການໄຖ່ຖອນຮຸ້ນຂອງສະມາຊິກ, ຫຼື

(ຂ) ການໄຖ່ຖອນຖືກເກືອດຫ້າມແບບບໍ່ມີເງື່ອນໄຂ ໃນກົດໝາຍ ແລະ ລະບຽບການພາຍໃນປະເທດ ຫຼື ໃນກົດລະບຽບ ຂອງວິສາຫະກິດນັ້ນ.

## ການອອກຮຸ້ນ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງອື່ນໆ ຄັ້ງທຳອິດ

22.7 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີການອອກຮຸ້ນ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງອື່ນໆ ເປັນທຶນເຈົ້າຂອງ ເມື່ອ ອອກເຄື່ອງມືດັ່ງກ່າວ ແລະ ອີກຝ່າຍໜຶ່ງມີພັນທະບັງຄັບໃຫ້ປະກອບເງິນສົດ ຫຼື ຊັບພະຍາກອນອື່ນໆ ໃຫ້ວິສາຫະກິດ ເພື່ອແລກປ່ຽນກັບເຄື່ອງມືດັ່ງກ່າວ.

(ກ) ຖ້າວ່າເຄື່ອງມືການເງິນປະເພດທຶນເຈົ້າຂອງຫາກອອກກ່ອນ ທີ່ວິສາຫະກິດໄດ້ຮັບເງິນສົດ ຫຼື ຊັບພະຍາກອນອື່ນ, ວິສາຫະກິດຕ້ອງສະແດງຈຳນວນເງິນໜີ້ຕ້ອງຮັບນັ້ນ ເປັນການຫັກຊຳລະສະສາງທຶນເຈົ້າຂອງ ໃນໃບລາຍງານຖານະການເງິນຂອງຕົນເອງ, ແຕ່ຫາກບໍ່ແມ່ນເປັນຊັບສິນ.

(ຂ) ຖ້າວ່າວິສາຫະກິດໄດ້ຮັບເງິນສົດ ຫຼື ຊັບພະຍາກອນອື່ນ ກ່ອນອອກເຄື່ອງມືການເງິນປະເພດທຶນເຈົ້າຂອງ ແລະ ວິສາຫະກິດບໍ່ຖືກບັງຄັບໃຫ້ຊຳລະຄືນເງິນສົດ ຫຼື ຊັບພະຍາກອນອື່ນໆ ທີ່ໄດ້ຮັບ, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີສ່ວນເພີ້ມຂຶ້ນໃນທຶນເຈົ້າຂອງ ຕາມຈຳນວນສິ່ງຕອບແທນທີ່ໄດ້ຮັບ.

(ຄ) ໃນກໍລະນີທີ່ວ່າໄດ້ຈອງຊື້ເຄື່ອງມືການເງິນປະເພດທຶນເຈົ້າຂອງແລ້ວ, ແຕ່ຍັງບໍ່ທັນອອກເຄື່ອງມືເທື່ອ ແລະ ວິສາຫະກິດກໍຍັງບໍ່ທັນໄດ້ຮັບເງິນສົດ ຫຼື ຊັບພະຍາກອນອື່ນໆເທື່ອ, ບໍ່ໃຫ້ວິສາຫະກິດຮັບຮູ້ລາຍການບັນຊີສ່ວນເພີ້ມຂຶ້ນໃນທຶນເຈົ້າຂອງ.

22.8 ວິສາຫະກິດຕ້ອງຕີມູນຄ່າເຄື່ອງມືການເງິນປະເພດທຶນເຈົ້າຂອງຕາມມູນຄ່າຍຸຕິທຳຂອງເງິນສົດ ຫຼື ຊັບພະຍາກອນອື່ນທີ່ໄດ້ຮັບ ຫຼື ຕ້ອງຮັບ, ຫັກຕົ້ນທຶນທາງກົງທີ່ຕິດພັນກັບການອອກເຄື່ອງມືການເງິນປະເພດທຶນເຈົ້າຂອງອອກ.

22.9 ວິສາຫະກິດຕ້ອງລົງບັນຊີຕົ້ນທຶນລາຍການເຄື່ອນໄຫວ ກ່ຽວກັບທຶນເຈົ້າຂອງເປັນການຫັກທຸກຜົນປະ�โยດດ້ານອາກອນລາຍຮັບທີ່ກ່ຽວຂ້ອງ ອອກຈາກທຶນເຈົ້າຂອງ.

22.10 ວິທີການສະແດງ ກ່ຽວກັບສ່ວນເພີ້ມຂຶ້ນຂອງທຶນເຈົ້າຂອງທີ່ເກີດຂຶ້ນໃນເວລາອອກຮຸ້ນ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງອື່ນໆໃນໃບລາຍງານຖານະການເງິນ ແມ່ນໄດ້ກຳນົດໂດຍກົດໝາຍທີ່ມີຜົນບັງຄັບໃຊ້. ຕົວຢ່າງ ມູນຄ່າທີ່ກຳນົດໄວ້ (ຫຼື ມູນຄ່າໃນນາມອື່ນໆ) ຂອງຮຸ້ນ ແລະ ຈຳນວນເງິນຊຳລະ ທີ່ເກີນມູນຄ່າທີ່ກຳນົດໄວ້ ອາດຈະສະແດງອອກຕ່າງຫາກ.

## ການແຈກຢາຍຮຸ້ນເປັນຜົນ ຫຼື ການອອກຮຸ້ນບຳເນັດ ແລະ ການແຍກສ່ວນຮຸ້ນ

22.12 ການແຈກຢາຍຮຸ້ນເປັນຜົນ ຫຼື ການອອກຮຸ້ນບຳເນັດ (ບາງຄັ້ງຄາວເອີ້ນວ່າເງິນປັນຜົນເປັນຮຸ້ນ) ແມ່ນການອອກຮຸ້ນໃໝ່ໃຫ້ແກ່ຜູ້ຖືຮຸ້ນ ຕາມອັດຕາສ່ວນກັບການຖືຮຸ້ນໃນປັດຈຸບັນ. ຕົວຢ່າງ ວິສາຫະກິດໜຶ່ງ ອາດມອບເງິນປັນຜົນເປັນຮຸ້ນ, ຫຼື ຮຸ້ນບຳເນັດໜຶ່ງຕໍ່ຫ້າຮຸ້ນທີ່ພວມຖືຢູ່ ໃຫ້ຜູ້ຖືຮຸ້ນ. ການແຍກສ່ວນຮຸ້ນ (ບາງຄັ້ງຄາວເອີ້ນວ່າການແບ່ງສ່ວນຮຸ້ນ) ແມ່ນການແບ່ງປັນຮຸ້ນທີ່ມີຂອງວິສາຫະກິດໜຶ່ງອອກເປັນຫຼາຍຮຸ້ນ. ຕົວຢ່າງ, ໃນການແຍກສ່ວນຮຸ້ນ, ຜູ້ຖືຮຸ້ນແຕ່ລະຄົນສາມາດຮັບຮຸ້ນເພີ້ມເຕີມ ໜຶ່ງຮຸ້ນ ສຳລັບແຕ່ລະຮຸ້ນທີ່ຕົນເອງຖືຢູ່. ໃນບາງກໍລະນີ, ຮຸ້ນທີ່ຄ້າງໃນໄລຍະຜ່ານມາຈະຖືກລົບລ້າງ ແລະ ປ່ຽນແທນດ້ວຍຮຸ້ນໃໝ່. ການແຈກຢາຍຮຸ້ນເປັນຜົນ ຫຼື ການອອກຮຸ້ນບຳເນັດ ແລະ ການແຍກສ່ວນຮຸ້ນ ບໍ່ເຮັດໃຫ້ລວມຍອດທຶນເຈົ້າຂອງມີການປ່ຽນແປງ. ວິສາຫະກິດຕ້ອງຈັດປະເພດຄືນໃໝ່ຈຳນວນເງິນໃນທຶນເຈົ້າຂອງ ຕາມທີ່ກຳນົດໃນກົດໝາຍທີ່ມີຜົນບັງຄັບໃຊ້.

## ຮຸ້ນທຶນຊື້ຄືນ

22.16 **ຮຸ້ນທຶນຊື້ຄືນ** ແມ່ນເຄື່ອງມືການເງິນປະເພດທຶນເຈົ້າຂອງຂອງວິສາຫະກິດທີ່ໄດ້ອອກ ແລະຕໍ່ມາວິສາຫະກິດດັ່ງກ່າວ ກໍໄດ້ຊື້ຄືນ. ວິສາຫະກິດຕ້ອງຫັກມູນຄ່າຍຸຕິທຳຂອງສິ່ງຕອບແທນທີ່ຈ່າຍອອກໄປສຳລັບຮຸ້ນທຶນຊື້ຄືນອອກຈາກທຶນຕົນເອງ. ວິສາຫະກິດຕ້ອງບໍ່ຮັບຮູ້ລາຍການບັນຊີສ່ວນໄດ້ ຫຼື ສ່ວນເສຍ ເປັນກຳໄລ ຫຼື ຂາດທຶນ ໃນເວລາຊື້, ຂາຍ, ອອກຮຸ້ນ ຫຼື ລົບລ້າງຮຸ້ນທຶນຊື້ຄືນ.

## ການແຈກຢາຍໃຫ້ເຈົ້າຂອງ

22.17 ວິສາຫະກິດຕ້ອງຫຼຸດຜ່ອນທຶນເຈົ້າຂອງດ້ວຍຈຳນວນເງິນທີ່ໄດ້ແຈກຢາຍໃຫ້ເຈົ້າຂອງ (ຜູ້ຖືເຄື່ອງມືການເງິນປະເພດທຶນເຈົ້າຂອງ) ຫັກຜົນປະ�โยດດ້ານອາກອນກຳໄລ (ອາກອນລາຍຮັບ) ທີ່ກ່ຽວຂ້ອງທັງໝົດອອກ. ວັກ 29.26 ໃຫ້ຄຳແນະນຳ ກ່ຽວກັບການລົງບັນຊີ ກ່ຽວກັບການຫັກອາກອນລາຍໄດ້ເງິນປັນຜົນ ຢູ່ຕົ້ນທາງໄວ້.

22.18 ບາງຄັ້ງຄາວ ວິສາຫະກິດແຈກຢາຍຊັບສິນ ແທນເງິນສົດ ບ້ວງເງິນປັນຜົນໃຫ້ເຈົ້າຂອງ. ເມື່ອວິສາຫະກິດປະກາດການແຈກຢາຍດັ່ງກ່າວ ແລະ ມີພັນທະໃນການແຈກຢາຍຊັບສິນທີ່ບໍ່ເປັນເງິນສົດໃຫ້ເຈົ້າຂອງ, ຕ້ອງໄດ້ຮັບຮູ້ລາຍການບັນຊີໜີ້ສິນ. ວິສາຫະກິດຕ້ອງໄດ້ຕີມູນຄ່າໜີ້ສິນນັ້ນ ຕາມມູນຄ່າຍຸຕິທຳຂອງຊັບສິນທີ່ຈະແຈກຢາຍ. ໃນຕອນທ້າຍຂອງ**ຮອບເວລາ**

**ລາຍງານ** ແລະໃນມື້ຊຳລະເງິນ, ວິສາຫະກິດຕ້ອງກວດຄືນ ແລະ ປັບປຸງມູນຄ່າໃນບັນຊີຂອງເງິນປັນຜົນຕ້ອງຈ່າຍ ເພື່ອສ່ອງແສງເຖິງສ່ວນປ່ຽນແປງດ້ານມູນຄ່າຍຸຕິທຳຂອງຊັບສິນທີ່ຈະແຈກຢາຍ ແລະ ຮັບຮູ້ລາຍການບັນຊີທຸກສ່ວນປ່ຽນແປງດ້ານທຶນເຈົ້າຂອງ ເປັນລາຍການປັບປຸງຈຳນວນເງິນແຈກຢາຍ.

| **ການສົມທຽບກັບ FRS ສຳລັບ ວຫຍ** | |
|---|---|
| 22.1<br>22.2 (ງ) | ຖ້າວິສາຫະກິດ ອອກສິດທິໃນການຊື້ຮຸ້ນ, ວິສາຫະກິດດັ່ງກ່າວ ຖືກຈັດປະເພດ ເປັນ "ວິສາຫະກິດຂະໜາດໃຫຍ່" (ເບິ່ງ ວັກ 11.11). ວັກນີ້ ຖືກປັບປຸງ. |
| 22.2 (ກ) | ວນກ ບໍ່ສ້າງເອກະສານລາຍງານການເງິນລວມກິດຈະການ. ຂໍ້ອ້າງອີງ ກ່ຽວກັບ "ໝວດ 9 *ເອກະສານລາຍງານການເງິນລວມກິດຈະການ ແລະ ເອກະສານລາຍງານການເງິນສະເພາະກິດຈະການ"* ຖືກຕັດອອກ. |
| 22.4 (ກ) (iii) | ວນກ ທີ່ອອກເຄື່ອງມື ທີ່ຕົນຂຶ້ນກັບ ຖືກຈັດປະເພດເປັນ «ວິສາຫະກິດຂະໜາດໃຫຍ່ » (ເບິ່ງ ວັກ 1.2(ຈ)). ວັກເຫຼົ່ານີ້ ຖືກຕັດອອກ. |
| 22.5 (ຂ) | ມາດຕະຖານ FRS ສຳລັບ ວນກ ນີ້ ເປັນມາດຕະຖານດ້ານບັນຊີຂອງລາວ: ປະໂຫຍກສຸດທ້າຍຖືກຕັດອອກ. |
| 22.5 (ງ) | ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວຫຍ ຢ່າງເຕັມສ່ວນ. ວັກນີ້ ຖືກຕັດອອກ. |
| 22.8 | ວນກ ບໍ່ຕີມູນຄ່າ ຕາມພື້ນຖານມູນຄ່າປັດຈຸບັນ ຖ້າການຊຳລະ ຖືກເຍື້ອນຊຳລະ ແລະ ເວລາຂອງເງິນ ຖືເປັນສຳຄັນໂດຍທຽບຖານ. ວັກນີ້ ຖືກປັບປຸງ. |
| 22.11 | ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວຫຍ ຢ່າງເຕັມສ່ວນ ຖ້າຕົນນຳໃຊ້ການຂາຍສິດທິໃນການຊື້-ຂາຍ, ສິດທິ ແລະ ໃບຈອງຊື້ (ເບິ່ງ FRS ສຳລັບ ວຫຍ - ໝວດ 12 *ປະເດັນຕ່າງໆ ທີ່ຕິດພັນກັບເຄື່ອງມືການເງິນອື່ນໆ*). ວັກນີ້ ຖືກຕັດອອກ. |
| 22.13 - 22.15 ແລະ ເອກະສານຊ້ອນທ້າຍຂອງໝວດ 22 | ວນກ ທີ່ອອກ ໜີ້ທີ່ສາມາດປ່ຽນເປັນຮຸ້ນໄດ້ ຫຼື ເຄື່ອງມືການເງິນປະສົມທີ່ຄ້າຍຄືກັນຖືກຈັດປະເພດເປັນ «ວິສາຫະກິດຂະໜາດໃຫຍ່». (ເບິ່ງ ວັກ 1.2 (ຈ)). ວັກເຫຼົ່ານີ້ ຖືກຕັດອອກ. |
| 22.19 | ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນ ວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວຫຍ ຢ່າງເຕັມສ່ວນ. ວັກນີ້ ຖືກຕັດອອກ. |

# ໝວດ 23

# ລາຍຮັບ

***ໝວດນີ້ ພິຈາລະນາເຖິງເຫດການດ້ານເສດຖະກິດ ຊຶ່ງຍັງບໍ່ທັນມີ ໃນ ສປປ ລາວ ແຕ່ຄາດວ່າ ຈະມີໃນປີ ຂ້າງໜ້າ.***

## ຂອບເຂດຂອງໝວດນີ້

23.1 ໝວດດັ່ງກ່າວນີ້ ຕ້ອງນຳໃຊ້ສຳລັບການລົງບັນຊີລາຍຮັບທີ່ມາຈາກລາຍການເຄື່ອນໄຫວ ແລະ ເຫດການລຸ່ມນີ້ :

(ກ) ການຂາຍສິນຄ້າ (ບໍ່ວ່າວິສາຫະກິດໄດ້ຜະລິດເພື່ອຈຸດປະສົງໃນການຂາຍ ຫຼື ທີ່ໄດ້ຊື້ເພື່ອຂາຍອອກຄືນກໍຕາມ).

(ຂ) ການສະໜອງການບໍລິການ.

(ຄ) ສັນຍາການກໍ່ສ້າງຊຶ່ງວິສາຫະກິດເປັນຜູ້ຮັບເໝົາ.

(ງ) ການນຳໃຊ້ໂດຍພາກສ່ວນອື່ນ ຊັບສິນຂອງວິສາຫະກິດ ທີ່ໃຫ້ດອກເບ້ຍ, ຄ່າສິດທິ ຫຼື ເງິນປັນຜົນ.

23.2 ລາຍໄດ້ ຫຼື **ລາຍຮັບ**ອື່ນໆ ທີ່ມາຈາກບາງລາຍການເຄື່ອນໄຫວ ແລະ ບາງເຫດການ ຊຶ່ງມີວິທີປະຕິບັດທີ່ໄດ້ກຳນົດໃນ ໝວດອື່ນໆຂອງມາດຕະຖານສະບັບນີ້.

(ກ) ສັນຍາເຊົ່າ (ເບິ່ງ ໝວດ 20 *ສັນຍາເຊົ່າ*).

(ຂ) ເງິນປັນຜົນ ແລະ ລາຍຮັບອື່ນໆທີ່ເກີດຂຶ້ນຈາກເງິນລົງທຶນທີ່ໄດ້ລົງບັນຊີ ໂດຍນຳໃຊ້ວິທີການຕີມູນຄ່າທຽບເທົ່າ (ເບິ່ງ ໝວດ 14 *ເງິນລົງທຶນໃນວິສາຫະກິດຂາຮຸ້ນ* ແລະ ໝວດ 15 *ເງິນລົງທຶນໃນວິສາຫະກິດປະສົມ*).

(ຄ) ສ່ວນປ່ຽນແປງດ້ານມູນຄ່າຍຸຕິທຳ ຂອງເງິນລົງທຶນ ໃນຮຸ້ນບູລິມະສິດທີ່ປ່ຽນເປັນຮຸ້ນສາມັນບໍ່ໄດ້ ແລະ ຮຸ້ນສາມັນ ແລະ ຮຸ້ນບູລິມະສິດທີ່ບໍ່ມີສິດຂາຍຄືນໄດ້ ຊຶ່ງບັນລຸເງື່ອນໄຂ ໃນວັກ 11.8(ງ) (ເບິ່ງໝວດ11 *ເຄື່ອງມືການເງິນ ພື້ນຖານ*).

(ຈ) **ການຮັບຮູ້ລາຍການບັນຊີ**ເບື້ອງຕົ້ນ ແລະ ສ່ວນປ່ຽນແປງດ້ານມູນຄ່າຍຸຕິທຳຂອງ**ຊັບສິນຊີວະພາບ** ທີ່ກ່ຽວຂ້ອງກັບ ກິດຈະກຳກະສິກຳ (ເບິ່ງ ໝວດ 34 *ກິດຈະກຳພິເສດ*) ;

(ສ) ການຮັບຮູ້ລາຍການບັນຊີເບື້ອງຕົ້ນ ກ່ຽວກັບ**ຜະລິດຕະພັນກະສິກຳ** (ເບິ່ງໝວດ 34 *ກິດຈະກຳພິເສດ*).

## ການຕີມູນຄ່າລາຍຮັບ

23.3 ວິສາຫະກິດຕ້ອງຕີມູນຄ່າລາຍຮັບ ຕາມມູນຄ່າຍຸຕິທຳຂອງສິ່ງຕອບແທນທີ່ໄດ້ຮັບ ຫຼື ຕ້ອງຮັບ ເວັ້ນເສຍໃນກໍລະນີດຽວ ຂອງການແລກປ່ຽນ (ເບິ່ງວັກ 23.7(ກ)). ຈຳນວນເງິນຂອງສິ່ງຕອບແທນ ທີ່ໄດ້ຮັບ ຫຼື ຕ້ອງຮັບ ຄຳນຶງເຖິງຈຳນວນເງິນ ສ່ວນຫຼຸດດ້ານປະລິມານ, ສ່ວນຫຼຸດໃນການຊຳລະພ້ອມ ຫຼື ສ່ວນຫຼຸດການຄ້າຕາມບໍລິມາດທີ່ວິສາຫະກິດຫຼຸດໃຫ້.

23.4 ໃນລາຍຮັບ ວິສາຫະກິດລວມເອົາພຽງແຕ່ກະແສຮັບລວມ ຜົນປະ�โยດດ້ານເສດຖະກິດ ທີ່ວິສາຫະກິດໄດ້ຮັບ ແລະ ຕ້ອງ ຮັບໃນນາມຕົນເອງ. ວິສາຫະກິດຕ້ອງເອົາອອກຈາກລາຍຮັບ ທຸກຈຳນວນເງິນທີ່ໄດ້ຮຽກເກັບໃນນາມພາກສ່ວນອື່ນ ເຊັ່ນ ອາກອນການຂາຍ, ອາກອນສິນຄ້າ ແລະ ການບໍລິການ ແລະ ອາກອນມູນຄ່າເພີ່ມ. ໃນສາຍພົວພັນດ້ານຕົວແທນ, ວິ ສາຫະກິດຄວນເອົາພຽງແຕ່ຈຳນວນເງິນຄ່ານາຍໜ້າຂອງຕົນເອງເທົ່ານັ້ນ ເຂົ້າໃນລາຍຮັບ. ຈຳນວນເງິນທີ່ຕົນເປັນຕົວ ແທນໄດ້ຮຽກເກັບໃຫ້ຕົວຫຼັກ ບໍ່ຖືເປັນລາຍຮັບຂອງວິສາຫະກິດ.

### ການແລກປ່ຽນສິນຄ້າ ຫຼື ການບໍລິການ

23.6 ວິສາຫະກິດຕ້ອງບໍ່ຮັບຮູ້ລາຍການບັນຊີ ເປັນລາຍຮັບ :

(ກ) ຖ້າມີການແລກປ່ຽນສິນຄ້າ ຫຼື ການບໍລິການ ກັບສິນຄ້າ ຫຼື ການບໍລິການ ທີ່ມີລັກສະນະເນື້ອໃນ ແລະ ມູນຄ່າ ຄ້າຍຄືກັນ; ຫຼື

(ຂ) ຖ້າມີການແລກປ່ຽນສິນຄ້າ ຫຼື ການບໍລິການ ກັບສິນຄ້າ ຫຼື ການບໍລິການ ທີ່ບໍ່ຄືກັນ ແຕ່ລາຍການເຄື່ອນໄຫວບໍ່ມີ ເນື້ອແທ້ທາງດ້ານທຸລະກິດ.

23.7 ວິສາຫະກິດຈະຕ້ອງຮັບຮູ້ລາຍການບັນຊີລາຍຮັບ ເວລາໄດ້ຂາຍສິນຄ້າ ຫຼື ໄດ້ແລກປ່ຽນການບໍລິການ ກັບສິນຄ້າ ຫຼື ການ ບໍລິການ ທີ່ບໍ່ຄືກັນໃນລາຍການເຄື່ອນໄຫວທີ່ມີເນື້ອແທ້ທາງດ້ານທຸລະກິດ. ໃນກໍລະນີດັ່ງກ່າວ, ວິສາຫະກິດຕ້ອງຕີມູນຄ່າ ລາຍການເຄື່ອນໄຫວນັ້ນ :

(ກ) ຕາມມູນຄ່າຍຸຕິທຳຂອງສິນຄ້າ ຫຼື ການບໍລິການທີ່ໄດ້ຮັບ ທີ່ໄດ້ປັບປຸງ ດ້ວຍຈຳນວນເງິນສົດ ຫຼື ສິ່ງທຽບເທົ່າເງິນ ສົດ ທີ່ໄດ້ໂອນ; ຫຼື

(ຂ) ຖ້າວ່າຈຳນວນເງິນທີ່ໄດ້ຮັບ ໃນຂໍ້ (ກ) ບໍ່ສາມາດຕີມູນຄ່າຢ່າງໜ້າເຊື່ອຖືໄດ້, ຕ້ອງເອົາຕາມມູນຄ່າຍຸຕິທຳຂອງສິນ ຄ້າ ຫຼື ການບໍລິການທີ່ໄດ້ນຳໄປແລກປ່ຽນ ຊຶ່ງໄດ້ປັບປຸງ ດ້ວຍຈຳນວນເງິນສົດ ຫຼື ສິ່ງທຽບເທົ່າເງິນສົດທີ່ໄດ້ໂອນ; ຫຼື

(ຄ) ຖ້າວ່າ ມູນຄ່າຍຸຕິທຳຂອງຊັບສິນທີ່ໄດ້ຮັບ ຫຼືຊັບສິນທີ່ນຳໄປແລກປ່ຽນ ບໍ່ສາມາດຕີມູນຄ່າຢ່າງໜ້າເຊື່ອຖືໄດ້, ຕ້ອງ ເອົາ**ຕາມມູນຄ່າໃນບັນຊີ**ຂອງຊັບສິນທີ່ນຳໄປແລກປ່ຽນ ທີ່ໄດ້ປັບປຸງ ດ້ວຍຈຳນວນເງິນສົດ ຫຼື ສິ່ງທຽບເທົ່າເງິນສົດ ຂອງທຸກລາຍການທີ່ໄດ້ໂອນ.

## ການຈຳແນກລາຍການເຄື່ອນໄຫວລາຍຮັບ

23.8 ວິສາຫະກິດ ໂດຍທົ່ວໄປ ປະຕິບັດເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີ ລາຍຮັບໃນໝວດດັ່ງກ່າວນີ້ ໂດຍແຍກ ແຕ່ລະລາຍການເຄື່ອນໄຫວ. ເຖິງຢ່າງໃດກໍດີ, ວິສາຫະກິດປະຕິບັດເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີ ສຳ ລັບອົງປະກອບທີ່ຈຳແນກໄດ້ ຂອງລາຍການເຄື່ອນໄຫວອັນດຽວ ໂດຍແຍກຕ່າງຫາກລາຍການດັ່ງກ່າວ ຖ້າຫາກຈຳເປັນ ເພື່ອສ່ອງແສງເຖິງເນື້ອແທ້ຂອງລາຍການເຄື່ອນໄຫວນັ້ນ. ຕົວຢ່າງ, ວິສາຫະກິດປະຕິບັດເງື່ອນໄຂມາດຕະຖານການຮັບຮູ້ ລາຍການບັນຊີ ສຳລັບອົງປະກອບທີ່ຈຳແນກໄດ້ ຂອງລາຍການເຄື່ອນໄຫວອັນດຽວ ໂດຍແຍກຕ່າງຫາກລາຍການ ດັ່ງກ່າວ ເມື່ອລາຄາຂາຍຂອງຜະລິດຕະພັນໃດໜຶ່ງ ລວມມີຈຳນວນເງິນທີ່ຈຳແນກໄດ້ສຳລັບການບໍລິການຕາມຫຼັງ. ກົງກັນຂ້າມ, ວິສາຫະກິດປະຕິບັດເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີ ສຳລັບສອງ ຫຼື ຫຼາຍລາຍການ ເຄື່ອນ ໄຫວລວມກັນ ເມື່ອລາຍການເຄື່ອນໄຫວດັ່ງກ່າວ ກ່ຽວຂ້ອງກັນຈົນວ່າບໍ່ສາມາດຈະເຂົ້າໃຈສະພາວະຄວາມເປັນຈິງທາງ ດ້ານການຄ້າ ຖ້າປາສະຈາກຂໍ້ອ້າງອີງເຖິງບັນດາລາຍການເຄື່ອນໄຫວດັ່ງກ່າວ. ຕົວຢ່າງ ວິສາຫະກິດປະຕິບັດເງື່ອນໄຂ ມາດຕະຖານການຮັບຮູ້ລາຍການບັນຊີ ສຳລັບສອງຫຼືຫຼາຍລາຍການເຄື່ອນໄຫວ ພ້ອມໆກັນເວລາຂາຍສິນຄ້າແລະ ໃນ ເວລາດຽວກັນນັ້ນ, ເຊັນສັນຍາໜຶ່ງຕ່າງຫາກ ທີ່ແນໃສ່ຊື້ສິນຄ້າດັ່ງກ່າວຄືນໃນມື້ໃດໜຶ່ງຕາມຫຼັງ ຊຶ່ງເປັນການລົບລ້າງເນື້ອ ໃນສຳຄັນຂອງລາຍການເຄື່ອນໄຫວດັ່ງກ່າວ.

23.9 ບາງຄັ້ງ, ໂດຍເປັນພາກສ່ວນໜຶ່ງຂອງລາຍການເຄື່ອນໄຫວດ້ານການຂາຍ, ວິສາຫະກິດໃຫ້ລາງວັນແກ່ລູກຄ້າເປັນຄະ ແນນລາງວັນສະສົມ ທີ່ລູກຄ້າອາດຈະແລກປ່ຽນໃນອະນາຄົດ ຂ້າງໜ້າກັບສິນຄ້າ ຫຼື ການບໍລິການ ໂດຍບໍ່ເສຍຄ່າ ຫຼື ໃນ ລາຄາຫຼຸດຜ່ອນ. ໃນກໍລະນີດັ່ງກ່າວ, ອີງຕາມວັກ 23.8, ວິສາຫະກິດຕ້ອງລົງບັນຊີຄະແນນລາງວັນສະສົມ ເປັນອົງປະກອບ ໜຶ່ງທີ່ຈຳແນກແຍກຕ່າງຫາກ ກັບລາຍການເຄື່ອນໄຫວດ້ານການຂາຍໃນເບື້ອງຕົ້ນ. ວິສາຫະກິດຕ້ອງແບ່ງສ່ວນມູນຄ່າຍຸຕິ ທຳຂອງສິ່ງຕອບແທນ ທີ່ໄດ້ຮັບ ຫຼື ຕ້ອງຮັບ ຈາກການຂາຍເບື້ອງຕົ້ນ ແລກກັບຄະແນນສະສົມ ແລະ ອົງປະກອບອື່ນໆ ຂອງການຂາຍ. ສິ່ງຕອບແທນລາຍການດັ່ງກ່າວ ບ້ວງຄະແນນລາງວັນສະສົມ ຕ້ອງຖືກຕີຕາມມູນຄ່າຍຸຕິທຳ, ເຊັ່ນ ຈຳນວນເງິນຊຶ່ງຈະສາມາດຂາຍຄະແນນລາງວັນສະສົມ ແບບແຍກຕ່າງຫາກໄດ້.

## ການຂາຍສິນຄ້າ

23.10 ວິສາຫະກິດຈະຕ້ອງຮັບຮູ້ລາຍການບັນຊີລາຍຮັບ ຈາກການຂາຍສິນຄ້າ ເວລາບັນລຸເງື່ອນໄຂທັງໝົດຂ້າງລຸ່ມນີ້ :

(ກ) ວິສາຫະກິດໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນສຳຄັນທີ່ຕິດພັນກັບການເປັນເຈົ້າກຳມະສິດສິນຄ້າ ໄປໃຫ້ຜູ້ຊື້.

(ຂ) ວິສາຫະກິດບໍ່ມີສ່ວນຮ່ວມໃນການສືບຕໍ່ຄຸ້ມຄອງໃນລະດັບທີ່ຕາມປົກກະຕິ ມັກຈະຕິດພັນກັບກຳມະສິດ ຫຼືບໍ່ມີການຄວບຄຸມຕົວຈິງຕໍ່ສິນຄ້າທີ່ໄດ້ຂາຍ.

(ຄ) ຈຳນວນເງິນລາຍຮັບສາມາດຕີມູນຄ່າຢ່າງໜ້າເຊື່ອຖືໄດ້.

(ງ) **ມີຄວາມອາດເປັນໄປໄດ້** ທີ່ວ່າວິສາຫະກິດຈະໄດ້ຮັບຜົນປະໂຫຍດດ້ານເສດຖະກິດ ທີ່ຕິດພັນກັບລາຍການເຄື່ອນໄຫວ.

(ຈ) ຕົ້ນທຶນທີ່ເກີດຂຶ້ນ ຫຼື ທີ່ຈະຕ້ອງເກີດຂຶ້ນ ກ່ຽວກັບລາຍການເຄື່ອນໄຫວນັ້ນ ສາມາດຖືກຕີມູນຄ່າ ຢ່າງໜ້າເຊື່ອຖືໄດ້.

23.11 ການປະເມີນຜົນທີ່ວ່າເວລາໃດວິສາຫະກິດໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນ ທີ່ສຳຄັນທີ່ຕິດພັນກັບການເປັນເຈົ້າກຳມະສິດໄປໃຫ້ຜູ້ຊື້, ຕ້ອງໄດ້ສຶກສາສະພາບການຂອງລາຍການເຄື່ອນໄຫວນັ້ນ. ໃນກໍລະນີສ່ວນຫຼວງຫຼາຍ, ການໂອນຄວາມສ່ຽງ ແລະ ຜົນຕອບແທນຂອງການເປັນເຈົ້າກຳມະສິດຈະກົງກັບການໂອນກຳມະສິດ ຫຼື ໂອນສິດການຄອບຄອງໃຫ້ຜູ້ຊື້. ນີ້ ສ່ວນຫຼາຍແມ່ນກໍລະນີການຂາຍຍ່ອຍ. ໃນກໍລະນີອື່ນໆ, ການໂອນຄວາມສ່ຽງ ແລະຜົນປະໂຫຍດທີ່ສຳຄັນທີ່ຕິດພັນກັບການເປັນເຈົ້າຂອງກຳມະສິດ ໄດ້ເກີດຂຶ້ນໃນເວລາທີ່ແຕກຕ່າງກັນກັບການໂອນກຳມະສິດ ຫຼື ໂອນການຄອບຄອງ.

23.12 ວິສາຫະກິດບໍ່ຮັບຮູ້ລາຍການບັນຊີລາຍຮັບ ຖ້າຫາກຍັງຮັກສາຄວາມສ່ຽງທີ່ສຳຄັນທີ່ຕິດພັນກັບການເປັນເຈົ້າຂອງກຳມະສິດ. ຕົວຢ່າງ ສະຖານະການທີ່ວ່າວິສາຫະກິດ ອາດຮັກສາຄວາມສ່ຽງ ແລະ ຜົນຕອບແທນທີ່ສຳຄັນທີ່ຕິດພັນກັບການເປັນເຈົ້າຂອງກຳມະສິດ ຄືດັ່ງລຸ່ມນີ້:

(ກ) ຖ້າວ່າວິສາຫະກິດຍັງມີພັນທະຕໍ່ຜົນການດຳເນີນງານທີ່ບໍ່ໜ້າເພິ່ງພໍໃຈຂອງຜູ້ຊື້, ທີ່ວິສາຫະກິດຕ້ອງຮັບຜິດຊອບນອກເໜືອຈາກການຮັບປະກັນສິນຄ້າປົກກະຕິ.

(ຂ) ຖ້າວ່າການຮັບເງິນບ້ວງລາຍຮັບຈາກລາຍການຂາຍສະເພາະ ຂຶ້ນກັບການທີ່ຜູ້ຊື້ໄດ້ຂາຍສິນຄ້ານັ້ນແລ້ວ.

(ຄ) ຖ້າວ່າສິນຄ້າທີ່ໄດ້ຖືກຈັດສົ່ງມີເງື່ອນໄຂໃນການຕິດຕັ້ງ ແລະ ການຕິດຕັ້ງນັ້ນເປັນພາກສ່ວນໜຶ່ງທີ່ສຳຄັນຂອງສັນຍາທີ່ຍັງບໍ່ທັນໄດ້ປະຕິບັດ.

(ງ) ຖ້າວ່າຜູ້ຊື້ມີສິດລົບລ້າງການຊື້ ເນື່ອງຈາກສາຍເຫດທີ່ໄດ້ກຳນົດໄວ້ໃນສັນຍາຂາຍ ຫຼື ຜູ້ມີອຳນາດຕັດສິນໃຈບອກໃຫ້ຍົກເລີກການຊື້ ບໍ່ວ່າດ້ວຍສາເຫດໃດກໍຕາມ ແລະ ວິສາຫະກິດມີຄວາມບໍ່ແນ່ໃຈ ກ່ຽວກັບຄວາມອາດເປັນໄປໄດ້ທີ່ຜູ້ຊື້ຈະສົ່ງຄືນສິນຄ້າ.

23.13 ຖ້າວ່າວິສາຫະກິດມີຄວາມສ່ຽງໜ້ອຍທີ່ຕິດພັນກັບການເປັນເຈົ້າຂອງກຳມະສິດ, ຕ້ອງຖືລາຍການເຄື່ອນໄຫວນັ້ນ ເປັນການຂາຍ ແລະ ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີລາຍຮັບດັ່ງກ່າວນັ້ນ. ຕົວຢ່າງ ຜູ້ຂາຍຮັບຮູ້ລາຍການບັນຊີລາຍຮັບ ຖ້າຫາກວ່າຕົນຍັງຮັກສາຖານະການເປັນເຈົ້າຂອງກຳມະສິດ ຂອງສິນຄ້າ ພຽງແຕ່ເພື່ອປະໂຫຍດໃນການຮຽກເກັບເງິນທີ່ຕ້ອງຮັບ ເມື່ອຄົບກຳນົດ. ເຊັ່ນດຽວກັນນັ້ນ, ວິສາຫະກິດຮັບຮູ້ລາຍການບັນຊີລາຍຮັບ ຖ້າວິສາຫະກິດຕົກລົງສົ່ງຄືນເງິນໃຫ້ລູກຄ້າ ຖ້າຫາກລູກຄ້າເຫັນວ່າຜະລິດຕະພັນມີຕຳໜິ ຫຼື ຖ້າຫາກລູກຄ້າບໍ່ເພິ່ງພໍໃຈເນື່ອງຈາກເຫດຜົນອື່ນໆ ແລະ ວິສາຫະກິດສາມາດຄາດຄະເນການສົ່ງຄືນສິນຄ້າດັ່ງກ່າວ ຢ່າງໜ້າເຊື່ອຖືໄດ້. ໃນກໍລະນີດັ່ງກ່າວ, ວິສາຫະກິດຮັບຮູ້ລາຍການບັນຊີເງິນແຮ ເພື່ອການສົ່ງຄືນສິນຄ້າ ໂດຍອີງຕາມ ໝວດ 21 *ເງິນແຮ ແລະ ສິ່ງທີ່ອາດເກີດຂຶ້ນ.*

## ການສະໜອງການບໍລິການ

23.14 ວິສາຫະກິດໃດໜຶ່ງ ຮັບຮູ້ລາຍການບັນຊີ ລາຍຮັບ ຈາກການສະໜອງການບໍລິການ ເມື່ອລາຍການເຄື່ອນໄຫວນັ້ນສຳເລັດຜົນ (ບາງຄັ້ງ ອີງໃສ່ວິທີການສັນຍາບັນລຸຜົນ - ເບິ່ງ ວັກ 23.21 ວິທີການສັນຍາສຳເລັດຜົນ). ບໍ່ຕ້ອງປະຕິບັດວັກ 23.15-23.16, 23.21-23.27.

ວິສາຫະກິດອາດເລືອກ ວິທີການຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ ຊຶ່ງເປັນວິທີການທີ່ດີທີ່ສຸດ. ເມື່ອເລືອກວິທີການນີ້, ວິສາຫະກິດນັ້ນ ຕ້ອງເລືອກວິທີດັ່ງກ່າວ ສຳລັບທຸກສັນຍາ ແລະ ການເລືອກດັ່ງກ່າວບໍ່ສາມາດເພີກຖອນໄດ້. ຖ້າວ່າຜົນໄດ້ຮັບຂອງລາຍການເຄື່ອນໄຫວທີ່ກ່ຽວຂ້ອງກັບການສະໜອງການບໍລິການ ຫາກສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີລາຍຮັບ ອາດຮັບຮູ້ລາຍການບັນຊີລາຍຮັບ ທີ່ຕິດພັນກັບລາຍການເຄື່ອນໄຫວດັ່ງກ່າວ ໂດຍອີງຕາມລະດັບຄວາມຄືບໜ້າ ຂອງລາຍການເຄື່ອນໄຫວນັ້ນ ໃນເວລາສິ້ນສຸດ**ຮອບເວລາລາຍ**

**ງານ** (ບາງຄັ້ງຄາວເອີ້ນວ່າວິທີຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ). ຜົນໄດ້ຮັບຂອງລາຍການເຄື່ອນໄຫວໃດໜຶ່ງ ສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້ ຖ້າວ່າໄດ້ບັນລຸຕາມເງື່ອນໄຂທັງໝົດລຸ່ມນີ້:

(ກ) ຈຳນວນເງິນລາຍຮັບ ສາມາດຕີມູນຄ່າຢ່າງໜ້າເຊື່ອຖືໄດ້.

(ຂ) ອາດເປັນໄປໄດ້ ທີ່ວ່າວິສາຫະກິດຈະໄດ້ຮັບຜົນປະໂຫຍດດ້ານເສດຖະກິດທີ່ຕິດພັນກັບລາຍການເຄື່ອນໄຫວນັ້ນ.

(ຄ) ລະດັບຄວາມຄືບໜ້າຂອງລາຍການເຄື່ອນໄຫວເວລາສິ້ນສຸດຮອບເວລາລາຍງານ ສາມາດຕີມູນຄ່າຢ່າງໜ້າເຊື່ອຖືໄດ້.

(ງ) ຕົ້ນທຶນທີ່ເກີດຂຶ້ນໃນການດຳເນີນລາຍການເຄື່ອນໄຫວ ແລະ ຄ່າໃຊ້ຈ່າຍເພື່ອສຳເລັດລາຍການເຄື່ອນໄຫວນັ້ນ ສາມາດຕີມູນຄ່າຢ່າງໜ້າເຊື່ອຖືໄດ້.

ວິທີຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ, ທີ່ພາໃຫ້ມີຂໍ້ມູນຂ່າວສານທີ່ໜ້າເຊື່ອຖື, ເປັນວິທີທີ່ດີກວ່າ. ວິສາຫະກິດຕ້ອງລົງບັນຊີ ສ່ວນປ່ຽນແປງ ເປັນອັດຕາສ່ວນຮ້ອຍຂອງຄວາມສຳເລັດ ເປັນສ່ວນປ່ຽນແປງ ໃນນະໂຍບາຍການບັນຊີ ໃຫ້ສອດຄ່ອງກັບວັກ 10.8-10.14.

ວັກ 23.21 ຫາ 23.27 ໃຫ້ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດວິທີຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ.

23.15 ຖ້າວ່າ ການສະໜອງການບໍລິການ ຕະຫຼອດໄລຍະເວລາໃດໜຶ່ງ ປະກອບມີຫຼາຍການເຄື່ອນໄຫວ ທີ່ບໍ່ສາມາດກຳນົດຈຳນວນໄດ້, ວິສາຫະກິດ ຕ້ອງຮັບຮູ້ລາຍການບັນຊີລາຍຮັບອີງຕາມວິທີການແບບສະເໝີຕົວ ບົນພື້ນຖານຮອບເວລາທີ່ໄດ້ກຳນົດໄວ້ດັ່ງກ່າວ ເວັ້ນເສຍແຕ່ມີຫຼັກຖານທີ່ສະແດງໃຫ້ເຫັນວ່າ ວິທີການອື່ນຈະຊ່ວຍໃຫ້ສ່ອງແສງລະດັບຄວາມຄືບໜ້າໄດ້ດີກ່ວາ. ຖ້າວ່າການເຄື່ອນໄຫວສະເພາະໃດໜຶ່ງມີຄວາມສຳຄັນກ່ວາການເຄື່ອນໄຫວອື່ນ, ວິສາຫະກິດຈະເຍື້ອນການຮັບຮູ້ລາຍການບັນຊີລາຍຮັບ ຈົນກ່ວາການເຄື່ອນໄຫວທີ່ສຳຄັນດັ່ງກ່າວຈະໄດ້ຮັບການຈັດຕັ້ງປະຕິບັດ.

23.16 ຖ້າວ່າຜົນໄດ້ຮັບຂອງລາຍການເຄື່ອນໄຫວທີ່ກ່ຽວຂ້ອງກັບການສະໜອງການບໍລິການບໍ່ສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີລາຍຮັບ ພຽງແຕ່ໃນຂອບເຂດຂອງລາຍຈ່າຍທີ່ໄດ້ຮັບຮູ້ລາຍການບັນຊີແລ້ວ ຊຶ່ງຄາດວ່າຈະເກັບກູ້ຄືນໄດ້ເທົ່ານັ້ນ.

## ສັນຍາການກໍ່ສ້າງ

23.17 ວິສາຫະກິດໃດໜຶ່ງ ຮັບຮູ້ລາຍການບັນຊີ ລາຍຮັບຂອງສັນຍາກໍ່ສ້າງ ໃນເມື່ອສຳເລັດສັນຍາກໍ່ສ້າງ (ບ້າງຄັ້ງ ອີງໃສ່ ວິທີການສັນຍາບັນລຸຜົນ - ເບິ່ງວັກ 23.21 ວິທີການສັນຍາບັນລຸຜົນ). ບໍ່ຕ້ອງປະຕິບັດວັກ 23.15 – 23.16, 23.21-23.27.

**ວິສາຫະກິດອາດເລືອກ ວິທີການຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ ຊຶ່ງເປັນວິທີການທີ່ດີທີ່ສຸດ**. ເມື່ອເລືອກວິທີການນີ້, ວິສາຫະກິດຕ້ອງເລືອກນຳໃຊ້ສຳລັບທຸກສັນຍາ ແລະ ທາງເລືອກນີ້ ບໍ່ສາມາດເພີກຖອນໄດ້. ເມື່ອພາກຜົນຂອງ**ສັນຍາກໍ່ສ້າງ** ສາມາດຖືກຄາດຄະເນ ຢ່າງໜ້າເຊື່ອຖື, ວິສາຫະກິດນັ້ນ ອາດຮັບຮູ້ລາຍການບັນຊີ ລາຍຮັບຕາມສັນຍາ ແລະ ຕົ້ນທຶນຕາມສັນຍາທີ່ຕິດພັນກັບສັນຍາການກໍ່ສ້າງ ເປັນລາຍຮັບ ແລະ ລາຍຈ່າຍ ຕາມລຳດັບ ໂດຍອີງຕາມລະດັບຄວາມຄືບໜ້າຂອງກິດຈະກຳຕາມສັນຍາ ໃນທ້າຍຮອບເວລາລາຍງານ (ວິທີການທີ່ເອີ້ນວ່າວິທີຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ). ການຄາດຄະເນທີ່ໜ້າເຊື່ອຖື ກ່ຽວກັບຜົນໄດ້ຮັບ ກຳນົດໃຫ້ມີການຄາດຄະເນລະດັບຄວາມຄືບໜ້າຢ່າງໜ້າເຊື່ອຖື, ຕົ້ນທຶນໃນອະນາຄົດ, ແລະ ຄວາມສາມາດຮຽກເກັບເງິນຕາມໃບເກັບເງິນທີ່ໄດ້ອອກ.

ວິທີຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ, ທີ່ພາໃຫ້ມີຂໍ້ມູນຂ່າວສານທີ່ໜ້າເຊື່ອຖື, ເປັນວິທີທີ່ດີກວ່າ. ວິສາຫະກິດຕ້ອງລົງບັນຊີ ສ່ວນປ່ຽນແປງ ເປັນອັດຕາສ່ວນຮ້ອຍຂອງຄວາມສຳເລັດ ເປັນສ່ວນປ່ຽນແປງ ໃນນະໂຍບາຍການບັນຊີ ໃຫ້ສອດຄ່ອງກັບວັກ 10.8-10.14.

ວັກ 23.21 ຫາ 23.27 ໃຫ້ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດວິທີຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ.

23.18 ຂໍ້ກຳນົດຂອງໝວດດັ່ງກ່າວນີ້, ຕາມປົກກະຕິ, ນຳໃຊ້ສຳລັບແຕ່ລະສັນຍາການກໍ່ສ້າງ. ເຖິງຢ່າງໃດກໍດີ, ໃນບາງກໍລະນີ, ຈຳເປັນຕ້ອງໄດ້ນຳໃຊ້ໝວດດັ່ງກ່າວນີ້ ສຳລັບອົງປະກອບທີ່ຈຳແນກໄດ້ ແລະ ແຍກອອກຈາກກັນ ຂອງສັນຍາອັນໜຶ່ງອັນດຽວ ຫຼື ແບບລວມຫຼາຍສັນຍາເຂົ້າກັນ ເພື່ອສ່ອງແສງເຖິງເນື້ອແທ້ຂອງສັນຍາ ຫຼື ຂອງກຸ່ມສັນຍາດັ່ງກ່າວ.

23.19 ຖ້າວ່າສັນຍາໃດໜຶ່ງ ຫາກກວມເອົາ ຊັບສິນຈຳນວນໜຶ່ງ, ການກໍ່ສ້າງແຕ່ລະຊັບສິນຕ້ອງຖືເປັນແຕ່ລະສັນຍາການກໍ່ສ້າງແຍກຈາກກັນ ຖ້າວ່າ :

(ກ) ຊັບສິນແຕ່ລະລາຍ ມີບົດສະເໜີທີ່ແຍກກັນ ;

(ຂ) ຊັບສິນແຕ່ລະລາຍ ມີການເຈລະຈາແຍກຈາກກັນ, ແລະ ຜູ້ຮັບເໝົາ ແລະ ລູກຄ້າ ລ້ວນແຕ່ສາມາດຮັບເອົາ ຫຼື ປະຕິເສດພາກນັ້ນຂອງສັນຍາທີ່ກ່ຽວຂ້ອງກັບແຕ່ລະຊັບສິນ ; ແລະ

(ຄ) ສາມາດຈຳແນກ ຕົ້ນທຶນ ແລະ ລາຍຮັບຂອງແຕ່ລະຊັບສິນໄດ້.

23.20 ກຸ່ມສັນຍາ, ເຖິງວ່າຈະເຊັນກັບລູກຄ້າຜູ້ດຽວ ຫຼື ກັບລູກຄ້າຫຼາຍຄົນກໍຕາມ, ຕ້ອງຖືເປັນສັນຍາການກໍ່ສ້າງອັນໜຶ່ງອັນດຽວ, ຖ້າວ່າ:

(ກ) ມີການເຈລະຈາ ກຸ່ມສັນຍາ ໃນລັກສະນະຂອງສັນຍາຊຸດດຽວກັນ ;

(ຂ) ສັນຍາທຸກສັນຍາມີຄວາມສຳພັນກັນຢ່າງສະໜິດແໜ້ນຈົນວ່າ, ໃນຕົວຈິງ, ເປັນສ່ວນໜຶ່ງຂອງໂຄງການອັນໜຶ່ງອັນດຽວທີ່ມີສ່ວນຜິດດ່ຽງກຳໄລລວມ ; ແລະ

(ຄ) ສັນຍາຖືກປະຕິບັດພ້ອມໆກັນ ຫຼື ຕາມລຳດັບຕໍ່ເນື່ອງກັນ.

## ວິທີການສັນຍາບັນລຸຜົນ

23.21 ກຳໄລຫຼືຂາດທຶນ ຕ້ອງຖືກລົງບັນຊີ ເມື່ອການດຳເນີນງານຂອງສັນຍາສຳເລັດຜົນ. ໃນໄລຍະດຳເນີນງານ, ຄວາມຄືບໜ້າຂອງໜ້າວຽກ ຕ້ອງຖືກປະເມີນຄ່າ ໃນທ້າຍຮອບເວລາລາຍງານ.

## ວິທີຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ

23.21/1ວິທີການດັ່ງກ່າວ ອາດຖືກນຳໃຊ້ເພື່ອຮັບຮູ້ລາຍການບັນຊີລາຍຮັບ ຈາກການສະໜອງການບໍລິການ (ເບິ່ງວັກ 23.14—23.16) ແລະ ຈາກສັນຍາການກໍ່ສ້າງ (ເບິ່ງວັກ 23.17—23.20). ວິສາຫະກິດຕ້ອງກວດກາຄືນ ແລະ, ຖ້າຈຳເປັນ, ກວດແກ້ຕົວເລກຄາດຄະເນປະຕິບັດ ກ່ຽວກັບລາຍຮັບ ແລະ ຕົ້ນທຶນຕາມລະດັບຜົນສຳເລັດຂອງການສະໜອງການບໍລິການ ຫຼື ຄວາມຄືບໜ້າຂອງສັນຍາການກໍ່ສ້າງ.

23.22 ວິສາຫະກິດຕ້ອງເບິ່ງລະດັບຄວາມຄືບໜ້າຂອງລາຍການເຄື່ອນໄຫວ ຫຼື ຂອງສັນຍາ ໂດຍນຳໃຊ້ວິທີການທີ່ປະເມີນຜົນວຽກງານ ທີ່ໄດ້ປະຕິບັດຢ່າງໜ້າເຊື່ອຖືຫຼາຍກ່ວາໝູ່. ວິທີການທີ່ເປັນໄປໄດ້ ປະກອບດ້ວຍ:

(ກ) ອັດຕາສ່ວນທີ່ມີລະຫ່ວາງຕົ້ນທຶນທີ່ເກີດຂຶ້ນ ສຳລັບວຽກງານທີ່ໄດ້ປະຕິບັດຈົນເຖິງມື້ທີ່ພິຈາລະນາ ລວມຍອດຄ່າໃຊ້ຈ່າຍຄາດຄະເນ. ຕົ້ນທຶນທີ່ເກີດຂຶ້ນ ສຳລັບວຽກງານທີ່ໄດ້ປະຕິບັດຈົນເຖິງປັດຈຸບັນ ຈະບໍ່ປະກອບດ້ວຍ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບກິດຈະການໃນອະນາຄົດ, ເຊັ່ນທີ່ກ່ຽວຂ້ອງກັບວັດສະດຸ ຫຼື ລາຍຈ່າຍໆລ່ວງໜ້າ.

(ຂ) ການສຳຫຼວດວຽກງານທີ່ໄດ້ປະຕິບັດ.

(ຄ) ການກວດກາຕົວຈິງອັດຕາສ່ວນລາຍການເຄື່ອນໄຫວໃຫ້ບໍລິການ ຫຼື ວຽກງານຂອງສັນຍາ ທີ່ປະຕິບັດສຳເລັດ ກັບວຽກທັງໝົດຕາມສັນຍາ.

ສ່ວນຫຼາຍ, ຄວາມຄືບໜ້າຂອງການຊຳລະເງິນ ແລະ ເງິນລ່ວງໜ້າທີ່ໄດ້ຮັບຈາກລູກຄ້າ ຈະບໍ່ສ່ອງແສງເຖິງວຽກງານທີ່ໄດ້ປະຕິບັດ.

23.23 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບກິດຈະກຳໃນອະນາຄົດຕາມລາຍການເຄື່ອນໄຫວ ຫຼື ສັນຍາ ເປັນຊັບສິນ, ເຊັ່ນວັດສະດຸ ຫຼື ລາຍຈ່າຍໆລ່ວງໜ້າ, ຖ້າຫາກອາດເປັນໄປໄດ້ ວ່າຈະເກັບຄືນຄ່າໃຊ້ຈ່າຍນັ້ນໄດ້.

23.24 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີຄ່າໃຊ້ຈ່າຍຊຶ່ງການເກັບກູ້ຄືນອາດເປັນໄປບໍ່ໄດ້ ເປັນລາຍຈ່າຍໃນທັນໃດໂລດ.

23.25 ຖ້າວ່າຜົນໄດ້ຮັບຂອງສັນຍາການກໍ່ສ້າງ ບໍ່ສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້ :

(ກ) ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີລາຍຮັບ ພຽງແຕ່ໃນຂອບເຂດຂອງຕົ້ນທຶນຕາມສັນຍາທີ່ໄດ້ເກີດຂຶ້ນ ແລະ ຊຶ່ງ

ອາດເປັນໄປໄດ້ ທີ່ຈະເກັບກູ້ຄືນໄດ້, ແລະ

(ຂ) ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີຕົ້ນທຶນຕາມສັນຍາ ເປັນລາຍຈ່າຍໃນປີຊຶ່ງຄ່າໃຊ້ຈ່າຍຕົ້ນທຶນນັ້ນໄດ້ເກີດຂຶ້ນ.

23.26 ຖ້າຫາກອາດເປັນໄປໄດ້ ທີ່ວ່າລວມຍອດຕົ້ນທຶນຕາມສັນຍາຈະສູງກ່ວາລວມຍອດລາຍຮັບຈາກສັນຍາການກໍ່ສ້າງ, ຕ້ອງຮັບຮູ້ລາຍການບັນຊີການຂາດທຶນຄາດຄະເນເປັນລາຍຈ່າຍໃນທັນໃດໂລດ, ໂດຍມີເງື່ອນແຮທີ່ພົວພັນກັບສັນຍາທີ່ສ້າງພາລະ (ເບິ່ງໜວດ 21).

### ການປະຕິບັດຕໍ່ສອງວິທີການ

23.27 ຖ້າວ່າຄວາມສາມາດເກັບກູ້ຄືນໄດ້ຂອງຈຳນວນເງິນທີ່ໄດ້ຖືກຮັບຮູ້ລາຍການບັນຊີ ເປັນລາຍຮັບຈາກສັນຍາ ຫາກອາດເປັນໄປບໍ່ໄດ້ອີກແລ້ວ, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີຈຳນວນເງິນທີ່ເກັບກູ້ຄືນບໍ່ໄດ້ ເປັນລາຍຈ່າຍ ແທນການປັບປຸງຈຳນວນເງິນລາຍຮັບຈາກສັນຍາ.

## ດອກເບ້ຍ, ຄ່າສິດທິ ແລະ ເງິນປັນຜົນ

23.28 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ລາຍຮັບ ທີ່ເກີດຈາກການນຳໃຊ້ຊັບສິນຂອງວິສາຫະກິດ ໂດຍພາກສ່ວນອື່ນທີ່ໃຫ້ຜົນຕອບແທນເປັນດອກເບ້ຍ, ຄ່າສິດທິ ແລະ ເງິນປັນຜົນ ບົນພື້ນຖານທີ່ໄດ້ກຳນົດໄວ້ໃນວັກ 23.29, ຖ້າວ່າ :

(ກ) ອາດເປັນໄປໄດ້ ທີ່ວິສາຫະກິດຈະໄດ້ຮັບຜົນປະ�โยດດ້ານເສດຖະກິດທີ່ຕິດພັນກັບລາຍການເຄື່ອນໄຫວນັ້ນ, ແລະ

(ຂ) ຈຳນວນເງິນລາຍຮັບ ສາມາດຕີມູນຄ່າຢ່າງໜ້າເຊື່ອຖືໄດ້.

23.29 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີລາຍຮັບ ບົນພື້ນຖານລາຍການດັ່ງລຸ່ມນີ້ :

(ກ) ດອກເບ້ຍຕ້ອງຖືກຮັບຮູ້ລາຍການບັນຊີ ຕາມຈຳນວນເງິນທີ່ຕ້ອງຮັບ.

(ຂ) ຄ່າສິດທິຕ້ອງຖືກຮັບຮູ້ລາຍການບັນຊີ ບົນພື້ນຖານເງິນຄ້າງຮັບ-ຄ້າງຈ່າຍ ຕາມເນື້ອແທ້ຂອງສັນຍາທີ່ກ່ຽວຂ້ອງ.

(ຄ) ເງິນປັນຜົນຕ້ອງຖືກຮັບຮູ້ລາຍການບັນຊີ ເມື່ອຜູ້ຖືຮຸ້ນມີສິດໄດ້ຮັບເງິນປັນຜົນ.

## ການເປີດເຜີຍຂໍ້ມູນຂ່າວສານ

### ການເປີດຂໍ້ມູນຂ່າວສານທົ່ວໄປ ກ່ຽວກັບລາຍຮັບ

23.30 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບ :

(ກ) **ນະ�โยบายการบันชี** ທີ່ໄດ້ຮັບຮອງເອົາເພື່ອການຮັບຮູ້ລາຍການບັນຊີລາຍຮັບ, ລວມທັງວິທີການທີ່ໄດ້ຮັບຮອງເອົາເພື່ອກຳນົດລະດັບຄວາມຄືບໜ້າຂອງລາຍການເຄື່ອນໄຫວ ທີ່ກ່ຽວຂ້ອງກັບການສະໜອງການບໍລິການ.

(ຂ) ຈຳນວນເງິນຂອງແຕ່ລະປະເພດລາຍຮັບທີ່ໄດ້ຮັບຮູ້ລາຍການບັນຊີ ໃນປີ, ໂດຍແຍກສະແດງໃຫ້ເຫັນ, ຢ່າງຕ່ຳສຸດ, ລາຍຮັບທີ່ເກີດຈາກ :

(i) ການຂາຍສິນຄ້າ.

(ii) ການສະໜອງການບໍລິການ.

(iii) ດອກເບ້ຍ.

(iv) ຄ່າສິດທິ.

(v) ເງິນປັນຜົນ.

(vi) ຄ່ານາຍໜ້າ.

(vii) ເງິນຊ່ວຍໜູນຈາກລັດຖະບານ.

(viii) ປະເພດລາຍຮັບອື່ນໆ ທີ່ສຳຄັນ.

## ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບລາຍຮັບຈາກສັນຍາການກໍ່ສ້າງ

23.31 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ :

(ກ) ຈຳນວນເງິນລາຍຮັບຈາກສັນຍາ ທີ່ໄດ້ຮັບຮູ້ລາຍການບັນຊີເປັນລາຍຮັບໃນປີ .

(ຂ) ວິທີການທີ່ໄດ້ນຳໃຊ້ເພື່ອກຳນົດລາຍຮັບຈາກສັນຍາທີ່ໄດ້ຮັບຮູ້ລາຍການບັນຊີໃນປີ .

(ຄ) ວິທີການທີ່ໄດ້ນຳໃຊ້ເພື່ອກຳນົດລະດັບຄວາມຄືບໜ້າໃນໄລຍະການປະຕິບັດສັນຍາ.

23.32 ວິສາຫະກິດຕ້ອງສະແດງ :

(ກ) ຈຳນວນເງິນລວມທີ່ຕ້ອງຮັບຈາກລູກຄ້າ ສຳລັບວຽກງານໃນສັນຍາ, ທີ່ເປັນຊັບສິນຂອງວິສາຫະກິດ.

(ຂ) ຈຳນວນເງິນລວມທີ່ຄ້າງຈ່າຍໃຫ້ລູກຄ້າ ສຳລັບວຽກງານໃນສັນຍາ, ທີ່ເປັນໜີ້ສິນຂອງວິສາຫະກິດ.

## ເອກະສານຊ້ອນທ້າຍຂອງໝວດ 23

## ຕົວຢ່າງ ການຮັບຮູ້ລາຍການບັນຊີ ລາຍຮັບ ຕາມຫຼັກການຂອງໝວດ 23

*ເອກະສານຊ້ອນທ້າຍນີ້ ເປັນລາຍການຄັດຕິດ ແຕ່ຫາກບໍ່ເປັນພາກສ່ວນໜຶ່ງຂອງໝວດ 23 . ເອກະສານດັ່ງກ່າວນີ້ ໃຫ້ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດຂໍ້ກຳນົດຂອງໝວດ 23 ເພື່ອຮັບຮູ້ລາຍການບັນຊີລາຍຮັບ.*

23ອ.1 ຕົວຢ່າງດັ່ງຕໍ່ໄປ ເນັ້ນລັກສະນະສະເພາະຂອງລາຍການເຄື່ອນໄຫວ ແລະ ບໍ່ປະກອບເປັນການວິພາກທີ່ລົງເລິກລະອຽດ ກ່ຽວກັບ ທຸກປັດໄຈ ທີ່ກ່ຽວຂ້ອງ ທີ່ອາດຈະມີຜົນກະທົບຕໍ່ການຮັບຮູ້ລາຍການບັນຊີລາຍຮັບ. ໂດຍທົ່ວໄປ, ຕົວຢ່າງເຫຼົ່ານີ້ ສົມມຸດຖານວ່າຈຳນວນເງິນລາຍຮັບ ສາມາດຕີມູນຄ່າຢ່າງໜ້າເຊື່ອຖືໄດ້, ມີຄວາມອາດເປັນໄປໄດ້ ທີ່ວິສາຫະກິດຈະໄດ້ຮັບ ຜົນປະໂຫຍດດ້ານເສດຖະກິດ ແລະ ຕົ້ນທຶນທີ່ເກີດຂຶ້ນ ຫຼື ທີ່ຈະຕ້ອງເກີດຂຶ້ນ ສາມາດຕີມູນຄ່າຢ່າງໜ້າເຊື່ອຖືໄດ້.

## ການຂາຍສິນຄ້າ

**ຕົວຢ່າງ ທີ 1 ການຂາຍແບບ "ການອອກໃບເກັບເງິນ ແຕ່ຍັງຮັກສາສິນຄ້າໄວ້" ຊຶ່ງການສົ່ງມອບຖືກເຍື້ອນໄປ ຕາມການຮ້ອງຂໍຂອງຜູ້ຊື້, ແຕ່ຜູ້ຊື້ກໍຮັບການເປັນເຈົ້າຂອງກຳມະສິດ ແລະ ຍອມຮັບການອອກໃບເກັບເງິນ.**

23ອ.3 ຜູ້ຂາຍຮັບຮູ້ລາຍການບັນຊີລາຍຮັບ ໃນເວລາຜູ້ຊື້ຮັບການເປັນເຈົ້າກຳມະສິດ, ບົນເງື່ອນໄຂທີ່ວ່າ :

(ກ) ອາດເປັນໄປໄດ້ ທີ່ວ່າຈະມີການສົ່ງມອບສິນຄ້າ ;

(ຂ) ສິນຄ້າໃນກຳມື ທີ່ຈຳແນກໄດ້ ແລະ ກຽມພ້ອມຈັດສົ່ງໃຫ້ຜູ້ຊື້ໃນເວລາຂາຍ ໄດ້ຖືກຮັບຮູ້ລາຍການບັນຊີ ;

(ຄ) ຜູ້ຊື້ຮັບຮູ້ຢ່າງຈົ່ງແຈ້ງຂໍ້ແນະນຳ ກ່ຽວກັບການເຍື້ອນການສົ່ງມອບສິນຄ້າ; ແລະ

(ງ) ສາມາດປະຕິບັດເງື່ອນໄຂປົກກະຕິດ້ານການຊຳລະເງິນໄດ້.

ບໍ່ໃຫ້ຮັບຮູ້ລາຍການບັນຊີລາຍຮັບໃດໆ ຖ້າຫາກມີພຽງແຕ່ເຈດຈຳນົງຈະຊື້ ຫຼື ຜະລິດສິນຄ້າດັ່ງກ່າວໃຫ້ທັນການເພື່ອສົ່ງ ມອບເທົ່ານັ້ນ.

**ຕົວຢ່າງ ທີ 2 ສິນຄ້າທີ່ໄດ້ຈັດສົ່ງຢ່າງມີເງື່ອນໄຂ: ການຕິດຕັ້ງ ແລະ ກວດກາ**

23ອ.4 ຕາມປົກກະຕິ, ຜູ້ຂາຍຮັບຮູ້ລາຍການບັນຊີລາຍຮັບ ຖ້າຫາກຜູ້ຊື້ຮັບເອົາການສົ່ງມອບສິນຄ້າ ແລະ ການຕິດຕັ້ງ ແລະ ກວດກາ ກໍສຳເລັດລົງຮຽບຮ້ອຍ. ເຖິງຢ່າງໃດກໍດີ, ວິສາຫະກິດສາມາດຮັບຮູ້ລາຍການບັນຊີລາຍຮັບໄດ້ທັນທີທີ່ຜູ້ຊື້ຮັບເອົາ ການສົ່ງມອບສິນຄ້ານັ້ນ ເມື່ອ :

(ກ) ຂະບວນການຕິດຕັ້ງງ່າຍດາຍ, ເຊັ່ນການຕິດຕັ້ງໜ່ວຍໂທລະພາບ ທີ່ໄດ້ຜ່ານການກວດກາຢູ່ໂຮງງານ ຊຶ່ງມີພຽງແຕ່ ເອົາອອກຈາກກັບຫຸ້ມຫໍ່ ແລະ ສຽບສາຍໄຟ ແລະ ສາຍອາກາດເທົ່ານັ້ນ, ຫຼື

(ຂ) ການກວດກາ ແນໃສ່ພຽງແຕ່ດຳເນີນເພື່ອຈຸດປະສົງໃນການຢືນຢັນລາຄາສຸດທ້າຍທີ່ກຳນົດໄວ້ຕາມສັນຍາ, ເຊັ່ນໃນ ກໍລະນີການຈັດສົ່ງແຮ່ເຫຼັກ, ນ້ຳຕານ ຫຼື ໝາກຖົ່ວຂຽວ.

**ຕົວຢ່າງ ທີ 3 ສິນຄ້າທີ່ໄດ້ຈັດສົ່ງຢ່າງມີເງື່ອນໄຂ: ຜູ້ຊື້ໄດ້ເຈລະຈາ ເພື່ອສາມາດສົ່ງຄືນສິນຄ້າໄດ້ ພາຍໃນເວລາທີ່ກຳນົດ**

23ອ.5 ຖ້າຫາກມີຄວາມບໍ່ແນ່ໃຈ ກ່ຽວກັບຄວາມເປັນໄປໄດ້ໃນການສົ່ງສິນຄ້າຄືນ, ຜູ້ຂາຍຕ້ອງຮັບຮູ້ລາຍການບັນຊີລາຍຮັບ ເມື່ອ ວ່າຜູ້ຊື້ໄດ້ຍອມຮັບເອົາການຂົນສົ່ງສິນຄ້າໃຫ້ ຫຼືວ່າ ສິນຄ້າໄດ້ຖືກສົ່ງມອບໃຫ້ແລ້ວ ແລະ ໄລຍະທີ່ກຳນົດໄວ້ ເພື່ອປະຕິ ເສດຫາກາກາຍແລ້ວ.

**ຕົວຢ່າງ ທີ 4 ສິນຄ້າທີ່ໄດ້ຈັດສົ່ງຢ່າງມີເງື່ອນໄຂ: ການຂາຍມີການມັດຈຳ, ຊຶ່ງໃນນັ້ນ ຜູ້ຮັບປະໂຫຍດ (ຜູ້ຊື້) ໃຫ້ຄຳສັນຍາ ວ່າຈະຂາຍສິນຄ້າໃນນາມຜູ້ສົ່ງສິນຄ້າ (ຜູ້ຂາຍ)**

23ອ.6 ຜູ້ສົ່ງສິນຄ້າ ຮັບຮູ້ລາຍການບັນຊີລາຍຮັບ ເວລາຜູ້ຮັບສິນຄ້າໄດ້ຂາຍສິນຄ້າໃຫ້ພາກສ່ວນທີສາມ.

**ຕົວຢ່າງ ທີ 5 ສິນຄ້າທີ່ໄດ້ຈັດສົ່ງຢ່າງມີເງື່ອນໄຂ: ການຂາຍ ແບບຊຳລະເປັນເງິນສົດເວລາຮັບສິນຄ້າ**

23ອ.7 ຜູ້ຂາຍ ຮັບຮູ້ລາຍການບັນຊີລາຍຮັບ ເມື່ອໄດ້ມີການສົ່ງມອບສິນຄ້າ ແລະ ຜູ້ຂາຍ ຫຼື ຕົວແທນ ກໍໄດ້ຮັບເງິນສົດ.

**ຕົວຢ່າງ ທີ 6 ການຂາຍໃນກໍລະນີທີ່ຈະສົ່ງມອບສິນຄ້າ ກໍຕໍ່ເມື່ອຜູ້ຊື້ໄດ້ຊຳລະເງິນງວດສຸດທ້າຍ ພາຍຫຼັງໄດ້ຊຳລະເງິນເປັນຫຼາຍງວດ**

23ອ.8 ຜູ້ຂາຍ ຮັບຮູ້ລາຍການບັນຊີລາຍຮັບ ຈາກການຂາຍ ເວລາສົ່ງມອບສິນຄ້າ.

**ຕົວຢ່າງ ທີ 7 ການສັ່ງຊື້ ຊຶ່ງໄດ້ຮັບການຊຳລະເງິນ (ຫຼື ການຊຳລະສ່ວນໜຶ່ງ) ກ່ອນການສົ່ງມອບສິນຄ້າ ທີ່ບໍ່ມີຢູ່ໃນສາງ, ເຊັ່ນ ຖ້າວ່າຍັງບໍ່ທັນໄດ້ຜະລິດ ຫຼື ສິນຄ້າຈະຖືກຈັດສົ່ງໂດຍກົງໄປໃຫ້ຜູ້ຊື້ ໂດຍພາກສ່ວນອື່ນ**

23ອ.9 ຜູ້ຂາຍ ຮັບຮູ້ລາຍການບັນຊີລາຍຮັບ ເວລາໄດ້ຈັດສົ່ງສິນຄ້າໃຫ້ຜູ້ຊື້.

**ຕົວຢ່າງ ທີ 8 ສັນຍາ ກ່ຽວກັບການຂາຍ ແລະ ຊື້ຄືນ (ທີ່ບໍ່ແມ່ນລາຍການເຄື່ອນໄຫວ ແລກປ່ຽນກັນ) ຊຶ່ງຜູ້ຂາຍໃຫ້ຄຳສັນຍາວ່າຊື້ຄືນສິນຄ້ານັ້ນ ໃນມື້ໃດໜຶ່ງພາຍໃນຂ້າງໜ້າ ຫຼື ຖ້າວ່າຜູ້ຂາຍມີສິດທິເລືອກໃນການຮຽກຊື້ຄືນ ຫຼື ຜູ້ຊື້ມີສິດທິເລືອກໃນການໃຫ້ຊື້ຄືນ**

23ອ.10 ສຳລັບສັນຍາຂາຍ ແລະ ຊື້ຄືນຊັບສິນໃດໜຶ່ງ ທີ່ບໍ່ແມ່ນຊັບສິນການເງິນ, ຜູ້ຂາຍຕ້ອງວິເຄາະເງື່ອນໄຂຂອງສັນຍາເພື່ອຈະເບິ່ງວ່າ, ທາງດ້ານເນື້ອແທ້ ໄດ້ມີການໂອນຄວາມສ່ຽງ ແລະ ຜົນຕອບແທນຂອງການເປັນເຈົ້າຂອງກຳມະສິດໄປໃຫ້ຜູ້ຊື້ບໍ. ຖ້າວ່າໄດ້ມີການໂອນນັ້ນ, ຜູ້ຂາຍຈະຮັບຮູ້ລາຍການບັນຊີລາຍຮັບ. ຖ້າວ່າຜູ້ຂາຍຍັງມີຄວາມສ່ຽງ ແລະ ຜົນຕອບແທນຂອງການເປັນເຈົ້າຂອງກຳມະສິດໄວ້, ເຖິງແມ່ນວ່າຈະມີການໂອນກຳມະສິດແລ້ວກໍຕາມ, ລາຍການເຄື່ອນໄຫວນັ້ນ ຈະເປັນສັນຍາດ້ານການປະກອບທຶນ ແລະ ບໍ່ສ້າງລາຍຮັບ. ສຳລັບສັນຍາຂາຍ ແລະ ຊື້ຊັບສິນການເງິນຄືນ, ໃຫ້ປະຕິບັດຕາມຂໍ້ກຳນົດ ກ່ຽວກັບການຕັດລາຍການບັນຊີ ຂອງໝວດ 11.

**ຕົວຢ່າງ ທີ 9 ການຂາຍໃຫ້ພາກສ່ວນກາງ ເຊັ່ນຜູ້ແທນຈຳໜ່າຍ, ຜູ້ຈັດຈຳໜ່າຍ ຫຼື ພາກສ່ວນອື່ນເພື່ອການຂາຍຕໍ່**

23ອ.11 ໂດຍທົ່ວໄປ ຜູ້ຂາຍຮັບຮູ້ລາຍການບັນຊີລາຍຮັບຈາກການຂາຍດັ່ງກ່າວ ຖ້າວ່າໄດ້ມີການໂອນຄວາມສ່ຽງ ແລະ ຜົນຕອບແທນຂອງການເປັນເຈົ້າຂອງກຳມະສິດ. ເຖິງຢ່າງໃດກໍດີ, ຖ້າວ່າໂດຍເນື້ອແທ້ແລ້ວ ຜູ້ຊື້ເຄື່ອນໄຫວໃນນາມຕົວແທນ, ໃຫ້ຖືເອົາການຂາຍນັ້ນ ເປັນການຂາຍທີ່ມີການມັດຈຳ.

**ຕົວຢ່າງ ທີ 10 ການຈອງວາລະສານ ແລະ ລາຍການທີ່ຄ້າຍຄືກັນ**

23ອ12 ຖ້າວ່າລາຍການທີ່ກ່ຽວຂ້ອງມີມູນຄ່າຄ້າຍຄືກັນ ໃນແຕ່ລະປີ, ຜູ້ຂາຍ ຮັບຮູ້ລາຍການບັນຊີລາຍຮັບ ບົນພື້ນຖານການຫັກແບບສະເໝີຕົວ ຕະຫຼອດໄລຍະທີ່ໄດ້ຈັດສົ່ງລາຍການນັ້ນໃຫ້. ຖ້າວ່າມູນຄ່າຂອງລາຍການປ່ຽນແປງແຕ່ລະປີ, ຜູ້ຂາຍຮັບຮູ້ລາຍການບັນຊີລາຍຮັບ ໂດຍສົມສ່ວນກັບລາຄາຂາຍ ຂອງລາຍການທີ່ໄດ້ຈັດສົ່ງ ສົມທຽບໃສ່ລວມຍອດລາຄາຄາດຄະເນຂາຍ ຂອງສິນຄ້າທີ່ຕ້ອງສົ່ງມອບຕະຫຼອດອາຍຸການຈອງຊື້.

**ຕົວຢ່າງ ທີ 11 ການຂາຍຜ່ອນ, ຊຶ່ງຕ້ອງຜ່ອນຊຳລະຕາມເງື່ອນໄຂການຜ່ອນຊຳລະເປັນງວດໆ**

23ອ.13 ຜູ້ຂາຍ ຮັບຮູ້ລາຍການບັນຊີລາຍຮັບ ຊຶ່ງເທົ່າກັບ ລາຄາຂາຍ, ຫັກດອກເບ້ຍອອກ, ໃນມື້ຂາຍ.

**ຕົວຢ່າງ ທີ 12 ສັນຍາກໍ່ສ້າງອະສັງຫາລິມະຊັບ**

23ອ.14 ວິສາຫະກິດທີ່ຮັບເໝົາກໍ່ສ້າງອະສັງຫາລິມະຊັບ, ໂດຍກົງ ຫຼື ຜ່ານການຈ້າງຜູ້ຮັບເໝົາຕໍ່ ແລະ ເຊັນສັນຍາກັບຜູ້ຊື້ກິດຈະການ ໜຶ່ງ ຫຼື ຫຼາຍຄົນ ກ່ອນຈະສຳເລັດການກໍ່ສ້າງ, ຕ້ອງລົງບັນຊີສັນຍານັ້ນ ເປັນການຂາຍການໃຫ້ບໍລິການ ໂດຍຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ, ກໍຕໍ່ເມື່ອ :

(ກ) ຜູ້ຊື້ ສາມາດກຳນົດອົງປະກອບຕົ້ນຕໍດ້ານໂຄງສ້າງການອອກແບບຂອງອະສັງຫາລິມະຊັບກ່ອນເລີ່ມຕົ້ນການກໍ່ສ້າງ ແລະ/ຫຼື ກຳນົດສິ່ງປ່ຽນແປງຕົ້ນຕໍທາງດ້ານໂຄງສ້າງ ພາຍຫຼັງດຳເນີນການກໍ່ສ້າງ (ເຖິງວ່າຈະຕັດສິນໃຈນຳໃຊ້ຄວາມສາມາດດັ່ງກ່າວ ຫຼືບໍ່ ກໍຕາມ), ຫຼື

(ຂ) ຜູ້ຊື້ ໄດ້ຊື້ແລະສະໜອງວັດສະດຸກໍ່ສ້າງ ແລະ ວິສາຫະກິດສະໜອງພຽງແຕ່ການບໍລິການດ້ານການກໍ່ສ້າງເທົ່ານັ້ນ.

ຖ້າວິສາຫະກິດນຳໃຊ້ວິທີການສັນຍາບັນລຸຜົນ, ວິສາຫະກິດດັ່ງກ່າວ ຮັບຮູ້ລາຍການບັນຊີ ສັນຍາສຳລັບການກໍ່ສ້າງ ອະສັງຫາລິມະຊັບ ເມື່ອການກໍ່ສ້າງສຳເລັດສົມບູນ.

23ອ.15 ຖ້າວ່າວິສາຫະກິດຈຳຕ້ອງໄດ້ສະໜອງການບໍລິການໃນເວລາດຽວກັນກັບການສະໜອງວັດສະດຸກໍ່ສ້າງເພື່ອປະຕິບັດຂໍ້ຜູກພັນຕາມສັນຍາຂອງຕົນເອງໃນການສົ່ງມອບອະສັງຫາລິມະຊັບໃຫ້ຜູ້ຊື້, ຕ້ອງລົງບັນຊີສັນຍາ ເປັນການຂາຍສິນຄ້າ. ໃນກໍລະນີດັ່ງກ່າວ, ຜູ້ຊື້ຈະບໍ່ມີອຳນາດຄວບຄຸມ ຫຼື ບໍ່ໄດ້ຮັບຄວາມສ່ຽງທີ່ສຳຄັນ ແລະ ຜົນຕອບແທນຂອງການເປັນເຈົ້າຂອງກຳມະສິດ ທີ່ຕິດພັນກັບວຽກງານທີ່ພວມດຳເນີນ ໃນສະພາບຄວາມຄືບໜ້າ ຂອງວຽກງານກໍ່ສ້າງ. ດັ່ງນັ້ນ, ການໂອນຄວາມສ່ຽງ ແລະ ກຳມະສິດດັ່ງກ່າວຈະເກີດຂຶ້ນພຽງແຕ່ໃນເວລາຈັດມອບອະສັງຫາລິມະຊັບທີ່ກໍ່ສ້າງສຳເລັດສົມບູນ ໃຫ້ຜູ້ຊື້ເທົ່ານັ້ນ.

**ຕົວຢ່າງ ທີ 13 ການຂາຍທີ່ໃຫ້ສິດທິພິເສດແກ່ລູກຄ້າ**

23ອ.16 ວິສາຫະກິດຂາຍຜະລິດຕະພັນ ກ ເທົ່າກັບ 100 KKip. ຜູ້ຊື້ຜະລິດຕະພັນ ກ ໄດ້ຮັບສິດທິພິເສດສາມາດຊື້ ຜະລິດຕະພັນ ຂ ເທົ່າກັບ 10 KKip. ລາຄາຂາຍປົກກະຕິຂອງຜະລິດຕະພັນ ຂ ເທົ່າກັບ 18 KKip. ວິສາຫະກິດຄາດຄະເນວ່າ 40 % ຂອງຜູ້ຊື້ຜະລິດຕະພັນ ກ ຈະນຳໃຊ້ສິດພິເສດຂອງຕົນ ເພື່ອຊື້ຜະລິດຕະພັນ ຂ ເທົ່າກັບ 10 KKip. ລາຄາຂາຍປົກກະຕິ ຂອງຜະລິດຕະພັນ ກ, ພາຍຫຼັງໄດ້ຫັກສ່ວນຫຼຸດຊຶ່ງຕາມປົກກະຕິໄດ້ຫຼຸດໃຫ້ແຕ່ຫາກບໍ່ມີສິດທິພິເສດນີ້ ແມ່ນເທົ່າກັບ 95 KKip.

23ອ.17 ມູນຄ່າຍຸຕິທຳຂອງສິດທິພິເສດ ເທົ່າກັບ 40 % × [18 KKip – 10 KKip ] = 3,20 KKip. ວິສາຫະກິດແບ່ງສ່ວນລວມຍອດລາຍຮັບ 100 KKip ລະຫວ່າງ ຜະລິດຕະພັນ ກ ແລະ ສິດທິພິເສດ ໂດຍອີງຕາມມູນຄ່າຍຸຕິທຳທີ່ກ່ຽວຂ້ອງ ທີ່ເທົ່າກັບ 95 KKip ແລະ 3,20 KKip ຕາມລຳດັບ. ຈາກນັ້ນ :

(ກ) ລາຍຮັບສຳລັບຜະລິດຕະພັນ ກ ເທົ່າກັບ 100 KKip x [95 KKip / (95 KKip + 3,20 KKip)] = 96,74 KKip

(ຂ) ລາຍຮັບສຳລັບຜະລິດຕະພັນ ຂ ເທົ່າກັບ 100 KKip x [3,20 KKip / (95 KKip + 3,20 KKip)] = 3,26 KKip

## ການສະໜອງການບໍລິການ

**ຕົວຢ່າງ ທີ 14 ຄ່າຕິດຕັ້ງ**

23ອ.18 ຖ້າຜູ້ຂາຍນຳໃຊ້ວິທີການສັນຍາບັນລຸຜົນ, ຜູ້ຂາຍດັ່ງກ່າວ ຮັບຮູ້ລາຍການບັນຊີ ຄ່າຕິດຕັ້ງ ເປັນລາຍຮັບ ເມື່ອການຕິດຕັ້ງດັ່ງກ່າວສຳເລັດຜົນ ເວັ້ນເສຍ ມີເຫດການຕໍ່ການຂາຍຜະລິດຕະພັນໃດໜຶ່ງ, ຊຶ່ງໃນກໍລະນີດັ່ງກ່າວ ລາຍຮັບດັ່ງກ່າວ ຖືກຮັບຮູ້ລາຍການບັນຊີ ເມື່ອສິນຄ້າຖືກຂາຍອອກ.

ຖ້າຜູ້ຂາຍນຳໃຊ້ວິທີຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ, ຜູ້ຂາຍນັ້ນ ຮັບຮູ້ລາຍການບັນຊີຄ່າຕິດຕັ້ງ ເປັນລາຍຮັບ ໂດຍອີງຕາມລະດັບຄວາມຄືບໜ້າຂອງການຕິດຕັ້ງ, ເວັ້ນເສຍແຕ່ລາຍການດັ່ງກ່າວຈະເປັນສິ່ງສຳຮອງສຳລັບການຂາຍຜະລິດຕະພັນຊຶ່ງ, ໃນກໍລະນີດັ່ງກ່າວ ຕ້ອງຮັບຮູ້ລາຍການບັນຊີ ໃນເມື່ອຂາຍສິນຄ້າອອກ.

**ຕົວຢ່າງ ທີ 15 ຄ່າບໍລິການ ທີ່ລວມຢູ່ໃນລາຄາຜະລິດຕະພັນ**

23ອ.19 ຖ້າວ່າລາຄາຂາຍຜະລິດຕະພັນ ປະກອບດ້ວຍຈຳນວນເງິນທີ່ຈຳແນກໄດ້ ສຳລັບການບໍລິການຫຼັງຂາຍ (ເຊັ່ນ ການຊ່ວຍເຫຼືອຫຼັງຂາຍ ແລະ ການປັບປຸງຊຸດຄຳສັ່ງໃຫ້ດີຂຶ້ນຫຼັງຈາກທີ່ຂາຍໄປແລ້ວ), ຜູ້ຂາຍລົງບັນຊີລໍຖ້າສະສາງຈຳນວນເງິນດັ່ງກ່າວ ແລະ ຄ່ອຍໆຮັບຮູ້ລາຍການບັນຊີເປັນລາຍຮັບ ຕະຫຼອດໄລຍະທີ່ມີການໃຫ້ບໍລິການ. ຈຳນວນເງິນລົງບັນຊີລໍຖ້າສະສາງ ແມ່ນຈຳນວນເງິນທີ່ກວມເອົາຄ່າໃຊ້ຈ່າຍຄາດຄະເນດ້ານການບໍລິການ ທີ່ໄດ້ກຳນົດໄວ້ໃນສັນຍາ, ພ້ອມກັບກຳໄລທີ່ສົມເຫດສົມຜົນ ບ້ວງການບໍລິການດັ່ງກ່າວ.

**ຕົວຢ່າງ ທີ 16 ຄ່ານາຍໜ້າໂຄສະນາ**

23ອ.20 ຄ່ານາຍໜ້າໂຄສະນາ ຖືກຮັບຮູ້ລາຍການບັນຊີເວລາສື່ໂຄສະນາທີ່ກ່ຽວຂ້ອງ ໄດ້ເຜີຍແຜ່ສູ່ສາທາລະນະຊົນ. ສ່ວນລາຍໄດ້ຄ່າຜະລິດສື່ໂຄສະນາ ຕ້ອງຖືກຮັບຮູ້ລາຍການບັນຊີ ຕາມລະດັບຄວາມຄືບໜ້າຂອງວຽກງານດັ່ງກ່າວ, ຖ້ານຳໃຊ້ວິທີຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ.

**ຕົວຢ່າງ ທີ 17 ຄ່ານາຍໜ້າຕົວແທນປະກັນໄພ**

23ອ.21 ຄ່ານາຍໜ້າຕົວແທນປະກັນໄພທີ່ໄດ້ຮັບ ຫຼື ຕ້ອງຮັບ ຊຶ່ງບໍ່ກຳນົດໃຫ້ຕົວແທນໃຫ້ບໍລິການດ້ານອື່ນອີກ ຖືກຮັບຮູ້ລາຍການ

ບັນຊີ ເປັນລາຍຮັບ ໂດຍຕົວແທນນັ້ນ ໃນມື້ທີ່ການເລີ່ມມີຜົນບັງຄັບໃຊ້ ຫຼື ມື້ຕໍ່ສັນຍາປະກັນໄພໃໝ່. ເຖິງຢ່າງໃດກໍດີ, ເມື່ອອາດເປັນໄປໄດ້ ທີ່ວ່າຕົວແທນນັ້ນ ຈະຕ້ອງໃຫ້ບໍລິການດ້ານອື່ນອີກ ຕະຫຼອດໄລຍະອາຍຸສັນຍາປະກັນໄພ, ຕົວແທນ ຕ້ອງລົງບັນຊີລໍຖ້າສະສາງຄ່ານາຍໜ້າ ຫຼື ສ່ວນໃດໜຶ່ງຂອງຄ່ານາຍໜ້າ, ແລະ ຄ່ອຍໆຮັບຮູ້ລາຍການບັນຊີລາຍການ ດັ່ງກ່າວ ເປັນລາຍຮັບ ຕະຫຼອດໄລຍະອາຍຸການປະຕິບັດສັນຍາປະກັນໄພ.

**ຕົວຢ່າງ ທີ 18 ຄ່າຜ່ານປະຕູ**

23ອ.22 ຜູ້ຂາຍ ຮັບຮູ້ລາຍການບັນຊີລາຍຮັບ ທີ່ກຳເນີດຈາກງານສະແດງ, ການກິນລ້ຽງ ແລະ ງານພິເສດອື່ນໆ ຖ້າຫາກໄດ້ມີການ ຈັດງານຂຶ້ນ. ຖ້າຄ່າຜ່ານປະຕູນັ້ນ ສາມາດເຂົ້າງານຫຼາຍປະເພດ, ຄ່າຜ່ານປະຕູຈະຖືກແບ່ງສ່ວນ ໃຫ້ກັບແຕ່ລະປະເພດ ງານທີ່ເໝາະສົມ ບົນພື້ນຖານຂອບເຂດການໃຫ້ບໍລິການສຳລັບແຕ່ລະງານ.

**ຕົວຢ່າງ ທີ 19 ຄ່າຮຽນ**

23ອ.23 ຜູ້ຂາຍ ຮັບຮູ້ລາຍການບັນຊີ ລາຍຮັບ ຕະຫຼອດໄລຍະການຮຽນ.

**ຕົວຢ່າງ ທີ 20 ຄ່າສະໝັກ, ຄ່າເຂົ້າເປັນສະມາຊິກ ແລະ ເງິນບຳລຸງ**

23ອ.24 ການຮັບຮູ້ລາຍການບັນຊີ ລາຍຮັບ ຂຶ້ນກັບລັກສະນະເນື້ອໃນຂອງການໃຫ້ບໍລິການ. ຖ້າວ່າຄ່າດັ່ງກ່າວ ອະນຸຍາດໃຫ້ເປັນ ພຽງແຕ່ເປັນສະມາຊິກ, ສ່ວນການບໍລິການ ຫຼື ຜະລິດຕະພັນອື່ນໆທັງໝົດຖືກຊຳລະຕ່າງຫາກ, ຫຼື ຖ້າຫາກມີເງິນບຳລຸງປະ ຈຳປີຕ່າງຫາກ, ຄ່າທຳນຽມເຫຼົ່ານີ້ ຈະຖືກຮັບຮູ້ລາຍການບັນຊີເປັນລາຍຮັບ ຖ້າຫາກແນ່ໃຈ ວ່າຈະສາມາດເກັບເງິນຄ່າທຳ ນຽມນັ້ນໄດ້. ຖ້າວ່າຄ່າທຳນຽມອະນຸຍາດໃຫ້ຜູ້ເປັນສະມາຊິກ ຮັບການບໍລິການ ຫຼື ເອກະສານ ຕະຫຼອດອາຍຸຂອງການເປັນ ສະມາຊິກ ຫຼື ໄດ້ສິດໃນການຊື້ສິນຄ້າ ຫຼື ການບໍລິການ ໃນລາຄາທີ່ຕ່ຳກ່ວາ ທີ່ຄິດກັບຜູ້ທີ່ບໍ່ແມ່ນສະມາຊິກ, ຄ່າທຳນຽມ ດັ່ງກ່າວ ຖືກຮັບຮູ້ລາຍການບັນຊີບົນພື້ນຖານ ທີ່ສ່ອງແສງເຖິງຕາຕະລາງເວລາ, ລັກສະນະ ແລະ ຄຸນຄ່າຂອງຜົນປະ ໂຫຍດທີ່ໄດ້ສະໜອງໃຫ້ແກ່ສະມາຊິກ.

## ຄ່າສິດທິເປັນຕົວແທນຈຳໜ່າຍ

23ອ.25 ຄ່າສິດທິເປັນຕົວແທນຈຳໜ່າຍ ອາດກວມເອົາການໃຫ້ບໍລິການເບື້ອງຕົ້ນ ແລະ ໃນຂັ້ນຕໍ່ໄປ, ອຸປະກອນ ແລະຊັບສົມບັດ ຄົງທີ່ມີຕົວຕົນອື່ນໆ ແລະ ການຖ່າຍທອດຄວາມຮູ້. ສະນັ້ນ, ຄ່າສິດທິເປັນຕົວແທນຈຳໜ່າຍ ຖືກຮັບຮູ້ລາຍການບັນຊີເປັນ ລາຍຮັບ ບົນພື້ນຖານທີ່ສ່ອງແສງເຖິງຈຸດປະສົງຂອງການອອກໃບເກັບຄ່າສິດທິດັ່ງກ່າວ. ວິທີການດັ່ງລຸ່ມນີ້ ເປັນສິ່ງແທດ ເໝາະສຳລັບການຮັບຮູ້ລາຍການບັນຊີຄ່າສິດທິເປັນຕົວແທນຈຳໜ່າຍ.

**ຕົວຢ່າງ ທີ 21 ຄ່າສິດທິເປັນຕົວແທນຈຳໜ່າຍ: ການສະໜອງອຸປະກອນ ແລະ ຊັບສົມບັດຄົງທີ່ມີຕົວຕົນອື່ນໆ**

23ອ.26 ຜູ້ໃຫ້ສິດທິເປັນຕົວແທນ ຮັບຮູ້ລາຍການບັນຊີ ຕາມລາຄາໃນໃບເກັບເງິນ ຂອງຊັບສິນທີ່ໄດ້ຂາຍ ເປັນລາຍຮັບ ໃນເວລາ ສົ່ງມອບ ແລະ ໂອນກຳມະສິດລາຍການຊັບສິນດັ່ງກ່າວ.

**ຕົວຢ່າງ ທີ 22 ຄ່າສິດທິເປັນຕົວແທນຈຳໜ່າຍ: ການສະໜອງການບໍລິການເບື້ອງຕົ້ນ ແລະ ຕາມຫຼັງ**

23ອ.27 ຜູ້ໃຫ້ສິດທິເປັນຕົວແທນຈຳໜ່າຍ ຮັບຮູ້ລາຍການບັນຊີຄ່າສິດທິໃນການໃຫ້ການບໍລິການຢ່າງຕໍ່ເນື່ອງ, ບໍ່ວ່າຈະນອນຢູ່ໃນ ຄ່າໃຫ້ສິດທິເບື້ອງຕົ້ນ ຫຼື ຄ່າສິດທິທີ່ແຍກຕ່າງຫາກກໍຕາມ, ເປັນລາຍຮັບ ເມື່ອໄດ້ໃຫ້ການບໍລິການ. ຖ້າວ່າຄ່າໃຫ້ສິດທິທີ່ ແຍກຕ່າງຫາກບໍ່ກວມເອົາຄ່າບໍລິການຢ່າງຕໍ່ເນື່ອງ ພ້ອມດ້ວຍກຳໄລຢ່າງສົມເຫດສົມຜົນ ທີ່ເປັນສ່ວນໜຶ່ງຂອງຄ່າບໍລິການ ເບື້ອງຕົ້ນ ທີ່ພຽງພໍເພື່ອກວມເອົາຕົ້ນທຶນການບໍລິການທີ່ຕໍ່ເນື່ອງ ແລະ ທັງໃຫ້ກຳໄລທີ່ສົມເຫດສົມຜົນ ຕໍ່ການບໍລິການ ດັ່ງກ່າວ, ຈະຖືກລົງບັນຊີລໍຖ້າສະສາງ ແລະ ຄ່ອຍໆຮັບຮູ້ລາຍການບັນຊີນັ້ນ ເປັນລາຍຮັບ ຕະຫຼອດໄລຍະການໃຫ້ບໍລິ ການ.

23ອ.28 ສັນຍາສິດທິເປັນຕົວແທນຈຳໜ່າຍ ອາດກຳນົດໃຫ້ຜູ້ໃຫ້ສິດທິເປັນຕົວແທນຈຳໜ່າຍ ສະໜອງອຸປະກອນ, ເຄື່ອງໃນສາງ ຫຼື ຊັບສົມບັດຄົງທີ່ມີຕົວຕົນອື່ນໆ ໃນລາຄາທີ່ຕ່ຳກ່ວາລາຄາທີ່ເກັບນຳຜູ້ອື່ນ ຫຼື ໃນລາຄາທີ່ບໍ່ມີກຳໄລຢ່າງສົມເຫດສົມຜົນ ບ້ວງ ການຂາຍດັ່ງກ່າວ. ໃນກໍລະນີດັ່ງກ່າວນີ້, ພາກສ່ວນໜຶ່ງຂອງຄ່າສິດທິເບື້ອງຕົ້ນ ຊຶ່ງພຽງພໍເພື່ອກວມເອົາຄ່າໃຊ້ຈ່າຍທີ່ຄາດ ຄະເນທີ່ເປັນສ່ວນເກີນລາຄາດັ່ງກ່າວ ແລະ ໃຫ້ກຳໄລອັນສົມເຫດສົມຜົນໃນການຂາຍດັ່ງກ່າວ, ຕ້ອງຖືກລົງບັນຊີລໍຖ້າສະ ສາງ ແລະຮັບຮູ້ລາຍການບັນຊີຕະຫຼອດໄລຍະຊຶ່ງເປັນໄປໄດ້ ທີ່ສິນຄ້າຈະຖືກຂາຍ ໃຫ້ຜູ້ໄດ້ສິດທິເປັນຕົວແທນຈຳໜ່າຍ.

ยອດເຫຼືອຂອງຄ່າສິດທິເບື້ອງຕົ້ນ ຖືກລົງບັນຊີເປັນລາຍຮັບ ຖ້າວ່າຜົນການດຳເນີນງານການບໍລິການເບື້ອງຕົ້ນທັງໝົດ ແລະ ການປະຕິບັດຂໍ້ຜູກພັນອື່ນໆ ຂອງຜູ້ໃຫ້ສິດທິເປັນຕົວແທນຈຳໜ່າຍ (ເຊັ່ນການຊ່ວຍເຫຼືອໃນການເລືອກສະຖານທີ່, ການກໍ່ສ້າງພະນັກງານ, ການປະກອບທຶນ ແລະ ການໂຄສະນາ) ໄດ້ຖືກປະຕິບັດເປັນສ່ວນໃຫ່ຍແລ້ວ.

23ອ.29 ການໃຫ້ບໍລິການເບື້ອງຕົ້ນ ແລະ ຂໍ້ຜູກພັນອື່ນໆ ກ່ຽວກັບສັນຍາສິດທິເປັນຕົວແທນຈຳໜ່າຍ ອາດຂຶ້ນກັບຈຳນວນຈຸດຂາຍ ແຕ່ລະລາຍໃນເຂດດັ່ງກ່າວນັ້ນ. ໃນກໍລະນີດັ່ງກ່າວ, ຄ່າສິດທິບ້ວງການໃຫ້ບໍລິການເບື້ອງຕົ້ນ ຖືກຮັບຮູ້ລາຍການບັນຊີເປັນລາຍຮັບ ຕາມອັດຕາສ່ວນຈຳນວນຈຸດຂາຍຊຶ່ງການໃຫ້ບໍລິການເບື້ອງຕົ້ນ ໄດ້ຮັບການຈັດຕັ້ງປະຕິບັດໂດຍສ່ວນໃຫຍ່ແລ້ວ.

23ອ.30 ຖ້າວ່າຄ່າສິດທິເບື້ອງຕົ້ນ ກຳນົດໃຫ້ເກັບກູ້ຄືນໄດ້ເປັນຫຼາຍງວດ ແລະ ຖ້າມີຄວາມບໍ່ແນ່ນອນຫຼາຍ ວ່າຈະເກັບກູ້ຄືນທັງໝົດໄດ້, ຄ່າສິດທິນັ້ນຈະຖືກຮັບຮູ້ລາຍການບັນຊີ ຕາມເງິນສົດແຕ່ລະງວດທີ່ໄດ້ຮັບຕົວຈິງ.

**ຕົວຢ່າງ ທີ 23 ຄ່າສິດທິເປັນຕົວແທນຈຳໜ່າຍ: ຄ່າສິດທິໃນການເປັນຕົວແທນຈຳໜ່າຍຢ່າງຕໍ່ເນື່ອງ**

23ອ.31 ຄ່າສິດທິ ທີ່ໄດ້ອອກໃບເກັບເງິນສຳລັບການນຳໃຊ້ສິດທິຢ່າງຕໍ່ເນື່ອງ ຕາມສັນຍາ, ຫຼື ສຳລັບການໃຫ້ບໍລິການອື່ນໆ ຕະຫຼອດໄລຍະປະຕິບັດສັນຍາ, ຖືກຮັບຮູ້ລາຍການບັນຊີເປັນລາຍຮັບ ເມື່ອໄດ້ສະໜອງການບໍລິການ ຫຼື ເມື່ອມີການນຳໃຊ້ສິດທິ.

**ຕົວຢ່າງ ທີ 24 ຄ່າສິດທິເປັນຕົວແທນຈຳໜ່າຍ: ລາຍການເຄື່ອນໄຫວທີ່ມີລັກສະນະເປັນຕົວແທນ**

23ອ.32 ອາດມີລາຍການເຄື່ອນໄຫວ ລະຫ່ວາງຜູ້ໃຫ້ສິດເປັນຕົວແທນຈຳໜ່າຍ ແລະ ຜູ້ຮັບສິດທິເປັນຕົວແທນຈຳໜ່າຍ ຊຶ່ງ, ທາງດ້ານເນື້ອແທ້, ເຮັດໃຫ້ຜູ້ໃຫ້ສິດທິເປັນຕົວແທນຈຳໜ່າຍ ດຳເນີນການໃນຖານະເປັນຕົວແທນຂອງຜູ້ຮັບສິດທິເປັນຕົວແທນຈຳໜ່າຍ. ຕົວຢ່າງ, ຜູ້ໃຫ້ສິດທິເປັນຕົວແທນຈຳໜ່າຍ ອາດສັ່ງຊື້ວັດຖຸປະກອບ ແລະ ຈັດສົ່ງໃຫ້ຜູ້ຮັບສິດທິເປັນຕົວແທນຈຳໜ່າຍໂດຍບໍ່ມີຜົນກຳໄລ. ລາຍການເຄື່ອນໄຫວດັ່ງກ່າວບໍ່ເຮັດໃຫ້ເກີດມີລາຍຮັບ.

**ຕົວຢ່າງ ທີ 25 ຄ່າບໍລິການການສ້າງຊຸດຄຳສັ່ງສະເພາະ**

23ອ.33 ຜູ້ສ້າງຊຸດຄຳສັ່ງ ຮັບຮູ້ລາຍການບັນຊີຄ່າບໍລິການການສ້າງຊຸດຄຳສັ່ງສະເພາະ ເປັນລາຍຮັບ ຕາມລະດັບຜົນສຳເລັດຄວາມຄືບໜ້າຂອງວຽກງານ, ລວມທັງວຽກງານບໍລິການທີ່ໄດ້ສະໜອງຫຼັງຈາກການຈັດສົ່ງຊຸດຄຳສັ່ງ.

## ດອກເບ້ຍ, ຄ່າສິດທິ ແລະ ເງິນປັນຜົນ

**ຕົວຢ່າງ ທີ 26 ຄ່າທຳນຽມໃບອະນຸຍາດ ແລະ ຄ່າສິດທິ**

23ອ.34 ຜູ້ອອກໃບອະນຸຍາດ ຮັບຮູ້ລາຍການບັນຊີຄ່າທຳນຽມໃບອະນຸຍາດ ແລະ ຄ່າສິດທິ ສຳລັບການນຳໃຊ້ຊັບສິນຂອງວິສາຫະກິດໃດໜຶ່ງ (ເຊັ່ນເຄື່ອງໝາຍການຄ້າ, ປະຕັງ, ຊຸດຄຳສັ່ງ, ລິຂະສິດໃນສຽງເພງ, ກໍ້ເທບຕົ້ນສະບັບ ແລະ ຟິມຮູບເງົາ) ຕາມວິທີການແບບສະເໝີຕົວ ບົນພື້ນຖານອາຍຸການຂອງສັນຍາ.

23ອ.35 ການອະນຸມັດສິດທິ ສຳລັບຄ່າສິດທິຄົງທີ່ ຫຼື ການຄ້ຳປະກັນທີ່ບໍ່ສາມາດຫົດແທນຄືນໄດ້ ອີງຕາມສັນຍາທີ່ລົບລ້າງບໍ່ໄດ້ ຊຶ່ງອະນຸຍາດຜູ້ຮັບຜົນປະໂຫຍດຈາກໃບອະນຸຍາດໃຫ້ນຳໃຊ້ສິດທິດັ່ງກ່າວຢ່າງເສລີ ໂດຍທີ່ຜູ້ອອກໃບອະນຸຍາດ ບໍ່ມີຂໍ້ຜູກພັນອື່ນໆໃດໆໃນເນື້ອແທ້ແລ້ວ ຖືວ່າ ເປັນການຂາຍ. ຕົວຢ່າງ ຄືສັນຍາອະນຸຍາດ ໃຫ້ນຳໃຊ້ຊຸດຄຳສັ່ງ ເມື່ອຜູ້ອອກໃບອະນຸຍາດ ບໍ່ມີຂໍ້ຜູກພັນໃດໆຫຼັງຈາກການສົ່ງມອບ. ຕົວຢ່າງອັນໜຶ່ງອີກຄື ການໃຫ້ສິດທິໃນການຈັດສາຍຟິມຮູບເງົາໃນຕະຫຼາດຊຶ່ງຜູ້ອອກໃບອະນຸຍາດ ບໍ່ມີອຳນາດຄວບຄຸມຜູ້ແຈກຢາຍ ແລະ ບໍ່ຄາດຫວັງວ່າຈະໄດ້ຮັບລາຍຮັບເພີ້ມຕື່ມ ຈາກການຂາຍປີ້. ໃນກໍລະນີດັ່ງກ່າວ, ລາຍຮັບຖືກຮັບຮູ້ລາຍການບັນຊີໃນເວລາຂາຍ.

23ອ.36 ໃນບາງກໍລະນີ, ການທີ່ໄດ້ຮັບ ຫຼື ບໍ່ໄດ້ຮັບຄ່າທຳນຽມໃບອະນຸຍາດ ຫຼື ຄ່າສິດທິ ແມ່ນຂຶ້ນກັບການເກີດຂຶ້ນຂອງເຫດການໃນອະນາຄົດ. ໃນກໍລະນີດັ່ງກ່າວ, ລາຍຮັບ ຖືກຮັບຮູ້ລາຍການບັນຊີກໍຕໍ່ເມື່ອວ່າອາດເປັນໄປໄດ້ ທີ່ວ່າຈະໄດ້ຮັບຄ່າທຳນຽມ ຫຼື ຄ່າສິດທິ, ຊຶ່ງຕາມປົກກະຕິແລ້ວ ແມ່ນໃນເວລາທີ່ເຫດການດັ່ງກ່າວໄດ້ເກີດຂຶ້ນ.

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| 23.2 (ຄ) | ເງິນລົງທຶນໃນຮຸ້ນບູລິມະສິດ ທີ່ປ່ຽນເປັນຮຸ້ນສາມັນບໍ່ໄດ້ ແລະ ບໍ່ມີສິດຂາຍຄືນໄດ້ ແລະ ໃນຮຸ້ນສາມັນ ທີ່ບໍ່ມີສິດຂາຍໄດ້ ຕ້ອງຖືກຕີມູນຄ່າ ຕາມມູນຄ່າຍຸຕິທຳ ຖ້າມີການຊື້-ຂາຍຕໍ່ສາທາລະນະຊົນ. ໝວດ 12 *ປະເດັນຕ່າງໆ ທີ່ຕິດພັນກັບເຄື່ອງມືການເງິນອື່ນໆ* ຂອງມາດຕະຖານນີ້ ຖືກຕັດອອກ: ວິສາຫະກິດໃດໜຶ່ງ ຕ້ອງນຳໃຊ້ *FRS* ສຳລັບ ວທຍ ເຕັມສ່ວນ ຖ້າມີສັນຍາ ທີ່ບໍ່ແມ່ນ ເຄື່ອງມືການເງິນ ແລະ ລາຍການເຄື່ອນໄຫວພື້ນຖານ. ວັກນີ້ ຖືກປັບປຸງ. |
| 23.2 (ງ) | ວນກ ຕີມູນຄ່າອະສັງຫາລິມະຊັບເພື່ອການລົງທຶນ ຕາມວິທີຕົ້ນທຶນ-ຄ່າຫຼ້ຍຫ້ຽນ-ການສູນເສຍມູນຄ່າ ແລະ ບໍ່ໃຊ້ຕາມມູນຄ່າຍຸທິທຳ(ເບິ່ງ FRS ສຳລັບ ວທຍ ໝວດ 17 *ຊັບສົມບັດຄົງທີ່ມີຕົວຕົນ*). ວັກນີ້ຖືກຕັດອອກ. |
| 23.3 | ການຕີມູນຄ່າລາຍຮັບ ບໍ່ແມ່ນມູນຄ່າຍຸຕິທຳ ຂອງສິ່ງຕອບແທນທີ່ໄດ້ຮັບ ຫຼື ຕ້ອງຮັບ. ແມ່ນໃຊ້ ລາຄາລາຍການເຄື່ອນໄຫວ. ມີຂໍ້ຍົກເວັ້ນໜຶ່ງ (ເບິ່ງ ວັກ 23.7 (ກ)). ວັກນີ້ ຖືກປັບປຸງ. |
| 23.5 | ມູນຄ່າປັດຈຸບັນ ບໍ່ຖືກນຳໃຊ້ ເພື່ອສ້າງເອກະສານລາຍງານການເງິນ ໃຫ້ສອດຄ່ອງກັບມາດຕະຖານ FRS ສຳລັບ ວນກ ນີ້ ເວັ້ນເສຍແຕ່ສຳລັບຜົນປະໂຫຍດຂອງພະນັກງານ. ວັກນີ້ ຖືກຕັດອອກ. |
| 23.14 - 23.16 | ວິສາຫະກິດ ຮັບຮູ້ລາຍການບັນຊີ ລາຍຮັບຈາກການສະໜອງການບໍລິການ ໃນເມື່ອສຳເລັດລາຍການເຄື່ອນໄຫວນັ້ນ (ວິທີການສັນຍາບັນລຸຜົນ): ວິທີການນີ້ ຖືກຫ້າມໃຊ້ ໂດຍມາດຕະຖານ FRS ສຳລັບ ວທຍ. ແຕ່ອາດນຳໃຊ້ວິທີຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ: ທາງເລືອກນີ້ ບໍ່ສາມາດເພີກຖອນໄດ້. ວັກນີ້ ຖືກປັບປຸງ. |
| 23.17 – 23.20 | ວິສາຫະກິດ ຮັບຮູ້ລາຍການບັນຊີ ລາຍຮັບຈາກການສະໜອງການບໍລິການ ໃນເມື່ອສຳເລັດລາຍການເຄື່ອນໄຫວນັ້ນ (ວິທີການສັນຍາບັນລຸຜົນ): ວິທີການນີ້ ຖືກຫ້າມໃຊ້ ໂດຍມາດຕະຖານ FRS ສຳລັບ ວທຍ. ແຕ່ອາດນຳໃຊ້ວິທີຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ: ການເລືອກນີ້ ບໍ່ສາມາດເພີກຖອນໄດ້. ວັກນີ້ ຖືກປັບປຸງ. |
| 23.21<br>23.21/1 | ມີສອງວັກ 23.21: ວິທີການສັນຍາບັນລຸຜົນ ຊຶ່ງເປັນວິທີການສະເພາະ ຂອງມາດຕະຖານ FRS ສຳລັບ ວນກ ຫຼື ວິທີຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ ຊຶ່ງຖືກອະນຸຍາດນຳໃຊ້ ໂດຍມາດຕະຖານ FRS ສຳລັບ ວນກ. |
| 23.29 | ວິທີການຄິດໄລ່ດອກເບ້ຍຕົວຈິງ ບໍ່ນຳໃຊ້ກັບ ວນກ. |
| 23ອ.2 | ວນກ ບໍ່ສະເໜີເອກະສານລາຍງານການເງິນລວມກິດຈະການ: ວັກນີ້ ຖືກຕັດອອກ. |
| 23ອ.8-ຕຍ.6 | ອີງຕາມມາດຕະຖານ FRS ສຳລັບ ວທຍ, ລາຍຮັບ ອາດຖືກຮັບຮູ້ລາຍການບັນຊີ ເມື່ອໄດ້ຮັບເງິນມັດຈຳລ່ວງໜ້າ ເປັນ ຈຳນວນຫຼາຍ ໂດຍທີ່ມີສິນຄ້າໃນກຳມື ທີ່ຈຳແນກໄດ້ ແລະ ກຽມພ້ອມສົ່ງມອບໃຫ້ຜູ້ຊື້.<br>ມາດຕະຖານນ FRS ສຳລັບ ວນກ ນີ້ ຫ້າມນຳໃຊ້ທາງເລືອກນີ້. ປະໂຫຍກສຸດທ້າຍຖືກຕັດອອກ. |
| 23ອ.13-ຕຍ. 11 | ຕາມມາດຕະຖານ FRS ສຳລັບ ວນກ ນີ້, ລາຄາຂາຍ ບໍ່ແມ່ນມູນຄ່າປັດຈຸບັນ ຂອງສິ່ງຕອບແທນ ແຕ່ແມ່ນ ລາຄາ ໃນໃບເກັບເງິນ. |
| 23ອ.14-ຕຍ. 12<br>23ອ.18-ຕຍ. 14<br>23ອ.20-ຕຍ. 16 | ອີງຕາມມາດຕະຖານ FRS ສຳລັບ ວນກ ນີ້, ອາດນຳໃຊ້ສອງວິທີການ: ວິທີການສັນຍາບັນລຸຜົນ ຫຼື ວິທີຄິດໄລ່ຕາມອັດຕາສ່ວນຮ້ອຍຄວາມສຳເລັດ. |
| 23ອ.26-ຕຍ. 21 | ອີງຕາມມາດຕະຖານ FRS ສຳລັບ ວນກ ນີ້, ຈຳນວນເງິນທີ່ຖືກຮັບຮູ້ລາຍການບັນຊີ ແມ່ນລາຄາໃນໃບເກັບເງິນ ບໍ່ແມ່ນມູນຄ່າຍຸຕິທຳ ຂອງຊັບສິນທີ່ໄດ້ຂາຍອອກ. |
| 23ອ.34-ຕຍ. 26 | ອີງຕາມມາດຕະຖານ FRS ສຳລັບ ວນກ ນີ້, ຄ່າທຳນຽມໃບອະນຸຍາດ ແລະ ຄ່າສິດທິ ຕ້ອງຖືກຮັບຮູ້ລາຍການບັນຊີ ຕາມພື້ນຖານຄິດໄລ່ແບບສະເໝີຕົວຕະຫຼອດອາຍຸການຂອງສັນຍາຂໍ້ຕົກລົງ. |

# ໝວດ 24

# ເງິນຊ່ວຍໜູນຂອງລັດຖະບານ

## ຂອບເຂດຂອງໝວດນີ້

24.1 ໝວດດັ່ງກ່າວ ກຳນົດການລົງບັນຊີ ສຳລັບເງິນຊ່ວຍໜູນຂອງລັດຖະບານທັງໝົດ. **ເງິນຊ່ວຍໜູນຂອງລັດຖະບານ** ແມ່ນການຊ່ວຍເຫຼືອຂອງລັດ ໃນຮູບການໂອນຊັບພະຍາກອນໃຫ້ວິສາຫະກິດໜຶ່ງ ໂດຍການທົດແທນຜົນການປະຕິບັດງານຜ່ານມາ ຫຼື ໃນອະນາຄົດ ທີ່ວ່າວິສາຫະກິດໄດ້ ແລະ ຈະປະຕິບັດໃຫ້ຖືກຕ້ອງຕາມເງື່ອນໄຂສະເພາະ ທີ່ກ່ຽວຂ້ອງກັບກິດຈະກຳດຳເນີນງານ ຂອງວິສາຫະກິດ.

24.2 ເງິນຊ່ວຍໜູນຂອງລັດຖະບານ ບໍ່ລວມເອົາຮູບການຊ່ວຍເຫຼືອຂອງລັດ ຊຶ່ງບໍ່ສາມາດກຳນົດມູນຄ່າຢ່າງສົມເຫດສົມຜົນໄດ້ ແລະ ລາຍການເຄື່ອນໄຫວກັບອົງການລັດ ທີ່ບໍ່ສາມາດຈຳແນກອອກຈາກລາຍການເຄື່ອນໄຫວທຸລະກິດປົກກະຕິຂອງວິສາຫະກິດ.

24.3 ໝວດດັ່ງກ່າວນີ້ບໍ່ເວົ້າເຖິງການຊ່ວຍເຫຼືອຂອງລັດໃຫ້ແກ່ວິສາຫະກິດໃດໜຶ່ງ ໃນຮູບການອະນຸມັດຜົນປະໂຫຍດທີ່ມີໃນເວລາຄິດໄລ່ກຳໄລຖືກເສຍອາກອນ ຫຼື ການຂາດທຶນດ້ານອາກອນ, ຫຼື ທີ່ໄດ້ຄິດໄລ່ ຫຼື ຈຳກັດບົນພື້ນຖານໜີ້ສິນອາກອນລາຍຮັບ. ຕົວຢ່າງ ກ່ຽວກັບຜົນປະໂຫຍດດັ່ງກ່າວ ລວມມີການຍົກເວັ້ນອາກອນລາຍຮັບ, ສິນເຊື່ອອາກອນ ເພື່ອການລົງທຶນ, ການຫັກຄ່າຫຼຸ້ຍຫ້ຽນແບບເລັ່ງລັດ ແລະ ອັດຕາອາກອນລາຍຮັບຫຼຸດຜ່ອນ. ໝວດ 29 *ອາກອນລາຍຮັບ* ເວົ້າເຖິງການລົງບັນຊີ ກ່ຽວກັບອາກອນທີ່ອີງຕາມລາຍຮັບ.

## ການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າ

24.4 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີເງິນຊ່ວຍໜູນຂອງລັດຖະບານ ຄືດັ່ງລຸ່ມນີ້ :

(ກ) ເງິນຊ່ວຍໜູນ ທີ່ບໍ່ກຳນົດໃຫ້ຜູ້ຮັບຜົນປະໂຫຍດຕ້ອງບັນລຸເງື່ອນໄຂດ້ານຜົນການດຳເນີນງານໃນອະນາຄົດ ຖືກຮັບຮູ້ລາຍການບັນຊີເປັນລາຍຮັບ ເມື່ອມີສິດທິຮັບເງິນຊ່ວຍໜູນນັ້ນ ;

(ຂ) ເງິນຊ່ວຍໜູນ ທີ່ກຳນົດໃຫ້ຜູ້ຮັບຜົນປະໂຫຍດຕ້ອງບັນລຸເງື່ອນໄຂດ້ານຜົນການດຳເນີນງານໃນອະນາຄົດ ຈະຖືກຮັບຮູ້ລາຍການບັນຊີເປັນລາຍຮັບ ກໍຕໍ່ເມື່ອວ່າໄດ້ບັນລຸເງື່ອນໄຂດ້ານຜົນການດຳເນີນງານນັ້ນເທົ່ານັ້ນ ;

(ຄ) ເງິນຊ່ວຍໜູນ ທີ່ໄດ້ຮັບກ່ອນທີ່ຈະມີເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີນັ້ນ ເປັນລາຍຮັບ ຕ້ອງຖືກຮັບຮູ້ລາຍການບັນຊີເປັນໜີ້ສິນ.

24.5 ວິສາຫະກິດຕ້ອງຕີມູນຄ່າເງິນຊ່ວຍໜູນ ຕາມມູນຄ່າຍຸຕິທຳຂອງຊັບສິນ ທີ່ໄດ້ຮັບ ຫຼື ຕ້ອງຮັບ.

## ການເປີດເຜີຍຂໍ້ມູນຂ່າວສານ

24.6 ວິສາຫະກິດ ຕ້ອງເປີດເຜີຍຂໍ້ມູນຂ່າວສານລຸ່ມນີ້ ກ່ຽວກັບເງິນຊ່ວຍໜູນຂອງລັດຖະບານ:

(ກ) ລັກສະນະເນື້ອໃນ ແລະ ຈຳນວນເງິນຊ່ວຍໜູນຂອງລັດຖະບານ ທີ່ໄດ້ຮັບຮູ້ລາຍການບັນຊີ ໃນເອກະສານລາຍງານການເງິນ ;

(ຂ) ເງື່ອນໄຂທີ່ບໍ່ໄດ້ບັນລຸ ແລະ ສິ່ງທີ່ອາດເກີດຂຶ້ນອື່ນໆ ທີ່ຕິດພັນກັບ ເງິນຊ່ວຍໜູນຂອງລັດຖະບານ ທີ່ບໍ່ໄດ້ຮັບຮູ້ລາຍການບັນຊີໃນຜົນໄດ້ຮັບ ;

(ຄ) ການຊີ້ແຈງ ກ່ຽວກັບຮູບການການຊ່ວຍເຫຼືອອື່ນໆຂອງລັດ ຊຶ່ງວິສາຫະກິດໄດ້ຮັບຜົນປະໂຫຍດໂດຍກົງ.

24.7 ເພື່ອຈຸດປະສົງໃນການເປີດເຜີຍຂໍ້ມູນຂ່າວສານທີ່ກຳນົດໄວ້ໃນວັກ 24.6(ຄ), ການຊ່ວຍເຫຼືອຂອງລັດແມ່ນມາດຕະການໜຶ່ງຂອງລັດທີ່ນຳໃຊ້ເພື່ອແນໃສ່ສະໜອງຜົນປະໂຫຍດດ້ານເສດຖະກິດສະເພາະໃຫ້ແກ່ວິສາຫະກິດ ຫຼື ວິສາຫະກິດຕ່າງໆ ທີ່

ໄດ້ຍັນລຸຕາມເງື່ອນໄຂມາດຕະຖານທີ່ໄດ້ກຳນົດໄວ້. ຕົວຢ່າງລວມມີ ຄຳປຶກສາທາງດ້ານເຕັກນິກ ຫຼື ການຕະຫຼາດ ໂດຍບໍ່ເກັບຄ່າ, ການໃຫ້ການຄ້ຳປະກັນ ແລະ ເງິນໃຫ້ກູ້ຢືມທີ່ບໍ່ມີດອກເບ້ຍ ຫຼື ດອກເບ້ຍຕ່ຳ.

| **ການສົມທຽບກັບ FRS ສຳລັບ ວທຍ** |
| --- |
| ມາດຕະຖານສະບັບນີ້ ຄືກັນກັບ FRS ສຳລັບ ວທຍ. |

# ໝວດ 25

# ຄ່າກູ້ຢືມເງິນ

## ຂອບເຂດຂອງໝວດນີ້

25.1 ໝວດດັ່ງກ່າວນີ້ ກຳນົດການລົງບັນຊີ ສຳລັບ**ຄ່າກູ້ຢືມເງິນ.** ຄ່າກູ້ຢືມເງິນ ແມ່ນດອກເບ້ຍ ແລະ ຄ່າໃຊ້ຈ່າຍອື່ນໆ ຊຶ່ງວິສາຫະກິດໄດ້ສ້າງຂຶ້ນໂດຍຕິດພັນກັບການກູ້ຢືມເງິນ. ຄ່າກູ້ຢືມເງິນລວມມີ :

(ກ) ລາຍຈ່າຍດອກເບ້ຍ.

(ຄ) ສ່ວນຜິດດ່ຽງດ້ານອັດຕາແລກປ່ຽນທີ່ກຳເນີດຈາກການກູ້ຢືມເງິນເປັນສະກຸນເງິນຕາຕ່າງປະເທດ, ສ່ວນທີ່ນຳມາປັບປຸງກັບຄ່າດອກເບ້ຍ.

## ການຮັບຮູ້ລາຍການບັນຊີ

25.2 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ຄ່າກູ້ຢືມເງິນທັງໝົດເປັນລາຍຈ່າຍ ໃນກຳໄລ ຫຼື ຂາດທຶນໃນປີທີ່ລາຍການດັ່ງກ່າວໄດ້ເກີດຂຶ້ນ.

## ການເປີດເຜີຍຂໍ້ມູນຂ່າວສານ

25.3 ວັກ 5.5(ຂ) ກຳນົດໃຫ້ເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບຄ່າໃຊ້ຈ່າຍທາງການເງິນ. ໝວດດັ່ງກ່າວນີ້ ບໍ່ໄດ້ກຳນົດໃຫ້ເປີດເຜີຍຂໍ້ມູນຂ່າວສານເພີ້ມເຕີມອື່ນໃດໆ.

| ການສົມທຽບກັບ FRS ສຳລັບ ວຫຍ | |
|---|---|
| 25.1 (ກ)<br>25.3 | ມາດຕະຖານ FRS ສຳລັບ ວນກ ນີ້ ບໍ່ນຳໃຊ້ວິທີການຄິດໄລ່ດອກເບ້ຍຕົວຈິງ. ວັກ 25.1 (ກ) ແລະ 25.3 ຖືກປັບປຸງ. |
| 25.1 (ຂ) | ມາດຕະຖານ FRS ສຳລັບ ວນກ ຮັບຮູ້ລາຍການບັນຊີ ສັນຍາເຊົ່າການເງິນ ເປັນສັນຍາເຊົ່າດຳເນີນງານ (ເບິ່ງໝວດ 20 ສັນຍາເຊົ່າ). ວັກນີ້ ຖືກຕັດອອກ. |

# ໝວດ 26

# ການຊຳລະຕາມຮຸ້ນ

***ມາດຕະຖານສະບັບນີ້ ນຳໃຊ້ ການຊຳລະຕາມຮຸ້ນ ໜ້ອຍທີ່ສຸດ.***

## ຂອບເຂດຂອງໝວດນີ້

26.1 ໝວດດັ່ງກ່າວນີ້ ກຳນົດການລົງບັນຊີ ສຳລັບ**ທຸກລາຍການເຄື່ອນໄຫວການຊຳລະຕາມຮຸ້ນ** ທີ່ລວມມີ:

(ກ) ລາຍການເຄື່ອນໄຫວ**ການຊຳລະຕາມຮຸ້ນທີ່ຈ່າຍເປັນທຶນເຈົ້າຂອງ**, ໃນນັ້ນ ວິສາຫະກິດໄດ້ສິນຄ້າ ຫຼື ການບໍລິການມາ ເປັນສິ່ງຕອບແທນສຳລັບເຄື່ອງມືການເງິນປະເພດ**ທຶນເຈົ້າຂອງ**ຂອງວິສາຫະກິດ (ຊຶ່ງໃນນັ້ນ ມີຮຸ້ນ ຫຼື ສິດທິໃນການຊື້ຮຸ້ນ) ;

(ຂ) ລາຍການເຄື່ອນໄຫວ**ການຊຳລະຕາມຮຸ້ນ ທີ່ຈ່າຍເປັນເງິນສົດ**, ໃນນັ້ນ ວິສາຫະກິດໄດ້ສິນຄ້າ ຫຼື ການບໍລິການມາ ຜ່ານການສ້າງໜີ້ສິນນຳຜູ້ສະໜອງສິນຄ້າ ຫຼື ການບໍລິການ ໃນຈຳນວນເງິນທີ່ອີງຕາມລາຄາ (ຫຼື ມູນຄ່າ) ຂອງຮຸ້ນຂອງວິສາຫະກິດ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງອື່ນໆຂອງວິສາຫະກິດ ; ແລະ

(ຄ) ລາຍການເຄື່ອນໄຫວຊຶ່ງໃນນັ້ນ ວິສາຫະກິດ ຮັບ ຫຼື ໄດ້ ສິນຄ້າ ຫຼື ການບໍລິການມາ ແລະ ຊຶ່ງເງື່ອນໄຂຂອງສັນຍາເຮັດໃຫ້ຫົວໜ່ວຍ ຫຼື ຜູ້ສະໜອງສິນຄ້າ ຫຼື ການບໍລິການດັ່ງກ່າວສາມາດເລືອກໄດ້ ລະຫວ່າງ ການທີ່ວ່າວິສາຫະກິດຈະຊຳລະລາຍການເຄື່ອນໄຫວເປັນເງິນສົດ (ຫຼື ເປັນຊັບສິນອື່ນໆ) ຫຼື ດ້ວຍການອອກເຄື່ອງມືການເງິນປະເພດທຶນເຈົ້າຂອງ.

## ການຮັບຮູ້ລາຍການບັນຊີ

26.3 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີສິນຄ້າ ຫຼື ການບໍລິການ ທີ່ໄດ້ຮັບ ຫຼື ໄດ້ຊື້ ຈາກລາຍການເຄື່ອນໄຫວການຊຳລະຕາມຮຸ້ນ ເມື່ອໄດ້ຮັບສິນຄ້າ ຫຼື ການບໍລິການ. ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ທຶນເຈົ້າຂອງ ທີ່ພົວພັນສ່ວນເພີ້ມ ຖ້າວ່າໄດ້ຮັບສິນຄ້າ ຫຼື ການບໍລິການ ຈາກລາຍການເຄື່ອນໄຫວການຊຳລະຕາມຮຸ້ນທີ່ຈ່າຍເປັນທຶນເຈົ້າຂອງ, ຫຼື ເປັນໜີ້ສິນ ຖ້າວ່າໄດ້ຊື້ສິນຄ້າ ຫຼື ການບໍລິການຈາກລາຍການເຄື່ອນໄຫວການຊຳລະຕາມຮຸ້ນທີ່ຈ່າຍເປັນເງິນສົດ.

26.4 ຖ້າວ່າສິນຄ້າ ຫຼື ການບໍລິການທີ່ໄດ້ຮັບ ຫຼື ໄດ້ຊື້ ຈາກລາຍການເຄື່ອນໄຫວການຊຳລະຕາມຮຸ້ນ ຫາກບໍ່ໄດ້ຕາມເງື່ອນໄຂການຮັບຮູ້ລາຍການບັນຊີເປັນຊັບສິນ, ວິສາຫະກິດຕ້ອງໄດ້ຮັບຮູ້ລາຍການບັນຊີລາຍການດັ່ງກ່າວ ເປັນລາຍຈ່າຍ.

## ການຕີມູນຄ່າລາຍລາຍການເຄື່ອນໄຫວການຊຳລະຕາມຮຸ້ນທີ່ຈ່າຍເປັນທຶນເຈົ້າຂອງ

### ຫຼັກການການຕີມູນຄ່າ

26.7 ສຳລັບລາຍການເຄື່ອນໄຫວການຊຳລະຕາມຮຸ້ນທີ່ຈ່າຍເປັນທຶນເຈົ້າຂອງ, ວິສາຫະກິດຕ້ອງຕີມູນຄ່າສິນຄ້າ ຫຼື ການບໍລິການທີ່ໄດ້ຮັບ ແລະ ສ່ວນເພີ້ມຂຶ້ນທີ່ກ່ຽວຂ້ອງຂອງທຶນເຈົ້າຂອງ ຕາມມູນຄ່າຍຸຕິທຳຂອງສິນຄ້າ ຫຼື ການບໍລິການທີ່ໄດ້ຮັບ, ເວັ້ນເສຍແຕ່ວ່າບໍ່ສາມາດຄາດຄະເນມູນຄ່າຍຸຕິທຳດັ່ງກ່າວຢ່າງໜ້າເຊື່ອຖືໄດ້. ຖ້າວ່າວິສາຫະກິດບໍ່ສາມາດຄາດຄະເນມູນຄ່າຍຸຕິທຳ ຂອງສິນຄ້າ ຫຼື ການບໍລິການທີ່ໄດ້ຮັບຢ່າງໜ້າເຊື່ອຖືໄດ້, ຕ້ອງໄດ້ຕີມູນຄ່າ ສິນຄ້າ ຫຼື ການບໍລິການດັ່ງກ່າວ ແລະ ສ່ວນເພີ້ມຂຶ້ນທີ່ກ່ຽວຂ້ອງຂອງທຶນເຈົ້າຂອງ ໂດຍສົມທຽບໃສ່ມູນຄ່າຍຸຕິທຳຂອງເຄື່ອງມືການເງິນປະເພດທຶນເຈົ້າຂອງທີ່ໄດ້ແບ່ງປັນໃຫ້. ເພື່ອປະຕິບັດຂໍ້ກຳນົດດັ່ງກ່າວໃສ່ລາຍການເຄື່ອນໄຫວທີ່ພາກສ່ວນອື່ນທີ່ໃຫ້ການບໍລິການຄ້າຍຄືກັນ, ວິສາຫະກິດຕ້ອງຕີມູນຄ່າຍຸຕິທຳ ຂອງການບໍລິການທີ່ໄດ້ຮັບ ສົມທຽບໃສ່ມູນຄ່າຍຸຕິທຳຂອງເຄື່ອງມືການເງິນປະເພດທຶນເຈົ້າຂອງ ທີ່ໄດ້ແຈກຢາຍ, ຍ້ອນວ່າ, ຕາມປົກກະຕິ ຈະບໍ່ສາມາດຄາດຄະເນມູນຄ່າຍຸຕິທຳຂອງການບໍລິການທີ່ໄດ້ຮັບຢ່າງໜ້າເຊື່ອຖືໄດ້.

26.8 ກ່ຽວກັບ ລາຍການເຄື່ອນໄຫວກັບພາກສ່ວນອື່ນ ທີ່ໃຫ້ການບໍລິການຄ້າຍຄືກັນ, ມູນຄ່າຍຸຕິທຳຂອງເຄື່ອງມືການເງິນປະເພດທຶນເຈົ້າຂອງ ຕ້ອງໄດ້ຕີມູນຄ່າໃນວັນທີໃຫ້ສິດ. ສຳລັບລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ບໍ່ແມ່ນພະນັກງານ, ມີ້

ການຕີມູນຄ່າແມ່ນມື້ທີ່ວິສາຫະກິດໄດ້ຮັບສິນຄ້າ ຫຼື ມື້ທີ່ຄູ່ສັນຍາໄດ້ໃຫ້ການບໍລິການ.

### ຮຸ້ນ

26.10 ວິສາຫະກິດຕ້ອງຕີມູນຄ່າຍຸຕິທຳ ຂອງຮຸ້ນ (ແລະ ສິນຄ້າ ຫຼື ການບໍລິການທີ່ພົວພັນ ທີ່ໄດ້ຮັບ) ຕາມສາມລະດັບການຕີມູນຄ່າດັ່ງລຸ່ມນີ້:

(ກ) ຖ້າຫາກ ມີລາຄາໃນຕະຫຼາດທີ່ສັງເກດໄດ້ສຳລັບເຄື່ອງມືການເງິນປະເພດທຶນເຈົ້າຂອງທີ່ໄດ້ໃຫ້, ຄວນນຳໃຊ້ລາຄາດັ່ງກ່າວນັ້ນ.

(ຂ) ຖ້າຫາກ ບໍ່ມີລາຄາໃນຕະຫຼາດທີ່ສັງເກດໄດ້, ຄວນຕີມູນຄ່າຍຸຕິທຳຂອງເຄື່ອງມືການເງິນປະເພດທຶນເຈົ້າຂອງທີ່ໄດ້ໃຫ້ໂດຍນຳໃຊ້ຂໍ້ມູນທີ່ສັງເກດເຫັນໄດ້ຂອງຕະຫຼາດ ທີ່ມີລັກສະນະສະເພາະ ຂອງວິສາຫະກິດ, ຄືດັ່ງ:

(i) ລາຍການເຄື່ອນໄຫວຫຼ້າສຸດ ໃນຮຸ້ນຂອງວິສາຫະກິດ, ຫຼື

(ii) ການປະເມີນມູນຄ່າຍຸຕິທຳ ທີ່ເປັນເອກະລາດ ຫຼ້າສຸດຂອງວິສາຫະກິດ ຫຼື ຂອງຊັບສິນຕົ້ນຕໍຂອງວິສາຫະກິດ.

(ຄ) ຖ້າຫາກ ບໍ່ມີລາຄາໃນຕະຫຼາດທີ່ສັງເກດໄດ້ ແລະ ການຕີມູນຄ່າຍຸຕິທຳຢ່າງໜ້າເຊື່ອຖືໄດ້ຕາມ ຂໍ້ (ຂ) **ປະຕິບັດບໍ່ໄດ້**, ຄວນວັດແທກມູນຄ່າຍຸຕິທຳຂອງຮຸ້ນ ດ້ວຍການນຳໃຊ້ວິທີການຕີມູນຄ່າ ທີ່ອີງຕາມຂໍ້ມູນຂອງຕະຫຼາດ ໃນຂອບເຂດທີ່ເປັນໄປໄດ້ໃນລະດັບສູງສຸດ ເພື່ອຄາດຄະເນລາຄາຂອງເຄື່ອງມືການເງິນປະເພດທຶນເຈົ້າຂອງດັ່ງກ່າວ ໃນວັນທີໃຫ້ສິດ ເມື່ອລາຍການເຄື່ອນໄຫວນັ້ນ ໄດ້ດຳເນີນຕາມເງື່ອນໄຂແກ້ງແຍ້ງປົກກະຕິ ໃນຂະນະທີ່ທັງສອງຝ່າຍມີຄວາມຮອບຮູ້ ແລະ ເຕັມໃຈໃນການແລກປ່ຽນ. ຄະນະບໍລິຫານຂອງວິສາຫະກິດນັ້ນ ຕ້ອງມີຄຳວິນິດໄສຂອງຕົນເພື່ອປະຕິບັດວິທີການປະເມີນຄ່າທີ່ແທດເໝາະກ່ວາໝູ່ ເພື່ອຈະຊອກຫາມູນຄ່າຍຸຕິທຳ. ທຸກວິທີການຕີມູນຄ່າທີ່ໄດ້ນຳໃຊ້ ຕ້ອງສອດຄ່ອງກັບວິທີວິທະຍາໃນການປະເມີນຄ່າທີ່ຖືກຮັບຮອງເອົາໂດຍທົ່ວໄປ ເພື່ອປະເມີນຄ່າເຄື່ອງມືການເງິນປະເພດທຶນເຈົ້າຂອງ.

### ການລົບລ້າງ ແລະ ການຊຳລະເງິນ

26.13 ວິສາຫະກິດຕ້ອງລົງບັນຊີການລົບລ້າງ ຫຼື ການຈ່າຍຊຳລະຂອງການຊຳລະຕາມຮຸ້ນທີ່ຈ່າຍເປັນເຄື່ອງມືທຶນເຈົ້າຂອງ ໃຫ້ຄືກັນກັບເປັນການເລັ່ງລັດໃຫ້ໄດ້ຮັບສິດ ແລະ ສະນັ້ນ ຕ້ອງໄດ້ຮັບຮູ້ລາຍການບັນຊີຈຳນວນເງິນຈາກການບໍລິການ ທີ່ໄດ້ຮັບໃນທັນທີ ທີ່ຈະຕ້ອງຮັບຮູ້ລາຍການບັນຊີຕະຫຼອດໄລຍະເວລາໃຫ້ໄດ້ຮັບສິດທີ່ເຫຼືອຢູ່.

## ລາຍການເຄື່ອນໄຫວການຊຳລະຕາມຮຸ້ນທີ່ຈ່າຍເປັນເງິນສົດ

26.14 ສຳລັບ ລາຍການເຄື່ອນໄຫວການຊຳລະຕາມຮຸ້ນທີ່ຈ່າຍເປັນເງິນສົດ, ວິສາຫະກິດຕ້ອງຕີມູນຄ່າສິນຄ້າ ຫຼື ການບໍລິການທີ່ໄດ້ມາ ແລະໜີ້ສິນທີ່ເກີດຂຶ້ນ ຕາມມູນຄ່າຍຸຕິທຳຂອງໜີ້ສິນດັ່ງກ່າວ. ວິສາຫະກິດຕ້ອງຕີມູນຄ່າຍຸຕິທຳຂອງໜີ້ສິນຄືນໃໝ່ ໃນ**ມື້ລາຍງານ**ແຕ່ລະຄັ້ງ ແລະໃນມື້ຊຳລະເງິນ ຈົນກ່ວາຈະມີການຊຳລະໜີ້ສິນດັ່ງກ່າວໝົດ. ສຳລັບສ່ວນປ່ຽນແປງດ້ານມູນຄ່າຍຸຕິທຳ ໃຫ້ຮັບຮູ້ລາຍການບັນຊີນັ້ນ ໃນກຳໄລ ຫຼື ຂາດທຶນ ຂອງປີນັ້ນ.

## ລາຍການເຄື່ອນໄຫວການຊຳລະຕາມຮຸ້ນໂດຍມີທາງເລືອກໃນການຊຳລະເປັນເງິນສົດ

26.15 ບາງລາຍການເຄື່ອນໄຫວການຊຳລະຕາມຮຸ້ນ ໃຫ້ວິສາຫະກິດ ຫຼື ຄູ່ສັນຍາ ເລືອກໃຊ້ການຊຳລະລາຍການເຄື່ອນໄຫວເປັນເງິນສົດ (ຫຼື ຊັບສິນອື່ນໆ) ຫຼື ດ້ວຍການໂອນເຄື່ອງມືການເງິນປະເພດທຶນເຈົ້າຂອງ. ໃນກໍລະນີໃດໜຶ່ງດັ່ງກ່າວ, ວິສາຫະກິດຕ້ອງລົງບັນຊີລາຍການເຄື່ອນໄຫວ ເປັນລາຍການເຄື່ອນໄຫວການຊຳລະຕາມຮຸ້ນທີ່ຈ່າຍເປັນເງິນສົດ ເວັ້ນເສຍແຕ່ວ່າ :

(ກ) ຜ່ານມາວິສາຫະກິດເຄີຍດຳເນີນການຊຳລະໂດຍການອອກຈຳໜ່າຍເຄື່ອງມືການເງິນປະເພດທຶນເຈົ້າຂອງ, ຫຼື

(ຂ) ສິດທິ ຊື້-ຂາຍຮຸ້ນ ບໍ່ມີເນື້ອແທ້ທຸລະກິດ, ຍ້ອນວ່າຈຳນວນເງິນຊຳລະເປັນເງິນສົດ ບໍ່ມີສາຍພົວພັນໃດໆໝົດກັບມູນຄ່າຍຸຕິທຳ ຂອງເຄື່ອງມືການເງິນປະເພດທຶນເຈົ້າຂອງ ແລະ ອາດເປັນໄປໄດ້ທີ່ຈະມີມູນຄ່າຕ່ຳກ່ວາ.

ໃນກໍລະນີທີ່ໄດ້ຊີ້ແຈງໃນຂໍ້ (ກ) ແລະ (ຂ), ວິສາຫະກິດຕ້ອງລົງບັນຊີລາຍການເຄື່ອນໄຫວນັ້ນ ເປັນລາຍການເຄື່ອນໄຫວການຊຳລະຕາມຮຸ້ນທີ່ຈ່າຍເປັນທຶນເຈົ້າຂອງ ໃຫ້ຖືກຕ້ອງຕາມວັກ 26.7 ຫາ 26.13.

## ການເປີດເຜີຍຂໍ້ມູນຂ່າວສານ

26.18 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ ກ່ຽວກັບລັກສະນະເນື້ອໃນ ແລະ ຂອບເຂດຂອງສັນຍາການຊຳລະຕາມຮຸ້ນ ທີ່ມີຜົນບັງຄັບໃຊ້ໃນປີ :

(ກ) ຄຳອະທິບາຍ ກ່ຽວກັບແຕ່ລະປະເພດສັນຍາການຊຳລະຕາມຮຸ້ນທີ່ມີໃນເວລາໃດໜຶ່ງໃນປີ, ລວມທັງ ຂໍ້ກຳນົດ ແລະ ເງື່ອນໄຂລວມຂອງສັນຍາດັ່ງກ່າວ, ເຊັ່ນຂໍ້ກຳນົດ ກ່ຽວກັບການໄດ້ຮັບສິດ, ໄລຍະເວລາສູງສຸດຂອງສິດທິຊື້ຮຸ້ນທີ່ໄດ້ອອກໃຫ້ ແລະ ແບບວິທີການຊຳລະ (ເຊັ່ນເປັນເງິນສົດ ຫຼື ເປັນເຄື່ອງມືປະເພດທຶນເຈົ້າຂອງ). ວິສາຫະກິດ ທີ່ໄດ້ເຊັນສັນຍາຫຼາຍສະບັບກ່ຽວກັບການຊຳລະຕາມຮຸ້ນ ທີ່ມີລັກສະນະຄ້າຍຄືກັນຢ່າງຫຼວງຫຼາຍ ອາດລວມຂໍ້ມູນຂ່າວສານດັ່ງກ່າວເຂົ້າກັນໄດ້.

(ຂ) ຈຳນວນ ແລະ ລາຄາ ສິດທິໃນການຊື້ຮຸ້ນ ທີ່ໄດ້ສະເລ່ຍຕາມນ້ຳໜັກສຳລັບແຕ່ລະກຸ່ມສິດທິໃນການຊື້ຮຸ້ນດັ່ງລຸ່ມນີ້:

(i) ທີ່ພວມຍົກຍອດມາໃນຕົ້ນປີ.

(ii) ທີ່ໄດ້ອອກໃຫ້ໃນປີ.

(iii) ຊຶ່ງໄດ້ເສຍສິດໃນປີ.

(iv) ທີ່ໄດ້ໃຊ້ສິດທິໃນປີ.

(iv) ທີ່ໄດ້ໝົດກຳນົດເວລາໃນປີ.

(v) ທີ່ພວມຍົກຍອດໄປໃນທ້າຍປີ.

(vii) ຊຶ່ງຍັງສາມາດໃຊ້ສິດທິໃນປີ.

26.19 ສຳລັບ ສັນຍາການຊຳລະຕາມຮຸ້ນ ທີ່ຈ່າຍເປັນເຄື່ອງມືທຶນເຈົ້າຂອງ, ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບແບບວິທີທີ່ຕີນໄດ້ຕີມູນຄ່າຍຸຕິທຳຂອງສິນຄ້າ ຫຼື ການບໍລິການທີ່ໄດ້ຮັບ ຫຼື ມູນຄ່າຂອງເຄື່ອງມືການເງິນປະເພດທຶນເຈົ້າຂອງທີ່ໄດ້ອອກໃຫ້. ຖ້າຫາກໄດ້ນຳໃຊ້ວິທີວິທະຍາໃດໜຶ່ງ ກ່ຽວກັບການຕີມູນຄ່າ, ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບວິທີການນັ້ນ ແລະ ເຫດຜົນໃນການເລືອກໃຊ້.

26.20 ສຳລັບສັນຍາການຊຳລະຕາມຮຸ້ນທີ່ຈ່າຍເປັນເງິນສົດ, ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບວິທີການຕີມູນຄ່າໜີ້ສິນນັ້ນ.

26.21 ສຳລັບສັນຍາການຊຳລະຕາມຮຸ້ນ ທີ່ໄດ້ປັບປຸງໃນປີ, ວິສາຫະກິດຕ້ອງໄດ້ເປີດເຜີຍຂໍ້ມູນຂ່າວສານອະທິບາຍ ກ່ຽວກັບການປັບປຸງດັ່ງກ່າວ.

26.23 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ ກ່ຽວກັບ ຜົນກະທົບຂອງລາຍການເຄື່ອນໄຫວການຊຳລະຕາມຮຸ້ນ ໃນກຳໄລ ຫຼື ຂາດທຶນຂອງວິສາຫະກິດ ໃນປີນັ້ນ ແລະ ໃນຖານະການເງິນຂອງຕົນ :

(ກ) ລວມຍອດລາຍຈ່າຍທີ່ໄດ້ຮັບຮູ້ລາຍການບັນຊີໃນກຳໄລ ຫຼື ຂາດທຶນ ໃນປີ.

(ຂ) ລວມຍອດມູນຄ່າໃນບັນຊີຂອງໜີ້ສິນທີ່ໄດ້ເກີດຂຶ້ນຈາກລາຍການເຄື່ອນໄຫວການຊຳລະຕາມຮຸ້ນໃນທ້າຍຮອບເວລາ.

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| ໝວດ 26 | ປັດຈຸບັນ, ວິສາຫະກິດຂອງລາວ ບໍ່ໄດ້ໃຫ້ສິດແກ່ພະນັກງານຕົນ ໃນການໄດ້ຮັບການຊຳລະເງິນສົດໃນ ອະນາຄົດ ດ້ວຍການໃຫ້ສິດຕໍ່ຮຸ້ນ ທີ່ສາມາດໄຖ່ຖອນຄືນໄດ້ ແຕ່ສິ່ງນີ້ເປັນໄປໄດ້ ສຳລັບບໍລິສັດໃນກຸ່ມຕ່າງ ປະເທດ. ຂໍ້ກຳນົດ ເຫຼົ່ານີ້ ສາມາດຖືກນຳໃຊ້ ເພື່ອສ້າງເອກະສານລາຍງານການເງິນລວມກິດຈະການ ເມື່ອ ບໍລິສັດແມ່ລາວ ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມຕ່າງປະເທດ. ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS ສຳ ລັບ ວທຍ ຢ່າງເຕັມສ່ວນ. ວັກກ່ຽວກັບພະນັກງານ ຖືກຕັດອອກ ຫຼື ປັບປຸງ. |
| 26.8<br>26.9 | ວນກ ບໍ່ນຳໃຊ້ ລາຍການເຄື່ອນໄຫວການຊຳລະຕາມຮຸ້ນ ນຳພະນັກງານ. ວັກເຫຼົ່ານີ້ ຖືກປັບປຸງ ຫຼື ຕັດອອກ. |
| 26.10(c) | ສິດທິໃນການເພີ້ມຄ່າຂອງຮຸ້ນໂດຍທາງອ້ອມ ບໍ່ຖືກນຳໃຊ້ຕໍ່ ວນກ. ວັກນີ້ ຖືກປັບປຸງ. |
| 26.11-26.12 | ຖ້າ ວນກ ນຳໃຊ້ ສິດທິໃນການຊື້ຮຸ້ນ ແລະ ສິດທິທີ່ຈະໄດ້ຮັບປະໂຫຍດຈາກລາຄາຮຸ້ນທີ່ເພີ້ມຂຶ້ນ ທີ່ຊຳລະ ເປັນ ເຄື່ອງມືທຶນເຈົ້າຂອງ, ວິສາຫະກິດດັ່ງກ່າວ ຖືກຈັດປະເພດ ເປັນ “ວິສາຫະກິດຂະໜາດໃຫຍ່” (ເບິ່ງ ໝວດ 11 ເຄື່ອງມືການເງິນພື້ນຖານ). ວັກເຫຼົ່ານີ້ ຖືກຕັດອອກ. |
| 26.16-26.17<br>26.22 | ວນກ ບໍ່ນຳໃຊ້ ລະບອບກຸ່ມບໍລິສັດ. ວັກເຫຼົ່ານີ້ ຖືກຕັດອອກ. |

# ໝວດ 27

# ການສູນເສຍມູນຄ່າຂອງຊັບສິນ

## ຈຸດປະສົງ ແລະ ຂອບເຂດ

27.1 **ຂາດທຶນຈາກການສູນເສຍມູນຄ່າ**ເກີດຂຶ້ນ ເມື່ອ**ມູນຄ່າໃນບັນຊີ**ຂອງຊັບສິນໃດໜຶ່ງເກີນ**ມູນຄ່າທີ່ສາມາດເກັບຄືນໄດ້**ຂອງຊັບສິນດັ່ງກ່າວ. ໝວດດັ່ງກ່າວນີ້ ຕ້ອງນຳໃຊ້ສຳລັບການລົງບັນຊີກ່ຽວກັບການສູນເສຍມູນຄ່າຂອງຊັບສິນທັງໝົດ ເວັ້ນເສຍສິ່ງຕໍ່ໄປລຸ່ມນີ້, ຊຶ່ງໝວດອື່ນໆຂອງມາດຕະຖານສະບັບນີ້ ວາງຂໍ້ກຳນົດ ກ່ຽວກັບການສູນເສຍມູນຄ່າ:

(ຂ) ຊັບສິນທີ່ກຳເນີດຈາກ**ຜົນປະໂຫຍດຂອງພະນັກງານ** (ເບິ່ງໝວດ 28 *ຜົນປະໂຫຍດຂອງພະນັກງານ*) ;

(ຄ) ຊັບສິນການເງິນໃນຂອບເຂດການຈັດຕັ້ງປະຕິບັດໝວດ 11 *ເຄື່ອງມືການເງິນພື້ນຖານ*;

(ຈ) ຊັບສິນຊີວະພາບ ທີ່ຕິດພັນກັບ ກິດຈະກຳກະສິກຳ ແລະ ຖືກຕີມູນຄ່າຕາມມູນຄ່າຍຸຕິທຳ ຫັກຕົ້ນທຶນຄາດຄະເນໃນການຂາຍ (ເບິ່ງໝວດ 34 *ກິດຈະກຳພິເສດ*).

## ການສູນເສຍມູນຄ່າເຄື່ອງໃນສາງ

### ລາຄາຂາຍ ຫັກຕົ້ນທຶນໃນການຜະລິດສິນຄ້າໃຫ້ສຳເລັດຮູບ ແລະ ໃນການຂາຍ

27.2 ໃນ**ມື້ລາຍງານ**ແຕ່ລະຄັ້ງ ວິສາຫະກິດຕ້ອງປະເມີນເບິ່ງວ່າ ເຄື່ອງໃນສາງໄດ້ສູນເສຍມູນຄ່າລົງ ຫຼືບໍ່. ວິສາຫະກິດຕ້ອງປະເມີນຜົນດັ່ງກ່າວ ໂດຍສົມທຽບ**ມູນຄ່າໃນບັນຊີ**ຂອງແຕ່ລະລາຍການຂອງເຄື່ອງໃນສາງ (ຫຼື ກຸ່ມລາຍການທີ່ຄ້າຍຄືກັນ–ເບິ່ງ ວັກ 27.3) ກັບລາຄາຂາຍ ຫັກຕົ້ນທຶນໃນການຜະລິດສິນຄ້າໃຫ້ສຳເລັດຮູບ ແລະ ໃນການຂາຍ. ຖ້າວ່າ ລາຍການໃດໜຶ່ງຂອງເຄື່ອງໃນສາງ (ຫຼື ກຸ່ມລາຍການທີ່ຄ້າຍຄືກັນ) ຫາກສູນເສຍມູນຄ່າ, ວິສາຫະກິດຕ້ອງຫຼຸດມູນຄ່າໃນບັນຊີຂອງເຄື່ອງໃນສາງ (ຫຼື ກຸ່ມລາຍການ) ດັ່ງກ່າວລົງໃຫ້ເທົ່າກັບລາຄາຂາຍຫັກຕົ້ນທຶນໃນການຜະລິດເຖິງຂອດສຳເລັດຮູບ ແລະ ໃນການຂາຍ. ການຫຼຸດລົງດັ່ງກ່າວ ແມ່ນຂາດທຶນຈາກການສູນເສຍມູນຄ່າຊຶ່ງຕ້ອງຮັບຮູ້ລາຍການບັນຊີໃນກຳໄລ ຫຼື ຂາດທຶນໃນທັນທີ.

27.3 ຖ້າຫາກໃນ**ພາກປະຕິບັດບໍ່ສາມາດ**ກຳນົດລາຄາຂາຍ ຫັກຕົ້ນທຶນໃນການຜະລິດສິນຄ້າໃຫ້ສຳເລັດຮູບ ແລະ ໃນການຂາຍສຳລັບເຄື່ອງໃນສາງ ເປັນແຕ່ລະລາຍການ, ວິສາຫະກິດອາດເຕົ້າໂຮມເປັນກຸ່ມບັນດາລາຍການເຄື່ອງໃນສາງໃນສາຍຜະລິດຕະພັນດຽວກັນ ຊຶ່ງມີເປົ້າໝາຍ ຫຼື ການນຳໃຊ້ສຸດທ້າຍຄ້າຍຄືກັນ, ແລະ ຖືກຜະລິດ ແລະນຳອອກສູ່ຕະຫຼາດໃນເຂດພູມສາດອັນດຽວກັນ ເພື່ອຈຸດປະສົງຄາດຄະເນການສູນເສຍມູນຄ່າ.

### ການປັ້ນກັບລາຍການການສູນເສຍມູນຄ່າ

27.4 ວິສາຫະກິດຕ້ອງດຳເນີນການປະເມີນຜົນຄັ້ງໃໝ່ ກ່ຽວກັບລາຄາຂາຍ ຫັກຕົ້ນທຶນໃນການຜະລິດສິນຄ້າໃຫ້ສຳເລັດຮູບ ແລະ ໃນການຂາຍອອກ ໃນມື້ລາຍງານຕາມຫຼັງແຕ່ລະຄັ້ງ. ຖ້າວ່າສະພາບການ ທີ່ຜ່ານມາພາໃຫ້ມີການສູນເສຍມູນຄ່າເຄື່ອງໃນສາງນັ້ນບໍ່ມີອີກແລ້ວ ຫຼື ຖ້າມີຫຼັກຖານຍັ້ງຍືນຈະແຈ້ງວ່າມີການເພີ່ມຂຶ້ນຂອງລາຄາຂາຍ ຫັກຕົ້ນໃນການຜະລິດສິນຄ້າໃຫ້ສຳເລັດຮູບ ແລະ ໃນການຂາຍອອກ ເນື່ອງຈາກການປ່ຽນແປງຂອງສະພາບການດ້ານເສດຖະກິດ, ວິສາຫະກິດຕ້ອງດຳເນີນການປັ້ນກັບລາຍການຈຳນວນເງິນການສູນເສຍມູນຄ່າ (ໝາຍຄວາມວ່າການປັ້ນກັບລາຍການຖືກຈຳກັດໃນຂອບເຂດຈຳນວນເງິນຂາດທຶນຈາກການສູນເສຍມູນຄ່າເບື້ອງຕົ້ນ) ສະນັ້ນມູນຄ່າໃນບັນຊີໃໝ່ ແມ່ນມູນຄ່າທີ່ຕ່ຳກ່ວາໝູ່ລະຫວ່າງຕົ້ນທຶນ ແລະ ລາຄາຂາຍ ຫັກຕົ້ນທຶນໃນການຜະລິດສິນຄ້າໃຫ້ສຳເລັດຮູບ ແລະ ໃນການຂາຍອອກ ທີ່ໄດ້ປັບປຸງ.

## ຫຼັກການລວມ

27.5 ຖ້າວ່າ, ແລະ ພຽງແຕ່ຖ້າວ່າ, ມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນໃດໜຶ່ງ ຫາກຕ່ຳກ່ວາມູນຄ່າໃນບັນຊີ, ວິສາຫະກິດຕ້ອງຫຼຸດມູນຄ່າໃນບັນຊີຂອງຊັບສິນລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບຄືນໄດ້. ການຫຼຸດລົງດັ່ງກ່າວ ແມ່ນຂາດທຶນຈາກການສູນເສຍມູນຄ່າ. ວັກ 27.11 ຫາ 27.19 ໃຫ້ຄຳແນະນຳກ່ຽວກັບການຕີມູນຄ່າ ຈຳນວນເງິນທີ່ສາມາດເກັບຄືນໄດ້.

27.6 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີຂາດທຶນຈາກການສູນເສຍມູນຄ່າໃນກຳໄລ ຫຼື ຂາດທຶນ ໃນທັນທີ.

## ຕົວຊີ້ບອກ ກ່ຽວກັບການສູນເສຍມູນຄ່າ

27.7 ວິສາຫະກິດຕ້ອງປະເມີນຜົນເບິ່ງວ່າ ໃນມື້ລາຍງານແຕ່ລະຄັ້ງມີການຊີ້ບອກວ່າຊັບສິນໃດໜຶ່ງອາດສູນເສຍມູນຄ່າລົງ ຫຼືບໍ່. ຖ້າມີການຊີ້ບອກຄືແນວນັ້ນ, ວິສາຫະກິດຕ້ອງຄາດຄະເນມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ. ຖ້າຫາກບໍ່ມີການຊີ້ບອກດ້ານການສູນເສຍມູນຄ່າ, ບໍ່ຈຳເປັນຕ້ອງຄາດຄະເນມູນຄ່າທີ່ສາມາດເກັບຄືນໄດ້.

27.9 ໃນການປະເມີນຜົນເບິ່ງວ່າມີການຊີ້ບອກວ່າຊັບສິນໃດໜຶ່ງໄດ້ສູນເສຍມູນຄ່າລົງຫຼືບໍ່, ຢ່າງໜ້ອຍ ວິສາຫະກິດຕ້ອງພິຈາລະນາການຊີ້ບອກລຸ່ມນີ້ :

*ແຫຼ່ງຂໍ້ມູນຂ່າວສານພາຍນອກ*

(ກ) ໃນປີ, ມູນຄ່າໃນຕະຫຼາດຂອງຊັບສິນໃດໜຶ່ງ ໄດ້ຫຼຸດລົງຫຼາຍກ່ວາຈາກການທີ່ໄດ້ຄາດຄະເນໄວ້ຊຶ່ງເປັນຜົນເນື່ອງຂອງການເວລາທີ່ຜ່ານໄປ ຫຼື ການນຳໃຊ້ຢ່າງເປັນປົກກະຕິ.

(ຂ) ການປ່ຽນແປງທີ່ສຳຄັນ, ຊຶ່ງມີຜົນກະທົບທາງລົບຕໍ່ວິສາຫະກິດ, ໄດ້ເກີດຂຶ້ນໃນປີ ຫຼື ຈະເກີດຂຶ້ນໃນອະນາຄົດອັນໃກ້, ໃນສິ່ງແວດລ້ອມດ້ານເຕັກໂນໂລຊີ, ເສດຖະກິດ ຫຼື ກົດໝາຍ ຫຼື ຕະຫຼາດ ຊຶ່ງວິສາຫະກິດດຳເນີນກິດຈະການຢູ່ ຫຼື ໃນຕະຫຼາດທີ່ສະໜອງຊັບສິນນັ້ນ.

(ງ) ມູນຄ່າໃນບັນຊີຂອງຊັບສິນສຸດທິຂອງວິສາຫະກິດ ສູງກ່ວາມູນຄ່າຍຸຕິທຳຄາດຄະເນຂອງວິສາຫະກິດ ໂດຍລວມ (ອາດໄດ້ມີການຄາດຄະເນຄືແນວນັ້ນ, ເຊັ່ນ ໃນກອບຂອງຄວາມເປັນໄປໄດ້ໃນການຂາຍພາກສ່ວນໜຶ່ງ ຫຼື ວິສາຫະກິດນັ້ນທັງໝົດ).

*ແຫຼ່ງຂໍ້ມູນຂ່າວສານພາຍໃນ*

(ຈ) ມີຫຼັກຖານຢັ້ງຢືນ ກ່ຽວກັບພາວະພົ້ນສະໄໝ ຫຼື ການຊຸດໂຊມລົງຕົວຈິງຂອງຊັບສິນໃດໜຶ່ງ.

(ສ) ການປ່ຽນແປງຫຼາຍ ທີ່ມີຜົນກະທົບທາງລົບຕໍ່ວິສາຫະກິດ ໄດ້ເກີດຂຶ້ນໃນປີ, ຫຼື ຄາດວ່າຈະເກີດຂຶ້ນໃນອະນາຄົດອັນໃກ້, ໃນຂອບເຂດທີ່ ຫຼື ຮູບແບບທີ່ຊັບສິນໃດໜຶ່ງ ຖືກນຳໃຊ້ ຫຼື ຄາດວ່າຈະນຳໃຊ້. ການປ່ຽນແປງດັ່ງກ່າວ ລວມມີການຢຸດຕິນຳໃຊ້ຊັບສິນ, ແຜນການຍົກເລີກກິດຈະການ ຫຼື ການປັບປຸງໂຄງສ້າງຂອງກິດຈະການຄືນໃໝ່ບ່ອນທີ່ຄຸ້ມຄອງຊັບສິນ, ແຜນການສະສາງຊັບສິນອອກກ່ອນມື້ທີ່ກຳນົດໄວ້ກ່ອນນັ້ນ ແລະ ການປະເມີນຜົນຄືນໃໝ່ອາຍຸການນຳໃຊ້ຊັບສິນໃຫ້ຮູ້ແນ່ນອນ ແທນທີ່ການບໍ່ມີຂອບເຂດ.

(ຊ) ມີຫຼັກຖານຢັ້ງຢືນ ຈາກການລາຍງານພາຍໃນ ທີ່ຊີ້ບອກວ່າຜົນການດຳເນີນງານດ້ານເສດຖະກິດຂອງຊັບສິນໃດໜຶ່ງ ມີລັກສະນະຫຼຸດລົງ ຫຼື ຈະຫຼຸດລົງ ຫຼາຍກ່ວາທີ່ຄາດໄວ້. ໃນກໍລະນີດັ່ງກ່າວ, ຜົນການດຳເນີນງານດ້ານເສດຖະກິດ ປະກອບດ້ວຍຜົນໄດ້ຮັບໃນການທຸລະກິດ ແລະ ກະແສເງິນສົດ.

27.10 ຖ້າມີການຊີ້ບອກວ່າຊັບສິນໃດໜຶ່ງອາດສູນເສຍມູນຄ່າລົງໄດ້, ສິ່ງນີ້ອາດຊີ້ບອກວ່າວິສາຫະກິດຕ້ອງເບິ່ງຄືນອາຍຸການນຳໃຊ້ທີ່ຍັງເຫຼືອຂອງຊັບສິນ, ວິທີ**ການຫັກຄ່າຫຼຸ້ຍຫ້ຽນ** ຂອງຊັບສິນ ແລະ ປັບປຸງຕາມໝວດຂອງມາດຕະຖານສະບັບນີ້ ທີ່ມີຜົນບັງຄັບໃຊ້ຕໍ່ຊັບສິນ (ເຊັ່ນ ໝວດ 17 *ຊັບສິນບັດຄົງທີ່ມີຕົວຕົນ* ແລະໝວດ 18 *ຊັບສິນບັດຄົງທີ່ບໍ່ມີຕົວຕົນ ທີ່ບໍ່ແມ່ນຄ່ານິຍົມ*), ເຖິງແມ່ນວ່າບໍ່ໄດ້ມີຂາດທຶນຈາກການສູນເສຍມູນຄ່າຂອງຊັບສິນດັ່ງກ່າວກໍຕາມ.

## ການຕີມູນຄ່າທີ່ສາມາດເກັບຄືນໄດ້

27.11 ມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນໃດໜຶ່ງ ແມ່ນມູນຄ່າທີ່ສູງກ່ວາໝູ່ ລະຫວ່າງ **ມູນຄ່າຍຸຕິທຳລົບຕົ້ນທຶນຂາຍ** ແລະ

**ມູນຄ່າຈາກການນຳໃຊ້.**

27.12 ບໍ່ຈຳເປັນສະເໝີໄປທີ່ຈະຊອກຫາທັງມູນຄ່າຍຸຕິທຳລົບຕົ້ນທຶນຂາຍ ແລະ ມູນຄ່າຈາກການນຳໃຊ້ຊັບສິນໃດໜຶ່ງ. ຖ້າວ່າ ລາຍການໃດໜຶ່ງຂອງຈຳນວນດັ່ງກ່າວຫາກສູງກ່ວາມູນຄ່າໃນບັນຊີຂອງຊັບສິນ, ຊັບສິນນັ້ນບໍ່ໄດ້ສູນເສຍມູນຄ່າ ແລະ ບໍ່ຈຳເປັນຕ້ອງໄດ້ຄາດຄະເນມູນຄ່າອື່ນອີກ.

27.13 ຖ້າບໍ່ມີເຫດຜົນໃດໆ ທີ່ຈະເຊື່ອວ່າມູນຄ່າຈາກການນຳໃຊ້ ຂອງຊັບສິນໃດໜຶ່ງເກີນມູນຄ່າຍຸຕິທຳລົບຕົ້ນທຶນຂາຍ ເປັນເງິນຈຳນວນຫຼາຍ, ສາມາດນຳໃຊ້ມູນຄ່າຍຸຕິທຳລົບຕົ້ນທຶນຂາຍ ຂອງຊັບສິນນັ້ນ ເປັນມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນດັ່ງກ່າວ. ສິ່ງນີ້ມັກເກີດຂຶ້ນກັບຊັບສິນໃດໜຶ່ງທີ່ຖືກຮັກສາໄວ້ເພື່ອຂາຍອອກ.

## ມູນຄ່າຍຸຕິທຳລົບຕົ້ນທຶນຂາຍ

27.14 ມູນຄ່າຍຸຕິທຳລົບຕົ້ນທຶນຂາຍ ແມ່ນຈຳນວນເງິນທີ່ສາມາດໄດ້ຮັບຈາກການຂາຍຊັບສິນໃດໜຶ່ງ ໃນລາຍການເຄື່ອນໄຫວ ທີ່ໄດ້ດຳເນີນຕາມເງື່ອນໄຂແກ້ງແຍ້ງປົກກະຕິ ໃນຂະນະທີ່ທັງສອງຝ່າຍມີຄວາມຮອບຮູ້ ແລະ ເຕັມໃຈໃນການແລກປ່ຽນ, ຫັກຕົ້ນທຶນໃນການຂາຍສະສາງອອກ. ຫຼັກຖານທີ່ດີທີ່ສຸດ ກ່ຽວກັບມູນຄ່າຍຸຕິທຳລົບຕົ້ນທຶນຂາຍ ແມ່ນລາຄາໃນສັນຍາຂາຍທີ່ເພີກຖອນບໍ່ໄດ້ ທີ່ໄດ້ເຊັນໃນລາຍການເຄື່ອນໄຫວ ທີ່ໄດ້ດຳເນີນຕາມເງື່ອນໄຂແກ້ງແຍ້ງປົກກະຕິ ໃນຂະນະທີ່ທັງສອງຝ່າຍມີຄວາມຮອບຮູ້ ແລະ ເຕັມໃຈໃນການແລກປ່ຽນ. ຖ້າຫາກບໍ່ມີສັນຍາຂາຍທີ່ເພີກຖອນບໍ່ໄດ້ ຫຼື ບໍ່ມີຕະຫຼາດທີ່ມີການເຄື່ອນໄຫວປົກກະຕິ ສຳລັບຊັບສິນໃດໜຶ່ງ, ມູນຄ່າຍຸຕິທຳລົບຕົ້ນທຶນຂາຍ ຢູ່ບົນພື້ນຖານຂໍ້ມູນຂ່າວສານທີ່ດີທີ່ສຸດທີ່ມີ ເພື່ອສ່ອງແສງເຖິງຈຳນວນເງິນ ຊຶ່ງວິສາຫະກິດອາດຈະໄດ້ຮັບ, ໃນມື້ລາຍງານ, ຈາກການຂາຍສະສາງຊັບສິນອອກ ໃນ ລາຍການເຄື່ອນໄຫວ ທີ່ໄດ້ດຳເນີນຕາມເງື່ອນໄຂແກ້ງແຍ້ງປົກກະຕິ ໃນຂະນະທີ່ທັງສອງຝ່າຍມີຄວາມຮອບຮູ້ ແລະ ເຕັມ ໃຈໃນການແລກປ່ຽນ, ພາຍຫຼັງໄດ້ຫັກຕົ້ນໃນການຂາຍສະສາງອອກ. ເພື່ອຄິດໄລ່ຈຳນວນເງິນດັ່ງກ່າວ, ວິສາຫະກິດຕ້ອງ ພິຈາລະນາເຖິງຜົນໄດ້ຮັບຂອງລາຍການເຄື່ອນໄຫວທີ່ຫາກໍ່ເກີດຂຶ້ນ ສຳລັບຊັບສິນຄ້າຍຄືກັນໃນຂະແໜງການອັນດຽວກັນ.

## ມູນຄ່າຈາກການນຳໃຊ້

27.15 ມູນຄ່າຈາກການນຳໃຊ້ ແມ່ນຈຳນວນເງິນຂອງກະແສເງິນສົດໃນອະນາຄົດທີ່ຄາດຫວັງຈະໄດ້ຮັບຈາກການນຳໃຊ້ຊັບສິນໃດ ໜຶ່ງ. ການຄິດໄລ່ ປະກອບມີການຄາດຄະເນກະແສຮັບ ແລະ ຈ່າຍເງິນສົດ ທີ່ຈະໄດ້ມາຈາກການນຳໃຊ້ຊັບສິນ ຢ່າງຕໍ່ເນື່ອງ ແລະ ຈາກມີການຂາຍສະສາງອອກໃນທີ່ສຸດ.

27.16 ການຄິດໄລ່ມູນຄ່າຈາກການນຳໃຊ້ຊັບສິນໃດໜຶ່ງ ຕ້ອງສ່ອງແສງເຖິງອົງປະກອບດັ່ງລຸ່ມນີ້ :

(ກ) ການຄາດຄະເນກະແສເງິນສົດໃນອະນາຄົດຊຶ່ງວິສາຫະກິດຄາດວ່າຈະໄດ້ຮັບຈາກຊັບສິນ.

(ຂ) ການຄາດຫວັງ ກ່ຽວກັບການຜັນແປທີ່ເປັນໄປໄດ້ ກ່ຽວກັບຈຳນວນເງິນ ຂອງກະແສເງິນສົດດັ່ງກ່າວໃນອະນາຄົດ.

(ງ) ລາຄາທີ່ໄດ້ຄຳນຶງເຖິງຄວາມບໍ່ແນ່ນອນທີ່ສືບເນື່ອງມາຈາກຊັບສິນ.

(ຈ) ປັດໄຈອື່ນໆ ເຊັ່ນ ພາວະບໍ່ຄ່ອງຕົວ ຊຶ່ງຜູ້ເຂົ້າຮ່ວມໃນຕະຫຼາດຈະສ່ອງແສງໃນການກຳນົດລາຄາກະແສເງິນສົດ ໃນ ອະນາຄົດ ຊຶ່ງວິສາຫະກິດຄາດວ່າຈະໄດ້ຮັບຈາກຊັບສິນ.

27.17 ໃນການປະເມີນມູນຄ່າຈາກການນຳໃຊ້, ການຄາດຄະເນກະແສເງິນສົດໃນອະນາຄົດ ຕ້ອງລວມມີ :

(ກ) ການຄາດຄະເນກະແສຮັບເງິນສົດໃນອະນາຄົດ ຈາກການນຳໃຊ້ຊັບສິນຢ່າງຕໍ່ເນື່ອງ.

(ຂ) ການຄາດຄະເນກະແສຈ່າຍເງິນສົດທີ່ເກີດຂຶ້ນໂດຍຈຳເປັນ ເພື່ອສ້າງກະແສຮັບເງິນສົດອັນເນື່ອງຈາກການນຳໃຊ້ຊັບ ສິນນັ້ນຢ່າງຕໍ່ເນື່ອງ (ລວມທັງກະແສຈ່າຍເງິນສົດ ເພື່ອກະກຽມຊັບສິນນັ້ນ ສຳລັບການນຳໃຊ້) ແລະ ທີ່ສາມາດ ກ່ຽວຂ້ອງໂດຍກົງ, ຫຼື ຈັດແບ່ງໃຫ້ກັບຊັບສິນບົນພື້ນຖານທີ່ສົມເຫດສົມຜົນ ແລະ ສະໝ່ຳສະເໝີໄດ້.

(ຄ) ກະແສເງິນສົດສຸດທິ, ຖ້າມີ, ທີ່ຄາດວ່າຈະໄດ້ຮັບ (ຫຼື ໄດ້ຈ່າຍ) ເວລາຂາຍສະສາງຊັບສິນນັ້ນອອກໃນຕອນທ້າຍ ຂອງອາຍຸການນຳໃຊ້ຂອງຊັບສິນນັ້ນ ໃນລາຍການເຄື່ອນໄຫວ ທີ່ໄດ້ດຳເນີນຕາມເງື່ອນໄຂແກ້ງແຍ້ງປົກກະຕິ ໃນ ຂະນະທີ່ທັງສອງຝ່າຍມີຄວາມຮອບຮູ້ ແລະ ເຕັມໃຈໃນການແລກປ່ຽນ.

ວິສາຫະກິດອາດຢາກນຳໃຊ້ງົບປະມານ ຫຼື ແຜນຄາດຄະເນການເງິນຫຼ້າສຸດເພື່ອຄາດຄະເນກະແສເງິນສົດ, ຖ້າມີຂໍ້ມູນ ດັ່ງກ່າວ. ເພື່ອຄາດຄະເນ ແຜນກະແສເງິນສົດ ພາຍຫຼັງປີການບັນຊີທີ່ກວມເອົາງົບປະມານ ຫຼື ແຜນຄາດຄະເນຫຼ້າສຸດ

ດັ່ງກ່າວ, ວິສາຫະກິດອາດຢາກປັບກະແສເງິນສົດໃນງົບປະມານ ຫຼື ແຜນຄາດຄະເນ ສຳລັບຊຸມປີຕໍ່ໜ້າ ດ້ວຍອັດຕາການເຕີບໂຕ ທີ່ໝັ້ນທ່ຽງ ຫຼື ຫຼຸດລົງ, ເວັ້ນເສຍແຕ່ມີເຫດຜົນຍັ້ງຍືນວ່າວິສາຫະກິດຄວນໃຊ້ອັດຕາການເຕີບໂຕທີ່ເພີ້ມຂຶ້ນ.

27.18 ການຄາດຄະເນກະແສເງິນສົດໃນອະນາຄົດ ບໍ່ຄວນລວມເອົາ :

(ກ) ກະແສຮັບເງິນສົດ ຫຼື ກະແສຈ່າຍເງິນສົດ ຈາກກິດຈະກຳປະກອບທຶນ, ຫຼື

(ຂ) ລາຍການຮັບ ຫຼື ຈ່າຍ ອາກອນລາຍຮັບ.

27.19 ກະແສເງິນສົດໃນອະນາຄົດ ຕ້ອງຄາດຄະເນສຳລັບຊັບສິນຕາມເງື່ອນໄຂປັດຈຸບັນ. ການຄາດຄະເນກະແສເງິນສົດໃນອະນາຄົດ ບໍ່ຄວນລວມເອົາ ກະແສຮັບເງິນສົດ ແລະ ກະແສຈ່າຍເງິນສົດ ທີ່ໄດ້ຄາດຄະເນ ຊຶ່ງຄາດວ່າຈະເກີດຂຶ້ນຈາກ:

(ກ) ການປັບປຸງໂຄງສ້າງໃນອະນາຄົດ ຊຶ່ງວິສາຫະກິດບໍ່ທັນມີຂໍ້ຜູກພັນທີ່ແນ່ນອນ, ຫຼື

(ຂ) ການປັບປຸງ ຫຼື ການເພີ້ມທະວີຜົນການດຳເນີນງານຂອງຊັບສິນໃຫ້ດີຂຶ້ນ.

## ຂໍ້ກຳນົດເພີ້ມເຕີມ ສຳລັບການສູນເສຍມູນຄ່າຂອງຄ່ານິຍົມ

27.24 ຄ່ານິຍົມ ບໍ່ສາມາດແຍກຂາຍໄດ້. ນອກນັ້ນ ຄ່ານິຍົມຍັງບໍ່ໄດ້ສ້າງກະແສເງິນສົດໃຫ້ວິສາຫະກິດທີ່ເປັນເອກະລາດຈາກກະແສເງິນສົດຈາກຊັບສິນອື່ນ. ຜົນຕາມມາ ຄືບໍ່ສາມາດວັດແທກມູນຄ່າຍຸຕິທຳ ຂອງຄ່ານິຍົມໂດຍກົງໄດ້.

## ການປັ້ນກັບລາຍການ ຂາດທຶນຈາກການສູນເສຍມູນຄ່າ

27.28 ຂາດທຶນຈາກການສູນເສຍມູນຄ່າທີ່ໄດ້ຮັບຮູ້ລາຍການບັນຊີສຳລັບຄ່ານິຍົມ ຕ້ອງບໍ່ຖືກປັ້ນກັບລາຍການໃນປີຕໍ່ມາ.

27.29 ສຳລັບຊັບສິນທັງໝົດ ນອກຈາກຄ່ານິຍົມ, ວິສາຫະກິດຕ້ອງປະເມີນຜົນ ໃນມື້ລາຍງານແຕ່ລະຄັ້ງ, ວ່າມີການຊີ້ບອກໃດໜຶ່ງບໍ ວ່າມີຄວາມເປັນໄປໄດ້ ທີ່ຂາດທຶນຈາກການສູນເສຍມູນຄ່າທີ່ໄດ້ຖືກຮັບຮູ້ລາຍການບັນຊີໃນປີຜ່ານມາ ບໍ່ມີອີກແລ້ວ ຫຼື ຫຼຸດລົງ. ການຊີ້ບອກວ່າຂາດທຶນຈາກການສູນເສຍມູນຄ່າອາດຫຼຸດລົງ ຫຼື ອາດບໍ່ມີຕົວຈິງອີກແລ້ວ ໂດຍທົ່ວໄປແມ່ນກົງກັນຂ້າມກັບສິ່ງທີ່ໄດ້ສະເໜີໃນວັກ 27.9. ຖ້າຫາກມີການຊີ້ບອກດັ່ງກ່າວ, ວິສາຫະກິດຕ້ອງຕັດສິນເບິ່ງວ່າການສູນເສຍມູນຄ່າໃນໄລຍະຜ່ານມາດັ່ງກ່າວ ທັງໝົດ ຫຼື ສ່ວນໜຶ່ງ ຕ້ອງຖືກຈົດປັ້ນກັບລາຍການ ຫຼືບໍ່.

27.30 ຕ້ອງປະຕິບັດຕາມຂໍ້ກຳນົດລຸ່ມນີ້:

(ກ) ວິສາຫະກິດຕ້ອງຄາດຄະເນມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ ໃນມື້ລາຍງານໃນປີ.

(ຂ) ຖ້າວ່າມູນຄ່າທີ່ສາມາດເກັບຄືນໄດ້ ທີ່ໄດ້ຄາດຄະເນ ຂອງຊັບສິນນັ້ນ ຫາກເກີນມູນຄ່າໃນບັນຊີ, ວິສາຫະກິດຕ້ອງເພີ້ມມູນຄ່າໃນບັນຊີໃຫ້ເທົ່າກັບມູນຄ່າທີ່ສາມາດເກັບຄືນໄດ້, ບົນເງື່ອນໄຂຂໍ້ຈຳກັດທີ່ສະເໜີໃນຂໍ້ (ຄ) ຂ້າງລຸ່ມນີ້. ການເພີ້ມຂຶ້ນດັ່ງກ່າວເປັນການປັ້ນກັບລາຍການຂາດທຶນຈາກການສູນເສຍມູນຄ່າ. ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີການປັ້ນກັບລາຍການນັ້ນ ໃນກຳໄລ ຫຼື ຂາດທຶນໃນທັນທີ.

(ຄ) ການປັ້ນກັບລາຍການຂາດທຶນຈາກການສູນເສຍມູນຄ່າ ບໍ່ຄວນເຮັດໃຫ້ມູນຄ່າໃນບັນຊີຂອງຊັບສິນເພີ້ມຂຶ້ນກາຍມູນຄ່າໃນບັນຊີ ທີ່ຄວນຈະເປັນ (ສຸດທິຈາກການຫັກຄ່າຫຼຸ້ຍຫ້ຽນ ຫຼື ຄ່າສູນເສຍມູນຄ່າອອກ) ຖ້າຫາກບໍ່ເຄີຍຖືກຮັບຮູ້ລາຍການບັນຊີຂາດທຶນຈາກການສູນເສຍມູນຄ່າສຳລັບຊັບສິນໃນປີການບັນຊີຜ່ານໆມາ.

(ງ) ພາຍຫຼັງການປັ້ນກັບລາຍການຂາດທຶນຈາກການສູນເສຍມູນຄ່າທີ່ເຄີຍໄດ້ຖືກຮັບຮູ້ລາຍການບັນຊີແລ້ວ, ວິສາຫະກິດຕ້ອງໄດ້ປັບຄ່າຫຼຸ້ຍຫ້ຽນ (ການຫັກຄ່າຫຼຸ້ຍຫ້ຽນ) ຂອງຊັບສິນສຳລັບປີການບັນຊີໃນອະນາຄົດ ເພື່ອຈັດແບ່ງມູນຄ່າໃນບັນຊີທີ່ຖືກດັດແກ້ຂອງຊັບສິນ, ຫັກມູນຄ່າເສດເຫຼືອ (ຖ້າມີ), ບົນພື້ນຖານທີ່ເປັນລະບົບ ຕະຫຼອດອາຍຸການນຳໃຊ້ງານທີ່ຍັງເຫຼືອ ຂອງຊັບສິນດັ່ງກ່າວ.

## ການເປີດເຜີຍຂໍ້ມູນຂ່າວສານ

27.32 ສຳລັບແຕ່ລະ**ປະເພດຊັບສິນ**ທີ່ໄດ້ຊີ້ແຈງໃນວັກ 27.33, ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານຕໍ່ໄປນີ້:

(ກ) ຈຳນວນເງິນຂາດທຶນຈາກການສູນເສຍມູນຄ່າ ທີ່ໄດ້ຮັບຮູ້ລາຍການບັນຊີໃນກຳໄລ ຫຼື ຂາດທຶນໃນປີ ແລະ ລາຍການຫຼັກໃນໃບລາຍງານຜົນໄດ້ຮັບສັງລວມ (ແລະ ໃນໃບລາຍງານຜົນໄດ້ຮັບ, ຖ້າຫາກໄດ້ນຳສະເໜີ) ຊຶ່ງລວມເອົາຂາດທຶນຈາກການສູນເສຍມູນຄ່າດັ່ງກ່າວ.

(ຂ) ຈຳນວນເງິນການປັ້ນກັບລາຍການຂາດທຶນຈາກການສູນເສຍມູນຄ່າທີ່ໄດ້ຮັບຮູ້ລາຍການບັນຊີໃນກຳໄລ ຫຼື ຂາດທຶນໃນປີ ແລະ ລາຍການຫຼັກໃນໃບລາຍງານຜົນໄດ້ຮັບສັງລວມ (ແລະ ໃນໃບລາຍງານຜົນໄດ້ຮັບ, ຖ້າຫາກໄດ້ນຳສະເໜີ) ຊຶ່ງລວມເອົາການປັ້ນກັບລາຍການຂາດທຶນຈາກການສູນເສຍມູນຄ່າ.

27.33 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານທີ່ກຳນົດໄວ້ໃນວັກ 27.32 ສຳລັບແຕ່ລະປະເພດຊັບສິນດັ່ງລຸ່ມນີ້:

(ກ) ເຄື່ອງໃນສາງ.

(ຂ) ຊັບສົມບັດຄົງທີ່ມີຕົວຕົນ (ລວມທັງອະສັງຫາລິມະຊັບເພື່ອການລົງທຶນ).

(ຄ) ຄ່ານິຍົມ.

(ງ) ຊັບສົມບັດຄົງທີ່ບໍ່ມີຕົວຕົນ ທີ່ບໍ່ແມ່ນຄ່ານິຍົມ.

(ຈ) ເງິນລົງທຶນໃນວິສາຫະກິດຂາຮຸ້ນ.

(ສ) ເງິນລົງທຶນໃນວິສາຫະກິດປະສົມ.

| **ການສົມທຽບກັບ FRS ສຳລັບ ວທຍ** | |
|---|---|
| 27.1 (ກ) | ຊັບສິນອາກອນລໍຖ້າສະສາງ ບໍ່ຖືກຮັບຮູ້ລາຍການບັນຊີ ໂດຍມາດຕະຖານ FRS ສຳລັບ ວນກ ນີ້ (ເບິ່ງ ໝວດ 29 ອາກອນລາຍຮັບ). ວັກນີ້ ຖືກຕັດອອກ. |
| 27.1 (ຄ) | ໝວດ 12 ປະເດັນຕ່າງໆ ທີ່ຕິດພັນ ກັບເຄື່ອງມືການເງິນອື່ນໆ (ເບິ່ງ ມາດຕະຖານ FRS ສຳລັບ ວທຍ) ບໍ່ຖືກນຳໃຊ້ ໃນ ມາດຕະຖານ FRS ສຳລັບ ວນກ. ວັກນີ້ ຖືກປັບປຸງ. |
| 27.1 (ງ) | ວນກ ຕີມູນຄ່າ ອະສັງຫາລິມະຊັບເພື່ອການລົງທຶນ ຕາມວິທີລາຄາຕົ້ນທຶນ-ຄ່າຫຼຸ້ຍຫ້ຽນ-ການສູນເສຍມູນຄ່າ ບໍ່ແມ່ນຕາມມູນຄ່າຍຸຕິທຳ. ວັກນີ້ ຖືກຕັດອອກ. |
| 27.8<br>27.11<br>27.21, 27.22 ແລະ 27.23<br>27.24, 27.25, 27.26 ແລະ 27.27, 27.29<br>27.30-27.31 | ຫົວໜ່ວຍສ້າງເງິນສົດ ບໍ່ຖືກນຳໃຊ້ ໂດຍມາດຕະຖານ FRS ສຳລັບ ວນກ ນີ້ ເວັ້ນເສຍ ສຳລັບຕີມູນຄ່າ ການສູນເສຍ ມູນຄ່າຂອງຄ່ານິຍົມ. ການສູນເສຍມູນຄ່າ ແມ່ນອີງຕາມຈຳນວນເງິນທີ່ສາມາດເກັບຄືນໄດ້ ຂອງຊັບສິນທີ່ໄດ້ສູນເສຍ ມູນຄ່າ ແລະ ໜ່ວຍສ້າງເງິນສົດ. ວັກ 27.8, 27.21, 27.22, 27.23, 27.25, 27.26, 27.27 ແລະ 27.31 ຖືກຕັດອອກ. ວັກ 27.11, 27.24 , 27.29 ແລະ 27.30 ຖືກປັບປຸງ. |
| 27.9 (ຄ)<br>27.15<br>27.16 (ຄ)<br>27.20 | ມາດຕະຖານ FRS ສຳລັບ ວທຍ ກຳນົດໃຫ້ໃຊ້ ມູນຄ່າປັດຈຸບັນ ຂອງກະແສເງິນສົດໃນອະນາຄົດ. ມາດຕະຖານ FRS ສຳລັບ ວນກ ນີ້ ຫ້າມໃຊ້ ມູນຄ່າປັດຈຸບັນ ເວັ້ນເສຍສຳລັບຜົນປະໂຫຍດຂອງພະນັກງານ. ວັກ 27.9 (ຄ), 27.16 (ຄ) ແລະ 27.20 ຖືກຕັດອອກ ແລະ ວັກ 27.15 ຖືກປັບປຸງ. |
| 27.10 | ຕາມມາດຕະຖານ FRS ສຳລັບ ວທຍ, ຈຳນວນເງິນຫັກຄ່າຫຼຸ້ຍຫ້ຽນ ແມ່ນຕົ້ນທຶນຂອງຊັບສິນໃດໜຶ່ງ, ຫຼື ຈຳນວນເງິນອື່ນ ທີ່ຖືກແທນ ສຳລັບຕົ້ນທຶນ ຫັກ**ມູນຄ່າເສດເຫຼືອ** ຂອງຊັບສິນນັ້ນ.<br>ໃນມາດຕະຖານ FRS ສຳລັບ ວນກ, ຈຳນວນເງິນຫັກຄ່າຫຼຸ້ຍຫ້ຽນ ບໍ່ຫຼຸດລົງ ໂດຍມູນຄ່າເສດເຫຼືອ (ເບິ່ງ ນິຍາມ ຂອງຈຳນວນເງິນຫັກຄ່າຫຼຸ້ຍຫ້ຽນ). ວັກເຫຼົ່ານີ້ ຖືກປັບປຸງ. |

## ໝວດ 28

## ຜົນປະໂຫຍດຂອງພະນັກງານ

***ໝວດນີ້ ພິຈາລະນາເຖິງເຫດການດ້ານເສດຖະກິດ ຊຶ່ງຍັງບໍ່ທັນມີ ໃນ ສປປ ລາວ ແຕ່ຄາດວ່າ ຈະມີໃນປີ ຂ້າງໜ້າ.***

## ຂອບເຂດຂອງໝວດນີ້

28.1 **ຜົນປະໂຫຍດຂອງພະນັກງານ** ໝາຍເຖິງທຸກຮູບແບບສິ່ງຕອບແທນທີ່ວິສາຫະກິດໄດ້ໃຫ້ເປັນການແລກປ່ຽນກັບວຽກງານທີ່ພະນັກງານໄດ້ຮັບໃຊ້, ລວມທັງຄະນະບໍລິຫານ ແລະ ຄະນະອຳນວຍການ. ໝວດດັ່ງກ່າວນຳໃຊ້ສຳລັບຜົນປະໂຫຍດທັງໝົດຂອງພະນັກງານ. ຜົນປະໂຫຍດຂອງພະນັກງານທີ່ຂຶ້ນກັບໝວດດັ່ງກ່າວ ຈະນອນຢູ່ໜຶ່ງໃນສີ່ຈຳພວກດັ່ງລຸ່ມນີ້:

(ກ) ຜົນປະໂຫຍດໄລຍະສັ້ນຂອງພະນັກງານ ໝາຍເຖິງຜົນປະໂຫຍດຂອງພະນັກງານ (ທີ່ບໍ່ແມ່ນ**ຜົນປະໂຫຍດເວລາສິ້ນສຸດສັນຍາ**) ຊຶ່ງຍັງຄ້າງຈ່າຍທັງໝົດພາຍໃນສິບສອງເດືອນນັບແຕ່ທ້າຍປີ ທີ່ພະນັກງານດັ່ງກ່າວ ໄດ້ຮັບໃຊ້ວຽກງານທີ່ກ່ຽວຂ້ອງ.

(ຂ) **ຜົນປະໂຫຍດພະນັກງານຫຼັງອອກການ** ໝາຍເຖິງຜົນປະໂຫຍດຂອງພະນັກງານ (ທີ່ບໍ່ແມ່ນຜົນປະໂຫຍດເວລາສິ້ນສຸດສັນຍາ) ຊຶ່ງຕ້ອງຈ່າຍພາຍຫຼັງສິ້ນສຸດການເຮັດການ.

(ຄ) ຜົນປະໂຫຍດອື່ນໆໄລຍະຍາວຂອງພະນັກງານ ໝາຍເຖິງຜົນປະໂຫຍດຂອງພະນັກງານ (ຊຶ່ງບໍ່ແມ່ນຜົນປະໂຫຍດພະນັກງານຫຼັງອອກການ ແລະ ຜົນປະໂຫຍດເວລາສິ້ນສຸດສັນຍາ) ທີ່ບໍ່ໄດ້ຄ້າງຈ່າຍທັງໝົດພາຍໃນສິບສອງເດືອນນັບແຕ່ທ້າຍປີ ຊຶ່ງພະນັກງານດັ່ງກ່າວ ໄດ້ຮັບໃຊ້ວຽກງານທີ່ກ່ຽວຂ້ອງ.

(ງ) ຜົນປະໂຫຍດເວລາສິ້ນສຸດສັນຍາໝາຍເຖິງຜົນປະໂຫຍດ ທີ່ຕ້ອງຈ່າຍໃຫ້ພະນັກງານ ຊຶ່ງເປັນຜົນຈາກ :

(i) ການຕົກລົງຂອງວິສາຫະກິດໃນການຍົກເລີກສັນຍາແຮງງານຂອງພະນັກງານໃດໜຶ່ງກ່ອນເຖິງອາຍຸຮັບເງິນບຳນານປົກກະຕິ, ຫຼື

(ii) ການຕົກລົງອອກການໂດຍການສະໝັກໃຈຂອງພະນັກງານໃດໜຶ່ງ ເພື່ອແລກເອົາຜົນປະໂຫຍດດັ່ງກ່າວ.

## ຫຼັກການລວມ ດ້ານການຮັບຮູ້ລາຍການບັນຊີ ກ່ຽວກັບຜົນປະໂຫຍດທັງໝົດຂອງພະນັກງານ

28.3 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ຄ່າໃຊ້ຈ່າຍ ກ່ຽວກັບຜົນປະໂຫຍດທັງໝົດຂອງພະນັກງານ ຊຶ່ງພະນັກງານມີສິດໄດ້ຮັບພາຍ ຫຼັງໄດ້ຮັບໃຊ້ວຽກງານໃນວິສາຫະກິດ **ໃນຮອບເວລາລາຍງານ**ນັ້ນ :

(ກ) ເປັນໜີ້ສິນ, ພາຍຫຼັງຫັກຈຳນວນເງິນທີ່ໄດ້ຈ່າຍໂດຍກົງ ໃຫ້ພະນັກງານ ຫຼື ເປັນເງິນສົມທົບເຂົ້າກອງທຶນຜົນປະໂຫຍດຂອງພະນັກງານ. ຖ້າວ່າຈຳນວນເງິນທີ່ໄດ້ຈ່າຍຫາກສູງກ່ວາພັນທະບ້ວງການຮັບໃຊ້ວຽກງານ ກ່ອນ**ມື້ລາຍງານ**, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີສ່ວນເກີນດັ່ງກ່າວ ເປັນຊັບສິນໃນຂອບເຂດທີ່ວ່າ ລາຍຈ່າຍໆລ່ວງໜ້ານັ້ນ ຈະນຳໄປສູ່ການຫຼຸດຜ່ອນເງິນຊຳລະໃນອະນາຄົດ ຫຼື ການທົດແທນເປັນເງິນສົດ.

ຂ) ເປັນລາຍຈ່າຍ ເວັ້ນເສຍແຕ່ວ່າໝວດອື່ນໆຂອງມາດຕະຖານສະບັບນີ້ ກຳນົດໃຫ້ຮັບຮູ້ລາຍການບັນຊີສ່ວນໜຶ່ງຂອງຕົ້ນທຶນຊັບສິນໃດໜຶ່ງ ເຄື່ອງໃນສາງ ຫຼື ຊັບສົມບັດຄົງທີ່ມີຕົວຕົນ.

## ຜົນປະໂຫຍດໄລຍະສັ້ນຂອງພະນັກງານ

### ຕົວຢ່າງ

28.4 ຜົນປະໂຫຍດໄລຍະສັ້ນຂອງພະນັກງານ ລວມມີ :

(ກ) ຄ່າທົດແທນແຮງງານ, ເງິນເດືອນ ແລະ ເງິນບຳລຸງປະກັນສັງຄົມ ;

(ຂ) ການລາພັກໄລຍະສັ້ນທີ່ໄດ້ຮັບຄ່າທົດແທນ (ເຊັ່ນລາພັກປະຈຳປີ, ລາພັກປົ່ນປົວພະຍາດ) ຖ້າວ່າການລາພັກຄາດວ່າຈະເກີດຂຶ້ນພາຍໃນສິບສອງເດືອນນັບຈາກປີການບັນຊີທີ່ພະນັກງານໄດ້ຮັບໃຊ້ໜ້າທີ່ວຽກງານທີ່ກ່ຽວຂ້ອງ;

(ຄ) ຈຳນວນເງິນທີ່ຕ້ອງຈ່າຍບ້ວງການແບ່ງຜົນກຳໄລ ແລະ ເງິນບຳເນັດພາຍໃນສິບສອງເດືອນນັບຈາກສິ້ນສຸດປີການບັນຊີ ຊຶ່ງພະນັກງານໄດ້ຮັບໃຊ້ໜ້າທີ່ວຽກງານທີ່ກ່ຽວຂ້ອງ; ແລະ

(ງ) ຜົນປະໂຫຍດທີ່ບໍ່ເປັນເງິນ (ເຊັ່ນການຊ່ວຍເຫຼືອດ້ານການແພດ, ບ່ອນພັກເຊົາ, ລົດຮັບໃຊ້ ແລະ ສິນຄ້າ ຫຼື ການບໍລິການໂດຍບໍ່ເສຍຄ່າ ຫຼື ໄດ້ຮັບເງິນຊ່ວຍໜູນ) ສຳລັບພະນັກງານທີ່ພວມປະຕິບັດງານ.

## ຫຼັກການລວມ ກ່ຽວກັບການຕີມູນຄ່າຜົນປະໂຫຍດໄລຍະສັ້ນ

28.5 ເວລາພະນັກງານໃດໜຶ່ງ ໄດ້ຮັບໃຊ້ວິສາຫະກິດໃນຮອບເວລາລາຍງານ, ວິສາຫະກິດຕ້ອງຕີມູນຄ່າຈຳນວນເງິນທີ່ໄດ້ຮັບຮູ້ລາຍການບັນຊີໂດຍອີງຕາມວັກ 28.3 ຕາມຈຳນວນເງິນຜົນປະໂຫຍດໄລຍະສັ້ນຂອງພະນັກງານ ທີ່ບໍ່ໄດ້ຕີເປັນມູນຄ່າປັດຈຸບັນ ທີ່ຄາດວ່າຈະຕ້ອງຈ່າຍເພື່ອແລກປ່ຽນກັບການຮັບໃຊ້ວຽກງານດັ່ງກ່າວ. .

## ການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າ – ການລາພັກໄລຍະສັ້ນ ທີ່ໄດ້ຮັບຄ່າທົດແທນ

28.6 ວິສາຫະກິດອາດທົດແທນເງິນໃຫ້ພະນັກງານເວລາຂາດການເນື່ອງຈາກເຫດຜົນຕ່າງໆ ລວມທັງການລາພັກປະຈຳປີ ແລະ ການລາພັກປົ່ນປົວພະຍາດ. ການລາພັກໄລຍະສັ້ນ ທີ່ໄດ້ຮັບຄ່າທົດແທນບາງລາຍ ສາມາດສະສົມໄດ້ - ຖ້າວ່າພະນັກງານຫາກນຳໃຊ້ສິດບໍ່ທັນໝົດໃນປີທີ່ກ່ຽວຂ້ອງ ແມ່ນສາມາດຍົກໄປປະຕິບັດຕໍ່ ແລະ ນຳໃຊ້ໃນປີຕໍ່ໆໄປໄດ້. ຕົວຢ່າງ ປະກອບມີການລາພັກປະຈຳປີ ແລະ ການລາພັກປົ່ນປົວພະຍາດ. ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ຄ່າໃຊ້ຈ່າຍຄາດຄະເນບ້ວງ**ການລາພັກທີ່ໄດ້ຮັບຄ່າທົດແທນຄືນແບບສະສົມ**, ຖ້າວ່າພະນັກງານຫາກຮັບໃຊ້ໜ້າທີ່ວຽກງານ ທີ່ເຮັດໃຫ້ເພີ້ມສິດໃນການລາພັກທີ່ໄດ້ຮັບເງິນທົດແທນໃນອະນາຄົດ. ວິສາຫະກິດຕ້ອງຕີມູນຄ່າ ຄ່າໃຊ້ຈ່າຍຄາດຄະເນບ້ວງການລາພັກທີ່ໄດ້ຮັບຄ່າທົດແທນຄືນແບບສະສົມ ເປັນຈຳນວນເງິນເພີ້ມເຕີມ ທີ່ບໍ່ໄດ້ຕີເປັນມູນຄ່າປັດຈຸບັນ ຊຶ່ງຄາດວ່າຈະຕ້ອງຈ່າຍ ເນື່ອງຈາກມີສິດທິ ທີ່ພະນັກງານບໍ່ທັນໄດ້ນຳໃຊ້ ສະສົມເຖິງທ້າຍຮອບເວລາລາຍງານ. ວິສາຫະກິດຕ້ອງສະແດງຈຳນວນເງິນດັ່ງກ່າວ ເປັນ**ໜີ້ສິນໝຸນວຽນ** ໃນມື້ລາຍງານ.

28.7 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ຄ່າໃຊ້ຈ່າຍບ້ວງການລາພັກທີ່ໄດ້ຮັບການທົດແທນ (ທີ່ສະສົມບໍ່ໄດ້) ຖ້າຫາກເກີດມີການລາພັກດັ່ງກ່າວ. ວິສາຫະກິດຕ້ອງຄິດໄລ່ມູນຄ່າການລາພັກທີ່ໄດ້ທົດແທນເງິນຄືນແບບສະສົມບໍ່ໄດ້ຕາມຈຳນວນເງິນເດືອນ ແລະ ຄ່າແຮງທີ່ໄດ້ຈ່າຍ ຫຼື ຕ້ອງຈ່າຍ ຊຶ່ງບໍ່ໄດ້ຕີເປັນມູນຄ່າປັດຈຸບັນ ໃນໄລຍະລາພັກນັ້ນ.

## ການຮັບຮູ້ລາຍການບັນຊີ - ແຜນການ ການແບ່ງຜົນກຳໄລ ແລະ ເງິນບຳເນັດ

28.8 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ຄ່າໃຊ້ຈ່າຍຄາດຄະເນໃນການເບີກຈ່າຍເງິນບ້ວງການແບ່ງຜົນກຳໄລ ແລະ ເງິນບຳເນັດ ກໍຕໍ່ເມື່ອ :

(ກ) ວິສາຫະກິດມີ**ພັນທະ** ຕາມກົດໝາຍ ຫຼື **ພັນທະແບບປະລິຍາຍ** ໃນປັດຈຸບັນຊຶ່ງຕ້ອງໄດ້ດຳເນີນການເບີກຈ່າຍອັນເປັນຜົນເນື່ອງຈາກເຫດການຜ່ານມາ (ໝາຍຄວາມວ່າວິສາຫະກິດບໍ່ມີທາງເລືອກທີ່ເປັນໄປໄດ້ອື່ນໆ ນອກຈາກຈ່າຍເງິນດັ່ງກ່າວ), ແລະ

(ຂ) ສາມາດດຳເນີນການຄາດຄະເນປະຕິບັດ ກ່ຽວກັບພັນທະນັ້ນ ຢ່າງໜ້າເຊື່ອຖືໄດ້.

## ຜົນປະໂຫຍດພະນັກງານຫຼັງອອກການ: ການຈຳແນກຄວາມແຕກຕ່າງລະຫ່ວາງ ແຜນສົມທົບເງິນທີ່ກຳນົດໄວ້ ແລະ ແຜນນະໂຍບາຍຄິດໄລ່ຜົນປະໂຫຍດພະນັກງານທີ່ກຳນົດໄວ້

28.9 ຜົນປະໂຫຍດພະນັກງານຫຼັງອອກການ ລວມມີ, ຕົວຢ່າງ :

(ກ) ນະໂຍບາຍເງິນບຳນານ ເຊັ່ນ ເບ້ຍບຳນານ, ແລະ

(ຂ) ຜົນປະໂຫຍດພະນັກງານຫຼັງອອກການອື່ນໆ, ເຊັ່ນ ການປະກັນໄພຊີວິດຫຼັງອອກການ ແລະ ການປິ່ນປົວຮັກສາຫຼັງອອກການ.

ຂໍ້ຕົກລົງຊຶ່ງວິສາຫະກິດສະໜອງຜົນປະໂຫຍດພະນັກງານຫຼັງອອກການ ຖືວ່າແມ່ນ**ແຜນຄິດໄລ່ຜົນປະໂຫຍດພະນັກງານຫຼັງອອກການ*. ວິສາຫະກິດຕ້ອງປະຕິບັດ ຕາມໝວດດັ່ງກ່າວນີ້ ສຳລັບປະເພດຂໍ້ຕົກລົງດັ່ງກ່າວທັງໝົດ, ບໍ່ວ່າຈະເປັນການສ້າງວິສາຫະກິດຕ່າງຫາກ ຫຼືບໍ່ກໍຕາມ ໃນການຮັບເງິນສົມທົບ ແລະ ເບີກຈ່າຍຜົນປະໂຫຍດ. ໝວດນີ້ ຕ້ອງຖືກປະຕິບັດ ສຳລັບການປະກອບເງິນສົມທົບ ໃຫ້ກັບອົງການປະກັນສັງຄົມ (ອປສ). ໃນບາງກໍລະນີ, ຂໍ້ຕົກລົງດັ່ງກ່າວ ແມ່ນກຳນົດຕາມກົດໝາຍ ແຕ່ຫາກບໍ່ແມ່ນມາດຕະການຂອງວິສາຫະກິດ. ຂໍ້ຕົກລົງດັ່ງກ່າວ ມາຈາກມາດຕະການຂອງວິສາຫະກິດ.

28.10 ແຜນຄິດໄລ່ຜົນປະໂຫຍດພະນັກງານຫຼັງອອກການ ຖືກຈັດປະເພດເປັນ**ແຜນສົມທົບເງິນທີ່ກຳນົດໄວ້** ຫຼື **ແຜນນະໂຍບາຍຄິດໄລ່ຜົນປະໂຫຍດພະນັກງານທີ່ກຳນົດໄວ້** ຊຶ່ງຂຶ້ນກັບເງື່ອນໄຂຕົ້ນຕໍຂອງແຜນເຫຼົ່ານັ້ນ.

(ກ) ແຜນສົມທົບເງິນທີ່ກຳນົດໄວ້ ໝາຍເຖິງແຜນຄິດໄລ່ຜົນປະໂຫຍດພະນັກງານຫຼັງອອກການ ໂດຍອີງຕາມເງື່ອນໄຂທີ່ວ່າວິສາຫະກິດຈ່າຍເງິນສົມທົບເປັນຈຳນວນເງິນຄົງທີ່ທີ່ກຳນົດໄວ້ ໃຫ້ວິສາຫະກິດໜຶ່ງອີກ (ກອງທຶນ) ແລະ ບໍ່ມີຂໍ້ຜູກພັນທາງກົດໝາຍ ຫຼື ພັນທະແບບປະລິຍາຍໃຫ້ຈ່າຍເງິນສົມທົບເພີ້ມຕື່ມ ຫຼື ຊຳລະເປັນຜົນປະໂຫຍດໂດຍກົງແກ່ສະມາຊິກພະນັກງານ ຖ້າວ່າກອງທຶນບໍ່ມີຊັບສິນຫຼາຍພຽງພໍ ເພື່ອຊຳລະຜົນປະໂຫຍດທັງໝົດທີ່ກ່ຽວຂ້ອງກັບການຮັບໃຊ້ຂອງພະນັກງານໃນປີປັດຈຸບັນ ແລະ ປີຜ່ານໆມາ. ດັ່ງນັ້ນ, ຈຳນວນເງິນຜົນປະໂຫຍດພະນັກງານຫຼັງອອກການ ທີ່ສະມາຊິກພະນັກງານໄດ້ຮັບ ຈຶ່ງກຳນົດຕາມຈຳນວນເງິນສົມທົບທີ່ວິສາຫະກິດໄດ້ຈ່າຍ (ແລະ ບາງທີພະນັກງານກໍໄດ້ຈ່າຍ) ເຂົ້າໃນແຜນຄິດໄລ່ຜົນປະໂຫຍດພະນັກງານຫຼັງອອກການ ຫຼື ໃຫ້ຜູ້ປະກັນໄພໃດໜຶ່ງ, ພ້ອມກັບຜົນຕອບແທນທີ່ເກີດຂຶ້ນຈາກການໝູນທຶນບ້ວງເງິນສົມທົບ. ນີ້ແມ່ນສະພາບການ ກ່ຽວກັບເງິນຄັງບຳນານ ທີ່ຖືກຄຸ້ມຄອງໂດຍ ອປສ.

(ຂ) ແຜນນະໂຍບາຍຄິດໄລ່ຜົນປະໂຫຍດພະນັກງານທີ່ກຳນົດໄວ້ ໝາຍເຖິງແຜນຄິດໄລ່ຜົນປະໂຫຍດພະນັກງານຫຼັງອອກການ ທີ່ບໍ່ແມ່ນແຜນສົມທົບເງິນທີ່ກຳນົດໄວ້. ອີງຕາມແຜນນະໂຍບາຍຄິດໄລ່ຜົນປະໂຫຍດພະນັກງານທີ່ກຳນົດໄວ້, ພັນທະຂອງວິສາຫະກິດມີຄື ຕ້ອງສະໜອງຜົນປະໂຫຍດທີ່ໄດ້ຕົກລົງໃຫ້ພະນັກງານທີ່ພວມປະຕິບັດງານ ແລະ ອະດີດພະນັກງານ; ແລະ ຄວາມສ່ຽງໃນການຄິດໄລ່ສິນທົດແທນປະກັນໄພ (ຊຶ່ງຜົນປະໂຫຍດຈະຫຼາຍກ່ວາ ຫຼື ໜ້ອຍກ່ວາສິ່ງທີ່ໄດ້ຄາດຄະເນໄວ້) ແລະ ຄວາມສ່ຽງຈາກການລົງທຶນ (ຄວາມສ່ຽງທີ່ວ່າຜົນຕອບແທນຈາກຊັບສິນ ທີ່ຮັກສາໄວ້ ເພື່ອປະກອບທຶນດ້ານຜົນປະໂຫຍດ ຈະແຕກຕ່າງກັບສິ່ງທີ່ໄດ້ຄາດຫວັງໄວ້) ແມ່ນວິສາຫະກິດຈະເປັນຜູ້ແບກຫາບພາລະໂດຍສ່ວນໃຫ່ຍ. ຖ້າວ່າປະສົບການດ້ານສະຖິຕິປະກັນໄພ ຫຼື ການລົງທຶນ ຫາກຕ່ຳກ່ວາທີ່ໄດ້ຄາດຫວັງໄວ້, ພັນທະຂອງວິສາຫະກິດອາດເພີ້ມຂຶ້ນ ແລະກົງກັນຂ້າມ ຖ້າປະສົບການດ້ານສະຖິຕິປະກັນໄພ ຫຼື ການລົງທຶນຫາກໄດ້ຮັບຜົນດີກ່ວາທີ່ໄດ້ຄາດຫວັງໄວ້.

## ແຜນນະໂຍບາຍຄິດໄລ່ຜົນປະໂຫຍດກຸ່ມນາຍຈ້າງ ແລະ ແຜນນະໂຍບາຍຄິດໄລ່ຜົນປະໂຫຍດພາກລັດ

28.11 ແຜນນະໂຍບາຍຄິດໄລ່ຜົນປະໂຫຍດກຸ່ມນາຍຈ້າງ ແລະ ແຜນນະໂຍບາຍຄິດໄລ່ຜົນປະໂຫຍດພາກລັດ ຈັດເປັນແຜນສົມທົບເງິນທີ່ກຳນົດໄວ້ ຫຼື ແຜນນະໂຍບາຍຄິດໄລ່ຜົນປະໂຫຍດພະນັກງານທີ່ກຳນົດໄວ້ ບົນພື້ນຖານເງື່ອນໄຂຂອງແຜນດັ່ງກ່າວ, ຊຶ່ງລວມທັງພັນທະແບບປະລິຍາຍທີ່ນອກເໜືອຈາກເງື່ອນໄຂທີ່ເປັນທາງການ. ເຖິງຢ່າງໃດກໍດີ, ຖ້າວ່າບໍ່ມີຂໍ້ມູນຂ່າວສານພຽງພໍສຳລັບນຳໃຊ້ ເພື່ອລົງບັນຊີຜົນປະໂຫຍດທີ່ກຳນົດໄວ້ສຳລັບແຜນນະໂຍບາຍຄິດໄລ່ຜົນປະໂຫຍດກຸ່ມນາຍຈ້າງ ທີ່ເປັນແຜນນະໂຍບາຍຄິດໄລ່ຜົນປະໂຫຍດທີ່ກຳນົດໄວ້ ວິສາຫະກິດຈະລົງບັນຊີໂດຍສອດຄ່ອງຕາມວັກ 28.13 ຄືກັນກັບວ່າເປັນແຜນສົມທົບເງິນທີ່ກຳນົດໄວ້ ແລະ ເປີດເຜີຍຂໍ້ມູນຂ່າວສານ ທີ່ໄດ້ກຳນົດໄວ້ໃນວັກ 28.40.

## ຜົນປະໂຫຍດທີ່ມີການປະກັນ

28.12 ວິສາຫະກິດອາດຊຳລະສິນທົດແທນປະກັນໄພ ເພື່ອປະກອບທຶນໃຫ້ແກ່ແຜນຄິດໄລ່ຜົນປະໂຫຍດພະນັກງານຫຼັງອອກການ. ເວລານັ້ນວິສາຫະກິດຕ້ອງຖືແຜນຄິດໄລ່ດັ່ງກ່າວເປັນແຜນສົມທົບເງິນທີ່ກຳນົດໄວ້, ເວັ້ນເສຍແຕ່ເມື່ອວິສາຫະກິດນັ້ນມີພັນທະທາງກົດໝາຍ ຫຼື ພັນທະແບບປະລິຍາຍ:

(ກ) ໃຫ້ຊຳລະເງິນໂດຍກົງບ້ວງຜົນປະໂຫຍດຂອງພະນັກງານໃນມື້ທີ່ຕ້ອງໄດ້ຈ່າຍ, ຫຼື

(ຂ) ໃຫ້ຊຳລະຈຳນວນເງິນເພີ້ມຕື່ມ ຖ້າວ່າຜູ້ຮັບປະກັນ ບໍ່ຊຳລະເງິນປະໂຫຍດທັງໝົດຂອງພະນັກງານໃນອະນາຄົດ ທີ່ກ່ຽວຂ້ອງກັບການຮັບໃຊ້ໜ້າທີ່ໂດຍພະນັກງານໃນປີປັດຈຸບັນ ແລະ ໃນປີຜ່ານໆມາ.

ພັນທະແບບປະລິຍາຍ ອາດກຳເນີດໂດຍທາງອ້ອມຈາກແຜນຄິດໄລ່, ຜ່ານກົນໄກທີ່ນຳໃຊ້ເພື່ອກຳນົດສິນທິດແທນໃນອະນາຄົດ, ຫຼື ຜ່ານສາຍພົວພັນກັບພາກສ່ວນທີ່ກ່ຽວຂ້ອງກັບຜູ້ຮັບປະກັນ. ຖ້າວ່າວິສາຫະກິດຮັກສາພັນທະທາງກົດໝາຍ ຫຼື ພັນທະແບບປະລິຍາຍ, ວິສາຫະກິດນັ້ນ ຕ້ອງໄດ້ລົງບັນຊີແຜນຄິດໄລ່ດັ່ງກ່າວ ເປັນແຜນຄິດໄລ່ເງິນປະໂຫຍດທີ່ກຳນົດໄວ້.

## ເງິນປະໂຫຍດພະນັກງານຫຼັງອອກການ: ແຜນສົມທົບເງິນທີ່ກຳນົດໄວ້

### ການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າ

28.13 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີເງິນສົມທົບທີ່ຕ້ອງຈ່າຍໃນປີ:

(ກ) ເປັນໜີ້ສິນ, ພາຍຫຼັງໄດ້ຫັກຈຳນວນເງິນທີ່ໄດ້ຈ່າຍອອກແລ້ວ. ຖ້າຈຳນວນເງິນທີ່ໄດ້ຈ່າຍບ້ວງເງິນສົມທົບຫາກສູງກ່ວາເງິນສົມທົບຄ້າງຈ່າຍ ສຳລັບວຽກງານຮັບໃຊ້ ກ່ອນມື້ລາຍງານ, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີສ່ວນເກີນດັ່ງກ່າວເປັນຊັບສິນ.

(ຂ) ເປັນລາຍຈ່າຍ ເວັ້ນເສຍແຕ່ວ່າໝວດອື່ນຂອງມາດຕະຖານສະບັບນີ້ ກຳນົດໃຫ້ຕົ້ນທຶນດັ່ງກ່າວ ຖືກຮັບຮູ້ລາຍການບັນຊີ ເປັນສ່ວນໜຶ່ງ ຂອງຕົ້ນທຶນຊັບສິນ, ເຊັ່ນ ເຄື່ອງໃນສາງ ຫຼື ຊັບສົມບັດຄົງທີ່ມີຕົວຕົນ.

## ເງິນປະໂຫຍດພະນັກງານຫຼັງອອກການ: ແຜນນະໂຍບາຍຄິດໄລ່ເງິນປະໂຫຍດພະນັກງານທີ່ກຳນົດໄວ້

### ການຮັບຮູ້ລາຍການບັນຊີ

28.14 ປະຕິບັດຕາມຫຼັກການລວມ ກ່ຽວກັບການຮັບຮູ້ລາຍການບັນຊີ ທີ່ໄດ້ສະເໜີໃນວັກ 28.3 ກ່ຽວກັບແຜນນະໂຍບາຍຄິດໄລ່ເງິນປະໂຫຍດພະນັກງານທີ່ກຳນົດໄວ້, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ :

(ກ) ໜີ້ສິນທີ່ສະແດງເຖິງພັນທະບ້ວງແຜນນະໂຍບາຍຄິດໄລ່ເງິນປະໂຫຍດພະນັກງານທີ່ກຳນົດໄວ້, ຫັກມູນຄ່າຊັບສິນໃນແຜນ - ເປັນ **ໜີ້ສິນເງິນປະໂຫຍດພະນັກງານທີ່ກຳນົດໄວ້** (ເບິ່ງວັກ 28.15 ຫາ 28.23).

(ຂ) ສ່ວນປ່ຽນແປງສຸດທິຂອງໜີ້ສິນດັ່ງກ່າວໃນປີ ຕາມຕົ້ນທຶນຂອງບັນດາແຜນນະໂຍບາຍຄິດໄລ່ເງິນປະໂຫຍດພະນັກງານທີ່ກຳນົດໄວ້ໃນປີ (ເບິ່ງ ວັກ 28. 24 ຫາ 28.27).

### ການຕີມູນຄ່າໜີ້ສິນເງິນປະໂຫຍດພະນັກງານທີ່ກຳນົດໄວ້

28.15 ວິສາຫະກິດຕ້ອງຕີມູນຄ່າໜີ້ສິນເງິນປະໂຫຍດພະນັກງານທີ່ກຳນົດໄວ້ ສຳລັບພັນທະ ພາຍໃຕ້ແຜນນະໂຍບາຍຄິດໄລ່ເງິນປະໂຫຍດພະນັກງານທີ່ກຳນົດໄວ້ ໃຫ້ເທົ່າກັບ ລວມຍອດສຸດທິຂອງຈຳນວນເງິນດັ່ງລຸ່ມນີ້ :

(ກ) **ມູນຄ່າປັດຈຸບັນ**ຂອງພັນທະ ພາຍໃຕ້ແຜນນະໂຍບາຍຄິດໄລ່ເງິນປະໂຫຍດພະນັກງານທີ່ກຳນົດໄວ້ (**ພັນທະເງິນປະໂຫຍດພະນັກງານທີ່ກຳນົດໄວ້**) ໃນມື້ລາຍງານ (ວັກ 28.16 ຫາ 28.22 ໃຫ້ຄຳແນະນຳ ກ່ຽວກັບການຕີມູນຄ່າພັນທະດັ່ງກ່າວ), ລົບໃຫ້

(ຂ) ມູນຄ່າຍຸຕິທຳຂອງ**ຊັບສິນໃນແຜນ**ໃນມື້ລາຍງານ (ຖ້າມີ) ທີ່ໄດ້ນຳໃຊ້ເພື່ອສະສາງພັນທະໂດຍກົງ. ວັກ 11.27 ຫາ 11.32 ວາງເງື່ອນໄຂເພື່ອກຳນົດມູນຄ່າຍຸຕິທຳຂອງຊັບສິນໃນແຜນເຫຼົ່ານັ້ນ ທີ່ເປັນ**ຊັບສິນການເງິນ.**

### ການລວມເອົາເງິນປະໂຫຍດທີ່ໄດ້ຮັບ ແລະ ທີ່ບໍ່ທັນໄດ້ຮັບ

28.16 ມູນຄ່າປັດຈຸບັນຂອງພັນທະຂອງວິສາຫະກິດໃດໜຶ່ງ ຕາມແຜນນະໂຍບາຍຄິດໄລ່ເງິນປະໂຫຍດພະນັກງານທີ່ກຳນົດໄວ້ໃນມື້ລາຍງານ ຕ້ອງສ່ອງແສງເຖິງຈຳນວນເງິນຄາດຄະເນເງິນປະໂຫຍດຊຶ່ງສະມາຊິກພະນັກງານຈະໄດ້ຮັບ ໂດຍແລກປ່ຽນກັບວຽກງານທີ່ໄດ້ດຳເນີນໃນປີປັດຈຸບັນ ແລະ ໃນປີຜ່ານໆມາ, ລວມທັງເງິນປະໂຫຍດທີ່ຍັງ**ບໍ່ທັນໄດ້ຮັບ** (ເບິ່ງວັກ 28.26) ແລະ ລວມທັງເງິນກະທົບຂອງສູດຄິດໄລ່ເງິນປະໂຫຍດ ທີ່ໃຫ້ເງິນປະໂຫຍດສູງກ່ວາສຳລັບພະນັກງານໃນຊຸມປີການຮັບໃຊ້ຕາມຫຼັງ. ສິ່ງນີ້ ກຳນົດໃຫ້ວິສາຫະກິດຕ້ອງໄດ້ຄິດໄລ່ຈຳນວນເງິນເງິນປະໂຫຍດບ້ວງປີປັດຈຸບັນ ແລະ ປີຜ່ານໆມາ ບົນ

ພື້ນຖານສູດຄິດໄລ່ຜົນປະໂຫຍດໃນແຜນ ແລະ ສ້າງຕົວເລກຄາດຄະເນປະຕິບັດ (ຂໍ້ສົມມຸດຖານການຄິດໄລ່ສິນທິດແທນປະກັນໄພ) ກ່ຽວກັບຕົວຜັນແປດ້ານປະຊາກອນ (ເຊັ່ນ ຮອບໝູນຂອງພະນັກງານ ແລະ ການເສຍຊີວິດ) ແລະ ຕົວຜັນແປດ້ານການເງິນ (ເຊັ່ນສ່ວນເພີ້ມຂຶ້ນໃນອະນາຄົດຂອງເງິນເດືອນ ແລະ ຄ່າໃຊ້ຈ່າຍປິ່ນປົວພະຍາດ) ທີ່ຈະສົ່ງຜົນກະທົບໃສ່ຕົ້ນທຶນຂອງຜົນປະໂຫຍດ. ຂໍ້ສົມມຸດຖານການຄິດໄລ່ສິນທິດແທນປະກັນໄພ ຕ້ອງເປັນກາງ (ບໍ່ວ່າຈະປາສະຈາກຄວາມບໍ່ຮອບຄອບ ຫຼື ທັງບໍ່ມີລັກສະນະຮັກສາເດີມຈົນເກີນໄປ ກໍຕາມ), ຕ້ອງສອດຄ່ອງກັນ ແລະ ຖືກຄັດເລືອກເພື່ອຊ່ວຍໃຫ້ມີການຄາດຄະເນທີ່ດີທີ່ສຸດ ກ່ຽວກັບກະແສເງິນສົດໃນອະນາຄົດ ທີ່ຈະເກີດຂຶ້ນບົນພື້ນຖານແຜນຄິດໄລ່ນັ້ນ.

## ການຕີມູນຄ່າເປັນມູນຄ່າປັດຈຸບັນ

28.17 ວິສາຫະກິດຕ້ອງຕີມູນຄ່າພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້ ບົນພື້ນຖານການ**ຕີມູນຄ່າເປັນມູນຄ່າປັດຈຸບັນ.** ວິສາຫະກິດຕ້ອງຊອກຫາອັດຕາທີ່ຕ້ອງປະຕິບັດເພື່ອຕີມູນຄ່າເງິນຊຳລະໃນອະນາຄົດເປັນມູນຄ່າປັດຈຸບັນ ໂດຍອີງຕາມອັດຕາທ້ອງຕະຫຼາດ ໃນມື້ລາຍງານ ຕໍ່ກັບພັນທະບັດບໍລິສັດທີ່ມີຄຸນນະພາບສູງ. ໃນປະເທດລາວ ຊຶ່ງປັດຈຸບັນ ບໍ່ທັນມີຕະຫຼາດເຄື່ອນໄຫວສຳລັບພັນທະບັດດັ່ງກ່າວ, ວິສາຫະກິດຕ້ອງນຳໃຊ້ຜົນຕອບແທນຂອງຕະຫຼາດ (ໃນມື້ລາຍງານ) ກ່ຽວກັບພັນທະບັດຂອງລັດຖະບານ. ສະກຸນເງິນ ແລະ ອາຍຸການຂອງພັນທະບັດບໍລິສັດ ຫຼື ພັນທະບັດຂອງລັດຖະບານ ຕ້ອງສອດຄ່ອງກັບສະກຸນເງິນ ແລະ ກຳນົດເວລາທີ່ໄດ້ຄາດຄະເນໄວ້ ທີ່ຈະຕ້ອງຊຳລະຈຳນວນເງິນໃນອະນາຄົດ.

## ວິທີການຕີມູນຄ່າຕາມສະຖິຕິການປະກັນໄພ

28.18 ຖ້າວ່າ ວິສາຫະກິດໃດໜຶ່ງຫາກສາມາດ, ໂດຍບໍ່ມີຄ່າໃຊ້ຈ່າຍ ຫຼື ບໍ່ມີຄວາມພະຍາຍາມຫຼາຍເກີນຄວນ, ນຳໃຊ້**ວິທີຄິດໄລ່ຜົນປະໂຫຍດຕາມຫົວໜ່ວຍທີ່ຄາດຄະເນ** ເພື່ອຕີມູນຄ່າພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້ ແລະລາຍຈ່າຍທີ່ພົວພັນນັ້ນ, ກໍຕ້ອງນຳໃຊ້ວິທີດັ່ງກ່າວ. ຖ້າວ່າຜົນປະໂຫຍດທີ່ກຳນົດໄວ້ ຫາກອີງໃສ່ເງິນເດືອນໃນອະນາຄົດ, ວິທີຄິດໄລ່ຜົນປະໂຫຍດຕາມຫົວໜ່ວຍທີ່ຄາດຄະເນ ກຳນົດໃຫ້ວິສາຫະກິດຈຳຕ້ອງໄດ້ຕີມູນຄ່າພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້ ບົນພື້ນຖານທີ່ສ່ອງແສງເຖິງການຄາດຄະເນສ່ວນເພີ້ມຂຶ້ນຂອງເງິນເດືອນໃນອະນາຄົດ. ນອກນັ້ນ, ວິທີຄິດໄລ່ຜົນປະໂຫຍດຕາມຫົວໜ່ວຍທີ່ຄາດຄະເນ ກຳນົດໃຫ້ວິສາຫະກິດວາງຫຼາຍຂໍ້ສົມມຸດຖານການຄິດໄລ່ສິນທິດແທນປະກັນໄພ ໃນການຕີມູນຄ່າພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້, ລວມທັງອັດຕາການຕີມູນຄ່າເປັນມູນຄ່າປັດຈຸບັນ, ອັດຕາຜົນຕອບແທນທີ່ໄດ້ຄາດໄວ້ຈາກຊັບສິນໃນແຜນ, ອັດຕາຄາດຄະເນການເພີ້ມຂຶ້ນຂອງເງິນເດືອນ, ຮອບໝູນຂອງພະນັກງານ, ອັດຕາການຕາຍ, ແລະ (ສຳລັບແຜນຄິດໄລ່ຜົນປະໂຫຍດດ້ານການປິ່ນປົວພະຍາດ) ອັດຕາທ່າອ່ຽງຂະຫຍາຍຕົວຂອງຄ່າໃຊ້ຈ່າຍໃນການປິ່ນປົວພະຍາດ.

28.19 ຖ້າວ່າວິສາຫະກິດບໍ່ສາມາດ, ໂດຍບໍ່ມີການໃຊ້ຈ່າຍ ຫຼື ບໍ່ມີຄວາມພະຍາຍາມຫຼາຍເກີນຄວນ, ນຳໃຊ້ວິທີຄິດໄລ່ຜົນປະໂຫຍດຕາມຫົວໜ່ວຍທີ່ຄາດຄະເນ ເພື່ອຕີມູນຄ່າຂໍ້ຜູກພັນ ແລະ ຕົ້ນທຶນບ້ວງແຜນນະໂຍບາຍຄິດໄລ່ຜົນປະໂຫຍດພະນັກງານທີ່ກຳນົດໄວ້, ອະນຸຍາດໃຫ້ວິສາຫະກິດນັ້ນ ປັບປຸງການຕີມູນຄ່າພັນທະໃຫ້ກະທັດລັດລົງ ບ້ວງພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້ ທີ່ຮັບໃຊ້ຜົນປະໂຫຍດຂອງພະນັກງານປັດຈຸບັນ :

(ກ) ບໍ່ຄຳນຶງເຖິງລາຍການຄາດຄະເນການເພີ້ມຂຶ້ນຂອງເງິນເດືອນໃນອະນາຄົດ (ເຊັ່ນ ສົມມຸດວ່າ ພະນັກງານໃນປັດຈຸບັນ ຍັງຈະສືບຕໍ່ຮັບເງິນເດືອນໃນປັດຈຸບັນ ຈົນກ່ວາຄາດວ່າພະນັກງານໃນປັດຈຸບັນນັ້ນ ຈະເລີ່ມໄດ້ຮັບຜົນປະໂຫຍດພະນັກງານຫຼັງອອກການ) ;

(ຂ) ບໍ່ຄຳນຶງເຖິງວຽກງານຮັບໃຊ້ໃນອະນາຄົດຂອງພະນັກງານປັດຈຸບັນ (ເຊັ່ນ ສົມມຸດວ່າ ໃຫ້ຢຸດຕິແຜນຄິດໄລ່ຜົນປະໂຫຍດສຳລັບພະນັກງານປັດຈຸບັນ ພ້ອມທັງ ສຳລັບພະນັກງານໃໝ່) ; ແລະ

(ຄ) ບໍ່ຄຳນຶງເຖິງການເສຍຊີວິດໃນໜ້າທີ່ທີ່ອາດເປັນໄປໄດ້ຂອງພະນັກງານປັດຈຸບັນ ໃນລະຫ່ວາງມື້ລາຍງານ ແລະມື້ທີ່ຄາດວ່າພະນັກງານຈະເລີ່ມຕົ້ນຮັບຜົນປະໂຫຍດພະນັກງານຫຼັງອອກການ (ເຊັ່ນ ສົມມຸດວ່າ ພະນັກງານໃນປັດຈຸບັນທັງໝົດ ຈະໄດ້ຮັບຜົນປະໂຫຍດພະນັກງານຫຼັງອອກການ). ເຖິງຢ່າງໃດກໍດີ, ການເສຍຊີວິດເວລາພົ້ນໜ້າທີ່ ກໍຕ້ອງໄດ້ຮັບການພິຈາລະນາ.

ວິສາຫະກິດທີ່ໄດ້ຮັບຜົນປະໂຫຍດຈາກການປັບປຸງການຕີມູນຄ່າໃຫ້ກະທັດລັດລົງ ຕ້ອງໄດ້ເອົາຜົນປະໂຫຍດທີ່ໄດ້ຮັບ ແລະ ທີ່ບໍ່ໄດ້ຮັບເຂົ້າໃນການຕີມູນຄ່າ ພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້.

28.20 ມາດຕະຖານສະບັບນີ້ ຈະບໍ່ກຳນົດໃຫ້ວິສາຫະກິດຕ້ອງໄດ້ຈ້າງຜູ້ຄິດໄລ່ສິນທິດແທນປະກັນໄພອິດສະລະ ເພື່ອດຳເນີນການ

ປະເມີນຄ່າຕາມສະຖິຕິປະກັນໄພຢ່າງຄົບຖ້ວນ ທີ່ຈຳເປັນເພື່ອຄິດໄລ່ພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້. ນອກນັ້ນ, ຍັງບໍ່ໄດ້ກຳນົດ ໃຫ້ມີການປະເມີນຄ່າຕາມສະຖິຕິປະກັນໄພຢ່າງຄົບຖ້ວນແຕ່ລະປີ. ໃນຊຸມປີລະຫ່ວາງ ການປະເມີນຄ່າຕາມສະຖິຕິປະກັນໄພຢ່າງຄົບຖ້ວນ, ຖ້າວ່າສົມມຸດຖານການຄິດໄລ່ສິນທົດແທນປະກັນໄພຕົ້ນຕໍ ບໍ່ໄດ້ມີການປ່ຽນແປງຫຍັງຫຼາຍ, ພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້ ສາມາດຖືກຕີມູນຄ່າຜ່ານການປັບປຸງການຕີມູນຄ່າຂອງປີຜ່ານມາບ້ວງການປ່ຽນແປງທາງດ້ານປະຊາກອນ ຂອງພະນັກງານ, ເຊັ່ນ ຈຳນວນພົນ ແລະ ລະດັບເງິນເດືອນ.

## ການຮັບຮອງນຳໃຊ້, ການປ່ຽນແປງ, ການຫຼຸດຂະໜາດລົງ ແລະ ການຊຳລະສະສາງແຜນນະໂຍບາຍຄິດໄລ່ຕ່າງໆ

28.21 ຖ້າວ່າ ແຜນນະໂຍບາຍຄິດໄລ່ຜົນປະໂຫຍດທີ່ກຳນົດໄວ້ໄດ້ຖືກຮັບຮອງນຳໃຊ້ ຫຼື ປ່ຽນແປງໃນປີປັດຈຸບັນ, ວິສາຫະກິດຕ້ອງເພີ້ມ ຫຼື ຫຼຸດໜີ້ສິນຜົນປະໂຫຍດພະນັກງານທີ່ກຳນົດໄວ້ ເພື່ອສ່ອງແສງເຖິງການປ່ຽນແປງດັ່ງກ່າວ ແລະ ຕ້ອງຮັບຮູ້ລາຍການບັນຊີ ສ່ວນເພີ້ມຂຶ້ນ (ສ່ວນຫຼຸດລົງ) ເປັນລາຍຈ່າຍ (ລາຍຮັບ) ໃນການຄິດໄລ່ກຳໄລ ຫຼື ຂາດທຶນ ໃນປີປັດຈຸບັນ. ກົງກັນຂ້າມ, ຖ້າວ່າແຜນນະໂຍບາຍຄິດໄລ່ໃດໜຶ່ງໄດ້ຖືກຫຼຸດຂະໜາດລົງ (ໝາຍຄວາມວ່າມີການຫຼຸດຜົນປະໂຫຍດລົງ ຫຼື ຫຼຸດພະນັກງານທີ່ຖືກຄຸ້ມກັນລົງ) ຫຼື ຊຳລະສະສາງ (ໄດ້ສະສາງພັນທະຂອງນາຍຈ້າງໝົດ) ໃນປີປັດຈຸບັນ, ພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້ ຈະຫຼຸດລົງ ຫຼື ຖືກລົບລ້າງ ແລະ ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ສ່ວນໄດ້ ຫຼື ສ່ວນເສຍ ໃນກຳໄລ ຫຼື ຂາດທຶນ ໃນປີປັດຈຸບັນ.

## ຊັບສິນໃນແຜນນະໂຍບາຍຄິດໄລ່ຜົນປະໂຫຍດທີ່ກຳນົດໄວ້

28.22 ຖ້າວ່າ ມູນຄ່າປັດຈຸບັນຂອງພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້ໃນມື້ລາຍງານ ຫາກຕ່ຳກ່ວາມູນຄ່າຍຸຕິທຳ ຂອງຊັບສິນໃນແຜນໃນມື້ນັ້ນ, ແຜນຄິດໄລ່ນັ້ນ ຈະມີສ່ວນເກີນ. ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີສ່ວນເກີນຂອງແຜນຄິດໄລ່ ເປັນຊັບສິນໃນແຜນຄິດໄລ່ຜົນປະໂຫຍດທີ່ກຳນົດໄວ້ ພຽງແຕ່ເມື່ອຫາກສາມາດໄດ້ຮັບຄືນສ່ວນເກີນຜ່ານການຫຼຸດຜ່ອນເງິນສົມທົບໃນອະນາຄົດ ຫຼື ຜ່ານການທົດແທນເງິນຄືນ ທີ່ໄດ້ມາຈາກແຜນຄິດໄລ່ນັ້ນ.

## ຕົ້ນທຶນຂອງແຜນຄິດໄລ່ຜົນປະໂຫຍດທີ່ກຳນົດໄວ້

28.23 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີສ່ວນປ່ຽນແປງສຸດທິ ຂອງໜີ້ສິນຜົນປະໂຫຍດພະນັກງານທີ່ກຳນົດໄວ້ໃນປີ, ທີ່ບໍ່ແມ່ນສ່ວນປ່ຽນແປງທີ່ຕິດພັນກັບຜົນປະໂຫຍດທີ່ຈ່າຍໃຫ້ພະນັກງານໃນປີ ຫຼື ເນື່ອງຈາກເງິນສົມທົບຈາກນາຍຈ້າງ, ເປັນຕົ້ນທຶນຂອງແຜນນະໂຍບາຍຄິດໄລ່ຜົນປະໂຫຍດພະນັກງານທີ່ກຳນົດໄວ້ໃນປີ. ຕົ້ນທຶນດັ່ງກ່າວ ຖືກຮັບຮູ້ລາຍການບັນຊີສ່ວນໜຶ່ງໃນກຳໄລ ຫຼື ຂາດທຶນ ແລະ ອີກສ່ວນໜຶ່ງເປັນລາຍການຂອງຜົນໄດ້ຮັບສັງລວມອື່ນໆ (ເບິ່ງ ວັກ 28.24) ເວັ້ນເສຍແຕ່ວ່າໝວດອື່ນໆຂອງມາດຕະຖານສະບັບນີ້ ກຳນົດໃຫ້ຮັບຮູ້ລາຍການບັນຊີຕົ້ນທຶນນັ້ນ ເປັນສ່ວນໜຶ່ງຂອງຕົ້ນທຶນຂອງຊັບສິນເຊັ່ນ ເຄື່ອງໃນສາງ ຫຼື ຊັບສົມບັດຄົງທີ່ມີຕົວຕົນ.

## ການຮັບຮູ້ລາຍການບັນຊີ

28.24 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີສ່ວນໄດ້ ຫຼື ສ່ວນເສຍ ດ້ານສະຖິຕິປະກັນໄພທັງໝົດ ໃນປີທີ່ເກີດຂຶ້ນ. ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ສ່ວນໄດ້ ແລະ ສ່ວນເສຍ ທັງໝົດດ້ານສະຖິຕິປະກັນໄພ ໃນລາຍຮັບສັງລວມອື່ນໆ.

28.25 ສ່ວນປ່ຽນແປງສຸດທິຂອງໜີ້ສິນຜົນປະໂຫຍດພະນັກງານ ທີ່ກຳນົດໄວ້ຊຶ່ງໄດ້ຖືກຮັບຮູ້ລາຍການບັນຊີເປັນຕົ້ນທຶນຂອງແຜນນະໂຍບາຍຄິດໄລ່ຜົນປະໂຫຍດທີ່ກຳນົດໄວ້ ລວມມີ :

(ກ) ສ່ວນປ່ຽນແປງຂອງໜີ້ສິນຜົນປະໂຫຍດພະນັກງານທີ່ກຳນົດໄວ້ ອັນເນື່ອງຈາກການຮັບໃຊ້ວຽກງານ ຂອງພະນັກງານໃນຮອບເວລາລາຍງານ.

(ຂ) ດອກເບ້ຍ ຂອງພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້ ໃນຮອບເວລາລາຍງານ.

(ຄ) ຜົນຕອບແທນຂອງຊັບສິນໃນແຜນນະໂຍບາຍຄິດໄລ່ ແລະ ສ່ວນປ່ຽນແປງສຸດທິຂອງມູນຄ່າຍຸຕິທຳຂອງສິດທິຮັບການທົດແທນຄືນທີ່ໄດ້ຮັບຮູ້ລາຍການບັນຊີ (ເບິ່ງວັກ 28,28) ໃນຮອບເວລາລາຍງານ.

(ງ) ສ່ວນໄດ້ ແລະ ສ່ວນເສຍດ້ານສະຖິຕິປະກັນໄພ ທີ່ໄດ້ເກີດຂຶ້ນໃນຮອບເວລາລາຍງານ.

(ຈ) ສ່ວນເພີ້ມຂຶ້ນ ຫຼື ສ່ວນຫຼຸດລົງຂອງໜີ້ສິນຜົນປະໂຫຍດພະນັກງານທີ່ກຳນົດໄວ້ອັນເນື່ອງຈາກການຮັບຮອງເອົາແຜນ

ຄິດໄລ່ໃໝ່ ຫຼື ການປ່ຽນແປງແຜນນະໂຍບາຍຄິດໄລ່ທີ່ມີ ໃນຮອບເວລາລາຍງານ (ເບິ່ງວັກ 28.21).

(ສ) ສ່ວນຫຼຸດລົງຂອງໜີ້ສິນຜົນປະ�โยດພະນັກງານທີ່ກຳນົດໄວ້ ອັນເນື່ອງຈາກການຫຼຸດຂະໜາດລົງ ຫຼື ການຊຳລະສະສາງແຜນນະໂຍບາຍຄິດໄລ່ທີ່ມີ ໃນຮອບເວລາລາຍງານ (ເບິ່ງວັກ 28.21).

28.26 ພາຍໃຕ້ແຜນນະໂຍບາຍຄິດໄລ່ຜົນປະໂຫຍດພະນັກງານທີ່ກຳນົດໄວ້, ວຽກງານຮັບໃຊ້ຂອງພະນັກງານເຮັດໃຫ້ເກີດມີພັນທະ ເຖິງແມ່ນວ່າສິດທິໃນຜົນປະໂຫຍດ ແມ່ນບົນເງື່ອນໄຂການວ່າຈ້າງງານໃນອະນາຄົດ (ເວົ້າອີກຢ່າງໜຶ່ງ, ເປັນຜົນປະໂຫຍດທີ່ບໍ່ທັນໄດ້ຮັບ). ປີການຜ່ານໆມາຈົນເຖິງມື້ໄດ້ຮັບສິດ ເຮັດໃຫ້ເກີດມີພັນທະແບບປະລິຍາຍ, ຍ້ອນວ່າໃນມື້ລາຍງານແຕ່ລະຄັ້ງຕິດຕໍ່ກັນ, ຈຳນວນເງິນຈາກການ ທີ່ພະນັກງານຮັບໃຊ້ວຽກງານໃນອະນາຄົດ ກ່ອນຈະໄດ້ຮັບສິດຮັບຜົນປະໂຫຍດນັ້ນແມ່ນຫຼຸດລົງ. ໃນເວລາຕີມູນຄ່າພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້, ວິສາຫະກິດພິຈາລະນາຄວາມເປັນໄປໄດ້ ທີ່ວ່າພະນັກງານບາງຄົນຈະບໍ່ໄດ້ເງື່ອນໄຂ ໃນການໄດ້ຮັບສິດຕໍ່ຜົນປະໂຫຍດດັ່ງກ່າວ. ເຖິງຢ່າງໃດກໍດີ, ບາງຜົນປະໂຫຍດພະນັກງານຫຼັງອອກການ (ເຊັ່ນ ການຊ່ວຍເຫຼືອໃນການປິ່ນປົວພະຍາດຫຼັງອອກການ) ທີ່ວິສາຫະກິດຕ້ອງໄດ້ຈ່າຍ ກໍຕໍ່ເມື່ອ ມີເຫດການທີ່ກຳນົດໄວ້ເກີດຂຶ້ນ ພາຍຫຼັງພົ້ນສະພາບການເປັນພະນັກງານແລ້ວ (ເຊັ່ນລົ້ມປ່ວຍ), ກໍຈະຖືວ່າມີການສ້າງພັນທະໄວ້ເມື່ອພະນັກງານໄດ້ຮັບໃຊ້ວຽກງານ ຊຶ່ງຈະໃຫ້ສິດໄດ້ຮັບຜົນປະໂຫຍດດັ່ງກ່າວ ເມື່ອເຫດການທີ່ກຳນົດໄວ້ຫາກເກີດຂຶ້ນ. ຄວາມເປັນໄປໄດ້ທີ່ວ່າເຫດການທີ່ໄດ້ກຳນົດໄວ້ດັ່ງກ່າວເກີດຂຶ້ນ ຈະມີຜົນກະທົບໃສ່ການຕີມູນຄ່າພັນທະດັ່ງກ່າວ, ແຕ່ຫາກບໍ່ກຳນົດວ່າພັນທະມີຢູ່ຈິງ ຫຼືບໍ່.

### ການທົດແທນຄືນ

28.28 ຖ້າວ່າວິສາຫະກິດແນ່ໃຈວ່າ ຝ່າຍໜຶ່ງອີກຈະທົດແທນເງິນສ່ວນໜຶ່ງ ຫຼື ທັງໝົດ ລາຍຈ່າຍອັນຈຳເປັນເພື່ອສະສາງພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້, ວິສາຫະກິດຕ້ອງໄດ້ຮັບຮູ້ລາຍການບັນຊີສິດທິໃນການໄດ້ຮັບເງິນທົດແທນຄືນ ເປັນຊັບສິນໜຶ່ງຕ່າງຫາກ. ວິສາຫະກິດຕ້ອງຕີມູນຄ່າຊັບສິນນັ້ນ ຕາມມູນຄ່າຍຸຕິທຳ. ລາຍຈ່າຍທີ່ພົວພັນກັບແຜນຄິດໄລ່ຜົນປະໂຫຍດທີ່ກຳນົດໄວ້ ອາດຖືກສະແດງໃຫ້ເຫັນເປັນຈຳນວນເງິນສຸດທິ ພາຍຫຼັງຫັກຈຳນວນເງິນທົດແທນຄືນ ທີ່ໄດ້ຖືກຮັບຮູ້ລາຍການບັນຊີແລ້ວ ໃນໃບລາຍງານຜົນໄດ້ຮັບສັງລວມ (ຫຼື ໃບລາຍງານຜົນໄດ້ຮັບ ຖ້າຫາກໄດ້ນຳສະເໜີ).

## ຜົນປະໂຫຍດໄລຍະຍາວອື່ນໆຂອງພະນັກງານ

28.29 ຜົນປະໂຫຍດໄລຍະຍາວອື່ນໆຂອງພະນັກງານ ລວມມີ ຕົວຢ່າງຕໍ່ໄປນີ້ :

(ກ) ການລາພັກໄລຍະຍາວ ທີ່ໄດ້ຮັບຄ່າທົດແທນ, ເຊັ່ນການພັກການຍາວຫຼັງການເຮັດວຽກເປັນໄລຍະຍາວ ຫຼື ການລາພັກຍາວໃນປີ.

(ຂ) ຜົນປະໂຫຍດ ທີ່ຕິດພັນກັບການເຮັດວຽກໄລຍະຍາວ.

(ຄ) ເງິນນະໂຍບາຍຄົນພິການ ໄລຍະຍາວ.

(ງ) ການແບ່ງຜົນກຳໄລ ແລະ ເງິນບຳເນັດຕ້ອງຈ່າຍໃນເວລາສິບສອງເດືອນ ຫຼື ຫຼາຍກ່ວານັ້ນ ພາຍຫຼັງສິ້ນສຸດປີທີ່ພະນັກງານໄດ້ຮັບໃຊ້ໜ້າທີ່ການທີ່ກ່ຽວຂ້ອງ.

(ຈ) ຄ່າທົດແທນແຮງງານທີ່ຈະຈ່າຍໃນເວລາສິບສອງເດືອນ ຫຼື ຫຼາຍກ່ວານັ້ນ ພາຍຫຼັງສິ້ນສຸດປີທີ່ມີສິດໄດ້ຮັບ.

28.30 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີໜີ້ສິນ ບ້ວງຜົນປະໂຫຍດໄລຍະຍາວອື່ນໆຂອງພະນັກງານ ທີ່ໄດ້ຕີມູນຄ່າເປັນລວມ ຍອດເງິນສຸດທິຂອງຈຳນວນເງິນດັ່ງລຸ່ມນີ້ :

(ກ) ມູນຄ່າປັດຈຸບັນຂອງພັນທະ ບ້ວງຜົນປະໂຫຍດໃນມື້ລາຍງານ, ລົບ

(ຂ) ມູນຄ່າຍຸຕິທຳໃນມື້ລາຍງານຂອງຊັບສິນໃນແຜນ (ຖ້າຫາກມີຕົວຈິງ) ເພື່ອຊຳລະສະສາງພັນທະໂດຍກົງ.

ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ສ່ວນປ່ຽນແປງຂອງໜີ້ສິນ ໂດຍອີງຕາມວັກ 28.23.

## ຜົນປະໂຫຍດເວລາສິ້ນສຸດສັນຍາ

28.31 ວິສາຫະກິດອາດມີຂໍ້ຜູກພັນ, ທາງດ້ານນິຕິກຳ, ຕາມສັນຍາທີ່ໄດ້ເຊັນກັບພະນັກງານ ຫຼື ຕົວແທນຂອງພະນັກງານ ຫຼື ຕາມພັນທະແບບປະລິຍາຍ ອີງຕາມທາງປະຕິບັດດ້ານທຸລະກິດ, ປະເພນີ ຫຼື ຄວາມປະສົງທີ່ຈະປະຕິບັດຢ່າງເທົ່າທຽມກັນໃນການຊຳລະເງິນ (ຫຼື ສະໜອງຜົນປະ�โยດອື່ນໆ) ໃຫ້ພະນັກງານເວລາສິ້ນສຸດສັນຍາແຮງງານ. ການຈ່າຍຊຳລະເງິນດັ່ງກ່າວ ເປັນຜົນປະโยດເວລາສິ້ນສຸດສັນຍາ.

### ການຮັບຮູ້ລາຍການບັນຊີ

28.32 ເນື່ອງຈາກວ່າ ຜົນປະโยດເວລາສິ້ນສຸດສັນຍາ ບໍ່ໃຫ້ຜົນປະโยດດ້ານເສດຖະກິດໃນອະນາຄົດແກ່ວິສາຫະກິດ, ວິສາຫະກິດຕ້ອງໄດ້ຮັບຮູ້ລາຍການບັນຊີ ຂອງລາຍການດັ່ງກ່າວ ເປັນລາຍຈ່າຍໃນກຳໄລ ຫຼື ຂາດທຶນໃນທັນທີ.

28.33 ເວລາວິສາຫະກິດຮັບຮູ້ລາຍການບັນຊີ ຜົນປະโยດເວລາສິ້ນສຸດສັນຍາ, ວິສາຫະກິດຍັງຕ້ອງລົງບັນຊີ ກ່ຽວກັບການຫຼຸດຜ່ອນຜົນປະโยດດ້ານເງິນບຳນານ ຫຼື ຜົນປະโยດອື່ນໆຂອງພະນັກງານລົງ.

28.34 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ຜົນປະโยດເວລາສິ້ນສຸດສັນຍາ ເປັນໜີ້ສິນ ແລະ ລາຍຈ່າຍ ກໍຕໍ່ເມື່ອວິສາຫະກິດໄດ້ມີພາລະຜູກພັນຢ່າງຈະແຈ້ງ ວ່າຈະ:

(ກ) ໃຫ້ພະນັກງານໜຶ່ງ ຫຼື ຫຼາຍຄົນສິ້ນສຸດສັນຍາແຮງງານກ່ອນມື້ອອກຮັບເງິນບຳນານ ຕາມປົກກະຕິ, ຫຼື

(ຂ) ໃຫ້ຜົນປະโยດເວລາສິ້ນສຸດສັນຍາ ເພື່ອສົ່ງເສີມການອອກການໂດຍສະໝັກໃຈ.

28.35 ວິສາຫະກິດ ມີພາລະຜູກພັນຢ່າງຈະແຈ້ງ ໃນເວລາສິ້ນສຸດສັນຍາ ກໍຕໍ່ເມື່ອວິສາຫະກິດມີແຜນການລະອຽດ ກ່ຽວກັບການສິ້ນສຸດສັນຍາຢ່າງເປັນທາງການ ແລະ ເປັນໄປບໍ່ໄດ້ທີ່ຈະຍົກເລີກແຜນການດັ່ງກ່າວ.

### ການຕີມູນຄ່າ

28.36 ວິສາຫະກິດຕ້ອງຕີມູນຄ່າ ຜົນປະโยດເວລາສິ້ນສຸດສັນຍາ ຕາມຕົວເລກຄາດຄະເນປະຕິບັດທີ່ດີທີ່ສຸດ ກ່ຽວກັບລາຍຈ່າຍທີ່ຈຳເປັນເພື່ອຊຳລະສະສາງພັນທະໃນມື້ລາຍງານ. ໃນກໍລະນີທີ່ມີການຊຸກຍູ້ໃຫ້ອອກການໂດຍສະໝັກໃຈ, ການຕີມູນຄ່າຜົນປະโยດເວລາສິ້ນສຸດສັນຍາ ຕ້ອງໄດ້ອີງໃສ່ຈຳນວນພົນທີ່ຄາດວ່າຈະຮັບເອົາການສະເໜີນັ້ນ.

28.37 ຖ້າວ່າຜົນປະโยດເວລາສິ້ນສຸດສັນຍາ ຄ້າງຈ່າຍເກີນສິບສອງເດືອນຂຶ້ນໄປ ພາຍຫຼັງສິ້ນສຸດຮອບເວລາລາຍງານ, ຕ້ອງໄດ້ຕີມູນຄ່າດັ່ງກ່າວ ດ້ວຍການຕີມູນຄ່າເປັນມູນຄ່າປັດຈຸບັນ.

## ການເປີດເຜີຍຂໍ້ມູນຂ່າວສານ

### ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບຜົນປະโยດໄລຍະສັ້ນຂອງພະນັກງານ

28.39 ໝວດດັ່ງກ່າວນີ້ ກຳນົດໃຫ້ເປີດເຜີຍຂໍ້ມູນຂ່າວສານສະເພາະ ກ່ຽວກັບຜົນປະโยດໄລຍະສັ້ນຂອງພະນັກງານ.

### ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບແຜນສົມທົບເງິນທີ່ກຳນົດໄວ້

28.40 ວິສາຫະກິດຕ້ອງເປີດເຜີຍຈຳນວນເງິນທີ່ໄດ້ຮັບຮູ້ລາຍການບັນຊີເປັນລາຍຈ່າຍ ໃນກຳໄລ ຫຼື ຂາດທຶນ ສຳລັບແຜນສົມທົບເງິນທີ່ກຳນົດໄວ້. ຖ້າວ່າວິສາຫະກິດປະຕິບັດແຜນນະ�โยບາຍຄິດໄລ່ຜົນປະโยດກຸ່ມນາຍຈ້າງ ທີ່ກຳນົດໄວ້ເປັນແຜນສົມທົບເງິນທີ່ກຳນົດໄວ້ ເນື່ອງຈາກບໍ່ມີຂໍ້ມູນຂ່າວສານພຽງພໍ ເພື່ອຈະລົງບັນຊີກ່ຽວກັບຜົນປະโยດທີ່ກຳນົດໄວ້ (ເບິ່ງວັກ 28.11), ວິສາຫະກິດຕ້ອງໄດ້ເປີດເຜີຍຄວາມເປັນຈິງທີ່ວ່າ ນີ້ເປັນແຜນຄິດໄລ່ຜົນປະโยດທີ່ກຳນົດໄວ້ ແລະ ເຫດຜົນວ່າເປັນຫຍັງຈຶ່ງໄດ້ລົງບັນຊີເປັນແຜນສົມທົບເງິນທີ່ກຳນົດໄວ້ ພ້ອມໆກັບເປີດເຜີຍຂໍ້ມູນຂ່າວສານທັງໝົດທີ່ມີ ກ່ຽວກັບສ່ວນເກີນ ຫຼື ສ່ວນຂາດເຂີນ ຂອງແຜນຄິດໄລ່ນັ້ນ ພ້ອມທັງ ຜົນຕາມມາທີ່ອາດມີ, ຖ້າມີ, ສຳລັບວິສາຫະກິດ.

### ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບແຜນນະ�โยບາຍຄິດໄລ່ຜົນປະโยດພະນັກງານທີ່ກຳນົດໄວ້

28.41 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ ກ່ຽວກັບແຜນນະ�โยບາຍຄິດໄລ່ຜົນປະโยດພະນັກງານທີ່ກຳນົດໄວ້ (ຍົກເວັ້ນແຜນນະ�โยບາຍຄິດໄລ່ຜົນປະโยດກຸ່ມນາຍຈ້າງທີ່ໄດ້ກຳນົດໄວ້ ທີ່ໄດ້ລົງບັນຊີເປັນແຜນສົມທົບເງິນທີ່ກຳນົດໄວ້ ຕາມວັກ 28.11, ຊຶ່ງຕ້ອງປະຕິບັດຕາມການເປີດເຜີຍຂໍ້ມູນຂ່າວສານໃນວັກ 28.40 ແທນ). ຖ້າວ່າວິສາຫະກິດມີຫຼາຍແຜນຄິດໄລ່ຜົນປະโยດທີ່ກຳນົດໄວ້, ອາດເປີດເຜີຍຂໍ້ມູນຢ່າງສັງລວມ ຫຼື ແຍກເປັນແຕ່ລະແຜນຄິດໄລ່ ຫຼື ເຕົ້າໂຮມກັນຕາມ

ແບບວິທີການທີ່ຖືວ່າເປັນປະໂຫຍດຫຼາຍກ່ວາໝູ່.

(ກ) ບົດອະທິບາຍລວມ ກ່ຽວກັບປະເພດແຜນຄິດໄລ່, ລວມທັງນະໂຍບາຍການປະກອບທຶນ.

(ຂ) ນະໂຍບາຍການບັນຊີ ເພື່ອຮັບຮູ້ລາຍການບັນຊີສ່ວນໄດ້ ແລະ ສ່ວນເສຍດ້ານສະຖິຕິປະກັນໄພ ແລະ ຈຳນວນເງິນສ່ວນໄດ້ ຫຼື ສ່ວນເສຍດ້ານສະຖິຕິປະກັນໄພໃນຮອບເວລາ ທີ່ໄດ້ຮັບຮູ້ລາຍການບັນຊີ ໃນປີ .

(ຄ) ການອະທິບາຍລາຍການລະອຽດ ຖ້າວ່າວິສາຫະກິດຫາກປັບປຸງໃຫ້ກະທັດລັດຕາມທີ່ໄດ້ກຳນົດໄວ້ໃນວັກ 28.19 ເພື່ອຕີມູນຄ່າພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້ຂອງຕົນ.

(ງ) ມື້ປະເມີນຜົນສະຖິຕິປະກັນໄພຄົບຖ້ວນທີ່ຫຼ້າສຸດ ແລະ, ຖ້າບໍ່ແມ່ນມື້ລາຍງານ, ບົດອະທິບາຍ ກ່ຽວກັບການປັບປຸງທີ່ໄດ້ດຳເນີນເພື່ອຕີມູນຄ່າພັນທະຜົນປະໂຫຍດທີ່ກຳນົດໄວ້ໃນມື້ລາຍງານ.

(ຈ) ການສົມທຽບຕົວເລກຍອດເຫຼືອຕົ້ນປີ ແລະ ທ້າຍປີ ຂອງພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້ ໂດຍແຍກເປີດເຜີຍຈຳນວນເງິນຜົນປະໂຫຍດທີ່ໄດ້ຈ່າຍ ແລະ ສ່ວນປ່ຽນແປງອື່ນໆທັງໝົດ.

(ສ) ການສົມທຽບຕົວເລກຍອດເຫຼືອຕົ້ນປີ ແລະ ທ້າຍປີ ຂອງມູນຄ່າຍຸຕິທຳຂອງຊັບສິນໃນແຜນ ແລະ ຍອດເຫຼືອຕົ້ນປີ ແລະ ທ້າຍປີ ຂອງທຸກສິດທິໃນການຮັບເງິນທົດແທນຄືນ ທີ່ໄດ້ຖືກຮັບຮູ້ລາຍການບັນຊີເປັນຊັບສິນ ໂດຍແຍກຊີ້ແຈງຕ່າງຫາກ, ຖ້າປະຕິບັດໄດ້,:

(i) ເງິນສົມທົບ ;

(ii) ຜົນປະໂຫຍດທີ່ໄດ້ຈ່າຍ ; ແລະ

(iii) ສ່ວນປ່ຽນແປງອື່ນໆ ຂອງຊັບສິນໃນແຜນ.

(ຊ) ລວມຍອດຕົ້ນທຶນ ທີ່ກ່ຽວຂ້ອງກັບແຜນນະໂຍບາຍຄິດໄລ່ຜົນປະໂຫຍດພະນັກງານທີ່ກຳນົດໄວ້ໃນປີ, ໂດຍແຍກເປີດເຜີຍຈຳນວນເງິນ :

(i) ທີ່ໄດ້ຖືກຮັບຮູ້ລາຍການບັນຊີໃນກຳໄລ ຫຼື ຂາດທຶນເປັນລາຍຈ່າຍ, ແລະ

(ii) ທີ່ໄດ້ຈົດເຂົ້າຕົ້ນທຶນຂອງຊັບສິນ.

(ຍ) ອັດຕາສ່ວນຮ້ອຍ ຫຼື ມູນຄ່າ ທີ່ແຕ່ລະປະເພດລາຍໃຫ່ຍ ເປັນສ່ວນປະກອບຂອງມູນຄ່າຍຸຕິທຳຂອງລວມຍອດຊັບສິນໃນແຜນໃນມື້ລາຍງານ ຊຶ່ງປະເພດລາຍໃຫຍ່ຂອງຊັບສິນໃນແຜ່ນ ຕ້ອງລວມມີ ແຕ່ຫາກບໍ່ຈຳກັດ ເຄື່ອງມືການເງິນປະເພດທຶນເຈົ້າຂອງ, ເຄື່ອງມືການເງິນປະເພດໜີ້, ອະສັງຫາລິມະຊັບ ແລະ ຊັບສິນອື່ນໆທັງໝົດ;

(ດ) ຈຳນວນເງິນທີ່ລວມຢູ່ໃນມູນຄ່າຍຸຕິທຳຂອງຊັບສິນໃນແຜນ ສຳລັບ :

(i) ແຕ່ລະປະເພດເຄື່ອງມືການເງິນຂອງວິສາຫະກິດ, ແລະ

(ii) ອະສັງຫາລິມະຊັບທຸກລາຍທີ່ວິສາຫະກິດໄດ້ຄອບຄອງ ຫຼື ຊັບສິນອື່ນໆ ທີ່ວິສາຫະກິດໄດ້ນຳໃຊ້ .

(ຕ) ຜົນຕອບແທນຕົວຈິງຂອງຊັບສິນໃນແຜນ.

(ຖ) ສົມມຸດຖານຕົ້ນຕໍຂໍ້ໃນການຄິດໄລ່ສິນທົດແທນປະກັນໄພທີ່ໄດ້ນຳໃຊ້, ຊຶ່ງ, ຖ້າປະຕິບັດໄດ້ ລວມມີ :

(i) ອັດຕາການຕີມູນຄ່າເປັນມູນຄ່າປັດຈຸບັນ ;

(ii) ອັດຕາຜົນຕອບແທນທີ່ຄາດຫວັງຈາກຊັບສິນ ໃນແຜນສຳລັບຮອບເວລາທີ່ໄດ້ສະເໜີ ໃນເອກະສານລາຍງານການເງິນ ;

(iii) ອັດຕາທີ່ຄາດໄວ້ສຳລັບການເພີ້ມຂຶ້ນຂອງເງິນເດືອນ ;

(iv) ອັດຕາທ່າອ່ຽງຄ່າໃຊ້ຈ່າຍໃນການປິ່ນປົວພະຍາດ ; ແລະ

(v) ຂໍ້ສົມມຸດຖານສຳຄັນກ່ຽວກັບການຄິດໄລ່ສິນທົດແທນປະກັນໄພອື່ນໆ ທີ່ໄດ້ນຳໃຊ້.

ການສົມທຽບຕົວເລກທີ່ໄດ້ຍົກຂຶ້ນໃນຂໍ້ (ຈ) ແລະ (ສ) ຂ້າງເທິງ ບໍ່ຈຳເປັນຕ້ອງສະແດງສຳລັບຮອບເວລາຜ່ານໆ

ມາ.

## ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບຜົນປະໂຫຍດໄລຍະຍາວອື່ນໆ

28.42 ສຳລັບແຕ່ລະປະເພດຜົນປະໂຫຍດໄລຍະຍາວອື່ນໆ ຊຶ່ງວິສາຫະກິດສະໜອງໃຫ້ແກ່ພະນັກງານ, ວິສາຫະກິດຕ້ອງເປີດເຜີຍລັກສະນະເນື້ອໃນຂອງຜົນປະໂຫຍດນັ້ນ, ມູນຄ່າຂອງພັນທະດັ່ງກ່າວ ແລະ ລະດັບ**ການປະກອບທຶນ**ໃນມື້ລາຍງານ.

## ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບຜົນປະໂຫຍດເວລາສິ້ນສຸດສັນຍາ

28.43 ສຳລັບແຕ່ລະປະເພດຜົນປະໂຫຍດເວລາສິ້ນສຸດສັນຍາ ຊຶ່ງວິສາຫະກິດສະໜອງໃຫ້ພະນັກງານ, ວິສາຫະກິດຕ້ອງແຈ້ງລັກສະນະເນື້ອໃນຂອງຜົນປະໂຫຍດດັ່ງກ່າວ, ນະໂຍບາຍການບັນຊີຂອງຕົນ, ແລະ ມູນຄ່າຂອງພັນທະ ພ້ອມທັງລະດັບການປະກອບທຶນໃນມື້ລາຍງານ.

28.44 ຖ້າຫາກມີຄວາມບໍ່ແນ່ນອນ ກ່ຽວກັບຈຳນວນພະນັກງານທີ່ຈະຮັບຜົນປະໂຫຍດເວລາສິ້ນສຸດສັນຍາ, ຈະມີໜີ້ສິນທີ່ອາດເກີດຂຶ້ນ. ໝວດ 21 *ເງິນແຮ ແລະ ສິ່ງທີ່ອາດຈະເກີດຂຶ້ນ* ກຳນົດໃຫ້ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບໜີ້ສິນທີ່ອາດເກີດຂຶ້ນ ເວັ້ນເສຍແຕ່ລະດັບຄວາມເປັນໄປໄດ້ ທີ່ຈະຕ້ອງຈ່າຍເງິນອອກເພື່ອຊຳລະຜົນປະໂຫຍດນັ້ນ ຍັງຢູ່ໃນລະດັບທີ່ບໍ່ໜ້າເປັນໄປໄດ້.

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| ໝວດ 28 | ປັດຈຸບັນ, ວິສາຫະກິດຂອງລາວ ບໍ່ໄດ້ໃຫ້ສິດແກ່ພະນັກງານຕົນ ໃນການໄດ້ຮັບການຊຳລະເງິນສົດໃນອະນາຄົດ ດ້ວຍການໃຫ້ສິດຕໍ່ຮຸ້ນ ທີ່ສາມາດໄຖ່ຖອນຄືນໄດ້ ແຕ່ສິ່ງນີ້ເປັນໄປໄດ້ ສຳລັບບໍລິສັດໃນກຸ່ມຕ່າງປະເທດ. ຂໍ້ກຳນົດ ເຫຼົ່ານີ້ ສາມາດຖືກນຳໃຊ້ ເພື່ອສ້າງເອກະສານລາຍງານການເງິນລວມກິດຈະການ ເມື່ອບໍລິສັດແມ່ລາວ ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມຕ່າງປະເທດ. ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວທຍ ຢ່າງເຕັມສ່ວນ. ວັກກ່ຽວກັບພະນັກງານ ຖືກຕັດອອກ ຫຼື ປັບປຸງ. |
| 28.1<br>28.2 | ມາດຕະຖານ FRS ນີ້ ບໍ່ໄດ້ກຳນົດກ່ຽວກັບ ຜົນປະໂຫຍດຂອງພະນັກງານ ທີ່ຈ່າຍເປັນຮຸ້ນ ເພາະສະພາບການນີ້ ບໍ່ມີ ໃນມາດຕະຖານ FRS ສຳລັບ ວນກ (ເບິ່ງ ໝວດ 26 *ການຊຳລະຕາມຮຸ້ນ*). ວັກ 28.1 ຖືກປັບປຸງ ແລະ ວັກ 28.2 ຖືກຕັດອອກ. |
| 28.38<br>28.41 | ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນ ວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວທຍ ຢ່າງເຕັມສ່ວນ. ວັກ 28-38 ຖືກຕັດອອກ ແລະ ວັກ 28.41 ຖືກປັບປຸງ. |

# ໝວດ 29

# ອາກອນລາຍຮັບ

## ຂອບເຂດຂອງໝວດນີ້

29.1 ເພື່ອຈຸດປະສົງຂອງມາດຕະຖານສະບັບນີ້, ອາກອນລາຍຮັບ ລວມມີທຸກອາກອນພາຍໃນປະເທດ ທີ່ອີງໃສ່ຖານ**ກຳໄລ**ຖືກເສຍອາກອນ.

29.2 ໝວດດັ່ງກ່າວເວົ້າເຖິງການລົງບັນຊີ ກ່ຽວກັບອາກອນລາຍຮັບ. ໃນນີ້ ມີການກຳນົດໃຫ້ວິສາຫະກິດຮັບຮູ້ລາຍການບັນຊີ ກ່ຽວກັບຜົນຕາມມາທາງດ້ານອາກອນໃນປີ ແລະ ໃນອະນາຄົດຂອງລາຍການເຄື່ອນໄຫວ ແລະ ເຫດການອື່ນໆ ທີ່ໄດ້ຮັບຮູ້ລາຍການບັນຊີໃນເອກະສານລາຍງານການເງິນ. ຈຳນວນເງິນອາກອນດັ່ງກ່າວທີ່ໄດ້ຮັບຮູ້ລາຍການບັນຊີລວມມີ **ອາກອນໃນປີ.** ອາກອນໃນປີ ໝາຍເຖິງອາກອນຕ້ອງຈ່າຍ (ທົດແທນຄືນ) ບ້ວງກຳໄລຖືກເສຍອາກອນ (ຂາດທຶນອາກອນ) ໃນປີ ຫຼື ປີຜ່ານໆມາ.

## ການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າອາກອນໃນປີ

29.3 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ອາກອນໃນປີ ທີ່ຕີມູນຄ່າຕາມຈຳນວນເງິນທີ່ລວມມີຜົນກະທົບຈາກໜາກຜົນທີ່ອາດເປັນໄປໄດ້ຂອງການກວດຄືນໂດຍລັດຖະການສ່ວຍສາອາກອນ (ວັກ 29.4 ຫາ 29.8).

29.4 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີໜີ້ສິນອາກອນໃນປີ ເປັນອາກອນຕ້ອງຈ່າຍ ບ້ວງກຳໄລຖືກເສຍອາກອນໃນປີປັດຈຸບັນ ແລະ ປີຜ່ານໆມາ. ຖ້າວ່າຈຳນວນເງິນທີ່ໄດ້ຈ່າຍໃນປີປັດຈຸບັນ ແລະ ໃນປີຜ່ານໆມາ ຫາກເກີນຈຳນວນເງິນຕ້ອງຈ່າຍໃນປີດັ່ງກ່າວເຫຼົ່ານັ້ນ, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີສ່ວນເກີນດັ່ງກ່າວ ເປັນຊັບສິນອາກອນໃນປີ.

29.6 ວິສາຫະກິດຕ້ອງຕີມູນຄ່າໜີ້ສິນ (ຊັບສິນ) ອາກອນໃນປີ ຕາມຈຳນວນເງິນທີ່ຄາດວ່າຕ້ອງຈ່າຍ (ເກັບຄືນໄດ້) ໂດຍນຳໃຊ້ອັດຕາອາກອນ ແລະ ກົດໝາຍອາກອນທີ່ມີຜົນບັງຄັບໃຊ້ ຫຼື ຄາດວ່າມີຜົນບັງຄັບໃຊ້ໃນ**ມື້ລາຍງານ.** ວິສາຫະກິດຕ້ອງຖືວ່າອັດຕາອາກອນ ເປັນອັດຕາທີ່ຄາດວ່າມີຜົນບັງຄັບໃຊ້ ຖ້າວ່າເຫດການໃນອະນາຄົດທີ່ຕ້ອງການຜ່ານຂະບວນການຮັບຮອງ ເພື່ອໃຫ້ມີຜົນບັງຄັບໃຊ້ ຈະບໍ່ມີຜົນກະທົບທາງດ້ານປະຫວັດຕໍ່ໜາກຜົນ ແລະ ເປັນໄປໄດ້ໜ້ອຍທີ່ຈະມີຜົນກະທົບ. ວັກ 29.23 ຫາ 29.25 ໃຫ້ຄຳແນະນຳເພີ່ມເຕີມ ກ່ຽວກັບການຕີມູນຄ່າ.

29.7 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ສ່ວນປ່ຽນແປງຂອງໜີ້ສິນອາກອນໃນປີ ຫຼື ຊັບສິນອາກອນໃນປີ ເປັນ**ລາຍຈ່າຍອາກອນ**ໃນກຳໄລ ຫຼື ຂາດທຶນ.

29.8 ວິສາຫະກິດຕ້ອງລວມເອົາຜົນກະທົບຂອງໜາກຜົນທີ່ອາດເປັນໄປໄດ້ ຈາກການທົບທວນຄືນຂອງລັດຖະການສ່ວຍສາອາກອນ ຊຶ່ງໄດ້ຕີມູນຄ່າຕາມວັກ 29. 24 ເຂົ້າໃນຈຳນວນເງິນທີ່ໄດ້ຮັບຮູ້ລາຍການບັນຊີ ຕາມວັກ 29.4.

## ການຕີມູນຄ່າອາກອນຕ້ອງຈ່າຍໃນປີ

29.23 ວິສາຫະກິດຕ້ອງບໍ່ຕີມູນຄ່າ ຊັບສິນ ແລະ ໜີ້ສິນອາກອນຕ້ອງຈ່າຍໃນປີ ຫຼື ຊັບສິນອາກອນລໍຖ້າສະສາງ ເປັນມູນຄ່າປັດຈຸບັນ.

29.24 ຄວາມບໍ່ແນ່ນອນວ່າ ລັດຖະການສ່ວຍສາອາກອນ ຈະຍອມຮັບຈຳນວນເງິນ ທີ່ວິສາຫະກິດໄດ້ແຈ້ງເສຍອາກອນຫຼືບໍ່ ມີຜົນກະທົບຕໍ່ຈຳນວນເງິນອາກອນໃນປີ. ວິສາຫະກິດຕ້ອງຕີມູນຄ່າຊັບສິນ ແລະ ໜີ້ສິນອາກອນໃນປີ ຕາມຈຳນວນເງິນຜົນໄດ້ຮັບທີ່ເປັນໄປໄດ້ທັງໝົດ ຊຶ່ງຖືກກຳນົດດ້ວຍການສະເລ່ຍ ຕາມນ້ຳໜັກທີ່ມີຄວາມອາດເປັນໄປໄດ້ສູງ ໂດຍສົມມຸດວ່າລັດຖະການສ່ວຍສາອາກອນຈະທົບທວນຄືນຈຳນວນເງິນທັງໝົດທີ່ໄດ້ລາຍງານ ແລະ ຈະຮູ້ຂໍ້ມູນຂ່າວສານທີ່ກ່ຽວຂ້ອງທັງໝົດ. ສ່ວນປ່ຽນແປງຂອງຈຳນວນເງິນຂອງທຸກຜົນໄດ້ຮັບທີ່ເປັນໄປໄດ້ ຊຶ່ງຖືກກຳນົດດ້ວຍການສະເລ່ຍຕາມນ້ຳໜັກທີ່ມີຄວາມອາດເປັນໄປໄດ້ສູງ ຕ້ອງອີງຕາມຂໍ້ມູນຂ່າວສານໃໝ່ ແຕ່ຫາກບໍ່ແມ່ນການຕີຄວາມໝາຍໃໝ່ຂອງວິສາຫະກິດ ກ່ຽວກັບຂໍ້ມູນຂ່າວສານທີ່ມີໃນໄລຍະຜ່ານມາ.

## ການນຳສະເໜີ

29.27 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ລາຍຈ່າຍອາກອນ ໃນກຳໄລ ຫຼື ຂາດທຶນ.

29.28 ຖ້າວ່າວິສາຫະກິດຕ້ອງແຍກສະເໜີປະເພດຊັບສິນ (ໜີ້ສິນ) ອາກອນໝຸນວຽນ ເປັນຊັບສິນ (ໜີ້ສິນ) ໃນປີ ໃນໃບລາຍງານຖານະການເງິນຂອງຕົນເອງ.

### ການຫັກຊຳລະສະສາງ

29.29 ວິສາຫະກິດຕ້ອງຫັກຊຳລະສະສາງຊັບສິນ ແລະ ໜີ້ສິນອາກອນໃນປີ ກໍຕໍ່ເມື່ອມີສິດປະຕິບັດທາງດ້ານກົດໝາຍທີ່ຈະຫັກຊຳລະສະສາງຈຳນວນເງິນດັ່ງກ່າວ ແລະ ມີເຈດຕະນາ ທີ່ຈະຈ່າຍຊຳລະຈຳນວນເງິນດັ່ງກ່າວ ດ້ວຍຍອດເຫຼືອສຸດທິ ຫຼື ສະສາງຊັບສິນ ແລະ ໜີ້ສິນ ພ້ອມໆກັນ.

## ການເປີດເຜີຍຂໍ້ມູນຂ່າວສານ

29.30 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານ ທີ່ຊ່ວຍໃຫ້ຜູ້ນຳໃຊ້ເອກະສານລາຍງານການເງິນ ປະເມີນລັກສະນະເນື້ອໃນ ແລະ ຜົນກະທົບດ້ານການເງິນຂອງຜົນຕາມມາຈາກອາກອນໃນປີ ຂອງລາຍການເຄື່ອນໄຫວ ທີ່ໄດ້ຖືກຮັບຮູ້ລາຍການບັນຊີ ແລະ ເຫດການອື່ນໆ.

29.31 ວິສາຫະກິດຕ້ອງແຍກເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບອົງປະກອບຕົ້ນຕໍຂອງລາຍຈ່າຍ (ລາຍຮັບ) ອາກອນ. ອົງປະກອບຂອງລາຍຈ່າຍ (ລາຍຮັບ) ອາກອນດັ່ງກ່າວ ອາດປະກອບດ້ວຍ :

(ກ) ລາຍຈ່າຍ (ລາຍຮັບ) ອາກອນ ໃນປີ.

(ຂ) ທຸກລາຍການປັບປຸງທີ່ໄດ້ຮັບຮູ້ລາຍການບັນຊີ ໃນປີ ບ້ວງອາກອນໃນປີ ຫຼື ຂອງປີຜ່ານມາ.

(ຍ) ຈຳນວນເງິນລາຍຈ່າຍອາກອນທີ່ພົວພັນກັບສ່ວນປ່ຽນແປງນະ�โยบายການບັນຊີ ແລະ ຂໍ້ຜິດພາດ (ເບິ່ງໝວດ 10 *ນະโยบายການບັນຊີ, ຕົວເລກຄາດຄະເນປະຕິບັດ ແລະ ຂໍ້ຜິດພາດ*).

29.32 ວິສາຫະກິດຕ້ອງແຍກເປີດເຜີຍຂໍ້ມູນຂ່າວສານຂ້າງລຸ່ມນີ້ :

(ກ) ລວມຍອດອາກອນໃນປີ ກ່ຽວກັບລາຍການ ທີ່ໄດ້ຮັບຮູ້ລາຍການບັນຊີເປັນລາຍການຂອງຜົນໄດ້ຮັບສັງລວມອື່ນໆ.

(ຂ) ຄຳອະທິບາຍ ກ່ຽວກັບສ່ວນຜິດດ່ຽງທີ່ສຳຄັນລະຫ່ວາງ ຈຳນວນເງິນທີ່ສະເໜີໃນໃບລາຍງານຜົນໄດ້ຮັບສັງລວມ ແລະ ຈຳນວນເງິນ ທີ່ໄດ້ແຈ້ງໃຫ້ລັດຖະການສ່ວຍສາອາກອນ.

(ຄ) ຄຳອະທິບາຍ ກ່ຽວກັບສ່ວນປ່ຽນແປງຂອງອັດຕາອາກອນທີ່ມີຜົນບັງຄັບໃຊ້ ໂດຍສົມທຽບກັບຮອບເວລາລາຍງານຜ່ານມາ.

(ຈ) ມື້ສິ້ນສຸດກຳນົດເວລາ, ຖ້າມີ, ຂອງຂາດທຶນອາກອນ ແລະ ສິນເຊື່ອອາກອນທີ່ບໍ່ໄດ້ນຳໃຊ້.

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| ໝວດ 29<br>29.2<br>29.3(ຂ) ຫາ (ດ)<br>29.5<br>29.9 – 29.22<br>29.23<br>29.24<br>29.31(ຄ) - (ຊ)<br>29.32 (ກ), (ງ) ແລະ (ຈ) | ໃນມາດຕະຖານນີ້, ວນກ ຮັບຮູ້ລາຍການບັນຊີ ພຽງແຕ່ ອາກອນໃນປີ ບໍ່ຮັບຮູ້ລາຍການບັນຊີ ອາກອນລໍຖ້າສະສາງ. ສະນັ້ນ ບາງວັກ ຂອງໝວດນີ້ ຖືກຕັດອອກ ຫຼື ປັບປຸງ. |
| 29.1<br>29.25-29.26 | ຖ້າວິສາຫະກິດທີ່ບໍ່ຮັບໃຊ້ເງິນປະໂຫຍດສາທາລະນະໃດໜຶ່ງ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນ ວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວທຍ ຢ່າງເຕັມສ່ວນ. ວັກ 29.1 ຖືກປັບປຸງ. ວັກ 29.25-29.26 ຖືກຕັດອອກ. |
| 29.7<br>29.27 | ອາກອນໃນປີ ຍາມໃດກໍຖືກຮັບຮູ້ລາຍການບັນຊີ ເປັນລາຍຈ່າຍ ໃນກຳໄລ ຫຼື ຂາດທຶນ. |
| 29.28 | ມາດຕະຖານ FRS ສຳລັບ ວນກ ນີ້ ກຳນົດໃຫ້ຈັດປະເພດ ຊັບສິນ (ໜີ້ສິນ) ອາກອນລໍຖ້າສະສາງ ເປັນ ຊັບສິນ (ໜີ້ສິນ) ໝຸນວຽນ. |

# ໝວດ 30

# ການປ່ຽນຄ່າເງິນຕາຕ່າງປະເທດ

## ຂອບເຂດຂອງໝວດນີ້

30.1 ວິສາຫະກິດສາມາດດຳເນີນກິດຈະກຳຢູ່ຕ່າງປະເທດ ດ້ວຍສອງວິທີທາງ. ວິສາຫະກິດອາດມີລາຍການເຄື່ອນໄຫວເປັນເງິນຕາຕ່າງປະເທດ ຫຼື ອາດມີກິດຈະການຢູ່ຕ່າງປະເທດ. ນອກນັ້ນ, ວິສາຫະກິດອາດສະເໜີເອກະສານລາຍງານການເງິນຂອງຕົນ ເປັນສະກຸນເງິນຕາຕ່າງປະເທດ ເມື່ອໄດ້ຮັບອະນຸຍາດຈາກກະຊວງການເງິນ. ໝວດດັ່ງກ່າວນີ້ ເວົ້າເຖິງວິທີເອົາລາຍການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ ແລະ ກິດຈະການຢູ່ຕ່າງປະເທດ ລວມເຂົ້າໃນເອກະສານລາຍງານການເງິນຂອງວິສາຫະກິດ ແລະ ວິທີປ່ຽນຄ່າເປັນ **ສະກຸນເງິນລາຍງານ.** ການບັນຊີກ່ຽວກັບ**ເຄື່ອງມືການເງິນ** ທີ່ເປັນສະກຸນເງິນຕາຕ່າງປະເທດ ແລະ ການບັນຊີຄຸ້ມກັນຄວາມສ່ຽງຂອງລາຍການທີ່ເປັນເງິນຕາຕ່າງປະເທດ ໄດ້ກຳນົດໄວ້ໃນໝວດ 11 *ເຄື່ອງມືການເງິນພື້ນຖານ.*

## ສະກຸນເງິນທີ່ໃຊ້ໃນການດຳເນີນງານ

30.2 **ສະກຸນເງິນທີ່ໃຊ້ໃນການດຳເນີນງານ**ຂອງວິສາຫະກິດຂະໜາດນ້ອຍແລະກາງ ແມ່ນສະກຸນເງິນກີບ ເວັ້ນເສຍແຕ່ວິສາຫະກິດ ໄດ້ຮັບອະນຸຍາດຈາກກະຊວງການເງິນ ໃຫ້ນຳໃຊ້ສະກຸນເງິນຕາຕ່າງປະເທດ.

## ການລາຍງານລາຍການເຄື່ອນໄຫວເປັນເງິນຕາຕ່າງປະເທດໃນສະກຸນເງິນທີ່ໃຊ້ໃນການດຳເນີນງານ

### ການຮັບຮູ້ລາຍການບັນຊີເບື້ອງຕົ້ນ

30.6 ລາຍການເຄື່ອນໄຫວເປັນເງິນຕາຕ່າງປະເທດ ແມ່ນລາຍການທີ່ຖືກກຳນົດໄວ້ ຫຼື ທີ່ຕ້ອງຊຳລະເປັນເງິນຕາຕ່າງປະເທດ, ຊຶ່ງປະກອບດ້ວຍລາຍການເຄື່ອນໄຫວທີ່ເກີດຂຶ້ນ ເມື່ອວິສາຫະກິດ :

(ກ) ຊື້ ຫຼື ຂາຍສິນຄ້າ ຫຼື ການບໍລິການ ຊຶ່ງລາຄາຖືກກຳນົດເປັນສະກຸນເງິນຕາຕ່າງປະເທດ;

(ຂ) ກູ້ຢືມ ຫຼື ໃຫ້ກູ້ຢືມເງິນ, ຖ້າວ່າຈຳນວນເງິນຕ້ອງຈ່າຍ ຫຼື ຕ້ອງຮັບ ຖືກກຳນົດເປັນສະກຸນເງິນຕາຕ່າງປະເທດ; ຫຼື

(ຄ) ບໍ່ດັ່ງນັ້ນ, ໄດ້ຊັບສິນມາ ຫຼື ຂາຍຊັບສິນອອກ ຫຼື ສ້າງໜີ້ສິນ ຫຼື ຊຳລະໜີ້ສິນ ທີ່ຖືກກຳນົດເປັນສະກຸນເງິນຕາຕ່າງປະເທດ.

30.7 ວິສາຫະກິດຕ້ອງບັນທຶກລາຍການເຄື່ອນໄຫວເປັນສະກຸນເງິນຕາຕ່າງປະເທດ ໃນການຮັບຮູ້ລາຍການບັນຊີເບື້ອງຕົ້ນຕາມສະກຸນເງິນທີ່ໃຊ້ໃນການດຳເນີນງານ, ໂດຍນຳໃຊ້ຈຳນວນສະກຸນເງິນຕາຕ່າງປະເທດຕາມອັດຕາແລກປ່ຽນໃນມື້ ລະຫ່ວາງສະກຸນເງິນທີ່ໃຊ້ໃນການດຳເນີນງານ ແລະ ສະກຸນເງິນຕາຕ່າງປະເທດນັ້ນ ໃນມື້ທີ່ລາຍການເຄື່ອນໄຫວເກີດຂຶ້ນ.

30.8 ມື້ລາຍການເຄື່ອນໄຫວ ແມ່ນມື້ຊຶ່ງລາຍການເຄື່ອນໄຫວໄດ້ບັນລຸຕາມເງື່ອນໄຂທຳອິດດ້ານການຮັບຮູ້ລາຍການບັນຊີ ດັ່ງທີ່ກຳນົດໄວ້ໃນມາດຕະຖານສະບັບນີ້. ເນື່ອງຈາກສາຍເຫດໃນພາກປະຕິບັດຕົວຈິງ, ສ່ວນຫຼາຍມີການນຳໃຊ້ອັດຕາແລກປ່ຽນທີ່ໃກ້ຄຽງກັນກັບອັດຕາຕົວຈິງໃນມື້ລາຍການເຄື່ອນໄຫວ, ຕົວຢ່າງ ອາດນຳໃຊ້ອັດຕາສະເລ່ຍປະຈຳອາທິດ ຫຼື ປະຈຳເດືອນ ສຳລັບລາຍການເຄື່ອນໄຫວທັງໝົດເປັນແຕ່ລະສະກຸນເງິນຕາຕ່າງປະເທດ ທີ່ໄດ້ເກີດຂຶ້ນໃນປີດັ່ງກ່າວ. ເຖິງຢ່າງໃດກໍດີ, ຖ້າວ່າອັດຕາແລກປ່ຽນເງິນຕາຕ່າງປະເທດຫາກຂຶ້ນລົງຫຼາຍ, ການນຳໃຊ້ອັດຕາສະເລ່ຍສຳລັບປີໃດໜຶ່ງ ຈະບໍ່ແທດເໝາະ.

### ການລາຍງານການເງິນໃນຕອນທ້າຍຂອງຮອບເວລາລາຍງານຕາມຫຼັງ

30.9 ໃນຕອນທ້າຍຂອງຮອບເວລາລາຍງານແຕ່ລະຄັ້ງ, ວິສາຫະກິດຕ້ອງ :

(ກ) ປ່ຽນຄ່າລາຍການສະກຸນເງິນຕາຕ່າງປະເທດ, ໂດຍນຳໃຊ້ອັດຕາໃນມື້ປິດບັນຊີ;

(ຂ) ປ່ຽນຄ່າລາຍການທີ່ບໍ່ເປັນເງິນ ທີ່ຖືກຕີມູນຄ່າຕາມຕົ້ນທຶນເດີມ ເປັນສະກຸນເງິນຕາຕ່າງປະເທດ ໂດຍນຳໃຊ້ອັດຕາແລກ ປ່ຽນໃນມື້ລາຍການເຄື່ອນໄຫວ; ແລະ

(ຄ) ປ່ຽນຄ່າລາຍການທີ່ບໍ່ເປັນເງິນ ທີ່ຖືກຕີມູນຄ່າຕາມມູນຄ່າຍຸຕິທຳ ເປັນສະກຸນເງິນຕາຕ່າງປະເທດ ໂດຍນຳໃຊ້ອັດຕາແລກປ່ຽນໃນມື້ທີ່ກຳນົດມູນຄ່າຍຸຕິທຳດັ່ງກ່າວ.

30.10 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ສ່ວນຜິດດ່ຽງອັດຕາແລກປ່ຽນ ທີ່ກຳເນີດຈາກການຊຳລະລາຍການທີ່ເປັນເງິນ ຫຼື ການປ່ຽນຄ່າລາຍການທີ່ເປັນເງິນ ໃນກຳໄລ ຫຼື ຂາດທຶນ ໃນປີທີ່ລາຍການດັ່ງກ່າວເກີດຂຶ້ນ ຕາມອັດຕາແລກປ່ຽນທີ່ແຕກຕ່າງກັບອັດຕາທີ່ໄດ້ນຳໃຊ້ເວລາປ່ຽນຄ່າ ໃນການຮັບຮູ້ລາຍການບັນຊີເບື້ອງຕົ້ນ ໃນປີ ຫຼື ໃນປີຜ່ານໆມາ, ນອກຈາກກໍລະນີທີ່ໄດ້ຍົກຂຶ້ນໃນວັກ 30.13.

30.11 ຖ້າວ່າໝວດອື່ນຂອງມາດຕະຖານສະບັບນີ້ ກຳນົດໃຫ້ຮັບຮູ້ລາຍການບັນຊີສ່ວນໄດ້ ຫຼື ສ່ວນເສຍຂອງລາຍການທີ່ບໍ່ເປັນເງິນ ໃນ**ຜົນໄດ້ຮັບສັງລວມອື່ນໆ**, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີອົງປະກອບການແລກປ່ຽນ ຂອງສ່ວນໄດ້ ຫຼື ສ່ວນເສຍດັ່ງກ່າວໃນຜົນໄດ້ຮັບສັງລວມອື່ນໆ. ກົງກັນຂ້າມ, ຖ້າວ່າສ່ວນໄດ້ ຫຼື ສ່ວນເສຍ ຂອງລາຍການທີ່ບໍ່ເປັນເງິນ ໄດ້ຖືກຮັບຮູ້ລາຍການບັນຊີ ໃນກຳໄລ ຫຼື ຂາດທຶນ, ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີ ທຸກອົງປະກອບການແລກປ່ຽນ ຂອງສ່ວນໄດ້ ຫຼື ສ່ວນເສຍດັ່ງກ່າວ ໃນກຳໄລ ຫຼື ຂາດທຶນ.

## ການປ່ຽນແປງສະກຸນເງິນທີ່ໃຊ້ໃນການດຳເນີນງານ

30.14 ໃນກໍລະນີມີການປ່ຽນແປງສະກຸນເງິນທີ່ໃຊ້ໃນການດຳເນີນງານຂອງວິສາຫະກິດ, ວິສາຫະກິດຕ້ອງນຳໃຊ້ລະບຽບວິທີການທີ່ມີຜົນບັງຄັບໃຊ້ ກ່ຽວກັບການປ່ຽນຄ່າສະກຸນເງິນທີ່ໃຊ້ໃນການດຳເນີນງານໃໝ່ ດ້ວຍວິທີການປະຕິບັດໄປໜ້າ ນັບແຕ່ມື້ທີ່ມີການປ່ຽນແປງ.

30.16 ຜົນກະທົບຂອງການປ່ຽນແປງສະກຸນເງິນທີ່ໃຊ້ໃນການດຳເນີນງານ ຖືກລົງບັນຊີແບບປະຕິບັດໄປໜ້າ. ເວົ້າອີກຢ່າງໜຶ່ງ, ວິສາຫະກິດປ່ຽນຄ່າລາຍການທັງໝົດ ເປັນສະກຸນເງິນທີ່ໃຊ້ໃນການດຳເນີນງານໃໝ່ ຕາມອັດຕາແລກປ່ຽນໃນມື້ທີ່ມີການປ່ຽນແປງ. ສຳລັບລາຍການທີ່ບໍ່ເປັນເງິນ, ໃຫ້ຖືເອົາຈຳນວນເງິນທີ່ເປັນຜົນຈາກການປ່ຽນຄ່າລາຍການດັ່ງກ່າວ ເປັນຕົ້ນທຶນເດີມ.

## ສະກຸນເງິນລາຍງານ ເປັນສະກຸນເງິນກີບ

### ການປ່ຽນຄ່າເປັນສະກຸນເງິນລາຍງານ

30.17/1 ວິສາຫະກິດໃດໜຶ່ງ ທີ່ໄດ້ຮັບອະນຸຍາດ ໃຫ້ມີສະກຸນເງິນທີ່ໃຊ້ໃນການດຳເນີນງານອື່ນ ທີ່ບໍ່ແມ່ນສະກຸນເງິນກີບ ຕ້ອງສະເໜີເອກະສານລາຍງານການເງິນຂອງຕົນ ເປັນສະກຸນເງິນທີ່ໃຊ້ໃນການດຳເນີນງານ ແລະ ສະກຸນເງິນກີບ.

30.17 ວິສາຫະກິດໃດໜຶ່ງ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ໃຫ້ມີສະກຸນເງິນຕາຕ່າງປະເທດ ເປັນສະກຸນເງິນທີ່ໃຊ້ໃນການດຳເນີນງານ ຕ້ອງສະເໜີເອກະສານລາຍງານການເງິນຂອງຕົນ ເປັນສະກຸນເງິນກີບ. ວິສາຫະກິດ ຕ້ອງປ່ຽນຄ່າລາຍການລາຍຮັບ ແລະ ລາຍຈ່າຍ ແລະ **ຖານະການເງິນ** ຂອງຕົນ ເປັນສະກຸນເງິນກີບ.

30.18 ວິສາຫະກິດ ຕ້ອງປ່ຽນຄ່າຜົນໄດ້ຮັບ ແລະ ຖານະການເງິນ ຂອງຕົນ ເປັນສະກຸນເງິນກີບ ຕາມລະບຽບວິທີການດັ່ງລຸ່ມນີ້ :

(ກ) ຊັບສິນ ແລະ ໜີ້ສິນ ຂອງແຕ່ລະໃບລາຍງານຖານະການເງິນທີ່ໄດ້ສະເໜີ (ລວມທັງລາຍການເພື່ອການສົມທຽບ) ຕ້ອງຖືກປ່ຽນຄ່າ ຕາມອັດຕາແລກປ່ຽນໃນມື້ປິດບັນຊີຂອງແຕ່ລະໃບລາຍງານຖານະການເງິນ.

(ຂ) ລາຍຮັບ ແລະ ລາຍຈ່າຍ ຂອງແຕ່ລະໃບລາຍງານຜົນໄດ້ຮັບສັງລວມ (ລວມທັງເອກະສານເພື່ອການສົມທຽບ) ຕ້ອງຖືກປ່ຽນຄ່າ ຕາມອັດຕາແລກປ່ຽນໃນມື້ລາຍການເຄື່ອນໄຫວ.

(ຄ) ທຸກສ່ວນຜິດດ່ຽງດ້ານອັດຕາແລກປ່ຽນທີ່ເປັນຜົນຕາມມາ ຕ້ອງຖືກຮັບຮູ້ລາຍການບັນຊີ ໃນຜົນໄດ້ຮັບສັງລວມອື່ນໆ.

30.19 ໃນທາງປະຕິບັດ, ວິສາຫະກິດຕ້ອງນຳໃຊ້ອັດຕາແລກປ່ຽນທີ່ໃກ້ຄຽງກັບອັດຕາໃນມື້ລາຍການເຄື່ອນໄຫວ ເຊັ່ນ ອັດຕາແລກປ່ຽນສະເລ່ຍສຳລັບຮອບເວລາທີ່ນຳໃຊ້ເພື່ອປ່ຽນຄ່າລາຍການ ລາຍຮັບ ແລະ ລາຍຈ່າຍ. ເຖິງຢ່າງໃດກໍດີ, ຖ້າວ່າ

ອັດຕາແລກປ່ຽນຂຶ້ນລົງຫຼາຍ, ການນຳໃຊ້ອັດຕາສະເລ່ຍໃນຮອບເວລາໃດໜຶ່ງ ຈະບໍ່ແທດເໝາະ.

30.20 ສ່ວນຜິດດ່ຽງດ້ານອັດຕາແລກປ່ຽນທີ່ຍົກຂຶ້ນໃນວັກ 30.18(ຄ) ເກີດຈາກ :

(ກ) ການປ່ຽນຄ່າລາຍຮັບ ແລະ ລາຍຈ່າຍ ຕາມອັດຕາແລກປ່ຽນ ໃນມື້ລາຍການເຄື່ອນໄຫວ ແລະ ການປ່ຽນຄ່າຊັບສິນ ແລະ ໜີ້ສິນ ຕາມອັດຕາແລກປ່ຽນໃນມື້ປິດບັນຊີ, ແລະ

(ຂ) ການປ່ຽນຄ່າຊັບສິນສຸດທິໃນຕົ້ນປີ ຕາມອັດຕາແລກປ່ຽນໃນມື້ປິດບັນຊີ ທີ່ແຕກຕ່າງກັບອັດຕາແລກປ່ຽນໃນມື້ປິດບັນຊີຄັ້ງຜ່ານມາ.

## ການເປີດເຜີຍຂໍ້ມູນຂ່າວສານ

30.24 ໃນວັກ 30.26 ຫາ 30.27, ການອ້າງອີງເຖິງ 'ສະກຸນເງິນທີ່ໃຊ້ໃນການດຳເນີນງານ" ໃນກໍລະນີກຸ່ມບໍລິສັດ ໃຫ້ໝາຍເຖິງ ສະກຸນເງິນທີ່ໃຊ້ໃນການດຳເນີນງານຂອງບໍລິສັດແມ່.

30.25 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານ ດັ່ງລຸ່ມນີ້ :

(ກ) ຈຳນວນເງິນສ່ວນຜິດດ່ຽງຈາກການແລກປ່ຽນເງິນຕາຕ່າງປະເທດ ທີ່ໄດ້ຖືກຮັບຮູ້ລາຍການບັນຊີ ໃນກຳໄລ ຫຼື ຂາດທຶນໃນປີ, ເວັ້ນເສຍແຕ່ສິ່ງທີ່ມາຈາກເຄື່ອງມືການເງິນທີ່ໄດ້ຖືກຕີມູນຄ່າ ຕາມມູນຄ່າຍຸຕິທຳຜ່ານກຳໄລ ຫຼື ຂາດທຶນ ຕາມໝວດ 11 *ເຄື່ອງມືການເງິນພື້ນຖານ*.

(ຂ) ຈຳນວນເງິນສ່ວນຜິດດ່ຽງຈາກການແລກປ່ຽນເງິນຕາຕ່າງປະເທດໃນປີ ແລະ ທີ່ຖືກຈັດປະເພດ ໃນອົງປະກອບໜຶ່ງຕ່າງຫາກຂອງທຶນເຈົ້າຂອງ ໃນທ້າຍປີ.

30.26 ວິສາຫະກິດຕ້ອງເປີດເຜີຍສະກຸນເງິນ ທີ່ສະເໜີໃນເອກະສານລາຍງານການເງິນ. ຖ້າວ່າການສະເໜີສະກຸນເງິນດັ່ງກ່າວ ຫາກແຕກຕ່າງກັບສະກຸນເງິນກີບ, ວິສາຫະກິດຕ້ອງໃຫ້ເຫດຜົນໃນການນຳໃຊ້ສະກຸນເງິນອື່ນທີ່ແຕກຕ່າງ ໃນການສະເໜີ ເອກະສານລາຍງານການເງິນ.

30.27 ໃນກໍລະນີມີການປ່ຽນແປງສະກຸນເງິນທີ່ໃຊ້ໃນການດຳເນີນງານຂອງວິສາຫະກິດລາຍງານ ຫຼື ຂອງກິດຈະການຢູ່ຕ່າງປະເທດທີ່ສຳຄັນ, ວິສາຫະກິດຕ້ອງເປີດເຜີຍ ກ່ຽວກັບຄວາມເປັນຈິງ ແລະ ເຫດຜົນ ໃນການປ່ຽນແປງສະກຸນເງິນທີ່ໃຊ້ໃນ ການດຳເນີນງານ.

| **ການສົມທຽບກັບ FRS ສຳລັບ ວທຍ** | |
|---|---|
| 30.1 | ຖ້າວິສາຫະກິດ ທີ່ມີລາຍການຄຸ້ມກັນຄວາມສ່ຽງ ທີ່ເປັນສະກຸນເງິນຕ່າງປະເທດ, ຖືວ່າ ວິສາຫະກິດນັ້ນ ເປັນ ວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດ ມາດຕະຖານ FRS ສຳລັບ ວທຍ ເຕັມສ່ວນ (ເບິ່ງ ໝວດ 12 *ປະເດັນຕ່າງໆ ທີ່ຕິດພັນ ກັບເຄື່ອງມືການເງິນອື່ນໆ*). |
| 30.3-30.5 | |
| 30.12 – 30.13<br>30.20<br>30.22 – 30.23 | ຖ້າ ວນກ ມີກິດຈະການຢູ່ຕ່າງປະເທດ, ໃຫ້ປະຕິບັດ ວັກ 30.12, 30.13, 30.20, 30.22 and 30.23 ຂອງມາດຕະຖານ FRS ສຳລັບ ວທຍ. |
| 30.17/1 | ກຸ່ມບໍລິສັດບໍ່ໄດ້ນຳໃຊ້ຕໍ່ ວນກ. ວັກນີ້ ຖືກປັບປຸງ. |

ໝວດ 31

ພາວະເງິນເຟີ້ລະດັບສູງສຸດ

*ສປປ ລາວ ບໍ່ເປັນເສດຖະກິດ ທີ່ມີພາວະເງິນເຟີ້ລະດັບສູງສຸດ. ໝວດນີ້ຖືກຕັດອອກ.*

# ໝວດ 32

# ເຫດການທີ່ເກີດຂຶ້ນຫຼັງສິ້ນສຸດຮອບເວລາລາຍງານ

## ຂອບເຂດຂອງໝວດນີ້

32.1 ໝວດດັ່ງກ່າວນີ້ ນິຍາມເຫດການຫຼັງສິ້ນສຸດ**ຮອບເວລາລາຍງານ** ແລະ ສະເໜີຫຼັກການສຳລັບການຮັບຮູ້ລາຍການບັນຊີ, ການຕີມູນຄ່າ ແລະ ການເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບເຫດການດັ່ງກ່າວ.

## ນິຍາມ ກ່ຽວກັບເຫດການພາຍຫຼັງສິ້ນສຸດຮອບເວລາລາຍງານ

32.2 ເຫດການພາຍຫຼັງສິ້ນສຸດຮອບເວລາລາຍງານ ແມ່ນເຫດການທີ່ເອື້ອອຳນວຍ ແລະ ບໍ່ເອື້ອອຳນວຍ ທີ່ເກີດຂຶ້ນລະຫ່ວາງເວລາສິ້ນສຸດຮອບເວລາລາຍງານ ແລະ ມື້ອະນຸຍາດໃຫ້ເປີດເຜີຍເອກະສານລາຍງານການເງິນ ແລະ ພາຍໃນໄລຍະເວລາສອງເດືອນ ພາຍຫຼັງສິ້ນສຸດຮອບເວລາລາຍງານ. ມີສອງປະເພດເຫດການ :

(ກ) ເຫດການທີ່ເປັນຫຼັກຖານຢັ້ງຢືນກ່ຽວກັບສະຖານະການທີ່ມີ ໃນເວລາສິ້ນສຸດຮອບເວລາລາຍງານ (ເຫດການພາຍຫຼັງສິ້ນສຸດຮອບເວລາລາຍງານທີ່ຕ້ອງມີການປັບປຸງ), ແລະ

(ຂ) ເຫດການ ທີ່ມີລັກສະນະຊີ້ບອກ ກ່ຽວກັບສະຖານະການທີ່ເກີດຂຶ້ນ ພາຍຫຼັງສິ້ນສຸດຮອບເວລາລາຍງານ (ເຫດການພາຍຫຼັງສິ້ນສຸດຮອບເວລາລາຍງານທີ່ບໍ່ຕ້ອງມີການປັບປຸງ).

32.3 ເຫດການພາຍຫຼັງສິ້ນສຸດຮອບເວລາລາຍງານ ລວມມີເຫດການທັງໝົດ ທີ່ເກີດຂຶ້ນ ພາຍໃນໄລຍະເວລາສອງເດືອນພາຍຫຼັງສິ້ນສຸດຮອບເວລາລາຍງານ, ເຖິງແມ່ນວ່າເຫດການດັ່ງກ່າວ ເກີດຂຶ້ນພາຍຫຼັງແຈ້ງໃຫ້ມະຫາຊົນຮັບຊາບ ກ່ຽວກັບ ກຳໄລ ຫຼື ຂາດທຶນ ຫຼື ຂໍ້ມູນຂ່າວສານການເງິນອື່ນໆ ທີ່ໄດ້ເລືອກເຟັ້ນ ກໍຕາມ.

## ການຮັບຮູ້ລາຍການບັນຊີ ແລະ ການຕີມູນຄ່າ

### ເຫດການພາຍຫຼັງສິ້ນສຸດຮອບເວລາລາຍງານ ທີ່ຕ້ອງມີການປັບປຸງ

32.4 ວິສາຫະກິດຕ້ອງປັບປຸງຈຳນວນເງິນທີ່ໄດ້ຖືກຮັບຮູ້ລາຍການບັນຊີໃນເອກະສານລາຍງານການເງິນ, ຊຶ່ງລວມມີການເປີດເຜີຍຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງ, ເພື່ອສ່ອງແສງເຖິງເຫດການພາຍຫຼັງສິ້ນສຸດຮອບເວລາລາຍງານທີ່ຕ້ອງມີການປັບປຸງ.

32.5 ຢູ່ຂ້າງລຸ່ມນີ້ ມີຕົວຢ່າງເຫດການ ພາຍຫຼັງສິ້ນສຸດຮອບເວລາລາຍງານທີ່ນຳໄປສູ່ການປັບປຸງ ທີ່ກຳນົດໃຫ້ວິສາຫະກິດຈຳຕ້ອງໄດ້ປັບປຸງຈຳນວນເງິນທີ່ໄດ້ຖືກຮັບຮູ້ລາຍການບັນຊີໃນເອກະສານລາຍງານການເງິນ ຂອງຕົນ, ຫຼື ເພື່ອຮັບຮູ້ລາຍການບັນຊີບັນດາລາຍການ ຊຶ່ງໃນເມື່ອກ່ອນຍັງບໍ່ທັນໄດ້ຖືກຮັບຮູ້ລາຍການບັນຊີ:

(ກ) ການແກ້ໄຂຄະດີ ພາຍຫຼັງສິ້ນສຸດຮອບເວລາລາຍງານ ຊຶ່ງຢືນຢັນວ່າວິສາຫະກິດມີຂໍ້ຜູກພັນໃນປັດຈຸບັນ ໃນມື້ສິ້ນສຸດຮອບເວລາລາຍງານ. ວິສາຫະກິດປັບປຸງເງິນແຮທຸກລາຍທີ່ໄດ້ຖືກຮັບຮູ້ລາຍການບັນຊີໃນເມື່ອກ່ອນ ຊຶ່ງຕິດພັນກັບຄະດີດັ່ງກ່າວ ຕາມໝວດ 21 *ເງິນແຮ ແລະ ສິ່ງທີ່ອາດເກີດຂຶ້ນ* ຫຼື ຮັບຮູ້ລາຍການບັນຊີເງິນແຮລາຍໃໝ່. ວິສາຫະກິດ ຈະບໍ່ມີພຽງແຕ່ຈະເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບໜີ້ສິນທີ່ອາດເກີດຂຶ້ນເທົ່ານັ້ນ. ກົງກັນຂ້າມ, ການແກ້ໄຂຄະດີຈະໃຫ້ຫຼັກຖານຢັ້ງຢືນເພີ່ມເຕີມ ທີ່ຕ້ອງໄດ້ຄຳນຶງເຖິງໃນການຄິດໄລ່ເງິນແຮທີ່ຕ້ອງໄດ້ຮັບຮູ້ລາຍການບັນຊີ ໃນເວລາສິ້ນສຸດຮອບເວລາລາຍງານຕາມໝວດ 21.

(ຂ) ເວລາຮັບຂໍ້ມູນຂ່າວສານ ພາຍຫຼັງສິ້ນສຸດຮອບເວລາລາຍງານ ທີ່ຊີ້ບອກວ່າຊັບສິນໃດໜຶ່ງໄດ້ສູນເສຍມູນຄ່າລົງພາຍຫຼັງສິ້ນສຸດຮອບເວລາລາຍງານ, ຫຼື ຕ້ອງໄດ້ມີການປັບປຸງຈຳນວນເງິນຂາດທຶນຈາກການສູນເສຍມູນຄ່າທີ່ໄດ້ລົງບັນຊີໃນເມື່ອກ່ອນບ້ວງຊັບສິນດັ່ງກ່າວ ຈຳເປັນຕ້ອງໄດ້ມີການປັບປຸງ. ຕົວຢ່າງ:

(i) ການລົ້ມລະລາຍຂອງລູກຄ້າ ທີ່ເກີດຂຶ້ນ ພາຍຫຼັງສິ້ນສຸດຮອບເວລາລາຍງານ ຕາມປົກກະຕິ ຢືນຢັນວ່າ ມີການຂາດທຶນ ຈາກໜີ້ຕ້ອງຮັບຈາກລູກຄ້າໃນທ້າຍຮອບເວລາລາຍງານ ແລະ ວິສາຫະກິດຕ້ອງໄດ້ປັບປຸງ**ມູນຄ່າໃນບັນຊີ**ຂອງໜີ້ຕ້ອງຮັບ ຈາກລູກຄ້າດັ່ງກ່າວ; ແລະ

(ii) ການຂາຍເຄື່ອງໃນສາງ ພາຍຫຼັງສິ້ນສຸດຮອບເວລາລາຍງານ ອາດໃຫ້ຫຼັກຖານຍັ້ງຍືນ ກ່ຽວກັບລາຄາຂາຍໃນເວລາສິ້ນສຸດຮອບເວລາລາຍງານດັ່ງກ່າວ ເພື່ອຈຸດປະສົງໃນການປະເມີນຜົນຄ່າສູນເສຍມູນຄ່າໃນມື້ດັ່ງກ່າວ.

(ຄ) ການຄິດໄລ່, ພາຍຫຼັງສິ້ນສຸດຮອບເວລາລາຍງານ, ຕົ້ນທຶນຂອງຊັບສິນທີ່ໄດ້ຊື້ ຫຼື ການຮັບເງິນຈາກຊັບສິນທີ່ໄດ້ຂາຍກ່ອນສິ້ນສຸດຮອບເວລາລາຍງານ.

(ງ) ການຄິດໄລ່, ພາຍຫຼັງສິ້ນສຸດຮອບເວລາລາຍງານ, ຈຳນວນເງິນການແບ່ງຜົນກຳໄລ ຫຼື ການເບີກຈ່າຍເງິນບຳເນັດ, ຖ້າວ່າ, ໃນເວລາສິ້ນສຸດຮອບເວລາລາຍງານ, ວິສາຫະກິດມີຂໍ້ຜູກພັນທາງກົດໝາຍ ຫຼື **ພັນທະແບບປະລິຍາຍ**ว่าจะชำละเงิน ອັນເນື່ອງມາຈາກເຫດການກ່ອນໜ້າມື້ນັ້ນ (ເບິ່ງໝວດ 28 *ຜົນປະໂຫຍດຂອງພະນັກງານ*).

(ຈ) ການຄົ້ນພົບ ການສໍ້ໂກງ ຫຼື ຂໍ້ຜິດພາດ ທີ່ສະແດງໃຫ້ເຫັນວ່າເອກະສານລາຍງານການເງິນບໍ່ຖືກຕ້ອງ.

## ເຫດການ ພາຍຫຼັງສິ້ນສຸດຮອບເວລາລາຍງານ ທີ່ບໍ່ຕ້ອງມີການປັບປຸງ

32.6 ວິສາຫະກິດ ຕ້ອງບໍ່ປັບປຸງຈຳນວນເງິນທີ່ໄດ້ຖືກຮັບຮູ້ລາຍການບັນຊີໃນເອກະສານລາຍງານການເງິນຂອງຕົນ ເພື່ອສ່ອງແສງເຖິງເຫດການພາຍຫຼັງສິ້ນສຸດຮອບເວລາລາຍງານ ທີ່ບໍ່ຕ້ອງມີການປັບປຸງ.

32.7 ຕົວຢ່າງເຫດການ ພາຍຫຼັງສິ້ນສຸດຮອບເວລາລາຍງານ ທີ່ບໍ່ຕ້ອງມີການປັບປຸງ ລວມມີ:

(ກ) ການຫຼຸດລົງຂອງລາຄາໃນຕະຫຼາດ ຂອງເງິນລົງທຶນ ລະຫ່ວາງມື້ສິ້ນສຸດຮອບເວລາລາຍງານ ແລະ ມື້ທີ່ເອກະສານລາຍງານການເງິນ ໄດ້ຮັບອະນຸຍາດໃຫ້ມີການຈັດພິມ. ຕາມປົກກະຕິ, ການຫຼຸດລົງຂອງລາຄາໃນຕະຫຼາດ ບໍ່ກ່ຽວຂ້ອງກັບສະພາບການຂອງເງິນລົງທຶນ ໃນເວລາສິ້ນສຸດຮອບເວລາລາຍງານ, ແຕ່ຫາກສ່ອງແສງເຖິງກໍລະນີ ທີ່ເກີດຂຶ້ນຕາມຫຼັງ. ສະນັ້ນ, ວິສາຫະກິດຕ້ອງບໍ່ປັບປຸງຈຳນວນເງິນທີ່ໄດ້ຮັບຮູ້ລາຍການບັນຊີ ໃນເອກະສານລາຍງານການເງິນບ້ວງເງິນລົງທຶນ. ເຊັ່ນດຽວກັນນັ້ນ, ວິສາຫະກິດຈະບໍ່ປັບຈຳນວນເງິນທີ່ໄດ້ເປີດເຜີຍ ກ່ຽວກັບເງິນລົງທຶນເວລາສິ້ນສຸດຮອບເວລາລາຍງານ, ເຖິງແມ່ນວ່າຈະຕ້ອງໄດ້ເປີດເຜີຍຂໍ້ມູນເພີ່ມເຕີມຕາມວັກ 32.10 ກໍຕາມ.

(ຂ) ຈຳນວນເງິນທີ່ກາຍເປັນໜີ້ຕ້ອງຮັບເນື່ອງຈາກຜົນຂອງຄຳພິພາກສາຂອງສານ ຫຼື ຄະດີທີ່ເອື້ອອຳນວຍ ຫຼັງຈາກ**ມື້ລາຍງານ**, ແຕ່ຫາກກ່ອນມື້ຈັດພິມເອກະສານລາຍງານການເງິນ. ລາຍການນີ້ ຈະເປັນຊັບສິນທີ່ອາດເກີດຂຶ້ນໃນມື້ລາຍງານ (ເບິ່ງວັກ 21.13) ແລະ ອາດຈຳຕ້ອງມີການເປີດເຜີຍຂໍ້ມູນຕາມ ວັກ 21.16. ເຖິງຢ່າງໃດກໍດີ, ຂໍ້ຕົກລົງກ່ຽວກັບຈຳນວນເງິນຄ່າເສຍຫາຍ ຈາກຄຳພິພາກສາທີ່ໄດ້ຮັບ ກ່ອນມື້ລາຍງານ ແຕ່ຫາກຜ່ານມາບໍ່ທັນໄດ້ຖືກຮັບຮູ້ລາຍການບັນຊີ ຍ້ອນວ່າບໍ່ສາມາດຈະຕີມູນຄ່າຈຳນວນເງິນຢ່າງໜ້າເຊື່ອຖືໄດ້, ອາດເປັນເຫດການທີ່ຕ້ອງມີການປັບປຸງ.

## ເງິນປັນຜົນ

32.8 ຖ້າວ່າວິສາຫະກິດປະກາດເງິນປັນຜົນໃຫ້ຜູ້ຖືເຄື່ອງມືການເງິນປະເພດທຶນເຈົ້າຂອງ ພາຍຫຼັງສິ້ນສຸດຮອບເວລາລາຍງານ, ວິສາຫະກິດ ຕ້ອງບໍ່ຮັບຮູ້ລາຍການບັນຊີເງິນປັນຜົນດັ່ງກ່າວ ເປັນໜີ້ສິນໃນເວລາສິ້ນສຸດຮອບເວລາລາຍງານ. ມູນຄ່າເງິນປັນຜົນອາດຖືກສະເໜີເປັນອົງປະກອບໜຶ່ງ ທີ່ແຍກຈາກກຳໄລລໍຖ້າແບ່ງປັນ ໃນເວລາສິ້ນສຸດຮອບເວລາລາຍງານ.

# ການເປີດເຜີຍຂໍ້ມູນຂ່າວສານ

## ມື້ອະນຸຍາດໃຫ້ຈັດພິມ

32.9 ວິສາຫະກິດຕ້ອງເປີດເຜີຍມື້ທີ່ເອກະສານລາຍງານການເງິນໄດ້ຮັບອະນຸຍາດໃຫ້ຈັດພິມ.

## ເຫດການ ພາຍຫຼັງສິ້ນສຸດຮອບເວລາລາຍງານ ທີ່ບໍ່ຕ້ອງມີການປັບປຸງ

32.10 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ ສຳລັບແຕ່ລະປະເພດເຫດການ ພາຍຫຼັງສິ້ນສຸດຮອບເວລາລາຍງານທີ່ບໍ່ຕ້ອງມີການປັບປຸງ:

(ກ) ລັກສະນະເນື້ອໃນຂອງເຫດການ, ແລະ

(ຂ) ຕົວເລກຄາດຄະເນປະຕິບັດ ກ່ຽວກັບຜົນກະທົບທາງດ້ານການເງິນຂອງເຫດການດັ່ງກ່າວ, ຫຼື ຖະແຫຼງການທີ່ແจ້ງວ່າ ບໍ່ສາມາດດຳເນີນການຄາດຄະເນດັ່ງກ່າວໄດ້.

32.11 ຕົວຢ່າງຂ້າງລຸ່ມນີ້ ຄືເຫດການພາຍຫຼັງສິ້ນສຸດຮອບເວລາລາຍງານທີ່ບໍ່ຕ້ອງມີການປັບປຸງ, ຊຶ່ງໂດຍທົ່ວໄປຈະຕ້ອງໄດ້ເປີດເຜີຍຂໍ້ມູນຂ່າວສານ; ການເປີດເຜີຍນັ້ນ ຈະສ່ອງແສງເຖິງຂໍ້ມູນຂ່າວສານທີ່ຮັບຊາບພາຍຫຼັງສິ້ນສຸດຮອບເວລາລາຍງານ, ແຕ່ກ່ອນມື້ທີ່ເອກະສານລາຍງານການເງິນໄດ້ຮັບອະນຸຍາດໃຫ້ຈັດພິມ:

(ກ) ການຄວບກິດຈະການທີ່ສຳຄັນ.

(ຂ) ການແจ້ງແຜນການຍຸດຕິກິດຈະການໃດໜຶ່ງ.

(ຄ) ລາຍການຊື້ຊັບສິນທີ່ສຳຄັນ, ການຂາຍອອກ ຫຼື ແຜນການຂາຍຊັບສິນອອກ ຫຼື ການເວນຄືນຊັບສິນທີ່ສຳຄັນ ໂດຍລັດຖະບານ.

(ງ) ການຖືກທຳລາຍຂອງໂຮງງານການຜະລິດທີ່ສຳຄັນໂດຍອັກຄີໄພ.

(ຈ) ການແจ້ງຂ່າວ ຫຼື ການເລີ່ມຕົ້ນຈັດຕັ້ງປະຕິບັດ ກ່ຽວກັບການປັບປຸງໂຄງສ້າງຕົ້ນຕໍ.

(ສ) ການອອກ ຫຼື ການຊື້ຄືນເຄື່ອງມືໜີ້ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງຂອງວິສາຫະກິດ.

(ຊ) ການປ່ຽນແປງລາຄາຂອງຊັບສິນ ຫຼື ອັດຕາແລກປ່ຽນເງິນຕາຕ່າງປະເທດ ທີ່ຫຼາຍຜິດປົກກະຕິ.

(ຍ) ການປ່ຽນແປງອັດຕາອາກອນ ຫຼື ກົດໝາຍສ່ວຍສາອາກອນທີ່ມີຜົນບັງຄັບໃຊ້ ຫຼື ໄດ້ປະກາດໃຊ້ ທີ່ມີຜົນກະທົບທີ່ສຳຄັນຕໍ່ຊັບສິນ ແລະ ໜີ້ສິນ ອາກອນຕ້ອງຈ່າຍ ແລະ ລໍຖ້າສະສາງ.

(ດ) ການເຊັນຂໍ້ຜູກພັນທີ່ສຳຄັນ ຫຼື ມີໜີ້ສິນທີ່ອາດເກີດຂຶ້ນ ເຊັ່ນອອກລາຍການຄ້ຳປະກັນເປັນຈຳນວນເງິນຫຼາຍ.

(ຕ) ການເລີ່ມຕົ້ນມີຄະດີທີ່ສຳຄັນ ອັນມາຈາກເຫດການທີ່ເກີດຂຶ້ນພາຍຫຼັງສິ້ນສຸດຮອບເວລາລາຍງານ.

| **ການສົມທຽບກັບ FRS ສຳລັບ ວທຍ** | |
|---|---|
| 32.11 | ຖ້າວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະໃດໜຶ່ງ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວທຍ ຢ່າງເຕັມສ່ວນ. ວັກນີ້ ຖືກປັບປຸງ. |

## ໝວດ 33

## ການເປີດເຜີຍຂໍ້ມູນຂ່າວສານກ່ຽວກັບພາກສ່ວນທີ່ກ່ຽວຂ້ອງ

*ໝວດນີ້ ຖືກຕັດອອກ ເພື່ອສ້າງຄວາມກະທັດຮັດ. ເຖິງຢ່າງໃດກໍ່ຕາມ, ວິສາຫະກິດທີ່ຕ້ອງການສື່ສານ ຂໍ້ມູນຂ່າວສານດັ່ງກ່າວ ຕ້ອງປະຕິບັດ ໝວດ 33 ຂອງມາດຕະຖານ FRS ສຳລັບ ວຫຍ.*

# ໝວດ 34

# ກິດຈະກຳພິເສດ

## ຂອບເຂດຂອງໝວດນີ້

34.1 ໝວດດັ່ງກ່າວນີ້ໃຫ້ຄຳແນະນຳ ກ່ຽວກັບການລາຍງານການເງິນທີ່ສະໜອງໂດຍວິສາຫະກິດ ທີ່ກ່ຽວຂ້ອງໃນສາມປະເພດ ກິດຈະກຳພິເສດ ຄື: ກະສິກຳ, ກິດຈະກຳຂຸດຄົ້ນ ແລະ ການສຳປະທານດ້ານການບໍລິການ.

## ກະສິກຳ

34.2 ວິສາຫະກິດ ທີ່ນຳໃຊ້ມາດຕະຖານສະບັບນີ້ ແລະ ດຳເນີນ**ກິດຈະກຳກະສິກຳ** ຕ້ອງກຳນົດນະໂຍບາຍການບັນຊີຂອງຕົນ ສຳລັບແຕ່ລະປະເພດ**ຊັບສິນຊີວະພາບ** ດັ່ງລຸ່ມນີ້ :

(ກ) ວິສາຫະກິດຕ້ອງນຳໃຊ້ວິທີ**ມູນຄ່າຍຸຕິທຳ**ທີ່ໄດ້ສະເໜີໃນວັກ 34.4 ຫາ 34.7 ສຳລັບຊັບສິນຊີວະພາບ ຊຶ່ງມູນຄ່າ ຍຸຕິທຳນັ້ນສາມາດຖືກກຳນົດໄດ້ຢ່າງງ່າຍດາຍ ໂດຍບໍ່ມີຄ່າໃຊ້ຈ່າຍ ຫຼືຄວາມພະຍາຍາມຫຼາຍເກີນຄວນ.

(ຂ) ວິສາຫະກິດຕ້ອງນຳໃຊ້ວິທີຕົ້ນທຶນ ທີ່ໄດ້ສະເໜີໃນວັກ 34.8 ຫາ 34.10 ສຳລັບຊັບສິນຊີວະພາບອື່ນໆທັງໝົດ.

### ການຮັບຮູ້ລາຍການບັນຊີ

34.3 ວິສາຫະກິດຕ້ອງຮັບຮູ້ລາຍການບັນຊີຊັບສິນຊີວະພາບ ຫຼື **ຜະລິດຕະພັນກະສິກຳ** ກໍຕໍ່ເມື່ອ :

(ກ) ວິສາຫະກິດຄວບຄຸມຊັບສິນຊຶ່ງເປັນຜົນມາຈາກເຫດການຜ່ານມາ ;

(ຂ) ມີຄວາມອາດເປັນໄປໄດ້ ທີ່ວິສາຫະກິດຈະໄດ້ຮັບຜົນປະໂຫຍດດ້ານເສດຖະກິດໃນອະນາຄົດ ຈາກຊັບສິນດັ່ງກ່າວ ນັ້ນ; ແລະ

(ຄ) ມູນຄ່າຍຸຕິທຳ ຫຼື ຕົ້ນທຶນຂອງຊັບສິນດັ່ງກ່າວ ສາມາດຖືກຕີມູນຄ່າຢ່າງໜ້າເຊື່ອຖື ໂດຍບໍ່ມີຄ່າໃຊ້ຈ່າຍ ຫຼື ຄວາມ ພະຍາຍາມຫຼາຍເກີນຄວນ.

### ການຕີມູນຄ່າ - ວິທີມູນຄ່າຍຸຕິທຳ

34.4 ວິສາຫະກິດຕ້ອງຕີມູນຄ່າ**ຊັບສິນຊີວະພາບ**ໃນການຮັບຮູ້ລາຍການບັນຊີເບື້ອງຕົ້ນ ໃນ**ມື້ລາຍງານ** ແຕ່ລະຄັ້ງ ຕາມມູນຄ່າ ຍຸຕິທຳລົບຕົ້ນທຶນຂາຍ. ສ່ວນປ່ຽນແປງ ຂອງມູນຄ່າຍຸຕິທຳລົບຕົ້ນທຶນຂາຍ ຕ້ອງຖືກຮັບຮູ້ລາຍການບັນຊີ ໃນກຳໄລ ຫຼື ຂາດທຶນ.

34.5 ຜະລິດຕະພັນກະສິກຳ ທີ່ໄດ້ເກັບກ່ຽວຈາກຊັບສິນຊີວະພາບຂອງວິສາຫະກິດໃດໜຶ່ງຕ້ອງຖືກຕີມູນຄ່າຕາມມູນຄ່າຍຸຕິທຳລົບ ຕົ້ນທຶນຂາຍໃນເວລາເກັບກ່ຽວອອກ. ການຕີມູນຄ່າດັ່ງກ່າວ ແມ່ນຕົ້ນທຶນໃນມື້ນັ້ນ ຕາມໝວດ 13 *ເຄື່ອງໃນສາງ* ຫຼື ອີງ ຕາມໝວດອື່ນທີ່ກ່ຽວຂ້ອງຂອງມາດຕະຖານສະບັບນີ້.

34.6 ໃນການກຳນົດມູນຄ່າຍຸຕິທຳ, ວິສາຫະກິດຕ້ອງຄຳນຶງເຖິງລາຍການດັ່ງຕໍ່ໄປນີ້ :

(ກ) ຖ້າຫາກມີຕະຫຼາດທີ່ມີການເຄື່ອນໄຫວປົກກະຕິ ສຳລັບຊັບສິນຊີວະພາບ ຫຼື ຜະລິດຕະພັນກະສິກຳ ຢູ່ໃນສະຖານທີ່ ແລະ ເງື່ອນໄຂປັດຈຸບັນ, ລາຄາທີ່ອ້າງອີງໃນຕະຫຼາດດັ່ງກ່າວ ມີຄວາມແທດເໝາະເພື່ອນຳມາກຳນົດມູນຄ່າຍຸຕິທຳ ຂອງຊັບສິນດັ່ງກ່າວ. ຖ້າວ່າວິສາຫະກິດເຂົ້າເຖິງຫຼາຍຕະຫຼາດທີ່ມີການເຄື່ອນໄຫວປົກກະຕິ, ວິສາຫະກິດຕ້ອງໄດ້ ນຳໃຊ້ລາຄາທີ່ມີໃນຕະຫຼາດທີ່ຕົນຄາດວ່າຈະນຳໃຊ້.

(ຂ) ຖ້າບໍ່ມີຕະຫຼາດທີ່ມີການເຄື່ອນໄຫວເປັນປົກກະຕິ, ວິສາຫະກິດ ຕ້ອງນຳໃຊ້ ໜຶ່ງ ຫຼື ຫຼາຍອົງປະກອບດັ່ງລຸ່ມນີ້, ຖ້າ ຫາກມີ, ເພື່ອກຳນົດມູນຄ່າຍຸຕິທຳ :

(i) ລາຄາຊື້-ຂາຍ ຫຼ້າສຸດໃນຕະຫຼາດ, ບົນເງື່ອນໄຂ ທີ່ບໍ່ມີລາຍການການປ່ຽນແປງຫຼາຍໃນສະພາບການທາງ ດ້ານເສດຖະກິດ ບໍ່ມີການປ່ຽນແປງຫຼາຍທີ່ເກີດຂຶ້ນ ໃນລະຫ່ວາງ ມື້ຊື້-ຂາຍດັ່ງກ່າວ ແລະ ມື້ສິ້ນສຸດຮອບ

ເວລາລາຍງານ ;

(ii) ລາຄາຕະຫຼາດ ສຳລັບຊັບສິນທີ່ຄ້າຍຄືກັນ ພ້ອມດ້ວຍການປັບປຸງເພື່ອສ່ອງແສງເຖິງສ່ວນຜິດດ່ຽງຕ່າງໆ ; ແລະ

(iii) ບັນທັດຖານຂອງຂະແໜງການ ເຊັ່ນມູນຄ່າຂອງໝາກໄມ້ ທີ່ສະແດງອອກ ໃນໜ່ວຍບັນຈຸສິນຄ້າເພື່ອສົ່ງອອກ, ຫົວໜ່ວຍວັດແທກເນື້ອທີ່ ຫຼື ເຮັກຕາ ແລະ ມູນຄ່າຂອງສັດຕີນກີບ ທີ່ສະແດງເປັນກິໂລຊີ້ນ.

(ຄ) ໃນບາງກໍລະນີ, ແຫຼ່ງຂ່າວຂໍ້ມູນຂ່າວສານທີ່ໄດ້ຍົກຂຶ້ນໃນ (ກ) ຫຼື (ຂ) ອາດໃຫ້ຂໍ້ສະຫຼຸບທີ່ແຕກຕ່າງກັນທາງດ້ານມູນຄ່າຍຸຕິທຳຂອງຊັບສິນຊີວະພາບ ຫຼື ຂອງຜະລິດຕະພັນກະສິກຳໃດໜຶ່ງ. ວິສາຫະກິດສຶກສາເບິ່ງສາຍເຫດຂອງສ່ວນຜິດດ່ຽງດັ່ງກ່າວ ເພື່ອກ້າວໄປເຖິງການຄາດຄະເນມູນຄ່າຍຸຕິທຳ ທີ່ມີຄວາມເຊື່ອຖືທີ່ສຸດ ພາຍໃນໄລຍະທີ່ແຄບ ໂດຍທຽບຖານ ຂອງການຄາດຄະເນທີ່ສົມເຫດສົມຜົນ.

(ງ) ໃນບາງສະພາບການ, ສາມາດກຳນົດມູນຄ່າຍຸຕິທຳໄດ້ຢ່າງງ່າຍດາຍ ໂດຍບໍ່ມີຄ່າໃຊ້ຈ່າຍ ຫຼື ຄວາມພະຍາຍາມຫຼາຍເກີນຄວນ ເຖິງແມ່ນວ່າຈະບໍ່ມີລາຄາ ຫຼືມູນຄ່າທີ່ກຳນົດໂດຍຕະຫຼາດສຳລັບຊັບສິນຊີວະພາບ ໃນສະພາບປັດຈຸບັນ. ວິສາຫະກິດຕ້ອງພິຈາລະນາເບິ່ງວ່າ ມູນຄ່າປັດຈຸບັນຂອງກະແສເງິນສົດສຸດທິ ທີ່ໄດ້ຄາດວ່າຈະໄດ້ຮັບຈາກຊັບສິນທີ່ຖືກຕີມູນຄ່າເປັນມູນຄ່າປັດຈຸບັນ ຕາມອັດຕາຕະຫຼາດປັດຈຸບັນທີ່ໄດ້ຖືກກຳນົດ ໃຫ້ຜົນວັດແທກມູນຄ່າຍຸຕິທຳ ທີ່ໜ້າເຊື່ອຖືໄດ້ ຫຼືບໍ່.

## ການເປີດເຜີຍຂໍ້ມູນຂ່າວສານ - ວິທີມູນຄ່າຍຸຕິທຳ

34.7 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ ກ່ຽວກັບ ຊັບສິນຊີວະພາບຂອງຕົນທີ່ໄດ້ຖືກຕີມູນຄ່າຕາມມູນຄ່າຍຸຕິທຳ :

(ກ) ລາຍລະອຽດ ກ່ຽວກັບ ແຕ່ລະປະເພດຊັບສິນຊີວະພາບ.

(ຂ) ວິທີການ ແລະ ສົມມຸດຖານຕົ້ນຕໍ ທີ່ນຳໃຊ້ເພື່ອຊອກຫາມູນຄ່າຍຸຕິທຳຂອງແຕ່ລະປະເພດຜະລິດຕະພັນກະສິກຳໃນເວລາເກັບກ່ຽວ ແລະ ຂອງແຕ່ລະປະເພດຊັບສິນຊີວະພາບ.

(ຄ) ການສົມທຽບຕົວເລກສ່ວນປ່ຽນແປງດ້ານມູນຄ່າໃນບັນຊີຂອງຊັບສິນຊີວະພາບ ລະຫວ່າງຕົ້ນ ແລະ ທ້າຍຮອບເວລາປັດຈຸບັນ. ການສົມທຽບຕົວເລກຕ້ອງປະກອບດ້ວຍ:

(i) ສ່ວນໄດ້ ຫຼື ສ່ວນເສຍທີ່ມາຈາກສ່ວນປ່ຽນແປງດ້ານມູນຄ່າຍຸຕິທຳລົບຕົ້ນທຶນຂາຍ.

(ii) ສ່ວນເພີ້ມຂຶ້ນ ທີ່ມາຈາກການຊື້ .

(iii) ສ່ວນຫຼຸດລົງ ທີ່ມາຈາກການເກັບກ່ຽວ.

(iv) ສ່ວນເພີ້ມຂຶ້ນ ທີ່ມາຈາກການຄວບກິດຈະການ.

(v) ສ່ວນຜິດດ່ຽງຈາກການແລກປ່ຽນສຸດທິ ທີ່ເກີດຂຶ້ນຈາກການປ່ຽນຄ່າເອກະສານລາຍງານການເງິນ ເປັນສະກຸນເງິນລາຍງານທີ່ແຕກຕ່າງກັນ, ແລະ ການປ່ຽນຄ່າຂອງກິດຈະການຢູ່ຕ່າງປະເທດ ເປັນສະກຸນເງິນລາຍງານຂອງວິສາຫະກິດລາຍງານ.

(vi) ສ່ວນປ່ຽນແປງອື່ນໆ.

## ການຕີມູນຄ່າ - ວິທີຕົ້ນທຶນ

34.8 ກໍລະນີທີ່ບໍ່ສາມາດຊອກຫາມູນຄ່າຍຸຕິທຳໄດ້ຢ່າງງ່າຍດາຍ ໂດຍບໍ່ມີຄ່າໃຊ້ຈ່າຍ ຫຼື ຄວາມພະຍາຍາມຫຼາຍເກີນຄວນ ຂອງ**ຊັບສິນຊີວະພາບ,** ວິສາຫະກິດຕ້ອງຕີມູນຄ່າຊັບສິນດັ່ງກ່າວ ຕາມຕົ້ນທຶນຫັກ**ຄ່າຫຼຸ້ຍຫ້ຽນ**ສະສົມ ແລະ **ຂາດທຶນຈາກການສູນເສຍມູນຄ່າສະສົມ** .

34.9 ວິສາຫະກິດຕ້ອງຕີມູນຄ່າຜະລິດຕະພັນກະສິກຳທີ່ໄດ້ເກັບກ່ຽວຈາກຊັບສິນຊີວະພາບຂອງຕົນເອງ ຕາມມູນຄ່າຍຸຕິທຳຫັກຄ່າໃຊ້ຈ່າຍຄາດຄະເນໃນການຂາຍໃນເວລາເກັບກ່ຽວ. ການຕີມູນຄ່າດັ່ງກ່າວ ແມ່ນຄ່າໃຊ້ຈ່າຍໃນມື້ນັ້ນ ອີງຕາມໝວດ 13 ຫຼື ອີງຕາມໝວດອື່ນໆທີ່ກ່ຽວຂ້ອງຂອງມາດຕະຖານສະບັບນີ້.

### ການເປີດເຜີຍຂໍ້ມູນຂ່າວສານ - ວິທີຕົ້ນທຶນ

34.10 ວິສາຫະກິດຕ້ອງເປີດເຜີຍຂໍ້ມູນຂ່າວສານດັ່ງລຸ່ມນີ້ ຂອງຊັບສິນຊີວະພາບທີ່ຖືກຕີມູນຄ່າຕາມວິທີຕົ້ນທຶນ :

(ກ) ລາຍລະອຽດ ກ່ຽວກັບແຕ່ລະປະເພດຊັບສິນຊີວະພາບ.

(ຂ) ອະທິບາຍ ກ່ຽວກັບສາຍເຫດ ເປັນຫຍັງມູນຄ່າຍຸຕິທຳຈຶ່ງບໍ່ສາມາດຖືກຕີມູນຄ່າຢ່າງໜ້າເຊື່ອຖືໄດ້.

(ຄ) ແບບວິທີການຫັກຄ່າຫຼູ້ຍຫ້ຽນທີ່ໄດ້ນຳໃຊ້.

(ງ) ອາຍຸການນຳໃຊ້ ຫຼື ອັດຕາຫັກຄ່າຫຼູ້ຍຫ້ຽນ ທີ່ໄດ້ນຳໃຊ້.

(ຈ) **ມູນຄ່າ**ລວມ**ໃນບັນຊີ** ແລະ ຄ່າຫຼູ້ຍຫ້ຽນສະສົມ (ລວມກັບຂາດທຶນຈາກການສູນເສຍມູນຄ່າສະສົມ) ໃນຕົ້ນ ແລະ ທ້າຍປີ.

## ກິດຈະກຳຂຸດຄົ້ນ

34.11 ວິສາຫະກິດທີ່ນຳໃຊ້ມາດຕະຖານສະບັບນີ້ ແລະ ດຳເນີນກິດຈະການສຳຫຼວດ, ປະເມີນຜົນ ຫຼື ຂຸດຄົ້ນຊັບພະຍາກອນແຮ່ທາດ (ກິດຈະກຳຂຸດຄົ້ນ) ຕ້ອງລົງບັນຊີຄ່າໃຊ້ຈ່າຍທີ່ພົວພັນກັບການຊື້ ຫຼື ການພັດທະນາຊັບສົມບັດຄົງທີ່ມີຕົວຕົນ ຫຼື ບໍ່ມີຕົວຕົນ ທີ່ນຳໃຊ້ສຳລັບກິດຈະກຳຂຸດຄົ້ນ ຕາມໝວດ 17 *ຊັບສົມບັດຄົງທີ່ມີຕົວຕົນ* ແລະ ໝວດ 18 *ຊັບສົມບັດຄົງທີ່ບໍ່ມີຕົວຕົນ ທີ່ບໍ່ແມ່ນຄ່ານິຍົມ.* ຖ້າວ່າວິສາຫະກິດມີຂໍ້ບັງຄັບໃຫ້ເລີກຮື້ ຫຼື ຖອນລາຍການໃດໜຶ່ງ ຫຼື ຟື້ນຟູສະຖານທີ່ໃຫ້ຄືນສູ່ສະພາບເດີມ, ຂໍ້ບັງຄັບດັ່ງກ່າວ ແລະ ຄ່າໃຊ້ຈ່າຍຈະຖືກລົງບັນຊີ ຕາມໝວດ 17 ແລະ ໝວດ 21 *ເງິນແຮ ແລະ ສິ່ງທີ່ອາດຈະເກີດຂຶ້ນ.*

## ສັນຍາສຳປະທານດ້ານບໍລິການ

34.12 ສັນຍາສຳປະທານດ້ານການບໍລິການແມ່ນສັນຍາຊຶ່ງອົງການລັດຖະບານ ຫຼື ອົງການອື່ນໃນຂະແໜງການລັດ (ຜູ້ໃຫ້ສຳປະທານ) ມອບໃຫ້ຜູ້ຮັບສຳປະທານເອກະຊົນພັດທະນາ (ຫຼື ປັບປຸງ), ດຳເນີນງານ ແລະ ບຳລຸງຮັກສາຊັບສິນຂອງໂຄງລ່າງຂອງຜູ້ໃຫ້ສຳປະທານ ເຊັ່ນ ຖະໜົນ, ຂົວ, ອຸໂມງ, ສະໜາມບິນ, ຕາໜ່າງຈຳໜ່າຍພະລັງງານ, ຄຸກ ຫຼື ໂຮງໝໍ. ໃນສັນຍາດັ່ງກ່າວ, ຜູ້ໃຫ້ສຳປະທານຕ້ອງຄວບຄຸມ ຫຼື ວາງລະບຽບການ ຕໍ່ກັບຜູ້ຮັບສຳປະທານ ວ່າຈະຕ້ອງໄດ້ສະໜອງການບໍລິການໃດ ໂດຍນຳໃຊ້ຊັບສິນດັ່ງກ່າວ, ໃຫ້ແກ່ຜູ້ທີ່ໄດ້ຮັບຜົນປະໂຫຍດ ແລະ ໃນລາຄາການໃຫ້ບໍລິການໃດ, ນອກນັ້ນ, ຍັງຕ້ອງຄວບຄຸມທຸກຜົນປະໂຫຍດທີ່ຍັງເຫຼືອ ທີ່ສຳຄັນໃນຊັບສິນນັ້ນ ໃນເວລາສິ້ນສຸດສັນຍາ.

34.13 ມີສອງປະເພດຕົ້ນຕໍ ກ່ຽວກັບສັນຍາສຳປະທານດ້ານການບໍລິການ:

(ກ) ໃນສັນຍາໜຶ່ງ, ຜູ້ຮັບສຳປະທານໄດ້ຮັບຊັບສິນການເງິນ, ຊຶ່ງເປັນສິດທິຕາມສັນຍາແບບບໍ່ມີເງື່ອນໄຂທີ່ຈະໄດ້ຮັບຈຳນວນເງິນສົດສະເພາະ ຫຼື ທີ່ສາມາດກຳນົດໄດ້, ຫຼື ຊັບສິນການເງິນອື່ນ ຈາກລັດຖະບານ ເພື່ອແລກປ່ຽນກັບສິ່ງປຸກສ້າງ ຫຼື ການປົວແປງຊັບສິນໃດໜຶ່ງຂອງພາກສ່ວນລັດ, ແລະ ຈາກນັ້ນ ກໍດຳເນີນງານ ແລະ ການບຳລຸງຮັກສາຊັບສິນດັ່ງກ່າວໃນໄລຍະເວລາອັນແນ່ນອນ. ປະເພດດັ່ງກ່າວປະກອບດ້ວຍການຄ້ຳປະກັນຂອງລັດຖະບານ ທີ່ຈະຖົມຂຸມທຸກການຂາດດູນອັນເນື່ອງຈາກຜິດດ່ຽງ ລະຫວ່າງຈຳນວນເງິນທີ່ໄດ້ຮັບ ຈາກຜູ້ນຳໃຊ້ການບໍລິການສາທາລະນະ ແລະ ຈຳນວນເງິນສະເພາະ ຫຼື ທີ່ສາມາດກຳນົດໄດ້.

(ຂ) ໃນສັນຍາໜຶ່ງອີກ, ຜູ້ຮັບສຳປະທານ ຮັບຊັບສົມບັດຄົງທີ່ບໍ່ມີຕົວຕົນ ທີ່ເປັນສິດທິໃນການໃຫ້ເກັບເງິນບ້ວງການນຳໃຊ້ຊັບສິນຂອງພາກລັດ ຊຶ່ງຜູ້ຮັບສຳປະທານເປັນຜູ້ສ້າງ ຫຼື ປົວແປງ ແລະ ຈາກນັ້ນ ກໍດຳເນີນການເຄື່ອນໄຫວ ແລະ ບຳລຸງຮັກສາຊັບສິນດັ່ງກ່າວໃນຕະຫຼອດໄລຍະເວລາອັນແນ່ນອນ. ສິດທິໃນການໃຫ້ຜູ້ນຳໃຊ້ຈ່າຍ ບໍ່ແມ່ນສິດທິແບບບໍ່ມີເງື່ອນໄຂທີ່ຈະໄດ້ຮັບເປັນເງິນສົດ, ຍ້ອນວ່າຈຳນວນເງິນຂຶ້ນກັບລະດັບການນຳໃຊ້ການບໍລິການ ຈາກສາທາລະນະຊົນ.

ບາງຄັ້ງ, ສັນຍາອັນດຽວ ອາດມີທັງສອງປະເພດ: ໃນກໍລະນີທີ່ວ່າລັດຖະບານ ໄດ້ໃຫ້ການຄ້ຳປະກັນແບບບໍ່ມີເງື່ອນໄຂ ກ່ຽວກັບການຊຳລະເງິນ ສຳລັບການກໍ່ສ້າງຊັບສິນຂອງຂະແໜງລັດ, ຜູ້ຮັບສຳປະທານ ມີຊັບສິນການເງິນ; ໃນກໍລະນີທີ່ວ່າ ຜູ້ຮັບສຳປະທານຕ້ອງອີງໃສ່ສາທາລະນະຊົນເພື່ອນຳໃຊ້ການບໍລິການ ເພື່ອຈະໄດ້ຮັບການຊຳລະເງິນ, ຜູ້ຮັບສຳປະທານຈະ

ມີຊັບສົມບັດຄົງທີ່ບໍ່ມີຕົວຕົນ.

## ການບັນຊີ – ຕົວແບບຊັບສິນການເງິນ

34.14 ຜູ້ຮັບສໍາປະທານຕ້ອງຮັບຮູ້ລາຍການບັນຊີຊັບສິນການເງິນ ໃນເມື່ອມີສິດຕາມສັນຍາແບບບໍ່ມີເງື່ອນໄຂທີ່ຕ້ອງຮັບເງິນສົດ ຫຼື ຊັບສິນການເງິນອື່ນໆຈາກຜູ້ໃຫ້ສໍາປະທານ ສໍາລັບວຽກງານກໍ່ສ້າງ. ຜູ້ຮັບສໍາປະທານຕ້ອງຕີມູນຄ່າຊັບສິນການເງິນ ຕາມມູນຄ່າຍຸຕິທໍາ. ຈາກນັ້ນ, ຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມໝວດ 11 *ເຄື່ອງມືການເງິນພື້ນຖານ* ເພື່ອລົງບັນຊີຊັບສິນການເງິນ.

## ການບັນຊີ – ຕົວແບບຊັບສົມບັດຄົງທີ່ບໍ່ມີຕົວຕົນ

34.15 ຜູ້ຮັບສໍາປະທານຕ້ອງຮັບຮູ້ລາຍການບັນຊີຊັບສົມບັດຄົງທີ່ບໍ່ມີຕົວຕົນ ໃນເມື່ອໄດ້ຮັບສິດ (ໃບອະນຸຍາດ) ໃນການເກັບເງິນຈາກຜູ້ນໍາໃຊ້ການບໍລິການສາທາລະນະ. ໃນເບື້ອງຕົ້ນ, ຜູ້ຮັບສໍາປະທານຕ້ອງຕີມູນຄ່າຊັບສົມບັດຄົງທີ່ບໍ່ມີຕົວຕົນ ຕາມມູນຄ່າຍຸຕິທໍາ. ຫຼັງຈາກນັ້ນ, ຜູ້ຮັບສໍາປະທານຕ້ອງປະຕິບັດໃຫ້ຖືກຕ້ອງຕາມໝວດ 18 ເພື່ອລົງບັນຊີຊັບສົມບັດຄົງທີ່ບໍ່ມີຕົວຕົນ.

## ລາຍຮັບທຸລະກິດ

34.16 ຜູ້ຮັບສໍາປະທານທີ່ຮັບຜົນປະໂຫຍດຈາກສັນຍາສໍາປະທານດ້ານການບໍລິການ ຕ້ອງຮັບຮູ້ລາຍການບັນຊີ, ຕີມູນຄ່າ ແລະ ເປີດເຜີຍຂໍ້ມູນຂ່າວສານ ກ່ຽວກັບລາຍຮັບ ບ້ວງການບໍລິການທີ່ໄດ້ດໍາເນີນການ ໂດຍຖືກຕ້ອງຕາມໝວດ 23 *ລາຍຮັບ* ສໍາລັບການບໍລິການ ທີ່ໄດ້ປະຕິບັດ.

| **ການສົມທຽບກັບ FRS ສໍາລັບ ວທຍ** | |
|---|---|
| 34.14 | ຖ້າວິສາຫະກິດໃດໜຶ່ງ ມີສັນຍາ ທີ່ບໍ່ແມ່ນເຄື່ອງມືການເງິນ ແລະ ລາຍການເຄື່ອນໄຫວ ພື້ນຖານ (ເບິ່ງ ໝວດ 11 ເຄື່ອງມືການເງິນພື້ນຖານ), ຖືວ່າວິສາຫະກິດນັ້ນ ເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງນໍາໃຊ້ FRS ສໍາລັບ ວທຍ (ເບິ່ງ ໝວດ 12 *ປະເດັນຕ່າງໆ ທີ່ຕິດພັນກັບເຄື່ອງມືການເງິນອື່ນໆ*). ວັກນີ້ ຖືກ*ປັບປຸງ*. |

# ໝວດ 35

# ການຂ້າມຜ່ານໄປສູ່ ມາດຕະຖານການລາຍງານການເງິນສຳລັບ ວນກ

## ຂອບເຂດຂອງໝວດນີ້

35.1 ໝວດດັ່ງກ່າວນີ້ ນຳໃຊ້ສຳລັບ**ຜູ້ຮັບຮອງນຳໃຊ້ມາດຕະຖານການລາຍງານການເງິນ ສຳລັບ ວນກ ເປັນຄັ້ງທຳອິດ**, ບໍ່ວ່າ ຂອບຂ່າຍບັນຊີຜ່ານມາ ຈະເປັນ**ແຜນບັນຊີທົ່ວໄປ**, **IFRS ເຕັມສ່ວນ**, **IFRS ສຳລັບ ວນກ**, **FRS ສຳລັບ ວຫຍ** ຫຼື ລະບຽບຫຼັກການບັນຊີ ສຳລັບວິສາຫະກິດຂະໜາດນ້ອຍທີ່ສຸດ ຫຼື ຂອບຂ່າຍອື່ນໆ ເຊັ່ນພື້ນຖານການຄິດໄລ່ອາກອນລາຍ ຮັບ ຂອງລາວ ກໍຕາມ.

35.2 ວິສາຫະກິດ ສາມາດເປັນຜູ້ຮັບຮອງນຳໃຊ້ມາດຕະຖານສະບັບນີ້ ເປັນຄັ້ງທຳອິດ ພຽງແຕ່ເທື່ອດຽວເທົ່ານັ້ນ. ຖ້າວ່າວິສາ ຫະກິດທີ່ນຳໃຊ້ມາດຕະຖານສະບັບນີ້ ຢຸດເຊົານຳໃຊ້ ໃນໜຶ່ງ ຫຼື ຫຼາຍ**ຮອບເວລາລາຍງານ**ແລ້ວ ແລະ ຈານັ້ນຖືກກຳນົດ ຫຼື ເລືອກຮັບຮອງນຳໃຊ້ມາດຕະຖານເຫຼົ່ານີ້ ຕື່ມຕາມຫຼັງ, ຂໍ້ຍົກເວັ້ນພິເສດ, ການເຮັດໃຫ້ມີຄວາມກະທັດລັດ ແລະ ຂໍ້ ກຳນົດອື່ນໆ ຂອງໝວດດັ່ງກ່າວ ບໍ່ນຳໃຊ້ສຳລັບການຮັບຮອງນຳໃຊ້-ຄັ້ງໃໝ່.

## ການຮັບຮອງນຳໃຊ້ຄັ້ງທຳອິດ

35.3 ຜູ້ຮັບຮອງນຳໃຊ້ມາດຕະຖານສະບັບນີ້ ຄັ້ງທຳອິດ ຕ້ອງນຳໃຊ້ໝວດດັ່ງກ່າວນີ້ ໃນ**ເອກະສານລາຍງານການເງິນ**ຊຸດທຳອິດ ທີ່ຖືກຕ້ອງຕາມມາດຕະຖານສະບັບນີ້.

35.4 ເອກະສານລາຍງານການເງິນຊຸດທຳອິດຂອງວິສາຫະກິດ ທີ່ຖືກຕ້ອງຕາມມາດຕະຖານສະບັບນີ້ ເປັນເອກະສານລາຍງານ ການເງິນປະຈຳປີ ຊຸດທຳອິດຊຶ່ງວິສາຫະກິດແຈ້ງການໂດຍບົ່ງບອກແຈ້ງ ແລະ ບໍ່ມີເງື່ອນໄຂທາງດ້ານຄວາມຖືກຕ້ອງຂອງ ເອກະສານລາຍງານການເງິນ ກັບມາດຕະຖານສະບັບນີ້. ເອກະສານລາຍງານການເງິນທີ່ສ້າງຂຶ້ນໂດຍຖືກຕ້ອງຕາມ ມາດຕະຖານສະບັບນີ້ ເປັນເອກະສານລາຍງານການເງິນຊຸດທຳອິດທີ່ສອດຄ່ອງກັບມາດຕະຖານສະບັບນີ້ ຂອງວິສາຫະ ກິດ ຖ້າວ່າວິສາຫະກິດ, ຕົວຢ່າງ :

(ກ) ບໍ່ເຄີຍໄດ້ສະເໜີເອກະສານລາຍງານການເງິນ ສຳລັບປີຜ່ານໆມາ;

(ຂ) ໄດ້ສະເໜີເອກະສານລາຍງານການເງິນຫຼ້າສຸດຂອງປີຜ່ານມາ ຕາມຂໍ້ກຳນົດ ທີ່ ສປປ ລາວ ຮັບຮອງ ທີ່ບໍ່ສອດ ຄ່ອງກັບມາດຕະຖານສະບັບນີ້ໃນທຸກດ້ານ; ຫຼື

(ຄ) ໄດ້ສະເໜີເອກະສານລາຍງານການເງິນຫຼ້າສຸດ ທີ່ຖືກຕ້ອງຕາມ IFRS ເຕັມສ່ວນ, IFRS ສຳລັບ ວນກ, FRS ສຳ ລັບ ວຫຍ ຫຼື ລະບຽບຫຼັກການບັນຊີ ສຳລັບວິສາຫະກິດຂະໜາດນ້ອຍທີ່ສຸດ.

35.5 ວັກ 3.17 ຂອງມາດຕະຖານສະບັບນີ້ ໃຫ້ຄຳນິຍາມ ກ່ຽວກັບເອກະສານລາຍງານການເງິນຄົບຊຸດ.

35.6 ວັກ 3.14 ກຳນົດໃຫ້ວິສາຫະກິດຕ້ອງເປີດເຜີຍ ໃນເອກະສານລາຍງານການເງິນຄົບຊຸດ ຂໍ້ມູນຂ່າວສານສົມທຽບ ບ້ວງປີ ຜ່ານໆມາທີ່ສົມທຽບກັນໄດ້ຕາມຈຳນວນເງິນທັງໝົດທີ່ໄດ້ສະເໜີໃນເອກະສານລາຍງານການເງິນ, ກໍຄືຂໍ້ມູນຂ່າວສານສົມ ທຽບທີ່ໄດ້ກຳນົດໄວ້, ແບບບັນລະຍາຍ ແລະ ແບບອະທິບາຍ. ວິສາຫະກິດອາດສະເໜີຂໍ້ມູນຂ່າວສານສົມທຽບ ທີ່ກ່ຽວ ຂ້ອງກັບຫຼາຍກ່ວາໜຶ່ງປີຜ່ານມາ. ສະນັ້ນ, **ມື້ຂ້າມຜ່ານ**ໄປສູ່ ມາດຕະຖານການລາຍງານການເງິນ ສຳລັບ ວນກ ຂອງວິ ສາຫະກິດໃດໜຶ່ງ ແມ່ນຈຸດເລີ່ມຕົ້ນຂອງປີທຳອິດຊຶ່ງຫົວໜ່ວຍສະເໜີຂໍ້ມູນຂ່າວສານສົມທຽບຢ່າງຄົບຖ້ວນ ໂດຍຖືກຕ້ອງ ຕາມຂໍ້ກຳນົດຂອງມາດຕະຖານສະບັບນີ້ ໃນເອກະສານລາຍງານການເງິນຊຸດທຳອິດ ທີ່ຖືກຕ້ອງຕາມມາດຕະຖານສະບັບ ນີ້.

ສະນັ້ນ, ການຮັບຮອງນຳໃຊ້ມາດຕະຖານສະບັບນີ້ ເປັນຄັ້ງທຳອິດ ໃນ ສປປ ລາວ, ມີແຕ່ວິສາຫະກິດທີ່ສະເໜີເອກະສານ ລາຍງານການເງິນຜ່ານມາຫຼ້າສຸດ ທີ່ສອດຄ່ອງກັບ IFRS ເຕັມສ່ວນ ຫຼື IFRS ສຳລັບ ວນກ ຫຼື FRS ສຳລັບ ວຫຍ ຕ້ອງ ສ້າງຂໍ້ມູນຂ່າວສານສົມທຽບ.

ສຸດທ້າຍ, ວິສາຫະກິດ ທີ່ສະເໜີເອກະສານລາຍງານການເງິນຜ່ານມາຫຼ້າສຸດ ທີ່ສອດຄ່ອງກັບ *ລະບຽບຫຼັກການບັນຊີ ສຳ*

*ລັບວິສາຫະກິດຂະໜາດນ້ອຍທີ່ສຸດ* ບໍ່ຕ້ອງສ້າງຂໍ້ມູນຂ່າວສານສົມທຽບ.

## ລະບຽບວິທີການປະຕິບັດງານໃນການສ້າງເອກະສານລາຍງານການເງິນໃນມື້ຂ້າມຜ່ານ

35.7 ເວັ້ນເສຍແຕ່ໄດ້ກຳນົດໃນວັກ 35.9 ຫາ 35.11, ໃນໃບລາຍງານຖານະການເງິນຕົ້ນປີ ນັບແຕ່ມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້ (ໝາຍຄວາມວ່າເລີ່ມຕົ້ນແຕ່ປີສະເໜີຄັ້ງທຳອິດ) ວິສາຫະກິດຕ້ອງ:

(ກ) ຮັບຮູ້ລາຍການບັນຊີ ຊັບສິນ ແລະ ໜີ້ສິນ ທັງໝົດ ຊຶ່ງມາດຕະຖານສະບັບນີ້ໄດ້ກຳນົດໃຫ້ມີການຮັບຮູ້ລາຍການບັນຊີດັ່ງກ່າວ;

(ຂ) ບໍ່ຮັບຮູ້ລາຍການບັນຊີລາຍການຕ່າງໆ ເປັນຊັບສິນ ຫຼື ໜີ້ສິນ ຖ້າຫາກມາດຕະຖານສະບັບນີ້ ບໍ່ອະນຸຍາດໃຫ້ມີການຮັບຮູ້ລາຍການບັນຊີດັ່ງກ່າວ;

(ຄ) ຈັດປະເພດຄືນ ລາຍການທີ່ໄດ້ຮັບຮູ້ລາຍການບັນຊີຕາມຂອບຂ່າຍການລາຍງານການເງິນຜ່ານມາ ເປັນຊັບສິນ, ໜີ້ສິນ ຫຼື ອົງປະກອບທຶນເຈົ້າຂອງ ປະເພດດຽວ, ແຕ່ຫາກຂຶ້ນກັບປະເພດຕ່າງກັນໜຶ່ງອີກຂອງຊັບສິນ, ໜີ້ສິນ ຫຼື ອົງປະກອບທຶນເຈົ້າຂອງ ພາຍໃຕ້ມາດຕະຖານສະບັບນີ້ ; ແລະ

(ງ) ນຳໃຊ້ມາດຕະຖານສະບັບນີ້ ເພື່ອຕີມູນຄ່າຊັບສິນ ແລະ ໜີ້ສິນທັງໝົດ ທີ່ໄດ້ຖືກຮັບຮູ້ລາຍການບັນຊີ.

35.8 **ນະ�โยบายการบันชี** ຊຶ່ງວິສາຫະກິດນຳໃຊ້ໃນໃບລາຍງານຖານະການເງິນຕົ້ນປີຂອງຕົນ ພາຍໃຕ້ມາດຕະຖານສະບັບນີ້ ອາດແຕກຕ່າງກັນກັບໃບລາຍງານຖານະການເງິນໃນມື້ດຽວກັນ ຖ້າຫາກປະຕິບັດຕາມຂອບຂ່າຍການລາຍງານການເງິນຜ່ານມາ. ການປັບປຸງທີ່ເປັນຜົນເນື່ອງ ແມ່ນມາຈາກລາຍການເຄື່ອນໄຫວ, ເຫດການອື່ນໆ ຫຼື ເງື່ອນໄຂ ກ່ອນມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້. ສະນັ້ນ, ວິສາຫະກິດຈຶ່ງຕ້ອງຮັບຮູ້ລາຍການບັນຊີລາຍການປັບປຸງດັ່ງກ່າວໂດຍກົງໃນກຳໄລ ລໍຖ້າແບ່ງປັນ (ຫຼື ຖ້າແທດເໝາະ, ໃນທຶນເຈົ້າຂອງປະເພດອື່ນ) ໃນມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້.

35.9 ເວລາຮັບຮອງນຳໃຊ້ມາດຕະຖານສະບັບນີ້ ຄັ້ງທຳອິດ, ບໍ່ໃຫ້ວິສາຫະກິດປ່ຽນແປງຍ້ອນຫຼັງວິທີການບັນຊີທີ່ໄດ້ປະຕິບັດຕາມຂອບຂ່າຍການລາຍງານການເງິນຜ່ານມາ ສຳລັບບາງລາຍການເຄື່ອນໄຫວໃດໜຶ່ງຂ້າງລຸ່ມນີ້ :

(ກ) **ການຕັດລາຍການບັນຊີ** ຊັບສິນການເງິນ ແລະ ໜີ້ສິນການເງິນ. ຊັບສິນ ແລະ ໜີ້ສິນການເງິນທີ່ໄດ້ຖືກຕັດລາຍການບັນຊີ ຕາມຂອບຂ່າຍການບັນຊີຜ່ານມາຂອງວິສາຫະກິດກ່ອນມື້ຂ້າມຜ່ານ ຕ້ອງບໍ່ຖືກຮັບຮູ້ລາຍການບັນຊີ ໃນເວລາຮັບຮອງນຳໃຊ້ມາດຕະຖານສະບັບນີ້. ກົງກັນຂ້າມ, ກ່ຽວກັບຊັບສິນ ແລະ ໜີ້ສິນການເງິນ ທີ່ຈະຖືກຕັດລາຍການບັນຊີ ຕາມມາດຕະຖານສະບັບນີ້ ໃນເວລາລາຍການເຄື່ອນໄຫວໄດ້ເກີດຂຶ້ນກ່ອນມື້ຂ້າມຜ່ານ, ແຕ່ຍັງບໍ່ໄດ້ຖືກຕັດລາຍການບັນຊີ ພາຍໃຕ້ຂອບຂ່າຍການບັນຊີຜ່ານມາຂອງວິສາຫະກິດເທື່ອ, ວິສາຫະກິດສາມາດເລືອກ (ກ) ຕັດລາຍການບັນຊີລາຍການດັ່ງກ່າວ ເມື່ອຮັບຮອງນຳໃຊ້ ມາດຕະຖານສະບັບນີ້ ຫຼື (ຂ) ສືບຕໍ່ຮັບຮູ້ລາຍການບັນຊີ ລາຍການເຫຼົ່ານັ້ນ ຈົນກ່ວາໄດ້ຂາຍອອກ ຫຼື ຊຳລະສະສາງ.

(ຄ) ຕົວເລກຄາດຄະເນປະຕິບັດດ້ານບັນຊີ.

(ງ) **ການດຳເນີນງານທີ່ຍຸດເຊົາ.**

35.10 ວິສາຫະກິດ ສາມາດນຳໃຊ້ໜຶ່ງ ຫຼື ຫຼາຍ ຂໍ້ຍົກເວັ້ນດັ່ງລຸ່ມນີ້ ໃນການສ້າງເອກະສານລາຍງານການເງິນສະບັບທຳອິດຂອງຕົນທີ່ຖືກຕ້ອງຕາມມາດຕະຖານສະບັບນີ້:

(ກ) **ການຄວບກິດຈະການ.** ຜູ້ຮັບຮອງນຳໃຊ້ຄັ້ງທຳອິດ ອາດເລືອກບໍ່ນຳໃຊ້ໝວດ 19 *ການຄວບກິດຈະການ ແລະ ຄ່ານິຍົມ* ສຳລັບການຄວບກິດຈະການທີ່ໄດ້ດຳເນີນກ່ອນມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້. ເຖິງຢ່າງໃດກໍດີ, ຖ້າວ່າຜູ້ຮັບຮອງນຳໃຊ້ຄັ້ງທຳອິດ ປັບປຸງຄືນໃໝ່ລາຍການຄວບກິດຈະການໃຫ້ຖືກຕ້ອງຕາມໝວດ 19, ວິສາຫະກິດນັ້ນຕ້ອງປັບປຸງຄືນໃໝ່ທຸກລາຍການຄວບກິດຈະການຕາມຫຼັງ.

(ຂ) **ລາຍການເຄື່ອນໄຫວການຊຳລະຕາມຮຸ້ນ.** ຜູ້ຮັບຮອງນຳໃຊ້ຄັ້ງທຳອິດ ບໍ່ຈຳເປັນຕ້ອງປະຕິບັດໝວດ 26 *ການຊຳລະຕາມຮຸ້ນ* ສຳລັບເຄື່ອງມືການເງິນປະເພດທຶນເຈົ້າຂອງທີ່ໄດ້ແບ່ງ ກ່ອນມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້ ທັງບໍ່ປະຕິບັດຕໍ່ໜີ້ສິນທີ່ເກີດຈາກລາຍການເຄື່ອນໄຫວການຊຳລະຕາມຮຸ້ນ ທີ່ມີການຊຳລະກ່ອນມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້.

(ຄ) **ມູນຄ່າຍຸຕິທຳ ທີ່ໃຊ້ເປັນຕົ້ນທຶນສົມມຸດ.** ຜູ້ຮັບຮອງນຳໃຊ້ຄັ້ງທຳອິດ ອາດເລືອກໃຊ້ ເພື່ອຕີມູນຄ່າລາຍການຊັບສົມບັດຄົງທີ່ມີຕົວຕົນ, ອະສັງຫາລິມະຊັບເພື່ອການລົງທຶນ ຫຼື ຊັບສົມບັດຄົງທີ່ບໍ່ມີຕົວຕົນ ໃນມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້ ຕາມມູນຄ່າຍຸຕິທຳ ແລະ ນຳໃຊ້ມູນຄ່າຍຸຕິທຳດັ່ງກ່າວ ເປັນຕົ້ນທຶນສົມມຸດໃນມື້ນັ້ນໆ.

(ງ) **ການຕີມູນຄ່າຄືນໃໝ່ ທີ່ໃຊ້ເປັນຕົ້ນທຶນສົມມຸດ.** ຜູ້ຮັບຮອງນຳໃຊ້ຄັ້ງທຳອິດ ອາດເລືອກ ເພື່ອນຳໃຊ້ການປະເມີນຄ່າຄືນໃໝ່ ຊັບສົມບັດຄົງທີ່ມີຕົວຕົນ, ອະສັງຫາລິມະຊັບເພື່ອການລົງທຶນ ຫຼື ຊັບສົມບັດຄົງທີ່ບໍ່ມີຕົວຕົນ ທີ່ໄດ້ກຳນົດຕາມ GAAP ຜ່ານມາ ໃນມື້ ຫຼື ກ່ອນມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້ ເປັນຕົ້ນທຶນສົມມຸດໃນມື້ປະເມີນຄ່າຄືນໃໝ່.

(ຈ) **ສ່ວນຜິດດ່ຽງຈາກການປ່ຽນຄ່າເງິນສະສົມ.** ໝວດ 30 *ການປ່ຽນຄ່າສະກຸນເງິນຕ່າງປະເທດ* ກຳນົດໃຫ້ວິສາຫະກິດຕ້ອງຈັດປະເພດບາງສ່ວນຜິດດ່ຽງຈາກການປ່ຽນຄ່າ ແຍກເປັນອົງປະກອບໜຶ່ງຕ່າງຫາກຂອງທຶນເຈົ້າຂອງ. ຜູ້ຮັບຮອງນຳໃຊ້ຄັ້ງທຳອິດ ອາດເລືອກທີ່ຈະກຳນົດ ໃຫ້ຈຳນວນເງິນສະສົມຂອງສ່ວນຜິດດ່ຽງຈາກການປ່ຽນຄ່າເງິນສຳລັບທຸກກິດຈະການຢູ່ຕ່າງປະເທດ ເທົ່າກັບສູນ ໃນມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້ (ໝາຍເຖິງ «ຈຸດເລີ່ມຕົ້ນໃໝ່ອ່ຽມ »).

(ສ) **ເອກະສານລາຍງານການເງິນສະເພາະກິດຈະການ.** ວັກ 14.4 ກຳນົດໃຫ້ລົງບັນຊີ ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວັກ 15.9 ກຳນົດໃຫ້ລົງບັນຊີເງິນລົງທຶນໃນວິສາຫະກິດຂາຮຸ້ນ, ແລະ ວິສາຫະກິດທີ່ໄດ້ຄວບຄຸມຮ່ວມກັນ ຕາມຕົ້ນທຶນຫັກການສູນເສຍມູນຄ່າ.

ຕ້ອງມີການຕີມູນຄ່າ ເງິນລົງທຶນດັ່ງກ່າວ ຕາມໜຶ່ງໃນບັນດາຈຳນວນເງິນຕໍ່ໄປນີ້ ໃນໃບລາຍງານຖານະການເງິນສະເພາະກິດຈະການ ຕົ້ນປີ ຕາມມາດຕະຖານສະບັບນີ້:

(i) ຕົ້ນທຶນ ທີ່ຄິດໄລ່ຕາມໝວດ *14 ເງິນລົງທຶນໃນວິສາຫະກິດຂາຮຸ້ນ* ແລະ ໝວດ *15 ເງິນລົງທຶນໃນວິສາຫະກິດປະສົມ,* ຫຼື

(ii) ຕາມຕົ້ນທຶນສົມມຸດ, ຊຶ່ງຕ້ອງແມ່ນ ຕາມມູນຄ່າຍຸຕິທຳໃນມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້ ຫຼືວ່າຕາມມູນຄ່າໃນບັນຊີຕາມ GAAP ຜ່ານມາ ໃນມື້ນັ້ນໆ.

(ດ) **ສັນຍາສຳປະທານດ້ານການບໍລິການ.** ຜູ້ຮັບຮອງນຳໃຊ້ຄັ້ງທຳອິດ ບໍ່ຈຳເປັນຕ້ອງປະຕິບັດບັນດາວັກ 34.12 ຫາ 34.16 ກ່ຽວກັບສັນຍາສຳປະທານດ້ານການບໍລິການທີ່ໄດ້ເຊັນ ກ່ອນມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້.

(ຕ) **ກິດຈະກຳຂຸດຄົ້ນ.** ຜູ້ຮັບຮອງນຳໃຊ້ຄັ້ງທຳອິດ ທີ່ນຳໃຊ້ການລົງບັນຊີຕົ້ນທຶນເຕັມສ່ວນຕາມ GAAP ຜ່ານມາ ອາດເລືອກຕີມູນຄ່າຊັບສິນນ້ຳມັນ ແລະອາຍແກັສ (ທີ່ໄດ້ນຳໃຊ້ເພື່ອສຳຫຼວດ, ປະເມີນຜົນ, ພັດທະນາ ຫຼື ຜະລິດນ້ຳ ມັນ ແລະ ແກັສ) ໃນມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້ ຕາມຈຳນວນເງິນທີ່ກຳນົດຕາມ GAAP ຜ່ານມາຂອງວິສາຫະກິດ. ວິສາຫະກິດຕ້ອງດຳເນີນການທົດສອບການສູນເສຍມູນຄ່າຂອງຊັບສິນດັ່ງກ່າວ ໃນມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້ ຕາມໝວດ 27 *ການສູນເສຍມູນຄ່າຂອງຊັບສິນ.*

(ຖ) **ຂໍ້ຕົກລົງທີ່ບັນຈຸສັນຍາເຊົ່າ.** ຜູ້ຮັບຮອງນຳໃຊ້ຄັ້ງທຳອິດອາດເລືອກເບິ່ງວ່າໃນມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້ ມີຂໍ້ຕົກລົງທີ່ບັນຈຸສັນຍາເຊົ່າຫຼືບໍ່ (ເບິ່ງ ວັກ 20.3) ບົນພື້ນຖານຄວາມເປັນຈິງ ແລະ ສະຖານະການທີ່ເປັນຢູ່ໃນມື້ນັ້ນ, ແຕ່ຫາກບໍ່ແມ່ນມື້ເຊັນຂໍ້ຕົກລົງດັ່ງກ່າວ.

(ທ) **ໜີ້ສິນໃນການຮື້ຖອນ ທີ່ລວມຢູ່ໃນຕົ້ນທຶນຂອງຊັບສົມບັດຄົງທີ່ມີຕົວຕົນ.** ອີງຕາມວັກ 17.10 (ຄ) ຕົ້ນທຶນ ຂອງລາຍການຊັບສົມບັດຄົງທີ່ມີຕົວຕົນ ລວມມີຕົວເລກຄາດຄະເນປະຕິບັດໃນເບື້ອງຕົ້ນ ກ່ຽວກັບຕົ້ນທຶນທີ່ກ່ຽວຂ້ອງກັບການເລີກຮື້, ເຄື່ອນຍ້າຍ ແລະ ການຟື້ນຟູສະຖານທີ່ທີ່ຊັບສົມບັດຄົງທີ່ເຫຼົ່ານັ້ນຕັ້ງຢູ່, ພັນທະໜີ້ສິນຊຶ່ງວິສາຫະກິດໃດໜຶ່ງສ້າງຂຶ້ນ ໃນມື້ໄດ້ລາຍການດັ່ງກ່າວເປັນກຳມາສິດ ຫຼື ເນື່ອງຈາກການນຳໃຊ້ໃນໄລຍະສະເພາະໃດໜຶ່ງ ເພື່ອຈຸດໝາຍອື່ນທີ່ບໍ່ແມ່ນການຜະລິດເຄື່ອງໃນສາງໃນຮອບເວລາດັ່ງກ່າວ. ຜູ້ຮັບຮອງນຳໃຊ້ຄັ້ງທຳອິດ ອາດເລືອກຕີມູນຄ່າ ອົງປະກອບດັ່ງກ່າວຂອງຕົ້ນທຶນຊັບສົມບັດຄົງທີ່ມີຕົວຕົນ ໃນມື້ຂ້າມຜ່ານໄປສູ່ ມາດຕະຖານສະບັບນີ້, ແທນທີ່ຈະແມ່ນໃນມື້ສ້າງພັນທະໜີ້ສິນ.

35.11 ຖ້າຫາກ **ປະຕິບັດບໍ່ໄດ້** ສຳລັບວິສາຫະກິດ ທີ່ປັບປຸງຄືນໃໝ່ໃບລາຍງານຖານະການເງິນໃນຕົ້ນປີ ໃນມື້ຂ້າມຜ່ານຈາກໜຶ່ງ ຫຼື ຫຼາຍລາຍການປັບປຸງທີ່ໄດ້ກຳນົດໄວ້ ໃນວັກ 5.7, ວິສາຫະກິດຕ້ອງນຳໃຊ້ ບັນດາວັກ 35.7 ຫາ 35.10 ສຳລັບການ

ປັບປຸງເຫຼົ່ານັ້ນ ເລີ່ມແຕ່ຮອບເວລາທຳອິດທີ່ປະຕິບັດໄດ້, ແລະ ຕ້ອງໄດ້ຈຳແນກຂໍ້ມູນທີ່ໄດ້ສະເໜີໃນຮອບເວລາຜ່ານມາ ທີ່ບໍ່ສາມາດສົມທຽບກັບຂໍ້ມູນຂອງຮອບເວລາ ທີ່ມີການສ້າງເອກະສານລາຍງານການເງິນສະບັບທຳອິດ ທີ່ຖືກຕ້ອງຕາມມາດຕະຖານສະບັບນີ້. ຖ້າຫາກ ປະຕິບັດບໍ່ໄດ້ ສຳລັບວິສາຫະກິດ ທີ່ຕ້ອງເປີດເຜີຍຂໍ້ມູນຂ່າວສານທີ່ກຳນົດໂດຍມາດຕະຖານສະບັບນີ້ ສຳລັບທຸກຮອບເວລາຜ່ານມາກ່ອນການສ້າງເອກະສານລາຍງານທຳອິດ ໂດຍຖືກຕ້ອງຕາມມາດຕະຖານສະບັບນີ້, ກໍຕ້ອງໄດ້ເປີດເຜີຍ ກ່ຽວກັບການບໍ່ປະຕິບັດດັ່ງກ່າວ.

## ການເປີດເຜີຍຂໍ້ມູນຂ່າວສານ

### ອະທິບາຍ ກ່ຽວກັບການຂ້າມຜ່ານໄປສູ່ມາດຕະຖານການລາຍງານການເງິນ ສຳລັບ ວນກ

35.12 ວິສາຫະກິດຕ້ອງອະທິບາຍວ່າການຂ້າມຜ່ານຈາກຂອບຂ່າຍການລາຍງານການເງິນຜ່ານມາໄປສູ່ມາດຕະຖານສະບັບນີ້ ໄດ້ກະທົບໃສ່**ຖານະການເງິນ**, **ຜົນການດຳເນີນງານ**ດ້ານການເງິນ ແລະ **ກະແສເງິນສົດ** ທີ່ໄດ້ລາຍງານ ຄືແນວໃດ.

### ການສົມທຽບຕົວເລກ

35.13 ເພື່ອໃຫ້ຖືກຕ້ອງຕາມວັກ 35.12, ເອກະສານລາຍງານການເງິນສະບັບທຳອິດ ຂອງວິສາຫະກິດທີ່ສ້າງຂຶ້ນ ໂດຍນຳໃຊ້ມາດຕະຖານສະບັບນີ້ ຕ້ອງປະກອບດ້ວຍ :

(ກ) ຄຳອະທິບາຍ ກ່ຽວກັບລັກສະນະເນື້ອໃນຂອງການປ່ຽນແປງແຕ່ລະນະໂຍບາຍການບັນຊີ ;

(ຂ) ການສົມທຽບຕົວເລກ ລະຫ່ວາງ ທຶນເຈົ້າຂອງ ທີ່ຄິດໄລ່ຕາມຂອບຂ່າຍການລາຍງານການເງິນຜ່ານມາ ແລະ ທຶນເຈົ້າຂອງ ທີ່ກຳນົດຕາມມາດຕະຖານສະບັບນີ້ ໃນສອງມື້ຂ້າງລຸ່ມນີ້ :

(i) ມື້ຂ້າມຜ່ານໄປສູ່ມາດຕະຖານສະບັບນີ້, ແລະ

(ii) ມື້ສິ້ນສຸດຂອງຮອບເວລາສຸດທ້າຍ ທີ່ໄດ້ສະເໜີໃນເອກະສານລາຍງານການເງິນປະຈຳປີສະບັບຫຼ້າສຸດ ຂອງວິສາຫະກິດ ທີ່ໄດ້ກຳນົດຕາມຂອບຂ່າຍການລາຍງານການເງິນຜ່ານມາ.

(ຄ) ການສົມທຽບຕົວເລກ ລະຫ່ວາງກຳໄລ ຫຼື ຂາດທຶນ ທີ່ໄດ້ກຳນົດຕາມຂອບຂ່າຍການລາຍງານການເງິນຜ່ານມາ ບ້ວງຮອບເວລາສຸດທ້າຍໃນເອກະສານລາຍງານການເງິນປະຈຳປີຫຼ້າສຸດ ຂອງວິສາຫະກິດ ແລະ ກຳໄລ ຫຼື ຂາດທຶນ ທີ່ຄິດໄລ່ຕາມມາດຕະຖານສະບັບນີ້ ສຳລັບຮອບເວລາດຽວກັນ.

35.14 ຖ້າວ່າວິສາຫະກິດ ຮູ້ວ່າ ມີຂໍ້ຜິດພາດໃນຂອບຂ່າຍການລາຍງານການເງິນຜ່ານມາ, ການສົມທຽບຕົວເລກທີ່ຕ້ອງການຕາມວັກ 35.13 (ຂ) ແລະ (ຄ) ຕ້ອງຈຳແນກ, ຖ້າຫາກເປັນໄປໄດ້, ການກວດແກ້ຂໍ້ຜິດພາດດັ່ງກ່າວ ຈາກການປ່ຽນແປງນະໂຍບາຍການບັນຊີ.

35.15 ຖ້າວ່າວິສາຫະກິດ ບໍ່ໄດ້ສະເໜີເອກະສານລາຍງານການເງິນບ້ວງຮອບເວລາຜ່ານມາ, ຕ້ອງໄດ້ເປີດເຜີຍຄວາມເປັນຈິງດັ່ງກ່າວ ໃນເອກະສານລາຍງານການເງິນຊຸດທຳອິດທີ່ຖືກຕ້ອງຕາມມາດຕະຖານສະບັບນີ້.

| ການສົມທຽບກັບ FRS ສຳລັບ ວທຍ | |
|---|---|
| 35.9 (ຂ) | ວນກ ທີ່ນຳໃຊ້ເຄື່ອງມືຄຸ້ມກັນຄວາມສ່ຽງ ຕ້ອງປະຕິບັດ ມາດຕະຖານ FRS ສຳລັບ ວທຍ ຢ່າງເຕັມສ່ວນ (ເບິ່ງ ໝວດ 11). ວັກນີ້ ຖືກຕັດອອກ. |
| 35.9 (ຈ) | ຖ້າວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະໃດໜຶ່ງ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວທຍ ຢ່າງເຕັມສ່ວນ. ວັກນີ້ ຖືກຕັດອອກ. |
| 35.10 (ສ) | ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະໃດໜຶ່ງ ທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຖືເປັນວິສາຫະກິດຂະໜາດໃຫຍ່ ແລະ ຕ້ອງປະຕິບັດມາດຕະຖານ FRS ສຳລັບ ວທຍ ຢ່າງເຕັມສ່ວນ. ມາດຕະຖານ FRS ສຳລັບ ວນກ ນີ້ ກຳນົດໃຫ້ລົງບັນຊີ ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ໃນວິສາຫະກິດປະສົມ ຕາມຕົ້ນທຶນຫັກການສູນເສຍມູນຄ່າ (ເບິ່ງໝວດ 14 ແລະ 15). ວັກເຫຼົ່ານີ້ ຖືກປັບປຸງ. |
| 35.10 (ຊ) | ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ອອກ ໜີ້ທີ່ສາມາດປ່ຽນເປັນຮຸ້ນໄດ້ ຫຼື ເຄື່ອງມືການເງິນປະສົມທີ່ຄ້າຍຄືກັນ ຖືກຈັດປະເພດເປັນ «ວິສາຫະກິດຂະໜາດໃຫຍ່». (ເບິ່ງ ວັກ 1.2 (ຈ)). ວັກນີ້ ຖືກຕັດອອກ. |
| 35.10 (ຍ) | ມາດຕະຖານ FRS ສຳລັບ ວນກ ນີ້ ບໍ່ຮັບຮູ້ລາຍການບັນຊີ ອາກອນລໍຖ້າສະສາງ. ວັກນີ້ ຖືກຕັດອອກ. |

## ປະມວນຄຳສັບ

| | |
|---|---|
| **ນະໂຍບາຍການບັນຊີ**<br>**accounting policies** | ຫຼັກການ, ພື້ນຖານ, ຂໍ້ຕົກລົງ, ລະບຽບການ ແລະ ພາກປະຕິບັດສະເພາະ ທີ່ວິສາຫະກິດໃດໜຶ່ງໄດ້ນຳໃຊ້ ໃນເວລາສ້າງ ແລະ ສະເໜີເອກະສານລາຍງານການເງິນ. |
| **ການບັນຊີຕາມພື້ນຖານເງິນຄ້າງຮັບ-ຄ້າງຈ່າຍ**<br>**accrual basis of accounting** | ຜົນກະທົບຂອງລາຍການເຄື່ອນໄຫວ ແລະ ເຫດການອື່ນໆຖືກຮັບຮູ້ລາຍການບັນຊີ ເມື່ອລາຍການເຄື່ອນໄຫວ ຫຼື ເຫດການດັ່ງກ່າວນັ້ນເກີດຂຶ້ນ (ແຕ່ຫາກບໍ່ແມ່ນເວລາທີ່ມີການຈ່າຍ ຫຼື ຮັບເງິນສົດ ຫຼື ສິ່ງທຽບເທົ່າເງິນສົດ) ແລະສິ່ງເຫຼົ່ານັ້ນຖືກບັນທຶກ ໃນການຈົດກ່າຍບັນຊີ ແລະ ສະເໜີໃນເອກະສານລາຍງານການເງິນຂອງຮອບເວລາທີ່ພົວພັນ. |
| **ການລາພັກທີ່ໄດ້ຫົດແທນເງິນຄືນແບບສະສົມ**<br>**accumulating compensated absences** | ການພັກການທີ່ໄດ້ຮັບຄ່າຕອບແທນທີ່ຍົກໄປປະຕິບັດ ແລະ ສາມາດນຳໃຊ້ໃນຮອບເວລາຂ້າງໜ້າ ຖ້າຫາກຍັງບໍ່ທັນໄດ້ນຳໃຊ້ສິດທິໃນຮອບເວລາປັດຈຸບັນຢ່າງຄົບຖ້ວນເທື່ອ. |
| **ກິດຈະກຳກະສິກຳ**<br>**agricultural activities** | ການບໍລິຫານກິດຈະກຳປ່ຽນຮູບດ້ານຊີວະພາບ ຂອງ**ຊັບສິນຊີວະພາບ**ເພື່ອການຂາຍ ໂດຍວິສາຫະກິດດ້ວຍການປ່ຽນຮູບໃຫ້ເປັນຜະລິດຕະພັນກະສິກຳ ຫຼື ຊັບສິນຊີວະພາບອື່ນໆ. |
| **ຜະລິດຕະພັນກະສິກຳ**<br>**agricultural produce** | ຜະລິດຕະພັນ ທີ່ໄດ້ເກັບກ່ຽວຈາກ**ຊັບສິນຊີວະພາບ**ຂອງວິສາຫະກິດ. |
| **ການຫັກຄ່າຫຼຸ້ຍຫ້ຽນ**<br>**amortisation** | ການຈັດແບ່ງຢ່າງເປັນລະບົບຈຳນວນເງິນຫັກຄ່າຫຼຸ້ຍຫ້ຽນຂອງຊັບສິນໃດໜຶ່ງ ບົນພື້ນຖານອາຍຸການໃຊ້ງານຂອງຊັບສິນດັ່ງກ່າວ. |
| **ຕົ້ນທຶນຫັກຫົດແທນຂອງຊັບສິນການເງິນ ຫຼື ໜີ້ສິນການເງິນ**<br>**amortised cost of a financial asset or financial liability** | ຈຳນວນເງິນ ທີ່ຊັບສິນ ຫຼື ໜີ້ສິນການເງິນ ໄດ້ຖືກຕີມູນຄ່າໃນເວລາການຮັບຮູ້ລາຍການບັນຊີເບື້ອງຕົ້ນ, ຫັກລາຍການຫົດແທນຕົ້ນທຶນຄືນ, ບວກ ຫຼື ລົບ ການຫັກຄ່າຫຼຸ້ຍຫ້ຽນສະສົມ ຕາມວິທີການຄິດໄລ່ດອກເບ້ຍຕົວຈິງ ຂອງຈຳນວນເງິນສ່ວນຜິດດ່ຽງ ລະຫວ່າງຈຳນວນເງິນເບື້ອງຕົ້ນ ແລະ ຈຳນວນເງິນເມື່ອຄົບກຳນົດເວລາ ແລະ ຫັກສ່ວນຫຼຸດທັງໝົດອອກ (ໂດຍກົງ ຫຼື ຜ່ານບັນຊີກວດແກ້ມູນຄ່າ) ສຳລັບການສູນເສຍມູນຄ່າ ຫຼື ການຮຽກເກັບຄືນບໍ່ໄດ້. |
| **ຊັບສິນ**<br>**asset** | ຊັບພະຍາກອນທີ່ວິສາຫະກິດເປັນຜູ້ຄວບຄຸມ ແລະເປັນຜົນຈາກເຫດການຜ່ານມາ ແລະ ຊຶ່ງຄາດວ່າຈາກຊັບສິນດັ່ງກ່າວ ວິສາຫະກິດຈະໄດ້ຮັບຜົນປະ�โຫຍດດ້ານເສດຖະກິດໃນອະນາຄົດ. |
| **ວິສາຫະກິດຂາຮຸ້ນ**<br>**associate** | ວິສາຫະກິດໜຶ່ງ, ລວມທັງວິສາຫະກິດທີ່ບໍ່ໄດ້ຈົດທະບຽນເປັນບໍລິສັດມະຫາຊົນ ເຊັ່ນ ບໍລິສັດຮຸ້ນສ່ວນ ຊຶ່ງໄດ້ຮັບອິດທິພົນທີ່ສຳຄັນຈາກຜູ້ລົງທຶນ, ແຕ່ຫາກບໍ່ເປັນບໍລິສັດໃນກຸ່ມ, ທັງບໍ່ມີການລົງທຶນໃນວິສາຫະກິດປະສົມໃດໜຶ່ງ. |
| **ຊັບສິນຊີວະພາບ**<br>**biological asset** | ສັດ ຫຼື ພືດ ທີ່ມີຊີວິດ. |
| **ຄ່າກູ້ຢືມເງິນ**<br>**borrowing costs** | ດອກເບ້ຍ ແລະ ຕົ້ນທຶນອື່ນໆ ທີ່ເກີດຂຶ້ນ ຈາກການກູ້ຢືມເງິນ ຂອງວິສາຫະກິດໃດໜຶ່ງ. |
| **ທຸລະກິດ**<br>**business** | ກຸ່ມກິດຈະກຳ ແລະ ຊັບສິນ ທີ່ນຳມາດຳເນີນການ ແລະ ຄຸ້ມຄອງ ເພື່ອຈຸດປະສົງໃນການສະໜອງ:<br>(ກ) ຜົນຕອບແທນໃຫ້ແກ່ຜູ້ລົງທຶນ, ຫຼື |

(ຂ) ຕົ້ນທຶນ ທີ່ຕ່ຳກ່ວາໝູ່ ຫຼື ຜົນປະໂຫຍດດ້ານເສດຖະກິດອື່ນ ໂດຍກົງ ແລະ ຕາມອັດຕາ ສ່ວນໃຫ້ກັບຜູ້ຖືສັນຍາ ຫຼື ຜູ້ມີສ່ວນຮ່ວມ.

ໂດຍທົ່ວໄປ, ທຸລະກິດ ປະກອບດ້ວຍວັດຖຸດິບນຳເຂົ້າ, ຜ່ານຂະບວນການ ທີ່ນຳໃຊ້ວັດຖຸດິບເຫຼົ່ານັ້ນ ແລະ ໄດ້ຮັບຜົນຜະລິດ ທີ່ນຳໃຊ້ ຫຼື ຈະຖືກນຳໃຊ້ເພື່ອສ້າງລາຍຮັບ. ຖ້າຫາກມີຄ່ານິຍົມຜ່ານການໂອນ ກຸ່ມກິດຈະກຳ ແລະ ຊັບສິນ, ກຸ່ມກິດຈະກຳ ແລະ ຊັບສິນທີ່ໄດ້ໂອນນັ້ນໆ ຕ້ອງຖືວ່າເປັນທຸລະກິດ.

**ການຄວບກິດຈະການ**
**business combination**

ການເຕົ້າໂຮມວິສາຫະກິດ ຫຼື ກິດຈະການ ຕ່າງກັນ ເປັນວິສາຫະກິດລາຍງານອັນດຽວ.

**ມູນຄ່າໃນບັນຊີ**
**carrying amount**

ຈຳນວນເງິນ ຊຶ່ງຊັບສິນ ຫຼື ໜີ້ສິນ ໄດ້ຖືກຮັບຮູ້ລາຍການບັນຊີ ໃນໃບລາຍງານຖານະການເງິນ.

**ເງິນສົດ**
**cash**

ເງິນສົດໃນກຳມື ແລະ ເງິນຝາກກະແສລາຍວັນ.

**ສິ່ງທຽບເທົ່າເງິນສົດ**
**cash equivalent**

ເງິນລົງທຶນໄລຍະສັ້ນ, ທີ່ມີພາວະຄ່ອງຕົວສູງ ທີ່ປ່ຽນເປັນຈຳນວນເງິນສົດ ໄດ້ງ່າຍດາຍທີ່ສຸດ ແລະ ມີ ຄວາມສ່ຽງທີ່ບໍ່ສຳຄັນຕໍ່ການປ່ຽນແປງດ້ານມູນຄ່າ.

**ກະແສເງິນສົດ**
**cash flows**

ກະແສຮັບ ແລະ ກະແສຈ່າຍ ເງິນສົດ ແລະ ສິ່ງທຽບເທົ່າເງິນສົດ.

**ໜ່ວຍສ້າງເງິນສົດ**
**cash-generating unit**

ກຸ່ມຊັບສິນທີ່ນ້ອຍທີ່ສຸດ ທີ່ສາມາດຈຳແນກໄດ້ ທີ່ສ້າງກະແສຮັບເງິນສົດ ຊຶ່ງບໍ່ຂຶ້ນກັບກະແສຮັບເງິນສົດ ຈາກຊັບສິນ ຫຼື ກຸ່ມຊັບສິນອື່ນໆ.

***ລາຍການເຄື່ອນໄຫວການຊຳລະຕາມ ຮຸ້ນທີ່ຈ່າຍເປັນເງິນສົດ***
**cash-settled share-based payment transactions**

ລາຍການເຄື່ອນໄຫວການຊຳລະຕາມຮຸ້ນ, ໃນນັ້ນ ວິສາຫະກິດໄດ້ສິນຄ້າ ຫຼື ການບໍລິການມາ ຜ່ານການ ສ້າງໜີ້ສິນນຳຜູ້ສະໜອງສິນຄ້າ ຫຼື ການບໍລິການ ໃນຈຳນວນເງິນທີ່ອີງຕາມລາຄາ (ຫຼື ມູນຄ່າ) ຂອງຮຸ້ນ ຂອງວິສາຫະກິດ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງອື່ນໆຂອງວິສາຫະກິດ.

**ການປ່ຽນແປງຕົວເລກຄາດຄະເນ ປະຕິບັດດ້ານບັນຊີ**
**change in accounting estimate**

ການປ່ຽນແປງຕົວເລກຄາດຄະເນປະຕິບັດດ້ານບັນຊີ ແມ່ນການປັບປຸງມູນຄ່າໃນບັນຊີຂອງຊັບສິນ ຫຼື ໜີ້ ສິນ, ຫຼື ຈຳນວນເງິນການຊົມໃຊ້ຊັບສິນໃດໜຶ່ງໃນ ເປັນຮອບວຽນປົກກະຕິ, ທີ່ເປັນຜົນມາຈາກການປະ ເມີນຜົນ ກ່ຽວກັບສະຖານະພາບປັດຈຸບັນ ຂອງຊັບສິນ ແລະ ໜີ້ສິນ, ພ້ອມທັງ ຜົນປະໂຫຍດ ແລະ ພັນທະໃນອະນາຄົດ ທີ່ຄາດຫວັງໄວ້ ຊຶ່ງຕິດພັນກັບ ຊັບສິນ ແລະ ໜີ້ສິນດັ່ງກ່າວ. ການປ່ຽນແປງຕົວ ເລກຄາດຄະເນປະຕິບັດດ້ານບັນຊີ ເປັນຜົນມາຈາກການໄດ້ຮັບຂໍ້ມູນຂ່າວສານໃໝ່ ຫຼື ການພັດທະນາ ສິ່ງໃໝ່ ແລະ, ສະນັ້ນ, ຈຶ່ງບໍ່ແມ່ນການກວດແກ້ຂໍ້ຜິດພາດ.

**ປະເພດຊັບສິນ**
**class of accounts**

ການລວມກຸ່ມຊັບສິນ ທີ່ມີລັກສະນະເນື້ອໃນຄ້າຍຄືກັນ ແລະ ໃຊ້ໃນການດຳເນີນງານຂອງວິສາຫະກິດໃດ ໜຶ່ງ.

**ເອກະສານລາຍງານການເງິນລວມກັນ**
**combined financial statements**

ຊຸດເອກະສານລາຍງານການເງິນ ຂອງສອງ ຫຼື ຫຼາຍວິສາຫະກິດທີ່ຄວບຄຸມໂດຍຜູ້ລົງທຶນຜູ້ດຽວ.

**ອົງປະກອບຂອງວິສາຫະກິດ**
**component of an entity**

ການດຳເນີນງານ ແລະ ກະແສເງິນສົດ ທີ່ສາມາດຈຳແນກໄດ້ຢ່າງຈະແจ້ງ, ທາງດ້ານການດຳເນີນງານ ແລະ ເພື່ອຈຸດປະສົງດ້ານການລາຍງານການເງິນ, ຈາກພາກສ່ວນທີ່ເຫຼືອຂອງວິສາຫະກິດ.

**ເຄື່ອງມືການເງິນປະສົມ**
**compound financial instrument**

ເຄື່ອງມືການເງິນທີ່, ຕາມທັດສະນະຂອງຜູ້ອອກເຄື່ອງມື, ມີທັງອົງປະກອບໜີ້ສິນ ແລະອົງປະກອບທຶນ ເຈົ້າຂອງ.

**ເອກະສານລາຍງານການເງິນລວມ ກິດຈະການ**
**consolidated financial statements**

ເອກະສານລາຍງານການເງິນຂອງບໍລິສັດແມ່ ແລະ ບໍລິສັດໃນກຸ່ມ ທີ່ສະເໜີເປັນເອກະສານໃນຖານະຫົວໜ່ວຍເສດຖະກິດອັນໜຶ່ງອັນດຽວ.

**ສັນຍາການກໍ່ສ້າງ**
**construction contract**

ສັນຍາທີ່ໄດ້ຕົກລົງກັນສະເພາະ ສຳລັບການກໍ່ສ້າງຊັບສິນ ຫຼື ກຸ່ມຊັບສິນທີ່ຕິດພັນກັນຢ່າງສະນິດແໜ້ນ ຫຼື ອາໄສເຊິ່ງກັນແລະກັນ ທາງດ້ານການອອກແບບ, ເຕັກໂນໂລຊີ ແລະ ໜ້າທີ່ການ ຫຼື ເປົ້າໝາຍ ຫຼື ການນຳໃຊ້ຂັ້ນສຸດທ້າຍ.

**ພັນທະແບບປະລິຍາຍ**
**constructive obligation**

ພັນທະທີ່ກຳເນີດຈາກການກະທຳຂອງວິສາຫະກິດ ຖ້າວ່າ :

(ກ) ວິສາຫະກິດໄດ້ແຈ້ງໃຫ້ພາກສ່ວນອື່ນ ວ່າຕົນເອງຈະມີຄວາມຮັບຜິດຊອບບາງປະການ ຕາມການປະຕິບັດໃນໄລຍະຜ່ານມາ ຈົນຖືເປັນແບບແຜນ ດ້ວຍນະໂຍບາຍທີ່ໄດ້ປະກາດ ຫຼື ຖະແຫຼງການໃນປັດຈຸບັນທີ່ບົ່ງບອກແຈ້ງຢ່າງພຽງພໍ, ແລະ

(ຂ) ຜົນຕາມມາຄື ວິສາຫະກິດໄດ້ຕັ້ງຄວາມຄາດຫວັງທີ່ໃຊ້ການໄດ້ກັບພາກສ່ວນອື່ນ ວ່າຕົນເອງຈະແບກຫາບຄວາມຮັບຜິດຊອບຕໍ່ພັນທະດັ່ງກ່າວ.

**ຊັບສິນທີ່ອາດເກີດຂຶ້ນ**
**contingent asset**

ຊັບສິນ ທີ່ອາດເກີດຂຶ້ນ ຈາກເຫດການຜ່ານມາ ແລະ ຊຶ່ງຄວາມມີຈິງຈະໄດ້ຮັບການຢືນຢັນພຽງແຕ່ຈາກການເກີດຂຶ້ນ ຫຼື ບໍ່ເກີດຂຶ້ນ ຂອງໜຶ່ງ ຫຼື ຫຼາຍເຫດການໃນອະນາຄົດທີ່ບໍ່ແນ່ນອນ ຊຶ່ງບໍ່ຢູ່ໃນການຄວບຄຸມທັງໝົດຂອງວິສາຫະກິດ.

**ໜີ້ສິນທີ່ອາດເກີດຂຶ້ນ**
**contingent liability**

(ກ) ພັນທະ ທີ່ອາດເກີດຂຶ້ນ ຈາກເຫດການຜ່ານມາ ແລະ ຊຶ່ງຄວາມມີຈິງຈະໄດ້ຮັບການຢືນຢັນພຽງແຕ່ຈາກການເກີດຂຶ້ນ ຫຼື ບໍ່ເກີດຂຶ້ນ ຂອງໜຶ່ງ ຫຼື ຫຼາຍເຫດການໃນອະນາຄົດທີ່ບໍ່ແນ່ນອນ ບໍ່ຢູ່ໃນການຄວບຄຸມທັງໝົດຂອງວິສາຫະກິດ, ຫຼື

(ຂ) ພັນທະໃນປັດຈຸບັນ ທີ່ເກີດຈາກເຫດການຜ່ານມາ, ແຕ່ຫາກບໍ່ໄດ້ຖືກຮັບຮູ້ລາຍການບັນຊີ, ຍ້ອນວ່າ :

(i) ບໍ່ອາດເປັນໄປໄດ້ ທີ່ວ່າວິສາຫະກິດຈະຕ້ອງໄດ້ໂອນຜົນປະໂຫຍດດ້ານເສດຖະກິດໄປເພື່ອເປັນການຊຳລະສະສາງພັນທະດັ່ງກ່າວ, ຫຼື

(ii) ຈຳນວນເງິນພັນທະນັ້ນ ບໍ່ສາມາດຖືກຕີມູນຄ່າ ແບບໜ້າເຊື່ອຖືໄດ້ຢ່າງພຽງພໍ.

**ການຄວບຄຸມ (ວິສາຫະກິດ)**
**control (of an enterprise)**

ສິດອຳນາດໃນການກຳນົດນະໂຍບາຍດ້ານການເງິນ ແລະ ການດຳເນີນງານຂອງອີກວິສາຫະກິດໜຶ່ງ ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກກິດຈະກຳຂອງວິສາຫະກິດນັ້ນ.

**ອາກອນໃນປີ**
**current tax**

ຈຳນວນເງິນອາກອນລາຍຮັບຕ້ອງຈ່າຍ (ຫົດແທນຄືນໄດ້) ບ້ວງກຳໄລຖືກເສຍອາກອນ (ຂາດທຶນອາກອນ) ຂອງຮອບເວລາປັດຈຸບັນ ຫຼື ຂອງຮອບເວລາລາຍງານຜ່ານມາ.

**ມື້ຂ້າມຜ່ານໄປສູ່ *FRS ສຳລັບ ວທຍ***
**date of transition to the *FRS for LEs***

ຈຸດເລີ່ມຕົ້ນຂອງປີທຳອິດ ຊຶ່ງຫົວໜ່ວຍສະເໜີຂໍ້ມູນຂ່າວສານສົມທຽບຢ່າງຄົບຖ້ວນ ໂດຍຖືກຕ້ອງຕາມຂໍ້ກຳນົດຂອງ*ມາດຕະຖານການລາຍງານການເງິນ ສຳລັບ ວທຍ* ໃນເອກະສານລາຍງານການເງິນຊຸດທຳອິດ ທີ່ຖືກຕ້ອງຕາມ *FRS ສຳລັບ ວທຍ.*

**ອາກອນລໍຖ້າສະສາງ**
**deferred tax**

ອາກອນລາຍຮັບຕ້ອງຈ່າຍ (ເກັບຄືນໄດ້) ບ້ວງກຳໄລຖືກເສຍອາກອນ (ຂາດທຶນອາກອນ) ໃນຮອບເວລາລາຍງານໃນອະນາຄົດ ແລະ ທີ່ເກີດຈາກລາຍການເຄື່ອນໄຫວ ຫຼື ເຫດການຜ່ານມາ.

**ຊັບສິນອາກອນລໍຖ້າສະສາງ**
**deferred tax assets**

ອາກອນລາຍຮັບ ທີ່ຈະເກັບກູ້ຄືນໄດ້ໃນຮອບເວລາລາຍງານໃນອະນາຄົດບ້ວງ :

(ກ) ສ່ວນຜິດດ່ຽງຊົ່ວຄາວ ;

(ຂ) ຂາດທຶນອາກອນທີ່ບໍ່ໄດ້ນຳໃຊ້ຍົກໄປຫັກຕໍ່; ແລະ

(ຄ) ສິນເຊື່ອອາກອນທີ່ບໍ່ໄດ້ນຳໃຊ້ຍົກໄປປະຕິບັດຕໍ່.

**ໜີ້ສິນອາກອນລໍຖ້າສະສາງ**
**deferred tax liabilities**

ອາກອນລາຍຮັບທີ່ຕ້ອງຈ່າຍໃນຮອບເວລາລາຍງານໃນອະນາຄົດ ບ້ວງສ່ວນຜິດດ່ຽງຊົ່ວຄາວ.

| | |
|---|---|
| **ໜີ້ສິນຜົນປະໂຫຍດພະນັກງານທີ່ກຳນົດໄວ້**<br>**defined benefit liability** | ມູນຄ່າປັດຈຸບັນຂອງພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້ຕາມມູນຄ່າຍຸຕິທຳ ລົບໃຫ້ມູນຄ່າຍຸຕິທຳ ຂອງຊັບສິນໃນແຜນ (ຖ້າມີ) ໃນມື້ລາຍງານ ຊຶ່ງຈະນຳໃຊ້ໂດຍກົງເພື່ອຊຳລະສະສາງພັນທະນັ້ນ. |
| **ພັນທະຜົນປະໂຫຍດພະນັກງານທີ່ກຳນົດໄວ້ (ມູນຄ່າປະຈຸບັນຂອງ)**<br>**defined benefit obligation (present value of)** | ມູນຄ່າປັດຈຸບັນຂອງເງິນທີ່ຄາດວ່າຈະຊຳລະໃນອະນາຄົດ, ໂດຍບໍ່ໄດ້ຫັກຊັບສິນ ໃນແຜນຊັບສິນໃດໆ ອອກ, ທີ່ຕ້ອງການເພື່ອຊຳລະພັນທະ ອັນເນື່ອງຈາກການຮັບໃຊ້ວຽກງານຜ່ານມາຂອງພະນັກງານໃນ ຮອບເວລາປັດຈຸບັນ ແລະ ຜ່ານໆມາ. |
| **ແຜນນະໂຍບາຍຄິດໄລ່ຜົນປະໂຫຍດພະນັກງານທີ່ກຳນົດໄວ້**<br>**defined benefit plans** | ແຜນນະໂຍບາຍຄິດໄລ່ຜົນປະໂຫຍດພະນັກງານຫຼັງອອກການ ທີ່ບໍ່ແມ່ນແຜນສົມທົບເງິນທີ່ກຳນົດໄວ້. |
| **ແຜນສົມທົບເງິນທີ່ກຳນົດໄວ້**<br>**defined contribution plans** | ແຜນຄິດໄລ່ຜົນປະໂຫຍດພະນັກງານຫຼັງອອກການ ໂດຍອີງຕາມເງື່ອນໄຂທີ່ວ່າວິສາຫະກິດຈ່າຍເງິນສົມ ທົບເປັນຈຳນວນເງິນຄົງທີ່ທີ່ກຳນົດໄວ້ ໃຫ້ວິສາຫະກິດໜຶ່ງອີກ (ກອງທຶນ) ແລະ ບໍ່ມີຂໍ້ຜູກພັນທາງກົດ ໝາຍ ຫຼື ພັນທະແບບປະລິຍາຍ ໃຫ້ຈ່າຍເງິນສົມທົບເພີ້ມຕື່ມ ຫຼື ຊຳລະເປັນຜົນປະໂຫຍດໂດຍກົງ ແກ່ ສະມາຊິກພະນັກງານ ຖ້າວ່າກອງທຶນບໍ່ມີຊັບສິນຫຼາຍພຽງພໍ ເພື່ອຊຳລະຜົນປະໂຫຍດທັງໝົດທີ່ກ່ຽວຂ້ອງ ກັບການຮັບໃຊ້ຂອງພະນັກງານໃນປີປັດຈຸບັນ ແລະ ປີຜ່ານໆມາ. |
| **ຈຳນວນເງິນຫັກຄ່າຫຼຸ້ຍຫ້ຽນ**<br>**depreciable amount** | ຕົ້ນທຶນຂອງຊັບສິນ ຫຼື ຈຳນວນເງິນອື່ນໆທີ່ໃຊ້ແທນຕົ້ນທຶນ (ໃນເອກະສານລາຍງານການເງິນ), ຫັກມູນ ຄ່າເສດເຫຼືອອອກ. |
| **ຄ່າຫຼຸ້ຍຫ້ຽນ**<br>**depreciation** | ການແບ່ງສ່ວນຈຳນວນເງິນຫັກຄ່າຫຼຸ້ຍຫ້ຽນຂອງຊັບສິນ ຢ່າງເປັນລະບົບ ບົນພື້ນຖານອາຍຸການນຳໃຊ້ ງານ. |
| **ການຕັດລາຍການບັນຊີ**<br>**derecognition** | ການເອົາຊັບສິນ ຫຼື ໜີ້ສິນ ໄດ້ຖືກຮັບຮູ້ລາຍບັນຊີຜ່ານມາ ອອກຈາກໃບລາຍງານຖານະການເງິນຂອງວິ ສາຫະກິດ. |
| **ການພັດທະນາ**<br>**development** | ການນຳໃຊ້ຜົນຂອງການຄົ້ນຄ້ວາ ຫຼື ຄວາມຮູ້ອື່ນໆເຂົ້າໃນແຜນການ ຫຼື ອອກແບບເພື່ອແນໃສ່ຜະລິດວັດ ສະດຸ, ພາຫະນະ, ຜະລິດຕະພັນ, ກຳມະວິທີ, ລະບົບ ຫຼື ການບໍລິການໃໝ່ ທີ່ໄດ້ປັບປຸງໃຫ້ດີຂຶ້ນ ກ່ອນ ຈະເລີ່ມຕົ້ນຜະລິດເປັນສິນຄ້າ ຫຼື ນຳໃຊ້. |
| **ການດຳເນີນງານທີ່ຍຸດເຊົາ**<br>**discontinued operation** | ອົງປະກອບຂອງວິສາຫະກິດຊຶ່ງຫົວໜ່ວຍໄດ້ຍຸດເຊົາ ຫຼື ຮັກສາໄວ້ເພື່ອຂາຍ, ແລະ<br>(ກ) ເປັນສາຍງານທຸລະກິດທີ່ສຳຄັນ ຫຼື ເຂດພູມສາດທີ່ແຍກອອກຕ່າງຫາກ ຂອງການດຳເນີນ ງານ ;<br>(ຂ) ເປັນສ່ວນໜຶ່ງຂອງແຜນການອັນດຽວ ທີ່ປະສານງານກັນ ເພື່ອແຍກອອກຈາກສາຍງານ ທຸລະກິດທີ່ສຳຄັນ ຫຼື ເຂດພູມສາດທີ່ແຍກອອກຕ່າງຫາກ ຂອງການດຳເນີນງານ, ຫຼື<br>(ຄ) ເປັນບໍລິສັດໃນກຸ່ມ ທີ່ໄດ້ຊື້ສະເພາະ ເພື່ອແນໃສ່ຂາຍອອກຄືນ. |
| **ວິທີການຄິດໄລ່ດອກເບ້ຍຕົວຈິງ**<br>**effective interest method** | ວິທີການຄິດໄລ່ຕົ້ນທຶນຫັກທົດແທນຂອງຊັບສິນການເງິນ ຫຼື ໜີ້ສິນການເງິນໃດໜຶ່ງ (ຫຼື ກຸ່ມຊັບສິນການ ເງິນ ຫຼື ໜີ້ສິນການເງິນ) ແລະ ການຈັດແບ່ງລາຍຮັບດອກເບ້ຍ ຫຼື ລາຍຈ່າຍດອກເບ້ຍ ໃນປີທີ່ກ່ຽວ ຂ້ອງ. |
| **ອັດຕາດອກເບ້ຍຕົວຈິງ**<br>**effective interest rate** | ອັດຕາທີ່ໃຊ້ໃນການຕີມູນຄ່າການຈ່າຍ ຫຼື ຮັບເງິນສົດ ໃນອະນາຄົດ ເປັນມູນຄ່າປັດຈຸບັນ ຕາມອາຍຸການ ຂອງເຄື່ອງມືການເງິນ ທີ່ໄດ້ຄາດຄະເນໄວ້ ຢ່າງແນ່ນອນ ຫຼື ໃນໄລຍະເວລາສັ້ນກ່ວາ, ຖ້າເໝາະສົມ, ດ້ວຍວິທີເພື່ອໃຫ້ໄດ້ມູນຄ່າໃນບັນຊີຂອງຊັບສິນການເງິນ ຫຼື ໜີ້ສິນການເງິນ. |

**ປະສິດທິຜົນໃນການຄຸ້ມກັນຄວາມສ່ຽງ**
**effectiveness of a hedge**

ລະດັບຊຶ່ງສ່ວນປ່ຽນແປງດ້ານມູນຄ່າຍຸຕິທຳ ຫຼື ກະແສເງິນສົດຂອງລາຍການທີ່ໄດ້ຄຸ້ມກັນຄວາມສ່ຽງ ບ້ວງຄວາມສ່ຽງທີ່ໄດ້ຮັບການຄຸ້ມກັນ ຖືກຫັກຊຳລະສະສາງໂດຍສ່ວນປ່ຽນແປງດ້ານມູນຄ່າຍຸຕິທຳ ຫຼື ກະແສເງິນສົດຂອງເຄື່ອງມືຄຸ້ມກັນຄວາມສ່ຽງ.

**ຜົນປະໂຫຍດຂອງພະນັກງານ**
**employee benefits**

ທຸກຮູບແບບສິ່ງຕອບແທນທີ່ວິສາຫະກິດໄດ້ໃຫ້ເປັນການແລກປ່ຽນກັບວຽກງານທີ່ພະນັກງານໄດ້ຮັບໃຊ້.

**ທຶນເຈົ້າຂອງ**
**equity**

ຜົນປະໂຫຍດທີ່ຍັງເຫຼືອ ໃນຊັບສິນຂອງວິສາຫະກິດພາຍຫຼັງຫັກໜີ້ສິນທັງໝົດອອກ.

**ລາຍການເຄື່ອນໄຫວການຊຳລະຕາມຮຸ້ນທີ່ຈ່າຍເປັນທຶນເຈົ້າຂອງ**
**equity-settled share-based payment transaction**

ລາຍການເຄື່ອນໄຫວການຊຳລະຕາມຮຸ້ນ ຊຶ່ງໃນນັ້ນ ວິສາຫະກິດໄດ້ສິນຄ້າ ຫຼື ການບໍລິການມາ ເປັນສິ່ງຕອບແທນສຳລັບເຄື່ອງມືການເງິນປະເພດທຶນເຈົ້າຂອງຂອງວິສາຫະກິດ (ຊຶ່ງລວມມີຮຸ້ນ ຫຼື ສິດທິໃນການຊື້ຮຸ້ນ).

**ຂໍ້ຜິດພາດ**
**errors**

ການຫຼົງລືມ ຫຼື ການລາຍງານຜິດພາດໃນເອກະສານລາຍງານການເງິນຂອງວິສາຫະກິດ ທີ່ພົວພັນກັບໜຶ່ງ ຫຼື ຫຼາຍປີການບັນຊີຜ່ານມາ ອັນເນື່ອງມາຈາກການບໍ່ນຳໃຊ້ ຫຼື ການນຳໃຊ້ບໍ່ຖືກຕ້ອງ ກ່ຽວກັບຂໍ້ມູນຂ່າວສານທີ່ໜ້າເຊື່ອຖືໄດ້ :

(ກ) ທີ່ມີຢູ່ ເວລາເອກະສານລາຍງານການເງິນ ຂອງປີນັ້ນໄດ້ຮັບອະນຸຍາດໃຫ້ຖືກຈັດພິມ ; ແລະ
(ຂ) ຊຶ່ງສາມາດຄາດຫວັງໄວ້ວ່າ ຈະໄດ້ຮັບມາ ຢ່າງສົມເຫດສົມຜົນ ແລະ ໄດ້ມີການຄຳນຶງເຖິງ ເພື່ອສ້າງ ແລະ ສະເໜີເອກະສານລາຍງານການເງິນດັ່ງກ່າວ.

**ລາຍຈ່າຍ**
**expenses**

ການຫຼຸດລົງດ້ານຜົນປະໂຫຍດດ້ານເສດຖະກິດ ໃນຮອບເວລາລາຍງານ ໃນຮູບການສູນເສຍ ຫຼື ການຫຼຸດລົງຂອງຊັບສິນ ຫຼື ການເພີ້ມຂຶ້ນຂອງໜີ້ສິນ ຊຶ່ງມີຜົນເຮັດໃຫ້ທຶນເຈົ້າຂອງຫຼຸດລົງ ທີ່ນອກເໜືອການຫຼຸດລົງທີ່ກ່ຽວຂ້ອງກັບການແຈກຢາຍໃຫ້ຜູ້ລົງທຶນໃນທຶນເຈົ້າຂອງ.

**ການນຳສະເໜີໂດຍຖືກຕ້ອງ**
**fair presentation**

ການສະແດງຂໍ້ມູນທີ່ຖືກຕ້ອງ ກ່ຽວກັບຜົນກະທົບຂອງລາຍການເຄື່ອນໄຫວ, ເຫດການ ແລະ ເງື່ອນໄຂອື່ນໆ ໃຫ້ຖືກຕ້ອງຕາມຄຳນິຍາມ ແລະ ເງື່ອນໄຂມາດຕະຖານການຮັບຮູ້ລາຍການບັນຊີ ສຳລັບຊັບສິນ, ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ.

**ມູນຄ່າຍຸຕິທຳ**
**fair value**

ຈຳນວນເງິນຊຶ່ງຊັບສິນໃດໜຶ່ງສາມາດຖືກແລກປ່ຽນ ຫຼື ຊຶ່ງໜີ້ສິນໃດໜຶ່ງອາດຈະຖືກຊຳລະສະສາງ, ຫຼື ເຄື່ອງມືປະເພດທຶນເຈົ້າຂອງທີ່ໄດ້ມາ ສາມາດຖືກແລກປ່ຽນ, ລະຫ່ວາງ ພາກສ່ວນທີ່ຮັບຮູ້ ແລະ ເຕັມໃຈ ໃນການແລກປ່ຽນ ພາຍໃຕ້ການແກ້ງແຍ້ງປົກກະຕິ.

**ມູນຄ່າຍຸຕິທຳລົບຕົ້ນທຶນຂາຍ**
**fair value less costs to sell**

ແມ່ນຈຳນວນເງິນທີ່ສາມາດໄດ້ຮັບຈາກການຂາຍຊັບສິນໃດໜຶ່ງ ຫຼື ໜ່ວຍສ້າງເງິນສົດ ໃນລາຍການເຄື່ອນໄຫວ ທີ່ໄດ້ດຳເນີນຕາມເງື່ອນໄຂແກ້ງແຍ້ງປົກກະຕິ ໃນຂະນະທີ່ທັງສອງຝ່າຍມີຄວາມຮອບຮູ້ ແລະ ເຕັມໃຈໃນການແລກປ່ຽນ, ຫັກຕົ້ນທຶນໃນການຂາຍສະສາງອອກ.

**ສັນຍາເຊົ່າການເງິນ**
**finance lease**

ສັນຍາເຊົ່າ ທີ່ໂອນຄວາມສ່ຽງ ແລະ ຜົນປະໂຫຍດ ເກືອບທັງໝົດ ທີ່ຕິດພັນກັບກຳມະສິດຂອງຊັບສິນໃດໜຶ່ງ. ກຳມະສິດອາດ ຫຼື ບໍ່ອາດຖືກໂອນໄດ້. ສັນຍາເຊົ່າ ທີ່ບໍ່ແມ່ນສັນຍາເຊົ່າການເງິນ ແມ່ນສັນຍາເຊົ່າດຳເນີນງານ.

**ຊັບສິນການເງິນ**
**financial asset**

ຊັບສິນ ທີ່ເປັນ :

(ກ) ເງິນສົດ;
(ຂ) ເຄື່ອງມືການເງິນປະເພດທຶນເຈົ້າຂອງຂອງວິສາຫະກິດອື່ນ ;
(ຄ) ສິດທິຕາມສັນຍາ :

(i) ໃນການຮັບເງິນສົດ ຫຼື ໜີ້ສິນການເງິນອື່ນ ຈາກວິສາຫະກິດອື່ນ, ຫຼື

(ii) ແລກປ່ຽນຊັບສິນ ຫຼື ໜີ້ສິນ ການເງິນ ກັບວິສາຫະກິດອື່ນ ບົນເງື່ອນໄຂທີ່ມີຄວາມ ອາດສາມາດບົ່ມຊ້ອນໃນການເອື້ອອຳນວຍຄວາມສະດວກ ໃຫ້ແກ່ວິສາຫະກິດນັ້ນ, ຫຼື

(ງ) ສັນຍາທີ່ຈະ ຫຼື ອາດຈະສາມາດຊຳລະເປັນເຄື່ອງມືການເງິນປະເພດທຶນເຈົ້າຂອງ ຂອງວິ ສາຫະກິດເອງ ແລະ :

(i) ຊຶ່ງພາຍໃຕ້ສັນຍາດັ່ງກ່າວ ວິສາຫະກິດ ຈຳຕ້ອງ ຫຼື ອາດຈະຈຳຕ້ອງໄດ້ຮັບເຄື່ອງມື ການເງິນປະເພດທຶນເຈົ້າຂອງ ຂອງວິສາຫະກິດຕົນ ໃນຈຳນວນຜັນແປ, ຫຼື

(ii) ຊຶ່ງຈະຖືກ ຫຼື ອາດຈະຖືກຊຳລະແບບອື່ນ ທີ່ບໍ່ແມ່ນການແລກປ່ຽນຈຳນວນເງິນສົດອັນ ແນ່ນອນ ຫຼື ຊັບສິນການເງິນອື່ນໆ ໃນຈຳນວນຄົງທີ່ຂອງເຄື່ອງມືການເງິນປະເພດທຶນເຈົ້າ ຂອງ ຂອງວິສາຫະກິດຕົນ. ເພື່ອຈຸດໝາຍດັ່ງກ່າວ, ເຄື່ອງມືການເງິນປະເພດທຶນເຈົ້າຂອງ ຂອງວິສາຫະກິດຈະບໍ່ລວມມີເຄື່ອງມືທີ່ປະກອບ ເປັນສັນຍາຮັບ ຫຼື ສົ່ງມອບເຄື່ອງມືການ ເງິນປະເພດທຶນເຈົ້າຂອງຂອງວິສາຫະກິດຕົນ ໃນອະນາຄົດ.

**ເຄື່ອງມືການເງິນ**
**financial instrument**

ສັນຍາທີ່ພາໃຫ້ ຊັບສິນການເງິນ ຂອງວິສາຫະກິດໃດໜຶ່ງ ແລະ ໜີ້ສິນການເງິນ ຫຼື ເຄື່ອງມືການເງິນ ປະເພດທຶນເຈົ້າຂອງ ຂອງວິສາຫະກິດໜຶ່ງອີກ ເພີ້ມຂຶ້ນ.

**ໜີ້ສິນການເງິນ**
**financial liabilities**

ໜີ້ສິນ ທີ່ເປັນ :

(ກ) ພັນທະຕາມສັນຍາ :

(i) ທີ່ຈະມອບເງິນສົດ ຫຼື ຊັບສິນການເງິນໃດໜຶ່ງ ໃຫ້ວິສາຫະກິດໜຶ່ງອີກ, ຫຼື

(ii) ທີ່ຈະແລກປ່ຽນຊັບສິນ ຫຼື ໜີ້ສິນການເງິນ ກັບວິສາຫະກິດອື່ນ ບົນເງື່ອນໄຂທີ່ບໍ່ມີ ຄວາມອາດສາມາດບົ່ມຊ້ອນໃນການເອື້ອອຳນວຍຄວາມສະດວກ ໃຫ້ແກ່ວິສາຫະກິດ ນັ້ນ ຕາມເງື່ອນໄຂທີ່ບໍ່ເອື້ອອຳນວຍສຳລັບວິສາຫະກິດ; ຫຼື

(ຂ) ສັນຍາທີ່ຈະ ຫຼື ອາດຈະສາມາດຊຳລະເປັນເຄື່ອງມືການເງິນປະເພດທຶນເຈົ້າຂອງຂອງວິ ສາຫະກິດເອງ ແລະ :

(i) ຊຶ່ງພາຍໃຕ້ສັນຍາດັ່ງກ່າວ ວິສາຫະກິດຈຳຕ້ອງ ຫຼື ອາດຈະຈຳຕ້ອງໄດ້ໃຫ້ເຄື່ອງມື ການເງິນປະເພດທຶນເຈົ້າຂອງ ຂອງວິສາຫະກິດຕົນ ໃນຈຳນວນຜັນແປ; ຫຼື

(ii) ຊຶ່ງຈະຖືກ ຫຼື ອາດຈະຖືກຊຳລະແບບອື່ນ ທີ່ບໍ່ແມ່ນການແລກປ່ຽນຈຳນວນເງິນສົດ ອັນແນ່ນອນ ຫຼື ຊັບສິນການເງິນອື່ນໆ ໃນຈຳນວນຄົງທີ່ຂອງເຄື່ອງມືການເງິນ ປະເພດທຶນເຈົ້າຂອງ ຂອງວິສາຫະກິດຕົນ. ເພື່ອຈຸດໝາຍດັ່ງກ່າວ, ເຄື່ອງມືການ ເງິນປະເພດທຶນເຈົ້າຂອງ ຂອງວິສາຫະກິດຈະບໍ່ລວມມີເຄື່ອງມືທີ່ປະກອບ ເປັນສັນ ຍາຮັບ ຫຼື ສົ່ງມອບເຄື່ອງມືການເງິນປະເພດທຶນເຈົ້າຂອງຂອງວິສາຫະກິດຕົນ ໃນ ອະນາຄົດ.

**ຖານະການເງິນ**
**financial position**

ສາຍພົວພັນ ລະຫ່ວາງ ຊັບສິນ, ໜີ້ສິນ ແລະ ທຶນເຈົ້າຂອງວິສາຫະກິດໃດໜຶ່ງ ໃນວັນເວລາໃດໜຶ່ງສະ ເພາະ ດັ່ງທີ່ໄດ້ສະເໜີໃນໃບລາຍງານຖານະການເງິນ.

**ມາດຕະຖານການລາຍງານການເງິນ ສຳລັບ ວິສາຫະກິດທີ່ບໍ່ຮັບໃຊ້ຜົນ ປະໂຫຍດ ສາທາລະນະ**
**Financial Reporting Standards for non-Public Interest Enterprises**

ມາດຕະຖານການລາຍງານການເງິນ ທີ່ຖືກປັບມາຈາກ ມາດຕະຖານສາກົນດ້ານການລາຍງານການເງິນ ສຳລັບວິສາຫະກິດຂະໜາດນ້ອຍແລະກາງ (IFRS ສຳລັບ ວນກ) ເພື່ອໃຫ້ສອດຄ່ອງກັບວິສາຫະກິດທີ່ບໍ່ ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ປະກອບດ້ວຍວິສາຫະກິດຂະໜາດໃຫຍ່ (ວຫຍ) ແລະ ວິສາຫະກິດ ຂະໜາດນ້ອຍແລະກາງ (ວນກ)

**ເອກະສານລາຍງານການເງິນ**
**financial statements**

ການສະເໜີຢ່າງເປັນລະບົບ ກ່ຽວກັບຖານະການເງິນ, ຜົນການດຳເນີນງານດ້ານການເງິນ ແລະ ກະແສ ເງິນສົດ ຂອງວິສາຫະກິດ.

| | |
|---|---|
| **ກິດຈະກຳປະກອບທຶນ**<br>**financing activities** | ກິດຈະກຳທີ່ກຳເນີດຈາກການປ່ຽນແປງດ້ານຂະໜາດ ແລະ ສ່ວນປະກອບຂອງທຶນເຈົ້າຂອງ ແລະ ເງິນກູ້ຢືມຂອງວິສາຫະກິດ. |
| **ຂໍ້ຜູກມັດຂາດຕົວ**<br>**firm commitment** | ສັນຍາຜູກມັດ ເພື່ອແນໃສ່ແລກປ່ຽນຊັບພະຍາກອນຕາມຈຳນວນ, ລາຄາ, ແລະ ວັນທີ່ ທີ່ໄດ້ກຳນົດໄວ້ສຳລັບອະນາຄົດ. |
| **ຜູ້ຮັບຮອງນຳໃຊ້ *FRS ສຳລັບ ວຫຍ* ຄັ້ງທຳອິດ**<br>**first-time adopter of the *FRS for LEs*** | ວິສາຫະກິດທີ່ສະເໜີເອກະສານລາຍງານການເງິນປະຈຳປີສະບັບທຳອິດ ທີ່ຖືກຕ້ອງຕາມ *FRS ສຳລັບ ວຫຍ*. |
| **ລາຍການເຄື່ອນໄຫວຄາດຄະເນ**<br>**forecast transaction** | ລາຍການເຄື່ອນໄຫວໃນອະນາຄົດ ທີ່ບໍ່ເປັນຂໍ້ຜູກມັດ ແຕ່ໄດ້ຄາດຄະເນໄວ້. |
| **FRS, FRS ສຳລັບ ວຫຍ, FRS ສຳລັບ ວນກ**<br>**FRS, FRS for LEs, FRS for SMEs** | ເບິ່ງ ມາດຕະຖານການລາຍງານການເງິນສຳລັບວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ |
| **ມາດຕະຖານສາກົນດ້ານການລາຍງານການເງິນເຕັມສ່ວນ**<br>**full IFRSs** | ມາດຕະຖານສາກົນດ້ານການລາຍງານການເງິນ (IFRSs) ທີ່ບໍ່ແມ່ນ *IFRS ສຳລັບ ວນກ*. |
| **ສະກຸນເງິນທີ່ໃຊ້ໃນການດຳເນີນງານ**<br>**functional Currency** | ສະກຸນເງິນຕາທີ່ໃຊ້ໃນສະພາບແວດລ້ອມຕົ້ນຕໍທາງດ້ານເສດຖະກິດ ຊຶ່ງວິສາຫະກິດດຳເນີນງານຢູ່. |
| **ການສ້າງກອງທຶນ (ຜົນປະໂຫຍດພະນັກງານຫຼັງອອກການ)**<br>**funding (of post-employment benefits)** | ເງິນສົມທົບທີ່ວິສາຫະກິດ ຫຼື ບາງຄັ້ງ ພະນັກງານຂອງວິສາຫະກິດ ໄດ້ໂອນເຂົ້າວິສາຫະກິດ ຫຼື ກອງທຶນໃດໜຶ່ງ ທີ່ແຍກຕ່າງຫາກຈາກວິສາຫະກິດລາຍງານຢ່າງຖືກຕ້ອງຕາມກົດໝາຍ ແລະ ຈາກກອງທຶນດັ່ງກ່າວ ມີການເບີກຈ່າຍຜົນປະໂຫຍດໃຫ້ພະນັກງານ. |
| **ສ່ວນໄດ້**<br>**gains** | ການເພີ້ມຂຶ້ນຂອງຜົນປະໂຫຍດດ້ານເສດຖະກິດ ໃນຮອບເວລາລາຍງານ ທີ່ກົງກັບຄຳນິຍາມ ກ່ຽວກັບລາຍຮັບ ແຕ່ຫາກບໍ່ແມ່ນລາຍໄດ້. |
| **ເອກະສານລາຍງານເງິນເພື່ອຈຸດປະສົງນຳໃຊ້ທົ່ວໄປ**<br>**general purpose financial statements** | ເອກະສານລາຍງານການເງິນ ທີ່ແນໃສ່ຕອບສະໜອງຄວາມຕ້ອງການດ້ານຂໍ້ມູນຂ່າວສານການເງິນທົ່ວໄປຂອງຜູ້ນຳໃຊ້ຢ່າງກ້ວາງຂວາງ ຊຶ່ງບໍ່ຢູ່ໃນຖານະຮຽກຮ້ອງເອົາບົດລາຍງານການເງິນ ທີ່ປັບໃສ່ຄວາມຕ້ອງການຂໍ້ມູນຂ່າວສານສະເພາະຂອງຕົນເອງໄດ້. |
| **ຄວາມສືບເນື່ອງໃນການດຳເນີນທຸລະກິດ**<br>**going concern** | ວິສາຫະກິດມີຄວາມສືບເນື່ອງໃນການດຳເນີນທຸລະກິດ, ເວັ້ນເສຍແຕ່ວ່າຄະນະບໍລິຫານມີເຈດຈຳນົງຊຳລະສະສາງວິສາຫະກິດ ຫຼື ຍຸດຕິລາຍການເຄື່ອນໄຫວ, ຫຼື ບໍ່ມີທາງເລືອກທີ່ເປັນໄປໄດ້ແຕ່ຫາກຕ້ອງດຳເນີນການຄືແນວນັ້ນ. |
| **ຄ່ານິຍົມ**<br>**goodwill** | ຜົນປະໂຫຍດດ້ານເສດຖະກິດໃນອະນາຄົດທີ່ກຳເນີດຈາກຊັບສິນ ທີ່ບໍ່ສາມາດຈຳແນກເປັນແຕ່ລະລາຍ ແລະ ຖືກຮັບຮູ້ລາຍການບັນຊີຕ່າງຫາກໄດ້. |
| **ເງິນຊ່ວຍໜູນຂອງລັດຖະບານ**<br>**government grant** | ການຊ່ວຍເຫຼືອຂອງລັດ ໃນຮູບການໂອນຊັບພະຍາກອນໃຫ້ວິສາຫະກິດໜຶ່ງ ໂດຍການທົດແທນກັບຜົນການປະຕິບັດງານຜ່ານມາ ຫຼື ໃນອະນາຄົດທີ່ວ່າວິສາຫະກິດໄດ້ ແລະ ຈະປະຕິບັດໃຫ້ຖືກຕ້ອງຕາມ |

ເງື່ອນໄຂສະເພາະທີ່ກ່ຽວຂ້ອງກັບກິດຈະກຳດຳເນີນງານຂອງວິສາຫະກິດ.

**ວັນທີມອບສິດ**
**grant date**

ມື້ຊຶ່ງວິສາຫະກິດ ແລະ ຝ່າຍອື່ນ (ລວມທັງພະນັກງານ) ຍິນຍອມຮັບສັນຍາທີ່ມີການເບີກຈ່າຍເງິນຕາມ ຮຸ້ນ, ໝາຍເຖິງ ມື້ຊຶ່ງວິສາຫະກິດ ແລະ ຄູ່ສັນຍາມີຄວາມເຂົ້າໃຈເປັນເອກະພາບ ກ່ຽວກັບຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາ. ໃນວັນທີມອບສິດ, ວິສາຫະກິດອະນຸມັດໃຫ້ຄູ່ສັນຍາໄດ້ຮັບເງິນສົດ, ຊັບສິນ ອື່ນໆ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງຂອງວິສາຫະກິດ, ວ່າແຕ່ໄດ້ຕາມເງື່ອນໄຂທີ່ກຳນົດໄວ້ກ່ຽວກັບ ສິດທິທີ່ໄດ້ຮັບ, ຖ້າມີ. ຖ້າວ່າສັນຍາດັ່ງກ່າວຕ້ອງປະຕິບັດຕາມຂະບວນການອະນຸມັດ (ເຊັ່ນໂດຍຜູ້ຖືຮຸ້ນ), ວັນທີມອບສິດນັ້ນ ຈະແມ່ນມື້ທີ່ໄດ້ຮັບການອະນຸມັດ.

**ເງິນລົງທຶນລວມໃນສັນຍາເຊົ່າ**
**gross investment in a lease**

ຜົນລວມຂອງ:

(ກ) ການຊຳລະຄ່າເຊົ່າຕ່ຳສຸດ ຊຶ່ງຜູ້ໃຫ້ເຊົ່າຈະຕ້ອງຮັບ ບົນພື້ນຖານສັນຍາເຊົ່າການເງິນ, ແລະ

(ຂ) ມູນຄ່າເສດເຫຼືອ ທີ່ບໍ່ມີການຄ້ຳປະກັນ ທີ່ສະສົມ ໃຫ້ແກ່ຜູ້ໃຫ້ເຊົ່າ.

**ກຸ່ມບໍລິສັດ**
**group**

ບໍລິສັດແມ່ ແລະ ບໍລິສັດໃນກຸ່ມທັງໝົດ ຂອງບໍລິສັດແມ່ດັ່ງກ່າວ.

**ລາຍການທີ່ໄດ້ຄຸ້ມກັນຄວາມສ່ຽງ**
**hedged item**

ສຳລັບວັດຖຸປະສົງ ຂອງການບັນຊີຄຸ້ມກັນຄວາມສ່ຽງພິເສດ ຕາມໝວດ 12 ຂອງມາດຕະຖານສະບັບ ນີ້, ລາຍການທີ່ໄດ້ຄຸ້ມກັນຄວາມສ່ຽງ ແມ່ນ:

(ກ) ຄວາມສ່ຽງໃນອັດຕາດອກເບ້ຍຂອງເຄື່ອງມືການເງິນປະເພດໜີ້ ທີ່ຖືກຕີມູນຄ່າຕາມຕົ້ນທຶນ ຫັກທຶດແທນ;

(ຂ) ຄວາມສ່ຽງຈາກການແລກປ່ຽນເງິນຕາຕ່າງປະເທດ ຫຼື ອັດຕາດອກເບ້ຍ ໃນຂໍ້ຜູກມັດຂາດ ຕົວ ຫຼື ລາຍການເຄື່ອນໄຫວຄາດຄະເນທີ່ເປັນໄປໄດ້ຢ່າງສູງ ;

(ຄ) ຄວາມສ່ຽງດ້ານລາຄາຂອງສິນຄ້າ ຊຶ່ງວິສາຫະກິດຮັກສາໄວ້, ຫຼື ໃນຂໍ້ຜູກມັດຂາດຕົວ, ຫຼື ໃນລາຍການເຄື່ອນໄຫວຄາດຄະເນທີ່ເປັນໄປໄດ້ຢ່າງສູງ ເພື່ອຊື້ ຫຼື ຂາຍສິນຄ້າໃດໜຶ່ງ; ຫຼື

(ງ) ຄວາມສ່ຽງຈາກການແລກປ່ຽນເງິນຕາຕ່າງປະເທດຂອງໂຄງການລົງທຶນສຸດທິໃນກິດຈະ ການຢູ່ຕ່າງປະເທດ.

**ເຄື່ອງມືຄຸ້ມກັນຄວາມສ່ຽງ**
**hedging instrument**

ສຳລັບວັດຖຸປະສົງ ຂອງການບັນຊີຄຸ້ມກັນຄວາມສ່ຽງພິເສດ ຕາມໝວດ 12 ຂອງມາດຕະຖານສະບັບ ນີ້, ເຄື່ອງມືຄຸ້ມກັນຄວາມສ່ຽງ ໝາຍເຖິງເຄື່ອງມືການເງິນ ທີ່ຕອບສະໜອງຕາມທຸກເງື່ອນໄຂດັ່ງລຸ່ມນີ້ :

(ກ) ຕ້ອງເປັນສັນຍາແລກປ່ຽນອັດຕາດອກເບ້ຍ, ສັນຍາແລກປ່ຽນເງິນຕາຕ່າງປະເທດ, ສັນຍາ ແລກປ່ຽນເງິນຕາຕ່າງປະເທດລ່ວງໜ້າ ຫຼື ສັນຍາແລກປ່ຽນສິນຄ້າລ່ວງໜ້າ, ຊຶ່ງຄາດວ່າ ຈະມີປະສິດທິພາບສູງເພື່ອການຫັກຊຳລະສະສາງຕໍ່ຄວາມສ່ຽງທີ່ໄດ້ຈຳແນກໄວ້ໃນວັກ 12.17 ຊຶ່ງຖືວ່າເປັນຄວາມສ່ຽງທີ່ໄດ້ຮັບການຄຸ້ມກັນ.

(ຂ) ຕ້ອງມີພາກສ່ວນພາຍນອກວິສາຫະກິດລາຍງານ (ເຊັ່ນ ພາກສ່ວນທີ່ຢູ່ພາຍນອກກຸ່ມ, ພາກສ່ວນງານ ຫຼື ແຕ່ລະວິສາຫະກິດທີ່ພວມລາຍງານ).

(ຄ) ຈຳນວນເງິນອ້າງອີງໃນສັນຍາ ເທົ່າກັບ ຈຳນວນເງິນທີ່ຖືກກຳນົດຈາກເງິນຕົ້ນທຶນກູ້ຢືມ ຫຼື ໃນສັນຍາກ່ຽວກັບລາຍການທີ່ໄດ້ຄຸ້ມກັນຄວາມສ່ຽງ.

(ງ) ມີມື້ຄົບອາຍຸການທີ່ບໍ່ແມ່ນພາຍຫຼັງ

(i) ມື້ຄົບອາຍຸການຂອງເຄື່ອງມືການເງິນທີ່ໄດ້ຄ້ຳປະກັນ,

(ii) ການຄາດຄະເນຊຳລະເງິນບ້ວງຂໍ້ຜູກພັນຊື້ ຫຼື ຂາຍສິນຄ້າ, ຫຼື

(iii) ການເກີດຂຶ້ນຂອງລາຍການເຄື່ອນໄຫວທີ່ຄາດວ່າເປັນໄປໄດ້ຢ່າງສູງ ກ່ຽວກັບເງິນ ຕາຕ່າງປະເທດ ຫຼື ສິນຄ້າທີ່ໄດ້ຄຸ້ມກັນ.

(ຈ) ບໍ່ມີຂໍ້ກຳນົດໃດໆໃນສັນຍາ ກ່ຽວກັບລາຍຈ່າຍໆລ່ວງໜ້າ, ການຍົກເລີກສັນຍາກ່ອນກຳນົດ ຫຼື

ການຕໍ່ອາຍຸສັນຍາ

ວິສາຫະກິດທີ່ເລືອກນຳໃຊ້ IAS 39 ໃນການລົງບັນຊີເຄື່ອງມືການເງິນ ຕ້ອງນຳໃຊ້ຄຳນິຍາມ ກ່ຽວກັບເຄື່ອງມືຄຸ້ມກັນຄວາມສ່ຽງໃນມາດຕະຖານດັ່ງກ່າວນັ້ນ ແຕ່ຫາກບໍ່ແມ່ນຄຳນິຍາມນີ້.

**ເປັນໄປໄດ້ຢ່າງສູງ**
**highly probable**

ມີຄວາມເປັນໄປໄດ້ທີ່ຈະເກີດຂຶ້ນສູງ ຫຼາຍກວ່າ ຄວາມອາດເປັນໄປໄດ້.

**ມາດຕະຖານສາກົນດ້ານການລາຍງານການເງິນສຳລັບວິສາຫະກິດຂະໜາດນ້ອຍແລະກາງ**
**IFRS for SMEs**

ມາດຕະຖານສາກົນດ້ານການລາຍງານການເງິນສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ສະພາມາດຕະຖານສາກົນ ໄດ້ຮັບຮອງໃນເດືອນກໍລະກົດ 2009.

**ຂາດທຶນຈາກການສູນເສຍມູນຄ່າ**
**impairment loss**

ຈຳນວນເງິນຊຶ່ງມູນຄ່າໃນບັນຊີຂອງຊັບສິນ ເກີນ

(ກ) ໃນກໍລະນີເຄື່ອງໃນສາງ, ລາຄາຂາຍ ຫັກຕົ້ນທຶນໃນການຜະລິດສິນຄ້າໃຫ້ສຳເລັດຮູບ ແລະ ໃນການຂາຍອອກ ຫຼື

(ຂ) ໃນກໍລະນີຊັບສິນອື່ນໆ, ມູນຄ່າຍຸຕິທຳລົບຕົ້ນທຶນຂາຍ.

**ທີ່ປະຕິບັດບໍ່ໄດ້**
**impraticable**

ຂໍ້ກຳນົດທີ່ວິສາຫະກິດບໍ່ສາມາດນຳໄປປະຕິບັດໄດ້ ເຖິງວ່າວິສາຫະກິດໄດ້ໃຊ້ຄວາມພະຍາຍາມຢ່າງສົມເຫດສົມຜົນທຸກວິທີທາງເພື່ອນຳໄປປະຕິບັດ.

**ອັດຕາດອກເບ້ຍຄາດຄະເນ**
**imputed rate of interest**

ອັດຕາດອກເບ້ຍຄາດຄະເນ ແມ່ນອັດຕາທີ່ຄິດໄລ່ງ່າຍກ່ວາໝູ່ ລະຫ່ວາງ:

(ກ) ອັດຕາທີ່ນຳໃຊ້ສຳລັບເຄື່ອງມືທີ່ຄ້າຍຄືກັນ ທີ່ມາຈາກຜູ້ອອກເຄື່ອງມື ທີ່ມີການຈັດລະດັບຄວາມເຊື່ອຖືຄ້າຍຄືກັນ, ຫຼື

(ຂ) ອັດຕາດອກເບ້ຍທີ່ຊ່ວຍໃຫ້ມູນຄ່າໃນນາມຂອງເຄື່ອງມືເທົ່າກັບລາຄາຂາຍຊຳລະພ້ອມໃນປັດຈຸບັນຂອງສິນຄ້າ ຫຼື ການບໍລິການ

**ລາຍຮັບ**
**income**

ການເພີ້ມຂຶ້ນຂອງຜົນປະໂຫຍດດ້ານເສດຖະກິດ ໃນຮອບເວລາລາຍງານ, ໃນຮູບການໄດ້ຮັບ ຫຼື ການເພີ້ມຂຶ້ນຂອງຊັບສິນ ຫຼື ການຫຼຸດລົງຂອງໜີ້ສິນ ຊຶ່ງເປັນຜົນເຮັດໃຫ້ທຶນເຈົ້າຂອງເພີ້ມຂຶ້ນ ທີ່ນອກເໜືອການເພີ້ມຂຶ້ນທີ່ກ່ຽວຂ້ອງກັບການປະກອບສ່ວນໃນຂອງຜູ້ລົງທຶນໃນທຶນເຈົ້າຂອງ.

**ໃບລາຍງານຜົນໄດ້ຮັບ**
**income statement**

ເອກະສານລາຍງານການເງິນ ທີ່ສະແດງເຖິງທຸກລາຍການ ລາຍຮັບ ແລະ ລາຍຈ່າຍທີ່ໄດ້ຖືກຮັບຮູ້ ລາຍການບັນຊີໃນຮອບເວລາລາຍງານ, ຍົກເວັ້ນລາຍການຜົນໄດ້ຮັບສັງລວມອື່ນໆ.

**ອາກອນລາຍຮັບ**
**income tax**

ທຸກອາກອນພາຍໃນປະເທດ ແລະ ຢູ່ຕ່າງປະເທດ ທີ່ອີງໃສ່ຖານກຳໄລຖືກເສຍອາກອນ. ອາກອນລາຍຮັບ ຍັງລວມມີບັນດາອາກອນ ເຊັ່ນອາກອນຫັກຢູ່ຕົ້ນທາງ ຊຶ່ງບໍລິສັດໃນກຸ່ມ, ວິສາຫະກິດຂາຮຸ້ນ ຫຼື ວິສາຫະກິດປະສົມຕ້ອງຈ່າຍ ໃນການແຈກຢາຍເງິນກຳໄລໃຫ້ແກ່ວິສາຫະກິດລາຍງານ.

**ສັນຍາປະກັນໄພ**
**insurance contract**

ສັນຍາຊຶ່ງຝ່າຍໜຶ່ງ (ຜູ້ຮັບປະກັນໄພ) ຍອມຮັບເອົາຄວາມສ່ຽງດ້ານການປະກັນໄພທີ່ສຳຄັນຂອງອີກຝ່າຍໜຶ່ງ (ຜູ້ເອົາປະກັນໄພ) ໂດຍຕົກລົງຈະຈ່າຍເງິນປະກັນໄພໃຫ້ຜູ້ເອົາປະກັນໄພ ຖ້າວ່າເຫດການໃນອະນາຄົດທີ່ບໍ່ແນ່ນອນທີ່ກຳນົດໄວ້ (ເຫດການທີ່ໄດ້ປະກັນ) ມີຜົນກະທົບແບບບໍ່ເອື້ອອຳນວຍຕໍ່ຜູ້ເອົາປະກັນໄພ.

**ຊັບສິນບັດຄົງທີ່ບໍ່ມີຕົວຕົນ**
**intangible assets**

ຊັບສິນທີ່ບໍ່ເປັນເງິນ ທີ່ຈຳແນກໄດ້ໂດຍບໍ່ມີເນື້ອແທ້ຕົວຈິງ. ຊັບສິນດັ່ງກ່າວຈຳແນກໄດ້ ເມື່ອ :

(ກ) ຊັບສິນດັ່ງກ່າວແຍກຈາກກັນໄດ້, ໝາຍຄວາມວ່າສາມາດແຍກ ຫຼື ຕັດແຍກອອກຈາກວິສາຫະກິດ ແລະ ຂາຍ, ໂອນ, ໃຫ້ນຳໃຊ້ຕາມການອະນຸຍາດ, ໃຫ້ເຊົ່າ ຫຼື ແລກປ່ຽນ, ຫຼື

ຕາມຮູບແບບສ່ວນບຸກຄົນ, ຫຼື ໃນຂອບເຂດຂອງສັນຍາ, ຫຼື ມີຊັບສິນ ຫຼື ໜີ້ສິນ ທີ່ກ່ຽວຂ້ອງ; ຫຼື

(ຂ) ຊັບສິນດັ່ງກ່າວເກີດຈາກສິດທິຕາມສັນຍາ ຫຼື ສິດທິຕາມກົດໝາຍອື່ນໆ, ໂດຍບໍ່ຕ້ອງຄຳນຶງວ່າສິດທິດັ່ງກ່າວ ຈະໂອນໃຫ້ກັນໄດ້ ຫຼືບໍ່ກໍຕາມ ຫຼື ຈະແຍກອອກຈາກວິສາຫະກິດ ຫຼື ແຍກອອກຈາກສິດທິ ແລະ ພັນທະອື່ນໆ.

**ອັດຕາດອກເບ້ຍທີ່ບໍ່ກຳນົດແຈ້ງໃນສັນຍາເຊົ່າ**
**interest rate implicite in the lease**

ອັດຕາການຕີມູນຄ່າເປັນມູນຄ່າປັດຈຸບັນທີ່, ເວລາເລີ່ມຕົ້ນປະຕິບັດສັນຍາເຊົ່າ,ເຮັດໃຫ້ຜົນລວມຂອງມູນຄ່າປັດຈຸບັນຂອງ

(ກ) ການຊຳລະຄ່າເຊົ່າຕ່ຳສຸດ ແລະ

(ຂ) ມູນຄ່າເສດເຫຼືອທີ່ບໍ່ມີການຄ້ຳປະກັນ ເທົ່າກັບ ລວມຍອດຈຳນວນເງິນ

(1) ຂອງມູນຄ່າຍຸຕິທຳຂອງຊັບສິນທີ່ໄດ້ເຊົ່າ ແລະ

(2) ຕົ້ນທຶນທາງກົງເບື້ອງຕົ້ນຂອງຜູ້ໃຫ້ເຊົ່າ.

**ບົດລາຍງານການເງິນກາງປີ**
**interim financial report**

ບົດລາຍງານການເງິນ ທີ່ມີເອກະສານລາຍງານການເງິນຄົບຊຸດ ແລະ ຊຸດເອກະສານລາຍງານການເງິນແບບສະຫຼຸບຫຍໍ້ ສຳລັບຮອບເວລາກາງປີ.

**ຮອບເວລາກາງປີ**
**interim period**

ຮອບເວລາລາຍງານການເງິນ ທີ່ສັ້ນກ່ວາປີການເງິນເຕັມສ່ວນ.

**ມາດຕະຖານສາກົນດ້ານການລາຍງານການເງິນ**
**International Financial Reporting Standards (IFRS)**

ມາດຕະຖານ ແລະ ບົດຕີຄວາມໝາຍທີ່ສະພາມາດຕະຖານສາກົນດ້ານການບັນຊີ (IASB) ໄດ້ຮັບຮອງເອົາ. ໃນນັ້ນ ລວມມີ :

(ກ) ມາດຕະຖານສາກົນດ້ານການລາຍງານການເງິນ ;

(ຂ) ມາດຕະຖານສາກົນດ້ານບັນຊີ ; ແລະ

(ຄ) ບົດຕີຄວາມໝາຍ ທີ່ຄະນະກຳມະການຕີຄວາມໝາຍມາດຕະຖານສາກົນດ້ານການລາຍງານການເງິນ (IFRIC) ຫຼື ອະດີດ ຄະນະກຳມະການປະຈຳກ່ຽວກັບການຕີຄວາມໝາຍ (SIC) ໄດ້ສ້າງຂຶ້ນ.

**ມູນຄ່າໃນຕົວ**
**intrinsic value**

ສ່ວນຜົດດ່ຽງລະຫວ່າງ ມູນຄ່າຍຸຕິທຳຂອງຮຸ້ນ ຊຶ່ງຄູ່ສັນຍາມີສິດທິ (ທັງທີ່ມີ ຫຼື ບໍ່ມີເງື່ອນໄຂ) ຖືຮຸ້ນ ຫຼື ມີສິດທິທີ່ຈະໄດ້ຮັບຮຸ້ນ, ແລະ ລາຄາ (ຖ້າມີ) ຊຶ່ງຄູ່ສັນຍາຈຳຕ້ອງ (ຫຼື ຈະ) ໄດ້ຊຳລະຄ່າຮຸ້ນດັ່ງກ່າວ. ຕົວຢ່າງສິດທິໃນການຊື້ຮຸ້ນ ທີ່ລາຄາໃຊ້ສິດ ເທົ່າກັບ 15 KKip, ໃນຂະນະທີ່ຮຸ້ນ ມີມູນຄ່າຍຸຕິທຳເທົ່າກັບ 20 KKip ມູນຄ່າໃນຕົວ ເທົ່າກັບ 5 KKip.

**ເຄື່ອງໃນສາງ**
**inventories**

ຊັບສິນ :

(ກ) ຮັກສາໄວ້ເພື່ອຂາຍໃນການດຳເນີນທຸລະກິດປົກກະຕິ;

(ຂ) ທີ່ພວມຜະລິດເພື່ອຂາຍ ; ຫຼື

(ຄ) ໃນຮູບແບບວັດຖຸດິບ ຫຼື ວັດຖຸປະກອບທີ່ຕ້ອງໄດ້ຊົມໃຊ້ໃນຂະບວນການຜະລິດ ຫຼື ການສະໜອງການບໍລິການ.

**ກິດຈະກຳການລົງທຶນ**
**investing activities**

ການຊື້ ແລະ ຂາຍ ຊັບສິນໄລຍະຍາວ ແລະ ເງິນລົງທຶນອື່ນໆ ທີ່ບໍ່ລວມຢູ່ໃນສິ່ງທຽບເທົ່າເງິນສົດ.

**ອະສັງຫາລິມະຊັບເພື່ອການລົງທຶນ**
**investment property**

ອະສັງຫາລິມະຊັບ (ທີ່ດິນ ຫຼື ສິ່ງປຸກສ້າງ - ຫຼື ພາກສ່ວນໜຶ່ງຂອງສິ່ງປຸກສ້າງ - ຫຼື ທັງສອງອັນ) ຊຶ່ງເຈົ້າຂອງ ຫຼື ຜູ້ເຊົ່າຮັກສາໄວ້ ພາຍໃຕ້ສັນຍາເຊົ່າການເງິນເພື່ອເກັບຄ່າເຊົ່າ ຫຼື ເພື່ອເພີ່ມຄ່າຂອງທຶນ ຫຼື ທັງສອງ, ແທນທີ່ຈະ :

(ກ) ນຳໃຊ້ໃນການຜະລິດ ຫຼື ໃນການສະໜອງສິນຄ້າ ຫຼື ການບໍລິການ ຫຼື ເພື່ອເປົ້າໝາຍທາງດ້ານບໍລິຫານ ; ຫຼື

(ຂ) ຂາຍອອກໃນໃນການດຳເນີນທຸລະກິດປົກກະຕິ.

**ການຄວບຄຸມຮ່ວມກັນ**
**joint control**

ການມີສ່ວນຮ່ວມໃນຄວບຄຸມກິດຈະການເສດຖະກິດໃດໜຶ່ງ ຕາມສັນຍາທີ່ໄດ້ຕົກລົງກັນໄວ້ ແລະ ມີ ໄດ້ ກໍຕໍ່ເມື່ອການຕັດສິນບັນຫາດ້ານຍຸດທະສາດການເງິນ ແລະ ທຸລະກິດ ທີ່ກ່ຽວຂ້ອງກັບກິດຈະການ ຕ້ອງການການຕົກລົງເຫັນດີຢ່າງເປັນເອກະສັນຂອງບັນດາຝ່າຍທີ່ມີສ່ວນຮ່ວມໃນຄວບຄຸມຮ່ວມກັນ (ຜູ້ ຮ່ວມປະກອບການ).

**ວິສາຫະກິດປະສົມ**
**joint venture**

ຂໍ້ຕົກລົງໃນສັນຍາຊຶ່ງສອງ ຫຼື ຫຼາຍຝ່າຍ ຕົກລົງດຳເນີນກິດຈະການເສດຖະກິດພາຍໃຕ້ການຄວບຄຸມ ຮ່ວມກັນ. ວິສາຫະກິດປະສົມ ສາມາດມີຮູບແບບຂອງກິດຈະການທີ່ຄວບຄຸມຮ່ວມກັນ, ຊັບສິນທີ່ຄວບ ຄຸມຮ່ວມກັນ ຫຼື ວິສາຫະກິດທີ່ຄວບຄຸມຮ່ວມກັນ.

**ວິສາຫະກິດທີ່ຄວບຄຸມຮ່ວມກັນ**
**jointly controlled enterprise**

ວິສາຫະກິດປະສົມທີ່ກ່ຽວຂ້ອງກັບການສ້າງຕັ້ງບໍລິສັດ, ບໍລິສັດຮຸ້ນສ່ວນ ຫຼື ວິສາຫະກິດອື່ນຊຶ່ງຜູ້ຮ່ວມ ປະກອບການແຕ່ລະຄົນມີຜົນປະໂຫຍດນຳ. ວິສາຫະກິດເຄື່ອນໄຫວແບບດຽວກັນກັບວິສາຫະກິດອື່ນໆ, ຍົກເວັ້ນກໍລະນີທີ່ວ່າຂໍ້ຕົກລົງໃນສັນຍາທີ່ໄດ້ເຊັນກັນລະຫ່ວາງ ຜູ້ຮ່ວມປະກອບການ ໄດ້ກຳນົດການ ຄວບຄຸມຮ່ວມກັນ ຕໍ່ການເຄື່ອນໄຫວເສດຖະກິດຂອງວິສາຫະກິດ.

**ວິສາຫະກິດຂະໜາດໃຫຍ່**
**large-sized enterprises**

ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ມີສະພາວະ ເກີນເງື່ອນໄຂມາດຕະຖານ ຂອງ ວນກ ທີ່ກຳນົດໃນລະບຽບກົດໝາຍ, ແລະ ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ຄວບ ຄຸມ ໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ ຫຼື/ແລະ ມີສັນຍາກ່ຽວກັບເຄື່ອງມືການເງິນ ທີ່ສະຫຼັບຊັບຊ້ອນ.

**ສັນຍາເຊົ່າ**
**lease**

ສັນຍາຊຶ່ງຜູ້ໃຫ້ເຊົ່າ ມອບສິດໃຫ້ຜູ້ເຊົ່າ ໃນຮອບເວລາອັນແນ່ນອນໃດໜຶ່ງ, ສິດນຳໃຊ້ຊັບສິນ ໂດຍ ແລກປ່ຽນກັບການຊຳລະເງິນເປັນຄັ້ງດຽວ ຫຼື ເປັນຫຼາຍຄັ້ງ.

**ອັດຕາດອກເບ້ຍເງິນກູ້ຢືມສ່ວນເພີ່ມ ຂອງຜູ້ເຊົ່າ**
**lessee's incremental borrowing rate of interest**

ອັດຕາດອກເບ້ຍຊຶ່ງຜູ້ເຊົ່າຕ້ອງຈ່າຍຕາມສັນຍາເຊົ່າທີ່ຄ້າຍຄືກັນ ຫຼື, ຖ້າຫາກບໍ່ສາມາດກຳນົດອັດຕານັ້ນ ໄດ້, ແມ່ນເອົາອັດຕາດອກເບ້ຍຊຶ່ງຜູ້ເຊົ່າຈະຕ້ອງຈ່າຍ, ໃນເວລາເລີ່ມຕົ້ນປະຕິບັດສັນຍາເຊົ່າ, ເພື່ອກູ້ຢືມ ເງິນທີ່ຈຳເປັນ ໃນໄລຍະເວລາທີ່ຄ້າຍຄືກັນ ພ້ອມດ້ວຍການຄ້ຳຮັບປະກັນ ທີ່ຄ້າຍຄືກັນ ເພື່ອຊື້ຊັບສິນ ນັ້ນ.

**ໜີ້ສິນ**
**liability**

ພັນທະປັດຈຸບັນຂອງວິສາຫະກິດ ທີ່ເປັນຜົນຈາກເຫດການຜ່ານມາ, ຊຶ່ງໃນການຊຳລະສະສາງໜີ້ສິນ ດັ່ງກ່າວ ຄາດວ່າຈະສົ່ງຜົນໃຫ້ວິສາຫະກິດສູນເສຍຊັບພະຍາກອນທີ່ມີຜົນປະໂຫຍດດ້ານເສດຖະກິດ.

**ເງິນກູ້ຢືມຕ້ອງຈ່າຍ**
**loans payable**

ໜີ້ສິນການເງິນ ທີ່ບໍ່ແມ່ນໜີ້ຕ້ອງສົ່ງໃນການທຸລະກິດໄລຍະສັ້ນ ທີ່ຈ່າຍຊຳລະຕາມໄລຍະເວລາການໃຫ້ ສິນເຊື່ອປົກກະຕິ.

**ສຳຄັນໂດຍທຽບຖານ**
**material**

ການຫຼົງລືມ ຫຼື ການລາຍງານຜິດພາດ ກ່ຽວກັບບັນດາລາຍການຕ່າງໆ ຖືວ່າສຳຄັນ ຖ້າຫາກສາມາດ ສົ່ງກະທົບ ເປັນແຕ່ລະລາຍ ຫຼື ໂດຍລວມ ຕໍ່ການຕັດສິນບັນຫາຂອງຜູ້ນຳໃຊ້ ບົນພື້ນຖານເອກະສານ ລາຍງານການເງິນ. ຄວາມສຳຄັນໂດຍທຽບຖານ ຂຶ້ນກັບຂະໜາດຂອງລາຍການ ຫຼື ຂໍ້ຜິດພາດທີ່ໄດ້ ວິນິດໄສຕາມກໍລະນີສະເພາະ ກ່ຽວກັບການຫຼົງລືມ ຫຼື ການລາຍງານຜິດພາດ ທີ່ໄດ້ວິນິດໄສໃນສະ ພາບແວດລ້ອມອ້ອມຂ້າງ. ຂະໜາດ ຫຼື ລັກສະນະຂອງລາຍການ ຫຼື ການປະສົມປະສານ ລະຫວ່າງ ທັງສອງ ອາດເປັນປັດໄຈທີ່ມີລັກສະນະຕັດສິນໄດ້.

**ການຕີມູນຄ່າ**
**measurement**

ຂະບວນການກຳນົດຈຳນວນເງິນ ເພື່ອຮັບຮູ້ລາຍການບັນຊີອົງປະກອບຂອງເອກະສານລາຍງານການ ເງິນ ແລ້ວນຳໄປສະແດງໃນໃບລາຍງານຖານະການເງິນ ແລະ ໃນໃບລາຍງານຜົນໄດ້ຮັບສັງລວມ.

**ລາຍການທີ່ເປັນເງິນ**
**monetary items**

ຫົວໜ່ວຍສະກຸນເງິນ ທີ່ຮັກສາໄວ້ ແລະ ຊັບສິນ ແລະ ໜີ້ສິນທີ່ໄດ້ຮັບ ຫຼື ຈ່າຍເປັນຈຳນວນຫົວໜ່ວຍ ສະກຸນເງິນອັນແນ່ນອນ ຫຼື ທີ່ກຳນົດໄດ້.

| | |
|---|---|
| **ແຜນນະໂຍບາຍຄິດໄລ່ (ຜົນປະໂຫຍດ) ກຸ່ມນາຍจ້າງ**<br>**multi-employer (benefit) plans** | ແຜນສົມທົບເງິນທີ່ກຳນົດໄວ້ (ຊຶ່ງບໍ່ແມ່ນ ແຜນນະໂຍບາຍຂອງລັດ) ຫຼື ແຜນນະໂຍບາຍຄິດໄລ່ຜົນປະໂຫຍດທີ່ກຳນົດໄວ້ (ຊຶ່ງບໍ່ແມ່ນແຜນນະໂຍບາຍຂອງລັດ) ຊຶ່ງໃນນັ້ນ :<br>(ກ) ຊັບສິນລວມ ທີ່ວິສາຫະກິດຕ່າງໆໄດ້ສົມທົບ ແຕ່ຫາກບໍ່ຢູ່ພາຍໃຕ້ການຄວບຄຸມອັນດຽວກັນ, ແລະ<br>(ຂ) ນຳໃຊ້ຊັບສິນດັ່ງກ່າວ ເພື່ອສະໜອງຜົນປະໂຫຍດໃຫ້ພະນັກງານຂອງຫຼາຍວິສາຫະກິດໂດຍກຳນົດລະດັບເງິນສົມທົບ ແລະ ຜົນປະໂຫຍດ ໂດຍປາສະຈາກການຈຳແນກໂດຍວິສາຫະກິດທີ່ວ່າຈ້າງພະນັກງານທີ່ກ່ຽວຂ້ອງ. |
| **ເງິນລົງທຶນສຸດທິໃນສັນຍາເຊົ່າ**<br>**net investment in a lease** | ເງິນລົງທຶນລວມໃນສັນຍາເຊົ່າ ທີ່ໄດ້ຖືກຕີມູນຄ່າ ເປັນມູນຄ່າປັດຈຸບັນຕາມອັດຕາດອກເບ້ຍທີ່ບໍ່ກຳນົດແຈ້ງໃນສັນຍາເຊົ່າ. |
| **ເງິນລົງທຶນທີ່ບໍ່ໃຫ້ສິດຄວບຄຸມ**<br>**non controlling interest** | ທຶນເຈົ້າຂອງໃນບໍລິສັດໃນກຸ່ມທີ່ບໍ່ຕິດພັນໂດຍກົງ ຫຼື ໂດຍທາງອ້ອມກັບບໍລິສັດແມ່. |
| **ວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ**<br>**non-public interest enterprises (Non-PIEs)** | ວິສາຫະກິດ ທີ່ບໍ່ມີຄວາມສຳຄັນ ທາງດ້ານຄວາມກ່ຽວຂ້ອງກັບຜົນປະໂຫຍດສາທາລະນະ, ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ, ບໍ່ໄດ້ຖື ແລະ ບໍ່ໄດ້ຄຸ້ມຄອງຊັບສິນ ໃຫ້ກັບບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຕາມຄວາມສາມາດຮັກສາດູແລ ດັ່ງເປັນທຸລະກິດຕົ້ນຕໍ ແລະ ວິສາຫະກິດ ທີ່ມີຂະຫນາດນ້ອຍ ແລະ ສ່ວນໃຫຍ່ເປັນວິສາຫະກິດຂະໜາດນ້ອຍ ແລະ ກາງ. |
| **ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ**<br>**notes to financial statements** | ບົດອະທິບາຍຊ້ອນທ້າຍ ບັນຈຸຂໍ້ມູນຂ່າວສານເພີ້ມເຕີມ ຈາກຂໍ້ມູນທີ່ໄດ້ສະເໜີໃນໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບສັງລວມ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ (ຖ້າຫາກໄດ້ນຳສະເໜີ) ແລະ ໃບລາຍງານກະແສເງິນສົດ (ຖ້າຫາກໄດ້ນຳສະເໜີ). ບົດອະທິບາຍຊ້ອນທ້າຍ ໃຫ້ຄຳອະທິບາຍແບບບັນລະຍາຍ ຫຼື ແຍກສ່ວນລາຍການ ທີ່ໄດ້ສະເໜີໃນໃບລາຍງານເຫຼົ່ານັ້ນ, ພ້ອມດ້ວຍຂໍ້ມູນຂ່າວສານ ຂອງລາຍການທີ່ບໍ່ໄດ້ເງື່ອນໄຂເພື່ອການຮັບຮູ້ລາຍການບັນຊີໃນເອກະສານລາຍງານເຫຼົ່ານັ້ນ. |
| **ຈຳນວນເງິນອ້າງອີງໃນສັນຍາ**<br>**notional amount** | ຈຳນວນຫົວໜ່ວຍສະກຸນເງິນ, ຈຳນວນຮຸ້ນ, ຫົວໜ່ວຍວັດແທກ ບູແຊລ, ປອນ ຫຼື ຫົວໜ່ວຍອື່ນໆ ທີ່ກຳນົດໄວ້ໃນສັນຍາເຄື່ອງມືການເງິນໃດໜຶ່ງ. |
| **ຈຸດປະສົງຂອງເອກະສານລາຍງານການເງິນ**<br>**objective of financial statements** | ເພື່ອສະໜອງຂໍ້ມູນຂ່າວສານ ກ່ຽວກັບ ຖານະການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງວິສາຫະກິດໃດໜຶ່ງ ທີ່ເປັນປະໂຫຍດສຳລັບການຕັດສິນບັນຫາທາງດ້ານເສດຖະກິດ ຂອງຜູ້ນຳໃຊ້ ໃນວົງກວ້າງ ທີ່ບໍ່ຢູ່ໃນຖານະທີ່ຈະຮຽກຮ້ອງເອົາບົດລາຍງານທີ່ປັບໃສ່ຄວາມຕ້ອງການສະເພາະຂອງຕົນ. |
| **ສັນຍາທີ່ສ້າງພາລະ**<br>**onerous contract** | ສັນຍາ ຊຶ່ງຕົ້ນທຶນໃຊ້ຈ່າຍທີ່ຫຼີກລ້ຽງບໍ່ໄດ້ ເພື່ອຕອບສະໜອງຕໍ່ຂໍ້ຜູກພັນຕາມສັນຍານັ້ນ ມີມູນຄ່າສູງກ່ວາຜົນປະໂຫຍດດ້ານເສດຖະກິດ ທີ່ຄາດຫວັງວ່າຈະໄດ້ຮັບຈາກສັນຍາ. |
| **ກິດຈະກຳດຳເນີນງານ**<br>**operating activities** | ກິດຈະກຳຕົ້ນຕໍຂອງວິສາຫະກິດ ທີ່ສ້າງລາຍ ແລະ ກິດຈະກຳອື່ນໆທີ່ບໍ່ແມ່ນກິດຈະກຳລົງທຶນ ຫຼື ກິດຈະກຳປະກອບທຶນ. |
| **ສັນຍາເຊົ່າດຳເນີນງານ**<br>**operating lease** | ສັນຍາເຊົ່າ ທີ່ບໍ່ມີການໂອນຄວາມສ່ຽງ ແລະ ຜົນປະໂຫຍດເກືອບທັງໝົດ ທີ່ຕິດພັນກັບກຳມະສິດ. |
| **ພາກສ່ວນດຳເນີນງານ**<br>**operating segment** | ພາກສ່ວນດຳເນີນງານ ແມ່ນພາກສ່ວນປະກອບຂອງວິສາຫະກິດ :<br>(ກ) ທີ່ດຳເນີນກິດຈະການປົກກະຕິ ຊຶ່ງອາດສ້າງລາຍໄດ້ ແລະ ລາຍຈ່າຍ (ລວມທັງລາຍໄດ້ ແລະ ລາຍຈ່າຍ ທີ່ພົວພັນກັບລາຍການເຄື່ອນໄຫວກັບອົງປະກອບອື່ນໆ ຂອງວິສາຫະກິດດຽວກັນ) ;<br>(ຂ) ຊຶ່ງຜົນໄດ້ຮັບໃນການທຸລະກິດ ໄດ້ຮັບການກວດກາຄືນຢ່າງເປັນປົກກະຕິຈາກຜູ້ຕັດສິນ |

ບັນຫາຕົ້ນຕໍດ້ານທຸລະກິດຂອງວິສາຫະກິດ ເພື່ອຕັດສິນບັນຫາ ກ່ຽວກັບຊັບພະຍາກອນ ທີ່ຈະຕ້ອງຈັດແບ່ງເຂົ້າໃນພາກສ່ວນງານ ແລະ ປະເມີນຜົນການດຳເນີນງານຂອງພາກສ່ວນດັ່ງກ່າວ; ແລະ

(ຄ) ຊຶ່ງມີຂໍ້ມູນຂ່າວສານການເງິນທີ່ຕໍ່ເນື່ອງເປັນປົກກະຕິ.

**ຜົນໄດ້ຮັບສັງລວມອື່ນໆ**
**other comprehensive income**

ລາຍການ ລາຍຮັບ ແລະ ລາຍຈ່າຍ (ລວມທັງການປັບປຸງການຈັດປະເພດລາຍການຄືນໃໝ່) ທີ່ບໍ່ໄດ້ຖືກຮັບຮູ້ລາຍການບັນຊີ ໃນກຳໄລ ຫຼື ຂາດທຶນ ຕາມທີ່ IFRS ດັ່ງກ່າວນີ້ ໄດ້ກຳນົດ ຫຼື ອະນຸຍາດ.

**ເຈົ້າຂອງ**
**owners**

ຜູ້ຖືເຄື່ອງມື ບ້ວງປະເພດທຶນເຈົ້າຂອງ.

**ບໍລິສັດແມ່**
**parent**

ວິສາຫະກິດທີ່ມີໜຶ່ງ ຫຼື ຫຼາຍບໍລິສັດໃນກຸ່ມ.

**ຜົນການດຳເນີນງານ**
**performance**

ສາຍພົວພັນ ລະຫ່ວາງ ລາຍຮັບ ແລະ ລາຍຈ່າຍ ຂອງວິສາຫະກິດໃດໜຶ່ງ, ດັ່ງທີ່ໄດ້ລາຍງານໃນໃບລາຍງານຜົນໄດ້ຮັບສັງລວມ.

**ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (ວຮຜສ)**
**PIEs**

ເບິ່ງ ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ

**ຊັບສິນໃນແຜນ (ຂອງແຜນນະໂຍບາຍຄິດໄລ່ຜົນປະໂຫຍດພະນັກງານ)**
**plan asset (of an employee benefit plan)**

(ກ) ຊັບສິນ ທີ່ຮັກສາໄວ້ໃນກອງທຶນຜົນປະໂຫຍດໄລຍະຍາວຂອງພະນັກງານ, ແລະ
(ຂ) ສັນຍາປະກັນໄພທີ່ກຳນົດເງື່ອນໄຂ.

**ຜົນປະໂຫຍດພະນັກງານຫຼັງອອກການ**
**post-employment benefits**

ຜົນປະໂຫຍດຂອງພະນັກງານ (ທີ່ບໍ່ແມ່ນຜົນປະໂຫຍດເວລາສິ້ນສຸດສັນຍາ) ຊຶ່ງຕ້ອງຈ່າຍພາຍຫຼັງສິ້ນສຸດການເຮັດການ.

**ແຜນນະໂຍບາຍຄິດໄລ່ຜົນປະໂຫຍດພະນັກງານຫຼັງອອກການ**
post-employment benefit plans

ຂໍ້ຕົກລົງທີ່ເປັນທາງການ ຫຼື ບໍ່ເປັນທາງການ ຊຶ່ງວິສາຫະກິດຕົກລົງຈ່າຍຜົນປະໂຫຍດພະນັກງານຫຼັງອອກການ ໃຫ້ແກ່ພະນັກງານ ໜຶ່ງ ຫຼື ຫຼາຍຄົນ.

**ມູນຄ່າປັດຈຸບັນ**
**present value**

ຕົວເລກຄາດຄະເນປະຕິບັດໃນປັດຈຸບັນ ກ່ຽວກັບມູນຄ່າປັດຈຸບັນຂອງກະແສເງິນສົດສຸດທິ ໃນອະນາຄົດ ໃນກິດຈະການປົກກະຕິຂອງວິສາຫະກິດ.

**ສະກຸນເງິນລາຍງານ**
**presentation currency**

ສະກຸນເງິນ ທີ່ສະເໜີໃນເອກະສານລາຍງານການເງິນ.

**ອາດເປັນໄປໄດ້**
**probable**

ມີຄວາມເປັນໄປໄດ້ທີ່ຈະເກີດຂຶ້ນຫຼາຍກວ່າທີ່ຈະບໍ່ເກີດຂຶ້ນ.

**ກຳໄລ ຫຼື ຂາດທຶນ**
**profit or loss**

ລວມຍອດລາຍຮັບ ລົບລາຍຈ່າຍ, ໂດຍບໍ່ລວມເອົາອົງປະກອບຂອງຜົນໄດ້ຮັບສັງລວມອື່ນໆ.

**ວິທີຄິດໄລ່ຜົນປະໂຫຍດຕາມຫົວໜ່ວຍທີ່ຄາດຄະເນ**
**projected unit credit method**

ວິທີການຕີມູນຄ່າຕາມຫຼັກການຄິດໄລ່ສິນທິດແທນປະກັນໄພ ທີ່ຖືວ່າການບໍລິການໃນແຕ່ລະປີ ພາໃຫ້ມີສິດທິ ໃນການຮັບຜົນປະໂຫຍດເພີ້ມຕື່ມເທື່ອລະໜ່ວຍກິດ ແລະ ຕີມູນຄ່າແຕ່ລະໜ່ວຍກິດດັ່ງກ່າວຕ່າງຫາກ ເພື່ອຈະໄດ້ຂໍ້ຜູກພັນສຸດທ້າຍໂດຍລວມ (ບາງຄັ້ງຮຽກว່າວິທີການແບ່ງສ່ວນຜົນປະໂຫຍດທີ່ສະ

ສົມ ຕາມສ່ວນຂອງການບໍລິການ ຫຼື ວິທີຜົນປະໂຫຍດຕາມຈຳນວນປີ ຫຼື ຜົນປະໂຫຍດທີ່ໃຫ້ບໍລິການ).

**ຊັບສົມບັດຄົງທີ່ມີຕົວຕົນ**
**property, plant and equipment**

ຊັບສິນທີ່ມີຕົວຕົນ ທີ່:

(ກ) ຮັກສາໄວ້ເພື່ອນຳໃຊ້ເຂົ້າໃນການຜະລິດ, ສະໜອງສິນຄ້າ ຫຼື ການບໍລິການ, ໃຫ້ພາກສ່ວນອື່ນເຊົ່າ ຫຼື ເພື່ອເປົ້າໝາຍທາງດ້ານບໍລິຫານ, ແລະ

(ຂ) ຄາດວ່າຈະຖືກນຳໃຊ້ເກີນໜຶ່ງປີການບັນຊີຂຶ້ນໄປ.

**ການປະຕິບັດໄປໜ້າ (ຂອງການປ່ຽນແປງນະໂຍບາຍບັນຊີ)**
**prospective application (of a change in accounting policy)**

ການປະຕິບັດນະໂຍບາຍການບັນຊີໃໝ່ ສຳລັບລາຍການເຄື່ອນໄຫວ, ເຫດການ ແລະ ເງື່ອນໄຂອື່ນໆ ທີ່ເກີດຂຶ້ນພາຍຫຼັງມີ້ປ່ຽນແປງນະໂຍບາຍການບັນຊີນັ້ນ.

**ເງິນແຮ**
**provisions**

ໜີ້ສິນທີ່ມີຄວາມບໍ່ແນ່ນອນ ດ້ານກຳນົດເວລາ ຫຼື ຈຳນວນເງິນ.

**ຄວາມຮອບຄອບ**
**prudence**

ການລວມເອົາລະດັບຄວາມລະມັດລະວັງໃນລະດັບໃດໜຶ່ງ ໃນການດຳເນີນການວິນິດໄສອັນຈຳເປັນ ເພື່ອສ້າງຕົວເລກຄາດຄະເນປະຕິບັດ ໃນສະພາບແຫ່ງຄວາມບໍ່ແນ່ນອນ ເພື່ອເຮັດແນວໃດ ບໍ່ໃຫ້ຕີມູນຄ່າຊັບສິນ ຫຼື ລາຍຮັບ ເກີນລະດັບຕົວຈິງ ແລະ ຕີມູນຄ່າໜີ້ສິນ ຫຼື ລາຍຈ່າຍຫຼຸດລະດັບຕົວຈິງ.

**ຄວາມຮັບຜິດຊອບລາຍງານຕໍ່ມວນຊົນ**
**public accountability**

ຄວາມຮັບຜິດຊອບລາຍງານຕໍ່ຜູ້ສະໜອງແຫຼ່ງຊັບພະຍາກອນທີ່ມີຢູ່ ແລະ ທີ່ອາດເປັນໄປໄດ້ ແລະ ຕໍ່ບຸກຄົນພາຍນອກວິສາຫະກິດ ທີ່ຕັດສິນບັນຫາທາງດ້ານເສດຖະກິດ ແຕ່ຫາກບໍ່ສາມາດຂໍໃຫ້ສ້າງບົດລາຍງານທີ່ຕອບສະໜອງຄວາມຕ້ອງການຂໍ້ມູນຂ່າວສານສະເພາະຂອງພວກກ່ຽວໄດ້. ວິສາຫະກິດ ມີຄວາມຮັບຜິດຊອບລາຍງານຕໍ່ສາທາລະນະຊົນ ກໍຕໍ່ເມື່ອ :

(ກ) ເຄື່ອງມືໜີ້ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງຂອງວິສາຫະກິດ ຫາກມີການຊື້-ຂາຍຕໍ່ສາທາລະນະຊົນ ຫຼືພວມຢູ່ໃນຂະບວນການອອກເຄື່ອງມືດັ່ງກ່າວເພື່ອຊື້-ຂາຍຕໍ່ສາທາລະນະຊົນ (ໃນຕະຫຼາດຫຼັກຊັບ ພາຍໃນ ຫຼື ຕ່າງປະເທດ ຫຼື ນອກຕະຫຼາດຫຼັກຊັບ, ລວມທັງຕະຫຼາດພາຍໃນປະເທດ ຫຼື ພາກພື້ນ), ຫຼື

(ຂ) ຖືຊັບສິນ ຕາມຄວາມສາມາດເບິ່ງແຍງຮັກສາ ໃຫ້ກຸ່ມບຸກຄົນພາຍນອກ ເປັນທຸລະກິດ ພື້ນຖານ ຂອງຕົນເອງ. ສິ່ງນີ້ແມ່ນກໍລະນີແບບຈຳເພາະຂອງທະນາຄານ, ສະຫະກອນສິນເຊື່ອ, ບໍລິສັດປະກັນໄພ, ນາຍໜ້າຊື້-ຂາຍ ຫຼັກຊັບ, ກອງທຶນລວມ ແລະ ທະນາຄານການລົງທຶນ.

**ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ**
**public interest enterprises (PIEs)**

ວິສາຫະກິດ ທີ່ມີຄວາມສຳຄັນ ຕໍ່ຄວາມກ່ຽວຂ້ອງກັບຜົນປະໂຫຍດຂອງສາທາລະນະ ຍ້ອນລັກສະນະເນື້ອໃນ ຂອງທຸລະກິດຕົນ, ຂະໜາດ ຫຼື ຈຳນວນພະນັກງານ ຂອງທຸລະກິດ, ວິສາຫະກິດທີ່ຈົດທະບຽນເຂົ້າຕະຫຼາດຫຼັກຊັບ ແລະ ວິສາຫະກິດທີ່ຖື ແລະ ຄຸ້ມຄອງຊັບສິນ ຕາມຄວາມສາມາດຮັກສາດູແລ ສຳລັບບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ເຊັ່ນ ທະນາຄານ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ ແລະ ສະຖາບັນການເງິນອື່ນໆ ທີ່ມີກິດຈະກຳທີ່ກວ້າງຂວາງ.

**ຊື້-ຂາຍ ຕໍ່ສາທາລະນະຊົນ (ເຄື່ອງມືໜີ້ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງ)**
**publicly traded (debt or equity instruments)**

ຊື້-ຂາຍຕໍ່ສາທາລະນະຊົນ ຫຼືພວມຢູ່ໃນຂະບວນການອອກເຄື່ອງມືດັ່ງກ່າວເພື່ອຊື້-ຂາຍຕໍ່ສາທາລະນະຊົນ (ໃນຕະຫຼາດຫຼັກຊັບ ພາຍໃນ ຫຼື ຕ່າງປະເທດ ຫຼື ນອກຕະຫຼາດຫຼັກຊັບ, ລວມທັງຕະຫຼາດພາຍໃນປະເທດ ຫຼື ພາກພື້ນ).

**ການຮັບຮູ້ລາຍການບັນຊີ**
**recognition**

ຂະບວນການລວມເອົາລາຍການເຂົ້າເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ຖ້າລາຍການນັ້ນກົງກັບຄຳນິຍາມຂອງຊັບສິນ, ໜີ້ສິນ, ລາຍຮັບ ຫຼື ລາຍຈ່າຍ ແລະ ຕອບສະໜອງກັບເງື່ອນໄຂມາດຕະ

ຖານ ລຸ່ມນີ້ :

(ກ) ອາດເປັນໄປໄດ້ທີ່ວ່າຜົນປະໂຫຍດດ້ານເສດຖະກິດ ໃນອະນາຄົດ ທີ່ຕິດພັນກັບລາຍການ ດັ່ງກ່າວ ຈະເຂົ້າ ຫຼື ອອກຈາກວິສາຫະກິດ, ແລະ

(ຂ) ລາຍການດັ່ງກ່າວ ມີຕົ້ນທຶນ ຫຼື ມູນຄ່າ ທີ່ສາມາດຕີມູນຄ່າໄດ້ຢ່າງໜ້າເຊື່ອຖືໄດ້.

**ມູນຄ່າທີ່ສາມາດເກັບຄືນໄດ້**
**recoverable amount**

ມູນຄ່າທີ່ສູງກ່ວາໝູ່ ລະຫວ່າງມູນຄ່າຍຸຕິທຳລົບຕົ້ນທຶນຂາຍ ແລະ ມູນຄ່າຈາກການນຳໃຊ້ ຊັບສິນໃດໜຶ່ງ.

**ພາກສ່ວນທີ່ກ່ຽວຂ້ອງ**
**related party**

ພາກສ່ວນທີ່ກ່ຽວຂ້ອງ ແມ່ນບຸກຄົນ ຫຼື ວິສາຫະກິດ ທີ່ກ່ຽວຂ້ອງກັບວິສາຫະກິດ ທີ່ສ້າງເອກະສານລາຍ ງານການເງິນ (ວິສາຫະກິດລາຍງານ).

(ກ) ບຸກຄົນ ຫຼື ສະມາຊິກຄອບຄົວທີ່ໃກ້ຊິດກັບບຸກຄົນດັ່ງກ່າວ ຖືວ່າມີຄວາມກ່ຽວຂ້ອງກັບວິ ສາຫະກິດລາຍງານ ຫາກມີລັກສະນະດັ່ງຕໍ່ໄປນີ້:

(i) ເປັນຄະນະບໍລິຫານຕົ້ນຕໍຂອງວິສາຫະກິດລາຍງານ ຫຼື ບໍລິສັດແມ່ຂອງວິສາຫະກິດ ລາຍງານ;

(ii) ມີອຳນາດຄວບຄຸມຕໍ່ວິສາຫະກິດລາຍງານ; ຫຼື

(iii) ມີອຳນາດຄວບຄຸມຮ່ວມກັນ ຫຼື ມີອິດທິພົນທີ່ສຳຄັນຕໍ່ວິສາຫະກິດລາຍງານ ຫຼື ມີສິດລົງ ຄະແນນສຽງທີ່ສຳຄັນໃນວິສາຫະກິດດັ່ງກ່າວ.

(ຂ) ວິສາຫະກິດໃດໜຶ່ງ ກ່ຽວຂ້ອງກັບວິສາຫະກິດລາຍງານ ຖ້າຫາກໄດ້ບັນລຸຕາມເງື່ອນໄຂໃດ ໜຶ່ງຂ້າງລຸ່ມນີ້:

(i) ວິສາຫະກິດ ແລະ ວິສາຫະກິດລາຍງານ ເປັນສະມາຊິກຂອງກຸ່ມບໍລິສັດດຽວກັນ (ໝາຍຄວາມວ່າ ແຕ່ລະບໍລິສັດແມ່, ບໍລິສັດໃນກຸ່ມ ແລະ ບໍລິສັດໃນກຸ່ມຈາກເຄືອຂ່າຍ ດຽວກັນ ກ່ຽວຂ້ອງຊຶ່ງກັນ ແລະ ກັນ).

(ii) ວິສາຫະກິດໃດໜຶ່ງ ແມ່ນວິສາຫະກິດຂາຮຸ້ນ ຫຼື ວິສາຫະກິດປະສົມຂອງວິສາຫະກິດ ໜຶ່ງອີກ (ຫຼື ຂອງສະມາຊິກອື່ນໃນກຸ່ມບໍລິສັດ ດຽວກັນກັບຊຶ່ງວິສາຫະກິດໜຶ່ງອີກເປັນ ສະມາຊິກ).

(iii) ທັງສອງວິສາຫະກິດ ເປັນວິສາຫະກິດປະສົມຂອງວິສາຫະກິດທີສາມ.

(iv) ວິສາຫະກິດໃດໜຶ່ງ ເປັນວິສາຫະກິດປະສົມຂອງວິສາຫະກິດທີສາມ ແລະ ວິສາຫະກິດ ໜຶ່ງອີກຊ້ຳພັດເປັນວິສາຫະກິດຂາຮຸ້ນຂອງວິສາຫະກິດທີສາມດັ່ງກ່າວ.

(v) ວິສາຫະກິດ ເປັນແຜນນະໂຍບາຍຄິດໄລ່ຜົນປະໂຫຍດເວລາສິ້ນສຸດສັນຍາແຮງງານ ສຳລັບຜົນປະໂຫຍດຂອງພະນັກງານຂອງວິສາຫະກິດລາຍງານ ຫຼື ວິສາຫະກິດທີ່ ກ່ຽວຂ້ອງກັບວິສາຫະກິດລາຍງານ. ຖ້າຫາກວິສາຫະກິດລາຍງານເອງກໍເປັນແຜນ ຄິດໄລ່ດັ່ງກ່າວ, ນາຍຈ້າງທີ່ສົ່ງເສີມແຜນຄິດໄລ່ນັ້ນ ຖືວ່າກ່ຽວຂ້ອງກັບແຜນຄິດໄລ່ຜົນ ປະໂຫຍດດັ່ງກ່າວດ້ວຍ.

(vi) ວິສາຫະກິດ ຖືກຄວບຄຸມ ຫຼື ຄວບຄຸມຮ່ວມກັນໂດຍ ບຸກຄົນ ທີ່ໄດ້ຍົກຂຶ້ນໃນຂໍ້ (ກ);

(vii) ບຸກຄົນທີ່ໄດ້ຍົກຂຶ້ນໃນຂໍ້ (ກ) (i) ມີສິດລົງຄະແນນສຽງທີ່ສຳຄັນ ໃນວິສາຫະກິດ ;

(viii) ບຸກຄົນທີ່ໄດ້ຍົກຂຶ້ນໃນຂໍ້ (ກ) (ii) ມີອິດທິພົນທີ່ສຳຄັນຕໍ່ວິສາຫະກິດ ຫຼື ມີສິດລົງ ຄະແນນສຽງທີ່ສຳຄັນໃນວິສາຫະກິດ; ພາກສ່ວນທີ່ກ່ຽວຂ້ອງກັນ ແມ່ນບຸກຄົນ ຫຼື ວິ ສາຫະກິດ ທີ່ກ່ຽວຂ້ອງກັບວິສາຫະກິດທີ່ສ້າງເອກະສານລາຍງານການເງິນ («ວິສາຫະ ກິດລາຍງານ»).

(ix) ບຸກຄົນ ຫຼື ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນດັ່ງກ່າວ ທີ່ມີອິດທິພົນຫຼາຍຕໍ່ວິ ສາຫະກິດລາຍງານ ຫຼື ຖືຮຸ້ນທີ່ມີສິດລົງຄະແນນສຽງທີ່ສຳຄັນໃນວິສາຫະກິດດັ່ງກ່າວ ແລະ ມີການຄວບຄຸມ ວິສາຫະກິດລາຍງານນັ້ນ ຮ່ວມກັນ.

| | |
|---|---|
| **ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງກັນ**<br>**related party transaction** | ການໂອນຊັບພະຍາກອນ, ການບໍລິການ ຫຼື ຂໍ້ຜູກພັນ ລະຫວ່າງວິສາຫະກິດລາຍງານ ແລະ ພາກສ່ວນທີ່ກ່ຽວຂ້ອງກັນ, ບໍ່ວ່າຈະມີການກຳນົດລາຄາໃຫ້ກັນຫຼືບໍ່ ກໍຕາມ. |
| **ຄວາມກ່ຽວຂ້ອງກັບການຕັດສິນໃຈ**<br>**relevance** | ຄຸນນະພາບຂອງຂໍ້ມູນຂ່າວສານ ທີ່ສາມາດມີຜົນກະທົບຕໍ່ການຕັດສິນບັນຫາດ້ານເສດຖະກິດຂອງຜູ້ນຳໃຊ້ ຄືຊ່ວຍໃຫ້ເຂົາເຈົ້າປະເມີນຜົນເຫດການຜ່ານມາ, ໃນປັດຈຸບັນ ຫຼື ໃນອະນາຄົດ ຫຼື ໂດຍຢືນຢັນ ຫຼື ກວດແກ້ການປະເມີນຜົນຂອງເຂົາເຈົ້າໃນໄລຍະຜ່ານມາ. |
| **ຄວາມເຊື່ອຖືໄດ້**<br>**reliability** | ຄຸນນະພາບຂອງຂໍ້ມູນຂ່າວສານ ທີ່ເຮັດໃຫ້ປາສະຈາກຂໍ້ຜິດພາດສຳຄັນ ແລະ ບໍ່ມີການບ່າຍບ່ຽງຫຼາຍ ແລະ ສະແດງເຖິງຢ່າງທ່ຽງທຳ ສິ່ງທີ່ຕ້ອງສະແດງ ຫຼື ສິ່ງທີ່ຄາດຫວັງໄວ້ໃຫ້ຖືກສະແດງ ຢ່າງສົມເຫດສົມຜົນ. |
| **ມື້ລາຍງານ**<br>**reporting date** | ມື້ສິ້ນສຸດຂອງຮອບເວລາຫຼ້າສຸດ ທີ່ກວມເອົາໃນເອກະສານລາຍງານການເງິນ ຫຼື ບົດລາຍງານການເງິນກາງປີ. |
| **ຮອບເວລາລາຍງານ**<br>**reporting period** | ຮອບເວລາທີ່ກວມເອົາໃນເອກະສານລາຍງານການເງິນ ຫຼື ຂອງບົດລາຍງານການເງິນກາງປີ. |
| **ການຄົ້ນຄ້ວາ**<br>**research** | ການສຳຫຼວດເບື້ອງຕົ້ນ ແລະ ວາງເປັນແຜນງານ ທີ່ໄດ້ດຳເນີນເພື່ອໃຫ້ເຂົ້າໃຈ ແລະ ໄດ້ຄວາມຮູ້ດ້ານວິທະຍາສາດ ຫຼື ດ້ານເຕັກນິກໃໝ່. |
| **ມູນຄ່າເສດເຫຼືອ (ຂອງຊັບສິນ)**<br>**residual value (of an asset)** | ຈຳນວນເງິນຄາດຄະເນທີ່ວິສາຫະກິດອາດໄດ້ຮັບໃນປັດຈຸບັນຈາກການຂາຍຊັບສິນໃດໜຶ່ງອອກ, ພາຍຫຼັງໄດ້ຫັກຄ່າໃຊ້ຈ່າຍຄາດຄະເນໃນການຂາຍອອກ, ຖ້າຊັບສິນດັ່ງກ່າວໝົດອາຍຸ ແລະ ຢູ່ໃນເງື່ອນໄຂທີ່ຄາດວ່າຈະເປັນໄລຍະສິ້ນສຸດຂອງອາຍຸການໃຊ້ຂອງຊັບສິນດັ່ງກ່າວ. |
| **ການປະຕິບັດຍ້ອນຫຼັງ (ຂອງການປ່ຽນແປງນະ�โยบายການບັນຊີ**<br>**retrospective application (of a change in accounting policy** | ການປະຕິບັດນະโยบายການບັນຊີໃໝ່ ສຳລັບລາຍການເຄື່ອນໄຫວ, ເຫດການ ແລະ ເງື່ອນໄຂອື່ນໆ ໃຫ້ຄືກັນກັບວ່າໄດ້ປະຕິບັດນະโยบายດັ່ງກ່າວແຕ່ໃດໆມາ. |
| **ລາຍໄດ້**<br>**revenue** | ກະແສຮັບຜົນປະโยชนดດ້ານເສດຖະກິດ ໃນຮອບເວລາດຳເນີນກິດຈະການປົກກະຕິ ຂອງວິສາຫະກິດ ເມື່ອກະແສຮັບດັ່ງກ່າວນັ້ນ ພາໃຫ້ທຶນເຈົ້າຂອງເພີ້ມຂຶ້ນ ທີ່ບໍ່ແມ່ນການເພີ້ມຂຶ້ນ ທີ່ກ່ຽວຂ້ອງກັບ ການປະກອບທຶນຂອງຜູ້ປະກອບສ່ວນໃນທຶນເຈົ້າຂອງ. |
| **ເອກະສານລາຍງານການເງິນສະເພາະກິດຈະການ**<br>**separate Financial Statements** | ເອກະສານລາຍງານການເງິນຂອງວິສາຫະກິດດຽວ. |
| **ສັນຍາສຳປະທານດ້ານການບໍລິການ**<br>**service concession arrangement** | ສັນຍາຊຶ່ງອົງການລັດຖະບານ ຫຼື ອົງການອື່ນໃນຂະແໜງການລັດ (ຜູ້ໃຫ້ສຳປະທານ) ມອບໃຫ້ຜູ້ຮັບສຳປະທານເອກະຊົນ ພັດທະນາ (ຫຼື ປັບປຸງ), ດຳເນີນງານ ແລະ ບຳລຸງຮັກສາຊັບສິນຂອງໂຄງລ່າງ ຂອງຜູ້ໃຫ້ສຳປະທານ ເຊັ່ນ ຖະໜົນ, ຂົວ, ອຸໂມງ, ສະໜາມບິນ, ຕາໜ່າງຈຳໜ່າຍພະລັງງານ, ຄຸກ ຫຼື ໂຮງໝໍ |
| **ພາວະເງິນເຟີ້ລະດັບສູງສຸດ ທີ່ຮ້າຍແຮງ**<br>**severe hyperinflation** | ເງິນຕາຂອງເສດຖະກິດທີ່ພາວະເງິນເຟີ້ລະດັບສູງສຸດ ຖືເປັນພາວະເງິນເຟີ້ລະດັບສູງສຸດ ທີ່ຮ້າຍແຮງ ຖ້າມີທັງສອງລັກສະນະຕໍ່ໄປນີ້:<br>(ກ) ບໍ່ມີດັດສະນີລາຄາທົ່ວໄປ ທີ່ໜ້າເຊື່ອຖືໄດ້ ສຳລັບທຸກວິສາຫະກິດ ທີ່ມີລາຍການເຄື່ອນໄຫວ ແລະ ຍອດເຫຼືອສະກຸນເງິນໃນບັນຊີ. |

(ຂ) ບໍ່ມີການສາມາດແລກປ່ຽນ ລະຫວ່າງສະກຸນເງິນຕາ ແລະ ສະກຸນເງິນຕາຕ່າງປະເທດ ທີ່ໝັ້ນຄົງ ທີ່ກ່ຽວພັນ.

| | |
|---|---|
| **ລາຍການເຄື່ອນໄຫວການຊຳລະຕາມຮຸ້ນ**<br>**share-based payment transaction** | ລາຍການເຄື່ອນໄຫວ ຊຶ່ງໃນນັ້ນ ວິສາຫະກິດໄດ້ສິນຄ້າ ຫຼື ການບໍລິການມາ (ລວມເຖິງການຮັບໃຊ້ວຽກງານຂອງພະນັກງານ) ເປັນສິ່ງຕອບແທນສຳລັບເຄື່ອງມືການເງິນປະເພດທຶນເຈົ້າຂອງຂອງວິສາຫະກິດ (ຊຶ່ງລວມມີຮຸ້ນ ຫຼື ສິດທິໃນການຊື້ຮຸ້ນ), ຫຼື ໄດ້ຮັບສິນຄ້າ ຫຼື ການບໍລິການດ້ວຍການສ້າງໜີ້ສິນຕໍ່ຜູ້ສະໜອງສິນຄ້າ ຫຼື ການບໍລິການດັ່ງກ່າວໃນຈຳນວນເງິນ ທີ່ອີງຕາມລາຄາຮຸ້ນຂອງວິສາຫະກິດ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງອື່ນໆ ຂອງວິສາຫະກິດດັ່ງກ່າວ. |
| **ວິສາຫະກິດຂະໜາດນ້ອຍ ແລະ ກາງ**<br>**small and medium-sized enterprises** | ວິສາຫະກິດທັງໝົດ ທີ່ບໍ່ແມ່ນວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ບໍ່ມີສະພາວະເກີນ ຫຼື ຫຼຸດເງື່ອນໄຂມາດຕະຖານຂອງວິສາຫະກິດຂະໜາດນ້ອຍແລະກາງ ທີ່ລະບຸບກົດໝາຍກຳນົດໄວ້, ແລະ ວິສາຫະກິດອື່ນທີ່ບໍ່ແມ່ນວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ຊຶ່ງບໍ່ຄວບຄຸມ ໜຶ່ງ ຫຼື ຫຼາຍ ບໍລິສັດໃນກຸ່ມ ຫຼື/ແລະ ບໍ່ມີສັນຍາກ່ຽວກັບເຄື່ອງມືການເງິນ ທີ່ສະຫຼັບຊັບຊ້ອນ. |
| **ລັດ**<br>**State** | ລັດຖະບານ ຂັ້ນສູນກາງ, ແຂ້ວນ ຫຼື ທ້ອງຖິ່ນ. |
| **ແຜນນະ�โยบาย (ຜົນປະໂຫຍດພະນັກງານ) ພາກລັດ**<br>**state (employee benefit) plan** | ແຜນນະໂຍບາຍຄິດໄລ່ຜົນປະໂຫຍດຂອງພະນັກງານທີ່ໄດ້ກຳນົດໄວ້ໃນກົດໝາຍ ເພື່ອບັງຄັບໃຊ້ກັບທຸກ ວິສາຫະກິດ (ຫຼື ວິສາຫະກິດທັງໝົດ ໃນປະເພດໃດໜຶ່ງ, ເຊັ່ນຂະແໜງການສະເພາະໃດໜຶ່ງ) ທີ່ຖືກດຳເນີນການໂດຍລັດຖະບານຂັ້ນສູນກາງ ຫຼື ທ້ອງຖິ່ນ ຫຼື ໂດຍອົງການອື່ນ (ເຊັ່ນ ອົງການເອກະລາດທີ່ຖືກສ້າງຕັ້ງຂຶ້ນສະເພາະສຳລັບຈຸດປະສົງດັ່ງກ່າວ) ທີ່ບໍ່ຖືກຄວບຄຸມ ຫຼື ຢູ່ໃຕ້ອິດທິພົນຂອງວິສາຫະກິດ ລາຍງານ. |
| **ໃບລາຍງານກະແສເງິນສົດ**<br>**statement of Cash flows** | ເອກະສານລາຍງານການເງິນ ທີ່ສະໜອງຂໍ້ມູນຂ່າວສານ ກ່ຽວກັບສ່ວນປ່ຽນແປງດ້ານເງິນສົດ ແລະ ສິ່ງທຽບເທົ່າເງິນສົດຂອງວິສາຫະກິດໃດໜຶ່ງໃນຮອບເວລາລາຍງານ ຊຶ່ງແຍກສະແດງສ່ວນປ່ຽນແປງທີ່ກຳເນີດຈາກ ກິດຈະກຳດຳເນີນງານ, ກິດຈະກຳການລົງທຶນ ແລະ ກິດຈະກຳປະກອບທຶນ. |
| **ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ**<br>**statement of change in equity** | ເອກະສານລາຍງານການເງິນ ທີ່ສະແດງກຳໄລ ຫຼື ຂາດທຶນຂອງວິສາຫະກິດ ສຳລັບຮອບເວລາລາຍງານໜຶ່ງ, ລາຍການ ລາຍຮັບ ແລະ ລາຍຈ່າຍ ທີ່ໄດ້ຮັບຮູ້ລາຍການບັນຊີ ໃນທຶນເຈົ້າຂອງ ໃນປີ, ຜົນກະທົບຂອງການປ່ຽນແປງນະ�โยบายການບັນຊີ ແລະ ການກວດແກ້ຂໍ້ຜິດພາດ ທີ່ໄດ້ຮັບຮູ້ລາຍການບັນຊີໃນປີ, ແລະ (ໂດຍຂຶ້ນກັບຮູບແບບຈັດວາງຂອງໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງທີ່ຫົວໜ່ວຍໄດ້ຕົກລົງເລືອກ) ຈຳນວນເງິນລາຍການເຄື່ອນໄຫວກັບຜູ້ປະກອບທຶນເຈົ້າຂອງ ທີ່ໄດ້ດຳເນີນການ ໃນປີ ໃນຖານະຜູ້ເປັນເຈົ້າຂອງທຶນ. |
| **ໃບລາຍງານຜົນໄດ້ຮັບສັງລວມ**<br>**statement of comprehensive income** | ເອກະສານລາຍງານການເງິນ ທີ່ ເລີ່ມຈາກກຳໄລ ຫຼື ຂາດທຶນ ແລະ ທີ່ສະແດງລາຍການຕ່າງໆຂອງ ຜົນໄດ້ຮັບສັງລວມອື່ນໆ. |
| **ໃບລາຍງານຖານະການເງິນ**<br>**statement of financial position** | ເອກະສານລາຍງານການເງິນ ທີ່ສະເໜີສາຍພົວພັນລະຫວ່າງ ຊັບສິນ, ໜີ້ສິນ ແລະ ທຶນເຈົ້າຂອງ ຂອງ ວິສາຫະກິດໃດໜຶ່ງ ໃນມື້ສະເພາະໃດໜຶ່ງ (ຍັງເອີ້ນກັນອີກว่า ໃບສະຫຼຸບຊັບສົມບັດ). |
| **ໃບລາຍງານຜົນໄດ້ຮັບ ແລະ ກຳໄລລໍຖ້າແບ່ງປັນ**<br>**statement of income and retained earnings** | ເອກະສານລາຍງານການເງິນ ທີ່ສະແດງກຳໄລ ຫຼື ຂາດທຶນ ແລະ ສ່ວນປ່ຽນແປງຂອງກຳໄລລໍຖ້າແບ່ງປັນໃນປີ. |
| **ບໍລິສັດໃນກຸ່ມ**<br>**subsidiary** | ວິສາຫະກິດໃດໜຶ່ງ, ລວມທັງວິສາຫະກິດທີ່ບໍ່ໄດ້ຈົດທະບຽນເປັນບໍລິສັດມະຫາຊົນ ເຊັ່ນ ບໍລິສັດຮຸ້ນສ່ວນ ຊຶ່ງຖືກຄວບຄຸມໂດຍວິສາຫະກິດໜຶ່ງອີກ (ທີ່ເອີ້ນກັນว่าบໍລິສັດແມ່). |

| | |
|---|---|
| **ຄາດວ່າມີຜົນບັງຄັບໃຊ້**<br>**substantively enacted** | ອັດຕາອາກອນ ຈະຖືວ່າ ເປັນອັດຕາອາກອນທີ່ຄາດວ່າຈະມີຜົນບັງຄັບໃຊ້ ຖ້າຫາກເຫດການໃນອະນາຄົດ ທີ່ກຳນົດໂດຍຂະບວນການຮັບຮອງເພື່ອມີຜົນບັງຄັບໃຊ້ ຈະບໍ່ປ່ຽນແປງໝາກຜົນ. |
| **ພື້ນຖານຄິດໄລ່ອາກອນ**<br>**tax basis** | ການຕີມູນຄ່າ ພາຍໃຕ້ກົດໝາຍອາກອນທີ່ຄາດວ່າມີຜົນບັງຄັບໃຊ້, ຂອງ ຊັບສິນ, ໜີ້ສິນ ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງ. |
| **ລາຍຈ່າຍອາກອນ**<br>**tax expenses** | ມູນຄ່າລວມອາກອນໃນປີ ແລະ ອາກອນລໍຖ້າສະສາງ ທີ່ລວມຢູ່ໃນຜົນໄດ້ຮັບສັງລວມທັງໝົດ ຫຼືໃນທຶນເຈົ້າຂອງ ຂອງຮອບເວລາລາຍງານ. |
| **ກຳໄລຖືກເສຍອາກອນ (ຂາດທຶນດ້ານອາກອນ)**<br>**taxable profit (tax loss)** | ກຳໄລ(ຂາດທຶນ) ສຳລັບຮອບເວລາລາຍງານໃດໜຶ່ງ, ທີ່ໄດ້ຄິດໄລ່ຕາມລະບຽບການທີ່ລັດຖະການສ່ວຍສາອາກອນໄດ້ກຳນົດໄວ້ ເພື່ອໃຊ້ເປັນພື້ນຖານຄິດໄລ່ອາກອນລາຍຮັບຕ້ອງຈ່າຍ ຫຼື ທີ່ສາມາດເກັບຄືນໄດ້. ກຳໄລຖືກເສຍອາກອນເທົ່າກັບລາຍຮັບຖືກເສຍອາກອນ ຫັກໃຫ້ຈຳນວນເງິນທີ່ຫັກອອກໄດ້ຈາກລາຍຮັບຖືກເສຍອາກອນ. |
| **ສ່ວນຜິດດ່ຽງຊົ່ວຄາວ**<br>**temporary differences** | ສ່ວນຜິດດ່ຽງ ລະຫ່ວາງມູນຄ່າໃນບັນຊີຂອງຊັບສິນ, ໜີ້ສິນ ຫຼື ລາຍການອື່ນໆໃນເອກະສານລາຍງານການເງິນ ແລະ ພື້ນຖານຄິດໄລ່ອາກອນ ຊຶ່ງວິສາຫະກິດຄາດວ່າຈະກະທົບໃສ່ກຳໄລຖືກເສຍອາກອນ ເມື່ອມູນຄ່າໃນບັນຊີຂອງຊັບສິນ ຫຼື ໜີ້ສິນ ໄດ້ຖືກເກັບຄືນ ຫຼື ຖືກສະສາງ (ຫຼື ໃນກໍລະນີ ຂອງລາຍການທີ່ບໍ່ແມ່ນຊັບສິນ ຫຼື ໜີ້ສິນ, ຈະກະທົບໃສ່ກຳໄລຖືກເສຍອາກອນໃນອະນາຄົດ). |
| **ຜົນປະ�โຫຍດພະນັກງານຫຼັງສິ້ນສຸດສັນຍາ**<br>**termination benefits** | ຜົນປະโຫຍດເວລາສິ້ນສຸດສັນຍາໝາຍເຖິງຜົນປະโຫຍດ ທີ່ຕ້ອງຈ່າຍໃຫ້ພະນັກງານ ຊຶ່ງເປັນຜົນຈາກ :<br>(i) ການຕົກລົງຂອງວິສາຫະກິດໃນການຍົກເລີກສັນຍາແຮງງານຂອງພະນັກງານໃດໜຶ່ງ ກ່ອນເຖິງອາຍຸຮັບເງິນບຳນານປົກກະຕິ, ຫຼື<br>(ii) ການຕົກລົງອອກການໂດຍການສະໝັກໃຈຂອງພະນັກງານໃດໜຶ່ງ ເພື່ອແລກເອົາຜົນປະโຫຍດດັ່ງກ່າວ. |
| **ສ່ວນຜິດດ່ຽງຕາມເວລາ**<br>**timing differences** | ລາຍຮັບ ຫຼື ລາຍຈ່າຍ ທີ່ໄດ້ຖືກຮັບຮູ້ລາຍການບັນຊີ ໃນກຳໄລ ຫຼື ຂາດທຶນໃນຮອບເວລາໃດໜຶ່ງ, ແຕ່ຖ້າຫາກອີງຕາມກົດໝາຍ ຫຼື ລະບຽບການດ້ານອາກອນແລ້ວ, ຈະລວມຢູ່ໃນກຳໄລຖືກເສຍອາກອນໃນຮອບເວລາທີ່ແຕກຕ່າງກັນ. |
| **ຄວາມທັນການ**<br>**timeliness** | ການສະໜອງຂໍ້ມູນຂ່າວສານໃນເອກະສານລາຍງານການເງິນ ພາຍໃນຂອບເຂດໄລຍະການຕັດສິນບັນຫາ. |
| **ລວມຍອດຜົນໄດ້ຮັບສັງລວມ**<br>**total comprehensive income** | ສ່ວນປ່ຽນແປງຂອງທຶນເຈົ້າຂອງໃນຮອບເວລາທີ່ກຳເນີດຈາກລາຍການເຄື່ອນໄຫວ ແລະ ເຫດການອື່ນໆ ທີ່ບໍ່ແມ່ນສ່ວນປ່ຽນແປງ ທີ່ເນື່ອງມາຈາກລາຍການເຄື່ອນໄຫວກັບເຈົ້າຂອງ ໃນຖານະການເປັນເຈົ້າຂອງ (ເທົ່າກັບ ລວມຍອດ ຂອງ ກຳໄລ ຫຼື ຂາດທຶນ ແລະ ຜົນໄດ້ຮັບສັງລວມອື່ນໆ). |
| **ຮຸ້ນທຶນຊື້ຄືນ**<br>**treasury shares** | ເຄື່ອງມືການເງິນປະເພດທຶນເຈົ້າຂອງຂອງວິສາຫະກິດ, ທີ່ຖືໄວ້ໂດຍວິສາຫະກິດ ຫຼື ສະມາຊິກອື່ນໆຂອງກຸ່ມບໍລິສັດ ລວມກິດຈະການ. |
| **ຄວາມເຂົ້າໃຈງ່າຍ**<br>**understandability** | ຄຸນນະພາບຂອງຂໍ້ມູນຂ່າວສານ ໃນວິທີທາງທີ່ເຮັດໃຫ້ຜູ້ນຳໃຊ້ ທີ່ມີຄວາມຮູ້ອັນສົມເຫດສົມຜົນ ກ່ຽວກັບທຸລະກິດ ແລະ ກິດຈະການເສດຖະກິດ ແລະ ການບັນຊີ ເຂົ້າໃຈງ່າຍ ແລະ ມີຄວາມຕັ້ງໃຈ ທີ່ຈະສຶກສາຂໍ້ມູນຂ່າວສານນັ້ນຢ່າງລະອຽດ ດ້ວຍເຫດດ້ວຍຜົນ. |
| **ອາຍຸການນຳໃຊ້**<br>**useful life** | ຮອບເວລາຊຶ່ງວິສາຫະກິດຄາດວ່າຈະນຳໃຊ້ຊັບສິນ ຫຼື ຈຳນວນຫົວໜ່ວຍວັດແທກການຜະລິດ ຫຼື ທີ່ຄ້າຍຄືກັນ ຊຶ່ງວິສາຫະກິດໃດໜຶ່ງຄາດວ່າຈະໄດ້ຮັບຈາກຊັບສິນ. |
| **ມູນຄ່າຈາກການນຳໃຊ້**<br>**value in use** | ມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດ ທີ່ຄາດວ່າຈະໄດ້ມາຈາກຊັບສິນ ຫຼື ໜ່ວຍສ້າງເງິນສົດ. |

| | |
|---|---|
| **ຜູ້ຮ່ວມປະກອບການ**<br>**venturer** | ພາກສ່ວນໜຶ່ງໃນວິສາຫະກິດປະສົມ ທີ່ດຳເນີນການຄວບຄຸມຮ່ວມກັນຕໍ່ວິສາຫະກິດປະສົມດັ່ງກ່າວ. |
| **ວິສາຫະກິດຂະໜາດນ້ອຍທີ່ສຸດ**<br>**very small enterprises** | ວິສາຫະກິດອື່ນໆ ທີ່ນອກເໜືອວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ຕອບສະໜອງກັບເງື່ອນໄຂມາດຕະຖານທີ່ກຳນົດໄວ້ ໂດຍລະບຽບການ, ແລະ ວິສາຫະກິດອື່ນໆ ທີ່ນອກເໜືອວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ທີ່ບໍ່ຄວບຄຸມ ໜຶ່ງ ຫຼື ຫຼາຍວິສາຫະກິດໃນກຸ່ມ ຫຼື/ແລະ ບໍ່ນຳໃຊ້ເຄື່ອງມືການເງິນທີ່ສະຫຼັບຊັບຊ້ອນ, ແລະ ວິສາຫະກິດອື່ນໆ ທີ່ນອກເໜືອວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດຂະໜາດນ້ອຍແລະກາງ. |
| **ສິດທິຈະໄດ້ຮັບ**<br>**vest** | ກາຍເປັນຜູ້ມີສິດທິ. ພາຍໃຕ້ສັນຍາຊຳລະຕາມຮຸ້ນ, ສິດທິຂອງຄູ່ສັນຍາໃນການຮັບເງິນສົດ, ຊັບສິນອື່ນໆ, ຫຼື ເຄື່ອງມືການເງິນປະເພດທຶນເຈົ້າຂອງຂອງວິສາຫະກິດ ຈະຖືວ່າໄດ້ຮັບສິດ ເມື່ອຄູ່ສັນຍາປະຕິບັດຕາມເງື່ອນໄຂການໄດ້ຮັບສິດ ແລະ ອີກຝ່າຍໜຶ່ງເພິ່ງພໍໃຈໃນການປະຕິບັດຕາມເງື່ອນໄຂການໄດ້ຮັບສິດດັ່ງກ່າວ. |
| **ຜົນປະ�โຫຍດທີ່ໄດ້ຮັບ**<br>**vested benefits** | ຜົນປະໂຫຍດ ຊຶ່ງບຸກຄົນໄດ້ຮັບສິດ ອີງຕາມເງື່ອນໄຂຂອງແຜນນະ�โยบายຄິດໄລ່ເງິນບຳນານ ເມື່ອເຖິງກະສຽນ ໂດຍບໍ່ຂຶ້ນກັບເງື່ອນໄຂ ໃນການສືບຕໍ່ຈ້າງງານ. |